# ແນວທາງປະຕິບັດ

## ເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານຢູ່ປະເທດທີ່ພວມ ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ



MICIC

Save Lives
Increase Protection
Decrease Vulnerability
Improve Response

MIGRANTS IN COUNTRIES IN CRISIS INITIATIVE

© ມິຖຸນາ 2016 ໂຄງການຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບໄພວິກິດ

ເອກະສານສະບັບນີ້ ສ້າງຂຶ້ນໃນທຸກໆພາສາທີ່ເປັນທາງການຂອງ ສປຊ.

ສຳລັບຂໍ້ມູນເພີ່ມຕື່ມ ແລະ ເພື່ອດາວໂຫຼດເອກະສານສະບັບນີ້, ກະລຸນາເຂົ້າເວັບໄຊດ໌: http://micicinitiative.iom.int/ ຫຼື ຕິດຕໍ່ ກອງເລຂາໂຄງການ MICIC ທີ່ micicsecretariat@iom.int.

ຮູບໜ້າປົກ
ຜູ້ຍ້າຍຖິ່ນຖານ ພະຍົບຈາກ ລີເບຍໃນປີ 2011 © IOM Nicole Tung

ຮູບຫຼັງປົກ
ໄຕ້ຝຸ່ນຢູ່ ຟີລິບປິນໃນປີ 2012 © IOM Billy Jamisolamin
ແຮງງານເຄື່ອນຍ້າຍທີ່ຕົກຄ້າງໄດ້ຮັບການຊ່ວຍເຫຼືອຈາກອົງການ IOM ໃນການເດີນທາງອອກຈາກ ເລບານອນໃນປີ 2006 © IOM
ຄວາມເສຍຫາຍພາຍຫຼັງເຫດແຜ່ນດິນໄຫວໃນ ເອກົວດໍໃນປີ 2016 © IOM Juliana Quintero
ຜູ້ເຄື່ອນຍ້າຍຖິ່ນຖານ ອົບພະຍົບຈາກ ຄວາມຂັດແຍ່ງໃນ ລີເບຍໃນປີ 2011 © IOM Nicole Tung ຜູ້
ຜູ້ເຄື່ອນຍ້າຍຖິ່ນຖານລໍຖ້າ ການອົບພະຍົບຈາກຄວາມຂັດແຂ່ງຢູ່ ລີເບຍໃນປີ 2011 © IOM Nicole Tung
ຊາວຊາດ ອົບພະຍົບຈາກຄວາມຂັດແຍ່ງ ໃນ ສາທາລະນະລັດອາຟຣິກາກາງ ໃນປີ 2014 © IOM Craig Murphy

# ແນວທາງປະຕິບັດ

## ເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານຢູ່ປະເທດທີ່ພວມ ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ

## *ບົດນຳໂດຍ ແອນ ຊີ ຣິຊາຣດ໌ ຜູ້ຊ່ວຍລັດຖະມົນຕີກະຊວງການຕ່າງປະເທດຂອງ ສະຫະລັດອາເມຣິກາ, ຫ້ອງການ ປະຊາກອນ, ຜູ້ລີ້ໄພ ແລະ ຜູ້ເຄື່ອນຍ້າຍຖິ່ນຖານ, ກະຊວງການຕ່າງປະເທດ ຂອງ ສະຫະລັດ ອາເມຣິກາ ທີ່ມີຕໍ່ ແນວທາງປະຕິບັດຂອງໂຄງການ MICIC*

ການພິມແນວທາງປະຕິບັດຂອງໂຄງການຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບໄພວິກິດ (MICIC) ເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ ຢູ່ ນິວຢອກ ແລະ ເຈິເນວາ ໃນເດືອນມິຖຸນາ 2016 ສະແດງໃຫ້ເຫັນຈຸດສູງສຸດຂອງຂະບວນການປຶກສາຫາລືລະດັບສາກົນທີ່ມີຄວາມມຸ່ງໝັ້ນ ແລະ ໜັກແໜ້ນ ໂດຍການນຳພາຂອງ ສະຫະລັດອາເມຣິກາ ແລະ ຟີລິບປິນ. ຕະຫຼອດໄລຍະສອງປີຜ່ານມາໃນແຕ່ລະຂັ້ນຕອນຂອງຂະບວນການ, ຂ້າພະເຈົ້າປະທັບໃຈໃນຄວາມໝາຍໝັ້ນຂອງຫຼາຍໆພາກສ່ວນລວມທັງ ຜູ້ຕາງໜ້າລັດ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ພາກລັດທີ່ໄດ້ແບ່ງປັນ ພາກປະຕິບັດ, ໄດ້ລະບຸ ແລະ ຮັບຮູ້ສິ່ງທ້າທາຍທີ່ມີຢູ່ ແລະ ໄດ້ປະກອບສ່ວນຄວາມຊຳນິຊຳນານ ກໍຄືຄວາມໝາຍໝັ້ນທີ່ຈຳເປັນເພື່ອປັບປຸງການຮັບມືກັບບັນຫາຢ່າງພ້ອມພຽງຮ່ວມກັນ. ໂດຍສະເພາະແລ້ວ ແມ່ນການມີສ່ວນຮ່ວມອັນມີຄຸນຄ່າຂອງອົງການຈັດຕັ້ງສັງຄົມທີ່ນຳໂດຍ ພັນທະມິດໂລກດ້ານການເຄື່ອນຍ້າຍຖິ່ນຖານ (Global Coalition on Migration) ແລະ ຄະນະກຳມະການເຄື່ອນຍ້າຍຖິ່ນຖານຂອງກາໂຕລິກສາກົນ (International Catholic Migration Commission) ເຊິ່ງໄດ້ປັບປຸງຜົນຮັບຂອງໂຄງການຢ່າງຫຼວງຫຼາຍດ້ວຍການຮ່ວມມືຢ່າງຕັ້ງໜ້າ ແລະ ການປະກອບສ່ວນຄວາມເຫັນຢ່າງສ້າງສັນ.

ວິກິດການລີເບຍໃນປີ 2011 ໄດ້ເປັນແຮງຜັກດັນສຳຄັນຂອງໂຄງການ MICIC, ແຕ່ວ່າ ພາຍຸເຮີຣິເຄນແຊນດີຢູ່ ສະຫະລັດອາເມຣິກາ, ວິກິດການ 3 ເທົ່າຢູ່ ຍີ່ປຸ່ນ ແລະ ວິກິດການໃນປັດຈຸບັນຢູ່ເຢເມັນ ເປັນການເຕືອນໃຈໃຫ້ພວກເຮົາຮູ້ວ່າ ບໍ່ມີປະເທດໃດທີ່ມີພູມຄຸ້ມກັນຈາກຜົນກະທົບຂອງຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ ແລະ ເຫດການທີ່ສ້າງຄວາມເສຍຫາຍ-ຄວາມຫາຍະນະເຫຼົ່ານັ້ນກໍອາດເກີດຂຶ້ນໂດຍບໍ່ມີສັນຍານເຕືອນລ່ວງໜ້າໃດໆ. ພວກເຮົາໄດ້ເຫັນຄົນຈຳນວນຫຼວງຫຼາຍເປັນປະຫວັດການແບບບໍ່ເຄີຍເຫັນມາກ່ອນໃນທົ່ວໂລກ ທີ່ຕ້ອງໄດ້ປົບໜີຄວາມຂັດແຍ່ງທີ່ຍືດເຍື້ອແກ່ຍາວ, ການລ່ວງລະເມີດສິດທິມະນຸດທີ່ໂຫດຮ້າຍ, ໄພພິບັດທຳມະຊາດທີ່ຮ້າຍແຮງ ແລະ ຄວາມທຸກຍາກທີ່ສຸດ. ມີຄົນຈຳນວນຫຼວງຫຼາຍທີ່ສ່ຽງຊີວິດໃນການເດີນທາງທີ່ອັນຕະລາຍ ທີ່ບໍ່ໄດ້ຖືວ່າເປັນ ຜູ້ລີ້ໄພ ຕາມທີ່ກຳນົດໃນ ສົນທິສັນຍາວ່າດ້ວຍຜູ້ລີ້ໄພສະບັບປີ 1951 ກ່ຽວກັບ ສະຖານະຂອງຜູ້ລີ້ໄພ, ແຕ່ຖືວ່າເຂົາເຈົ້າເປັນຜູ້ເຄື່ອນຍ້າຍຖິ່ນຖານ. ພວກເຮົາຫວັງວ່າ ແນວທາງປະຕິບັດສະບັບນີ້ຈະໄດ້ຮັບການຕອບຮັບຢ່າງກວ້າງຂວາງ ແລະ ທີ່ສຳຄັນໄປກວ່ານັ້ນ ແມ່ນຈະຖືກນຳໄປຈັດຕັ້ງປະຕິບັດຢ່າງກວ້າງຂວາງເພື່ອປັບປຸງການຕອບສະໜອງຮ່ວມກັນຕໍ່ ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະການທີ່ມີຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ.

ໂຄງການ MICIC ສະໜັບສະໜູນ ວາລະປີ 2030 ເພື່ອເປົ້າໝາຍການພັດທະນາແບບຍືນຍົງ ໃນການຫລຸດຜ່ອນຄວາມບໍ່ສະເໝີພາບ (ຄາດໝາຍທີ 10), ລວມທັງຜ່ານ (ຄາດໝາຍທີ 10.7) ການເອື້ອອຳນວຍການເຄື່ອນຍ້າຍຖິ່ນຖານຢ່າງປອດໄພ, ປົກກະຕິ ແລະ ເປັນລະບຽບຮຽບຮ້ອຍ ດ້ວຍການຄຸ້ມຄອງນະໂຍບາຍການເຄື່ອນຍ້າຍຖິ່ນຖານເປັນຢ່າງດີ. ພວກເຮົາຫວັງວ່າ ໂຄງການນີ້ຈະເປັນຕົ້ນແບບທີ່ດີສະແດງໃຫ້ເຫັນວ່າ ຄວາມພະຍາຍາມທີ່ລັດເປັນເຈົ້າການໃນການພັດທະນາໂດຍການປຶກສາຫາລືກັບຜູ້ມີສ່ວນຮ່ວມທີ່ໄດ້ຮັບຜົນກະທົບນັ້ນ ແມ່ນຈະນຳໄປສູ່ການແກ້ໄຂບັນຫາເຄື່ອນຍ້າຍຖິ່ນຖານທີ່ເປັນຮູບປະທຳ ແລະ ເປັນຈິງ ທີ່ຄ້າຍຄືກັນກັບ ໂຄງການນານເຊັນ (Nansen Initiative) ທີ່ໄດ້ມີການຍົກຍ້າຍຂ້າມຊາຍແດນທີ່ມາຈາກ ໄພພິບັດ ແລະ ສະພາບການປ່ຽນແປງດິນຟ້າອາກາດ. ໃນຂະນະທີ່ໂຄງການ MICIC ບໍ່ໄດ້ນຳໄປສູ່ການສ້າງສົນທິສັນຍາໃໝ່, ກົດໝາຍສາກົນໃໝ່ ຫຼື ຂໍ້ຜູກມັດທີ່ປະກາດໃຊ້ໃນລັດຕ່າງໆກໍຕາມ, ແຕ່ ຄູ່ມືແນະນຳນີ້ຍັງໄດ້ຊ່ວຍທຸກໆປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຮັກສາຊີວິດ ແລະ ປັບປຸງການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖາມ. ໃນຂະນະທີ່ໂຄງການເລັ່ງໃສ່ຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດເທົ່ານັ້ນ, ແຕ່ໂຄງການກໍຍັງກຳນົດຫຼັກການ, ແນວທາງ ແລະ ພາກປະຕິບັດທີ່ຜູ້ມີສ່ວນຮ່ວມສາມາດນຳໄປໝູນໃຊ້ເພື່ອປັບປຸງການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ ໃນຂອບເຂດຄວາມທ້າທາຍທີ່ຫຼາກຫຼາຍກວ້າງຂວາງທີ່ພວກເຮົາພົບພໍ້ໃນທຸກວັນນີ້. ສະນັ້ນ, ຂ້າພະເຈົ້າຂໍຊຸກຍູ້ໃຫ້ທຸກໆພາກສ່ວນທີ່ກ່ຽວຂ້ອງໃຫ້ຄົ້ນຄວ້າເບິ່ງໂຄງການ ແລະ ແນວທາງປະຕິບັດທີ່ກ່ຽວຂ້ອງເພື່ອເປັນຈຸດເລີ່ມຕົ້ນຂອງວຽກງານພວກເຮົາໃນການຄົ້ນຫາ ແລະ ນຳໃຊ້ເຄື່ອງມື, ນະໂຍບາຍ ແລະ ຮູບແບບການຮ່ວມມືໃໝ່ໆຢ່າງສະເໝີຕົ້ນສະເໝີປາຍ ທີ່ຈະສາມາດປົກປ້ອງ ແລະ ຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານໂດຍກົງ ແລະ ຢ່າງມີມະນຸດສະທຳທີ່ສຸດ ໃນໄລຍະເວລາທີ່ເຂົາເຈົ້າຕ້ອງການທີ່ສຸດ.

## *ບົດນຳໂດຍ ອີແມວດາ ແອັນ ນີໂຄລັສ໌, ລັດຖະມົນຕີ, ປະທານຄະນະກຳມາທິການຄົນຟີລິບປິນໂພ້ນທະເລ (ຢູ່ຕ່າງປະເທດ) ຕໍ່ ແນວທາງປະຕິບັດຂອງໂຄງການ MICIC*

ເມື່ອຄົບວາລະທີກປີຂອງ ການເປັນປະທານາທິບໍດີຟີລິບປິນຂອງ ເບນີໂນ ແອັສ໌ ອາກີໂນ ທີສາມ ສິ້ນສຸດລົງໃນວັນທີ 30 ມິຖຸນາ 2016, ພວກເຮົາ ທີ່ເປັນສ່ວນໜຶ່ງຂອງຄອບຄົວທາງການຂອງທ່ານປະທານາທິບໍດີ ແມ່ນມີຄວາມພາກພູມໃຈ ທີ່ຈະຝາກ ແນວທາງປະຕິບັດເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດສະບັບນີ້ ເພື່ອໄວ້ເປັນມໍຣະດົກສ່ວນໜຶ່ງຂອງທ່ານປະທານາທິບໍດີ ໃຫ້ແກ່ ປະຊາຄົມໂລກ.

ໃນຄວາມເປັນຈິງ, ຈຸດທີ່ມາຂອງແນວປະຕິບັດສະບັບນີ້ ແມ່ນເກີດຂຶ້ນກ່ອນການປະກາດ ໂຄງການຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບພາວະວິກິດ (MICIC) ຂອງອົງການສະຫະປະຊາຊາດເມື່ອສາມປີກ່ອນ. ການປະກອບສ່ວນຕໍ່ແນວທາງປະຕິບັດສະບັບນີ້ ຂອງ ຟີລິບປິນ ແມ່ນໄດ້ອີງໃສ່ການເຄື່ອນຍ້າຍຖິ່ນຖານຂອງປະຊາຊົນພວກເຮົາໃນໄລຍະສີ່ທົດສະວັດ ໂດຍມີປະມານ 10 ລ້ານຄົນ ຫຼື 10 ສ່ວນຮ້ອຍຂອງປະຊາກອນພວກເຮົາທີ່ຢູ່ໃນປະເທດຕ່າງໆຫຼາຍກວ່າ 200 ປະເທດ.

ມີຄົນຟີລິບປິນໂພ້ນທະເລ (ຢູ່ຕ່າງປະເທດ) ຈຳນວນຫຼວງຫຼາຍທີ່ມີເລື່ອງເລົ່າທີ່ສະເທືອນໃຈ ແລະ ທຸກທໍລະມານ ຈາກສົງຄາມ ແລະ ໄພພິບັດທຳມະຊາດທີ່ຕົນພົບພໍ້ໃນຖານະຜູ້ເຄື່ອນຍ້າຍຖິ່ນຖານສາກົນ. ຄວາມທຸກທໍລະມານຂອງຜູ້ຄົນດັ່ງກ່າວນີ້ທີ່ຕິດພັນກັບການເຄື່ອນຍ້າຍຖິ່ນຖານ ຈຶ່ງສາມາດນຳມາອະທິບາຍໄດ້ວ່າຍ້ອນຫຍັງ ປະເທດຂອງພວກເຮົາຈຶ່ງຖື ຄວາມປອດໄພ, ຄວາມເປັນຢູ່ທີ່ດີ ແລະ ສິດຂອງ ຄົນຟີລິບປິນໂພ້ນທະເລ (ຢູ່ຕ່າງປະເທດ) ເປັນສິ່ງສຳຄັນຕົ້ນຕໍທຳອິດ ຂອງພວກເຮົາ.

ລັດຖະບານຂອງພວກເຮົາໄດ້ສ້າງກົນໄກ, ນະໂຍບາຍ ແລະ ແຜນງານຕ່າງໆເພື່ອແກ້ໄຂສະຖານະການວິກິດເຫຼົ່ານີ້. ພວກເຮົາຮັບຮູ້ວ່າຜູ້ມີສ່ວນຮ່ວມທຸກພາກສ່ວນ ລວມທັງຜູ້ເຄື່ອນຍ້າຍຖິ່ນຖານ, ຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດຕົ້ນທາງ, ອົງການຈັດຕັ້ງສັງຄົມ ແລະ ຂະແໜງເອກະຊົນລ້ວນແລ້ວແຕ່ມີບົດບາດກ່ຽວຂ້ອງທີ່ສຳຄັນຍິ່ງ.

ຕໍ່ສະພາບການທີ່ກ່າວມານັ້ນ, ພວກເຮົາເວົ້າໄດ້ວ່າ ການປະກອບສ່ວນຂອງປະເທດເຮົາຕໍ່ ແນວທາງປະຕິບັດຂອງໂຄງການ MICIC ໂດຍສະເພາະພາກປະຕິບັດ ແມ່ນໄດ້ມາຈາກເລືອດ, ເຫື່ອ ແລະ ນ້ຳຕາຂອງຜູ້ເຄື່ອນຍ້າຍຖິ່ນຖານຄົນຟີລິບປິນຂອງພວກເຮົາເອງ ແລະ ຈາກບົດຮຽນທີ່ຜູ້ເຮັດວຽກໃນແຖວໜ້າເກັບກ່ຽວມາໄດ້ຈາກພາກສະໜາມ: ນັບຕັ້ງແຕ່ ກະຊວງການຕ່າງປະເທດ, ກະຊວງແຮງງານ ແລະ ການຈ້າງງານ, ກະຊວງສະຫວັດດີການສັງຄົມ ແລະ ການພັດທະນາ ຕະຫຼອດເຖິງ ຄະນະກະກຽມຄວາມພ້ອມ ແລະ ຮັບມືໂພ້ນທະເລ (ຢູ່ຕ່າງປະເທດ) ທີ່ ທ່ານ ປະທານດາທິບໍດີ ອາກີໂນ ໄດ້ສ້າງຕັ້ງຂຶ້ນໃນປີ 2011.

ຄວາມພະຍາຍາມເຫຼົ່ານີ້ກໍບໍ່ແມ່ນວ່າຈະສົມບູນແບບບໍ່ມີທີ່ຕິແຕ່ຢ່າງໃດ ແລະ ຍັງມີອີກຫຼາຍວຽກງານທີ່ຕ້ອງໄດ້ເຮັດ. ຟີລິບປິນຍັງມຸ່ງໝັ້ນທີ່ຈະສ້າງໂອກາດໃນການຈ້າງງານ ແລະ ການລົງທຶນພາຍໃນປະເທດໃຫ້ກວ້າງຂວາງກວ່າເກົ່າ ເພື່ອໃຫ້ການເຄື່ອນຍ້າຍຖິ່ນຖານເປັນພຽງທາງເລືອກແທນທີ່ຈະແມ່ນຄວາມຈຳເປັນ. ພວກເຮົາຈະສືບຕໍ່ເຮັດວຽກເພື່ອເພີ່ມຜົນປະໂຫຍດຈາກການເຄື່ອນຍ້າຍຖິ່ນຖານໃຫ້ໄດ້ສູງທີ່ສຸດສຳລັບປະຊາຊົນຂອງພວກເຮົາ ກໍຄື ການຫລຸດຜ່ອນຄ່າໃຊ້ຈ່າຍ-ຕົ້ນທຶນໃຫ້ຕ່ຳທີ່ສຸດ.

ໃນຍາມວິກິດ, ພວກເຮົາກໍຈຶ່ງມາຮູ້ໂຕຊ້ຳແລ້ວຊ້ຳອີກວ່າ ພວກເຮົາບໍ່ສາມາດຈັດການແກ້ໄຂບັນຫາດ້ວຍຕົນເອງ. ລັດຖະບານ, ອົງການຈັດຕັ້ງສາກົນ, ຂະແໜງເອກະຊົນ ແລະ ອົງການຈັດຕັ້ງສັງຄົມຕ້ອງຮ່ວມມືກັນເພື່ອຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານຢ່າງວ່ອງໄວ ແລະ ຍືດຍຸ່ນ ເພື່ອ: ຊ່ວຍເຫຼືອຊີວິດ, ເພີ່ມການປົກປ້ອງໃຫ້ສູງຂຶ້ນ, ຫລຸດຜ່ອນຄວາມບອບບາງ-ຄວາມສ່ຽງ-ຄວາມດ້ອຍໂອກາດ, ແລະ ປັບປຸງການຮັບມືໃຫ້ດີຂຶ້ນກວ່າເກົ່າ. ທັງໝົດເຫຼົ່ານີ້ແມ່ນ ຄາຖາ ຫຼື ໝາກຫົວໃຈຂອງ ໂຄງການ MICIC.

ສຸດທ້າຍນີ້, ຂ້າພະເຈົ້າຂໍຍົກຂໍ້ຄວາມທີ່ກ່າວໂດຍ ລິນ-ມານູແອນ ມີຣັນດາ, ຜູ້ສ້າງບົດລະຄອນຍອດນິຍົມຂອງບຣອດເວເລື່ອງ ແຮມິວຕັນ ຄື: “ໃນປີໜຶ່ງເມື່ອນັກການເມືອງ ນຳເຂົ້າວາທະສິນຊວນເຊື່ອກ່ຽວກັບການຕ້ານຜູ້ເຄື່ອນຍ້າຍຖິ່ນຖານ-ຜູ້ອົບພະຍົບນັ້ນ, ແຕ່ກໍຍັງມີ ລະຄອນເວທີບຣອດເວເລື່ອງໜຶ່ງ ຕັກເຕືອນໃຫ້ພວກເຮົາຮູ້ວ່າ ຍັງມີຜູ້ເຄື່ອນຍ້າຍຖິ່ນຖານເປັນກຳພ້າທີ່ສິ້ນເນື້ອປະດາຕົວຈາກ ອິນດີ້ຕາເວັນຕົກຄົນໜຶ່ງ ໄດ້ເປັນຜູ້ສ້າງລະບົບການເງິນຂອງພວກເຮົາຂຶ້ນມາ. ເປັນເລື່ອງໜຶ່ງທີ່ເຕືອນໃຫ້ພວກເຮົາຮູ້ວ່າ ການເລີ່ມຕົ້ນຫຼິ້ນດົນຕີເພັງຊິມໂຟນີທີ່ປະພັນບໍ່ສຳເລັດ ມັນແມ່ນການທົດລອງຂອງຄົນຊາວອາເມຣິກາ, ແບບຊ້ຳແລ້ວຊ້ຳອີກ ແລະ ກໍແມ່ນຜູ້ເຄື່ອນຍ້າຍຖິ່ນຖານ-ຜູ້ອົບພະຍົບນີ້ເອງທີ່ເປັນຜູ້ເຮັດໃຫ້ວຽກນີ້ສຳເລັດລົງໄດ້.”

## *ບົດນຳໂດຍ ປີເຕີ ຊາເທີແລນດ໌, ຜູ້ຕາງໜ້າພິເສດຂອງ ຫ້ອງການເລຂາທິການເພື່ອການເຄື່ອນຍ້າຍຖິ່ນຖານສາກົນ ຂອງອົງການສະຫະປະຊາຊາດ ທີ່ມີຕໍ່ ແນວທາງປະຕິບັດຂອງໂຄງການ MICIC*

ພາຍຫຼັງສົງຄາມລິເບຍເລີ່ມການປະທຸປະທະຂຶ້ນໃນປີ 2011, ຕອນທີ່ຂ້າພະເຈົ້າສະເໜີໂຄງການຄັ້ງທຳອິດ ຂ້າພະເຈົ້າກໍຮູ້ດີວ່າ ສະຫະລັດອາເມຣິກາ ແລະ ຟີລິບປິນຈະເປັນຄູ່ຮ່ວມງານທີ່ດີທີ່ສຸດໃນການນຳພາໂຄງການດັ່ງກ່າວ. ແລະ ຂ້າພະເຈົ້າກໍຕ້ອງຍອມຮັບວ່າ ຂ້າພະເຈົ້າກໍຕື່ນເຕັ້ນ-ປະຫຼາດໃຈກັບຄວາມດີເລີດຢ່າງແທ້ຈິງ, ຄວາມວ່ອງໄວ ແລະ ການທູດຂອງຂະບວນການທີ່ທັງສອງປະເທດໄດ້ນຳພາ ແລະ ຜະລິດຕະພັນທີ່ໄດ້ສ້າງຂຶ້ນ. ໂຄງການຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບໄພວິກິດ (MICIC) ແລະ ຄູ່ມືແນະນຳທີ່ໂຄງການໄດ້ພັດທະນາຂຶ້ນແມ່ນມີຄວາມໝາຍຄວາມສຳຄັນຍ້ອນຫຼາຍເຫດຜົນ, ແຕ່ຂ້າພະເຈົ້າຂໍຍົກ 3 ຈຸດໃນທີ່ນີ້.

ຈຸດທຳອິດ, ແນວທາງປະຕິບັດສະບັບນີ້ ແມ່ນບົນພື້ນຖານສາມັນສຳນຶກທີ່ເລິກເຊິ່ງ ເຊິ່ງມີຄູນຄ່າຂາດຂັ້ນໂດຍປັດສະຈາກ ຂໍ້ໂຕ້ຖຽງທາງດ້ານການເມືອງທົ່ວໄປຢ່າງໜ້າເຫຼືອເຊື່ອ ກ່ຽວກັບປະເດັນການເຄື່ອນຍ້າຍຖິ່ນຖານ. ແນວທາງປະຕິບັດນີ້ ເປັນຂໍ້ພິສູດໃຫ້ເຫັນວ່າ ລັດທີ່ມີຄວາມຕັ້ງໃຈ ແລະ ບຸກຄົນທີ່ມີຄວາມໝາຍໝັ້ນນັ້ນແມ່ນສາມາດບັນລຸຜົນເມື່ອເຂົາເຈົ້າສຸມໃສ່ແກ້ໄຂບັນຫາທີ່ເກີດຂຶ້ນຈິງໃນໂລກ. ດ້ວຍການເຮັດວຽກຮ່ວມກັນຢ່າງມີເປົ້າໝາຍ, ບັນດາລັດ, ນາຍຈ້າງ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ ກໍໄດ້ສ້າງ ທິດຊີ້ນຳ, ເວົ້າແບບເຂົ້າໃຈງ່າຍໆ, ທີ່ຈະຫລຸດຜ່ອນຄວາມທໍລະມານຂອງມວນມະນຸດ.

ຈຸດທີສອງ, ແນວທາງປະຕິບັດສະບັບນີ້ ເປັນຫຼັກຖານທີ່ສ້າງແຮງບັນດານໃຈໃນຄຸນຄ່າເຊິ່ງຂ້າພະເຈົ້າເອີ້ນວ່າ ການຮ່ວມມືຫຼາຍຝ່າຍຂະໜາດນ້ອຍ. ແທນທີ່ຈະລໍຖ້າໃຫ້ມີການຕົກລົງເກີດຂຶ້ນຂອງ 193 ປະເທດສະມາຊິກ, ກໍມີກຸ່ມຜູ້ລິເລີ່ມນ້ອຍໆທີ່ໄດ້ຕັດສິນໃຈຮັບເອົາຄວາມຮັບຜິດຊອບເພື່ອຂັບເຄື່ອນຄວາມຄືບໜ້າໃນບັນຫາທີ່ທົ່ວໂລກກັງວົນໃຈ. ຂ້າພະເຈົ້າເຊື່ອວ່າ ຕົວແບບການຮ່ວມມືຫຼາຍຝ່າຍຂະໜາດນ້ອຍນີ້ ຕ້ອງເປັນແກນຫຼັກຂອງຄວາມກ້າວໜ້າໃນການຮ່ວມມືສາກົນ ໃນທົດສະວັດຕໍ່ໜ້າ ຍ້ອນວ່າ ລັດຖະບານຫຼາຍປະເທດອາດມີຄວາມລັ່ງເລໃຈທີ່ຈະຮ່ວມມືໃນລະດັບສາກົນ ຫຼື ໂດຍທົ່ວໄປມີການຢຸດສະຫງັກຍ້ອນຄວາມຢ້ານໃນການແກ້ໄຂບັນຫາການເຄື່ອນຍ້າຍຖິ່ນຖານ.

ຈຸດທີສາມ, ແລະ ທີ່ສຳຄັນກວ່າໝູ່ແມ່ນ: ຂ້າພະເຈົ້າປະທັບໃຈກັບຄວາມຈິງທີ່ ແນວທາງປະຕິບັດສະບັບນີ້ໄດ້ເລີ່ມຈາກ 3 ຄຳງ່າຍໆທີ່ຊົງພະລັງຄື: “ຊ່ວຍຊີວິດກ່ອນ.” ຄຳສັ່ງທີ່ມີໂວຫານດັ່ງກ່າວນີ້ ສະທ້ອນເຖິງ ຈິດວິນຍານຂອງຄວາມພະຍາຍາມນີ້ ແລະ ໃນດ້ານມະນຸດສະທຳພື້ນຖານທີ່ພວກເຮົາຕ້ອງຄຳນຶງເຖິງໃນວຽກງານຂອງພວກເຮົາ. ສາມຄຳດັ່ງກ່າວນັ້ນຍັງເປັນແສງສະຫວ່າງໃນໄລຍະທີ່ມີແນວຄິດການໃຊ້ຄວາມຮຸນແຮງ ເມື່ອຜູ້ເຄື່ອນຍ້າຍຖິ່ນຖານຖືກສວຍໂອກາດເອົາລັດເອົາປຽບຢ່າງໂຫດຮ້າຍປ່າເຖື່ອນໂດຍຜູ້ທີ່ຮຽກຮ້ອງອຳນາດປະຊານິຍົມ (populists) ໂດຍເລັ່ງໃສ່ແບ່ງແຍກສັງຄົມດ້ວຍການລໍ້ລວງ ແລະ ຫວັງທຳລາຍເພື່ອໃຫ້ພວກເຮົາຫຼີກຈາກ “ຜູ້ອື່ນ,” ແລະ ເລືອກຈຳແນກຜູ້ອື່ນອີງຕາມສີຜິວ, ເຜົ່າຊົນ ຫຼື ຄວາມເຊື່ອ. ໃນເວລາວິກິດນີ້, ພວກເຮົາຄວນຄຳນຶງເຖິງສິ່ງທີ່ພວກເຮົາມີຄືກັນ ຄື: ພວກເຮົາເປັນສ່ວນໜຶ່ງຂອງ ມະນຸດຊາດ ເຊິ່ງເປັນ ອັດຕະລັກພື້ນຖານທີ່ຕ້ອງຊີ້ນຳຕໍ່ ການປະຕິບັດ ແລະ ປະຕິກິລິຍາຂອງພວກເຮົາ.

*ແນວທາງປະຕິບັດຂອງໂຄງການ* MICIC *ເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ* ຄວນຖືເປັນສ່ວນໜຶ່ງຂອງຄວາມພະຍາຍາມທີ່ຍິ່ງໃຫຍ່ເພື່ອປິດຊ່ອງຫວ່າງລວມໆທີ່ຈະມີຂຶ້ນໃນການປົກປ້ອງ ຜູ້ເຄື່ອນຍ້າຍຖິ່ນຖານທີ່ຕົກຢູ່ໃນຄວາມສ່ຽງ. ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍມາຍັງ ສະຫະລັດອາເມຣິກາ ແລະ ຟີລິບປິນ ແລະ ຄະນະຂອງທັງສອງປະເທດທີ່ໄດ້ຮິບໂຮມພັດທະນາແນວທາງປະຕິບັດ ທີ່ດີເລີດ ແລະ ນຳໄປປະຕິບັດໄດ້ໃນຕົວຈິງເຫຼົ້ມນີ້. ບັດນີ້ກໍເປັນໜ້າທີ່ຂອງພວກເຮົາທີ່ຈະບໍ່ປະໃຫ້ແນວທາງປະຕິບັດສະບັບນີ້ ຕັ້ງຢູ່ ແລະ ຈັບຂີ້ຝຸ່ນຢູ່ເທິງຕູ້ປຶ້ມໂດຍບໍ່ເກີດປະໂຫຍດ, ແຕ່ພວກເຮົາຕ້ອງໝູນໃຊ້ແນວທາງປະຕິບັດສະບັບນີ້ໃນພາກປະຕິບັດຕົວຈິງໃນທົ່ວໂລກເພື່ອຫລຸດຜ່ອນ ຄວາມທໍລະມານ ແລະ ຄວາມສິ້ນຫວັງຂອງ ຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກະທົບໂດຍພາວະວິກິດ ເຊິ່ງເປັນ ສະພາບການແຫ່ງຄວາມສິ້ນຫວັງທີ່ພວກເຮົາໄດ້ເປັນສັກຂີພິຍານເຫັນເຫດການທີ່ເກີດຂຶ້ນໃນຕົວຈິງຫຼາຍຄັ້ງເກີນໄປແລ້ວໃນຊຸມປີຜ່ານມາ.

ສຸດທ້າຍນີ້, ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍ ກອງເລຂາໂຄງການ MICIC ຂອງອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (International Organization for Migration (IOM)) ທີ່ໄດ້ຈັດຫາຄວາມຊໍານິຊໍານານ ແລະ ຄວາມເປັນມືອາຊີບທີ່ສຳຄັນໃນການສະໜັບສະໜູນໂຄງການທີ່ລັດຖະບານນຳພາເປັນເຈົ້າການນີ້. ການສະໜັບສະໜູນລະດັບສາກົນຕໍ່ພະນັກງານລັດ ແມ່ນສິ່ງທີ່ປະຊາຄົມສາກົນພວກເຮົາຄາດຫວັງ ຈາກບັນດາສະຖາບັນທີ່ພວກເຮົາໄດ້ເກັບຄ່າທົດແທນຕ່າງໆເພື່ອຕາງໜ້າເຮັດວຽກໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ບັນດາປະເທດສະມາຊິກທີ່ມີຄວາມຮັບຜິດຊອບໃນການປົກປ້ອງ ແລະ ຊ່ວຍເຫຼືອພວກເຂົາເຈົ້າ. ຂ້າພະເຈົ້າເຊື່ອໝັ້ນວ່າ ພວກເຮົາເຈົ້າຈະສືບຕໍ່ເພິ່ງພາອົງການ IOM ໃນຖານະຄູ່ຮ່ວມງານທີ່ຊໍານິຊໍານານ ແລະ ໄວ້ວາງໃຈໄດ້ໃນການເຮັດວຽກເພື່ອປັບປຸງຊີວິດການເປັນຢູ່ຂອງ ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊ່ວຍເຫຼືອບັນດາປະເທດຕ່າງໆໃນການແກ້ໄຂບັນຫາການເຄື່ອນຍ້າຍຖິ່ນຖານຢ່າງມີມະນຸດສະທຳຫຼາຍຂຶ້ນກວ່າເກົ່າ.

## *ບົດນຳໂດຍ ວິລຽມ ເລຊີ ສະວິງ, ຫົວໜ້າຂອງ ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (International Organization for Migration (IOM)) ຕໍ່ ຄູ່ມືແນະນຳຂອງໂຄງການ MICIC*

ໂຄງການຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບໄພວິກິດ (MICIC) ແລະ ແນວທາງປະຕິບັດ ຂອງໂຄງການເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ ແມ່ນມີຄວາມໝາຍຄວາມສຳຄັນທາງດ້ານໄລຍະເວລາ. ການເຄື່ອນຍ້າຍຖິ່ນຖານເປັນແນວໂນ້ມທີ່ຍິ່ງໃຫຍ່ມະໂຫລານຂອງສັດຕະວັດນີ້. ທຸກໆປະເທດແມ່ນມີຜູ້ເຄື່ອນຍ້າຍຖິ່ນຖານທີ່ມາຈາກປະເທດອື່ນໆ ແລະ ກໍມີທັງພົນລະເມືອງຂອງຕົນໄປຢູ່ຕ່າງປະເທດ. ການເຄື່ອນຍ້າຍຖິ່ນຖານບໍ່ວ່າຈະພາຍໃນ ຫຼື ລະຫວ່າງປະເທດແນ່ນອນຢູ່ແລ້ວແມ່ນ ຍິ່ງຈະເພີ່ມຂຶ້ນໃນຂະນະທີ່ໂລກກາຍມາເປັນໂລກາພິວັດຫຼາຍຂຶ້ນ. ຜູ້ເຄື່ອນຍ້າຍຖິ່ນຖານຈະເປັນຜູ້ຕິດຢູ່ໃນທຸກໆເຫດການລະຫວ່າງຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດ ແລະ ເປັນກຸ່ມທີ່ບອບບາງ-ມີຄວາມສ່ຽງທີ່ສຸດ.

ຜູ້ເຄື່ອນຍ້າຍຖິ່ນຖານຈະເປັນຜູ້ຕົກຢູ່ໃນລະຫວ່າງຈຸດບອດຂອງກົນໄກການປົກປ້ອງທີ່ມີຢູ່ ແລະ ຍາມໃດກໍບໍ່ໄດ້ຮັບຄວາມສຳຄັນໃນການເຮັດວຽກ ແລະ ແຜນງານການກະກຽມຄວາມພ້ອມຮັບມືກັບໄພວິກິດ ແລະ ການຮັບມືກັບໄພສຸກເສີນ ເຖິງແມ່ນວ່າ ເຂົາເຈົ້າເປັນຜູ້ທີ່ບອບບາງ-ມີຄວາມສ່ຽງຫຼາຍກວ່າພົນລະເມືອງຂອງປະເທດທີ່ປະເຊີນກັບວິກິດ. ຈາກປະສົບການຂອງ IOM ໃນການນຳຜູ້ເຄື່ອນຍ້າຍຖິ່ນຖານ 230.000 ຄົນທີ່ຕົກຢູ່ໃນພາວະຄວາມຂັດແຍ່ງຢູ່ລີເບຍ ໄປສູ່ບ່ອນປອດໄພ, ພວກເຮົາກໍໄດ້ດຳເນີນການຕໍ່ຢ່າງເປັນຮູບປະທຳເພື່ອກຽມຄວາມພ້ອມໃຫ້ດີກວ່າເກົ່າໃນອະນາຄົດ. ພວກເຮົາໄດ້ພັດທະນາກອບການດຳເນີນງານດ້ານວິກິດການຂອງການເຄື່ອນຍ້າຍຖິ່ນຖານ ເຊິ່ງເປັນເຄື່ອງມືດ້ານການດຳເນີນງານເພື່ອປັບປຸງຄວາມສາມາດຂອງ IOM ແລະ ຜູ້ມີສ່ວນຮ່ວມກ່ຽວຂ້ອງອື່ນໆໃນການຮັບມືກັບຄວາມຕ້ອງການຂອງປະຊາກອນທີ່ບອບບາງ-ມີຄວາມສ່ຽງທີ່ຈະຖືກກະທົບຈາກໄພວິກິດ. ນອກຈາກນັ້ນ, ພວກເຮົາຍັງໄດ້ສ້າງ ກົນໄກການສະໜອງທຶນສຸກເສີນເພື່ອການເຄື່ອນຍ້າຍຖິ່ນຖານ ເຊິ່ງເຮັດໃຫ້ IOM ສາມາດໃຫ້ການຊ່ວຍເຫຼືອຢ່າງຮີບດ່ວນໂດຍທັນທີໃນການຊ່ວຍເຫຼືອຊີວິດ. ແນວໃດກໍຕາມ ກໍຍັງມີອີກຫຼາຍວຽກງານທີ່ຍັງຈະຕ້ອງດຳເນີນການລວມທັງ ການນຳເອົາຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄວາມຕ້ອງການຂອງເຂົາເຈົ້າເຂົ້າໃນ ນະໂຍບາຍ ແລະ ແຜນການ ມະນຸດສະທຳ ແລະ ການພັດທະນາ. ແນວທາງປະຕິບັດສະບັບນີ້ ໃຫ້ຂໍ້ແນະນຳທີ່ປະຕິບັດໄດ້ໃນຕົວຈິງເພື່ອໃຫ້ພວກເຮົາຄຸ້ມຄອງມິຕິຕ່າງໆຂອງການເຄື່ອນຍ້າຍ ໃນພາວະວິກິດ ແລະ ໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານຢ່າງມີປະສິດທິຜົນກວ່າເກົ່າ.

ການເຄື່ອນຍ້າຍຖິ່ນຖານປະກອບສ່ວນຕໍ່ການພັດທະນາເສດຖະກິດທັງໃນປະເທດຕົ້ນທາງ ແລະ ປະເທດປາຍທາງ ແລະ ທັງເຮັດໃຫ້ໂຄງສ້າງດ້ານສັງຄົມ ແລະ ວັດທະນະທຳຂອງຊຸມຊົນພວກເຮົາມີຄວາມມັ່ງຄັ່ງກວ່າເກົ່າ. ແນວໃດກໍຕາມ ເມື່ອເກີດວິກິດແລ້ວ ຜົນປະໂຫຍດເຫຼົ່ານີ້ກໍອາດໄດ້ຮັບຜົນກະທົບ. ເສດຖະກິດທີ່ເອື່ອຍອີງໃສ່ແຮງງານເຄື່ອນຍ້າຍອາດໄດ້ຮັບຜົນກະທົບຖ້າວ່າ ຜູ້ເຄື່ອນຍ້າຍຖິ່ນຖານຫາກອອກຈາກປະເທດຍ້ອນເກີດວິກິດ ເຮັດໃຫ້ການຟື້ນຟູທາງເສດຖະກິດມີຄວາມຫຍຸ້ງຍາກຍິ່ງຂຶ້ນ. ຊຸມຊົນ ຫຼື ປະເທດທີ່ຕ້ອງປະເຊີນກັບການກັບຄືນມາຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ໜີຈາກປະເທດທີ່ພວມມີວິກິດນັ້ນ ອາດມີຄວາມເຄັ່ງຕຶງທາງສັງຄົມ ແລະ ບັນຫາການຂາດແຄນຊັບພະຍາກອນ ແລະ ການບໍລິການໃນທ້ອງຖິ່ນ. ແນວທາງປະຕິບັດສະບັບນີ້ ໃຫ້ຂໍ້ແນະນຳວ່າ ການເຄື່ອນຍ້າຍຖິ່ນຖານຈະປະກອບສ່ວນແນວໃດຕໍ່ ຄວາມທົນທານ-ຄວາມສາມາດປັບຕົວ, ການຟື້ນຟູ ແລະ ຄວາມເປັນຢູ່ທີ່ດີຂອງຊຸມຊົນ ແລະ ສັງຄົມຂອງພວກເຮົາ.

ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງລັດຖະບານຟີລິບປິນ ແລະ ສະຫະລັດອາເມຣິກາ ກໍຄື ສະມາຊິກຂອງຄະນະເຮັດວຽກກັບໂຄງການ MICIC ທີ່ໄດ້ສະແດງຄວາມເປັນຜູ້ນຳຢ່າງເຂັ້ມແຂງຜ່ານໂຄງການນີ້. ນອກຈາກນັ້ນຂ້າພະເຈົ້າກໍຂໍສະແດງຄວາມຂອບໃຈມາຍັງທຸກທ່ານທີ່ເຊື່ອໝັ້ນ ແລະ ໃຫ້ຄວາມໄວ້ເນື້ອເຊື່ອໃຈອົງການ IOM ໃນການເປັນກອງເລຂາ. ໂຄງການ MICIC ເປັນຕົວຢ່າງທີ່ດີຍິ່ງ ສະແດງໃຫ້ເຫັນວ່າ ລັດ ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງແມ່ນສາມາດເຮັດວຽກຮ່ວມກັນເພື່ອພັດທະນາວິທີການໃຫ້ດີຂຶ້ນ ໃນການຈັດການກັບການເຄື່ອນຍ້າຍຖິ່ນຖານ, ການຖອດຖອນບົດຮຽນໂດຍໝູນໃຊ້ທັດສະນະ, ຄວາມຊຳນິຊຳນານ ແລະ ປະສົບການຂອງຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງໃນການເຮັດວຽກຮ່ວມກັນກັບຜູ້ຕາງໜ້າຜູ້ເຄື່ອນຍ້າຍຖິ່ນຖານ.

ຂະບວນການປຶກສາຫາລືແບບມີສ່ວນຮ່ວມທີ່ໄດ້ນຳໃຊ້ເພື່ອພັດທະນາແນວທາງສະບັບນີ້ ແມ່ນໄດ້ຮັບປະກັນການປະກອບສ່ວນຢ່າງກົງໄປກົງມາຕໍ່ ການສົນທະນາ ແລະ ການພັດທະນາແນວທາງປະຕິບັດ ຂອງ ລັດຖະບານໃນທຸກໆພາກພື້ນຂອງໂລກ, ອົງການລະຫວ່າງລັດຖະບານ, ພາກເອກະຊົນ ລວມທັງ ຜູ້ຈ້າງງານ ແລະ ຜູ້ຈັດຫາງານຂອງຜູ້ເຄື່ອນຍ້າຍຖິ່ນຖານ, ອົງການຈັດຕັ້ງສັງຄົມ ລວມທັງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສະມາຄົມຜູ້ອົບພະຍົບ ແລະ ຜູ້ເຄື່ອນຍ້າຍຖິ່ນຖານເອງ. ຜົນຮັບກໍຄື ໄດ້ມີການພັດທະນາແນວທາງປະຕິບັດທີ່ເປັນທັງຫຼັກການ ແລະ ພາກປະຕິບັດໃນຕົວຈິງ ທີ່ສາມາດເປັນໄປໄດ້ ແລະ ຕ້ອງນຳໄປຜັນຂະຫຍາຍຈັດຕັ້ງປະຕິບັດ.

ພວກເຮົາມີຄວາມຮັບຜິດຊອບຮ່ວມກັນທີ່ຈະປັບປຸງການປະຕິບັດງານຂອງພວກເຮົາ ແລະ ຫລຸດຜ່ອນຄວາມບອບບາງ-ຄວາມສ່ຽງຂອງຜູ້ເຄື່ອນຍ້າຍຖິ່ນຖານ. ສະນັ້ນ, ຂ້າພະເຈົ້າຂໍຊຸກຍູ້ຜັກດັນທຸກໆທ່ານໃຫ້ນຳໃຊ້ຄູ່ແນວທາງປະຕິບັດສະບັບນີ້ເພື່ອຊ່ວຍເຫຼືອຊີວິດ, ເພີ່ມການປົກປ້ອງ ແລະ ຮັບມືກັບໄພວິກິດໃນທາງທີ່ປອດໄພ, ຢ່າງມີກຽດສັກດີ ແລະ ເພື່ອຄວາມເປັນຢູ່ທີ່ດີຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສັງຄົມ.

# ສາລະບານ



Women fleeing conflict in the Central African Republic arriving in Chad 2014 © Catianne Tijerina

**ບົດນຳ** 3

**ພາກສະເໜີ** 11

**ຂອບເຂດ ແລະ ຈຸດປະສົງ** 15

**ຫຼັກການ** 18

**ແນວດທາງປະຕິບັດ** 22

I. ການກະກຽມຄວາມພ້ອມເພື່ອຮັບມືກັບໄພວິກິດ 23

ແນວທາງປະຕິບັດ 1: ເກັບກຳຂໍ້ມູນກ່ຽວກັບຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດ ແລະ ຜົນກະທົບທີ່ອາດເກີດຂຶ້ນຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ 23

ແນວທາງປະຕິບັດ 2: ເກັບກຳ ແລະ ແບ່ງປັນຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານຕາມເງື່ອນໄຂ ຄວາມເປັນສ່ວນຕົວ, ການຮັກສາຄວາມປອດໄພ ແລະ ສະຫວັດດີການຂອງຜູ້ເຄື່ອນຍ້າຍຖິ່ນຖານ 24

ແນວທາງປະຕິບັດ 3: ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານໃຫ້ຊ່ວຍຕົວເອງ, ຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າໃນໄລຍະ ແລະ ຫຼັງວິກິດການ 25

ແນວທາງປະຕິບັດ 4: ການຄຳນຶງເຖິງ-ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນລະບົບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ 26

ແນວທາງປະຕິບັດ 5: ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນການວາງແຜນໆສຳຮອງ ແລະ ໃຫ້ລວບລວມຄວາມຕ້ອງການ ແລະ ຄວາມອາດສາມາດຂອງເຂົາເຈົ້າເຂົ້ານຳ 27

ແນວທາງປະຕິບັດ 6: ສື່ສານຢ່າງມີປະສິດທິຜົນກັບຜູ້ເຄື່ອນຍ້າຍຖິ່ນຖານ 28

ແນວທາງປະຕິບັດ 7: ກຳນົດລ່ວງໜ້າຂໍ້ຕົກລົງໃນການປະສານງານເພື່ອໝູນໃຊ້ຈຸດແຂງ ແລະ ສົ່ງເສີມຄວາມໄວ້ເນື້ອເຊື່ອໃຈ 30

ແນວທາງປະຕິບັດ 8: ສ້າງຄວາມອາດສາມາດ ແລະ ຮຽນຮູ້ບົດຮຽນຕ່າງໆເພື່ອການຮັບມືກັບ ພາວະສຸກເສີນ ແລະ ຂໍ້ປະຕິບັດພາຍຫຼັງວິກິດ 31

II. ການຮັບມືກັບພາວະສຸກເສີນ 32

ແນວທາງປະຕິບັດ 9: ສື່ສານຢ່າງກວ້າງຂວາງ, ມີປະສິດທິຜົນ, ແລະ ສະໜໍ່າສະເໝີກັບຜູ້ເຄື່ອນຍ້າຍຖິ່ນຖານກ່ຽວກັບວິກິດການທີ່ເກີດຂຶ້ນ ແລະ ວິທີການເຂົ້າເຖິງການຊ່ວຍເຫຼືອ 32

ແນວທາງປະຕິບັດ 10: ເອື້ອອຳນວຍໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດຍ້າຍໄປບ່ອນປອດໄພ 33

ແນວທາງປະຕິບັດ 11: ໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳແກ່ຜູ້ເຄື່ອນຍ້າຍຖິ່ນຖານໂດຍບໍ່ຈຳແນກ-ບໍ່ເລືອກປະຕິບັດ 34

ແນວທາງປະຕິບັດ 12: ວາງລະບຽບຂັ້ນຕອນການນຳສົ່ງຜູ້ເຄື່ອນຍ້າຍຖິ່ນຖານ ໃຫ້ຊັດເຈນລະຫວ່າງຜູ້ມີສ່ວນຮ່ວມ 35

ແນວທາງປະຕິບັດ 13: ຍົກຍ້າຍ ແລະ ອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານເມື່ອຈຳເປັນ 36

III. ການປະຕິບັດການພາຍຫຼັງວິກິດ 37

ແນວທາງປະຕິບັດ 14: ແກ້ໄຂຄວາມຕ້ອງການຮີບດ່ວນຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສະໜັບສະໜູນຜູ້ເຄື່ອນຍ້າຍຖິ່ນຖານໃນການສ້າງຊີວິດໃໝ່ 37

ແນວທາງປະຕິບັດ 15: ສະໜັບສະໜູນຊຸມຊົນເຈົ້າພາບຂອງຜູ້ເຄື່ອນຍ້າຍຖິ່ນຖານ 38

**ພາກປະຕິບັດ 40**

I. ພາກປະຕິບັບເພື່ອສະໜັບສະໜູນການກະກຽມຄວາມພ້ອມກັບມືກັບວິກິດ 42

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 1 42

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 2 46

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 3 51

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 4 61

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 5 65

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 6 71

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 7 76

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 8 81

II: ພາກປະຕິບັດເພື່ອສະໜັບສະໜູນການຮັບມືກັບພາວະສຸກເສີນ 92

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 9 92

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 10 98

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 11 102

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 12 110

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 13 113

III: ພາກປະຕິບັດເພື່ອສະໜັບສະໜູນ ຂໍ້ປະຕິບັດການພາຍຫຼັງວິກິດ 119

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 14 119

ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 15 126

**ປະມວນຄຳສັບ** **130**

**ຄຳຫຍໍ້** **133**

# ພາກສະເໜີ



Vietnamese migrant workers stranded in the conflict in Lebanon 2006 © IOM

## ຄວາມເປັນມາຂອງ ໂຄງການຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະຊີນກັບໄພວິກິດ

ເມື່ອຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດເກີດຂຶ້ນ ແມ່ນສາມາດກະທົບໃນລະດັບທີ່ແຕກຕ່າງກັນໄປຕໍ່ ຜູ້ເຄື່ອນຍ້າຍຖິ່ນຖານທີ່ອາໄສ, ເຮັດວຽກ, ສຶກສາ, ເດີນທາງ ຫຼື ພວມລໍຖ້າການປ່ຽນປະເທດ ຢູ່ໃນປະເທດທີ່ປະເຊີນກັບໄພວິກິດ. ແຜ່ນດິນໄຫວ ແລະ ຄື້ນຊູນາມິຢູ່ໃນ ໂທໂຫກຸ ຍີ່ປຸ່ນ (2011), ນ້ຳຖ້ວມຢູ່ໃນໄທ (2011), ເຮີຣິເຄນແຊນດີຢູ່ໃນ ສະຫະລັດອາເມຣິກາ (2012), ແລະ ຄວາມຂັດແຍ່ງທີ່ກະຈາຍຢູ່ໃນ ສາທາລະນະລັດອາຟຣິກາກາງ ແລະ ເຢເມນ ໃນຊຸມປີຜ່ານມາ ເປັນພຽງບາງຕົວຢ່າງຂອງໄພວິກິດ ທີ່ຜູ້ເຄື່ອນຍ້າຍຖິ່ນຖານເປັນໜຶ່ງໃນພາກສ່ວນທີ່ໄດ້ຮັບຜົນກະທົບຢ່າງຮ້າຍແຮງ. ໃນຂະນະທີ່ພວກເຂົາທົນທານສາມາດປັບຕົວໃຫ້ກັບມາສູ່ສະພາບເດີມ ແລະ ມີຊັບພະຍາກອນແກ້ໄຂບັນຫາໄດ້ ແຕ່ກໍຍັງມີປັດໄຈຈຳນວນໜຶ່ງທີ່ສ້າງຄວາມບອບບາງ-ຄວາມສ່ຽງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານໃນເວລາທີ່ ປະເຊີນກັບໄພວິກິດຕ່າງໆ. ອຸປະສັກດ້ານພາສາ, ຂໍ້ຈຳກັດດ້ານການເຄື່ອນຍ້າຍ, ສະຖານະດ້ານການເຂົ້າເມືອງທີ່ບໍ່ມີການຈົດທະບຽນ, ເອກະສານລະບຸຕົວຕົນ-ປະຈຳຕົວ ຫຼື ເອກະສານການເດີນທາງທີ່ຖືກຍຶດ ຫຼື ສູນເສຍ, ເຄືອຂ່າຍທາງສັງຄົມທີ່ຈຳກັດ, ການຖືກຈຳແນກໂດດດ່ຽວ, ການຖືກໂຈມຕີ ແລະ ຈຳແນກ ແມ່ນບາງປັດໄຈທີ່ທ່ວງດຶງຄວາມສາມາດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການເຂົ້າເຖິງການປົກປ້ອງ, ຍ້າຍອອກຈາກຄວາມອັນຕະລາຍ ຫຼື ຮັບປະກັນຄວາມປອດໄພ ແລະ ຄວາມເປັນຢູ່ທີ່ດີຂອງເຂົາເຈົ້າ. ໂຄງການຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບໄພວິກິດ (MICIC) ໄດ້ຖືກພັດທະນາຂຶ້ນເພື່ອແກ້ໄຂຄວາມທ້າທາຍເຫຼົ່ານີ້.

ໃນປັດຈຸບັນ, ມີຄົນເປັນຈຳນວນຫຼວງຫຼາຍເທົ່າທີ່ບໍ່ເຄີຍມີມາກ່ອນທີ່ອາໄສຢູ່ໃນປະເທດທີ່ບໍ່ແມ່ນປະເທດບ້ານເກີດຂອງຕົນເອງ. ໃນປີ 2015, ຈຳນວນຜູ້ເຄື່ອນຍ້າຍຖິ່ນຖານສາກົນມີຫຼາຍກວ່າ 244 ລ້ານ, ເຕີບໂຕໃນອັດຕາທີ່ໄວກວ່າປະຊາກອນໂລກ. ຍັງມີອີກຈຳນວນຫຼວງຫຼາຍທີ່ເປັນຜູ້ເຄື່ອນຍ້າຍຖິ່ນຖານແບບຊົ່ວຄາວ. ສ່ວນໃຫຍ່ແມ່ນມີສະຖານະຜູ້ເຄື່ອນຍ້າຍຖິ່ນຖານທີ່ປົກກະຕິ ໃນຂະນະທີ່ຜູ້ອື່ນໆ ອາດຢູ່ໃນສະຖານະການເຂົ້າເມືອງທີ່ບໍ່ມີການຈົດທະບຽນ. ສ່ວນໃຫຍ່ແມ່ນເຮັດວຽກ, ສຶກສາ ຫຼື ອາໄສຢູ່ກັບຄອບຄົວຂອງເຂົາເຈົ້າ. ມີບາງຈຳນວນທີ່ເດີນທາງໄລຍະສັ້ນເພື່ອວຽກງານທຸລະກິດ ຫຼື ພັກຜ່ອນ. ມີບາງຈຳນວນທີ່ຖືກໝູນໃຊ້ເປັນຜູ້ເຄາະຮ້າຍຂອງການຄ້າມະນຸດ ລວມທັງ ແຮງງານທີ່ມີການຜູກມັດ ຫຼື ການຕົກລົງແບບມີການເອົາປຽບຖືກລ່ວງລະເມີດ. ມີບາງຈຳນວນກໍຖືກກັກຂັງ. ມີບາງຈຳນວນທີ່ໄດ້ຫຼົບໜີໄພພິບັດທຳມະຊາດ ຫຼື ຄວາມຮຸນແຮງໃນປະເທດຕົ້ນກຳເນີດຂອງຕົນ. ກຸ່ມອື່ນໆເຊັ່ນ ຄົນຊັດເຊພະເນຈອນ, ຜູ້ລ້ຽງສັດແບບເຄື່ອນຍ້າຍທີ່ບໍ່ມີທີ່ຢູ່ອາໄສຖາວອນ ຫຼື ປະຊາກອນຊົນເຜົ່າສ່ວນໜ້ອຍທີ່ຍົກຍ້າຍຂ້າມຊາຍແດນສາກົນອັນເປັນສ່ວນໜຶ່ງຂອງວິຖີການດຳລົງຊີວິດແບບດັ້ງເດີມຂອງເຂົາເຈົ້າ.

ຜູ້ເຄື່ອນຍ້າຍຖິ່ນຖານແມ່ນມີຢູ່ໃນທຸກໆປະເທດໃນໂລກ. ໃນປີ 2015, ເກືອບສອງສ່ວນສາມຂອງຜູ້ເຄື່ອນຍ້າຍຖິ່ນຖານສາກົນທັງໝົດແມ່ນອາໄສຢູ່ທະວີບເອີຣົບ (76 ລ້ານ) ຫຼື ອາຊີ (75 ລ້ານ). ທະວີບອາເມຣິກາເໜືອ ເປັນປະເທດທີ່ໃຫ້ທີ່ຢູ່ອາໄສໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານສາກົນ ໃນຈຳນວນຫຼາຍທີ່ສຸດເປັນອັນດັບທີສາມ (54 ລ້ານ), ຕາມມາດ້ວຍທະວີບອາຟຣິກາ (21 ລ້ານ), ລາຕິນອາເມຣິກາ ແລະ ຄາຣິບຽນ (9 ລ້ານ), ແລະ ໂອຊີອານາ (8 ລ້ານ). ໃນລະຫວ່າງປີ 2000 ຫາ 2015, ທະວີບອາຊີ ແລະ ໂອຊີອານາ ໄດ້ພົບພໍ້ອັດຕາການເຕີບໂຕປະຈຳປີໂດຍສະເລ່ຍຂອງຈຳນວນຜູ້ເຄື່ອຍຍ້າຍຖິ່ນຖານໃນຈັງຫວະທີ່ໄວທີ່ສຸດ ຕາມມາດ້ວຍ ອາເມຣິກາລາຕິນ ແລະ ຄາຣິບຽນ ແລະ ອາຟຣິກາ.

ບໍ່ມີປະເທດໃດທີ່ມີພູມຄຸ້ມກັນຈາກຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ. ຄວາມຂັດແຍ່ງທີ່ເກີດຂຶ້ນໃນອ່າງບໍ່ດົນມານີ້ ແລະ ທີ່ພວມດຳເນີນຢູ່ ລີເບຍ, ເຢເມນ, ຢູເຄຣນ, ຊູດານໃຕ້, ຊີເຣຍ ແລະ ບ່ອນອື່ນໆສະແດງໃຫ້ເຫັນວ່າສະຖານະການດັ່ງກ່າວສາມາດກະທົບປະເທດຕ່າງໆໃນລະດັບທີ່ແຕກຕ່າງກັນຕາມໄລຍະ ແລະ ລະດັບຂອງເກນການພັດທະນາ. ຍິ່ງໄປກວ່ານັ້ນ ໄພພິບັດທຳມະຊາດແມ່ນຍິ່ງສາມາດຄາດຄະເນໄດ້ຍາກໄປກວ່າອີກ. ໄພນ້ຳຖ້ວມ, ເຮີຣິເຄນ, ແຜ່ນດິນໄຫວ ແລະ ອື່ນໆ ແມ່ນນຳໄປສູ່ໄພພິບັດທີ່ສ້າງຄວາມເສຍຫາຍມະຫາສານໂດຍບໍ່ເລືອກວ່າຈະກະທົບໃສ່ປະເທດໃດໃນໂລກ ນັບແຕ່ສະຫະລັດອາເມຣິກາ ເຖິງ ຄົສຕາຣິກາ, ຟີລິບປິນ ເຖິງ ບັງກຼາເທດ, ຝຣັ່ງ ເຖິງ ທາຈິກິສຖານ, ອີຕີໂອເປຍ ເຖິງ ແຄນຢາ ແລະ ອິສຕຣາລີ ເຖິງ ຟິຈິ.

ສິດທິມະນຸດສາກົນເປັນຂອງທຸກໆຄົນລວມທັງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ລັດຕ່າງໆກໍມີໜ້າທີ່ເຄົາລົບ, ປົກປ້ອງ ແລະ ຕອບສະໜອງສິດທິມະນຸດຂອງຜູ້ເຄື່ອນຍ້າຍຖິ່ນຖານໃຫ້ສົມບູນ. ແຕ່ວ່າ ຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດອາດຖືກເບິ່ງຂ້າມໃນເວລາມີການຮັບມືຕ່າງໆ. ຜູ້ມີສ່ວນຮ່ວມກ່ຽວຂ້ອງໃນປະເທດຕົ້ນທາງ, ລັດ ແລະ ຜູ້ຮັບມືອື່ນໆ ບໍ່ສາມາດຈຳແນກ ຫຼື ເຂົ້າໃຈສະເໝີໄປ ຄວາມຕ້ອງການສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານ. ການຮັບມືດ້ານມະນຸດສະທຳແບບດັ້ງເດີມ-ແບບເກົ່າ ບໍ່ສາມາດຮັບປະກັນໃຫ້ຜູ້ເຄື່ອນຍ້າຍຖິ່ນຖານໃນການເຂົ້າເຖິງການຊ່ວຍເຫຼືອຢ່າງມີປະສິດທິຜົນໄດ້ຢ່າງສະໝໍ່າສະເໝີ. ຂໍ້ແນະນຳກໍເກືອບວ່າຈະບໍ່ມີ ເພື່ອແນະນຳຢ່າງຊັດເຈນບົດບາດ ແລະ ຄວາມຮັບຜິດຊອບສະເພາະຂອງລັດຕ່າງໆ ແລະ ຜູ້ມີສ່ວນຮ່ວມກ່ຽວຂ້ອງຫຼັກໆ ເພື່ອປົກປ້ອງຜູ້ເຄື່ອນຍ້ານຖິ່ນຖານໃນປະເທດທີ່ປະເຊີນກັບຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດ. ໃນບໍລິບົດນີ້, ຜູ້ເຄື່ອນຍ້າຍຖິ່ນຖານດັ່ງກ່າວກໍອາດຕົກຢູ່ໃນຊ່ອງຫວ່າງດັ່ງກ່າວນັ້ນ ເຊິ່ງເປັນຄວາມກັງວົນສຳລັບທຸກໆປະເທດ.

ການປະຕິວັດໃນລິເບຍ ທີ່ນຳມາສູ່ຄວາມຂັດແຍ່ງໃນປີ 2011 ແລະ ໄດ້ບັງຄັບຜູ້ເຄື່ອນຍ້າຍຖິ່ນຖານປະມານ 800.000 ຄົນໃຫ້ໜີຂ້າມແດນສາກົນໃນເວລາບໍ່ພໍເທົ່າໃດເດືອນ ແມ່ນເປັນເຫດການຜົກຜັນນຳຄວາມສົນໃຈຢ່າງກວ້າງຂວາງກ່ຽວກັບຊ່ອງວ່າງດັ່ງກ່າວນີ້. ເຫດການຄັ້ງນີ້ໄດ້ເຮັດໃຫ້ຫຼາຍພາກສ່ວນຮຽກຮ້ອງການແກ້ໄຂໂດຍ ລັດ, ຜູ້ຕາງໜ້າອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນ, ແລະ ອົງການຈັດຕັ້ງສັງຄົມເພື່ອຈັດການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃຫ້ດີກວ່າເກົ່າ ໃນບໍລິບົດຂອງຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດ. ໂຄງການ MICIC ຈຶ່ງໄດ້ເກີດຂຶ້ນດ້ວຍແຮງຜັກດັນດັ່ງກ່າວນີ້.

## *A| L VK@^KAYCkBC@^K MICIC*

ໂຄງການໄດ້ເລີ່ມຕົ້ນຂຶ້ນໃນເດືອນ ພຶດສະພາ 2014 ຢູ່ ກອງປະຊຸມໂລກກ່ຽວກັບການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາ (Global Forum on Migration and Development (GFMD)) ຢູ່ ເມືອງສະຕັອກໂຮມ ພາຍຫຼັງການຮຽກຮ້ອງໃຫ້ມີການຈັດການໃນ ກອງປະຊຸມປຶກສາຫາລືລະດັບສູງຂອງ ສະພາອົງການສະຫະປະຊາຊາດປີ 2013 ກ່ຽວກັບການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາ. ໂຄງການ MICIC ເປັນຂະບວນການທີ່ນຳພາໂດຍລັດຖະບານ ໂດຍການເປັນປະທານຮ່ວມຂອງ ສະຫະລັດອາເມຣິກາ ແລະ ຟີລິບປິນ. ໂຄງການນີ້ແນໃສ່ປັບປຸງຄວາມສາມາດຂອງລັດຕ່າງໆ, ພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມໃນການກະກຽມຄວາມພ້ອມຮັບມື ແລະ ການຮັບມືກັບຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ ລວມທັງ ການປົກປ້ອງສິດ ແລະ ກຽດສັກສີ ແລະ ດ້ວຍການຫລຸດຜ່ອນຄວາມລຳບາກກາກຳຂອງເຂົາເຈົ້າ. ປະທານຮ່ວມແມ່ນໄດ້ຮັບການຊ່ວຍເຫຼືອໂດຍຄະນະດຳເນີນງານທີ່ປະກອບດ້ວຍລັດຖະບານອົສຕຣາລີ, ບັງກຼາເທດ, ຄົສຕາຣິກາ ແລະ ອີຕີໂອເປຍ; ສະຫະພາບເອີຣົບ; ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM); ກຳມາທິການລະດັບສູງຂອງອົງການສະຫະປະຊາຊາດເພື່ອຜູ້ລີ້ໄພ (UNHCR); ຫ້ອງການຜູ້ຕາງໜ້າພິເສດຂອງ ເລຂາທິການ ສປຊ ເພື່ອການເຄື່ອນຍ້າຍຖິ່ນຖານສາກົນ; ສູນສາກົນເພື່ອການພັດທະນານະໂຍບາຍການເຄື່ອນຍ້າຍຖິ່ນຖານ (ICMPD); ແລະ ສະຖາບັນເພື່ອການສຶກສາການເຄື່ອນຍ້າຍຖິ່ນຖານສາກົນຂອງມະຫາວິທະຍາໄລຈອຈ໌ທາວ (ISIM). IOM ເຮັດໜ້າທີ່ເປັນກອງເລຂາ.

ພາຍຫຼັງການເລີ່ມຕົ້ນໂຄງການ MICIC, ປະທານຮ່ວມ ແລະ ຄະນະດຳເນີນງານກໍໄດ້ຕິດຕາມການເກັບກຳຂໍ້ມູນຫຼັກຖານ ແລະ ຂະບວນການປະຊຸມປຶກສາຫາລື. ໄດ້ມີການຈັດກອງປະຊຸມປຶກສາຫາລືຂັ້ນພາກພື້ນ ໂດຍການສະໜັບສະໜູນທຶນຂອງສະຫະພາບເອີຣົບ ທີ່ໄດ້ຈັດຂຶ້ນກັບລັດຕ່າງໆ ແລະ ຜູ້ຕາງໜ້າຫຼັກຈາກ ອາຊີໃຕ້, ອາຊີຕາເວັນອອກ ແລະ ອາຊີຕາເວັນອອກສ່ຽງໃຕ້, ເອີຣົບຕາເວັນອອກ ແລະ ອາຊີກາງ, ອາຟຣິກາຕາເວັນຕົກ ແລະ ກາງ, ອາເມຣິກາລາຕິນ ແລະ ຄາຣິບຽນ, ອາຟຣິກາເໜືອ ແລະ ຕາເວັນອອກກາງ, ອາຟຣິກາຕາເວັນອອກ ແລະ ໃຕ້. ອົງການຈັດຕັ້ງສັງຄົມກໍໄດ້ໃຫ້ຂໍ້ມູນທີ່ຮິບໂຮມຈາກກອງປະຊຸມປຶກສາຫາລືຂັ້ນພາກພື້ນຂອງອົງການຈັດຕັ້ງສັງຄົມທີ່ຈັດຂຶ້ນຄູ່ຂະໜານກັນຫຼາຍຄັ້ງ. ສະຫະລັດອາເມຣິກາ ແລະ ອົສຕຣາລີໄດ້ສະໜັບສະໜູນທຶນເພື່ອຈັດກອງປະຊຸມປຶກສາຫາລື ຜູ້ມີສ່ວນຮ່ວມທີ່ເປັນເປົ້າໝາຍ ໂດຍມີຜູ້ເຂົ້າຮ່ວມຢ່າງກວ້າງຂວາງຈາກ ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ພາກເອກະຊົນ ພ້ອມທັງການເຂົ້າຮ່ວມຂອງ 'ກຸ່ມເພື່ອນມິດ' ຂອງລັດຕ່າງໆຂອງ ການປະຊຸມປຶກສາຫາລືລະຫວ່າງລັດຖະບານກ່ຽວກັບ ການເຄື່ອນຍ້າຍຖິ່ນຖານ, ການລີ້ໄພ ແລະ ຜູ້ລີ້ໄພ (Inter-governmental Consultation on Migration, Asylum, and Refugees (IGC)). ງານຄູ່ຂະໜານຂອງກອງປະຊຸມລະດັບໂລກ ເຊັ່ນ ກອງປະຊຸມລະດັບໂລກທີ່ເຊນດາຍກ່ຽວກັບ ການຫລຸດຜ່ອນຄວາມສ່ຽງໄພພິບັດໃນປີ 2015, ກອງປະຊຸມທີ່ ອິສຕັນບູນ ໃນປີ 2015 ແລະ ກອງປະຊຸມສຸດຍອດມະນຸດສະທຳລະດັບໂລກທີ່ອິສຕັນບູນ ໃນປີ 2016 ກໍໄດ້ເຕົ້າໂຮມທັດສະນະຫຼາຍປະການເພີ່ມຕື່ມ. ການປະຊຸມອອນໄລນ໌, ໃບສະຫລຸບບັນຫາໂດຍຫຍໍ້ ແລະ ເວທີກໍຄືຮູບແບບອື່ນໆໃນການແລກປ່ຽນພາກປະຕິ

ບັດຕ່າງໆ ກໍໄດ້ ເຮັດໃຫ້ມີຄວາມເຂົ້າໃຈກະຈ່າງແຈ້ງຫຼາຍຂຶ້ນກ່ຽວກັບບັນຫາທີ່ສຳຄັນ, ໄດ້ຍົກສູງຄວາມເຂົ້າໃຈທີ່ອີງໃສ່ຂໍ້ມູນຫຼັກຖານ ແລະ ໄດ້ຊ່ວຍລະບຸບົດບາດ ແລະ ຄວາມຮັບຜິດຊອບຂອງຜູ້ທີ່ກ່ຽວຂ້ອງສຳຄັນ ແລະ ມາດຕະການທີ່ແຕ່ລະພາກສ່ວນສາມາດນຳໄປປະຕິບັດໃນຕົວຈິງໃຫ້ໄດ້ດີກວ່າເກົ່າ ເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບໄພພິບັດທຳມະຊາດ ຫຼື ຄວາມຂັດແຍ່ງ.

## *ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດຂອງໂຄງການ MICIC*

*ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ທີ່ບໍ່ແມ່ນຂໍ້ຜູກມັດ ແລະ ເປັນໄປດ້ວຍຄວາມສະໝັກໃຈ ແມ່ນຈຸດສູງສຸດຂອງຄວາມພະຍາຍາມທີ່ກ່າວມາຂ້າງເທິງ. ມັນສະທ້ອນຫຼັກການທີ່ລັດຕ່າງໆເປັນຜູ້ຮັບຜິດຊອບຫຼັກໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ. ລັດຕ່າງໆທີ່ປະເຊີນກັບຄວາມຂັດແຍ່ງ ຫຼື ໄພທຳມະຊາດມີຄວາມຮັບຜິດຊອບຕໍ່ຜູ້ທີ່ຢູ່ໃນອານາເຂດຂອງຕົນ ລວມທັງ ຜູ້ເຄື່ອນຍ້າຍຖິ່ນຖານ ບໍ່ວ່າສະຖານະພາບຂອງເຂົາເຈົ້າຈະເປັນແນວໃດກໍຕາມ. ລັດຕົ້ນທາງກໍມີຄວາມຮັບຜິດຊອບຕໍ່ຄວາມປອດໄພ ແລະ ສະຫວັດດີການຂອງພົນລະເມືອງຕົນ ເຖິງແມ່ນວ່າ ພົນລະເມືອງເຫຼົ່ານີ້ ຈະອາໄສ, ເຮັດວຽກ, ເດີນທາງ ຫຼື ຢູ່ລໍຖ້າເດີນທາງໄປປະເທດອື່ນກໍຕາມ. ລັດຕ່າງໆ ລວມທັງ ລັດທີ່ຢູ່ໃນພາກພື້ນດຽວກັນກັບປະເທດທີ່ປະເຊີນວິກິດການ ກໍອາດຖືກຮ້ອງຂໍເພື່ອໃຫ້ການສະໜັບສະໜູນ.

ແນວໃດກໍຕາມ, ດັ່ງທີ່ເຫັນຈາກວິກິດການໃນອະດີດແມ່ນວ່າ ບໍ່ມີລັດໃດທີ່ຈະສາມາດເຮັດໄດ້ຕາມລຳພັງ. ຜູ້ຈ້າງງານ ແລະ ຜູ້ຈັດຫາງານມີບົດບາດສຳຄັນໃນການປົກປ້ອງ ແລະ ຊ່ວຍເຫຼືອ ແຮງງານເຄື່ອນຍ້າຍ ກໍຄື ມີຜົນປະໂຫຍດໃນການປັບປະສົບການຂອງເຂົາເຈົ້າກ່ອນ, ໃນໄລຍະ ແລະ ຫຼັງວິກິດການ. ພາກເອກະຊົນກໍເປັນຜູ້ປະກອບສ່ວນສຳຄັນໃນຖານະຜູ້ສະໜອງສິນຄ້າທີ່ຈຳເປັນ, ຜູ້ສ້າງນະວັດຕະກຳ ແລະ ຄູ່ຮ່ວມມືໃນການກະກຽມຄວາມພ້ອມ, ການຮັບມື ແລະ ການຟື້ນຟູຈາກວິກິດການ. ອົງການຈັດຕັ້ງສາກົນມີຄວາມຊຳນິຊຳນານດ້ານວິຊາການແລະ ຄວາມອາດສາມາດ. ຕົວຢ່າງ: ກອບການດຳເນີນງານດ້ານວິກິດການຂອງ IOM ກຳນົດສິບຫ້າຂະແໜງການຂອງການຊ່ວຍເຫຼືອດ້ານມະນຸດສະທຳ, ການພັດທະນາ ແລະ ການຄຸ້ມຄອງການເຄື່ອນຍ້າຍຖິ່ນຖານ ທີ່ສາມາດສະໜອງໃນທຸກໆໄລຍະຂອງວິກິດການ. ອົງການຈັດຕັ້ງສາກົນໝູນໃຊ້ຄວາມຮູ້, ທັກສະ ແລະ ຄວາມຮູ້ຂອງຕົນເພື່ອຂົນຂວາຍຊັບພະຍາກອນ ແລະ ການສະໜັບສະໜູນ ແລະ ຮັບໃຊ້ລັດ ກໍຄື ຜູ້ເຄື່ອນຍ້າຍຖິ່ນຖານ. ເຂົາເຈົ້າເປັນຜູ້ຮັບມືກຸ່ມທຳອິດ ແລະ ເປັນພັນທະມິດ ກໍຄື ຜູ້ສະໜັບສະໜູນທີ່ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຂອງຜູ້ເຄື່ອນຍ້າຍຖິ່ນຖານ. ເຂົາເຈົ້າຮິບໂຮມ ແລະ ແບ່ງປັນຂໍ້ມູນ, ຄວາມຮູ້ ແລະ ຂ່າວສານ ແລະ ໃຫ້ການຊ່ວຍເຫຼືອໂດຍກົງ. ນອກຈາກນັ້ນ, ຜູ້ເຄື່ອນຍ້າຍຖິ່ນຖານເອງກໍມີຄວາມອາດສາມາດ ຄືກັນກັບອົງການຈັດຕັ້ງສັງຄົມ ແລະ ຜູ້ນຳພາ ທີ່ມີບົດບາດສຳຄັນໃນການຮັບປະກັນຄວາມປອດໄພ ແລະ ຄວາມເປັນຢູ່ທີ່ດີຂອງຕົນເອງ. ເຂົາເຈົ້າເປັນຜູ້ແຈ້ງລັດ ແລະ ຜູ້ມີສ່ວນກ່ຽວຂ້ອງອື່ນໆກ່ຽວກັບຄວາມຕ້ອງການຂອງຕົນ. ເຂົາເຈົ້າໃຫ້ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ສະໜັບສະໜູນຜູ້ມີສ່ວນກ່ຽວຂ້ອງອື່ນໆໃນການເຂົ້າເຖິງປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ. ສະນັ້ນຈຶ່ງຄວນໝູນໃຊ້ສັກກະຍະພາບ ແລະ ຈຸດແຂງຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ ເພື່ອຜົນປະໂຫຍດຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສັງຄົມ.

ການຮັບມືທີ່ດີກວ່າເກົ່າໂດຍຜູ້ມີສ່ວນຮ່ວມທຸກພາກສ່ວນຈະເຮັດໃຫ້ເຂົາເຈົ້າສາມາດປົກປ້ອງສິດຂອງຜູ້ເຄື່ອນຍ້າຍຖິ່ນຖານໄດ້ຢ່າງມີປະສິດທິຜົນກວ່າເກົ່າ ແລະ ຕອບສະໜອງຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄອບຄົວຂອງເຂົາເຈົ້າ, ຊຸມຊົນ ແລະ ສັງຄົມ ໃນພາວະສຸກເສີນເຖິງແກ່ຊີວິດ ຕະຫຼອດເຖິງການຟື້ນຟູ. ໂຄງການ MICIC ໂດຍການປະກອບສ່ວນຂໍ້ມູນຄວາມເຫັນຢ່າງກວ້າງຂວາງ, ໄດ້ພັດທະນາ ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດເຫຼົ່ານີ້ ໃນບາດກ້າວສຳຄັນທຳອິດເພື່ອຍົກສູງຄວາມເຂັ້ມແຂງລະດັບທ້ອງຖິ່ນ, ພາກພື້ນ ແລະ ສາກົນ ເພື່ອໃຫ້ສາມາດປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດໃຫ້ໄດ້ດີຂຶ້ນກວ່າເກົ່າ. *ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ເຫຼົ່ານີ້ ອາດເປັນປະໂຫຍດເມື່ອນຳໃຊ້ກັບສະຖານະການວິກິດອື່ນໆ ລວມທັງ ໄພພິບັດທີ່ເກີດຈາກອັນຕະລາຍທີ່ມະນຸດສ້າງຂຶ້ນ ເຊັ່ນ ອຸປະຕິເຫດນິວເຄຼຍ.

ບໍ່ວ່າຍາມໃດກໍຕາມ, ເປົ້າໝາຍຮ່ວມຂອງພວກເຮົາ ແມ່ນການຊ່ວຍຊີວິດ, ການເພີ່ມການປົກປ້ອງ, ການຫລຸດຜ່ອນຄວາມບອບບາງ-ຄວາມສ່ຽງ ແລະ ການປັບປຸງການຮັບມືໃຫ້ດີຍິ່ງໆຂຶ້ນໄປ.

# AYLiAGj U\ D6GM\ WC



Flooding in Myanmar 2015 © IOM

*ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ເຫຼົ່ານີ້ແມ່ນນຳໃຊ້ໃນສະຖານະການ ທີ່ມີຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ. ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດດັ່ງກ່າວນີ້ແມ່ນກ່ຽວຂ້ອງກັບ ການກະກຽມຄວາມພ້ອມຮັບມືກັບໄພວິກິດ, ການຮັບມືກັບພາວະສຸກເສີນ ແລະ ການດຳເນີນງານພາຍຫຼັງວິກິດການ.

ເພື່ອຈຸດປະສົງຂອງ *ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ເຫຼົ່ານີ້, ຄຳວ່າ 'ຜູ້ເຄື່ອນຍ້າຍຖິ່ນຖານ' ໝາຍເຖິງ ຜູ້ທີ່ບໍ່ແມ່ນພົນລະເມືອງ ທີ່ຢູ່ໃນປະເທດໃດໜຶ່ງໃນໄລຍະມີຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ ບໍ່ວ່າດ້ວຍ: (ກ) ວິທີການ ຫຼື ເຫດຜົນຂອງການເຂົ້າໄປໃນປະເທດ; (ຂ) ສະຖານະພາບການເຂົ້າເມືອງ; ຫຼື (ຄ) ໄລຍະເວລາ ຫຼື ເຫດຜົນຂອງການອາໄສໃນປະເທດໃດ ກໍຕາມ. ຄຳວ່າ 'ຜູ້ເຄື່ອນຍ້າຍຖິ່ນຖານ' ບໍ່ໄດ້ໝາຍເຖິງ ຜູ້ລີ້ໄພ, ຜູ້ຊອກຫາບ່ອນລີ້ໄພ, ບຸກຄົນທີ່ບໍ່ມີສັນຊາດ (stateless persons) ເຊິ່ງເປັນກຸ່ມທີ່ມີລະບອບການປົກປ້ອງສະເພາະພາຍໃຕ້ກົດໝາຍສາກົນ ເຖິງແມ່ນວ່າ ຈະໄດ້ອ້າງອີງເຖິງກຸ່ມຄົນເຫຼົ່ານີ້ໃນບາງຈຸດຂອງ *ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ແລະ ມີຄວາມໝາຍຕາມທີ່ກ່າວມານັ້ນ.

*ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ໃຫ້ຂໍ້ແນະນຳທີ່ນຳໄປປະຕິບັດໄດ້ໃນຕົວຈິງ, ບໍ່ມີຂໍ້ຜູກມັດ ແລະ ເປັນການສະໝັກໃຈສຳລັບ ລັດຕ່າງໆ, ພາກເອກະຊົນທີ່ກ່ຽວຂ້ອງ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ. ນອກຈາກຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງດັ່ງກ່າວແລ້ວ ກໍອາດມີພາກສ່ວນອື່ນໆທີ່ມີຜົນໄດ້ຜົນເສຍ ທີ່ອາດໄດ້ຮັບປະໂຫຍດຈາກ ທິດຊີ້ນຳສະບັບນີ້. *ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ເຫຼົ່ານີ້ແມ່ນສາມາດນຳໄປ ວາງແຜນ, ກະກຽມ ແລະ ປະເມີນການດຳເນີນງານ ກໍຄື ເພື່ອປັບປຸງການຮັບມືກັບໄພວິກິດ ເພື່ອຜົນປະໂຫຍດຂອງ ຜູ້ເຄື່ອນຍ້າຍຖິ່ນຖານ, ຄອບຄົວຂອງເຂົາເຈົ້າ ແລະ ສັງຄົມ.

ແຕ່ລະອົງປະກອບຂອງ *ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ແມ່ນມີຈຸດປະສົງແຕກຕ່າງກັນ.

- **ຫຼັກການ** ແມ່ນກົດເກນພື້ນຖານ ທີ່ພົວພັນກັບຫຼາຍຂະແໜງການໂດຍອີງໃສ່ກົດໝາຍສາກົນ. ຫຼັກການມີຈຸດປະສົງເພື່ອຊີ້ແຈງ, ເປັນບ່ອນອີງ ແລະ ຊີ້ນຳການດຳເນີນງານເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ.

- **ແນວທາງປະຕິບັດ** ແມ່ນຂໍ້ແນະນຳແບບມີເປົ້າໝາຍ ທີ່ຈັດແຈງໄປຕາມບັນຫາ-ຂົງເຂດວຽກງານ ທີ່ລະບຸໂດຍກວມເອົາການດຳເນີນງານທີ່ຈຳເປັນເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃຫ້ດີຂຶ້ນກວ່າເກົ່າ. ຜູ້ມີສ່ວນຮ່ວມກ່ຽວຂ້ອງສາມາດນຳໃຊ້ແນວທາງປະຕິບັດເພື່ອ ເປັນບ່ອນອີງ ແລະ ວາງທິດທາງຂອງການກະກຽມຄວາມພ້ອມໃນການຮັບມືກັບໄພວິກິດ, ການຮັບມືກັບພາວະສຸກເສີນ ແລະ ການດຳເນີນງານພາຍຫຼັງວິກິດການ.

- **ພາກປະຕິບັດ** ເປັນຕົວຢ່າງຄັດເລືອກມາເພື່ອສະແດງ ວິທີການນຳໃຊ້ ແນວທາງປະຕິບັດ ແລະ ແກ້ໄຂ-ຕອບສະໜອງຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ ໂດຍອີງໃສ່ ພາກປະຕິບັດທີ່ມີຢູ່ແລ້ວ ແລະ ຄຳແນະນຳ ກໍຄື ສາມາດນຳໄປປັບໃຊ້ກັບ ບໍລິບົດ ແລະ ບູລິມະສິດສະເພາະ. ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງສາມາດແບ່ງປັນພາກປະຕິບັດຕົວຈິງຜ່ານເວັບໄຊດ໌ໂຄງການ MICIC: http:// micicinitiative.iom.int/.

ມີຫຼາຍຂົງເຂດຂອງກົດໝາຍສາກົນທີ່ກ່ຽວຂ້ອງກັບການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບ ຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດ ລວມທັງ ວຽກງານສິດທິມະນຸດ, ການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ກົດໝາຍແຮງງານ. ບໍ່ມີເນື້ອໃນໃດໆໃນ *ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ທີ່ຄວນຈະຕີຄວາມໝາຍວ່າ ເປັນການສ້າງ ຂໍ້ບັງຄັບຂອງກົດໝາຍສາກົນໃໝ່, ບັນທັດຖານໃໝ່, ຫຼື ເປັນການຈຳກັດ ຫຼື ບັນທອນພັນທະທາງກົດໝາຍທີ່ ລັດໄດ້ປະຕິບັດ ຫຼື ຕ້ອງປະຕິບັດພາຍໃຕ້ກົດໝາຍສາກົນ. ເຊັ່ນດຽວກັນ, ບໍ່ມີເນື້ອໃນໃດໃນ *ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ທີ່ຄວນຈະຕີຄວາມໝາຍວ່າ ເປັນການຈຳກັດ, ບັນທອນ ຫຼື ຫລຸດຜ່ອນຂໍ້ບັງຄັບທາງກົດໝາຍພາຍໃນປະເທດ ຫຼື ມາດຕະຖານອື່ນໆ ທີ່ນຳໃຊ້ຕໍ່ ລັດ, ອົງການຈັດຕັ້ງສາກົນ, ຜູ້ມີສ່ວນຮ່ວມພາກເອກະຊົນ ຫຼື ອົງການຈັດຕັ້ງສັງຄົມ ເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃຫ້ໄດ້ດີກວ່າເກົ່າ.

*ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ* ແມ່ນບົນພື້ນຖານຄວາມເຂົ້າໃຈວ່າ ລັດຈະຮັກສາສິດອຳນາດອະທິປະໄຕສູງສຸດ (sovereign discretion) ໃນການກຳນົດວ່າ ບຸກຄົນທີ່ບໍ່ແມ່ນພົນລະເມືອງຂອງຕົນ ຜູ້ໃດ ຈະສາມາດເຂົ້າ ແລະ ອາໄສຢູ່ໃນອານາເຂດຂອງຕົນໄດ້ ແລະ ພາຍໃຕ້ເງື່ອນໄຂໃດ ໂດຍສອດຄ່ອງກັບຂໍ້ບັງຄັບຂອງກົດໝາຍສາກົນ.

ໂຄງການ MICIC ບໍ່ໄດ້ແນໃສ່ທົດແທນ ຫຼື ປ່ຽນແທນຂອບກົດໝາຍທີ່ມີຢູ່ ທີ່ກ່ຽວກັບການປົກປ້ອງຜູ້ລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດ (stateless persons). ແຕ່ວ່າ, ໂຄງການ MICIC ຈະເພີ່ມເຕີມຂອບການປົກປ້ອງທີ່ມີຢູ່. ສົນທິສັນຍາປີ 1951 ກ່ຽວກັບ ສະຖານະພາບຂອງຜູ້ລີ້ໄພ ແລະ ອະນຸສັນຍາທີ່ກ່ຽວຂ້ອງປີ 1967 ໄດ້ກຳນົດການປົກປ້ອງ ແລະ ການຊ່ວຍເຫຼືອທີ່ລັດຕ່າງໆຕ້ອງສະໜອງຕາມກົດໝາຍໃຫ້ແກ່ຜູ້ລີ້ໄພທີ່ມີສິດໄດ້ຮັບການຊ່ວຍເຫຼືອ. ນອກຈາກນັ້ນ, ສົນທິສັນຍາປີ 1954 ກ່ຽວກັບສະຖານະພາບຂອງບຸກຄົນທີ່ບໍ່ມີສັນຊາດ (Status of Stateless) ແລະ ສົນທິສັນຍາປີ 1961 ກ່ຽວກັບການຫລຸດຜ່ອນຄວາມບໍ່ມີສັນຊາດ ກໍໄດ້ສ້າງຂອບກົດໝາຍເພື່ອໃຫ້ລັດພາຄີ (States Parties) ແກ້ໄຂ-ຈັດການ ການປົກປ້ອງບຸກຄົນທີ່ບໍ່ມີສັນຊາດ. ລັດທີ່ໃຫ້ການຊ່ວຍເຫຼືອແກ່ຜູ້ທີ່ບໍ່ແມ່ນພົນລະເມືອງຂອງຕົນໃນໄລຍະມີຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ ຄວນລະບຸຜູ້ລີ້ໄພ, ຜູ້ຊອກຫາບ່ອນລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດ. ລັດຕ້ອງສ້າງກົນໄກການສົ່ງຕໍ່ທີ່ເໝາະສົມສຳລັບຜູ້ລີ້ໄພ, ຜູ້ຊອກຫາບ່ອນລີ້ໄພ, ບຸກຄົນທີ່ບໍ່ມີສັນຊາດ ແລະ ຜູ້ເຄື່ອນຍ້າຍຖິ່ນຖານ. ນອກຈາກນັ້ນ, ບໍ່ວ່າລັດຈະເປັນພາຄີສົນທິສັນຍາ ຫຼື ອະນຸສັນຍາກ່ຽວກັບຜູ້ລີ້ໄພ ຫຼື ບໍ່ກໍຕາມ, ລັດຄວນຈັດຕັ້ງປະຕິບັດມາດຕະການປົກປ້ອງສະເພາະ ເພື່ອຮັບປະກັນວ່າຜູ້ລີ້ໄພ ແລະ ຜູ້ຊອກຫາບ່ອນລີ້ໄພ ໄດ້ຮັບການປົກປ້ອງຈາກ *ການຖືກບັງຄັບໃຫ້ກັບຄືນປະເທດເພື່ອໃຫ້ຕົກຢູ່ໃນຄວາມອັນຕະລາຍ (refoulement)* ລວມທັງໃນບໍລິບົດຂອງການສົ່ງບຸກຄົນກັບຄືນປະເທດແບບມີການກະກຽມ. ຄວາມບອບບາງ-ຄວາມສ່ຽງເພີ່ມຕື່ມອາດເກີດຂຶ້ນຕໍ່ບຸກຄົນທີ່ເຂົ້າປະເທດທີ່ເປັນຜູ້ເຄື່ອນຍ້າຍຖິ່ນຖານ ແຕ່ບໍ່ສາມາດກັບຄືນໄປຍັງປະເທດຕົ້ນທາງຢ່າງປອດໄພ ເປັນຕົ້ນຍ້ອນ ການປ່ຽນແປງສະຖານະການເພາະຕົນໄດ້ກາຍມາເປັນຜູ້ລີ້ໄພ ຫຼື ຜູ້ຊອກຫາບ່ອນລີ້ໄພ. ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງຄວນຮັບປະກັນວ່າ ຂໍ້ມູນ ແລະ ການຊ່ວຍເຫຼືອກ່ຽວກັບການສະໝັກຫາບ່ອນລີ້ໄພ ຫຼື ຮູບແບບການປົກປ້ອງອື່ນໆ ແມ່ນໄດ້ຮັບການສື່ສານຢ່າງເໝາະສົມ ແລະ ມີປະສິດທິຜົນ ກໍຄື ສາມາດເຂົ້າເຖິງໄດ້ໂດຍປະຊາກອນທີ່ໄດ້ຮັບຜົນກະທົບ.



# ຫຼັກການ



Returnees from the conflict in Yemen receiving assistance at the Djibouti - Ethiopian border 2015 © IOM

ຫຼັກການເຫຼົ່ານີ້ແມ່ນກົດເກນພື້ນຖານທີ່ພົວພັນກັບຫຼາຍຂະແໜງການໂດຍອີງໃສ່ກົດໝາຍສາກົນເປັນຕົ້ນ. ຫຼັກການມີຈຸດປະສົງເພື່ອຊີ້ແຈງ, ເປັນບ່ອນອີງ ແລະ ຊີ້ແນະການດຳເນີນງານເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ ເຊິ່ງລວມທັງການຈັດຕັ້ງປະຕິບັດ ແນວທາງປະຕິບັດ ແລະ ພາກປະຕິບັດໂດຍ ລັດ, ພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ ໃນການກະກຽມຄວາມພ້ອມດ້ານວິກິດການ, ການຮັບມືກັບພາວະສຸກເສີນ ແລະ ໄລຍະຫຼັງວິກິດການ.

1. **ຊ່ວຍຊີວິດກ່ອນ.** ເຄົາລົບຄວາມເປັນມະນຸດ ແລະ ກຽດສັກສີທີ່ຜູ້ເຄື່ອນຍ້າຍຖິ່ນຖານສົມຄວນໄດ້ຮັບນັ້ນ ໝາຍເຖິງຄວາມພະຍາຍາມສູ້ຊົນເທົ່າທີ່ຈະເປັນໄປໄດ້ເພື່ອຊ່ວຍຊີວິດ. ຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດເປັນຄວາມທ້າທາຍທີ່ສະຫຼັບຊັບຊ້ອນ ແລະ ມີລັກສະນະສະເພາະ; ແນວໃດກໍຕາມ, ການຊ່ວຍເຫຼືອດ້ານມະນຸດສະທຳຕ້ອງຖືເປັນບູລິມະສິດ ແລະ ໃນແບບທີ່ບໍ່ປະນີປະນອມ ແລະ ບໍ່ມີການຈຳແນກ. ສະຖານະພາບການເຂົ້າເມືອງຂອງຜູ້ເຄື່ອນຍ້າຍຖິ່ນຖານບໍ່ຄວນເອົາມາໃສ່ເປັນພື້ນຖານໃນການປະຕິເສດການໃຫ້ຄວາມຊ່ວຍເຫຼືອໃນພາວະສຸກເສີນ. ການຮັບປະກັນວ່າຜູ້ເຄື່ອນຍ້າຍຖິ່ນຖານຈະສາມາດເຄື່ອນຍ້າຍຢ່າງປອດໄພ ແລະ ໃຊ້ສິດໃນການອອກຈາກປະເທດໃດໆຕາມກົດໝາຍສາກົນນັ້ນ ແມ່ນມີຄວາມສຳຄັນເພື່ອການຊ່ວຍເຫຼືອຊີວິດ ແລະ ການປົກປ້ອງກຽດສັກສີຂອງເຂົາເຈົ້າ.

2. **ໃນຖານະມະນຸດ, ຜູ້ເຄື່ອນຍ້າຍຖິ່ນຖານທຸກຄົນມີສິດດ້ານສິດທິມະນຸດ ບໍ່ວ່າສະຖານະພາບການເຂົ້າເມືອງຂອງເຂົາເຈົ້າຈະເປັນແນວໃດກໍຕາມ.** ສິດທິມະນຸດຂອງຜູ້ເຄື່ອນຍ້າຍຖິ່ນຖານ ໃນເວລາໃດກໍຄວນໄດ້ຮັບການເຄົາລົບ, ປົກປ້ອງ ແລະ ຕອບສະໜອງເຕັມທີ່ໃນແບບທີ່ບໍ່ມີການຈຳແນກ ແລະ ໂດຍສອດຄ່ອງກັບກົດໝາຍສາກົນທີ່ກ່ຽວຂ້ອງ. ອັນນີ້ໝາຍຄວາມວ່າ ທຸກໆການດຳເນີນງານທີ່ກ່ຽວຂ້ອງກັບການກະກຽມຄວາມພ້ອມຮັບມືກັບໄພວິກິດ, ການຮັບມືກັບພາວະສຸກເສີນ ແລະ ຫຼັງວິກິດການຄວນດຳເນີນໂດຍຄຳນຶງເຖິງສິດທິມະນຸດຂອງຜູ້ເຄື່ອນຍ້າຍຖິ່ນຖານ. ການປົກປ້ອງສິດທິມະນຸດຂອງຜູ້ເຄື່ອນຍ້າຍຖິ່ນຖານຢ່າງມີປະສິດທິຜົນຮຽກຮ້ອງໃຫ້ມີຄວາມເຂົ້າໃຈວ່າ ການຈຳແນກ ແລະ ຄວາມແຕກຕ່າງ ເປັນຕົ້ນດ້ານສະຖານະພາບການເຂົ້າເມືອງ, ເພດ, ອາຍຸ, ຄວາມພິການ, ຄ່ານິຍົມທາງເພດ, ເຊື້ອຊາດ, ສັນຊາດ ຫຼື ລັກສະນະອື່ນໆຈະສ້າງຄວາມຫຍຸ້ງຍາກໃນການເຂົ້າເຖິງຊັບພະຍາກອນ-ການຊ່ວຍເຫຼືອ ແລະ ຄວາມປອດໄພ. ວິທີການທີ່ຄຳນຶງເຖິງສິດທິ ໃນການວາງນະໂຍບາຍ ແລະ ແຜນງານ-ໂຄງການ ຮຽກຮ້ອງໃຫ້ ຜູ້ເຄື່ອນຍ້າຍຖິ່ນຖານມີຂໍ້ມູນທີ່ພຽງພໍ ແລະ ເປັນປະໂຫຍດ ແລະ ສາມາດເຂົ້າຮ່ວມໃນຂະບວນການ ແລະ ກອບດຳເນີນງານຕ່າງໆທີ່ມີຜົນກະທົບຕໍ່ເຂົາເຈົ້າ. ຄວນເຄົາລົບ ຫຼັກການ *ການບໍ່ບັງບັງຄັບໃຫ້ກັບຄືນປະເທດເພື່ອໃຫ້ຕົກຢູ່ໃນຄວາມອັນຕະລາຍ* (*non–refoulement)* ຕະຫຼອດເວລາ.

3. **ລັດມີຄວາມຮັບຜິດຊອບຕົ້ນຕໍໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານພາຍໃນອານາເຂດຂອງຕົນ ແລະ ພົນລະເມືອງຂອງຕົນ ລວມທັງເມື່ອເຂົາເຈົ້າຢູ່ຕ່າງປະເທດ.** ລັດເຈົ້າພາບ ແລະ ລັດທາງຜ່ານມີຄວນຮັບຜິດຊອບຕໍ່ທຸກໆຄົນພາຍໃນອານາເຂດຂອງຕົນ ລວມທັງຜູ້ເຄື່ອນຍ້າຍຖິ່ນຖານບໍ່ວ່າສະຖານະພາບການເຂົ້າເມືອງຂອງເຂົາເຈົ້າຈະເປັນແນວໃດກໍຕາມ. ລັດຕົ້ນທາງ ມີຄວາມຮັບຜິດຊອບຕໍ່ພົນລະເມືອງຂອງຕົນ ເຖິງແມ່ນວ່າເຂົາເຈົ້າຈະອາໄສ, ເຮັດວຽກ, ສຶກສາ, ເດີນທາງ ຫຼື ລໍຖ້າປ່ຽນປະເທດ (ທາງຜ່ານ) ໃນປະເທດອື່ນໆ ກໍຕາມ.

4. **ຜູ້ມີສ່ວນກ່ຽວຂ້ອງພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມມີບົດບາດສຳຄັນໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ໃນການສະໜັບສະໜູນລັດເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ.** ເພື່ອຈະເຫັນຄຸນຄ່າ ແລະ ບັນລຸທ່າແຮງບົ່ມຊ້ອນນີ້, ວິທີການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານຕ້ອງລວມເອົາຄວາມຮູ້, ທັກສະ ແລະ ຄວາມອາດສາມາດສະເພາະພິເສດຂອງພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ. ອຸປະສັກທີ່ທ່ວງດຶງໃຫ້ເຂົາເຈົ້າປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານຄວນຖືກລົບລ້າງ ແລະ ຫລຸດຜ່ອນໃຫ້ເຫຼືອໜ້ອຍທີ່ສຸດ. ການກຳນົດບົດບາດສຳຄັນຂອງຜູ້ມີສ່ວນຮ່ວມທຸກໆພາກສ່ວນໃຫ້ຊັດເຈນກ່ອນທີ່ວິກິດການຄັ້ງຕໍ່ໄປຈະເກີດຂຶ້ນນັ້ນ ຍັງຈະຊ່ວຍຍົກສູງຄວາມອາດສາມາດຂອງລັດໃນການປະຕິບັດຄວາມຮັບຜິດຊອບຂອງຕົນຕໍ່ຜູ້ເຄື່ອນ

ຍ້າຍຖິ່ນຖານ.

5. **ການດຳເນີນການ-ການຊ່ວຍເຫຼືອດ້ານມະນຸດສະທຳເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານຄວນຍຶດຖືຫຼັກການດ້ານມະນຸດສະທຳ, ຄວາມເປັນກາງ, ຄວາມຍຸຕິທຳ ແລະ ຄວາມເອກະລາດ.** ຈຸດປະສົງຂອງການດຳເນີນງານ-ການຊ່ວຍເຫຼືອດ້ານມະນຸດສະທຳແມ່ນເພື່ອປົກປ້ອງຊີວິດ ແລະ ສຸຂະພາບ ກໍຄື ຮັບປະກັນການເຄົາລົບຄວາມເປັນມະນຸດ. ມະນຸດສະທຳໝາຍວ່າ ຄວາມທໍລະມານຂອງມະນຸດຈະໄດ້ຮັບການແກ້ໄຂບໍ່ວ່າຈະພົບພໍ້ຢູ່ແຫ່ງຫົນໃດກໍຕາມ. ຄວາມເປັນກາງ ໝາຍວ່າ ຜູ້ມີສ່ວນຮ່ວມໃນວຽກງານດ້ານມະນຸດສະທຳຈະບໍ່ເຂົ້າຂ້າງຝ່າຍໃດຝ່າຍໜຶ່ງທີ່ເປັນສັດຕູກັນ ຫຼື ມີສ່ວນກ່ຽວຂ້ອງກັບຂໍ້ຂັດແຍ່ງຜິດຖຽງກັນທາງດ້ານການເມືອງ, ເຊື້ອຊາດ, ສາສະໜາ ຫຼື ແນວຄິດ. ຄວາມຍຸຕິທຳໝາຍວ່າ ການດຳເນີນງານ-ການຊ່ວຍເຫຼືອດ້ານມະນຸດສະທຳຈະປະຕິບັດບົນພື້ນຖານຄວາມຈຳເປັນເທົ່ານັ້ນ ໂດຍບໍ່ມີການຈຳແນກ, ໂດຍຖືເປັນກໍລະນີຮີບດ່ວນທີ່ສຸດ ແລະ ເປັນບູລິມະສິດໂດຍບໍ່ມີການຈຳແນກອີງຕາມສະຖານະພາບການເຂົ້າເມືອງ ຫຼື ເຫດຜົນອື່ນໆ. ຄວາມເອກະລາດໝາຍວ່າ ການດຳເນີນງານ-ການຊ່ວຍເຫຼືອດ້ານມະນຸດສະທຳ ຈະເປັນເອກະລາດ-ບໍ່ຂຶ້ນກັບ ເປົ້າໝາຍທາງດ້ານການເມືອງ, ເສດຖະກິດ, ການທະຫານ ຫຼື ເປົ້າໝາຍອື່ນໆຂອງຜູ້ດຳເນີນງານ-ຜູ້ໃຫ້ການຊ່ວຍເຫຼືອ.

6. **ຜູ້ເຄື່ອນຍ້າຍຖິ່ນຖານແມ່ນຜູ້ຖືສິດ ແລະ ຜູ້ທີ່ມີຄວາມສາມາດ, ມີຄວາມທົນທານ ແລະ ສ້າງສັນໃນສະພາບວິກິດການ.** ເຂົາເຈົ້າບໍ່ພຽງແຕ່ເປັນຜູ້ເຄາະຮ້າຍ ຫຼື ຜູ້ນັ່ງລໍຖ້າຮັບການຊ່ວຍເຫຼືອເທົ່ານັ້ນ. ໃນຂະນະທີ່ວິກິດການມີຜົນກະທົບທີ່ແຕກຕ່າງກັນໄປຕໍ່ແຕ່ລະຄົນ, ແຕ່ເຂົາເຈົ້າກໍມີຄວາມອາດສາມາດໃນການຈັດການເບິ່ງແຍງຄວາມປອດໄພ ແລະ ຄວາມເປັນຢູ່ທີ່ດີຂອງຕົນເອງ ແລະ ຈະຕ້ອງມີຄວາມຮັບຜິດຊອບໃນຈຸດນີ້ກໍຕໍ່ເມື່ອເຂົາເຈົ້າສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ການສະໜັບສະໜູນທີ່ຈຳເປັນ. ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງຄວນສ້າງເງື່ອນໄຂທີ່ຈຳເປັນເພື່ອໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດບັນລຸທ່າແຮງບົ່ມຊ້ອນນີ້ ແລະ ຊ່ວຍໃຫ້ເຂົາເຈົ້ານຳໃຊ້ສິດຂອງຕົນ. ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງຄວນສົ່ງເສີມການມີສ່ວນຮ່ວມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານທຸກຄົນ ລວມທັງຜູ້ທີ່ມີຄວາມແຕກຕ່າງດ້ານອາຍຸ, ເພດ ແລະ ຄວາມສາມາດໃນຄວາມພະຍາຍາມທີ່ກ່ຽວຂ້ອງກັບ ການກຽມຄວາມພ້ອມໃນການຮັບມືກັບໄພພິບັດ, ການການຮັບມືກັບພາວະສຸກເສີນ ແລະ ການຟື້ນຟູ ເພື່ອໃຫ້ຜູ້ເຄື່ອນຍ້າຍສາມາດເຄື່ອນຍ້າຍເພື່ອຫລຸດຜ່ອນຄວາມສ່ຽງ ແລະ ຈັດການເບິ່ງແຍງຄວາມເປັນຢູ່ທີ່ດີຂອງຕົນເອງ.

7. **ຜູ້ເຄື່ອນຍ້າຍຖິ່ນຖານເພີ່ມຄວາມເຂັ້ມແຂງ-ພາລະກຳລັງໃຫ້ແກ່ລັດເຈົ້າພາບ ແລະ ຕົ້ນທາງດ້ວຍຫຼາກຫຼາຍວິທີ.** ໃນຖານະແມ່, ພໍ່, ອ້າຍ, ເອື້ອຍ, ນ້ອງ, ລູກຊາຍ, ລູກສາວ, ນັກຮຽນ ແລະ ແຮງງານໃນທຸກໆລະດັບທັກສະຝີມື, ຜູ້ເຄື່ອນຍ້າຍຖິ່ນຖານຈະເປັນຜູ້ສະແຫວງຫາ ແລະ ປະກອບສ່ວນຕໍ່ຄອບຄົວ, ຊຸມຊົນ ແລະ ສັງຄົມຂອງເຂົາເຈົ້າ. ຄຳເວົ້າຕໍ່ຕ້ານຜູ້ເຄື່ອນຍ້າຍຖິ່ນຖານ ອາດເພີ່ມຂຶ້ນໃນເວລາເກີດວິກິດການ ແລະ ຜູ້ເຄື່ອນຍ້າຍຖິ່ນຖານອາດພົບພໍ້ກັບ ການຈຳແນກ, ການຕໍ່ຕ້ານ, ແລະ ຄວາມຢ້ານກົວຄົນຕ່າງຊາດ ໃນລະດັບທີ່ສູງຂຶ້ນ. ການສື່ສານໃນທາງບວກກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານ ຈະສົ່ງເສີມຄວາມຄວາມອົດທົນ-ຄວາມໂຍະຍານ, ການບໍ່ຈຳແນກ, ການມີສ່ວນຮ່ວມ ແລະ ຄວາມເຄົາລົບຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ ເຊິ່ງອາດລວມເຊັ່ນ ການຮັບປະກັນວ່າພາສາທີ່ນຳໃຊ້ກ່າວເຖິງຜູ້ເຄື່ອນຍ້າຍຖິ່ນຖານຈະຫຼີກເວັ້ນຄຳສັບທີ່ 'ຜິດກົດໝາຍ' ເປັນຕົ້ນ. ຜູ້ເຄື່ອນຍ້າຍຖິ່ນຖານກໍແມ່ນຄົນ ແລະ ຄົນຍາມໃດກໍບໍ່ 'ຜິດກົດໝາຍ' ເຖິງແມ່ນວ່າເຂົາເຈົ້າຈະມີສະຖານະພາບການເຂົ້າເມືອງທີ່ບໍ່ໄດ້ຈົດທະບຽນກໍຕາມ. ການຍົກໃຫ້ເຫັນການປະກອບສ່ວນ ຕໍ່ເສດຖະກິດ ສັງຄົມ ແລະ ວັດທະນະທຳຂອງຜູ້ເຄື່ອນຍ້າຍຖິ່ນຖານ ສາມາດລົບລ້າງຂໍ້ໂຕ້ຖຽງຂອງສາທາລະນະຊົນໃນຕົວຈິງ ແລະ ສາມາດລົບລ້າງການຕໍ່ຕ້ານທັດສະນະ-ຄວາມຄິດເໝົາລວມດ້ານລົບ ແລະ ຄວາມບໍ່ຍຸຕິທຳ ກໍຄື ທັດສະນະທີ່ມີການຈຳແນກ ແລະ ການຢ້ານກົວຊາວຕ່າງຊາດ. ການສານຕໍ່ຄວາມທົນທານ-ຄວາມສາມາດໃນການປັບຕົວຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການສົ່ງເສີມການເຊື່ອມໂຍງເຂົ້າກັບຊຸມຊົນຂອງປະເທດປາຍທາງຢ່າງມີປະສິດທິຜົນຂອງເຂົາເຈົ້າ ຈະສາມາດຍົກສູງການຮັບມືກັບວິກິດການ.

8. **ການດຳເນີນງານ-ການຊ່ວຍເຫຼືອໃນຂັ້ນທ້ອງຖິ່ນ, ແຫ່ງຊາດ ແລະ ສາກົນ ແມ່ນຈຳເປັນເພື່ອປັບປຸງ**

**ການຮັບມືກັບໄພວິກິດ.** ການຮັບມືຢ່າງມີປະສິດທິຜົນຮຽກຮ້ອງໃຫ້ຜູ້ມີສ່ວນຮ່ວມທຸກພາກສ່ວນດໍາເນີນການບໍ່ສະເພາະແຕ່ໃນຂັ້ນສາກົນ ແລະ ແຫ່ງຊາດເທົ່ານັ້ນ, ແຕ່ຍັງຈະຕ້ອງດໍາເນີນການໃນຂັ້ນພາກພື້ນ ແລະ ທ້ອງຖິ່ນພ້ອມ. ອໍານາດການປົກຄອງທ້ອງຖິ່ນ ແລະ ຜູ້ມີສ່ວນກ່ຽວຂ້ອງທ້ອງຖິ່ນທີ່ບໍ່ແມ່ນພາກລັດ ລວມທັງຊຸມຊົນທ້ອງຖິ່ນ ແລະ ຜູ້ນໍາໃນຊຸມຊົນ ແມ່ນຢູ່ໃນຖານະທີ່ຈະເຂົ້າໃຈ ແລະ ແກ້ໄຂຄວາມຕ້ອງການໄດ້ດີໃນໄລຍະວິກິດ ຍ້ອນຄວາມໃກ້ຊິດຂອງເຂົາເຈົ້າກັບ ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານໃນຖານະຜູ້ຮັບມືໃນແນວໜ້າ. ການມີສ່ວນຮ່ວມຂັ້ນພາກພື້ນຈະສ້າງໂອກາດໃນການຈັດບູລິມະສິດ ແລະ ແກ້ໄຂປະເດັນຕ່າງໆໃນຂັ້ນພາກພື້ນທີ່ກ່ຽວຂ້ອງກັບການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງປະຊາກອນທີ່ເຄື່ອນຍ້າຍຂ້າມຊາຍແດນ ອັນເປັນສ່ວນໜຶ່ງຂອງວິຖີການດໍາລົງຊີວິດດັ້ງເດີມຂອງເຂົາເຈົ້າ.

9. **ການເປັນຄູ່ຮ່ວມງານ, ການຮ່ວມມື ແລະ ການປະສານງານແມ່ນມີຄວາສໍາຄັນລະຫວ່າງ ແລະ ພາຍໃນ ລັດ, ພາກເອກະຊົນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ, ຊຸມຊົນທ້ອງຖິ່ນ ແລະ ຜູ້ເຄື່ອນຍ້າຍຖິ່ນຖານ.** ການເປັນຄູ່ຮ່ວມງານແມ່ນການຊຸກຍູ້ຄວາມໄວ້ເນື້ອເຊື່ອໃຈ, ຍົກສູງປະສິດທິຜົນຂອງຊັບພະຍາກອນ ແລະ ຄວາມອາດສາມາດທີ່ຈໍາກັດ ແລະ ປັບປຸງການຮັບມືກັບໄພວິກິດ.

10. **ການຄົ້ນຄວ້າ, ການຮຽນຮູ້ ແລະ ນະວັດຕະກໍາ ຕໍ່ເນື່ອງຈະປັບປຸງການຮັບມືຮ່ວມກັບໄພວິກິດກັນຂອງພວກເຮົາ.** ການປະເມີນ ແລະ ການປະເມີນຜົນ-ການຕີລາຄາປະສົບການຜ່ານມາໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທໍາມະຊາດ ແມ່ນສາມາດເປັນຂໍ້ມູນອ້າງອີງໃຫ້ແກ່ການວາງແຜນ, ການກະກຽມຄວາມພ້ອມ ແລະ ການຮັບມື. ຜ່ານການຄົ້ນຄວ້າ, ການຮຽນຮູ້ ແລະ ນະວັດຕະກໍາຢ່າງຕໍ່ເນື່ອງ ແລະ ຮ່ວມກັນ, ລັດ, ພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ ຈະສາມາດປັບປຸງວິທີການ, ນະໂຍບາຍ ແລະ ເຄື່ອງມືເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃຫ້ດີຂຶ້ນກວ່າເກົ່າ.

# ແນວທາງປະຕິບັດ



Patients being evacuated from Libya 2011 © IOM Nicole Tung

ແນວທາງປະຕິບັດເຫຼົ່ານີ້ແມ່ນຂໍ້ແນະນຳແບບທີ່ມີເປົ້າໝາຍ ທີ່ຈັດແຈງຕາມບັນຫາ-ຂົງເຂດວຽກງານ ໂດຍລະບຸແບບກວມລວມການດຳເນີງານທີ່ຈຳເປັນເພື່ອເຮັດໃຫ້ການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃຫ້ດີຂຶ້ນກວ່າເກົ່າ. ລັດ, ພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ ສາມາດນຳໃຊ້ແນວທາງປະຕິບັດເພື່ອ ເປັນບ່ອນອີງ ແລະ ວາງທິດທາງຂອງການກະກຽມຄວາມພ້ອມດ້ານວິກິດການ, ການຮັບມືກັບພາວະສຸກເສີນ ແລະ ການດຳເນີນງານພາຍຫຼັງວິກິດການ

ຕົວຢ່າງພາກປະຕິບັດດ້ານລຸ່ມຂອງແຕ່ລະແນວທາງປະຕິບັດ ເປັນຕົວຢ່າງຄັດເລືອກ ເພື່ອສະແດງວິທີການຈັດຕັ້ງປະຕິບັດແນວທາງປະຕິບັດແບບຫຍໍ້ໆ ໂດຍອີງໃສ່ຄຳແນະນຳ ແລະ ພາກປະຕິບັດທີ່ມີຢູ່ແລ້ວ ທີ່ໄດ້ລະບຸຜ່ານການປຶກສາຫາລືກັບຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງຢ່າງກວ້າງຂວາງ ແລະ ໄດ້ອະທິບາຍໃນລາຍລະອຽດໃນພາກຕໍ່ໄປກ່ຽວກັບ ພາກປະຕິບັດ.

# I. ການກະກຽມຄວາມພ້ອມເພື່ອຮັບມືກັບໄພວິກິດ

ຄວາມພະຍາຍາມເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດໃຫ້ດີຂຶ້ນກວ່າເກົ່າ ຮຽກຮ້ອງໃຫ້ມີມາດຕະການຮັບມືກັບວິກິດການທີ່ຮັດກຸມ, ດັດປັບໃຫ້ເຂົ້າກັບສະພາບການ ແລະ ໂດຍມີການທົດສອບ. ການກະກຽມທີ່ດີແມ່ນຈະຫລຸດຜ່ອນຂອບເຂດ ແລະ ລະດັບຂອງການຈັດການ-ກິດຈະກຳ-ໂຄງການທີ່ຈຳເປັນໃນໄລຍະເກີດພາວະສຸກເສີນ ແລະ ຜົນກະທົບທີ່ຕາມມາພາຍຫຼັງ. ກິດຈະກຳກະກຽມຄວາມພ້ອມເພື່ອຮັບມືກັບວິກິດການຕ້ອງກວມເອົາຫຼາກຫຼາຍຂົງເຂດ ເພື່ອໃຫ້ສາມາດແກ້ໄຂຢ່າງລະອຽດ ຄວາມບອບບາງ-ຄວາມສ່ຽງ ແລະ ຄວາມຈຳເປັນຂອງຜູ້ເຄື່ອນຍ້າຍຖິ່ນຖານ, ສົ່ງເສີມຄວາມທົນທານ-ຄວາມສາມາດປັບຕົວ ແລະ ໝູນໃຊ້ຈຸດແຂງ ແລະ ຄວາມອາດສາມາດຂອງເຂົາເຈົ້າ.

## ແນວທາງປະຕິບັດ 1: ເກັບກຳຂໍ້ມູນກ່ຽວກັບຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດ ແລະ ຜົນກະທົບທີ່ອາດເກີດຂຶ້ນຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ

ເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ, ລັດ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມຕ້ອງເຂົ້າໃຈຄວາມສ່ຽງ ແລະ ໂອກາດສ່ຽງກັບ ວິກິດການຕ່າງໆໃນພາກພື້ນ, ປະເທດ ແລະ ທ້ອງຖິ່ນ. ນອກຈາກນັ້ນ, ເຂົາເຈົ້າຍັງຕ້ອງເຂົ້າໃຈວ່າວິກິດການມີຜົນກະທົບຕໍ່ຄົນ ລວມທັງ ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຕໍ່ຊັບສິນຂອງເຂົາເຈົ້າຄືແນວໃດ. ໄລຍະເວລາກ່ອນການເກີດຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດເຕັມຮູບແບບ ແມ່ນເວລາສຳຄັນທີ່ຈະດຳເນີນຄວາມພະຍາຍາມເພື່ອປົກປ້ອງ ແລະ ຊ່ວຍເຫຼືອຜູ້ຄົນລວມທັງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຮັກສາຊັບພະຍາກອນ ແລະ ໂຄງລ່າງພື້ນຖານສຳຄັນໃຫ້ປອດໄພ.

ທຸກໆຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດບໍ່ແມ່ນສິ່ງທີ່ຈະຄາດການໄດ້ລ່ວງໜ້າ. ກ່ອນເກີດຄວາມຂັດແຍ່ງອາດມີສັນຍານກ່ອນລວມທັງ ການປະທ້ວງ, ຄວາມຮຸນແຮງໃນເລື່ອງຄວາມຢ້ານກົວຊາວຕ່າງຊາດ ແລະ ຄວາມບໍ່ສະຫງົບຈາກຄວາມຂັດແຍ່ງຂອງກຸ່ມຄົນຕ່າງໆ. ຜູ້ມີສ່ວນຮ່ວມທ້ອງຖິ່ນ ຜູ້ທີ່ຢູ່ໃກ້ກັບແຫຼ່ງຄວາມຂັດແຍ່ງທີ່ໃກ້ຈະເກີດຂຶ້ນ ແລະ ຜູ້ທີ່ມີປະສົບການຕີຄວາມໝາຍສັນຍານ ແລະ ເຫດການຕ່າງໆ, ສ່ວນໃຫຍ່ອາດເປັນຜູ້ທີ່ມີຂໍ້ມູນທີ່ທັນການ ແລະ ຖືກຕ້ອງທີ່ສຸດ. ເຂົາເຈົ້າອາດເປັນແຫຼ່ງຄວາມຮູ້ທີ່ສຳຄັນສຳລັບຜູ້ອື່ນ.

ການເຂົ້າໃຈຄວາມສ່ຽງຈາກໄພພິບັດທຳມະຊາດຂັ້ນພາກພື້ນ, ແຫ່ງຊາດ ແລະ ທ້ອງຖິ່ນແມ່ນກອມເອົາຂໍ້ມູນດັ່ງກ່າວ ກ່ຽວກັບ ສະຖານທີ່ ແລະ ຄຸນລັກສະນະຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ສາມາດເປັນບ່ອນອີງສຳລັບຄວາມພະຍາຍາມໃນການກະກຽມ ແລະ ຮັບມືກັບເຫດການນັ້ນ. ແຫຼ່ງຄວາມຮູ້ທ້ອງຖິ່ນກໍອາດມີຄວາມສຳຄັນເຊັ່ນດຽວກັນ ຕໍ່ສະຖານະການຄວາມຂັດແຍ່ງ. ຕໍ່ໄພພິບັດທຳມະຊາດຕ່າງໆທີ່ເກີດຂຶ້ນແບບກະທັນຫັນນັ້ນ, ແຕ່ລະພາກພື້ນ, ປະເທດ ແລະ ທ້ອງຖິ່ນ ຕ່າງກໍມີແນວໂນ້ມທີ່ຈະເກີດໄພພິບັດທຳມະຊາດແບບສະເພາະ. ໄພພິບັດທີ່ຕິດພັນກັບສະພາບອາກາດສ່ວນໃຫຍ່ກໍຈະເກີດໂດຍມີສັນຍານເຕືອນລ່ວງໜ້າ. ໄພພິບັດທຳມະຊາດບາງຊະນິດກໍເປັນວົງຈອນ ແລະ ເກີດຂຶ້ນຊ້ຳໆກັນ ແລະ ຜູ້ທີ່ເຄີຍພົບພໍ້ມາກ່ອນກໍຈະລຶ້ງເຄີຍກັບສັນຍານເຕືອນ. ມີລະບົບການເຕືອນໄພລ່ວງໜ້າຫຼາຍລະບົບທີ່ນຳໃຊ້ເພື່ອຄາດຄະເນ ແລະ ຕິດຕາມໄພພິບັດທຳມະຊາດ ແລະ ເຕືອນຜູ້ມີສ່ວນຮ່ວມ ແລະ ຊຸມຊົນກ່ຽວກັບວິກິດການທີ່ກຳລັງຈະເກີດຂຶ້ນ.

*HìVSçOP ^@M HL]G*

- *ການປັບໃຊ້ ແລະ ທົດສອບ ລະບົບເຕືອນໄພທຳມະຊາດລ່ວງໜ້າໃນຫຼາຍພາສາໃຫ້ກັບຜູ້ເຄື່ອນຍ້າຍຖິ່ນຖານ.*
- *ການປະເມີນຕ່າງໆເພື່ອເຂົ້າໃຈຜົນກະທົບຂອງໄພພິບັດທຳມະຊາດທີ່ອາດເກີດຂຶ້ນຕໍ່ຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊັບສິນຂອງເຂົາເຈົ້າ.*
- *ການພິຈາລະນາຄຸນລັກສະນະສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານ ໃນການປະເມີນຄວາມບອບບາງ-ຄວາມສ່ຽງຕໍ່ໄພພິບັດ ດ້ວຍການວິເຄາະວ່າ ປັດໄຈເຊັ່ນ ສະຖານະພາບການເຂົ້າເມືອງ, ຄວາມສາມາດທາງດ້ານພາສາ ຫຼື ເພດ ຈະຫລຸດຜ່ອນການເຂົ້າເຖິງຂໍ້ມູນ, ຊັບພະຍາກອນ-ການຊ່ວຍເຫຼືອ ຫຼື ການປົກປ້ອງໄດ້ແນວໃດ.*
- *ການປະເມີນຄວາມສ່ຽງອີງໃສ່ຊຸມຊົນ ໂດຍໃຫ້ຜູ້ເຄື່ອນຍ້າຍຖິ່ນຖານເປັນຜູ້ລະບຸ ໄພພິບັດທຳມະຊາດ, ຄວາມບອບບາງ-ຄວາມສ່ຽງ ແລະ ຄວາມອາດສາມາດຕ່າງໆ.*
- *ການມີສ່ວນຮ່ວມຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄວາມບອບບາງ-ຄວາມສ່ຽງຂອງເຂົາເຈົ້າໃນກົນໄກການແຈ້ງເຕືອນລ່ວງໜ້າ ແລະ ການດຳເນີນງານລ່ວງໜ້າ.*
- *ໂຄງສ້າງການແລກປ່ຽນຂໍ້ມູນກ່ຽວກັບ ຄວາມບໍ່ສະຫງົບ ຫຼື ຄວາມຂັດແຍ່ງຂອງກຸ່ມຄົນ.*

## ແນວທາງປະຕິບັດ 2: ເກັບກຳ ແລະ ແບ່ງປັນຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານຕາມເງື່ອນໄຂ ຄວາມເປັນສ່ວນຕົວ, ການຮັກສາຄວາມປອດໄພ ແລະ ສະຫວັດດີການຂອງຜູ້ເຄື່ອນຍ້າຍຖິ່ນຖານ

ເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານເມື່ອມີຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດເກີດຂຶ້ນ, ລັດ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມຕ່າງໆຕ້ອງການຂໍ້ມູນກ່ຽວກັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ. ຂໍ້ມູນລວມໃນລະດັບເທດສະບານ, ແຫ່ງຊາດ, ພາກພື້ນ ແລະ ສາກົນຂອງການເຄື່ອນຍ້າຍຖິ່ນຖານ ແລະ ລັກສະນະປະຊາກອນຂອງຜູ້ເຄື່ອນຍ້າຍຖິ່ນຖານເຊັ່ນ ເພດ, ອາຍຸ ແລະ ສັນຊາດ ຈະຊ່ວຍໃຫ້ຜູ້ມີສ່ວນຮ່ວມກຳໄດ້ກ່ຽວກັບ ທຳມະຊາດ ແລະ ຂອບເຂດຂອງຄວາມຕ້ອງການໃນກໍລະນີເກີດວິກິດການ. ຂໍ້ມູນລວມຂອງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານລະດັບທ້ອງຖິ່ນຈະຊ່ວຍໃຫ້ຜູ້ມີສ່ວນຮ່ວມ ເລັ່ງການຮັບມືຕ່າງໆຢ່າງມີເປົ້າໝາຍ. ຜູ້ມີສ່ວນຮ່ວມບາງພາກສ່ວນຈະເກັບກຳຂໍ້ມູນລະອຽດກ່ຽວກັບ ສະຖານທີ່ຂອງຜູ້ເຄື່ອນຍ້າຍຖິ່ນຖານ, ວິທີການຕິດຕໍ່ຜູ້ເຄື່ອນຍ້າຍຖິ່ນຖານແຕ່ລະຄົນ, ຂໍ້ມູນການຕິດຕໍ່ກໍລະນີສຸກເສີນ ແລະ ຂອງຄອບຄົວ, ແລະ ຄວາມບອບບາງ-ຄວາມສ່ຽງ ແລະ ຄວາມຕ້ອງການສະເພາະ. ອົງການທີ່ບັຈັດຫາງານ ແລະ ຈັດແຈງແຮງງານ ຈະເກັບກຳຂໍ້ມູນກ່ຽວກັບ ສະຖານທີ່ ແລະ ສະຖານະການຂອງແຮງງານເຄື່ອນຍ້າຍຖິ່ນຖານທີ່ຕົນຈ້າງໃຫ້ໄປເຮັດວຽກຢູ່ລັດອື່ນໆ ແລະ ທັງອາດເປັນແຫຼ່ງຂໍ້ມູນທີ່ເປັນປະໂຫຍດ.

ຜູ້ເຄື່ອນຍ້າຍຖິ່ນຖານມີບົດບາດສຳຄັນໃນການແລກປ່ຽນ ແລະ ປັບປຸ່ງ-ອັບເດດຂໍ້ມູນຂອງຕົນເພື່ອໃຫ້ຜູ້ມີສ່ວນຮ່ວມທີ່ກ່ຽວ

ຂ້ອງສາມາດຕິດຕໍ່ ແລະ ຊ່ວຍເຫຼືອເຂົາເຈົ້າໄດ້ໃນກໍລະນີເກີດຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ. ແນວໃດກໍຕາມ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີສະຖານະການເຂົ້າເມືອງແບບບໍ່ຈົດທະບຽນ ອາດມີຂໍ້ສະຫງວນ-ລະມັດລະວັງໃນການເອົາຕົນເອງຕົກເຂົ້າໃນຄວາມສ່ຽງດ້ວຍການ 'ເປີດຕົວຕົນ' ຫຼາຍຂຶ້ນ ແລະ ແບ່ງປັນຂໍ້ມູນການຕິດຕໍ່ ແລະ ຂໍ້ມູນອື່ນໆກັບຜູ້ມີສ່ວນຮ່ວມໂດຍສະເພາະກັບເຈົ້າໜ້າທີ່ຂອງລັດ. ນອກຈາກນັ້ນ ຜູ້ເຄື່ອນຍ້າຍຖິ່ນຖານກຸ່ມດັ່ງກ່າວ ອາດມີແນວໂນ້ມສູງທີ່ຈະເຄື່ອນຍ້າຍ ແລະ ຍົກຍ້າຍອອກຈາກສະຖານທີ່ອາໄສຊົ່ວຄາວ ໄປຍັງບ່ອນອື່ນ. ຄວາມພະຍາຍາມໃນການເກັບກຳ ແລະ ການແບ່ງປັນຂໍ້ມູນລວມກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານໃນສະພາບທີ່ບໍ່ໄດ້ຈົດທະບຽນ ກໍຄວນແກ້ໄຂໂດຍຄຳນຶງເຖິງອຸປະສັກເຫຼົ່ານີ້. ການມີສ່ວນຮ່ວມຂອງອົງການຈັດຕັ້ງສັງຄົມ ອາດຊ່ວຍຫລຸດຜ່ອນຄວາມທ້າທາຍດັ່ງກ່າວ.

ໃນກໍລະນີທີ່ລັດ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມຫາກເກັບກຳຂໍ້ມູນສ່ວນຕົວ, ເຂົາເຈົ້າກໍຄວນເຄົາລົບສິດຄວາມເປັນສ່ວນຕົວ ແລະ ຄວາມລັບເພື່ອຮັບປະກັນຄວາມປອດໄພ ແລະ ສະຫວັດດີການຂອງຜູ້ເຄື່ອນຍ້າຍຖິ່ນຖານ (ແລະ ຜູ້ມີສ່ວນຮ່ວມອື່ນໆທີ່ກ່ຽວຂ້ອງ) ທີ່ຕົນໄດ້ເກັບກຳ ແລະ ແບ່ງປັນຂໍ້ມູນ. ໃນການເກັບກຳ ແລະ ຈັດການຂໍ້ມູນທີ່ປະກອບດ້ວຍຂໍ້ມູນລະອຽດສ່ວນບຸກຄົນນັ້ນ, ຜູ້ມີສ່ວນຮ່ວມຕ້ອງປະຕິບັດໂດຍສອດຄ່ອງກັບກົດໝາຍ ແລະ ມາດຕະຖານທີ່ກ່ຽວຂ້ອງກັບ ການປົກປ້ອງ ແລະ ຄວາມລັບຂອງຂໍ້ມູນສ່ວນບຸກຄົນ. ນອກຈາກນັ້ນ ຜູ້ມີສ່ວນຮ່ວມຄວນຮັບປະກັນການຍິນຍອມບົນພື້ນຖານຄວາມເຂົ້າໃຈ ຫຼື ຂໍ້ມູນຄົບຖ້ວນສົມບູນຂອງເຈົ້າຂອງຂໍ້ມູນ. ຜູ້ມີສ່ວນຮ່ວມສາມາດນຳໃຊ້ແນວທາງປະຕິບັດຊັດເຈນ ທີ່ກຳນົດປະເພດຂໍ້ມູນສ່ວນຕົວທີ່ຕ້ອງເກັບກຳ ແລະ ວິທີການຈັດການກັບຂໍ້ມູນດັ່ງກ່າວ ລວມທັງສະຖານະການທີ່ຈະສາມາດແບ່ງປັນຂໍ້ມູນໄດ້.

***HlVSÇOP ^@M HLJG***

- *ລະບົບການລົງທະບຽນສຳລັບພົນລະເມືອງໃນຕ່າງປະເທດທີ່ເຮັດໃຫ້ລັດຕົ້ນທາງ (ຫຼື ຄອບຄົວ, ຊຸມຊົນ ຫຼື ອົງການຈັດຕັ້ງສັງຄົມ ກໍລະນີທີ່ປະຕິບັດໄດ້ໃນຕົວຈິງ ແລະ ເໝາະສົມ) ສາມາດຕິດຕໍ່ກັບຜູ້ເຄື່ອນຍ້າຍຖິ່ນຖານໄດ້ໃນກໍລະນີເກີດວິກິດ ແລ້ວສະໜອງຂໍ້ມູນໃຫ້ແກ່ເຂົາເຈົ້າກ່ຽວກັບວິກິດການ ແລະ ໃຫ້ການຊ່ວຍເຫຼືອຕາມຄວາມສາມາດທີ່ເປັນໄປໄດ້.*
- *ມາດຕະການເພື່ອຊຸກຍູ້ໃຫ້ພົນລະເມືອງລົງທະບຽນ ເຊັ່ນລະບົບການລົງທະບຽນອອນໄລນ໌ທີ່ນຳໃຊ້ງ່າຍ ທີ່ຍົກໃຫ້ເຫັນຜົນປະໂຫຍດ ແລະ ການບໍລິການທີ່ຈະໄດ້ຮັບຜ່ານການລົງທະບຽນ.*
- *ລະບົບການລົງທະບຽນຂອງລັດປາຍທາງ ເພື່ອເກັບກຳຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານພາຍຫຼັງທີ່ເດີນທາງມາຮອດ.*
- *ຂໍ້ມູນລວມ ແລະ ການຄົ້ນຄວ້າກ່ຽວກັບແນວໂນ້ມຂອງການເຄື່ອນຍ້າຍຖິ່ນຖານ ແລະ ລັກສະນະທາງປະຊາກອນ ລວມທັງຈຸດປະສົງ ແລະ ເສັ້ນທາງຂອງການເຄື່ອນຍ້າຍຖິ່ນຖານ ກໍຄື ທຳມະຊາດ ແລະ ຄຸນລັກສະນະຂອງຜູ້ເຄື່ອນຍ້າຍຖິ່ນຖານ.*
- *ຂໍ້ມູນລວມຂອງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ, ເຄືອຂ່າຍຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຈຸດປະສານງານ.*
- *ຖານຂໍ້ມູນຂອງແຮງງານເຄື່ອນຍ້າຍລວມທັງຂໍ້ມູນຂອງສະມາຊິກຄອບຄົວທີ່ຕິດຕາມ.*

## ແນວທາງປະຕິບັດ 3: ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານໃຫ້ຊ່ວຍຕົວເອງ, ຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າໃນໄລຍະ ແລະ ຫຼັງວິກິດການ

ເພື່ອທີ່ຈະຊ່ວຍຕົນເອງ ແລະ ຜູ້ອື່ນໆໃນການນຳໃຊ້ສິດຢ່າງເຕັມທີ່, ຜູ້ເຄື່ອນຍ້າຍຖິ່ນຖານຕ້ອງເຂົ້າເຖິງເອກະສານລະບຸຕົວຕົນ-ປະຈຳຕົວ, ການບໍລິການພື້ນຖານພາກລັດ ແລະ ຊັບພະຍາກອນທາງການເງິນ ແລະ ດ້ານອື່ນໆ. ຄວາມສາມາດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການຊ່ວຍຕົນເອງ ແລະ ນຳໃຊ້ສິດຢ່າງເຕັມທີ່ ອາດຖືກທ່ວງດຶງ-ມີຄວາມຫຍຸ້ງຍາກດ້ວຍປັດໄຈຕ່າງໆທີ່ກ່ຽວຂ້ອງກັບ ການເດີນທາງເຂົ້າ ແລະ ການຢູ່ໃນປະເທດ, ວິທີການເດີນທາງເຂົ້າປະເທດ, ສາຍພົວພັນກັບປະຊາກອນທ້ອງຖິ່ນ ແລະ ສະພາບຂອງລັດປາຍທາງ ລວມທັງສະຖານທີ່ເຮັດວຽກ. ປັດໄຈເຫຼົ່ານີ້ ຍັງສາມາດທ່ວງດຶງ ການຮັບມືກັບພາວະສຸກເສີນ ແລະ ຄວາມພະຍາຍາມ

ໃນການຟື້ນຟູອີກດ້ວຍ.

ລັດ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມສາມາດສົ່ງເສີມຄວາມທົນທານ-ການປັບຕົວຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສ້າງຄວາມເຂັ້ມແຂງໃຫ້ຜູ້ເຄື່ອນຍ້າຍຖິ່ນຖານເພື່ອທີ່ຈະສາມາດຊ່ວຍຕົນເອງໄດ້ໃນໄລຍະ ແລະ ຫຼັງວິກິດການດ້ວຍການແກ້ໄຂບັນຫາຄວາມບອບບາງ-ຄວາມສ່ຽງພື້ນຖານ. ການເຄົາລົບ, ການປົກປ້ອງ ແລະ ການຕອບສະໜອງສິດທິມະນຸດ ແລະ ສິດທິແຮງງານຢ່າງສົມບູນໃນໄລຍະທີ່ສະພາບປົກກະຕິ ຈະນຳເປົ້າໝາຍເຫຼົ່ານີ້ໃຫ້ກ້າວໜ້າ ກໍຄືຄວາມພະຍາຍາມເພື່ອຮັບປະກັນໃຫ້ຜູ້ເຄື່ອນຍ້າຍຖິ່ນຖານໄດ້ເຂົ້າເຖິງຂໍ້ມູນຂ່າວສານ, ການບໍລິການພື້ນຖານ, ແລະ ກົນໄກການບໍລິຫານ, ຄວາມຍຸຕິທຳ ແລະ ການຊົດເຊີຍ.

ປັດໄຈທາງດ້ານກົດໝາຍ, ນະໂຍບາຍ ແລະ ການດຳເນີນງານທີ່ກີດຂວາງການປົກປ້ອງຕ່າງໆຄວນໄດ້ຮັບການແກ້ໄຂ. ຕົວຢ່າງຂອງອຸປະສັກຕ່າງໆລວມມີ ກົດໝາຍ, ນະໂຍບາຍ ແລະ ສິ່ງກີດຂວາງໃນພາກປະຕິບັດ ເຊັ່ນການນຳໃຊ້ອຳນາດໃນການຈຳກັດການເຄື່ອນຍ້າຍຂອງຜູ້ເຄື່ອນຍ້າຍຖິ່ນຖານ, ການກັກຕົວຜູ້ເຄື່ອນຍ້າຍຖິ່ນຖານ ແບບຕາມລຳພັງໃຈ (arbitrary detention), ການຈຳແນກລະຫວ່າງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ພົນລະເມືອງໃນການໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳ ຫຼື ອະນຸຍາດໃຫ້ປະຕິບັດການຈ້າງງານ ຫຼື ການຈັດຫາແຮງງານແບບສວຍໂອກາດ-ຫາຜົນປະໂຫຍດ.

ໃນເວລາເກີດວິກິດການ, ຄວາມຢ້ານກົວກ່ຽວກັບການບັງຄັບໃຊ້ກົດໝາຍຄົນເຂົ້າເມືອງ ອາດຂັດຂວາງ-ທ່ວງດຶງບໍ່ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ໂດຍສະເພາະຜູ້ທີ່ມີສະຖານະພາບຄົນເຂົ້າເມືອງແບບບໍ່ລົງທະບຽນ ຈາກການເຂົ້າເຖິງການຊ່ວຍເຫຼືອທີ່ຈຳເປັນ. ໃນບໍລິບົດນີ້ ຈຶ່ງເປັນສິ່ງສຳຄັນທີ່ຈະຕ້ອງແຍກການປະຕິບັດງານການບັງຄັບໃຊ້ກົດໝາຍ ຈາກ ການປະຕິບັດງານເພື່ອສົ່ງເສີມການເຂົ້າເຖິງການບໍລິການ, ຄວາມຊ່ວຍເຫຼືອດ້ານມະນຸດສະທຳ, ເອກະສານລະບຸຕົວຕົນ-ປະຈຳຕົວ ແລະ ການເຄື່ອນຍ້າຍຂອງຜູ້ເຄື່ອນຍ້າຍຖິ່ນຖານ.

ກ່ອນທີ່ຜູ້ເຄື່ອນຍ້າຍຖິ່ນຖານຈະເດີນທາງອອກຈາກປະເທດຕົ້ນທາງ, ແລະ ພາຍຫຼັງເດີນທາງເຂົ້າປະເທດປາຍທາງ ກໍຄື ໃນໄລຍະທີ່ເຂົາເຈົ້າອາໄສໃນປະເທດປາຍທາງນັ້ນ, ຜູ້ມີສ່ວນຮ່ວມສາມາດສະໜອງຂໍ້ມູນຕ່າງໆໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານເຊັ່ນ ຂໍ້ມູນທີ່ກ່ຽວຂ້ອງກັບ ຄວາມຂັດແຍ່ງສະເພາະຂອງປະເທດນັ້ນໆ ຫຼື ຈຸດທີ່ມີຄວາມສ່ຽງສູງທີ່ຈະເກີດໄພພິບັດທຳມະຊາດ, ສິດ ແລະ ການລະເມີດ ຫຼື ການລ່ວງລະເມີດສິດທີ່ອາດຈະເກີດຂຶ້ນ, ວິທີການເຂົ້າເຖິງຂໍ້ມູນຢ່າງທັນການ, ສິ່ງທີ່ໜ້າເຊື່ອຖືໄດ້ ແລະ ເປັນປົກກະຕິ, ຂໍ້ມູນຈຸດການຕິດຕໍ່ໃນພາວະສຸກເສີນ, ແລະ ສິ່ງທີ່ຄວນເຮັດ ແລະ ບ່ອນທີ່ຄວນໄປກໍລະນີທີ່ເກີດວິກິດການ. ການສ້າງທັກສະໃຫ້ຜູ້ເຄື່ອນຍ້າຍຖິ່ນຖານໃນການສື່ສານໃນພາສາຂອງປະເທດເຈົ້າພາບ-ນຳເຂົ້າ ແລະ ການເພີ່ມຄວາມຮູ້ທາງດ້ານການເງິນຂອງຜູ້ເຄື່ອນຍ້າຍຖິ່ນຖານ ອາດຈະກະຕຸ້ນໃຫ້ຜູ້ເຄື່ອນຍ້າຍຖິ່ນຖານລົງທຶນໃສ່ການທ້ອນເງິນ, ຊື້ປະກັນໄພຊີວິດຂະໜາດນ້ອຍ ແລະ ກະກຽມຄວາມພ້ອມໃຫ້ດີຂຶ້ນໃນການເອົາໂຕລອດຈາກເຫດການທີ່ບໍ່ໄດ້ຄາດຄິດມາກ່ອນ.

***ຕົວຢ່າງພາກປະຕິບັດ***

- *ການຝຶກອົບຮົມໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ກ່ອນ ແລະ ຫຼັງການເດີນທາງ ລວມທັງຂໍ້ມູນທີ່ກ່ຽວຂ້ອງກັບວິກິດ.*
- *ການສື່ສານໃນທາງບວກກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານລວມທັງ ຜູ້ເຄື່ອນຍ້າຍຖິ່ນຖານແບບຢ່າງ ແລະ ການໂຄສະນາປູກຈິດສໍານຶກເພື່ອສົ່ງເສີມຄວາມອົດທົນ, ການບໍ່ຈໍາແນກ, ການມີສ່ວນຮ່ວມ ແລະ ຄວາມເຄົາລົບ.*
- *ຜະລິດຕະພັນທາງດ້ານການເງິນລວມທັງປະກັນໄພຂະໜາດນ້ອຍ, ບັນຊີເງິນຝາກ, ເງິນກູ້ຢືມດ່ວນທີ່ເລັ່ງໃສ່ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານລວມທັງຜູ້ເຄື່ອນຍ້າຍຖິ່ນຖານທີ່ມີລາຍໄດ້ຕໍ່າ.*
- *ມາດຕະການທີ່ເຄົາລົບ, ປົກປ້ອງ ແລະ ສະໜອງສິດທິມະນຸດ ແລະ ແຮງງານຢ່າງສົມບູນຂອງຜູ້ເຄື່ອນຍ້າຍຖິ່ນຖານລວມທັງການແກ້ໄຂອຸປະສັກທີ່ຂັດຂວາງ-ທ່ວງດຶງຄວາມສາມາດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການນໍາໃຊ້ສິດຂອງຕົນຢ່າງເຕັມທີ່.*
- *ເອກະສານລະບຸຕົວຕົນ-ປະຈໍາຕົວສໍາລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ມີສະຖານະພາບເຂົ້າເມືອງແບບບໍ່ໄດ້ລົງທະບຽນ ເພື່ອສົ່ງເສີມໃຫ້ເຂົາເຈົ້າເຂົ້າເຖິງການບໍລິການຕ່າງໆ.*
- *ຂະບວນການ ແລະ ການຮັບປະກັນການຈັດຫາງານຢ່າງມີຈັນຍາບັນ, ແລະ ແຜນງານມອບໃບຢັ້ງຢືນ-ຍ້ອງຍໍສໍາລັບຄວາມຊື່ສັດ.*
- *ທາງເລືອກອື່ນໆທີ່ຖືຊຸມຊົນເປັນຫຼັກ ເມື່ອຜູ້ເຄື່ອນຍ້າຍຖິ່ນຖານຫາກຖືກກັກຕົວ.*

## ແນວທາງປະຕິບັດ 4: ການຄໍານຶງເຖິງ-ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນລະບົບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ

ລັດ ແລະ ຜູ້ມີສ່ວນຮ່ວມອື່ນໆຈະມີກົດໝາຍ, ນະໂຍບາຍ ແລະ ແຜນງານກ່ຽວກັບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນເພື່ອຫລຸດຜ່ອນຜົນກະທົບຈາກວິກິດ. ການຄໍານຶງເຖິງ ຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດກ່ຽວຂ້ອງ, ຄວາມບອບບາງ-ຄວາມສ່ຽງ ແລະ ຄວາມຕ້ອງການຂອງເຂົາເຈົ້າທີ່ອາດມີຢູ່ໃນຂອບວຽກງານການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນລວມທັງ ການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ (disaster risk reduction (DRR)) ນັ້ນແມ່ນຈະສາມາດສົ່ງເສີມຄວາມທົນທານ-ຄວາມສາມາດປັບຕົວໄດ້ດີກວ່າເກົ່າໃນກໍລະນີເກີດຄວາມຂັດແຍ່ງ ຫຼື ໄພພິບັດທໍາມະຊາດ. ຄວາມຊັດເຈນຂອງກົດໝາຍ ແລະ ນະໂຍບາຍກ່ຽວກັບເງື່ອນໄຂຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການຂໍຄວາມຊ່ວຍເຫຼືອປະເພດຕ່າງໆ ໃນກໍລະນີເກີດວິກິດນັ້ນ ແມ່ນຈະມີການຮັບປະກັນທີ່ແນ່ນອນກວ່າ. ຖ້າບໍ່ຮູ້ວ່າມີຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ບໍ່ ຫຼື ບໍ່ໄດ້ຄໍານຶງເຖິງຜູ້ເຄື່ອນຍ້າຍຖິ່ນຖານຢ່າງເໝາະສົມເຂົ້າໃນການວາງແຜນແລ້ວ, ຜູ້ມີສ່ວນຮ່ວມກໍອາດຈະເບິ່ງຂ້າມຜູ້ເຄື່ອນຍ້າຍຖິ່ນຖານໃນເວລາຮັບມືກັບວິກິດການຕ່າງໆ. ຖ້າຜູ້ມີສ່ວນຮ່ວມບໍ່ຄໍານຶງເຖິງປັດໄຈບອບບາງ-ດ້ອຍໂອກາດ-ມີຄວາມສ່

ຽງຂອງຜູ້ເຄື່ອນຍ້າຍຖິ່ນຖານ ເຊັ່ນ ອຸປະສັກທາງດ້ານພາສາ, ສະພາບການເຮັດວຽກແບບໂດດດ່ຽວ, ສະຖານະການເຂົ້າເມືອງແບບບໍ່ລົງທະບຽນ ຫຼື ຄວາມບໍ່ໄວ້ເນື້ອເຊື່ອໃຈຕໍ່ເຈົ້າໜ້າ, ມັນກໍຈະເຮັດໃຫ້ການຮັບມືອາດບໍ່ມີປະສິດທິຜົນ. ເມື່ອກົດໝາຍ ແລະ ນະໂຍບາຍບໍ່ຊັດເຈນ, ການຮັບມືຕ່າງໆຕໍ່ຜູ້ເຄື່ອນຍ້າຍຖິ່ນຖານກໍອາດຈະຄາດການລ່ວງໜ້າບໍ່ໄດ້ ແລະ ບໍ່ພຽງພໍ.

ຜູ້ເຄື່ອນຍ້າຍຖິ່ນຖານເອງ ແລະ ອົງການຈັດຕັ້ງສັງຄົມອາດຢູ່ໃນຖານະທີ່ດີທີ່ສຸດໃນການຊ່ວຍເຫຼືອ ລັດຕ່າງໆ ແລະ ຜູ້ມີສ່ວນຮ່ວມອື່ນໆເພື່ອ ໃຫ້ຄໍານຶງເຖິງການມີໜ້າຂອງຜູ້ເຄື່ອນຍ້າຍຖິ່ນຖານ, ຄວາມບອບບາງ-ຄວາມສ່ຽງ ແລະ ຄວາມຕ້ອງການຂອງພວກກ່ຽວ. ດ້ວຍເຫດນັ້ນ, ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອົງການຈັດຕັ້ງທາງສັງຄົມມີສ່ວນຮ່ວມໃນການພັດທະນາ ມາດຕະການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນກໍອາດຈະເປັນປະໂຫຍດ. ການປະຕິບັດການດັ່ງກ່າວຍັງສາມາດສ້າງຄວາມໄວ້ເນື້ອເຊື່ອໃຈລະຫວ່າງປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ລັດ ກໍຄືພາກສ່ວນກ່ຽວຂ້ອງທີ່ບໍ່ແມ່ນລັດ ສະໜອງການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ.

ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອົງການຈັດຕັ້ງສັງຄົມຍັງມີຄວາມອາດສາມາດ ແລະ ຊັບພະຍາກອນທີ່ຕົນສາມາດປະກອບສ່ວນຕໍ່ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ. ຄວາມສາມາດດ້ານພາສາຂອງເຂົາເຈົ້າ, ຄວາມຮູ້ກ່ຽວກັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານໂດຍກົງຂອງເຂົາເຈົ້າ, ຄວາມເຂົ້າໃຈກ່ຽວກັບບັນທັດຖານທາງດ້ານວັດທະນະທຳພາຍໃນຊຸມຊົນຂອງເຂົາເຈົ້າ ແລະ ຄວາມສາມາດໃນການກະຕຸ້ນຄວາມເຊື່ອຖືຕໍ່ເຈົ້າໜ້າທີ່ຂອງລັດ ແລະ ຜູ້ມີສ່ວນຮ່ວມອື່ນໆອາດຈະເປັນປະໂຫຍດໃນການສ້າງລະບົບ ແລະ ແຜນງານທີ່ຮັດກຸມ ແລະ ມີປະສິດທິຜົນຍິ່ງຂຶ້ນ.

***ຕົວຢ່າງພາກປະຕິບັດ***

- *ເວທີເພື່ອເອື້ອອຳນວຍການມີສ່ວນຮ່ວມຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການອອກແບບ ແລະ ການຈັດຕັ້ງປະຕິບັດລະບົບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ.*
- *ການຄຳນຶງເຖິງຜູ້ເຄື່ອນຍ້າຍຖິ່ນຖານໃນກອບວຽກງານແຫ່ງຊາດ ແລະ ທ້ອງຖິ່ນໃນການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນລວມທັງການຮັບຮູ້ວ່າ ຜູ້ເຄື່ອນຍ້າຍຖິ່ນຖານເປັນກຸ່ມສະເພາະທີ່ມີຄວາມຕ້ອງການ ແລະ ຄວາມອາດສາມາດ.*
- *ການບັນຈຸຜູ້ເຄື່ອນຍ້າຍຖິ່ນຖານເປັນພະນັກງານ ຫຼື ອາສາສະໝັກໃນກົນໄກການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ.*

## ແນວທາງປະຕິບັດ 5: ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນການວາງແຜນສຳຮອງ ແລະ ໃຫ້ລວບລວມຄວາມຕ້ອງການ ແລະ ຄວາມອາດສາມາດຂອງເຂົາເຈົ້າເຂົ້ານຳ

ລັດ, ຜູ້ຈ້າງງານ, ອົງການຈັດຫາງານ ແລະ ຈັດຫາແຮງງານ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມມີແຜນສຳຮອງ ແລະ ລະບຽບຂັ້ນຕອນເພື່ອຮັບມື ແລະ ຫລຸດຜ່ອນຄວາມສ່ຽງທີ່ຕິດພັນກັບວິກິດ. ມີລັດຕົ້ນທາງຫຼາຍລັດທີ່ມີແຜນສຳຮອງເພື່ອຊ່ວຍພົນລະເມືອງຂອງເຂົາເຈົ້າຢູ່ຕ່າງປະເທດ. ຖ້າວ່າບໍ່ມີແຜນການສຳຮອງ ກໍຄວນພັດທະນາຂຶ້ນກ່ອນໄລຍະເກີດວິກິດເພື່ອໃຫ້ມີເວລາພຽງພໍໃນການພິຈາລະນາ ແລະ ທົດລອງທາງເລືອກຕ່າງໆ.

ແຜນການສຳຮອງຄວນຄຳນຶງເຖິງ ແລະ ນຳເອົາຄວາມຕ້ອງການທີ່ອາດເກີດຂຶ້ນ ແລະ ຄວາມອາດສາມາດຂອງຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃສ່ໃນແຜນດັ່ງກ່າວ. ແຜນຄວນຄາດການຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານໃນເວລາມີການຍົກຍ້າຍ, ການອົບພະຍົບ, ການສື່ສານ, ສະຖານທີ່ລີ້ໄພສຸກເສີນ, ການຊ່ວຍເຫຼືອດ້ານອາຫານ ແລະ ເຄື່ອງຂອງອື່ນໆ, ການເບິ່ງແຍງສຸຂະພາບ ແລະ ການຊ່ວຍເຫຼືອດ້ານຈິດໃຈຂອງຜູ້ເຄື່ອນຍ້າຍຖິ່ນຖານ. ແຜນຄວນກຳນົດວິທີການເພື່ອລະບຸ ແລະ ຕອບສະໜອງຄວາມຕ້ອງການຂອງ ປະຊາກອນທີ່ບອບບາງ-ມີຄວາມສ່ຽງໂດຍສະເພາະ ເຊັ່ນ ລູກຂອງຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງຜູ້ທີ່ບໍ່ມີຜູ້ໃຫຍ່ຕິດຕາມມານຳ ຫຼື ຖືກແຍກຈາກຜູ້ໃຫຍ່ ຫຼື ຜູ້ປົກຄອງ, ລູກຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ມີສະຖານະການເຂົ້າເມືອງທີ່ບໍ່ໄດ້ລົງທະບຽນ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນຜູ້ເຄາະຮ້າຍຂອງການຄ້າມະນຸດ, ຜູ້ເຄື່ອນຍ້າຍຖິ່ນຖານສູງອາຍຸ, ແລະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ພິການ. ນອກຈາກນັ້ນ ແຜນກໍຄວນກຳນົດການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກັກຂັງ. ແຜນການສຳຮອງຄວນຍືດຍຸ່ນ, ປະຕິບັດໄດ້ໃນຕົວຈິງ, ຊັດເຈນ ແລະ ສາມາດດັດປັບໄປນຳໃຊ້ໃນລະດັບພາກພື້ນ, ແຫ່ງຊາດ ແລະ ທ້ອງຖິ່ນ.

ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອົງການຈັດຕັ້ງທາງສັງຄົມມີສ່ວນຮ່ວມໃນການກະກຽມແຜນສຳຮອງອາດຈະເປັນປະໂຫຍດຢ່າງຍິ່ງ. ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອົງການຈັດຕັ້ງທາງສັງຄົມສາມາດລະບຸສະຖານະການຕ່າງໆທີ່ຈຳເປັນຕ້ອງມີວິທີການແບບມີເປົ້າໝາຍເພື່ອແກ້ໄຂຄວາມຕ້ອງການສະເພາະເຈາະຈົງຂອງຜູ້ເຄື່ອນຍ້າຍຖິ່ນຖານເຊັ່ນ ເງື່ອນໄຂທາງດ້ານພາສາ. ຜູ້ຈ້າງງານ ແລະ ອົງຈັດຫາງານ ແລະ ຈັດຫາແຮງງານກໍຄວນເປັນສ່ວນໜຶ່ງຂອງແຜນສຳຮອງເພື່ອແຮງງານເຄື່ອນຍ້າຍ ແລະ ຄອບຄົວຂອງເຂົາເຈົ້າ.

ການປັບປຸງ ແລະ ທົດສອບແຜນການສຳຮອງຢ່າງເປັນປະຈຳ ກໍອາດຈະເປັນປະໂຫຍດໃນການລະບຸຊ່ອງຫວ່າງ ແລະ ຈຸດອ່ອນໃນຂໍ້ປະຕິບັດການຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ເພື່ອຮັບປະກັນວ່າເຈົ້າໜ້າທີ່ຮັບຜິດຊອບໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານນັ້ນມີສິດອຳນາດ ແລະ ຄວາມອາດສາມາດໃນການເຮັດໜ້າທີ່ຂອງຕົນ. ການວາງແຜນສຳຮອງຮ່ວມກັນລະຫວ່າງ ຜູ້ມີສ່ວນຮ່ວມໃນການຮັບມືກັບພາວະສຸກເສີນ ແລະ ຜູ້ທີ່ຫຼັກໆທີ່ເຮັດວຽກກັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານແມ່ນຈະສາມາດ ເອື້ອອຳນວຍການແບ່ງປັນຊັບພະຍາກອນ ແລະ ຄວາມເຂົ້າໃຈແບບດຽວກັນກ່ຽວກັບຄວາມສ່ຽງ, ປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ, ແລະ ໂຄງລ່າງພື້ນຖານທ້ອງຖິ່ນ. ແຜນສຳຮອງອາດລວມເອົາ ໂຄງສ້າງການຄຸ້ມຄອງວິກິດທີ່ກຳນົດຄວາມຮັບຜິດຊອບຂອງຜູ້ມີສ່ວນຮ່ວມຕ່າງໆ.

***HVS¢OP ^@M\ HLJG***

- *ແຜນສຳຮອງຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍເພື່ອແບ່ງປັນຊັບພະຍາກອນ ແລະ ຄວາມອາດສາມາດເພື່ອຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງ ການດຳເນີນການສ້າງແຜນທີ່ມີຊັບສິນຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍ.*
- *ລະບົບການແຈ້ງເຕືອນວິກິດລ່ວງໜ້າ ກ່ຽວກັບວິກິດໃນລັດປາຍທາງ ແລະ ການສັ່ງການເຈົ້າໜ້າທີ່ໃຫ້ປະຕິບັດການ ອີງຕາມລະດັບຄວາມຮ້າຍແຮງຂອງວິກິດເຊັ່ນ ຂໍ້ບັງຄັບໃນການອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານ.*
- *ແຜນການອົບພະຍົບທີ່ກຳນົດກົດລະບຽບ ແລະ ຫຼັກເກນຊັດເຈນ ໃນການດຳເນີນການອົບພະຍົບເຊັ່ນ ເງື່ອນໄຂທາງດ້ານເອກະສານ ແລະ ເງື່ອນໄຂສຳລັບການອົບພະຍົບ.*
- *ການທົດສອບພາວະສຸກເສີນ ທີ່ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານທົດສອບແຜນສຳຮອງ ແລະ ລະບຸອຸປະສັກ ແລະ ຄວາມທ້າທາຍຕ່າງໆ.*
- *ແຜນສຳຮອງລະຫວ່າງອົງການທີ່ຄຳນຶງເຖິງຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ອາດຈະເກີດຂຶ້ນໃນພາວະວິກິດ.*

## ແນວທາງປະຕິບັດ 6: ສື່ສານຢ່າງມີປະສິດທິຜົນກັບຜູ້ເຄື່ອນຍ້າຍຖິ່ນຖານ

ຜູ້ເຄື່ອນຍ້າຍຖິ່ນຖານຈຳເປັນຕ້ອງເຂົ້າໃຈຄວາມສ່ຽງທີ່ອາດເກີດຂຶ້ນທີ່ຕິດພັນກັບວິກິດ, ສະຖານທີ່ ແລະ ວິທີການຂໍຄວາມຊ່ວຍເຫຼືອ, ແລະ ວິທີການແຈ້ງໃຫ້ຜູ້ມີສ່ວນຮ່ວມຊາບກ່ຽວກັບຄວາມຕ້ອງການຂອງຕົນເອງ. ຜູ້ມີສ່ວນຮ່ວມຄວນຫາຊ່ອງທາງທີ່ເໝາະສົມໃນການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ເພື່ອລະບຸຄວາມຕ້ອງການ ແລະ ຄວາມອາດສາມາດຂອງເຂົາເຈົ້າ. ເພື່ອເຮັດໃຫ້ໄດ້ຢ່າງມີປະສິດທິຜົນ, ລັດ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມຄວນແກ້ໄຂ ອຸປະສັກທາງດ້ານພາສາ, ວັດທະນະທຳ ແລະ ອື່ນໆ. ຜົນກະທົບຂອງວິກິດ ເຊັ່ນ ການລົ້ມເຫຼວຂອງລະບົບໄຟຟ້າ, ສັນຍານອິນເຕີເນັດ ແລະ ລະບົບການສື່ສານດາວທຽມຕົກ ແລະ ເຖິງຂັ້ນການເຜີຍແຜ່ຂໍ້ມູນທີ່ບໍ່ຖືກຕ້ອງ ເຊັ່ນໂດຍ ຜູ້ລັກລອບເອົາຄົນເຂົ້າປະເທດ) ອາດຈະກໍ່ກວນ ຫຼື ຂັດຂວາງການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານ.

ຄວາມພະຍາຍາມໃນການສື່ສານຍັງຄວນຄຳນຶງເຖິງຄວາມຫຼາກຫຼາຍຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຢູ່ໃນລັດປາຍທາງ. ວິທີການທີ່ຫຼາກຫຼາຍ, ຫຼາຍວິທີ, ເປັນທາງການ ແລະ ບໍ່ເປັນທາງການແມ່ນສາມາດຊ່ວຍໃຫ້ຜ່ານຜ່າອຸປະສັກໃນການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານຢ່າງມີປະສິດທິຜົນ. ຜູ້ເຄື່ອນຍ້າຍຖິ່ນຖານແມ່ຍິງແມ່ນກຸ່ມແຮງງານທີ່ເຮັດວຽກເປັນຄົນຮັບໃຊ້ ກຸ່ມໃຫຍ່ທີ່ສຸດໃນໂລກ. ຍ້ອນທຳມະຊາດ-ລັກສະນະຂອງວຽກງານທີ່ໂດດດ່ຽວນີ້, ແມ່ຍິງທີ່ເຮັດວຽກເປັນຄົນຮັບໃຊ້ຈຶ່ງຕົກຢູ່ໃນຄວາມສ່ຽງສູງທີ່ຈະຖືກລ່ວງລະເມີດ ແລະ ຂູດຮີດ ລວມທັງການລ່ວງລະເມີດທາງຮ່າງກາຍ ແລະ ທາງເພດ, ການບັງຄັບໃຊ້ແຮງງານ ແລະ ການກັກຂັງ-ຈຳກັດບໍລິເວນ. ໃນເວລາເກີດວິກິດ, ຄວາມສ່ຽງເຫຼົ່ານີ້ຍິ່ງທະວີຄູນ ແລະ ກໍເຂົ້າຫາເຂົາເຈົ້າຍາກຂຶ້ນຜ່ານຊ່ອງທາງການສື່ສານແບບດັ້ງເດີມ. ຄວາມຢ້ານໃນການຖືກຈັບຕົວ, ກັກຕົວ ຫຼື ສົ່ງກັບຄືນປະເທດອາດຂັດ

ຂວາງ-ທ່ວງດຶງເຮັດໃຫ້ຜູ້ເຄື່ອນຍ້າຍທີ່ຕົກຢູ່ໃນສະພາບຄົນເຂົ້າເມືອງທີ່ບໍ່ໄດ້ຈົດທະບຽນ ບໍ່ສາມາດເຂົ້າເຖິງຊ່ອງທາງການສື່ສານທີ່ມີຢູ່. ລູກຂອງຜູ້ເຄື່ອນຍ້າຍຖິ່ນຖານກໍອາດບໍ່ມີຜູ້ຕິດຕາມເບິ່ງແຍງ ຫຼື ຖືກແຍກກັບຜູ້ປົກຄອງ. ຜູ້ເຄື່ອນຍ້າຍຖິ່ນຖານສູງອາຍຸບາງຄັ້ງກໍຂາດຄວາມສາມາດປາກເວົ້າພາສາຂອງປະເທດປາຍທາງ. ຜູ້ເຄື່ອນຍ້າຍຖິ່ນຖານພິການອາດຕ້ອງການຕົວອັກສອນນູນ, ເຄື່ອງຊ່ວຍຟັງ ແລະ ການຊ່ວຍເຫຼືອທີ່ຄຳນຶງເຖິງຄວາມພິການອື່ນໆ. ໃນໄລຍະທີ່ຄວາມວຸ້ນວາຍອາດຈະຕາມມາໃນໄລຍະວິກິດ, ກໍອາດມີການເບິ່ງຂ້າມຜູ້ເຄື່ອນຍ້າຍຖິ່ນຖານ. ຄວາມພະຍາຍາມໃນການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານຄວນຄຳນຶງເຖິງສະຖານະການຫຍຸ້ງຍາກຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ແຕກຕ່າງກັນໄປໃນແຕ່ລະກໍລະນີ.

ອາດໝູນໃຊ້ປະໂຫຍດຈາກຊ່ອງທາງການສື່ສານທາງ ສື່ສັງຄົມອອນໄລນ໌, ສະຖານທີ່ທາງສາສະໜາ ແລະ ສາຍພົວພັນຂອງຜູ້ເຄື່ອນຍ້າຍຖິ່ນຖານກັບຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ ທີ່ຢູ່ໃນລັດຕົ້ນທາງ. ການເກນ-ການຂົນຂວາຍ ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອົງການທີ່ມີຄວາມເຊື່ອທາງສາສະໜາ ແລະ ອົງການຈັດຕັ້ງສັງຄົມຕ່າງໆເພື່ອ ໃຫ້ມີສ່ວນຮ່ວມໃນການພັດທະນາວິທີການ-ຮູບແບບການສື່ສານ ແລະ ການສົ່ງເສີມຄວາມອາດສາມາດໃຫ້ພວກກ່ຽວສື່ສານພົວພັນກັນ ກໍສາມາດເອື້ອອຳນວຍໃຫ້ແກ່ການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງປະຊາກອນກຸ່ມທີ່ເຂົ້າຫາຍາກ ແລະ ຂົນຂວາຍ-ພົວພັນຍາກ. ພະນັກງານສາທາລະນະສຸກ ຫຼື ຜູ້ໃຫ້ການຊ່ວຍເຫຼືອທີ່ເຮັດວຽກຢູ່ໃນຊຸມຊົນຢູ່ແລ້ວ ກໍອາດສາມາດສື່ສານໃນພາສາຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ເຂົ້າໃຈວັດທະນະທຳຕ່າງໆຂອງຊຸມຊົນ. ການຍົກລະດັບ ແລະ ການຝຶກອົບຮົມເຂົາເຈົ້າ ອາດເປັນວິທີການທີ່ມີປະສິດທິຜົນ ໃນການສະໜອງຂໍ້ມູນໃຫ້ແກ່ຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ.

***ຕົວຢ່າງພາກປະຕິບັດ***

- *ຊ່ອງທາງການສື່ສານແບບດັ້ງເດີມ ແລະ ທັນສະໄໝຕ່າງໆແມ່ນຊ່ອງທາງເພື່ອເຂົ້າເຖິງ ປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຫຼາກຫຼາຍ ແລະ ເພື່ອຫລຸດຜ່ອນຜົນກະທົບຈາກ ການລົ້ມເຫຼວຂອງລະບົບການສື່ສານທີ່ອາດເກີດຂຶ້ນ.*
- *ວິທີການສື່ສານຫຼາຍຊ່ອງທາງເພື່ອການສື່ສານໃນພາສາຕ່າງໆທີ່ຜູ້ເຄື່ອນຍ້າຍເວົ້າ, ໃນລະດັບຄວາມຮູ້ທີ່ແຕກຕ່າງກັນເພື່ອປັບເຂົ້າກັບວິທີການທີ່ຜູ້ເຄື່ອນຍ້າຍຖິ່ນຖານຮັບເອົາຂໍ້ມູນຂ່າວສານ ລວມທັງຮູບແບບການເຂົ້າເຖິງຂໍ້ມູນສຳລັບບຸກຄົນພິການ.*
- *ແອັບພິເຄຊັນໃນມືຖື ແລະ ສື່ສັງຄົມອອນໄລນ໌ ໃນຖານະກົນໄກທີ່ປະຢັດ-ຕົ້ນທຶນຕ່ຳ, ນຳໃຊ້ງ່າຍ ແລະ ເຂົ້າເຖິງໄດ້ຢ່າງກວ້າງຂວາງ ເພື່ອສະໜອງຂໍ້ມູນທີ່ກ່ຽວຂ້ອງກັບວິກິດ.*
- *ສາຍໂທໃຫ້ຄວາມຊ່ວຍເຫຼືອ, ສາຍໂທດ່ວນ ແລະ ສູນບໍລິການທາງໂທລະສັບ ອາດເປັນວິທີການທີ່ເຂົ້າເຖິງງ່າຍ ແລະດັ້ງເດີມ ທີ່ເອື້ອອຳນວຍໃນການສື່ສານທາງດຽວ ຫຼື ສອງທາງກັບຜູ້ເຄື່ອນຍ້າຍຖິ່ນຖານ.*
- *ການສື່ສານໂດຍອົງການຈັດຕັ້ງສັງຄົມ ໂດຍສະເພາະເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ, ຜູ້ອົບພະຍົບ ແລະ ຜູ້ມີສ່ວນຮ່ວມທີ່ມີຄວາມເຊື່ອທາງສາສະໜາ ກັບ ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີສະຖານະເຂົ້າເມືອງແບບບໍ່ໄດ້ລົງທະບຽນ ແລະ ຜູ້ອື່ນໆທີ່ອາດເຂົ້າເຖິງຍາກ.*

ລັດ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມສ່ວນໃຫຍ່ແມ່ນເຮັດວຽກກັບຊັບພະຍາກອນທີ່ໜ້ອຍກວ່າທີ່ຈຳເປັນ. ຜູ້ມີສ່ວນຮ່ວມແຕ່ລະພາກສ່ວນດັ່ງກ່າວນີ້ແມ່ນມີທັກສະ, ຊັບພະຍາກອນ ແລະ ຈຸດແຂງທີ່ເປັນເອກະລັກສະເພາະ. ການເຮັດວຽກຮ່ວມກັນໃນການເປັນຄູ່ຮ່ວມງານ, ການຮ່ວມມືໃນຂໍ້ຕົກລົງ ແລະ ການປະສານງານຢ່າງເປັນປະຈຳຈະຊ່ວຍປັບປຸງການຮັບມືຮ່ວມກັນຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ປ້ອງກັນຄວາມພະຍາຍາມທີ່ຊ້ຳຊ້ອນກັນ. ການຈັດການດັ່ງກ່າວທີ່ດີທີ່ສຸດແມ່ນໃຫ້ຈັດການກ່ອນເກີດຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດຄັ້ງຕໍ່ໄປ ໃນເວລາທີ່ຜູ້ມີສ່ວນຮ່ວມມີໂອກາດໃນການຄາດຄະເນສິ່ງທ້າທາຍ ແລະ ໝູນໃຊ້ທັກສະ ແລະ ຈຸດແຂງທີ່ເປັນເອກະລັກສະເພາະ. ການວາງແຜນຮ່ວມກັນ ແລະ ການປະສານງານຈະຊ່ວຍໃຫ້ການນຳໃຊ້ໃຊ້ຊັບພະຍາກອນໃຫ້ເກີດປະໂຫຍດສູງທີ່ສຸດ, ປັບປຸງປະສິດທິຜົນຂອງການຮັບມືກັບພາວະສຸກເສີນ ແລະ ຊຸກຍູ້ຄວາມໄວ້ເນື້ອເຊື່ອໃຈລະຫວ່າງຜູ້ມີສ່ວນຮ່ວມ. ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອົງການຈັດຕັ້ງສັງຄົມມີສ່ວນຮ່ວມ, ເຊິ່ງເປັນຜູ້ທີ່ມີຄວາມຮູ້ກ່ຽວກັບຄວາມຕ້ອງການ ແລະ ຄວາມທ້າທາຍໂດຍກົງທີ່ຜູ້ເຄື່ອນຍ້າຍຖິ່ນຖານພົບພໍ້ນັ້ນ, ຈະປັບປຸງປະສິດທິຜົນຂອງຄວາມພະຍາຍາມໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບວິກິດ ລວມທັງໃນລະດັບທ້ອງຖິ່ນ, ຊາດ, ພາກພື້ນ ຫຼື ສາກົນ.

ການຈັດການເຫຼົ່ານີ້ອາດກ່ຽວຂ້ອງກັບກິດຈະກຳຕ່າງໆທີ່ຕອບສະໜອງຕາມຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານໃນໄລຍະທີ່ເກີດ ແລະ ຫຼັງພາວະສຸກເສີນ ໂດຍເລີ່ມແຕ່ ການເກັບກຳຂໍ້ມູນ ເຖິງການແບ່ງປັນຂໍ້ມູນຂ່າວສານ, ການບໍລິການກົງສຸນ ຈົນເຖິງການປະເມີນຕົວຕົນ-ອັດຕະລັກ, ການປູກຈິດສຳນຶກຈົນເຖິງ ແຜນຍຸດທະສາດດ້ານການສື່ສານ, ການໃຫ້ຄວາມຊ່ວຍເຫຼືອ ແລະ ບໍລິການດ້ານມະນຸດສະທຳ ຈົນເຖິງລະບົບການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ, ການສ້າງຄວາມອາດສາມາດ ຈົນເຖິງ ການຊ່ວຍເຫຼືອໃນການເຊື່ອມໂຍງຄືນສູ່ສັງຄົມ, ແລະ ອີກຫຼາຍກິດຈະກຳອື່ນໆ. ອັນນີ້ອາດລວມທັງ ການປະສານງານ ແລະ ການແບ່ງປັນຂໍ້ມູນລະຫວ່າງຊ່ຽວຊານຕ້ານການຄ້າມະນຸດ ແລະ ຜູ້ສະໜອງການຊ່ວຍເຫຼືອດ້ານມະນຸດສະທຳເພື່ອຮັບປະກັນການກັ່ນຕອງ ແລະ ການນຳສົ່ງຜູ້ເຄາະຮ້າຍ-ຜູ້ເຄື່ອນຍ້າຍຖິ່ນຖານໄປຍັງຈຸດບໍລິການທີ່ເໝາະສົມ. ນອກຈາກນັ້ນ, ດ້ວຍການພັດທະນາລະບົບເພື່ອລະບຸຜູ້ລີ້ໄພ, ຜູ້ຊອກຫາບ່ອນລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດ (stateless persons), ລັດຕ່າງໆກໍຈະສາມາດຮັບປະກັນວ່າບຸກຄົນເຫຼົ່ານີ້ຈະຖືກນຳສົ່ງໄປຍັງ ກົນໄກປົກປ້ອງຜູ້ລີ້ໄພ ແລະ ກົນໄກການປົກປ້ອງອື່ນໆຢ່າງເໝາະສົມ.

ສ່ວນໃຫຍ່ ຜູ້ມີສ່ວນຮ່ວມຈະສາມາດຈັດແຈງລ່ວງໜ້າ ການບໍລິການ ແລະ ຊັບພະຍາກອນຫຼັກໆທີ່ເປັນທີ່ຕ້ອງການສູງເມື່ອເກີດວິກິດ ລວມທັງ ການຂົນສົ່ງ, ບ່ອນພັກອາໄສ, ອາຫານ, ການເບິ່ງແຍງສຸຂະພາບ ແລະ ຂໍ້ມູນທີ່ຖືກຕ້ອງທັນການ. ການສ້າງ ແລະ ຮັກສາຊ່ອງທາງການສື່ສານທີ່ຊັດເຈນລະຫວ່າງ ສະຖານກົງສຸນ ແລະ ອົງການທີ່ກ່ຽວຂ້ອງຂອງລັດປາຍທາງກໍມີຄວາມສຳຄັນເຊັ່ນກັນ. ຊ່ອງທາງການສື່ສານດັ່ງກ່າວ ຖືວ່າມີຄວາມສຳຄັນຍິ່ງໃນສະຖານະການວິກິດ.

*ຕົວຢ່າງພາກປະຕິບັດ*

- *ການຕົກລົງລ່ວງໜ້າລະຫວ່າງຜູ້ມີສ່ວນຮ່ວມ ເຊັ່ນ ການຕົກລົງລະຫວ່າງລັດ ແລະ ອົງການຈັດຕັ້ງສາກົນໃນການຢັ້ງຢືນຕົວຕົນ-ອັດຕະລັກ, ການນໍາໃຊ້ຊັບສິນຮ່ວມກັນ, ການຕິດຕາມຫາຄອບຄົວ, ການນໍາໃຊ້ຊ່ຽວຊານ ແລະ ວິຊາການທີ່ໃຫ້ການຊ່ວຍເຫຼືອດ້ານມະນຸດສະທໍາ.*
- *ຂໍ້ຕົກລົງລະຫວ່າງຜູ້ມີສ່ວນຮ່ວມຫຼາຍຝ່າຍກ່ຽວກັບການຍົກຍ້າຍ ແລະ ການອົບພະຍົບ ໂດຍກໍານົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຄູ່ຮ່ວມຕ່າງໆ ແລະ ທິດທາງກ່ຽວກັບການຈັດສັນຄ່າໃຊ້ຈ່າຍຕ່າງໆ.*
- *ການຮ່ວມມືຂ້າມແດນກ່ຽວກັບການກະກຽມຄວາມພ້ອມໃນການຮັບມືກັບວິກິດ ໂດຍຄໍານຶງເຖິງຄວາມຕ້ອງການສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານ ໂດຍສະເພາະ ໃນລະດັບທ້ອງຖິ່ນສໍາລັບຊຸມຊົນທີ່ຢູ່ລະຫວ່າງຊາຍແດນຂອງສອງປະເທດ.*
- *ການໃຫ້ການຊ່ວຍເຫຼືອດ້ານກົງສູນບົນຫຼັກການຕອບສະໜອງເຊິ່ງກັນ ແລະ ກັນ ແລະ ຂໍ້ຕົກລົງຮອງຮັບເພື່ອແກ້ໄຂຊ່ອງຫວ່າງໃນສະຖານະການທີ່ລັດບໍ່ມີສະຖານກົງສຸນ ຫຼື ສາຍພົວພັນທາງການທູດ ຫຼື ມີຄວາມອາດສາມາດທີ່ຈໍາກັດ.*

## ແນວທາງປະຕິບັດ 8: ສ້າງຄວາມອາດສາມາດ ແລະ ຮຽນຮູ້ບົດຮຽນຕ່າງໆເພື່ອການຮັບມືກັບພາວະສຸກເສີນ ແລະ ຂໍ້ປະຕິບັດພາຍຫຼັງວິກິດ

ຊັບພະຍາກອນ, ທຶນ ແລະ ທັກສະດ້ານວິຊາການທີ່ຈໍາກັດລ້ວນແລ້ວແຕ່ກະທົບຕໍ່ຄວາມເຂັ້ມແຂງຂອງການຮັບມືກັບພາວະສຸກເສີນ ແລະ ພາຍຫຼັງວິກິດ. ການເຂົ້າໃຈ ແລະ ການປະເມີນຂໍ້ຈໍາກັດເຫຼົ່ານີ້ແມ່ນຂັ້ນຕອນສໍາຄັນທໍາອິດເພື່ອຜ່ານຜ່າຂໍ້ຈໍາກັດດັ່ງກາວນີ້. ການລົງທຶນຂອງຜູ້ມີສ່ວນຮ່ວມຕາມຄວາມອາດສາມາດຂອງຕົນເອງ ໃນການປັບປຸງການຮັບມືກັບພາວະສຸກເສີນ ແລະ ການຟື້ນຟູຫຼັງວິກິດສໍາລັບຜູ້ເຄື່ອນຍ້າຍຖິ່ນຖານແມ່ນມີຄວາມສໍາຄັນ.

ການສ້າງຄວາມອາດສາມາດຈະກ່ຽວຂ້ອງກັບຂົງເຂດຕ່າງໆເຊັ່ນ ການບໍລິການກົງສຸນ, ການຝຶກອົບຮົມໃຫ້ແກ່ຜູ້ຮັບມືກັບພາວະສຸກເສີນ, ການຈັດສັນຊັບພະຍາກອນ, ກົນໄກການສະໜອງທຶນ, ແຜນງານປະກັນໄພ, ສິນຄ້າ ແລະ ການບໍລິການເພື່ອຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ, ການຄຸ້ມຄອງຊາຍແດນ ແລະ ການເຄື່ອນຍ້າຍຖິ່ນຖານ, ການຍົກຍ້າຍ ແລະ ການອົບພະຍົບ. ຫຼາຍຂົງເຂດວຽກງານເຫຼົ່ານີ້ແມ່ນກ່ຽວຂ້ອງທັງໄລຍະພາວະສຸກເສີນ ແລະ ຫຼັງພາວະວິກິດ. ນອກຈາກນັ້ນ ຜູ້ມີສ່ວນຮ່ວມຄວນຄໍານຶງເຖິງການແກ້ໄຂ ຄວາມທ້າທາຍໃນການເຊື່ອມໂຍງຄືນສູ່ສັງຄົມຂອງຜູ້ເຄື່ອນຍ້າຍຖິ່ນຖານ, ຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ, ການເອື້ອອໍານວຍໃນການເຂົ້າເຮັດວຽກຄືນ, ການເຂົ້າເມືອງຄືນຢ່າງປອດໄພ ແລະ ການສະໜັບສະໜູນຜູ້ເຄື່ອນຍ້າຍຖິ່ນຖານໃຫ້ເຂົ້າເຖິງຄ່າແຮງງານຄ້າງຈ່າຍໂດຍນາຍຈ້າງ ແລະ ຊັບສິນທີ່ຍັງຄ້າງຢູ່ລັດທາງ.

ລັດ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມຄວນຊ່ວຍເຫຼືອກັນ ແລະ ກັນ ໃນການສ້າງ ແລະ ປັບປຸງຄວາມອາດສາມາດຂອງຕົນໃນການຮັບມືກັບພາວະສຸກເສີນ. ການສະໜັບສະໜູນ, ການຕິດຕາມ ແລະ ການປະເມີນຜົນ, ການປູກຈິດສໍານຶກ, ການຈັດການຝຶກອົບຮົມ, ການແບ່ງປັນຂໍ້ມູນຂ່າວສານ, ການຄົ້ນຄວ້າ ແລະ ການສ້າງຄວາມຮູ້, ການໃຫ້ການຊ່ວຍເຫຼືອ ແລະ ການຮຽນຮູ້ຈາກກັນ ແລະ ກັນ ທັງໝົດທັງມວນເຫຼົ່ານີ້ແມ່ນຈະຊ່ວຍຄວາມພະຍາຍາມລວມໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ.

***ຕົວຢ່າງພາກປະຕິບັດ***

- *ການຝຶກອົບຮົມ ແລະ ການສ້າງຄວາມອາດສາມາດໃຫ້ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງເຊັ່ນ ກ່ຽວກັບ ວິທີການເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານຢ່າງມີປະສິດທິຜົນ ແລະ ການລະບຸຄວາມບອບບາງ-ຄວາມສ່ຽງ ແລະ ຄວາມຕ້ອງການ.*
- *ການຈັດແຈງທຶນສະເພາະເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານລວມທັງ ງົບປະມານ, ເງິນກູ້ຢືມ, ແລະ ຖານການສະໜອງທຶນອື່ນໆ.*
- *ກົນໄກການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ ກຳນົດຊ່ຽວຊານທີ່ສາມາດເຮັດວຽກແບບໝູນວຽນເພື່ອແກ້ໄຂຄວາມຕ້ອງການທີ່ຫຼາກຫຼາຍຂອງຜູ້ເຄື່ອນຍ້າຍທີ່ແຕກຕ່າງກັນ.*
- *ການແລກປ່ຽນລະຫວ່າງຜູ້ເຮັດວຽກນຳກັນເພື່ອ ສ້າງຂີດຄວາມສາມາດ ແລະ ຮຽນຮູ້ກ່ຽວກັບວິທີການແກ້ໄຂຄວາມທ້າທາຍທີ່ຕິດພັນກັບການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ.*
- *ການຝຶກອົບຮົມສຳລັບເຈົ້າໜ້າທີ່ກົງສຸນ ເຊັ່ນກ່ຽວກັບການເກັບກຳຂໍ້ມູນກ່ຽວກັບພົນລະເມືອງ ແລະ ການຄຸ້ມຄອງວິກິດ ລວມທັງການອົບພະຍົບ.*
- *ການຕິດຕາມ ແລະ ການປະເມີນຜົນ ການຮັບມືກັບວິກິດ ລວມທັງການວິເຄາະການຮັບມືກັບຜູ້ເຄື່ອນຍ້າຍຖິ່ນຖານ.*

# II. ການຮັບມືກັບພາວະສຸກເສີນ

ໃນໄລຍະພາວະສຸກເສີນ, ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງຈະເລີ່ມປະຕິບັດ ມາດຕະການກະກຽມຄວາມພ້ອມຮັບມືກັບໄພວິກິດຕາມທີ່ໄດ້ອະທິບາຍໃນພາກກ່ອນໜ້ານີ້. ເຖິງແມ່ນວ່າຈະໄດ້ເລີ່ມປະຕິບັດມາດຕະການດັ່ງກ່າວແລ້ວກໍຕາມ, ລັດ, ຜູ້ມີສ່ວນຮ່ວມພາກລັດ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ ກໍຍັງຈຳເປັນຕ້ອງຕັດສິນໃຈ ແລະ ຈັດການແບບສະເພາະໜ້າ-ສະເພາະກິດ ເພື່ອແກ້ໄຂບັນຫາຄວາມສະຫຼັບຊັບຊ້ອນທີ່ບໍ່ໄດ້ຄາດການໄວ້ ແລະ ຕ້ອງສະໜອງຕາມຄວາມຕ້ອງການຕົວຈິງທີ່ເກີດຂຶ້ນໃນຂະນະທີ່ພາວະສຸກເສີນຜັນຂະຫຍາຍໃນແຕ່ລະໄລຍະ.

## ແນວທາງປະຕິບັດ 9: ສື່ສານຢ່າງກວ້າງຂວາງ, ມີປະສິດທິຜົນ, ແລະ ສະໝໍ່າສະເໝີກັບຜູ້ເຄື່ອນຍ້າຍຖິ່ນຖານກ່ຽວກັບວິກິດການທີ່ເກີດຂຶ້ນ ແລະ ວິທີການເຂົ້າເຖິງການຊ່ວຍເຫຼືອ

ຄວນເລີ່ມຕົ້ນລະບົບການສື່ສານທີ່ເປັນທາງການ ແລະ ບໍ່ເປັນທາງການຫຼາກຫຼາຍຮູບແບບເມື່ອຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດເກີດຂຶ້ນ. ຜູ້ເຄື່ອນຍ້າຍຖິ່ນຖານຄວນໄດ້ຮັບຂໍ້ມູນກ່ຽວກັບທຳມະຊາດຂອງວິກິດການທີ່ຜັນຂະຫຍາຍໃນແຕ່ລະໄລຍະ ແລະ ວິທີການເຂົ້າເຖິງການຊ່ວຍເຫຼືອ. ນອກຈາກນັ້ນ, ຜູ້ທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດສ່ວນໃຫຍ່ຈະມີຄວາມຄິດທີ່ຊັດເຈນກ່ຽວກັບວິທີການປັບປຸງຄວາມປອດໄພ ແລະ ສະຫວັດດີການຂອງເຂົາເຈົ້າໃນພາວະສຸກເສີນ. ເຂົາເຈົ້າເປັນແຫຼ່ງຂໍ້ມູນທີ່ສຳຄັນກ່ຽວກັບຄວາມສ່ຽງ, ຄວາມຕ້ອງການຂອງທ້ອງຖິ່ນ ແລະ ຊ່ອງຫວ່າງໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ.

ຜູ້ມີສ່ວນຮ່ວມສາມາດສື່ສານຂໍ້ມູນ ແລະ ຮັບຂໍ້ມູນຈາກຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ມີສ່ວນຮ່ວມອື່ນໆ. ການຢໍ້າຂໍ້ຄວາມ, ການນຳໃຊ້ຫຼາກຫຼາຍຊ່ອງທາງ ແລະ ສື່ຕ່າງໆ (ຂໍ້ມູນເປັນຮູບພາບ, ສຽງ ແລະ ສື່ສິ່ງພິມ) ສາມາດຂະຫຍາຍຂອບເຂດຂອງຂໍ້ມູນ. ວິທີການດັ່ງກ່າວນັ້ນ ຈະມີຄວາມສຳຄັນໂດຍສະເພາະ ເພື່ອເຂົ້າເຖິງ ຜູ້ເຄື່ອນຍ້າຍຖິ່ນຖານທີ່ເຂົ້າໃນສະຖານະເຂົ້າເມືອງແບບບໍ່ໄດ້ລົງທະບຽນ, ຜູ້ທີ່ເຮັດວຽກໃນສະພາບໂດດດ່ຽວ ແລະ ຫ່າງໄກສອກຫຼີກ, ການຜູ້ຂາດການເຂົ້າເຖິງ ເຄືອຂ່າຍສັງຄົມອອນໄລນ໌ ແລະ ອື່ນໆ. ການສື່ສານ ແລະ ການພົວພັນກັບຜູ້ຕາງໜ້າຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຫຼາກຫຼາຍ ລວມທັງກັບກຸ່ມຄົນສ່ວນໜ້ອຍ ຈະສາມາດ ຫຼື ຊ່ວຍປັບປຸງການປະເມີນຄວາມຕ້ອງການ.

ຜູ້ມີສ່ວນຮ່ວມທັງໝົດຍັງໄດ້ປະໂຫຍດຈາກການຮັບຂໍ້ມູນຢ່າງທ່ວງທັນໃນຂະນະທີ່ວິກິດການຜັນຂະຫຍາຍ ແລະ ມີບັນຫາໃໝ່ໆເກີດຂຶ້ນ. ຕົວຢ່າງ ໃນເຫດການຄວາມຂັດແຍ່ງ ກໍອາດມີການຕໍ່ສູ້ກັນໃນພື້ນທີ່ໃໝ່ໆ ແລະ ກະທົບໃສ່ປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານໃນລະດັບທີ່ແຕກຕ່າງກັນ. ໃນກໍລະນີໄພພິບັດທຳມະຊາດ ເຊັ່ນແຜ່ນດິນໄຫວ ທີ່ອາດເກີດແຜ່ນດິນໄຫວຕາມໆກັນມານັ້ນ ອາດສ້າງຄວາມເສຍຫາຍໃໝ່ໆ. ສະນັ້ນສິ່ງທີ່ສຳຄັນແມ່ນການສືບຕໍ່ປະເມີນຮູບແບບໄພພິບັດທີ່ປ່ຽນແປງໃນແຕ່ລະໄລຍະ ແລະ ປັບການຮັບມືໃຫ້ເຂົ້າກັບຄວາມຕ້ອງການທີ່ປ່ຽນແປງ.

ຜູ້ມີສ່ວນຮ່ວມຕ່າງໆມັກຈະໄດ້ຮັບຂໍ້ມູນແບບສ່ວນຕົວທີ່ບໍ່ຄືໃຜ. ການແບ່ງປັນຂໍ້ມູນຂ່າວສານ ແລະ ຄວາມຮູ້ກ່ຽວກັບ ວິວັດທະນາການຂອງວິກິດການ ແລະ ຄວາມຊ່ວຍເຫຼືອທີ່ມີ ແມ່ນຈະສາມາດສະໜັບສະໜູນຄວາມພະຍາຍາມຂອງຜູ້ມີສ່ວນຮ່ວມທຸກພາກສ່ວນໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຫລຸດຜ່ອນຄວາມສັບສົນທີ່ອາດເກີດຂຶ້ນ. ຕົວຢ່າງ, ບາງລັດອາດໄດ້ຂໍ້ມູນກ່ຽວກັບດ້ານໃດດ້ານໜຶ່ງສະເພາະຂອງຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດທີ່ຈະຊ່ວຍເປັນບ່ອນອີງໃນການປະຕິບັດງານໂດຍຜູ້

ມີສ່ວນຮ່ວມອື່ນໆລວມທັງຜູ້ມີສ່ວນຮ່ວມໃນການໃຫ້ຄວາມຊ່ວຍເຫຼືອດ້ານມະນຸດສະທຳ. ຜູ້ມີສ່ວນຮ່ວມອາດເຫັນຄຸນຄ່າໃນການພັດທະນາຂໍ້ຕົກລົງທີ່ເອກະພາບກັນກ່ຽວກັບ ຄວາມສ່ຽງ ແລະ ສະພາບການຫຼ້າສຸດໃນໄລຍະເກີດວິກິດ.

***ຕົວຢ່າງພາກປະຕິບັດ***

- *ການລາຍງານຄວາມຄືບໜ້າຫຼ້າສຸດກ່ຽວກັບວິກິດ ແລະ ຂໍ້ມູນກ່ຽວກັບສະຖານທີ່ ແລະ ວິທີການເຂົ້າເຖິງການຊ່ວຍເຫຼືອຜ່ານຊ່ອງທາງການສື່ສານຫຼາກຫຼາຍໃນພາສາທີ່ກ່ຽວຂ້ອງ.*
- *ສູນບໍລິການທາງໂທລະສັບ 24 ຊົ່ວໂມງ ໂດຍມີພະນັກງານທີ່ເວົ້າໄດ້ຫຼາຍພາສາ ແລະ ໄດ້ຮັບການຝຶກອົບຮົມ ເພື່ອສະໜອງຂໍ້ມູນ ແລະ ການບໍລິການ.*
- *ການໃຫ້ການຊ່ວຍເຫຼືອສະເພາະ ຜ່ານອາສາສະໝັກ ແລະ ຜູ້ມີສ່ວນຮ່ວມຂັ້ນຮາກຖານ ເພື່ອເຜີຍແຜ່ຂໍ້ມູນກ່ຽວກັບຄວາມສ່ຽງ, ການຂົນສົ່ງ ແລະ ການຊ່ວຍເຫຼືອໃຫ້ແກ່ຜູ້ມີສະຖານະເຂົ້າເມືອງແບບບໍ່ລົງທະບຽນ ຫຼື ທີ່ເຮັດວຽກໃນສະພາບໂດດດ່ຽວ.*
- *ສູນຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານເພື່ອເຜີຍແຜ່ຂໍ້ມູນໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ.*
- *ຜູ້ເຄື່ອນຍ້າຍຖິ່ນຖານໃນຖານະທີ່ເປັນແຫຼ່ງຂໍ້ມູນກ່ຽວກັບສະພາບການທ້ອງຖິ່ນ, ແຫຼ່ງໃຫ້ການຊ່ວຍເຫຼືອ ແລະຄວາມທ້າທາຍຕ່າງໆ.*
- *ການລາຍງານຫຍໍ້ ແລະ ລາຍງານຫຼ້າສຸດກ່ຽວກັບ ສະຖານະການໂດຍເຈົ້າໜ້າທີ່ຂອງລັດປາຍທາງ.*

## ແນວທາງປະຕິບັດ 10: ເອື້ອອຳນວຍໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດຍ້າຍໄປບ່ອນປອດໄພ

ໃນຄວາມຮີບດ່ວນຂອງຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ, ເຊັ່ນດຽວກັນກັບປະຊາກອນອື່ນໆທີ່ໄດ້ຮັບຜົນກະທົບ, ຜູ້ເຄື່ອນຍ້າຍຖິ່ນຖານກໍຈະຊອກປົບໜີໄປຍັງບ່ອນປອດໄພດ້ວຍການຍົກຍ້າຍພາຍໃນລັດປາຍທາງ ໄປຍັງພື້ນທີ່ໆບໍ່ໄດ້ຮັບຜົນກະທົບຈາກວິກິດການ, ຂ້າມຊາຍແດນໄປຍັງທີ່ພັກຊົ່ວຄາວເພື່ອລໍຖ້າປ່ຽນໄປປະເທດອື່ນ ຫຼື ກັບຄືນໄປຫາລັດຕົ້ນທາງ. ຂະບວນການເຂົ້າເມືອງປົກກະຕິ ອາດໄດ້ຮັບຜົນກະທົບຈາກວິກິດການ ແລະ ລັດຕ່າງໆອາດຕ້ອງຫາຄວາມກະຈ່າງແຈ້ງວ່າຈະກະທົບຂະບວນການດັ່ງກ່າວແນວໃດແທ້.

ຜູ້ເຄື່ອນຍ້າຍຖິ່ນຖານອາດຕ້ອງການຄວາມຊ່ວຍເຫຼືອໃນການໄປຫາບ່ອນປອດໄພ. ເອກະສານລະບຸຕົວຕົນ-ປະຈຳຕົວ ແລະການເດີນທາງອາດຖືກທຳລາຍ, ສູນຫາຍ ຫຼື ຖິ້ມໄວ້ທາງຫຼັງໃນຄວາມສັບສົນ ຫຼື ຄວາມຮ້າຍແຮງຂອງວິກິດ. ຜູ້ເຄື່ອນຍ້າຍຖິ່ນຖານບາງລາຍ ໂດຍສະເພາະຜູ້ທີ່ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກຂູດຮີດໃນສະຖານະການອື່ນໆ ອາດຖືກຍຶດເອກະສານລະບຸຕົວຕົນ ຫຼື ໜັງສືເດີນທາງ. ແຕ່ວ່າຜູ້ອື່ນໆກໍເຊັ່ນກັນ ອາດຕົກໃນກໍລະນີທີ່ເດີນທາງມາຮອດລັດປາຍທາງໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ເຄີຍມີເອກະສານທີ່ຖືກຕ້ອງ.

ຄວາມສາມາດໃນການເຂົ້າເຖິງ-ປະກອບເອກະສານລະບຸຕົວຕົນ-ປະຈໍາຕົວ ແລະ ເອກະສານການເດີນທາງທີ່ຖືກຕ້ອງແມ່ນມີຄວາມສໍາຄັນສໍາລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ຊອກຫາວິທີທາງຂ້າມແດນສາກົນເພື່ອປົບໜີຄວາມອັນຕະລາຍ. ຜູ້ເຄື່ອນຍ້າຍຖິ່ນຖານອາດຕ້ອງຍື່ນເອກະສານດັ່ງກ່າວ ເພື່ອຫລົບໜີໄປຍັງບ່ອນປອດໄພພາຍໃນລັດປາຍທາງ ຫຼື ເພື່ອຂໍຄວາມຊ່ວຍເຫຼືອ. ລັດຕົ້ນທາງຈະອີງໃສ່ ເອກະສານລະບຸຕົວຕົນ-ປະຈໍາຕົວ ແລະ ການເດີນທາງເພື່ອຢັ້ງຢືນຄວາມເປັນພົນລະເມືອງ ແລະ ຊ່ວຍພົນລະເມືອງໃນການອົບພະຍົບ ຫຼື ກັບຄືນໄປຍັງປະເທດບ້ານເກີດເມືອງນອນຂອງຕົນເອງ.

ຜູ້ເຄື່ອນຍ້າຍຖິ່ນຖານທີ່ຊອກຫລົບໜີໄປຍັງບ່ອນປອດໄພອາດພົບພໍ້ອຸປະສັກຕ່າງໆໃນການເຮັດໃຫ້ຕົນເອງມີຄົບເງື່ອນໄຂໃນການສະໝັກຂໍວີຊາເຂົ້າເມືອງ, ການຂໍວີຊາອອກເມືອງ, ການຈ່າຍຄ່າທໍານຽມເຂົ້າເມືອງ ຫຼື ຄ່າປັບໄໝຈາກການຢູ່ກາຍກໍານົດ ແລະ ການປະຕິບັດໃຫ້ຄົບຕາມເງື່ອນໄຂການເຂົ້າປະເທດ (ໂດຍສະເພາະຢູ່ໃນປະເທດໃດໜຶ່ງເພື່ອລໍຖ້າເດີນທາງໄປປະເທດອື່ນ). ຄວາມສາມາດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການເຄື່ອນຍ້າຍໄປຍັງບ່ອນປອດໄພອາດ ຈະຖືກຈໍາກັດຈາກການໄດ້ຮັບວີຊາ ຫຼື ໃບອະນຸຍາດເຮັດວຽກ ທີ່ກໍານົດສະເພາະໃນບາງພື້ນທີ່ ຫຼື ຜູ້ຈ້າງງານສະເພາະເຈາະຈົງ. ການຍົກເວັ້ນຂໍ້ຈໍາກັດ ຫຼື ການປັບໄໝສໍາລັບການລະເມີດຂໍ້ຈໍາກັດໃນພາວະຄວາມຂັດແຍ່ງ ຫຼື ໄພພິບັດທໍາມະຊາດອາດສາມາດຊ່ວຍເຫຼືອວິດ ແລະ ປັບປຸງການເຂົ້າເຖິງການຊ່ວຍເຫຼືອຂອງຜູ້ເຄື່ອນຍ້າຍຖິ່ນຖານໄດ້.

ນອກຈາກຄວາມເປັນອັນຕະລາຍໃນພາວະວິກິດທີ່ກີດກັ້ນປະຊາກອນຜູ້ໄດ້ຮັບຜົນກະທົບບໍ່ໃຫ້ລົບໜີ (ພື້ນທີ່ບໍ່ປອດໄພ, ດ່ານອອກປະເທດຖືກປິດກັ້ນ, ໂຄງລ່າງພື້ນຖານການຂົນສົ່ງຖືກທໍາລາຍ) ແລ້ວ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກັກຂັງຍິ່ງມີຄວາມສ່ຽງ-ຕົກຢູ່ໃນອັນຕະລາຍຕື່ມ. ຖ້າຜູ້ເບິ່ງແຍງສູນກັກຂັງປົບໜີຈາກໜ້າທີ່ຕໍາແໜ່ງຂອງຕົນ, ຜູ້ເຄື່ອນຍ້າຍທີ່ຖືກກັກຂັງກໍຈະບໍ່ສາມາດເອົາຕົວເອງອອກຈາກຄວາມເປັນອັນຕະລາຍ ແລະ ບໍ່ສາມາດເຂົ້າເຖິງການຊ່ວຍເຫຼືອດ້ານມະນຸດສະທໍາໄດ້.

*ຕົວຢ່າງພາກປະຕິບັດ*

- *ການສະລະສິດ ຫຼື ການຍົກເວັ້ນເງື່ອນໄຂການອອກ, ການຢູ່ ຫຼື ເຂົ້າປະເທດ.*
- *ການອອກໃບເດີນທາງ (laissez-passer) ແລະ ການປ່ຽນເອກະສານລະບຸຕົວຕົນ-ປະຈໍາຕົວ ແລະ ເອກະສານເດີນທາງຢ່າງທັນການ.*
- *ໃຫ້ຄະນະຊ່ວຍເຫຼືອຂອງກົງສູນໄປປະຈໍາການຢູ່ຕາມດ່ານກວດຄົນເຂົ້າເມືອງ, ເດີ່ນບິນ ແລະ ຈຸດຜ່ານແດນອື່ນໆ.*
- *ການໃຫ້ສະຖານະການປົກປ້ອງຊົ່ວຄາວ ຫຼື ດ້ານມະນຸດສະທໍາ ສໍາລັບຜູ້ເຄື່ອນຍ້າຍຖິ່ນຖານ.*
- *ແຜນການຍົກຍ້າຍ-ອົບພະຍົບສໍາລັບສູນກັກກັນ ແລະ ບ່ອນລີ້ໄພຂອງຜູ້ເຄື່ອນຍ້າຍຖິ່ນຖານ.*
- *ການສະໜັບສະໜູນຮ່ວມກັນ ແລະ ລະຫວ່າງລັດຕ່າງໆກ່ຽວກັບການເປີດດ່ານໄວ້ເພື່ອເອື້ອອໍານວຍໃຫ້ແກ່ການເຄື່ອນຍ້າຍຢ່າງປອດໄພ.*

## ແນວທາງປະຕິບັດ 11: ໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳແກ່ຜູ້ເຄື່ອນຍ້າຍຖິ່ນຖານ ໂດຍບໍ່ຈຳແນກ-ບໍ່ເລືອກປະຕິບັດ

ໃນຄວາມພະຍາຍາມຮ່ວມກັນເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຍັງຕົກຄ້າງຢູ່ໃນປະເທດທີ່ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ, ຈະບໍ່ມີສິ່ງໃດຈຳເປັນໄປກວ່າການຊ່ວຍເຫຼືອຊີວິດ ແລະ ລຶບລ້າງຄວາມທຸກທໍລະມານ. ການໃຫ້ຄວາມຊ່ວຍເຫຼືອດ້ານມະນຸດສະທຳແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ ລວມທັງການໃຫ້ຄວາມຊ່ວຍເຫຼືອແກ່ຜູ້ເຄື່ອນຍ້າຍຖິ່ນຖານ ແມ່ນຄວນອີງໃສ່ຄວາມຕ້ອງການໂດຍປັດສະຈາກການຈຳແນກ-ເລືອກປະຕິບັດ ແລະ ໂດຍບໍ່ຄຳນຶງເຖິງ ສະຖານະການເຂົ້າເມືອງ, ສັນຊາດ, ຊົນເຜົ່າ, ເພດ, ອາຍຸ, ຄວາມພິການ ຫຼື ຄຸນລັກສະນະທີ່ແຕກຕ່າງອື່ນໆ.

ຜູ້ເຄື່ອນຍ້າຍຖິ່ນຖານບາງລາຍທີ່ໄດ້ຮັບຜົນກະທົບ ເຊັ່ນດຽວກັນກັບພົນລະເມືອງ ແມ່ນຕ້ອງການຄວາມຊ່ວຍເຫຼືອທີ່ຕອບສະໜອງກັບຄວາມຕ້ອງການ ຕໍ່ສະພາບການສະເພາະຂອງເຂົາເຈົ້າ. ແຮງງານທີ່ເຮັດວຽກເປັນຄົນຮັບໃຊ້ ແລະ ຜູ້ອື່ນໆທີ່ເຮັດວຽກໃນສະພາບໂດດດ່ຽວ, ຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະຄົນເຂົ້າເມືອງແບບບໍ່ໄດ້ລົງທະບຽນ ແລະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກັກຂັງ ອາດຈຳເປັນຕ້ອງການຄວາມຊ່ວຍເຫຼືອສະເພາະຈາກ ລັດ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ. ຜູ້ເຄື່ອນຍ້າຍຖິ່ນຖານບາງລາຍອາດບໍ່ຍອມ-ບໍ່ເຕັມໃຈອອກຈາກລັດທາງຍ້ອນວ່າມີພາລະທາງດ້ານການເງິນທີ່ເຮັດໃຫ້ບໍ່ສາມາດອອກຈາກປະເທດນັ້ນເຊັ່ນ ເຂົາເຈົ້າອາດຕິດໜີ້ຜູ້ຫາວຽກໃຫ້ເຮັດ ຫຼື ຜູ້ຈ້າງງານເປັນຕົ້ນ. ສ່ວນຜູ້ຍ້າຍຖິ່ນຖານອື່ນໆກໍອາດຂາດການເຂົ້າເຖິງແຫຼ່ງທຶນເພື່ອອອກຈາກປະເທດຍ້ອນ ຄ່າແຮງງານຂອງເຂົາເຈົ້າຖືກກັກໄວ້, ຜູ້ຈ້າງງານບໍ່ສາມາດຈ່າຍ ຫຼື ບໍ່ຍອມ-ບໍ່ເຕັມໃຈຈ່າຍຄ່າເດີນທາງກັບປະເທດໃຫ້ເຂົາເຈົ້າ ຫຼື ເຂົາເຈົ້າເຮັດວຽກໃນສະພາບທີ່ມີການຂູດຮີດ. ແມ່ຍິງຖືພາ, ບຸກຄົນພິການ ແລະ ຜູ້ສູງອາຍຸກໍອາດພົບພໍ້ກັບຄວາມທ້າທາຍໃນການເຄື່ອນຍ້າຍເຫຼົ່ານີ້ເຊັ່ນກັນ.

ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານຈະບໍ່ຕາຍຕົວໃນໄລຍະທີ່ມີການປ່ຽນແປງຂອງພາວະວິກິດ. ເຄືອຂ່າຍການຈັດຕັ້ງອາດຊະຍາກຳ ອາດເອົາປຽບກຸ່ມຜູ້ເຄື່ອນຍ້າຍຖິ່ນຖານສ່ວນໜ້ອຍໃນໄລຍະພາວະວິກິດ ເຊິ່ງຍິ່ງຈະເພີ່ມຄວາມບອບບາງ-ຄວາມສ່ຽງໃຫ້ແກ່ເຂົາເຈົ້າ. ການປ່ຽນແປງສະຖານະການ ຢູ່ໃນລັດຕົ້ນທາງຂອງຜູ້ເຄື່ອນຍ້າຍຖິ່ນຖານ ອາດບັງຄັບໃຫ້ເຂົາເຈົ້າຊອກຫາບ່ອນລີ້ໄພແທນທີ່ຈະເດີນທາງກັບປະເທດ. ລັດອາດພິຈາລະນາໃຫ້ການປົກປ້ອງດ້ານມະນຸດສະທຳ ແລະ ຊົ່ວຄາວ ຫຼື ຮູບການອື່ນໆໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານໃນໄລຍະນັ້ນ ຫຼື ໃນການຮັບມືກັບພາວະຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ.

***ຕົວຢ່າງພາກປະຕິບັດ***

- *ກົນໄກການຕິດຕາມການເຄື່ອນຍ້າຍ ເພື່ອລະບຸການເຄື່ອນຍ້າຍ ແລະ ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ.*
- *ການໃຫ້ຄວາມຊ່ວຍເຫຼືອທີ່ດັດປັບໃຫ້ເໝາະສົມກັບຜູ້ເຄື່ອນຍ້າຍຖິ່ນຖານ ໂດຍຄໍານຶງເຖິງຄວາມຕ້ອງການທີ່ຕິດພັນກັບເພດ, ອາຍຸ, ຄວາມພິການ, ຄ່ານິຍົມທາງເພດ, ອັດຕະລັກ ແລະ ການສະແດງອອກທາງເພດ, ສະຖານະການເຂົ້າເມືອງ ແລະ ຄຸນລັກສະນະອື່ນໆ.*
- *ເຄື່ອງມືການປະເມີນເພື່ອລະບຸຄວາມບອບບາງ-ຄວາມສ່ຽງ ແລະ ຄວາມຕ້ອງການສະເພາະເຈາະຈົງຂອງຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງ ການກັ່ນຕອງເປັນພິເສດເພື່ອຊອກຫາຕົວຊີ້ວັດທີ່ບົ່ງບອກເຖິງການຄ້າມະນຸດ.*
- *ການປະຕິບັດແບບມີເປົ້າໝາຍເພື່ອປົກປ້ອງລູກຂອງຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງ ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ແລະ ຖືກແຍກຈາກຜູ້ປົກຄອງ, ແລະ ເດັກນ້ອຍທີ່ມີຜູ້ປົກຄອງໃນສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ.*
- *ການບໍລິການເພື່ອຕິດຕາມຫາ ແລະ ເຕົ້າໂຮມໃຫ້ສະມາຊິກຄອບຄົວໄດ້ມາຢູ່ຮ່ວມກັນຄືນໃໝ່ ແລະ ລະບຸຜູ້ເຄື່ອນຍ້າຍທີ່ເສຍຊີວິດ ແລະ ສູນຫາຍ.*
- *ຄະນະຮັບມືກັບພາວະສຸກເສີນແບບເຄື່ອນທີ່ ເພື່ອໃຫ້ສາມາດເຂົ້າເຖິງ ແລະ ໃຫ້ການຊ່ວຍເຫຼືອແກ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ໄດ້ຮັບຜົນກະທົບ.*
- *ແຍກການບັງຄັບໃຊ້ກົດໝາຍການເຂົ້າເມືອງ ອອກຈາກ ການເຂົ້າເຖິງການບໍລິການດ້ານມະນຸດສະທໍາເພື່ອສົ່ງເສີມ ການເຂົ້າເຖິງ ການຊ່ວຍເຫຼືອຊີວິດ ໂດຍສະເພາະສໍາລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ຢ້ານກົວເຈົ້າໜ້າທີ່.*
- *ກົນໄກການຟື້ນຟູ-ການຮຽກເກັບ ຄ່າແຮງງານທີ່ຄ້າງຈ່າຍໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ.*

## ແນວທາງປະຕິບັດ 12: ວາງລະບຽບຂັ້ນຕອນການນໍາສົ່ງຜູ້ເຄື່ອນຍ້າຍຖິ່ນຖານ ໃຫ້ຊັດເຈນລະຫວ່າງຜູ້ມີສ່ວນຮ່ວມ

ຜູ້ມີສ່ວນຮ່ວມບາງລາຍມີອໍານາດ ແລະ ທັກສະສະເພາະ ເພື່ອແກ້ໄຂ-ຕອບສະໜອງຕໍ່ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານຕ່າງໆ. ລະບຽບການນໍາສົ່ງຈະຊ່ວຍໃຫ້ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຕ້ອງການສະເພາະ ໃຫ້ສາມາດເຂົ້າເຖິງພາກສ່ວນທີ່ມີທັກສະເຫຼົ່ານີ້ໄດ້.

ຕົວຢ່າງຜູ້ເຄື່ອນຍ້າຍຖິ່ນຖານ ຈະໄດ້ປະໂຫຍດຈາກການຊ່ວຍເຫຼືອຂອງຜູ້ມີສ່ວນຮ່ວມທີ່ຊໍານິຊໍານານ-ມີປະສົບການກ່ຽວກັບສິດທິ ແລະ ການປົກປ້ອງເດັກ ລວມທັງ ຜູ້ປະສານງານທີ່ຖືກມອບໝາຍສະເພາະໃນລັດຖະບານ. ການຊ່ວຍເຫຼືອທີ່ເລັ່ງໃສ່ ແຮງງານທີ່ເຮັດວຽກເປັນຄົນຮັບໃຊ້ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດໄດ້ປະໂຫຍດຈາກຄວາມຮູ້ ແລະ ປະສົບການຂອງຜູ້ສະໜັບສະໜູນ ແລະ ຊ່ຽວຊານກ່ຽວກັບກຸ່ມປະຊາກອນເຫຼົ່ານັ້ນ. ອົງການຈັດຕັ້ງສັງຄົມ, ຜູ້ມີສ່ວນຮ່ວມຂັ້ນຮາກຖານ ແລະ ອົງການທີ່ມີຄວາມເຊື່ອທາງສາສະໜາ (faith-based actors) ອາດຢູ່ໃນຖານະທີ່ດີທີ່ສຸດໃນການເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານທີ່ມີສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ. ເຈົ້າໜ້າທີ່ກົງສຸນ ແລະ ບາງອົງການຈັດຕັ້ງສາກົນອາດມີສິດ ແລະ ຄວາມອາດສາມາດໃນການປະເມີນ ແລະ ອອກເອກະສານລະບຸຕົວຕົນ-ປະຈໍາຕົວ ແລະ ເອກະສານການເດີນທາງ. ຜູ້ມີສ່ວນຮ່ວມຂັ້ນທ້ອງຖິ່ນ ແລະ ແຫ່ງຊາດຂອງລັດປາຍທາງ ສ່ວນໃຫຍ່ແມ່ນຢູ່ໃນຖານະທີ່ດີທີ່ສຸດໃນການສະໜອງການບໍລິການທີ່ຈໍາເປັນ. ພ້ອມກັນນັ້ນ, ຜູ້ໃຫ້ການຊ່ວຍເຫຼືອດ້ານມະນຸດສະທໍາສາກົນ ກໍຄວນເລັ່ງໃສ່ໃຫ້ການຊ່ວຍເຫຼືອຜ່ານລະບົບທ້ອງຖິ່ນ ແລະ ແຫ່ງຊາດ.

ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ ຄວນວາງລະບຽບການນໍາສົ່ງເພື່ອຮັບປະກັນວ່າ ພາກສ່ວນທີ່ຕອບສະໜອງຕໍ່ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານນັ້ນ ຈະນໍາສົ່ງຜູ້ລີ້ໄພ, ຜູ້ຫາບ່ອນລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດ ໄປຍັງກົນໄກການປົກປ້ອງແຫ່ງຊາດ ແລະ ສາກົນ ສໍາລັບກຸ່ມປະຊາກອນເຫຼົ່ານັ້ນ.

***ຕົວຢ່າງພາກປະຕິບັດ***

- *ການລະບຸ ແລະ ການປະເມີນແບບວ່ອງໄວ ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຕ້ອງການພິເສດ ຜູ້ທີ່ຕ້ອງຖືກນໍາສົ່ງໄປບ່ອນຮັບການບໍລິການ ແລະ ການຊ່ວຍເຫຼືອ.*
- *ການນໍາສົ່ງຜູ້ລີ້ໄພ, ຜູ້ຫາບ່ອນລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດໄປຍັງ ກົນໄກການປົກປ້ອງທີ່ກ່ຽວຂ້ອງ.*
- *ການແຕ່ງຕັ້ງຜູ້ຊ່ຽວຊານໃຫ້ປະຈໍາການຢູ່ລັດຕ່າງໆ ເພື່ອລະບຸ, ປະເມີນ ແລະ ຕອບສະໜອງຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ.*
- *ການນໍາສົ່ງຜູ້ເຄື່ອນຍ້າຍຖິ່ນຖານໄປຍັງອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມທີ່ມີປະສົບການສະເພາະດ້ານໃນການໃຫ້ການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ເດັກນ້ອຍ ແລະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ບອບບາງ-ມີຄວາມສ່ຽງອື່ນໆ.*

## ແນວທາງປະຕິບັດ 13: ຍົກຍ້າຍ ແລະ ອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານເມື່ອຈໍາເປັນ

ໃນໄລຍະເກີດວິກິດ, ຜູ້ມີສ່ວນຮ່ວມອາດສາມາດປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານທີ່ອາໄສໃນລັດປາຍທາງ. ແຕ່ກໍບໍ່ອາດເປັນໄປໄດ້ສະເໝີໄປ ໂດຍສະເພາະໃນສະຖານະການທີ່ຜົນກະທົບຂອງຄວາມຂັດແຍ່ງ ຫຼື ໄພພິບັດທໍາມະຊາດຫາກກວມເອົາພື້ນທີ່ຖືກວ້າງຂວາງ. ໃນກໍລະນີທີ່ບໍ່ສາມາດໃຫ້ການປົກປ້ອງໃນທ້ອງຖິ່ນ ກໍອາດຈໍາເປັນຕ້ອງຍົກຍ້າຍຜູ້ເຄື່ອນຍ້າຍຖິ່ນຖານໄປຍັງບ່ອນອື່ນໆໃນລັດປາຍງ ຫຼື ອົບພະຍົບເຂົາເຈົ້າໄປລັດເພື່ອລໍຖ້າການໄປປະເທດອື່ນ ຫຼື ລັດຕົ້ນທາງ. ຜູ້ເຄື່ອນຍ້າຍຖິ່ນຖານບາງລາຍອາດຍົກຍ້າຍ-ອົບພະຍົບໄປດ້ວຍຕົນເອງ. ຫຼາຍລັດອາດຕ້ອງເອື່ອຍອີງໃສ່ການສະໜັບສະໜູນ ແລະ ການຊ່ວຍເຫຼືອຂອງລັດ, ຜູ້ຈ້າງງານ ຫຼື ຜູ້ຈັດຫາງານໃຫ້ເຂົາເຈົ້າ ຫຼື ອົງການຊອກວຽກ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ ຫຼື ຜູ້ເຄື່ອນຍ້າຍຖິ່ນຖານອື່ນໆ.

ໂດຍທົ່ວໄປ ການອົບພະຍົບຈະເປັນວິທີການສຸດທ້າຍ ແຕ່ກໍຕ້ອງມີຄວາມຈໍາເປັນຢ່າງແນ່ນອນວ່າຖ້າ ຜູ້ເຄື່ອນຍ້າຍຖິ່ນຖານຫາກບໍ່ສາມາດຢູ່ບ່ອນທີ່ຕົນອາໄສຢ່າງປອດໄພ ແລະ ບໍ່ສາມາດຖືກຍົກຍ້າຍໄປບ່ອນອື່ນໆໃນລັດປາຍທາງຢ່າງປອດໄພ. ກໍລະນີທີ່ບໍ່ມີແຜນສໍາຮອງທີ່ຮັດກຸມ ແລະ ລະບົບການອົບພະຍົບ ແລະ ຍົກຍ້າຍກ່ອນໜ້າໄວ້ແລ້ວ, ກໍອາດຈໍາເປັນຕ້ອງມີການຈັດການແບບສະເພາະກິດ-ສະເພາະໜ້າ ເພື່ອສື່ສານຂໍ້ມູນກ່ຽວກັບການອົບພະຍົບ, ກໍານົດຜູ້ມີເງື່ອນໄຂອົບພະຍົບ, ກໍານົດຮູບແບບການອົບພະຍົບ ແລະ ເຈລະຈາກັບ ລັດທາງຜ່ານ ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງອື່ນໆ. ລັດ, ບໍ່ວ່າຈະເປັນພາຄີຂອງສົນທິສັນຍາສາກົນໃດໆ ຫຼື ບໍ່ກໍຕາມ ແມ່ນຄວນຈັດຕັ້ງປະຕິບັດມາດຕະການປ້ອງກັນສະເພາະຕາມຄວາມເໝາະສົມ ເພື່ອຮັບປະກັນວ່າບຸກຄົນທີ່ຖືກດໍາເນີນຄະດີ, ຕົກຢູ່ໃນສະຖານະການທີ່ອັນຕະລາຍຮ້າຍແຮງ ຫຼື ເຖິງແກ່ຊີວິດ ຢູ່ໃນ ລັດຕົ້ນທາງ ຫຼື ລັດອື່ນໆ ລວມທັງ ຜູ້ລີ້ໄພນັ້ນ ຈະໄດ້ຮັບການປົກປ້ອງຈາກ ການຖືກດໍາເນີນຄະດີ-ຕົກຢູ່ໃນອັນຕະລາຍເມື່ອຖືກບັງຄັບໃຫ້ກັບຄືນປະເທດຂອງຕົນ. ບຸກຄົນທີ່ບໍ່ມີສັນຊາດ ອາດຕ້ອງການໆຊ່ວຍເຫຼືອສະເພາະ ເພື່ອໃຫ້ໄດ້ຜົນປະໂຫຍດຈາກລະບົບການອົບພະຍົບທີ່ມີຢູ່. ການປະສານງານລະຫວ່າງລັດ ແລະ ຜູ້ມີສ່ວນຮ່ວມອື່ນໆໃນການຈັດການອົບພະຍົບ ອາດໜູນໃຊ້ປະໂຫຍດສູງສຸດຈາກຊັບພະຍາກອນ-ການຊ່ວຍເຫຼືອ ເຊັ່ນການຂົນສົ່ງຜູ້ເຄື່ອນຍ້າຍຖິ່ນຖານໄປຍັງ ລັດຕົ້ນທາງໃນພາກພື້ນດຽວກັນ ພ້ອມໆກັນ.

***ຕົວຢ່າງພາກປະຕິບັດ***

- *ການອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານໄປຍັງລັດທາງຜ່ານ ຫຼື ລັດຕົ້ນທາງ ໂດຍການຍິນຍອມບົນພື້ນຖານທີ່ມີຂໍ້ມູນຮອບດ້ານ (informed consent).*
- *ກຳນົດບັນທັດຖານ ສຳລັບຜູ້ທີ່ມີເງື່ອນໄຂອົບພະຍົບ.*
- *ການຮ່ວມມືລະຫວ່າງຜູ້ມີສ່ວນຮ່ວມຫຼາຍຝ່າຍ ໃນການອົບພະຍົບ.*
- *ການອົບພະຍົບສຳລັບຫົວໜ່ວຍຄອບຄົວທີ່ມີສະມາຊິກຄອບຄົວຈາກຫຼາຍສັນຊາດ.*
- *ການນຳໃຊ້ບຸກຄະລາກອນຈາກກົງສຸນເພື່ອຊ່ວຍໃນການອົບພະຍົບ.*

# III. ການປະຕິບັດການພາຍຫຼັງວິກິດ

ເຖິງແມ່ນວ່າສ່ວນໃຫຍ່ຂອງ ການປະຕິບັດພາຍຫຼັງວິກິດການຈະຖືກເບິ່ງຂ້າມກໍຕາມ ແຕ່ວ່າ ການປະຕິບັດການພາຍຫຼັງວິກິດກໍຍັງມີຄວາມສຳຄັນເພື່ອຮັບປະກັນວ່າຜູ້ເຄື່ອນຍ້າຍຖິ່ນຖານນັ້ນໄດ້ກັບໄປໃຊ້ຊີວິດຢ່າງປອດໄພ, ມີກຽດສັກສີ ແລະ ສ້າງປະໂຫຍດໃຫ້ໄດ້ໄວທີ່ສຸດ. ລັກສະນະດ້ານປະຊາກອນ ແລະ ເສດຖະກິດສັງຄົມ, ຄວາມເປັນຢູ່ທີ່ດີທາງຮ່າງກາຍ ແລະ ຈິດໃຈ, ປະສົບການຢູ່ໃນລັດປາຍທາງ, ວິທີການ ແລະ ດ້ານຊັບສິນທີ່ຜູ້ເຄື່ອນຍ້າຍຖິ່ນຖານໄດ້ຖືກກະທົບຈາກວິກິດ ແລະ ເຫດຜົນທີ່ເຮັດໃຫ້ເຂົາເຈົ້າເຄື່ອນຍ້າຍຖິ່ນຖານຕັ້ງແຕ່ຕົ້ນນັ້ນ ລ້ວນແລ້ວແຕ່ຈະສົ່ງອິດທິພົນຕໍ່ ຄວາມຕ້ອງການ, ຄວາມທົນທານ-ຄວາມສາມາດປັບຕົວ ແລະ ຄວາມອາດສາມາດສະເພາະໜ້າ ແລະ ຍາວນານຂອງຜູ້ເຄື່ອນຍ້າຍຖິ່ນຖານ. ບໍ່ວ່າຜູ້ເຄື່ອນຍ້າຍຖິ່ນຖານຈະກັບຄືນສູ່ລັດຕົ້ນທາງ, ສືບຕໍ່ອາໄສຢູ່ໃນລັດປາຍທາງ ຫຼື ໄປຢູ່ບ່ອນອື່ນໆກໍຕາມ, ແຕ່ວ່າຄວາມພະຍາຍາມທີ່ແນໃສ່ແກ້ໄຂຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານພາຍຫຼັງວິກິດການນັ້ນ ຈະຕ້ອງຄຳນຶງເຖິງ ຜົນກະທົບຕໍ່ຄອບຄົວ, ຊຸມຊົນເຈົ້າພາບ ແລະ ສັງຄົມຂອງຜູ້ເຄື່ອນຍ້າຍຖິ່ນຖານ ເຊັ່ນກັນ.

## ແນວທາງປະຕິບັດ 14: ແກ້ໄຂຄວາມຕ້ອງການຮີບດ່ວນຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສະໜັບສະໜູນຜູ້ເຄື່ອນຍ້າຍຖິ່ນຖານໃນການສ້າງຊີວິດໃໝ່

ການຖືກຍົກຍ້າຍ ແລະ ການຖືກລົບກວນຊີວິດການເປັນຢູ່ທີ່ເກີດຈາກ ຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດອາດມີຜົນກະທົບມະຫາສານ ແລະ ຮ້າຍແຮງຕໍ່ ຄວາມເປັນຢູ່ທີ່ດີທາງດ້ານເສດຖະກິດ-ສັງຄົມ ຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄອບຄົວຂອງເຂົາເຈົ້າ. ແຮງງານເຄື່ອນຍ້າຍສ່ວນໃຫຍ່ຈະລ້ຽງຕົນເອງ ແລະ ຄອບຄົວ ແລະ ວິງຄະນາຍາດຂອງຕົນເອງບໍ່ວ່າເຂົາເຈົ້າຈະຢູ່ນຳຕົນເອງຢູ່ໃນ ລັດປາຍທາງ ຫຼື ລັດຕົ້ນທາງ ຫຼື ບໍ່ກໍຕາມ. ຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດອາດເຮັດໃຫ້ ກະແສລາຍໄດ້ຂອງຜູ້ເຄື່ອນຍ້າຍຖິ່ນຖານຫລຸດລົງ ແລະ ເງິນທີ່ສົ່ງກັບບ້ານໃຫ້ແກ່ຄອບຄົວຂອງເຂົາເຈົ້າກໍຫລຸດລົງເຊັ່ນກັນ. ສະຖານທີ່ສົ່ງເງິນກັບບ້ານກໍອາດຖືກທຳລາຍ-ຢຸດສະຫງັກ. ການອ່ອນຄ່າຂອງສະກຸນເງິນ ແລະ ການປ່ຽນແປງຂອງອັດຕາແລກປ່ຽນເງິນຕາ ກໍອາດສົ່ງຜົນກະທົບຕໍ່ເງິນທ້ອນສະສົມ ແລະ ຊັບສິນຂອງຜູ້ເຄື່ອນຍ້າຍຖິ່ນຖານ. ໂອກາດໃນການສຶກສາສຳລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນນັກຮຽນກໍອາດຖືກໂຈະແບບບໍ່ມີກຳນົດ. ຄວາມຢ້ານກົວຕໍ່ຊາວຕ່າງຊາດ ແລະ ການຈຳແນກຕໍ່ຜູ້ເຄື່ອນຍ້າຍຖິ່ນຖານກໍອາດເພີ່ມສູງຂຶ້ນ. ສະພາບພາຍຫຼັງວິກິດຢູ່ໃນລັດປາຍທາງ ແລະ ລັດທາງຜ່ານ ອາດເຮັດໃຫ້ການຄ້າມະນຸດ ແລະ ການຂູດຮີດອື່ນໆເພີ່ມສູງຂຶ້ນຢ່າງກ້າວກະໂດດ.

ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄອບຄົວຂອງເຂົາເຈົ້າທີ່ກັບຄືນມາຍັງລັດຕົ້ນທາງ ພາຍຫຼັງການອາໄສຢູ່ລັດປາຍທາງມາເປັນເວລາດົນນານ ອາດປະສົບກັບຄວາມຫຍຸ້ງຍາກໃນການຫາວຽກເຮັດງານທຳ, ການຫາເຮືອນ-ສະຖານທີ່ພັກເຊົາ ແລະ ການເຊື່ອມໂຍງຄືນສູ່ສັງຄົມ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ບຸກຄົນທີ່ປະສົບກັບຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງທີ່ມີພື້ນຖານທາງເພດຢູ່ໃນລັດປາຍທາງ, ລູກຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ເກີດຢູ່ລັດປາຍທາງທີ່ບໍ່ເຄີຍພົບພໍ້ວັດທະນະທຳໃນລັດຕົ້ນທາງຂອງຜູ້ປົກຄອງຂອງຕົນ ແລະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ຢູ່ຕ່າງປະເທດມາເປັນເວລາດົນນານ ອາດພົບພໍ້ກັບຄວາມຫຍຸ້ງຍາກເປັນພິເສດ ໃນການເຊື່ອມໂຍງຄືນສູ່ສັງຄົມ. ການຊ່ວຍເຫຼືອທີ່ເປັນໄປໄດ້ລວມມີ ການຊ່ວຍເຫຼືອດ້ວຍເງິນສົດເພື່ອແກ້ໄຂຄວາມຕ້ອງການຮີບດ່ວນ, ການໃຫ້ຄຳປຶກສາທາງດ້ານຈິດໃຈ ແລະ ສັງຄົມ, ການເບິ່ງແຍງດ້ານສຸຂະພາບ, ການຟື້ນຟູດ້ານຮ່າງກາຍ, ການບໍລິການຕິດຕາມຫາຄອບຄົວ, ການຊ່ວຍເຫຼືອໃນການຟື້ນຟູ-ກູ້ຄືນຄ່າແຮງງານທີ່ຄ້າງຈ່າຍ, ຊັບສິນ, ແລະ ຊັບສົມບັດ, ການຊົດເຊີຍຕໍ່ການສູນເສຍຕ່າງໆ ແລະ ອື່ນໆອີກຫຼາຍປະການ. ຄວາມພະຍາຍາມໃນການສ້າງລາຍໄດ້ຄືນໃໝ່ສຳລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ກັບຄືນມາຍັງລັດຕົ້ນທາງຂອງຕົນ ອາດລວມມີ ການອອກໃບຢັ້ງຢືນ ແລະ ໃບຍ້ອງຍໍດ້ານທັກສະ, ການສຶກ

ສາ ແລະ ການຝຶກອົບຮົມທີ່ໄດ້ຮັບຢູ່ຕ່າງປະເທດ.

ຜູ້ເຄື່ອນຍ້າຍຖິ່ນຖານຈໍານວນຫຼາຍອາດຫາໂອກາດຮຽນຮູ້ທັກສະໃໝ່ໆພາຍຫຼັງກັບຄືນມາປະເທດຕົນ. ຜູ້ເຄື່ອນຍ້າຍຖິ່ນຖານຈໍານວນໜຶ່ງກໍອາດຫາໂອກາດຍົກຍ້າຍກັບຄືນໄປຍັງລັດເຈົ້າພາບ-ປາຍທາງພາຍຫຼັງທີ່ວິກິດສະຫງົບລົງ ຫຼື ອາດເຄື່ອນຍ້າຍໄປຍັງປະເທດອື່ນໆຍ້ອນຫຼາຍເຫດຜົນ ລວມທັງການຫາລາຍໄດ້ເທົ່າທີ່ເຄີຍຫາໄດ້ໃນຜ່ານມາ.

ຜູ້ເຄື່ອນຍ້າຍຖິ່ນຖານທີ່ຍັງພັກອາໄສຢູ່ໃນລັດປາຍທາງກໍຍັງອາດຈະພົບຄວາມຫຍຸ້ງຍາກໃນການກັບມາໃຊ້ຊີວິດແບບເກົ່າ. ເຂົາເຈົ້າຈະຕ້ອງການບໍລິການ ແລະ ຄວາມຊ່ວຍເຫຼືອເຊັ່ນດຽວກັນກັບຜູ້ເຄື່ອນຍ້າຍຖິ່ນຖານທີ່ກັບຄືນສູ່ລັດຕົ້ນທາງ ເຊັ່ນ ການຊ່ວຍເຫຼືອດ້ານເງິນສົດ, ຄໍາປຶກສາດ້ານຈິດໃຈ ແລະ ສັງຄົມ ແລະ ຄໍາປຶກສາອື່ນໆ, ການຕິດຕາມຫາຄອບຄົວ, ການຊົດເຊີຍຄ່າເສຍຫາຍ, ການຊ່ວຍເຫຼືອເພື່ອກູ້ຄືນຄ່າແຮງງານທີ່ຄ້າງຈ່າຍ, ຊັບສິນ ແລະ ຊັບສິນບັດ ແລະ ຄວາມພະຍາຍາມໃນການສ້າງລາຍໄດ້ອີກຄັ້ງ, ວຽກເຮັດງານທໍາ ແລະ ໂອກາດດ້ານການສຶກສາ. ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານພາຍຫຼັງໄພວິກິດນັ້ນແມ່ນຕ້ອງນໍາໄປພິຈາລະນາໃນແຜນ ແລະ ແຜນງານຟື້ນຟູຂອງລັດໃນລະດັບແຫ່ງຊາດ ແລະ ທ້ອງຖິ່ນເຊັ່ນດຽວກັນກັບພົນລະເມືອງ. ລັດອາດຕັດສິນໃຈທົບທວນລະບຽບການເຂົ້າເມືອງ ແລະ ວີຊາຂອງຕົນເພື່ອໃຫ້ອິດສະລະພາບ-ຄວາມຍືດຍຸ່ນແກ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ຕ້ອງການສືບຕໍ່ຢູ່ໃນລັດປາຍທາງຢ່າງຖືກຕ້ອງຕາມກົດໝາຍ. ຄວາມພະຍາຍາມທີ່ສານຕໍ່ຈາກ ຄວາມສາມັກຄີຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຢູ່ໃນລັດປາຍທາງ ທີ່ມີຕໍ່ຊຸມຊົນ ແລະ ສັງຄົມຂອງລັດປາຍທາງອາດເຮັດໃຫ້ທັດສະນະ ຢ້ານກົວຊາວຕ່າງຊາດ ແລະ ການຈໍາແນກຂອງພົນລະເມືອງທ້ອງຖິ່ນຫລຸດໜ້ອຍລົງ.

***ຕົວຢ່າງພາກປະຕິບັດ***

- *ເຂົ້າເຖິງວິທີທາງແກ້ໄຂ ເພື່ອຟື້ນຟູ-ກູ້ຄືນ ຊັບສິນ ແລະ ຊັບສິນບັດທີ່ສູນເສຍໄປ, ຄ່າແຮງງານທີ່ຄ້າງຈ່າຍ, ເງິນບໍານານ ແລະ ຜົນປະໂຫຍດອື່ນໆ.*
- *ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນຄວາມພະຍາຍາມຟື້ນຟູບູລະນະໃນລັດປາຍທາງ.*
- *ລະບຽບຂັ້ນຕອນຄົນເຂົ້າເມືອງທີ່ຍືດຍຸ່ນ ເພື່ອໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດຮັກສາສະຖານະການເຂົ້າເມືອງຢ່າງຖືກກົດໝາຍ.*
- *ການລົງທະບຽນ, ການປະເມີນ ແລະ ການຮັບຮູ້ ຄວາມຕ້ອງການ ແລະ ທັກສະຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ກັບຄືນມາປະເທດຕົ້ນທາງ.*
- *ການສະໜັບສະໜູນຮີບດ່ວນໃນການເຊື່ອມໂຍງຄືນສູ່ສັງຄົມ ລວມທັງການຊ່ວຍເປັນເງິນສົດ ແລະ ດ້ານການແພດ.*
- *ການຊ່ວຍເຫຼືອໃນການສ້າງລາຍໄດ້ໃຫ້ກັບຄືນມາໃໝ່ ແລະ ການມີວຽກເຮັດງານທໍາ ລວມທັງ ການຊ່ວຍເຫຼືອໃນການເຄື່ອນຍ້າຍຖິ່ນຖານຄືນໃໝ່.*
- *ກົນໄກການໃຫ້ໃບຢັ້ງຢືນ-ໃບປະກາດສໍາລັບທັກສະ, ການສຶກສາ ແລະ ການຝຶກອົບຮົມທີ່ໄດ້ຮັບຢູ່ຕ່າງປະເທດ.*

## ແນວທາງປະຕິບັດ 15: ສະໜັບສະໜູນຊຸມຊົນເຈົ້າພາບຂອງຜູ້ເຄື່ອນຍ້າຍຖິ່ນຖານ

ການຊ່ວຍເຫຼືອຄວນແກ້ໄຂຜົນກະທົບຕໍ່ຊຸມຊົນທີ່ຢູ່ລັດຕົ້ນທາງທີ່ຜູ້ເຄື່ອນຍ້າຍຖິ່ນຖານກັບຄືນໄປ, ລັດປາຍທາງທີ່ຜູ້ເຄື່ອນຍ້າຍຖິ່ນຖານອົບພະຍົບອອກໄປ ຫຼື ລັດທາງຜ່ານທີ່ຜູ້ເຄື່ອນຍ້າຍຖິ່ນຖານອົບພະຍົບຜ່ານ. ຊຸມຊົນດັ່ງກ່າວອາດຂາດຊັບພະຍາກອນ, ການບໍລິການ ແລະ ໂຄງລ່າງພື້ນຖານທີ່ພຽງພໍເພື່ອສະໜັບສະໜູນຜູ້ເຄື່ອນຍ້າຍຖິ່ນຖານ. ຖ້າວ່າຜູ້ເຄື່ອນຍ້າຍຖິ່ນຖານຫາກໄດ້ຮັບການຊ່ວຍເຫຼືອແບບແບ່ງແຍກຈາກສະມາຊິກຂອງຊຸມຊົນເຈົ້າພາບ, ທັດສະນະກ່ຽວກັບການປະຕິບັດແບບຈຳແນກນີ້ ກໍອາດຈະສ້າງ ຫຼື ເພີ່ມຄວາມຕຶງຄຽດ ແລະ ນຳໄປສູ່ການຈຳແນກ, ການລັງກຽດ ຫຼື ການແບ່ງແຍກອອກຈາກສັງຄົມ. ວິທີການປະຕິບັດງານພາຍຫຼັງໄພວິກິດ ທີ່ລວມເອົາຄວາມຕ້ອງການຂອງຊຸມຊົນເຈົ້າພາບ ຈະມີແນວໂນ້ມປະສົບຜົນສຳເລັດຫຼາຍກວ່າ ວິທີການທີ່ເລັ່ງໃສ່ແຕ່ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄອບຄົວຂອງເຂົາເຈົ້າເທົ່ານັ້ນ. ວິທີການປະຕິບັດງານແບບມີສ່ວນຮ່ວມດັ່ງກ່າວ ຈະຊຸກຍູ້ຄວາມສາມັກຄີປອງດອງ ແລະ ຄວາມສະຫງົບໃນຊຸມຊົນ ແລະ ໃນສັງຄົມໃນໄລຍະຍາວເຊິ່ງຈະມີຄວາມສຳຄັນຍິ່ງ ໃນເມື່ອຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊຸມຊົນເຈົ້າພາບຂອງເຂົາເຈົ້າຍັງຈະຕ້ອງສືບຕໍ່ປະເຊີນກັບຜົນກະທົບຈາກວິກິດການເປັນເວລາຫຼາຍປີ ພາຍຫຼັງທີ່ວິກິດການຈົບລົງ.

ຖ້າວ່າການກັບຄືນມາຫາລັດຕົ້ນທາງຂອງຜູ້ເຄື່ອນຍ້າຍຖິ່ນຖານໃນຈຳນວນມະຫາສານ ຫາກ ບໍ່ໄດ້ຮັບການຄຸ້ມຄອງເປັນຢ່າງດີກໍຍິ່ງຈະນຳຜົນກະທົບມາສູ່ການພັດທະນາແບບບໍ່ເພິ່ງປາຖະໜາ ລວມທັງເງິນທີ່ສົ່ງກັບມາບ້ານ, ການຫວ່າງງານ ແລະ ການຖືກຈ້າງງານແບບບໍ່ເຕັມເມັດເຕັມໜ່ວຍ (ການຈ້າງງານຕ່ຳ), ຄວາມກົດດັນຕໍ່ ໂຄງລ່າງພື້ນຖານ, ຊັບພະຍາກອນ, ການບໍລິການ (ລວມທັງການສະໜອງນ້ຳ, ໄຟຟ້າ, ການຄຸ້ມຄອງສິ່ງເສດເຫຼືອ, ການສຶກສາ, ສາທາລະນະສຸກ, ທີ່ພັກອາໄສ ແລະ ການຂົນສົ່ງ) ແລະ ຄວາມທຸກຍາກກໍຈະເພີ່ມຂຶ້ນ ເຊິ່ງທັງໝົດທັງມວນແມ່ນສາມາດສ້າງຄວາມຕຶງຄຽງດໃນສັງຄົມຢ່າງກວ້າງຂວາງກວ່າເກົ່າ. ໃນທາງກັບກັນ, ຖ້າຜູ້ເຄື່ອນຍ້າຍຖິ່ນຖານກຸ່ມໃຫຍ່ໆ ຫາກອົບພະຍົບ ຫຼື ອອກຈາກລັດປາຍທາງແບບຮີບດ່ວນ, ການອອກຈາກປະເທດຂອງເຂົ້າເຈົ້າຈະເຮັດໃຫ້ມີການຂາດເຂີນດ້ານສີມືທັກສະ ແລະ ແຮງງານໃນລັດປາຍທາງ. ເຖິງແມ່ນວ່າຜູ້ເຄື່ອນຍ້າຍຖິ່ນຖານຈະປະກອບສ່ວນຕໍ່ລັດທາງຜ່ານກໍຕາມ, ແຕ່ວ່າຖ້າເຂົາເຈົ້າຫາກສືບຕໍ່ອາໄສຢູ່ລັດທາງຜ່ານເປັນເວລາດົນນານໂດຍບໍ່ມີການເຊື່ອມໂຍງເຂົ້າກັບສັງຄົມຂອງລັດນັ້ນໆຢ່າງມີປະສິດທິຜົນ, ການມີໜ້າຂອງເຂົາເຈົ້າກໍອາດຈະສ້າງຄວາມຫຍຸ້ງຍາກຕໍ່ ໂຄງລ່າງພື້ນຖານ ແລະ ການບໍລິການໃນທ້ອງຖິ່ນ.

ການຄຸ້ມຄອງການເຄື່ອນຍ້າຍຖິ່ນຖານຢ່າງມີປະສິດທິຜົນ ແມ່ນມີຄວາມສຳຄັນພາຍຫຼັງເກີດໄພພິບັດທຳມະຊາດ ຫຼື ຄວາມຂັດແຍ່ງ. ລັດປາຍທາງອາດຕ້ອງການຊຸກຍູ້ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານກັບຄືນມາປະເທດຕົນຢ່າງໄວອາທີ່ສຸດເພື່ອຊ່ວຍໃນການຟື້ນຟູບູລະນະ ຫຼື ກະຕຸ້ນເສດຖະກິດທ້ອງຖິ່ນ. ດ້ວຍເຫດນີ້ຈຶ່ງອາດຈະຕ້ອງກຳນົດທາງເລືອກດ້ານວີຊາທີ່ຍືດຍຸ່ນ ເພື່ອສົ່ງເສີມໃຫ້ຜູ້ເຄື່ອນຍ້າຍຖິ່ນຖານໄດ້ກັບຄືນມາລັດປາຍທາງ. ລັດຕົ້ນທາງອາດຈະເຫັນຄຸນຄ່າຂອງການເອື້ອອຳນວຍການມີສ່ວນຮ່ວມຂອງຜູ້ອົບພະຍົບຕ່າງແດນໃນການປະຕິບັດການ ແລະ ການຟື້ນຟູພາຍຫຼັງໄພວິກິດ.

### ຕົວຢ່າງພາກປະຕິບັດ

- ວິເຄາະຜົນກະທົບຕໍ່ເສດຖະກິດ-ສັງຄົມໄລຍະສັ້ນ, ກາງ ແລະ ຍາວ ໃນຂັ້ນທ້ອງຖິ່ນ ແລະ ແຫ່ງຊາດ ຂອງການກັບຄືນມາຂອງຜູ້ເຄື່ອນຍ້າຍຖິ່ນຖານ ຢູ່ລັດຕົ້ນທາງ ແລະ ລັດປາຍທາງ.
- ການສົ່ງເສີມການປະກອບສ່ວນຂອງຜູ້ອົບພະຍົບຢູ່ຕ່າງແດນ ດ້ວຍການປະຕິບັດການຕ່າງໆເຊັ່ນ ການໃຫ້ທຶນຊ່ວຍເຫຼືອລ້າ ຄຽງຄູ່ກັບການຍົກເວັ້ນພາສີອາກອນເພື່ອເອື້ອອໍານວຍການສະໜັບສະໜູນທາງດ້ານການເງິນ ແລະ ວັດຖຸປັດໄຈຕ່າງໆ.
- ການນໍາເອົາຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ກັບຄືນມາລັດຕົ້ນທາງ ເຂົ້າໃນແຜນພັດທະນາ.
- ການມີສ່ວນຮ່ວມ ແລະ ການສະໜັບສະໜູນໃຫ້ແກ່ປະຊາກອນຢູ່ປະເທດປາຍທາງດ້ວຍການປຶກສາຫາລື ແລະ ການຮັບມືແບບມີສ່ວນຮ່ວມ.
- ແຜນງານສົ່ງເສີມຄວາມສາມັກຄີປອງດອງໃນສັງຄົມ ທີ່ ກວມເອົາປະເດັນຂອງຜູ້ເຄື່ອນຍ້າຍຖິ່ນຖານ, ເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊຸມຊົນເຈົ້າພາບເພື່ອປ້ອງກັນ ແລະ ຫລຸດຜ່ອນຄວາມຕຶງຄຽດ ແລະ ຊຸກຍູ້ການເຊື່ອມໂຍງຄືນສູ່ສັງຄົມ.

# ພາກປະຕິບັດ



Ethiopian workers displaced by the conflict in Lebanon 2006 © IOM Steve Bent

ພາກປະຕິບັດເຫຼົ່ານີ້ເປັນການຄັດເລືອກບາງຕົວຢ່າງທີ່ສະແດງໃຫ້ເຫັນວິທີທີ່ ລັດ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ ຈະສາມາດ ຈັດຕັ້ງປະຕິບັດຕົວຈິງແນວໃດຕາມແນວທາງປະຕິບັດທີ່ກ່າວມາໃນພາກກ່ອນໜ້ານີ້. ພາກປະຕິບັດຕ່າງໆແມ່ນອີງໃສ່ ພາກປະຕິບັດທີ່ມີຢູ່ແລ້ວ ແລະ ຄໍາແນະນໍາກ່ຽວກັບວິທີການປະຕິບັດໃໝ່ໆ. ພາກປະຕິບັດ ຈະຍົກຕົວຢ່າງຕົວຈິງໃນການແກ້ໄຂບັນຫາການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບຄວາມຂັດແຍ່ງ ແລະ ໄພພິບັດທໍາມະຊາດ ໃນໄລຍະ ການກະກຽມຄວາມພ້ອມໃນການຮັບມື, ການຮັບມືກັບພາວະສຸກເສີນ ແລະ ພາຍຫຼັງວິກິດການ. ເຊັ່ນດຽວກັນກັບ ຫຼັກການ ແລະ ແນວທາງປະຕິບັດ, ພາກປະຕິບັດກໍຈະບໍ່ມີຂໍ້ຜູກມັດ ແລະ ຈະອີງໃສ່ຄວາມສະມັກໃຈ. ຜູ້ມີສ່ວນຮ່ວມສາມາດດັດປັບໃຫ້ເຂົ້າກັບບໍລິບົດ, ບູລິມະສິດ ແລະ ຄວາມອາດສາມາດສະເພາະດ້ານ.

ການອ່ານພາກປະຕິບັດເຫຼົ່ານີ້ ແມ່ນຄວນອ່ານໂດຍຄໍານຶງ-ໂຍງໄປໃສ່ ຫຼັກການ ແລະ ແນວທາງປະຕິບັດຕ່າງໆທີ່ກ່າວມານັ້ນ. ພາກປະຕິບັດແຕ່ລະຂໍ້ແມ່ນໄດ້ຈັດຂຶ້ນໂດຍອ້າງອີງເຖິງ ແນວທາງປະຕິບັດທີ່ກ່ຽວຂ້ອງ. ພາຍໃຕ້ແນວທາງປະຕິບັດຂອງແຕ່ລະຂໍ້ແມ່ນຈະມີ ພາກປະຕິບັດທີ່ລະບຸເຖິງ ຜູ້ມີສ່ວນຮ່ວມທີ່ຈະມີແນວໂນ້ມເປັນຜູ້ຈັດຕັ້ງປະຕິບັດຕົວຈິງທີ່ກ່ຽວຂ້ອງຫຼາຍທີ່ສຸດ.

ປະເພດຂອງຜູ້ມີສ່ວນຮ່ວມມີດັ່ງນີ້: ຜູ້ມີສ່ວນຮ່ວມຫຼາຍຝ່າຍ; ລັດ; ລັດເຈົ້າປາຍທາງ; ລັດຕົ້ນທາງ; ລັດທາງຜ່ານ; ຜູ້ມີສ່ວນຮ່ວມພາກເອກະຊົນ; ອົງການຈັດຕັ້ງສາກົນ; ແລະ ອົງການຈັດຕັ້ງສັງຄົມ. ປະເພດ 'ຜູ້ມີສ່ວນຮ່ວມຫຼາຍຝ່າຍ' ລວມມີພາກປະຕິບັດທີ່ນໍາໃຊ້ກັບຜູ້ມີສ່ວນຮ່ວມຫຼາຍກວ່າໜຶ່ງກຸ່ມ ແຕ່ກໍບໍ່ໄດ້ໝາຍເຖິງຜູ້ມີສ່ວນຮ່ວມທຸກກຸ່ມ. ພາກປະຕິບັດໃນກຸ່ມ 'ອົງການຈັດຕັ້ງສາກົນ' ແລະ 'ອົງການຈັດຕັ້ງສັງຄົມ' ກໍບໍ່ຈໍາເປັນຕ້ອງກ່ຽວຂ້ອງກັບທຸກໆພາກປະຕິບັດພາຍໃນກຸ່ມເຫຼົ່ານັ້ນ.

ໃນບາງກໍລະນີທີ່ອາດເປັນໄປໄດ້, ພາກປະຕິບັດທີ່ຄ້າຍຄືກັນນີ້ ກໍອາດລວມເຂົ້າໃນຫຼາຍໆໄລຍະ, ຫຼາຍໆແນວທາງປະຕິບັດ ຫຼື ຜູ້ມີສ່ວນຮ່ວມຫຼາກຫຼາຍພາກສ່ວນ. ນອກຈາກນັ້ນ, ພາກປະຕິບັດຫຼາຍຂໍ້ທີ່ອະທິບາຍໃນໄລຍະກ່ອນໜ້າເກີດວິກິດການແມ່ນບໍ່ໄດ້ເອົາມາອະທິບາຍຊໍ້າຄືນໃນໄລຍະເກີດພາວະສຸກເສີນ ຫຼື ໄລຍະພາຍຫຼັງວິກິດການ ບົນຂໍ້ສົມມຸດຖານທີ່ວ່າ ພາກປະຕິບັດດັ່ງກ່າວແມ່ນຕ້ອງເລີ່ມຕົ້ນ ຫຼື ຈັດຕັ້ງປະຕິບັດໃນໄລຍະຕໍ່ໜ້າຕໍ່ໆໄປ.

ໂຄງການ MICIC ໄດ້ຮິບໂຮມພາກປະຕິບັດທີ່ມີຢູ່ຢ່າງກວ້າງຂວາງ ທີ່ ຜູ້ມີສ່ວນຮ່ວມທີ່ມີປະສົບການໄດ້ແລກປ່ຽນ ຜ່ານການປຶກສາຫາລື, ເຫດການ ແລະ ການນໍາສະເໜີຕ່າງໆ. ພາກປະຕິບັດທີ່ມີຢູ່ເຫຼົ່ານີ້ ຫຼາຍຂໍ້ ກໍມີລິ້ງ ແລະ ຂໍ້ມູນການຕິດຕໍ່ ເພື່ອໃຫ້ຜູ້ມີສ່ວນຮ່ວມຕິດຕໍ່ຫາກັນໂດຍກົງ ແລະ ຍັງສາມາດເຂົ້າເບິ່ງຂໍ້ມູນໄດ້ໃນຫໍສະໝຸດອອນໄລນ໌ ທີ່: http://micicinitiative.iom.int/.

# I. ພາກປະຕິບັດເພື່ອສະໜັບສະໜູນການກະກຽມຄວາມພ້ອມເພື່ອຮັບມືກັບວິກິດ

## ພາກປະຕິບັດ ເພື່ອນຳໃຊ້ ແນວທາງປະຕິບັດ 1:
## ຕິດຕາມຮ່ອງຮອຍຂໍ້ມູນກ່ຽວກັບຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດ ແລະ ຜົນກະທົບທີ່ອາດເກີດຂຶ້ນຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ

### ລັດ

*ການເຂົ້າເຖິງຂໍ້ມູນກ່ຽວກັບໄພພິບັດທຳມະຊາດ ແລະ ຄວາມຂັດແຍ່ງ*

ລັດເກັບກຳ, ວິເຄາະ ແລະ ເຜີຍແຜ່ຄວາມຮູ້ກ່ຽວກັບໄພພິບັດທຳມະຊາດ ແລະ ຄວາມຂັດແຍ່ງ ແລະ ກ່ຽວກັບຄວາມສ່ຽງທີ່ຊຸມຊົນປະເຊີນ. ລັດສາມາດນຳໃຊ້ຂໍ້ມູນດັ່ງກ່າວເພື່ອພັດທະນາ ແລະ ເປັນຂໍ້ຄວາມເຕືອນໃຫ້ແກ່ພົນລະເມືອງ ແລະ ຜູ້ເຄື່ອນຍ້າຍຖິ່ນຖານເພື່ອໃຫ້ເຂົາເຈົ້າມີຄວາມພ້ອມເມື່ອເກີດໄພວິກິດ. ລັດສາມາດເອົາຂໍ້ມູນຈາກລັດອື່ນໆ ແລະ ພັດທະນາຄວາມເຂົ້າໃຈຮ່ວມກັນກ່ຽວກັບຄວາມສ່ຽງ ດ້ວຍການສ້າງຂໍ້ຕົກລົງແບບສອງຝ່າຍ, ພາກພື້ນ ແລະ ສາກົນກ່ຽວກັບການຮ່ວມມື, ການເຂົ້າເຖິງ ແລະ ການນຳໃຊ້ຂໍ້ມູນ ແລະ ຂ່າວສານ

### ລັດປາຍທາງ

*ການສ້າງແຜນທີ່ ຄວາມສ່ຽງຕໍ່ໄພພິບັດທຳມະຊາດຂອງຜູ້ເຄື່ອນຍ້າຍຖິ່ນຖານ*

ການເຂົ້າໃຈຜົນກະທົບທີ່ອາດເກີດຂຶ້ນຈາກໄພພິບັດທຳມະຊາດຕໍ່ຊຸມຊົນ ແລະ ຕໍ່ຊັບພະຍາກອນຂອງເຂົາເຈົ້າ ລວມທັງ ຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊັບສິນຂອງເຂົາເຈົ້າ ຈະເປັນການປະກອບສ່ວນຕໍ່ ການກະກຽມຄວາມພ້ອມທີ່ມີເປົ້າໝາຍ ແລະ ມີປະສິດທິຜົນ. ການເກັບກຳ ແລະ ວິເຄາະຂໍ້ມູນ ກ່ຽວກັບຄວາມສ່ຽງຂອງຜູ້ເຄື່ອນຍ້າຍຖິ່ນຖານ ໃນໄພພິບັດທຳມະຊາດອາດອີງໃສ່:

- ການຮັບໂຮມແຫຼ່ງຂໍ້ມູນທີ່ມີຢູ່ ກ່ຽວກັບຄວາມສ່ຽງຂອງເຂົາເຈົ້າໃນໄພພິບັດທຳມະຊາດລວມມີ ແຜນທີ່, ຖານຂໍ້ມູນຄວາມເສຍຫາຍຈາກໄພພິບັດ, ແຜນທີ່ຄວາມສ່ຽງ ແລະ ຂໍ້ມູນກ່ຽວກັບການມີໜ້າຂອງຜູ້ເຄື່ອນຍ້າຍຖິ່ນຖານເປັນຕົ້ນ ສະຖິຕິ ແລະ ຂໍ້ມູນການເຂົ້າເມືອງ ຈາກຜູ້ຈ້າງງານ, ຜູ້ຈັດຫາງານ, ໜ່ວຍຈັດຫາແຮງງານ ແລະ ບໍລິສັດນຳທ່ຽວ;
- ການວິເຄາະຫຼາຍລະດັບ ທີ່ກວມເອົາການກະຈາຍຂອງຜູ້ເຄື່ອນຍ້າຍຖິ່ນຖານໃນທົ່ວປະເທດ ແລະ ການປະເມີນຂັ້ນທ້ອງຖິ່ນ ໂດຍສະເພາະ ໃນພື້ນທີ່ໆມີຄົນເຂົ້າເມືອງສູງ;
- ການພິຈາລະນາແນວໂນ້ມໄລຍະຍາວ, ຕາມລະດູການ, ປະຈຳອາທິດ ແລະ ລາຍວັນ ໃຫ້ເປັນອົງປະກອບສຳຄັນຂອງ ການມີໜ້າ ແລະ ການກະຈາຍຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການຮ່ວມມືລະຫວ່າງຜູ້ມີສ່ວນຮ່ວມຕ່າງໆລວມທັງເຈົ້າໜ້າທີ່ຄຸ້ມຄອງໄພພິບັດ, ຄົນເຂົ້າເມືອງ ແລະ ກົງສຸນ.

*ຄຸນລັກສະນະຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການປະເມີນຄວາມສ່ຽງຈາກໄພພິບັດທຳມະຊາດ*

ເພື່ອໃຫ້ເຂົ້າໃຈກ່ຽວກັບຜົນກະທົບຂອງໄພພິບັດທຳມະຊາດຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ, ການປະເມີນຄວາມສ່ຽງກໍຕ້ອງພິຈາລະ

ນາລັກສະນະສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ນຳໄປສູ່ຄວາມບອບບາງ-ຄວາມສ່ຽງເຖິງແມ່ນວ່າຈະຕ້ອງປະເຊີນກັບໄພວິກິດດັ່ງກ່າວກໍຕາມ ລວມມີ:

- ການເກັບກຳ ແລະ ການວິເຄາະຄວາມເສຍຫາຍຈາກໄພພິບັດທຳມະຊາດໃນໄລຍະຜ່ານມາເພື່ອລະບຸຮູບແບບ-ແນວໂນ້ມຂອງຄວາມບອບບາງ-ຄວາມສ່ຽງໃນຊຸມຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດ ແລະ ມີຈຳນວນຄົນເຂົ້າເມືອງສູງ;
- ການລວມເອົາຂໍ້ມູນກ່ຽວກັບຄວາມສາມາດທາງດ້ານພາສາ, ສະຖານະການເຂົ້າເມືອງ, ຊ່ອງທາງການສື່ສານ, ເຄືອຂ່າຍທ້ອງຖິ່ນ ແລະ ວິທີການທີ່ຜູ້ເຄື່ອນຍ້າຍຖິ່ນຖານຮັບມືກັບພາວະສຸກເສີນຕ່າງໆນັ້ນ ເຂົ້າໃນເຄື່ອງມືການປະເມີນຄວາມບອບບາງ ແລະ ຄວາມສ່ຽງ ພ້ອມທັງ ວິເຄາະວ່າປັດໄຈເຫຼົ່ານີ້ແມ່ນຈະຫລຸດຜ່ອນການເຂົ້າເຖິງຂໍ້ມູນ, ຊັບພະຍາກອນ ຫຼື ການປົກປ້ອງໃນໄລຍະໄພພິບັດໄດ້ ຫຼື ບໍ່ ແລະ ແນວໃດ.

### *ການປະເມີນຄວາມສ່ຽງແບບຊຸມຊົນເປັນເຈົ້າການ*

ປະຊາກອນທີ່ມີຄວາມສ່ຽງລວມທັງຜູ້ເຄື່ອນຍ້າຍຖິ່ນຖານສາມາດເປັນຜູ້ປະເມີນຄວາມສ່ຽງຂອງໄພພິບັດທຳມະຊາດໄດ້ ແລະຄວນມີສ່ວນຮ່ວມໃນການລະບຸຄວາມສ່ຽງ, ຄວາມບອບບາງ ແລະ ຄວາມອາດສາມາດ. ຂະບວນການທີ່ມີຊຸມຊົນເປັນເຈົ້າການໃນການເກັບກຳ ແລະ ຮິບໂຮມຂໍ້ມູນແມ່ນຈະມີຄ່າໃຊ້ຈ່າຍຕໍ່າ, ໃຫ້ຄວາມເຂົ້າໃຈກ່ຽວກັບສະພາບທ້ອງຖິ່ນທີ່ລະອຽດ, ແລະ ສົ່ງເສີມຄວາມຮັບຮູ້-ຄວາມເຂົ້າໃຈກ່ຽວກັບຄວາມສ່ຽງພາຍໃນຊຸມຊົນ. ຂະບວນການດັ່ງກ່າວອາດລວມມີ:

- ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ຜູ້ຕາງໜ້າຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນການປະເມີນຄວາມສ່ຽງຈາກໄພພິບັດທຳມະຊາດ ແລະ ຮັບປະກັນໃຫ້ເຂົາເຈົ້າເຂົ້າໃຈ ແລະ ສະໜັບສະໜູນຈຸດປະສົງຂອງກິດຈະກຳດັ່ງກ່າວ;
- ຊຸກຍູ້ການໂອ້ລົມປຶກສາຫາລືໃຫ້ກວ້າງຂວາງ ໂດຍສະເພາະກັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ກຸ່ມຄົນສ່ວນໜ້ອຍອື່ນໆທີ່ອາດຖືກແບ່ງແຍກ;
- ນຳໃຊ້ຄວາມອາດສາມາດໃນທ້ອງຖິ່ນເພື່ອຫລຸດຜ່ອນຄວາມສ່ຽງ;
- ເຄົາລົບຄວາມເຫັນຂອງຊຸມຊົນໃນການກຳນົດບູລິມະສິດ ແລະ ຂໍ້ປະຕິບັດການທີ່ຈະດຳເນີນຕໍ່;
- ເຄົາລົບຄວາມຫຼາກຫຼາຍທາງດ້ານພາສາ, ວັດທະນະທຳ ແລະ ວິທີການສື່ສານລະຫວ່າງຜູ້ເຄື່ອນຍ້າຍຖິ່ນຖານ.

### *ການລວມເອົາຂໍ້ສັງເກດການຂອງຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນການຕິດຕາມວິກິດການ*

ໃນການຕິດຕັ້ງລະບົບການຕິດຕາມ ແລະ ຄາດຄະເນເຫດການສຸກເສີນ, ຜູ້ມີສ່ວນຮ່ວມສາມາດນຳເອົາຂໍ້ສັງເກດການຂອງຊຸມຊົນເຂົ້ານຳ. ເພື່ອລວມເອົາຂໍ້ມູນຂອງຜູ້ເຄື່ອນຍ້າຍຖິ່ນຖານເຂົ້ານຳ, ລັດສາມາດ:

- ເຂົ້າຫາຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານເພື່ອອະທິບາຍກ່ຽວກັບລະບົບແຈ້ງເຕືອນໄພລ່ວງໜ້າ ແລະ ຂໍຄວາມຮ່ວມມືຈາກເຂົາເຈົ້າ;
- ໃຫ້ການຝຶກອົບຮົມກ່ຽວກັບການສັງເກດເບິ່ງຕົວຊີ້ວັດທີ່ກ່ຽວຂ້ອງກັບການແຈ້ງເຕືອນໄພພິບັດທຳມະຊາດ ແລະຄວາມຂັດແຍ່ງລ່ວງໜ້າ ໂດຍສະເພາະຕົວຊີ້ວັດທີ່ຜູ້ເຄື່ອນຍ້າຍຖິ່ນຖານອາດມີຄວາມຮູ້ດີເປັນພິເສດ (ເຊັ່ນ: ການນຳໃຊ້ຄວາມຮຸນແຮງທີ່ເພີ່ມຂຶ້ນຕໍ່ກຸ່ມຄົນສ່ວນໜ້ອຍ);
- ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດສະໜອງຂໍ້ມູນແຈ້ງເຕືອນລ່ວງໜ້າໃນພາສາຂອງເຂົາເຈົ້າເອງ.

### *ການປັບລະບົບການແຈ້ງເຕືອນໄພພິບັດທຳມະຊາດລ່ວງໜ້າ ໃຫ້ສາມາດເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານ*

ລະບົບການແຈ້ງເຕືອນລ່ວງໜ້າໃນລັດປາຍທາງ ຄວນດັດປັບເພື່ອໃຫ້ເໝາະສົມກັບ ສະພາບຄວາມບອບບາງຂອງຜູ້ເຄື່ອນຍ້າຍຖິ່ນຖານ ເຊັ່ນຄວາມອາດສາມາດທາງພາສາທີ່ຈຳກັດ, ການຂາດຄວາມໄວ້ເນື້ອເຊື່ອໃຈຕໍ່ເຈົ້າໜ້າທີ່, ຄວາມແຕກຕ່າງດ້ານຄວາມຮັບຮູ້ ແລະ ທັດສະນະກ່ຽວກັບຄວາມສ່ຽງ, ແລະ ຄວາມແຕກຕ່າງໃນການເຂົ້າເຖິງສື່ ແລະ ຊ່ອງທາງການສື່ສານ. ເພື່ອດັດປັບລະບົບການແຈ້ງເຕືອນ, ລັດສາມາດ:

- ແປຂໍ້ຄວາມແຈ້ງເຕືອນໃນພາສາປາກເວົ້າຂອງຜູ້ເຄື່ອນຍ້າຍຖິ່ນຖານຜ່ານລະບົບການແປແບບອັດຕະໂນມັດ ຫຼື ດ້ວຍການ

ນຳໃຊ້ພະນັກງານທີ່ຮູ້ສອງພາສາ ຫຼື ນາຍແປພາສາໝູນວຽນກັນເຮັດວຽກ;

- ດັດແກ້ຂໍ້ຄວາມແຈ້ງເຕືອນໃຫ້ຊັດເຈນ, ນຳໃຊ້ພາສາທີ່ເຂົ້າໃຈງ່າຍ, ຫຼີກເວັ້ນຄຳເວົ້າ ຫຼື ສຳນວນທີ່ຜູ້ເຄື່ອນຍ້າຍຖິ່ນຖານອາດເຂົ້າໃຈຍາກ ແລະ ໃຫ້ຂໍ້ມູນສະເພາະກ່ຽວກັບວິທີການທີ່ຜູ້ເຄື່ອນຍ້າຍຖິ່ນຖານສາມາດເຂົ້າເຖິງການຊ່ວຍເຫຼືອ ແລະ ການບໍລິການ;
- ນຳໃຊ້ສື່ ແລະ ຊ່ອງທາງການສື່ສານທີ່ຜູ້ເຄື່ອນຍ້າຍຖິ່ນຖານນຳໃຊ້ ແລະ ເຂົ້າເຖິງໄດ້ ລວມທັງແຫຼ່ງຂ່າວຂອງລັດຕົ້ນທາງ;
- ເຜີຍແຜ່ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຂໍ້ຄວາມແຈ້ງເຕືອນໃນທ້ອງຖິ່ນ ລວມທັງ ການລົງຢ້ຽມຢາມແຕ່ລະເຮືອນ ຫຼື ການຢັ້ງຢືນຂໍ້ຄວາມແຈ້ງເຕືອນໂດຍຜູ້ມີສ່ວນຮ່ວມທີ່ຜູ້ເຄື່ອນຍ້າຍຖິ່ນຖານໄວ້ເນື້ອເຊື່ອໃຈ.

## ລັດຕົ້ນທາງ

### *ກົນໄກເພື່ອແບ່ງປັນ ຂໍ້ມູນການວິເຄາະຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດລະຫວ່າງຜູ້ມີສ່ວນຮ່ວມ*

ລັດຕົ້ນທາງສາມາດຕິດຕາມ ແລະ ປະເມີນຄວາມສ່ຽງສຳລັບພົນລະເມືອງຢູ່ຕ່າງປະເທດ ໂດຍສະເພາະເລັ່ງໃສ່ປະເທດປາຍທາງຫຼັກໆ (ປະເທດທີ່ພົນລະເມືອງສ່ວນໃຫຍ່ໄປ). ກົນໄກເພື່ອແບ່ງປັນ ແລະ ແລກປ່ຽນຂໍ້ມູນການວິເຄາະຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດ ຢ່າງເປັນປົກກະຕິກັບຜູ້ມີສ່ວນຮ່ວມອື່ນໆ ລວມທັງຜູ້ມີສ່ວນຮ່ວມພາກເອກະຊົນ ແລະ ອົງການຈັດຕັ້ງສັງຄົມ ແມ່ນສາມາດເອື້ອອຳນວຍໃຫ້ແກ່ການຕັດສິນໃຈບົນພື້ນຖານຂໍ້ມູນທີ່ສົມບູນ. ມາດຕະການເພື່ອເອື້ອອຳນວຍໃຫ້ແກ່ການແບ່ງປັນຂໍ້ມູນລວມມີ:

- ການສ້າງເຄືອຂ່າຍລວມສູນທີ່ລວມທັງເຈົ້າໜ້າທີ່ລັດ, ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ຜູ້ມີສ່ວນຮ່ວມພາກເອກະຊົນ ແລະ ອົງການຈັດຕັ້ງສັງຄົມອື່ນໆ ເພື່ອຕິດຕາມ ແລະ ແລກປ່ຽນຂໍ້ມູນກ່ຽວກັບຄວາມສ່ຽງຢູ່ຕ່າງປະເທດ;
- ການສ້າງເວທີແຫ່ງຊາດ ຫຼື ພາກພື້ນທີ່ເຕົ້າໂຮມພະນັກງານກົງສຸນ ກັບຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງອື່ນໆທີ່ຢູ່ລັດປາຍທາງ ເພື່ອແລກປ່ຽນຂໍ້ມູນຢ່າງທັນການກ່ຽວກັບບັນຫາຄວາມປອດໄພ-ຄວາມສະຫງົບໃນບໍລິບົດຂອງວິກິດການ ທີ່ເປັນຄວາມສົນໃຈຂອງທຸກໆຝ່າຍ ທີ່ກ່ຽວຂ້ອງກັບພົນລະເມືອງຢູ່ຕ່າງປະເທດ;
- ສ້າງເວັບໄຊຕ໌ເພື່ອສະໜອງຂໍ້ມູນກ່ຽວກັບຄວາມຂັດແຍ່ງ ແລະ ໄພພິບັດທຳມະຊາດ ແລະ ລິ້ງເຂົ້າ ເວັບໄຊຕ໌ ອື່ນໆທີ່ກ່ຽວຂ້ອງ ເຊັ່ນ ເວັບໄຊຕ໌ຂອງກົງສຸນ ແລະ ລະບົບແຈ້ງເຕືອນໄພລ່ວງໜ້າ.

## ອົງການຈັດຕັ້ງສາກົນ

### *ກົນໄກການແຈ້ງເຕືອນ ແລະ ປະຕິບັດການລ່ວງໜ້າລະຫວ່າງອົງການ*

ລະບົບການແຈ້ງເຕືອນລ່ວງໜ້າ, ການປະຕິບັດການລ່ວງໜ້າ ແລະ ລະບົບອື່ນໆໃນການຕິດຕາມວິກິດ ທີ່ອົງການຈັດຕັ້ງຕ່າງໆນຳໃຊ້ແມ່ນສາມາດເຊື່ອມໂຍງຂໍ້ມູນຢ່າງເປັນລະບົບກ່ຽວກັບ ການມີໜ້າ ແລະ ສະພາບຂອງຜູ້ເຄື່ອນຍ້າຍຖິ່ນຖານ. ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ກຸ່ມຜູ້ເຄື່ອນຍ້າຍຖິ່ນຖານສາມາດປະກອບສ່ວນຕໍ່ການເກັບກຳ ແລະ ການວິເຄາະຂໍ້ມູນທີ່ກ່ຽວຂ້ອງ. ຂໍ້ມູນນີ້ອາດເປັນປະໂຫຍດໃນການວິເຄາະຄວາມສ່ຽງສຳລັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ເພື່ອເປັນຂໍ້ມູນອ້າງອີງສຳລັບການກະກຽມຄວາມພ້ອມລວມທັງແຜນການສຳຮອງ. ຂໍ້ມູນທີ່ກ່ຽວຂ້ອງອາດລວມມີ:

- ຈຳນວນຜູ້ເຄື່ອນຍ້າຍຖິ່ນຖານ;
- ສັນຊາດ;
- ສະຖານທີ່;
- ຂໍ້ມູນລວມດ້ານປະຊາກອນ, ແຍກຕາມເພດ ແລະ ອາຍຸ;
- ຂໍ້ມູນກ່ຽວກັບສະຖານະການເຂົ້າເມືອງຂອງຜູ້ເຄື່ອນຍ້າຍຖິ່ນຖານລວມທັງຜູ້ທີ່ຢູ່ໃນສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ;
- ກຸ່ມຜູ້ເຄື່ອນຍ້າຍຖິ່ນຖານທີ່ບອບບາງລວມທັງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ເດັກນ້ອຍ ແລະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ພິການ;

- ຂໍ້ມູນກ່ຽວກັບຄວາມສ່ຽງທີ່ອາດກະທົບຕໍ່ກຸ່ມຜູ້ເຄື່ອນຍ້າຍຖິ່ນຖານບາງກຸ່ມຫຼາຍກວ່າກຸ່ມອື່ນໆ ເຊັ່ນ ຂະແໜງການແຮງງານສະເພາະໃດໜຶ່ງ.

## ອົງການຈັດຕັ້ງສັງຄົມ

*ຄວາມເຫັນ-ຂໍ້ມູນຈາກອົງການຈັດຕັ້ງສັງຄົມ*

ອົງການຈັດຕັ້ງສັງຄົມທ້ອງຖິ່ນສ່ວນໃຫຍ່ຈະມີຄວາມຮູ້ເປັນຜູ້ທຳອິດກ່ຽວກັບ ຄວາມຂັດແຍ່ງ ຫຼື ໄພພິບັດທາງທຳມະຊາດທີ່ເລີ່ມຕົ້ນຂຶ້ນ ພ້ອມທັງມີຄວາມຮູ້ກ່ຽວກັບຜົນກະທົບທີ່ອາດເກີດຂຶ້ນຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ. ເພື່ອລວມເອົາຂໍ້ມູນຈາກອົງການຈັດຕັ້ງສັງຄົມເຂົ້າໃນລະບົບການແຈ້ງເຕືອນໄພລ່ວງໜ້າ, ຜູ້ມີສ່ວນຮ່ວມສາມາດ:

- ເຂົ້າເຖິງອົງການຈັດຕັ້ງສັງຄົມທ້ອງຖິ່ນເພື່ອອະທິບາຍກ່ຽວກັບລະບົບການແຈ້ງເຕືອນໄພລ່ວງໜ້າ ແລະ ເພື່ອຂໍຄວາມຮ່ວມມືນຳເຂົາເຈົ້າໃນການເອົາ ແລະ ຖ່າຍທອດຂໍ້ມູນຕ່າງໆ;
- ໃຫ້ການຝຶກອົບຮົມກ່ຽວກັບການລະບຸຕົວຊີ້ວັດທີ່ກ່ຽວຂ້ອງກັບການແຈ້ງເຕື່ອນໄພພິບັດທຳມະຊາດ ແລະ ຄວາມຂັດແຍ່ງລ່ວງໜ້າ ລວມທັງ ຕົວຊີ້ວັດທີ່ເກີດຂຶ້ນໃນຂັ້ນຊຸມຊົນ ເຊິ່ງອົງການຈັດຕັ້ງສັງຄົມອາດມີຄວາມຮູ້ເປັນພິເສດ (ເຊັ່ນ ການໂຈມຕີກຸ່ມຄົນສ່ວນໜ້ອຍທີ່ເພີ່ມຂຶ້ນ);
- ໃຫ້ຫຼາຍຊ່ອງທາງໃນການສື່ສານຂໍ້ມູນກ່ຽວກັບວິກິດທີ່ເລີ່ມເກີດຂຶ້ນ;
- ລວມເອົາກົນໄກການໃຫ້ຄວາມເຫັນເຂົ້ານຳ ເພື່ອຮັບປະກັນວ່າອົງການຈັດຕັ້ງທາງສັງຄົມຈະໄດ້ຮັບການແຈ້ງເຕືອນລ່ວງໜ້າກ່ຽວກັບວິກິດການທີ່ກະທົບເຂົາເຈົ້າ ແລະ ຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ.

## ພາກປະຕິບັດໃນການນຳໃຊ້ ແນວທາງປະຕິບັດ 2:

# ເກັບກຳ ແລະ ແບ່ງປັນຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານຕາມເງື່ອນໄຂ ຄວາມເປັນສ່ວນຕົວ, ການຮັກສາຄວາມປອດໄພ ແລະ ສະຫວັດດີການຂອງຜູ້ເຄື່ອນຍ້າຍຖິ່ນຖານ

## ຜູ້ມີສ່ວນຮ່ວມຫຼາຍຝ່າຍ

### *ການຮີບໂຮມຂໍ້ມູນ ແລະ ການສຶກສາກ່ຽວກັບ ທ່າອ່ຽງ ແລະ ຂໍ້ມູນດ້ານປະຊາກອນຂອງຜູ້ເຄື່ອນຍ້າຍຖິ່ນຖານ*

ຂໍ້ມູນລວມກ່ຽວກັບທ່າອ່ຽງການເຄື່ອນຍ້າຍຖິ່ນຖານ ແລະ ຂໍ້ມູນດ້ານປະຊາກອນຂອງຜູ້ເຄື່ອນຍ້າຍຖິ່ນຖານ ສາມາດເປັນບ່ອນອີງເພື່ອການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ. ຂໍ້ມູນ ແລະ ການຄົ້ນຄວ້າອາດລວມມີ:

- ຈຸດປະສົງຂອງການເຄື່ອນຍ້າຍຖິ່ນຖານ;
- ເສັ້ນທາງການເຄື່ອນຍ້າຍຖິ່ນຖານ;
- ທຳມະຊາດ ແລະ ຄຸນລັກສະນະຂອງພົນລະເມືອງທີ່ອອກຈາກລັດຕົ້ນທາງ;
- ທຳມະຊາດ ແລະ ຄຸນລັກສະນະຂອງຜູ້ເຄື່ອນຍ້າຍຖິ່ນຖານຢູ່ໃນລັດປາຍທາງ;
- ຂໍ້ມູນ ແລະ ການວິເຄາະໃນດ້ານປະລິມານ ແລະ ຄຸນນະພາບ;
- ການມີ ແລະ ການດຳເນີນງານຂອງ ເຄືອຂ່າຍການຄ້າມະນຸດ ແລະ ການລັກລອບຄົນເຂົ້າເມືອງ.

### *ຂໍ້ມູນລວມກ່ຽວກັບຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ອົບພະຍົບ ແລະ ຈຸດປະສານງານຫຼັກ*

ຂໍ້ມູນລະອຽດກ່ຽວກັບ ຊຸມຊົນ ແລະ ເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຈຸດປະສານງານຫຼັກສາມາດເປັນບ່ອນອີງໃຫ້ແກ່ການກະກຽມຄວາມພ້ອມໃນການຮັບມືກັບພາວະສຸກເສີນ ລວມທັງ ການວາງແຜນສຳຮອງ ແລະ ສາມາດເອື້ອອຳນວຍໃຫ້ແກ່ການລົງຊ່ວຍເຫຼືອພາກສະໜາມ, ການສື່ສານ ແລະ ການຮັບມືແບບມີເປົ້າໝາຍ. ຂໍ້ມູນທີ່ຮີບໂຮມອາດລວມມີ:

- ການກະຈາຍຂອງຜູ້ເຄື່ອນຍ້າຍຖິ່ນຖານຕາມພູມສັນຖານໃນລັດປາຍທາງ;
- ສັນຊາດ, ຊົນເຜົ່າ ແລະ ພາສາຂອງຜູ້ເຄື່ອນຍ້າຍຖິ່ນຖານໃນແຕ່ລະທ້ອງຖິ່ນ;
- ສະພາບຄວາມບອບບາງ-ຄວາມສ່ຽງທີ່ອາດເກີດຂຶ້ນ ລວມທັງ ເພດ, ອາຍຸ, ຄວາມພິການ, ສະຖານະການເຂົ້າເມືອງ, ຄວາມອາດສາມາດທາງດ້ານພາສາ ແລະ ສະພາບການເຮັດວຽກ;
- ການກະຈາຍຕາມພູມສັນຖານຕ່າງໆ, ທັກສະ ແລະ ຄຸນລັກສະນະຂອງຜູ້ອົບພະຍົບ;
- ເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ອົບພະຍົບ ໃນລະບົບ-ທາງການ ແລະ ນອກລະບົບ-ບໍ່ເປັນທາງການ;
- ຂໍ້ມູນກ່ຽວກັບຜູ້ນຳພາຂອງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ອົບພະຍົບ.

### *ມາດຕະຖານການປົກປ້ອງ ແລະ ຄວາມເປັນສ່ວນຕົວຂອງຂໍ້ມູນທີ່ກ່ຽວຂ້ອງ*

ການເກັບກຳ ແລະ ການນຳໃຊ້ຂໍ້ມູນໄດ້ຮຽກຮ້ອງໃຫ້ມີການເອົາໃຈໃສ່ເລື່ອງການປົກປ້ອງ ແລະ ຄວາມເປັນສ່ວນຕົວຂອງຂໍ້ມູນ ລວມທັງ ມາດຕະການໆຍິນຍອມຂອງບຸກຄົນທີ່ເປັນຜູ້ໃຫ້ຂໍ້ມູນຕາມຄວາມເໝາະສົມ. ແນວທາງກ່ຽວກັບການເກັບກຳ ແລະ ການນຳໃຊ້ຂໍ້ມູນຄວນຄຳນຶງເຖິງບັນຫາຕ່າງໆເຊັ່ນ ການເກັບກຳຂໍ້ມູນຢ່າງຖືກຕ້ອງຕາມກົດໝາຍ, ມີຈຸດປະສົງທີ່ສະເພາະເຈາະຈົງ ແລະ ຊອບທຳ, ການຍິນຍອມ, ການຮັກສາຄວາມລັບ, ການສົ່ງຕໍ່ຂໍ້ມູນໄປຍັງບຸກຄົນທີສາມ, ຄວາມປອດໄພຂອງຂໍ້ມູນ, ການຮັກ

ສາຂໍ້ມູນ, ການຄຸ້ມຄອງຂໍ້ມູນ, ຄວາມສອດຄ່ອງກັບລະບຽບກົດໝາຍ, ວິທີທາງແກ້ໄຂກໍລະນີການນໍາໃຊ້ຂໍ້ມູນໃນທາງທີ່ຜິດ, ແລະ ການຮັກສາຂໍ້ມູນໃນບ່ອນທີ່ປອດໄພລວມທັງການການຮັກສາຂໍ້ມູນທີ່ເກັບກໍາທາງເອເລັກໂຕຣນິກໄວ້ໃນເຊີເວີທີ່ປອດໄພ ແລະ ມີລະຫັດໃນການເຂົ້າເຖິງຂໍ້ມູນ.

### *ການຈັດການຕ່າງໆເພື່ອແບ່ງປັນຂໍ້ມູນທີ່ຮີບໂຮມໄດ້ກ່ຽວກັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ*

ການແບ່ງປັນຂໍ້ມູນທີ່ຮີບໂຮມໄດ້ອາດເປັນວິທີການໜຶ່ງທີ່ເປັນປະໂຫຍດເພື່ອຮັບປະກັນໃຫ້ຜູ້ມີສ່ວນຮ່ວມຈາກທຸກພາກສ່ວນໄດ້ມີຂໍ້ມູນທີ່ຖືກຕ້ອງ ແລະ ຫຼ້າສຸດກ່ຽວກັບ ຜູ້ເຄື່ອນຍ້າຍຖິ່ນຖານ, ສະຖານທີ່ອາໄສໂດຍທົ່ວໄປ ແລະ ຄວາມຕ້ອງການຂອງເຂົາເຈົ້າ. ການຈັດການຕ່າງໆເພື່ອແບ່ງປັນຂໍ້ມູນດັ່ງກ່າວອາດລວມເອົາຂໍ້ກໍານົດກ່ຽວກັບ:

- ສະຖານະການທີ່ຈະມີການແບ່ງປັນຂໍ້ມູນ;
- ຮູບແບບຂອງຂໍ້ມູນທີ່ຮີບໂຮມໄດ້ທີ່ຈະແບ່ງປັນ (ຕົວຢ່າງ: ຮູບແບບຕາຕະລາງ, ແຜນທີ່, ເສັ້ນສະແດງ ແລະ ການພັນລະນາ-ອະທິບາຍ);
- ຂໍ້ມູນຈະມີການປັບປຸງ-ອັບເດດເລື້ອຍໆເທົ່າໃດ;
- ສະຖານະການທີ່ຕ້ອງຮີບໂຮມຂໍ້ມູນເປັນພິເສດຕາມຄວາມຕ້ອງການ;
- ຂໍ້ຍົກເວັ້ນໃນການແບ່ງປັນຂໍ້ມູນທີ່ຮີບໂຮມໄດ້ (ເຊັ່ນ: ໃນກໍລະນີຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານທີ່ໃດໜຶ່ງທີ່ມີຈໍານວນໜ້ອຍ ແລະ ບໍ່ສາມາດຮັກສາຊື່ ຫຼື ຕົວຕົນຂອງຕົນເອງໄດ້);
- ຈຸດປະສົງທີ່ຕົກລົງກັນໄວ້ໃນການນໍາໃຊ້ຂໍ້ມູນທີ່ຮີບໂຮມໄດ້.

### *ຂໍ້ມູນທີ່ຮີບໂຮມໄດ້ທີ່ເປີດໃຫ້ສາທາລະນະ*

ລັດ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມເກັບກໍາຂໍ້ມູນກ່ຽວກັບ ແນວໂນ້ມການເຄື່ອນຍ້າຍຖິ່ນຖານ, ຂໍ້ມູນດ້ານປະຊາກອນຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ. ການເປີດເຜີດຂໍ້ມູນທີ່ຮີບໂຮມໄດ້ໃຫ້ແກ່ທຸກໆຄົນຈະຮັບປະກັນຄວາມເຂົ້າໃຈທີ່ເອກະພາບກັນລະຫວ່າງຜູ້ມີສ່ວນຮ່ວມກ່ຽວກັບ ຂະໜາດ ແລະ ທໍາມະຊາດຂອງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ.

## ລັດປາຍທາງ

### *ລະບົບການຄຸ້ມຄອງດ່ານຊາຍແດນ ແລະ ລະບົບການລົງທະບຽນເພື່ອເດີນທາງມາຮອດ*

ຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງມາຮອດລັດ ທີ່ເກັບກໍາຜ່ານລະບົບການຄຸ້ມຄອງດ່ານຊາຍແດນແບບໃຊ້ເຈ້ຍ ຫຼື ເອເລັກໂຕຣນິກ, ອາດມີປະໂຫຍດໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນກໍລະນີເກີດເຫດຄວາມຂັດແຍ່ງ ຫຼື ໄພພິບັດທໍາມະຊາດ. ຂໍ້ມູນທີ່ເກັບກໍາອາດລວມມີ:

- ປະຫວັດຫຍໍ້ ເຊັ່ນຊື່, ວັນເດືອນປີເກີດ, ສັນຊາດ, ເພດ ແລະ ຖ້າຈໍາເປັນ ກໍໃຫ້ຂໍ້ມູນກ່ຽວກັບຄຸນລັກສະນະຮູບຮ່າງຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສະມາຊິກຄອບຄົວຜູ້ຕິດຕາມມານໍາ;
- ຂໍ້ມູນການຕິດຕໍ່;
- ສະຖານທີ່ພັກ;
- ຂໍ້ມູນການຕິດຕໍ່ໃນກໍລະນີສຸກເສີນ;

- ລັກສະນະຂອງການເດີນທາງ;
- ໄລຍະເວລາ ຢູ່ພາຍໃນປະເທດລວມທັງວັນທີ່ເຂົ້າປະເທດ ແລະ ລາຍລະອຽດການເດີນທາງອື່ນໆ;
- ຂໍ້ມູນໜັງສືເດີນທາງ ແລະ ວີຊາລວມທັງສັນຍາ ແລະ ວັນທີ່ໝົດອາຍຸ;
- ຊື່ຂອງຜູ້ຈ້າງງານ ແລະ ສະຖານທີ່ເຮັດວຽກ.

## ລັດຕົ້ນທາງ

### *ລະບົບການລົງທະບຽນສຳລັບພົນລະເມືອງຢູ່ຕ່າງປະເທດ*

ລັດຕົ້ນທາງສາມາດນຳໃຊ້ລະບົບການລົງທະບຽນເພື່ອສື່ສານກັບພົນລະເມືອງຢູ່ຕ່າງປະເທດ ແລະ ໃຫ້ຂໍ້ມູນແກ່ເຂົາເຈົ້າ. ລະບົບສາມາດອະນຸຍາດໃຫ້ມີການລົງທະບຽນຄັ້ງດຽວຕອນຂາເຂົ້າ ຫຼື ເປັນລະບົບທີ່ຜູ້ນຳໃຊ້ລະບົບສາມາດປ້ອນຂໍ້ມູນກ່ຽວກັບຕົນເອງເຂົ້າ ແລະ ປັບປຸງ-ອັບເດດເມື່ອສະຖານະການທາງກປ່ຽນແປງ. ວິທີການຈັດຕັ້ງປະຕິບັດລະບົບການລົງທະບຽນລວມມີ:

- ດ້ວຍເຈ້ຍ, ແບບເຊິ່ງໜ້າ ຫຼື ລະບົບເອເລັກໂຕຣນິກ;
- ການລົງທະບຽນກ່ອນອອກເດີນທາງ ຫຼື ພາຍຫຼັງເດີນທາງມາຮອດລັດປາຍທາງ;
- ຜ່ານຄຳແນະນຳແບບສະໝັກໃຈ ຫຼື ເປັນລະບຽບບັງຄັບ;
- ຜ່ານສະຖານກົງສຸນຢູ່ຕ່າງປະເທດ.

ຂໍ້ມູນທີ່ສາມາດເກັບກຳລວມມີ:

- ປະຫວັດຫຍໍ້ ເຊັ່ນຊື່, ວັນເດືອນປີເກີດ, ສັນຊາດ, ເພດ ແລະ ຖ້າຈຳເປັນ ກໍໃຫ້ຂໍ້ມູນກ່ຽວກັບຄຸນລັກສະນະຮູບຮ່າງຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສະມາຊິກຄອບຄົວຜູ້ຕິດຕາມມານຳ;
- ຂໍ້ມູນການຕິດຕໍ່;
- ລາຍລະອຽດການເດີນທາງລວມທັງປະເທດ, ສະຖານທີ່ພັກ ແລະ ໄລຍະການຢູ່ພາຍໃນປະເທດ;
- ຂໍ້ມູນການຕິດຕໍ່ໃນກໍລະນີສຸກເສີນ;
- ຂໍ້ມູນໜັງສືເດີນທາງ ແລະ ວີຊາລວມທັງສັນຍາ ແລະ ວັນທີ່ໝົດອາຍຸ.

### *ມາດຕະການຊຸກຍູ້ໃຫ້ພົນລະເມືອງລົງທະບຽນ*

ລະບົບການລົງທະບຽນຈະມີປະສິດທິຜົນກໍຕໍ່ເມື່ອພົນລະເມືອງທີ່ຢູ່ຕ່າງປະເທດຫາກລົງທະບຽນ ແລະ ຮັກສາໃຫ້ຂໍ້ມູນຂອງເຂົາເຈົ້າປັບປຸງ-ອັດເດດທີ່ສຸດ. ລັດສາມາດປູກຈິດສຳນຶກກ່ຽວກັບລະບົບການລົງທະບຽນທີ່ມີ ແລະ ເພີ່ມອັດຕາການລົງທະບຽນໂດຍ:

- ອອກແບບລະບົບການລົງທະບຽນອອນໄລນ໌ທີ່ນຳໃຊ້ງ່າຍ, ປັບປຸງ-ອັບເດດງ່າຍ ແທນທີ່ຈະເປັນໃນຮູບແບບເຈ້ຍ ແລະ ຕາມຂັ້ນຕອນແບບເຊິ່ງໜ້າ;
- ການຈຳກັດຂອບເຂດຂອງຂໍ້ມູນສ່ວນຕົວທີ່ຕ້ອງຍື່ນລວມທັງ ສະຖານະການເຂົ້າເມືອງ;
- ໃຫ້ຂໍ້ມູນກ່ຽວກັບ ຈຸດປະສົງ ແລະ ຄວາມສຳຄັນຂອງການລົງທະບຽນ;

- ການໃຫ້ຂໍ້ແນະນຳທີ່ຊັດເຈນ (ໂດຍໃຫ້ລິ້ງເຊື່ອມຕໍ່ເຂົ້າລະບົບການລົງທະບຽນ) ກ່ຽວກັບ ວິທີການ ແລະ ເວລາໃນການລົງທະບຽນ;
- ໃຫ້ແນວທາງຊັດເຈນກ່ຽວກັບວິທີການປົກປ້ອງ ແລະ ການຈັດການ (ການນຳໃຊ້) ຂໍ້ມູນ ແລະ ຂ່າວສານ;
- ໃຫ້ຜົນປະໂຫຍດແກ່ພົນລະເມືອງທີ່ລົງທະບຽນລວມທັງ ການລາຍງານ-ການສະໜອງຂໍ້ມູນຫຼ້າສຸດກ່ຽວກັບຄວາມສ່ຽງ ແລະ ສະພາບການໃນລັດປາຍທາງ;
- ການເຜີຍແຜ່ຂໍ້ມູນກ່ຽວກັບລະບົບການລົງທະບຽນຜ່ານເວັບໄຊດ໌, ສື່ສັງຄົມອອນໄລນ໌, ອີເມລ, ສື່ແບບດັ້ງເດີມ, ໂປສເຕີຕາມເດີ່ນບິນ ແລະ ສູນການທ່ອງທ່ຽວ;
- ໃຫ້ຂໍ້ມູນກ່ຽວກັບລະບົບການລົງທະບຽນໃນໄລຍະ ການຝຶກອົບຮົມກ່ອນການເດີນທາງ ຫຼື ພາຍຫຼັງເດີນທາງມາຮອດ.

### *ການສ້າງແຜນທີ່ຂອງພົນລະເມືອງຢູ່ຕ່າງປະເທດ*

ຄວາມເຂົ້າໃຈເລິກເຊິ່ງ ແລະ ຫຼ້າສຸດກ່ຽວກັບຈຳນວນ ແລະ ຄຸນລັກສະນະຂອງພົນລະເມືອງຢູ່ຕ່າງປະເທດ ຈະຊ່ວຍໃຫ້ລັດສາມາດວາງແຜນ ແລະ ຮັບມືຢ່າງມີປະສິດທິຜົນກວ່າເກົ່າເມື່ອເກີດວິກິດການ. ກິດຈະກຳການສ້າງແຜນທີ່ອາດລວມມີ:

- ການເກັບກຳຂໍ້ມູນໂດຍກົງຈາກອົງການທີ່ກ່ຽວຂ້ອງທີ່ໄດ້ຮັບຂໍ້ມູນກ່ອນໝູ່ຢູ່ລັດປາຍທາງ ເຊັ່ນ ກະຊວງພາຍໃນ, ກົມກວດກາຄົນເຂົ້າເມືອງ, ກະຊວງແຮງງານ ແລະ ກົມສະຖິຕິ;
- ການສ້າງແຜນທີ່ອົງການຈັດຕັ້ງ, ກຸ່ມ ແລະ ສະມາຄົມຕ່າງໆ ທີ່ຖືກສ້າງຕັ້ງໂດຍພົນລະເມືອງຢູ່ຕ່າງປະເທດ;
- ການພົບປະກັບຜູ້ນຳພາຊຸມຊົນ ແລະ ກຸ່ມຕ່າງໆທີ່ເປັນຜູ້ຮັກສາຂໍ້ມູນກ່ຽວກັບພົນລະເມືອງຢູ່ຕ່າງປະເທດ;
- ປະສານງານກັບຜູ້ຕາງໜ້າຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານ;
- ຢ້ຽມຢາມສະຖານທີ່ເຮັດວຽກຂອງພົນລະເມືອງຢູ່ໃນລັດປາຍທາງ;
- ການສ້າງແຜນທີ່ ແລະ ເກັບກຳຂໍ້ມູນລວມໃນຂັ້ນທ້ອງຖິ່ນໃນລັດປາຍທາງ.

ປະເພດຂໍ້ມູນທີ່ສາມາດເກັບກຳໄດ້ຜ່ານການສ້າງແຜນທີ່ກ່ຽວກັບພົນລະເມືອງຢູ່ຕ່າງປະເທດ ລວມມີ:

- ຊື່ເຕັມ;
- ໜັງສືເດີນທາງ, ເອກະສານເດີນທາງ ຫຼື ເອກະສານການລະບຸຕົວຕົນ-ປະຈຳຕົວ ຖ້າມີ;
- ຂໍ້ມູນການຕິດຕໍ່;
- ທີ່ຢູ່ໃນລັດປາຍທາງ;
- ລາຍລະອຽດ ແລະ ຂໍ້ມູນການຕິດຕໍ່ ຜູ້ຈ້າງງານ;
- ທີ່ຢູ່ ແລະ ຂໍ້ມູນການຕິດຕໍ່ຢູ່ໃນລັດຕົ້ນທາງ;
- ຂໍ້ມູນການຕິດຕໍ່ກໍລະນີສຸກເສີນລວມທັງ ຢູ່ລັດຕົ້ນທາງ ແລະ ລັດປາຍທາງ;
- ສື່ສັງຄົມທາງອອນໄລນ໌ ຫຼື ຖານອອນໄລນ໌ອື່ນໆ (ເຊັ່ນ ເວັບໄຊດ໌, ຂໍ້ຄວາມ, ສື່ສັງຄົມ, ແອັບພິເຄຊັນ) ທີ່ນຳໃຊ້ໂດຍທົ່ວໄປເພື່ອເຂົ້າເຖິງຂໍ້ມູນ.

## ຜູ້ມີສ່ວນຮ່ວມພາກເອກະຊົນ

### *ຂໍ້ມູນ ແລະ ຖານຂໍ້ມູນກ່ຽວກັບແຮງງານເຄື່ອນຍ້າຍ*

ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານຢູ່ໃນລັດຕົ້ນທາງ ສ່ວນໃຫຍ່ຈະເກັບກຳຂໍ້ມູນ ແລະ ຮັກສາຖານຂໍ້ມູນກ່ຽວກັບ ລູກຈ້າງ ລວມທັງລູກຈ້າງທີ່ເຮັດວຽກຢູ່ລັດອື່ນໆ. ຜູ້ຈ້າງງານໃນລັດປາຍທາງ ກໍເກັບກຳຂໍ້ມູນ ແລະ ຮັກສາຖານຂໍ້ມູນກ່ຽວກັບລູກຈ້າງລວມທັງແຮງງານເຄື່ອນຍ້າຍ. ຂໍ້ມູນສ່ວນໃຫຍ່ເຫຼົ່ານີ້ແມ່ນເກັບຈາກກິດຈະກຳການເຮັດທຸລະກິດທົ່ວໄປເຊັ່ນ ໃນການຈ້າງ, ລະບົບເງິນເດືອນ ແລະ ປະກັນໄພໃນສະຖານທີ່ເຮັດວຽກ. ໃນບໍລິບົດຂອງກິດຈະກຳເກັບກຳຂໍ້ມູນເຫຼົ່ານີ້, ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານສາມາດເກັບກຳຂໍ້ມູນ ແລະ ເອກະສານທີ່ຈະຊ່ວຍໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ ເຊິ່ງອາດລວມມີ:

- ປະຫວັດຫຍໍ້ ເຊັ່ນຊື່, ວັນເດືອນປີເກີດ, ສັນຊາດ, ເພດ ແລະ ຖ້າຈຳເປັນ ກໍໃຫ້ຂໍ້ມູນກ່ຽວກັບຄຸນລັກສະນະຮູບຮ່າງຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສະມາຊິກຄອບຄົວຜູ້ຕິດຕາມມານຳ;
- ເອກະສານລະບຸຕົວຕົນ-ປະຈຳຕົວ ແລະ ການເດີນທາງ ແລະ ຂໍ້ມູນວີຊາ ລວມທັງລັດຕົ້ນທາງ, ລັດປາຍທາງ, ສັນຊາດ ແລະ ວັນໝົດອາຍຸ;
- ສະຖານທີ່ພັກໃນລັດປາຍທາງ;
- ຂໍ້ມູນການຕິດຕໍ່ລວມທັງ ເລກໂທລະສັບ ແລະ ທີ່ຢູ່ອີເມລຂອງລູກຈ້າງ ແລະ ສະມາຊິກຄອບຄົວທີ່ຕິດຕາມມານຳ ແລະ ຂໍ້ມູນການຕິດຕໍ່ກໍລະນີສຸກເສີນຢູ່ໃນລັດຕົ້ນທາງ ແລະ ລັດປາຍທາງ;
- ການສຳຮອງຂໍ້ມູນແບບເອເລັກໂຕຣນິກຂອງເອກະສານຕ່າງໆ ໂດຍສະເພາະເອກະສານການລະບຸຕົວຕົນ-ປະຈຳຕົວ.

## ອົງການຈັດຕັ້ງສາກົນ

### *ການສ້າງແຜນທີ່ການເຄື່ອນຍ້າຍຖິ່ນຖານ ແລະ ການຍົກຍ້າຍ*

ໂດຍສອດຄ່ອງກັບລະບຽບການ-ພາລະໜ້າທີ່ສະເພາະ ແລະ ຄວາມຊຳນິຊຳນານ, ອົງການຈັດຕັ້ງສາກົນຈະສາມາດສະໜັບສະໜູນລັດ ແລະ ຜູ້ມີສ່ວນຮ່ວມອື່ນໆໃນການເກັບກຳ ແລະ ວິເຄາະຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານ. ເຄື່ອງມື ແລະ ວິທີການໃນການສ້າງແຜນທີ່ການເຄື່ອນຍ້າຍຖິ່ນຖານ ແລະ ການຍົກຍ້າຍລວມມີ:

- ການຄົ້ນຄວ້າກ່ຽວກັບແນວໂນ້ມການເຄື່ອນຍ້າຍຖິ່ນຖານ;
- ລະບົບການລົງທະບຽນຜູ້ເຄື່ອນຍ້າຍຖິ່ນຖານ;
- ຂໍ້ມູນລວມກ່ຽວກັບຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ;
- ການສຳຫຼວດ ເຈດຕະນາໃນການຍົກຍ້າຍຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ກົນໄກການຕິດຕາມການເຄື່ອນຍ້າຍຖິ່ນຖານ;
- ການສ້າງກົນໄກທ້ອງຖິ່ນເພື່ອເກັບກຳຂໍ້ມູນ ໂດຍສະເພາະໃນພື້ນທີ່ງມີໂອກາດສູງໃນການເກີດໄພພິບັດທຳມະຊາດ;
- ການຮິບໂຮມ ແລະ ຮັກສາຖານຂໍ້ມູນກ່ຽວກັບການຍົກຍ້າຍຂ້າມແດນ;
- ການພັດທະນາບັນທັດຖານ ແລະ ຕົວຊີ້ວັດສະເພາະປະເທດເພື່ອວັດແທກການເຂົ້າເຖິງການບໍລິການຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການສ້າງແຜນທີ່ ແລະ ການປະເມີນຄວາມບອບບາງ-ຄວາມສ່ຽງສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ອາດກະທົບຕໍ່

ຄວາມທົນທານ-ຄວາມສາມາດປັບຕົວຂອງເຂົາເຈົ້າ ໃນກໍລະນີເກີດວິກິດ ເຊັ່ນ ອຸປະສັກທາງດ້ານພາສາ ແລະ ວັດທະນະທຳ, ສະຖານະການເຂົ້າເມືອງ ແລະ ການເຂົ້າເຖິງການບໍລິການດ້ານສັງຄົມ;

- ສ້າງຕັ້ງ ແລະ ນໍາພາຄະນະສະເພາະກິດຫຼາຍຝ່າຍແຫ່ງຊາດ ຫຼື ພາກພື້ນ ເພື່ອຕິດຕາມ ການຍົກຍ້າຍພາຍໃນປະເທດ ແລະ ຂ້າມຊາຍແດນ.

### *ກົນໄກການເຂົ້າເຖິງ-ການຊ່ວຍເຫຼືອຂອງຜູ້ມີສ່ວນຮ່ວມ*

ໂດຍສອດຄ່ອງກັບລະບຽບການ-ພາລະໜ້າທີ່ສະເພາະ ແລະ ຄວາມຊຳນິຊຳນານ, ອົງການຈັດຕັ້ງສາກົນຈະສາມາດເຂົ້າເຖິງຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງເພື່ອແບ່ງປັນຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານ. ວິທີການດັ່ງກ່າວນີ້ອາດລວມມີ:

- ການສ້າງແຜນທີ່ ແລະ ການເຂົ້າເຖິງ ສະຖານກົງສຸນ;
- ການສ້າງແຜນທີ່ ແລະ ການເຂົ້າເຖິງຜູ້ມີສ່ວນຮ່ວມຈາກອົງການຈັດຕັ້ງສັງຄົມທີ່ກ່ຽວຂ້ອງລວມທັງ ສະມາຄົມຜູ້ເຄື່ອນຍ້າຍຖິ່ນຖານ;
- ການສ້າງແຜນທີ່ ແລະ ການເຂົ້າເຖິງຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານ; ກຸ່ມ ແລະ ສະມາຄົມອຸດສາຫະກຳພາກເອກະຊົນ;
- ສ້າງກົນໄກການແບ່ງປັນຂໍ້ມູນ;
- ສ້າງ ແລະ ປັບປຸງ-ອັບເດດບັນຊີລາຍຊື່ຜູ້ຕິດຕໍ່ຢ່າງເປັນປົກກະຕິ.

## ອົງການຈັດຕັ້ງສັງຄົມ

### *ເຄື່ອງມືເພື່ອສົ່ງເສີມໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສະໜອງຂໍ້ມູນໂດຍກົງ*

ຜູ້ມີສ່ວນຮ່ວມຈາກອົງການຈັດຕັ້ງສັງຄົມໃນທ້ອງຖິ່ນທີ່ໃກ້ຊິດກັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ເຄີຍໄດ້ສ້າງຄວາມໄວ້ເນື້ອເຊື່ອໃຈ ອາດຈະມີຂໍ້ມູນຫຼາຍກວ່າ ຫຼື ຢູ່ໃນຖານະທີ່ສາມາດຮັບໂຮມຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານໄດ້ດີກວ່າ ໂດຍສະເພາະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ຢູ່ແບບຫລົບລີ້ ຫຼື ແບບໂດດດ່ຽວ ແລະ ກຸ່ມທີ່ບອບບາງ-ມີຄວາມສ່ຽງອື່ນໆ. ກິດຈະກຳເພື່ອເກັບກຳຂໍ້ມູນກ່ຽວກັບຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານລວມມີ:

- ການສ້າງແຜນທີ່ ກຸ່ມທີ່ຊອກຫາ-ເຂົ້າຫາຍາກ ແລະ ກຸ່ມບອບບາງ-ມີຄວາມສ່ຽງອື່ນໆ ລວມທັງ ເດັກນ້ອຍ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ, ຜູ້ເຄື່ອນຍ້າຍຖິ່ນຖານໃນສູນກັກຂັງ ແລະ ແຮງງານທີ່ຖືກຂູດຮີດ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;
- ສ້າງຕັ້ງກຸ່ມຂະໜາດນ້ອຍທີ່ເລັ່ງໃສ່ພາສາ ແລະ ກຸ່ມວັດທະນະທຳສ່ວນໜ້ອຍ ແລະ ກຸ່ມທີ່ສັນໂດດ;
- ການສ້າງແຜນທີ່ເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ;
- ການຢ້ຽມຢາມແຕ່ລະເຮືອນ ແລະ ຮູບແບບການລົງຮາກຖານອື່ນໆ;
- ການສຳພາດຜູ້ນຳພາ, ຜູ້ຕາງໜ້າຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ທີ່ມີຂໍ້ມູນຫຼັກໆ.

## ພາກປະຕິບັດເພື່ອນຳໃຊ້ ແນວທາງປະຕິບັດ 3:
## ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານໃຫ້ສາມາດຊ່ວຍຕົວເອງ, ຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າໃນໄລຍະ ແລະ ພາຍຫຼັງວິກິດການ

**ຜູ້ມີສ່ວນຮ່ວມຫຼາຍຝ່າຍ**

*ການສື່ສານໃນດ້ານບວກກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານ*

ຜູ້ເຄື່ອນຍ້າຍຖິ່ນຖານອາດພົບພໍ້ກັບການຈຳແນກ, ຄວາມບໍ່ເປັນມິດ ແລະ ຄວາມຢ້ານກົວຊາວຕ່າງຊາດໃນລັດປາຍທາງ ແລະ ລັດທາງຜ່ານ. ການສື່ສານໃນທາງບວກກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານຈະສົ່ງເສີມ ຄວາມອົດທົນ, ການບໍ່ຈຳແນກ, ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມ ແລະ ການເຄົາລົບຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ. ວິທີການສື່ສານໃນທາງບວກກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານລວມມີ:

- ການໃຫ້ຂໍ້ມູນກ່ຽວກັບ ຜູ້ເຄື່ອນຍ້າຍຖິ່ນຖານຕົວແບບ, ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດອອກຄວາມເຫັນ ແລະ ການຍົກໃຫ້ເຫັນວ່າການເຄື່ອນຍ້າຍຖິ່ນຖານເປັນບັນຫາຂອງມະນຸດ;
- ການເຜີຍແຜ່ ແລະ ປູກຈິດສຳນຶກກ່ຽວກັບການຕ້ານຄວາມຮູ້ສຶກຢ້ານກົວຕໍ່ຊາວຕ່າງຊາດ;
- ການຖ່າຍທອດເລື່ອງ ແລະ ຮູບພາບໃນທາງບວກຂອງຜູ້ເຄື່ອນຍ້າຍຖິ່ນຖານລວມທັງ ຜ່ານຊ່ອງທາງຕ່າງໆທາງອອນໄລນ໌;
- ຮ່ວມມືກັບບໍລິສັດສື່ສັງຄົມອອນໄລນ໌ເພື່ອຕອບໂຕ້ກັບບົດຄວາມ-ບົດກ່າວທີ່ສອດແຊກຄວາມກຽດຊັງ;
- ການໃຫ້ຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການເຄື່ອນຍ້າຍຖິ່ນຖານໂດຍ ເລັ່ງໃສ່ວິຊາການໆສຶກສາໃນໂຮງຮຽນ;
- ການຍົກໃຫ້ເຫັນການມີສ່ວນຮ່ວມຂອງຜູ້ເຄື່ອຍ້າຍຖິ່ນຖານໃນຊຸມຊົນ, ການຮັບມື ແລະ ການຟື້ນຟູຈາກພາວະວິກິດ;
- ຫຼີກເວັ້ນການເອີ້ນ ຫຼື ກ່າວເຖິງຜູ້ເຄື່ອນຍ້າຍຖິ່ນຖານວ່າ 'ຜິດກົດໝາຍ' ເຖິງແມ່ນວ່າເຂົາເຈົ້າຈະຢູ່ໃນສະຖານະຄົນເຂົ້າເມືອງແບບບໍ່ໄດ້ລົງທະບຽນກໍຕາມ;
- ສະເຫຼີມສະຫຼອງວັນຜູ້ເຄື່ອນຍ້າຍຖິ່ນຖານສາກົນ ດ້ວຍກິດຈະກຳທີ່ຍົກໃຫ້ເຫັນການປະກອບສ່ວນໃນທາງບວກຂອງຜູ້ເຄື່ອນຍ້າຍຖິ່ນຖານຕໍ່ ສັງຄົມເຈົ້າພາບ-ປະເທດປາຍທາງ.

*ການປະຖົມນິເທດກ່ອນ ແລະ ຫຼັງການອອກເດີນທາງ*

ການປະຖົມນິເທດສຳລັບຜູ້ເຄື່ອນຍ້າຍຖິ່ນຖານອາດຈັດກ່ອນເຂົາເຈົ້າອອກເດີນທາງຈາກປະເທດຕົ້ນທາງ ຫຼື ພາຍຫຼັງທີ່ເດີນທາງມາຮອດລັດປາຍທາງ. ການປະຖົມນິເທດອາດເຮັດເປັນແບບສະໝັກໃຈ ຫຼື ພາກບັງຄັບສຳລັບຜູ້ເຄື່ອນຍ້າຍຖິ່ນຖານ. ການປະຖົມນິເທດອາດເຮັດໂດຍເລັ່ງໃສ່ຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄອບຄົວຂອງເຂົາເຈົ້າ ໂດຍຈັດຮ່ວມກັບຜູ້ມີສ່ວນຮ່ວມອື່ນໆ. ການປະຖົມນິເທດເຫຼົ່ານີ້ອາດກວມເອົາ:

- ຂໍ້ມູນສະເພາະລັດປາຍທາງ ລວມທັງວັດທະນະທຳ ແລະ ຮີດຄອງປະເພນີທ້ອງຖິ່ນ;
- ຈຸດສ່ຽງໃນການເກີດຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ ໃນລັດປາຍທາງ;
- ສະພາບດ້ານສິດທິມະນຸດຢູ່ໃນລັດປາຍທາງ ແລະ ຄວາມຫຍຸ້ງຍາກໃນການນຳໃຊ້ສິດທິຕ່າງໆຢ່າງເຕັມທີ່;
- ຄວາມສ່ຽງຂອງການຄ້າມະນຸດ ແລະ ການຂູດຮີດຢູ່ໃນລັດປາຍທາງ ແລະ ບ່ອນຂໍຄວາມຊ່ວຍເຫຼືອໄດ້;
- ກົດໝາຍການເຂົ້າເມືອງ, ການຈ້າງງານ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງຂອງລັດປາຍທາງ;
- ລະບຽບຂັ້ນຕອນໃນພາວະສຸກເສີນທີ່ກ່ຽວຂ້ອງ (ເຊັ່ນ ບ່ອນທີ່ຕ້ອງໄປ ແລະ ສິ່ງທີ່ຕ້ອງເຮັດ) ແລະ ຂໍ້ມູນການຕິດ

ຕໍ່ໃນກໍລະນີສຸກເສີນ;
- ໜ້າທີ່ຫຼັກຂອງສຖານກົງສຸນ ແລະ ແຜນການສໍາຄັນ ແລະ ແຜນການຍົກຍ້າຍຂອງກົງສຸນທີ່ກ່ຽວຂ້ອງ.

### *ການຮຽນຮູ້ລະຫວ່າງຜູ້ເຄື່ອນຍ້າຍຖິ່ນຖານນໍາກັນ*

ຜ່ານແຜນງານການຮຽນຮູ້ລະຫວ່າງຜູ້ເຄື່ອນຍ້າຍຖິ່ນຖານນໍາກັນ ທີ່ຈັດຕັ້ງປະຕິບັດກ່ອນ ຫຼື ຫຼັງເດີນທາງມາຮອດລັດປາຍທາງ, ຜູ້ເຄື່ອນຍ້າຍຖິ່ນຖານກໍຈະມີຄວາມຮູ້ ແລະ ທັກສະເພື່ອໃຫ້ເຂົາເຈົ້າມີຄວາມພ້ອມ ແລະ ຫລຸດຜ່ອນຄວາມສ່ຽງທີ່ຕິດພັນກັບວິກິດການ. ແຜນງານເຫຼົ່ານີ້ອາດກວມເອົາຫຼາກຫຼາຍຂົງເຂດຂອງການກະກຽມຄວາມພ້ອມ ແລະ ການຄຸ້ມຄອງວິກິດການ ແລະ ຊຸກຍູ້ຊັກຊວນໃຫ້ຜູ້ເຄື່ອນຍ້າຍຖິ່ນຖານທີ່ເຂົ້າຮ່ວມແຜນງານໃຫ້ກາຍມາເປັນຜູ້ຖ່າຍທອດຄວາມຮູ້ (ຜູ້ໄປສຶກສາອົບຮົມໃຫ້ຜູ້ອື່ນຕໍ່). ແຜນງານຮຽນຮູ້ລະຫວ່າງຜູ້ເຄື່ອນຍ້າຍຖິ່ນຖານນໍາກັນອາດເປັນປະໂຫຍດດັ່ງຕໍ່ໄປນີ້:

- ເພື່ອເຂົ້າເຖິງໄວໜຸ່ມ, ແມ່ຍິງ ແລະ ກຸ່ມທີ່ມີວັດທະນະທໍາທີ່ອາດສ້າງອຸປະສັກ ແລະ ກຸ່ມທີ່ມີປະສົບການ ຫຼື ຄວາມເຈັບຊໍ້າດ້ານຈິດໃຈທີ່ຄ້າຍຄືກັນ;
- ກໍລະນີມີແຫຼ່ງທຶນທີ່ຈໍາກັດ ຫຼື ບໍ່ມີເລີຍ;
- ໃນຊຸມຊົນປິດ ຫຼື ໂດດດ່ຽວ;
- ເມື່ອຜູ້ເຄື່ອນຍ້າຍຖິ່ນຖານບໍ່ສາມາດຮັບຂໍ້ມູນຈາກຜູ້ມີສ່ວນຮ່ວມອື່ນໆທີ່ບໍ່ແມ່ນຜູ້ເຄື່ອນຍ້າຍຖິ່ນຖານນໍາກັນ ຍ້ອນເຫດຜົນຕ່າງໆນາໆລວມທັງ ອຸປະສັກທາງດ້ານພາສາ;
- ກໍລະນີທີ່ຜູ້ເຄື່ອນຍ້າຍຖິ່ນຖານມີຄວາມຫຍຸ້ງຍາກດ້ານການເດີນທາງເພື່ອໄປຮ່ວມແຜນງານທີ່ເປັນທາງການກວ່າ ເຊັ່ນຍ້ອນຂໍ້ຈໍາກັດດ້ານວິຊາ, ຄວາມຫຍຸ້ງຍາກດ້ານການເງິນ ຫຼື ສະພາບການເຮັດວຽກທີ່ມີຂໍ້ຈໍາກັດ ຫຼື ຄວາມຮຽກຮ້ອງຕ້ອງການຈາກເຂົ້າເຈົ້າສູງ.

### *ການຝຶກອົບຮົມດ້ານພາສາ*

ການຝຶກອົບຮົມດ້ານພາສາໃນທ້ອງຖິ່ນສາມາດເຮັດໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີຄວາມທົນທານກວ່າເກົ່າໃນເຫດການວິກິດດ້ວຍການປັບປຸງຄວາມອາດສາມາດຂອງເຂົາເຈົ້າໃນການເຂົ້າເຖິງຂໍ້ມູນ ແລະ ການບໍລິການ. ຫຼັກສູດດັ່ງກ່າວອາດສອນ:

- ຄໍາສັບທີ່ຈໍາເປັນໃນການເຂົ້າໃຈການແຈ້ງເຕືອນລ່ວງໜ້າກ່ຽວກັບໄພພິບັດທໍາມະຊາດ ຫຼື ຄວາມຂັດແຍ່ງ ຫຼື ສໍານວນພາສາທີ່ນໍາໃຊ້ໃນລັດປາຍທາງ;
- ຄໍາສັບທີ່ຈໍາເປັນເພື່ອເຂົ້າໃຈຄໍາແນະນໍາ ທີ່ມີຢູ່ໃນການແຈ້ງເຕືອນລ່ວງໜ້າໃນພາວະສຸກເສີນ;
- ຂໍ້ມູນກ່ຽວກັບແຫຼ່ງຂໍ້ມູນການແຈ້ງເຕືອນໄພລ່ວງໜ້າ ແລະ ຂໍ້ມູນການກະກຽມຄວາມພ້ອມເພື່ອຮັບມືກັບພາວະສຸກເສີນ.

### *ການຝຶກອົບຮົມຄວາມຮູ້ກ່ຽວກັບການເງິນ*

ການຄຸ້ມຄອງຊັບພະຍາກອນ ແລະ ວຽກງານການເງິນທີ່ດີຈະຍົກສູງຊັບພະຍາກອນທີ່ຜູ້ເຄື່ອນຍ້າຍຖິ່ນຖານຈະມີໄວ້ໃນເຫດວິກິດ. ໃນເວລາອອກແບບຫຼັກການການຝຶກອົບຮົມສໍາລັບຜູ້ເຄື່ອນຍ້າຍຖິ່ນຖານ, ຜູ້ມີສ່ວນຮ່ວມສາມາດ:

- ຮ່ວມມືກັບທະນາຄານ ແລະ ສະຖາບັນການເງິນອື່ນໆ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ;
- ການເລັ່ງການຝຶກອົບຮົມໃຫ້ເໝາະສົມກັບຂໍ້ມູນ ແລະ ລັກສະນະຂອງປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຕ້ອງການແຕກຕ່າງກັນ;

- ການຄຸ້ມຄອງຂອງປະກັນໄພ ແລະ ໃຫ້ທາງເລືອກຕ່າງໆໃນການທ້ອນເງິນ;
- ຂໍຄວາມຊ່ວຍເຫຼືອຈາກອົງການຈັດຕັ້ງສັງຄົມລວມທັງ ເຄືອຂ່າຍ ແລະ ສະມາຄົມຜູ້ເຄື່ອນຍ້າຍຖິ່ນຖານ ເພື່ອຊຸກຍູ້ການເຂົ້າຮ່ວມການຝຶກອົບຮົມ;
- ໝູນໃຊ້ປະໂຫຍດຈາກ ການໂຄສະນາປູກຈິດສໍານຶກທີ່ມີຢູ່ຂອງລັດຖະບານແຫ່ງຊາດ ແລະ ກົງສຸນ ເພື່ອສົ່ງເສີມຄວາມໝັ້ນຄົງດ້ານການເງິນ ແລະ ການປົກປ້ອງຜູ້ບໍລິໂພກ;
- ຮ່ວມມືກັບອົງການຈັດຕັ້ງສັງຄົມ ຢູ່ໃນລັດຕົ້ນທາງເພື່ອດໍາເນີນການຝຶກອົບຮົມເສີມໃຫ້ກັບຄອບຄົວຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຍັງອາໄສຢູ່ລັດຕົ້ນທາງ.

### *ຜະລິດຕະພັນ ແລະ ການບໍລິການດ້ານການເງິນ*

ຜະລິດຕະພັນ ແລະ ການບໍລິການດ້ານການເງິນທີ່ເລັ່ງໃສ່ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານລວມທັງ ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີລາຍໄດ້ຕໍ່າ ແມ່ນສາມາດສ້າງຄວາມທົນທານ ແລະ ຫລຸດຜ່ອນການເອື່ອຍອີງໃສ່ ການບໍລິການທາງດ້ານສັງຄົມ ແລະ ການຊ່ວຍເຫຼືອດ້ານມະນຸດສະທໍາ. ຜະລິດຕະພັນທາງດ້ານການເງິນແມ່ນສາມາດສະໜອງໃນລັດປາຍທາງ ຫຼື ລັດຕົ້ນທາງ. ຜະລິດຕະພັນທາງດ້ານການເງິນທີ່ກ່ຽວຂ້ອງລວມມີ:

- ປະກັນໄພ ແລະ ປະກັນໄພຈຸລະພາກ ເຊິ່ງຈະອະທິບາຍໂດຍລະອຽດຂ້າງລຸ່ມນີ້;
- ກົນໄກການທ້ອນເງິນ ແລະ ການລົງທຶນ;
- ແຜນງານບໍານານ;
- ເງິນກູ້ຢືມຮີບດ່ວນ;
- ສິນເຊື່ອຈຸລະພາກ.

ໃນການອອກແບບ ແລະ ກະຈາຍຜະລິດຕະພັນ, ຜູ້ມີສ່ວນຮ່ວມອາດພິຈາລະນາ:

- ສ້າງຜະລິດຕະພັນດ້ານການເງິນທີ່ເປັນປະໂຫຍດໃນເວລາປົກກະຕິ ແລະ ໃນພາວະວິກິດ;
- ຜະລິດຕະພັນມີຄວາມຍືດຍຸ່ນ, ໃນລາຄາທີ່ຈັບຕ້ອງໄດ້, ສະດວກສະບາຍ ແລະ ນໍາໃຊ້ງ່າຍ;
- ຕ້ອງເລັ່ງໃສ່ການຕອບສະໜອງຄວາມຕ້ອງການໃດໜຶ່ງຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ເຮັດວຽກຮ່ວມກັນກັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງເພື່ອສ້າງຄວາມເຂົ້າໃຈກ່ຽວກັບຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການປັບເງື່ອນໄຂດ້ານເອກະສານໃຫ້ເໝາະສົມກັບຜູ້ເຄື່ອນຍ້າຍຖິ່ນຖານ;
- ສົ່ງເສີມຜະລິດຕະພັນທີ່ເຂົ້າເຖິງໄດ້ໃນເວລາຂ້າມແດນ (ນໍາໃຊ້ໄດ້ຢູ່ຕ່າງປະເທດ) ແລະ ຜະລິດຕະພັນທີ່ເຂົ້າເຖິງໄດ້ໄວໃນພາວະວິກິດ;
- ນໍາໃຊ້ຊ່ອງທາງການກະຈາຍຜະລິດຕະພັນແບບໃໝ່ເພື່ອເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານລວມທັງການ ຮ່ວມມືກັບຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານ, ຊຸມຊົນໃນລັດຕົ້ນທາງ ຫຼື ຜູ້ອົບພະຍົບ;
- ການສຶກສາອົບຮົມ ແລະ ການຝຶກອົບຮົມໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານກ່ຽວກັບ ການບໍລິການດ້ານການເງິນທີ່ມີ, ການນໍາໃຊ້ ແລະ ຜົນປະໂຫຍດຂອງການບໍລິການດັ່ງກ່າວ.

### *ປະກັນໄພ ແລະ ປະກັນໄພຈຸລະພາກ*

ປະກັນໄພອາດມີບົດບາດສໍາຄັນໃນການຫລຸດຜ່ອນຄວາມສ່ຽງຂອງຜູ້ເຄື່ອນຍ້າຍຖິ່ນຖານໃນໄລຍະກ່ອນ, ເວລາວິກິດ ແລະ ພາຍຫຼັງເກີດວິກິດການ. ປະກັນໄພສາມາດຄຸ້ມກັນຄວາມຕ້ອງການສະເພາະໃນຍາມວິກິດເຊັ່ນ ຄ່າເສຍຫາຍຕໍ່ຊັບສິນ ຫຼື ຄ່າອົບພະຍົບ ແລະ ສາມາດສະໜັບສະໜູນຄວາມຕ້ອງການໂດຍລວມໃນການຄຸ້ມຄອງຄວາມສ່ຽງຂອງຜູ້ເຄື່ອນຍ້າຍຖິ່ນຖານ ເຊັ່ນ ການຮັກສາສຸຂະພາບ, ການເສຍຊີວິດ, ການພິການ ຫຼື ການຫວ່າງງານ. ໃນການອອກແບບ ແລະ ກະຈາຍຜະລິດຕະ

ພັນ, ຜູ້ມີສ່ວນຮ່ວມອາດພິຈາລະນາ:

- ດໍາເນີນການຄົ້ນຄວ້າສໍາຫຼວດເພື່ອລະບຸຄວາມສ່ຽງທີ່ພົ້ນເດັ່ນ, ຊ່ອງທາງ ຫຼື ວິທີການກະຈາຍຜະລິດຕະພັນຢ່າງມີປະສິດທິຜົນ ແລະ ຂໍ້ມູນ ກໍຄື ການສະໜັບສະໜູນທີ່ຜູ້ເຄື່ອນຍ້າຍຕ້ອງການເພື່ອໃຫ້ຕົນໄດ້ຮັບຜົນປະໂຫຍດທີ່ສົມຄວນໄດ້ຮັບ;
- ຮູບແບບຜະລິດຕະພັນປະກັນໄພໃດທີ່ຈະນໍາໃຊ້: ຜະລິດຕະພັນປະກັນໄພທີ່ຢູ່ໃນລັດປາຍທາງຂອງຜູ້ເຄື່ອນຍ້າຍຖິ່ນຖານ, ໃນລັດຕົ້ນທາງ ຫຼື ຮູບແບບປະສົມປະສານທີ່ກວມເອົາທັງ ລັດປາຍທາງ ແລະ ລັດຕົ້ນທາງ;
- ຮູບແບບການສົ່ງມອບ-ການຂາຍປະກັນໄພທີ່ຈະນໍາໃຊ້: ຂາຍໂດຍກົງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ, ໃຫ້ແກ່ລັດຕົ້ນທາງ ຫຼື ລັດປາຍທາງ ຫຼື ໃຫ້ແກ່ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານ;
- ຈຸດດີຈຸດເສຍຂອງຜະລິດຕະພັນທີ່ມີໃຫ້ເລືອກໃນດ້ານການອອກແບບ ແລະ ການຂາຍ-ການສົ່ງມອບ ແລະ ການຄຸ້ມຄອງ ແລະ ທາງເລືອກການຂາຍ-ການສົ່ງມອບມີອິດທິພົນຕໍ່ກັນແນວໃດ;
- ຜົນປະໂຫຍດຂອງຜະລິດທີ່ພັນຂະໜາດນ້ອຍ, ສະດວກສະບາຍ ແລະ ໃນລາຄາທີ່ຈັບຕ້ອງໄດ້ ໃນເວລາທີ່ຂາຍໂດຍກົງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ;
- ວິທີການຕິດຕາມປະສິດທິຜົນຂອງຜະລິດຕະພັນປະກັນໄພ.

## ລັດ

### *ການເຄົາລົບກົດໝາຍສາກົນລວມທັງ ກົດໝາຍສາກົນດ້ານສິດທິມະນຸດ ແລະ ກົດໝາຍສາກົນດ້ານແຮງງານ*

ການເຄົາລົບ, ການປົກປ້ອງ ແລະ ການຕອບສະໜອງສິດທິມະນຸດ ແລະ ສິດທິດ້ານແຮງງານຂອງຜູ້ເຄື່ອນຍ້າຍຖິ່ນຖານຢ່າງສົມບູນ ຈະສົ່ງເສີມຄວາມເຂັ້ມແຂງຂອງເຂົາເຈົ້າ ເຊິ່ງສາມາດເຮັດໄດ້ໂດຍ:

- ການສັດຕະຍາບັນ ສົນທິສັນຍາສາກົນ ແລະ ພາກພື້ນທີ່ກ່ຽວຂ້ອງ;
- ການຮັບຮອງນໍາໃຊ້ ຫຼື ປະຕິຮູບ ກົດໝາຍພາຍໃນປະເທດທີ່ຈໍາເປັນ ເພື່ອຈັດຕັ້ງປະຕິບັດຂໍ້ບັງຄັບທີ່ກ່ຽວຂ້ອງກັບກົດໝາຍສາກົນລວມທັງ ກົດໝາຍສິດທິມະນຸດ ແລະ ກົດໝາຍແຮງງານ;
- ການປະຕິບັດໃນຕົວຈິງໃຫ້ສອດຄ່ອງກັບ ຂໍ້ບັງຄັບ-ພັນທະສາກົນ ໃນຂັ້ນແຫ່ງຊາດ ແລະ ທ້ອງຖິ່ນ;
- ແກ້ໄຂ ແລະ ຫລຸດຜ່ອນອຸປະສັກທີ່ກີດຂວາງຄວາມອາດສາມາດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການນໍາໃຊ້ສິດຂອງເຂົາເຈົ້າຢ່າງເຕັມທີ່;
- ການລົງທຶນໃສ່ການຝຶກອົບຮົມ, ການຕິດຕາມ ແລະ ການບັງຄັບໃຊ້ລະບຽບກົດໝາຍເພື່ອສົ່ງເສີມການປະຕິບັດທີ່ສອດຄ່ອງກັບລະບຽບກົດໝາຍ.

### *ການປະຕິບັດການດ້ານກົດໝາຍ ແລະ ນະໂຍບາຍສະເພາະ ທີ່ສົ່ງເສີມຄວາມທົນທານ-ຄວາມສາມາດປັບຕົວຂອງຜູ້ເຄື່ອນຍ້າຍຖິ່ນຖານ*

ມີການປະຕິບັດອື່ນໆລວມທັງການຮັບຮອງນໍາໃຊ້ບົດບັນຍັດໃນກົດໝາຍສະເພາະ ທີ່ສາມາດສົ່ງເສີມຄວາມເຂັ້ມແຂງຂອງຜູ້ເຄື່ອນຍ້າຍຖິ່ນຖານ ເຊັ່ນ ບົດບັນຍັດ-ຂໍ້ກໍານົດທີ່ລວມມີ:

- ການລະບຸໃຫ້ຊັດເຈນ ຄວາມຮັບຜິດຊອບໃນການເບິ່ງແຍງ ແລະ ພັນທະ-ຂໍ້ບັງຄັບອື່ນໆຂອງຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານ ລວມທັງໃນໄລຍະເກີດວິກິດ ຕໍ່ ຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນລູກຈ້າງໃນການຈ້າງງານລະດັບຊາດ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ ລວມທັງໃນໄລຍະເກີດວິກິດ;
- ການສະໜັບສະໜູນສິດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການພົວພັນ, ຈັດແຈງ ແລະ ເຂົ້າຮ່ວມ ສະຫະພາບ ຫຼື ສະມາຄົມຕ່າງໆ;
- ການສະໜັບສະໜູນສິດຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອົງການຈັດຕັ້ງສັງຄົມໃນການສ້າງ, ລົງທະບຽນ ແລະ ດໍາເນີນການຂອງອົງການຈັດຕັ້ງ ແລະ ສະມາຄົມຕ່າງໆ.

### *ຂະບວນການຈັດຫາງານທີ່ມີຈັນຍາບັນ ແລະ ຍຸຕິທຳ*

ລັດສາມາດວາງມາດຕະການເພື່ອຊ່ວຍຮັບປະກັນວ່າ ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານນັ້ນ ຈະເຄົາລົບສິດທິມະນຸດ ແລະ ຫຼີກເວັ້ນຈາກການປະຕິບັດທີ່ອາດເຮັດໃຫ້ແຮງງານຍົກຍ້າຍ ແລະ ຄອບຄົວຂອງເຂົາເຈົ້າຕົກໃນສະຖານະການບອບບາງ-ສ່ຽງ. ມາດຕະການເພື່ອສ້າງຂະບວນການຈັດຫາງານທີ່ມີຈັນຍາບັນ ແລະ ຍຸຕິທຳລວມມີ:

- ແນວທາງກ່ຽວກັບຄວາມຮັບຜິດຊອບໃນການຈ່າຍຄ່າທຳນຽມການຈັດຫາງານລວມທັງ ຂໍ້ຫ້າມບໍ່ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານຈ່າຍຄ່າທຳນຽມເຫຼົ່ານີ້;
- ແຜນງານໃຫ້ໃບຢັ້ງຢືນ ແລະ ໃບປະກາດຮັບຮອງຄຸນນະພາບ ແລະ ຄວາມຊື່ສັດໃນການຈ້າງງານ ແລະ ຈັດຫາງານ;
- ສົ່ງເສີມ ແລະ ການເຂົ້າຮ່ວມແຜນງານໃຫ້ໃບຢັ້ງຢືນໃນການຈັດຫາງານສາກົນ;
- ສ້າງບັນຊີລາຍຊື່ ແລະ ລະບົບການຈັດອັນດັບ ອີງການຈັດຫາງານ;
- ການສ້າງກົນໄກການໃຫ້ຄວາມເຫັນ ແລະ ການຮ້ອງທຸກສຳລັບແຮງງານເຄື່ອນຍ້າຍ;
- ຄຳສັ່ງ ໃຫ້ໂຈະການຈັດຫາງານ ແລະ ຈັດຫາແຮງງານຍ້ອນສະພາບການອັນຕະລາຍເກີນໄປ ແລະ ເມື່ອໃດທີ່ຈະສາມາດກັບຄືນມາດຳເນີນງານດັ່ງກ່າວ;
- ການຮັບຮອງນຳໃຊ້ກົດໝາຍຕ່າງໆ ກ່ຽວກັບ ຄ່າປັບໄໝທາງດ້ານອາຍາ, ທາງແພ່ງ ຫຼື ດ້ານການບໍລິຫານຕໍ່ ຜູ້ຈັດຫາງານທີ່ເຮັດຜິດກົດໝາຍ ຫຼື ບໍ່ມີຈັນຍາບັນ.

### *ກົດໝາຍກ່ຽວກັບໜ້າທີ່ໃນການເບິ່ງແຍງ ສຳລັບຜູ້ຈ້າງງານ, ຜູ້ຈັດຫາງານ, ໜ່ວຍງານຈັດຫາແຮງງານ ແລະ ຜ່ານຕ່ອງໂສ້ການສະໜອງ*

ລັດສາມາດໃຫ້ຄວາມກະຈ່າງແຈ້ງກ່ຽວກັບໜ້າທີ່ໃນການເບິ່ງແຍງລູກຈ້າງໂດຍກຳນົດ ໃນກົດໝາຍຈ້າງງານແຫ່ງຊາດ ເຊິ່ງກ່ຽວຂ້ອງສະເພາະກັບຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານ ເປັນຕົ້ນ. ກົດໝາຍດັ່ງກ່າວສາມາດກຳນົດ:

- ແນວທາງກ່ຽວກັບການນຳໃຊ້ ຫຼັກການໆເບິ່ງແຍງປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ;
- ແນວທາງກ່ຽວກັບການນຳໃຊ້ ຫຼັກການໆເບິ່ງແຍງ ໃນເວລາບຸກຄົນຖືກມອບໝາຍໃຫ້ໄປປະຈຳການຢູ່ຕ່າງປະເທດ;
- ແນວທາງກ່ຽວກັບ ເວລາ ແລະ ສະຖານະການໃດໜຶ່ງທີ່ສາມາດນຳໃຊ້ ຫຼັກການໆເບິ່ງແຍ່ງ ກັບ ສະມາຊິກຄອບຄົວຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ວິທີທາງແກ້ໄຂໃນເວລາມີການລະເມີດ ຫຼັກການໆເບິ່ງແຍງ;
- ການປັບໄໝ-ມາດຕະການລົງໂທດ ເມື່ອມີການລະເມີດຂໍ້ບັງຄັບ-ພັນທະໃນການເບິ່ງແຍງ.

### *ມາດຕະການເພື່ອຕິດຕາມສະພາບການຈ້າງງານ*

ລັດສາມາດຕິດຕາມການປະຕິບັດໃຫ້ສອດຄ່ອງກັບກົດໝາຍ ແລະ ມາດຕະຖານການຈ້າງງານຂອງຜູ້ຈ້າງງານ ເພື່ອລະບຸການລະເມີດຕ່າງໆ ແລະ ດຳເນີນການປະຕິຮູບຕາມຄວາມຈຳເປັນ. ລັດຄວນຕິດຕາມສະພາບການຈ້າງງານເພື່ອລະບຸ ແລະ ແກ້ໄຂ:

- ການເກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຈ້າງງານແບບບໍ່ສົມເຫດສົມຜົນເຮັດໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີໜີ້ສິນ;
- ການຍຶດໜັງສືເດີນທາງ ແລະ ເອກະສານລະບຸຕົວຕົນ-ປະຈຳຕົວ ແລະ ການເດີນທາງຕ່າງໆ;
- ລະດັບຄວາມອິດສະລະພາບ ແລະ ການເຄື່ອນຍ້າຍທີ່ໃຫ້ແກ່ແຮງງານເຄື່ອນຍ້າຍ ລວມທັງແຮງງານທີ່ເຮັດວຽກເປັນຄົນຮັບໃຊ້;

- ມາດຕະການດ້ານສຸຂະພາບ ແລະ ຄວາມປອດໄພທາງອາຊີບທີ່ມີເພື່ອຮັບປະກັນວ່າ ຜູ້ເຄື່ອນຍ້າຍຖິ່ນຖານໄດ້ຮັບຂໍ້ມູນກ່ຽວກັບລະບຽບຂັ້ນຕອນໃນພາວະສຸກເສີນ.

### *ຄວາມສາມາດໃນການໂອນເງິນສົມທົບປະກັນສັງຄົມ ແລະ ເງິນບໍານານ*

ເງິນສົມທົບປະກັນສັງຄົມ ແລະ ເງິນບໍານານຂອງຜູ້ເຄື່ອນຍ້າຍຖິ່ນຖານສ່ວນໃຫຍ່ແມ່ນໂອນບໍ່ໄດ້; ສະນັ້ນ ການບໍ່ສາມາດເຂົ້າເຖິງເງິນບໍານານ ແລະ ເງິນສົມທົບປະກັນສັງຄົມອາດເຮັດໃຫ້ຜູ້ເຄື່ອນຍ້າຍຖິ່ນຖານບໍ່ເຕັມໃຈ-ບໍ່ຕ້ອງການທີ່ຈະອອກຈາກລັດປາຍທາງເພື່ອຫາບ່ອນປອດໄພ ຫຼື ໃນທາງກັບກັນກໍ ມີຜົນກະທົບໃນດ້ານລົບ ຕໍ່ການກັບຄືນມາ, ການເຊື່ອມໂຍງຄືນສູ່ສັງຄົມ ຫຼື ການເຄື່ອນຍ້າຍຖິ່ນຖານຄືນໃໝ່. ຄວາມພະຍາຍາມໃນການຮັບປະກັນ ຄວາມສາມາດໃນການໂອນເງິນດັ່ງກ່າວລວມມີ:

- ການວາງມາດຕະການເພື່ອຊ່ວຍໃຫ້ເງິນສົມທົບປະກັນສັງຄົມ ແລະ ເງິນບໍານານຂອງລູກຈ້າງ (ບາງຄັ້ງເອີ້ນວ່າເງິນສົມທົບແບບມີກໍານົດ) ສາມາດໂອນໄດ້ໃນກໍລະນີຜູ້ເຄື່ອນຍ້າຍຖິ່ນຖານຫາກອອກຈາກລັດປາຍທາງເມື່ອເກີດພາວະວິກິດ;
- ຂໍ້ຕົກລົງສອງຝ່າຍລະຫວ່າງລັດຕົ້ນທາງ ແລະ ລັດປາຍທາງເພື່ອກໍານົດວິທີເຂົ້າເຖິງເງິນສົມທົບປະກັນສັງຄົມ ແລະເງິນບໍານານ ກໍລະນີທີ່ຜູ້ເຄື່ອນຍ້າຍຖິ່ນຖານຫາກອອກຈາກລັດປາຍທາງເມື່ອເກີດວິກິດ;
- ການອະນຸຍາດໃຫ້ເຂົ້າເຖິງເງິນບໍານານ ແລະ ເງິນສົມທົບປະກັນສັງຄົມຢູ່ນອກລັດປາຍທາງ;
- ການສະເໜີຄວາມຊ່ວຍເຫຼືອໃນການສົ່ງເງິນບໍານານ ແລະ ເງິນສົມທົບປະກັນສັງຄົມກັບຄືນໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ;
- ການສ້າງກອງທຶນທີ່ໃຫ້ການສະໜັບສະໜູນໃນການກະສຽນ ພ້ອມທັງ ການສຶກສາດ້ານການເງິນ, ທີ່ພັກອາໄສແລະ ການເບິ່ງແຍງສຸຂະພາບ ໃນເວລາທີ່ ຜູ້ເຄື່ອນຍ້າຍຖິ່ນຖານກັບຄືນມາລັດຕົ້ນທາງ;
- ຮັບປະກັນວ່າຜູ້ເຄື່ອນຍ້າຍຖິ່ນຖານທີ່ມີສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ ຈະສາມາດໄດ້ຮັບຜົນປະໂຫຍດຈາກການໂອນເງິນຕ່າງໆ.

### *ເອກະສານລະບຸຕົວຕົນ-ບັດປະຈໍາຕົວຜູ້ເຄື່ອນຍ້າຍຖິ່ນຖານທີ່ບໍ່ສະແດງສະຖານະພາບ*

ປະຊາຊົນອາດຕ້ອງສະແດງເອກະສານລະບຸຕົວຕົນ-ບັດປະຈໍາຕົວເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອ ແລະ ການບໍລິການໃນໄລຍະເກີດວິກິດການ ແຕ່ວ່າ ການມີ-ການສະແດງບັດປະຈໍາຕົວດັ່ງກ່າວອາດເປັນອຸປະສັກສໍາລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ບໍ່ໄດ້ຮັບອະນຸຍາດໃຫ້ອາໄສ ຫຼື ເຮັດວຽກໃນລັດປາຍທາງ. ລັດຕົ້ນທາງ ແລະ ລັດປາຍທາງສາມາດວາງຂໍ້ກໍານົດພິເສດສໍາລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ມີສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນເພື່ອໃຫ້ສາມາດໄປສະເໜີຂໍເອົາບັດປະຈໍາຕົວທີ່ບໍ່ລະບຸສະຖານະການເຂົ້າເມືອງຢູ່ໃນລັດປາຍທາງ ເຊິ່ງສາມາດເຮັດໄດ້ໂດຍ:

- ການອະນຸຍາດໃຫ້ສະຖານກົງສຸນເປັນຜູ້ອອກບັດ (ລັດຕົ້ນທາງ);
- ການຢັ້ງຢືນທີ່ຢູ່ອາໄສ ດ້ວຍເອກະສານທີ່ຢັ້ງຢືນການຈ່າຍຄ່າສາທາລະນຸປະໂພກ ແລະ ຄ່າເຊົ່າ ຫຼື ໜັງສືຢັ້ງຢືນຢ່າງເປັນລາຍລັກອັກສອນອື່ນໆ;
- ກົດໝາຍ ແລະ ນະໂຍບາຍທີ່ຮັບຮອງຄວາມຖືກຕ້ອງຂອງເອກະສານອື່ນໆທີ່ນໍາໃຊ້ສະເພາະການຂໍບັດປະຈໍາຕົວແລະ ການສະແດງບັດປະຈໍາຕົວດັ່ງກ່າວເພື່ອຂໍຄວາມຊ່ວຍເຫຼືອ ແລະ ການບໍລິການຕ່າງໆ.

ບັດປະຈໍາຕົວອາດປະກອບດ້ວຍ:

- ສິ່ງລະບຸບຸກຄົນຕາມຮູບຮ່າງໜ້າຕາ ຫຼື ລັກສະນະອື່ນໆ ເຊັ່ນ ຮູບ ຫຼື ລາຍມື;
- ຊື່ຂອງບຸກຄົນ;
- ຂໍ້ມູນພື້ນຖານດ້ານປະຊາກອນ ເຊັ່ນ ເພດ, ລວງສູງ ແລະ ວັນເດືອນປີເກີດ;

- ທີ່ຢູ່ ໃນລັດປາຍທາງ;
- ເຈົ້າໜ້າທີ່ ທີ່ສາມາດຢັ້ງຢືນການອອກບັດ;
- ຮູບສາມມິຕິ ຫຼື ລັກສະນະອື່ນໆທີ່ປ້ອງກັນການປອມແປງບັດ.

*ມາດຕະການເພື່ອອຳນວຍຄວາມສະດວກໃຫ້ແກ່ການບໍລິການດ້ານການເງິນ*

ລັດຕົ້ນທາງສາມາດສະໜັບສະໜູນການພັດທະນາຜະລິດຕະພັນດ້ານການເງິນທີ່ຕອບສະໜອງຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ ໂດຍຊຸກຍູ້ ການພັດທະນາຜະລິດຕະພັນການເງິນດັ່ງກ່າວ, ການສ້າງແຜນງານປະກັນສັງຄົມທີ່ລັດເປັນເຈົ້າການ ແລະ ການສະເໜີຜະລິດຕະພັນໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານໂດຍກົງ ເຊິ່ງອາດລວມມີ:

- ການສະໜອງທຶນການຄົ້ນຄວ້າ ແລະ ການສະໜັບສະໜູນແຜນງານທົດລອງເພື່ອທົດສອບຄວາມຄິດ ແລະ ພິສູດຄວາມເປັນໄປໄດ້ຂອງ ການບໍລິການ ແລະ ຜະລິດຕະພັນການເງິນ;
- ການສະໜັບສະໜູນກົນໄກເພື່ອໃຫ້ຜູ້ຈ້າງງານສົມທົບຕໍ່ເງິນທ້ອນ, ເງິນບໍານານ ແລະ ການຊື້ປະກັນໄພສໍາລັບຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະການເຂົ້າເມືອງທີ່ໄດ້ຈົດທະບຽນ ແລະ ບໍ່ໄດ້ຈົດທະບຽນ;
- ການບັງຄັບ ຫຼື ການໃຫ້ນະຍົບາຍເພື່ອການຊື້ ຫຼື ນໍາໃຊ້ຜະລິດຕະພັນ;
- ການຊື້ ຫຼື ການໃຫ້ເງິນອຸດໜູນ ຊື້ປະກັນໄພຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການເຮັດໜ້າທີ່ເປັນຜູ້ແບກຫາບຄວາມສ່ຽງ (ຄື ເປັນຜູ້ຮັບພາລະ ແລະ ຮັບຜິດຊອບຄວາມສ່ຽງ);
- ການເອື້ອອໍານວຍຄວາມສະດວກໃນການເຂົ້າເຖິງການບໍລິການຂ້າມແດນ;
- ການວາງລະບຽບການກະຈາຍເພື່ອເອື້ອອໍານວຍຄວາມເປັນໄປໄດ້ຂອງການກະຈາຍເຖິງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ;
- ການວາງລະບຽບການດ້ານເອກະສານທີ່ຈໍາເປັນສໍາລັບການເຂົ້າເຖິງ ຜະລິດຕະພັນ ແລະ ການບໍລິການດ້ານການເງິນ ທີ່ຜູ້ເຄື່ອນຍ້າຍຖິ່ນຖານສາມາດເຂົ້າເຖິງຫຼາຍກວ່າເກົ່າ ລວມທັງ ຜູ້ເຄື່ອນຍ້າຍຖິ່ນຖານທີ່ຢູ່ໃນສະຖານະຄົນເຂົ້າເມືອງທີ່ບໍ່ໄດ້ລົງທະບຽນ;
- ການວາງລະບຽບການດ້ານແຜນງານ ແລະ ແພັກເກັດປະກັນໄພສໍາລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ໃຫ້ສິດຜູ້ຊື້ປະກັນໄວ້ຢ່າງຕໍ່າສຸດ ໃຫ້ໄດ້ຮັບການຊ່ວຍເຫຼືອໃນການອົບພະຍົບ ແລະ ດ້ານການແພດໃນກໍລະນີເກີດວິກິດການ;
- ການກໍານົດເງື່ອນໄຂໃຫ້ແຮງງານເຄື່ອນຍ້າຍ ທີ່ເດີນທາງໄປຕ່າງປະເທດໃຫ້ມີປະກັນໄພທີ່ຄຸ້ມຄອງຄວາມສ່ຽງເຊັ່ນ ການເສຍຊີວິດ, ຄວາມພິການ ແລະ ຄ່າໃຊ້ຈ່າຍໃນການອົບພະຍົບ. ຄວາມຮັບຜິດຊອບໃນການຊື້ປະກັນໄພອາດຕົກຢູ່ກັບ ຜູ້ຈ້າງງານ, ຜູ້ຈັດຫາງານ, ໜ່ວຍງານຈັດຫາແຮງງານ ຫຼື ລູກຈ້າງ.

## ລັດຕົ້ນທາງ

*ການແຍກການບັງຄັບໃຊ້ກົດໝາຍການເຂົ້າເມືອງອອກຈາກ ການບໍລິການພາກລັດ*

ການແຍກການບັງຄັບໃຊ້ກົດໝາຍການເຂົ້າເມືອງອອກຈາກ ການເຂົ້າເຖິງການຊ່ວຍເຫຼືອ, ການບໍລິການດ້ານຍຸຕິທໍາ ແລະ ກົນໄກການຮ້ອງທຸກ ກໍຄືການປົກປ້ອງສິດໂດຍລວມ ຈະລົບລ້າງອຸປະສັກທີ່ທ່ວງດຶງການເຂົ້າເຖິງການຊ່ວຍເຫຼືອໃນພາວະວິກິດການ ໂດຍສະເພາະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ. ມາດຕະການທີ່ສາມາດຮັບຮອງນໍາໃຊ້ລວມມີ:

- ບົດບັນທຶກຄວາມເຂົ້າໃຈລະຫວ່າງຂະແໜງການລັດຖະບານເພື່ອຮັບປະກັນວ່າການລາຍງານກ່ຽວກັບການລະເມີດລະບຽບການດ້ານແຮງງານ ຈະບໍ່ນໍາໄປສູ່ຜົນເສຍຫາຍຈາກການບັງຄັບໃຊ້ລະບຽບກົດໝາຍການເຂົ້າເມືອງ;
- ບົດບັນຍັດ-ຂໍ້ກໍານົດທາງດ້ານກົດໝາຍທີ່ບັງຄັບໃຫ້ສາມາດເຂົ້າເຖິງການສຶກສາບໍ່ວ່າສະຖານະການເຂົ້າເມືອງຈະເປັນແນວໃດກໍຕາມ;

- ການເຂົ້າຫາ-ຊ່ວຍເຫຼືອລູກ ແລະ ຄອບຄົວຂອງຜູ້ເຄື່ອນຍ້າຍຖິ່ນຖານບໍ່ວ່າສະຖານະການເຂົ້າເມືອງຂອງເຂົາເຈົ້າຈະແມ່ນແນວໃດກໍຕາມ, ໃນການເອົາເດັກນ້ອຍເຂົ້າໂຮງຮຽນ, ສ້າງສະພາບແວດລ້ອມຄວາມເປັນປົກກະຕິພາຍຫຼັງເກີດວິກິດການ, ແລະ ຫລຸດຜ່ອນຄວາມສ່ຽງທີ່ສູງຂຶ້ນໃນການນຳໃຊ້ຄວາມຮຸນແຮງ ແລະ ການຂູດຮີດເດັກນ້ອຍໃນພາວະສຸກເສີນ;
- ບົດບັນຍັດ-ຂໍ້ກຳນົດທາງດ້ານກົດໝາຍທີ່ບັງຄັບໃຫ້ສາມາດເຂົ້າເຖິງການບໍລິການ ຮັກສາ ແລະ ປ້ອງກັນສຸຂະພາບທີ່ສຳຄັນຮີບດ່ວນບໍ່ວ່າສະຖານະການເຂົ້າເມືອງຈະເປັນແນວໃດກໍຕາມ;
- ການຫ້າມໃຫ້ຊັກຖາມກ່ຽວກັບສະຖານະພາບການເຂົ້າເມືອງໃນເວລາທີ່ຜູ້ເຄື່ອນຍ້າຍຖິ່ນຖານມາຂໍນຳໃຊ້ການບໍລິການ.

### *ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການກັກຂັງ*

ຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກັກຂັງຢູ່ລັດປາຍທາງຈະອີງໃສ່ເຈົ້າໜ້າທີ່ ສຳລັບຄວາມຕ້ອງການພື້ນຖານຂອງເຂົາເຈົ້າ. ຜູ້ລໍຖ້າທີ່ປັດສະຈາກແຜນການສຳຮອງທີ່ເໝາະສົມ, ຜູ້ຖືກກັກຂັງລວມທັງຜູ້ເຄື່ອນຍ້າຍທີ່ຖືກກັກຂັງ ອາດມີຄວາມສ່ຽງເພີ່ມທີ່ຈະຖືກປະຕິເສດຈາກການຮ້ອງຂໍຄວາມຊ່ວຍເຫຼືອພື້ນຖານເຊັ່ນອາຫານ, ນ້ຳ ແລະ ຢູກຢາໃນພາວະວິກິດໃນເວລາທີ່ຄວາມເອົາໃຈໃສ່ໄປຢູ່ທີ່ຂົງເຂດວຽກງານອື່ນ. ນອກຈາກນັ້ນເຂົາເຈົ້າຍັງມີຄວາມສ່ຽງທີ່ຈະເກີດສະພາບ ຫຼື ການປະຕິບັດທີ່ຊຸດໂຊມລົງພາຍໃນສະພາບແວດລ້ອມຂອງການກັກຂັງລວມທັງ ການລ່ວງລະເມີດສິດທິມະນຸດ ເຊິ່ງເຈົ້າໜ້າທີ່ອາດບໍ່ເຫັນ-ເບິ່ງຂ້າມໃນໄລຍະເກີດວິກິດການ. ຂໍ້ປະຕິບັດການຂອງລັດປາຍທາງອາດລວມມີ:

- ການຈຳກັດການເອື່ອຍອີງໃສ່ ມາດຕະການກັກຂັງເພື່ອເປັນເຄື່ອງມືຄຸ້ມຄອງດ່ານຊາຍແດນໂດຍສະເພາະ ກັບການກະທຳຜິດທາງດ້ານສະຖານະການເຂົ້າເມືອງ ເຊັ່ນ ການເຂົ້າ-ອອກແບບບໍ່ໄດ້ລົງທະບຽນ;
- ການດຳເນີນຂັ້ນຕອນຕ່າງໆເພື່ອປ້ອງກັນການກັກຂັງຜູ້ເຄື່ອນຍ້າຍຖິ່ນຖານຕາມລຳພັງໃຈ;
- ການອຳນວຍຄວາມສະດວກໃນການເຂົ້າເຖິງທີ່ປຶກສາດ້ານກົດໝາຍ ແລະ ທະນາຍຄວາມຂອງຜູ້ເຄື່ອນຍ້າຍຖິ່ນຖານໃນບ່ອນກັກຂັງ;
- ການຮັບຮອງນຳໃຊ້ກົດໝາຍ ແລະ ນະໂຍບາຍທີ່ຫ້າມ ຫຼື ໃຫ້ທາງເລືອກອື່ນໆແທນການກັກຂັງທີ່ກ່ຽວຂ້ອງກັບການເຂົ້າເມືອງສຳລັບຜູ້ເຄື່ອນຍ້າຍຖິ່ນຖານໂດຍສະເພາະຜູ້ທີ່ຢູ່ໃນສະຖານະການບອບບາງ-ສ່ຽງ ເຊັ່ນ ເດັກນ້ອຍ ແລະ ຄອບຄົວ, ແມ່ຍິງຖືພາ ແລະ ແມ່ລ້ຽງລູກດ້ວຍນົມແມ່, ຜູ້ຖືກເຄາະຮ້າຍຈາກການລ່ວງລະເມີດ ຫຼື ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຕ້ອງການດ້ານການແພດ ແລະ ສຸຂະພາບຈິດ;
- ເລືອກນຳໃຊ້ທາງເລືອກແທນການກັກຂັງ ທີ່ເຮັດໃຫ້ຜູ້ເຄື່ອນຍ້າຍຖິ່ນຖານບໍ່ຖືກກັກຂັງໃນບໍລິບົດທີ່ຊຸມຊົນເປັນເຈົ້າການໃນຂະນະທີ່ສະຖານະພາບການເຂົ້າເມືອງຂອງເຂົາເຈົ້າພວມໄດ້ຮັບການແກ້ໄຂ;
- ໃຫ້ມີການຕິດຕາມສູນທີ່ຜູ້ເຄື່ອນຍ້າຍຖິ່ນຖານຖືກກັກຂັງໂດຍເຈົ້າໜ້າທີ່ທີ່ກ່ຽວຂ້ອງ ກໍຄື ໜ່ວຍງານຕິດຕາມເອກະລາດ;
- ກຳນົດໃຫ້ສູນກັກຂັງຜູ້ເຄື່ອນຍ້າຍຖິ່ນຖານທີ່ຄຸ້ມຄອງໂດຍພາກລັດ ແລະ ເອກະຊົນ ໃຫ້ມີການພັດທະນາແຜນສຳຮອງເພື່ອຮັບປະກັນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນໄລຍະເກີດວິກິດ ລວມທັງແຜນການອົບພະຍົບຕາມຄວາມຈຳເປັນ.

## ຜູ້ມີສ່ວນຮ່ວມພາກເອກະຊົນ

### *ຂະບວນການຈັດຫາງານທີ່ມີຈັນຍາບັນ ແລະ ຍຸຕິທຳ*

ຮູບແບບການຈັດຫາງານທີ່ຮຽກຮ້ອງໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີພັນທະທາງດ້ານການເງິນ ຫຼື ພັນທະດ້ານອື່ນໆຍິ່ງຈະເພີ່ມຄວາມບອບບາງ-ຄວາມສ່ຽງ. ເຖິງແມ່ນວ່າຈະບໍ່ມີຂໍ້ກຳນົດທາງດ້ານກົດໝາຍ ຫຼື ອຸດສາຫະກຳ, ຜູ້ຈ້າງງານ ແລະ ຜູ້ຈັດຫາງານກໍຍັງສາມາດສົ່ງເສີມ ການຈັດຫາງານທີ່ມີຈັນຍາບັນ ແລະ ຍຸຕິທຳໄດ້ໂດຍ:

- ການຫຼີກເວັ້ນການເກັບຄ່າທຳນຽມ ຫຼື ຄ່າອື່ນໆຈາກຜູ້ເຄື່ອນຍ້າຍຖິ່ນຖານ;
- ຮັບປະກັນວ່າເອກະສານລະບຸຕົວຕົນ-ປະຈຳຕົວ ແລະ ໜັງສືເດີນທາງຂອງແຮງງານຈະບໍ່ຖືກຍຶດ;
- ເຂົ້າຮ່ວມໃນແຜນງານຮັບຮອງຄຸນນະພາບ ແລະ ການອອກໃບຢັ້ງຢືນ-ໃບປະກາດຕ່າງໆ;
- ສົ່ງເສີມການຈັດຫາງານທີ່ມີຈັນຍາບັນ ແລະ ຍຸດຕິທຳພາຍໃນອຸດສາຫະກຳ ແລະ ລະຫວ່າງຂະແໜງການຕ່າງໆ;
- ຮັບຮອງນຳໃຊ້ກົດການປະຕິບັດກ່ຽວກັບການນຳໃຊ້ ຜູ້ຈັດຫາງານ-ການບໍລິການຈັດຫາງານ;
- ການບັງຄັບໃຊ້ມາດຕະຖານກ່ຽວກັບການຈັດຫາງານທີ່ມີຈັນຍາບັນ ແລະ ຍຸຕິທຳ ຜ່ານຕ່ອງໂສ້ການສະໜອງ;
- ການນຳໃຊ້ລະບົບຈັດອັນດັບ ແລະ ຂໍ້ມູນໂດຍຜູ້ເຄື່ອນຍ້າຍຖິ່ນຖານກ່ຽວກັບ ຜູ້ຈ້າງງານ ແລະ ຜູ້ຈັດຫາງານ.

## *ການເຂົ້າເຖິງເອກະສານລະບຸຕົວຕົນ-ປະຈຳຕົວ*

ຜູ້ເຄື່ອນຍ້າຍຖິ່ນຖານຕ້ອງສາມາດເຂົ້າເຖິງເອກະສານລະບຸຕົວຕົນ-ປະຈຳຕົວ ແລະ ເອກະສານການເດີນທາງຂອງຕົນເພື່ອຫາບ່ອນປອດໄພ ແລະ ຂໍຄວາມຊ່ວຍເຫຼືອໃນເວລາເກີດວິກິດການ. ມາດຕະການທີ່ເອື້ອອຳນວຍໃຫ້ແກ່ການເຂົ້າເຖິງເອກະສານການລະບຸຕົວຕົນ ແລະ ເອກະສານການເດີນທາງສຳລັບແຮງງານເຄື່ອນຍ້າຍ ແລະ ຮັບປະກັນຄວາມຖືກຕ້ອງຂອງເອກະສານດັ່ງກ່າວ ລວມມີ:

- ສົ່ງຂໍ້ຄວາມເຕືອນຜູ້ເຄື່ອນຍ້າຍຖິ່ນຖານກ່ຽວກັບວັນໝົດອາຍຸຂອງເອກະສານ;
- ການສ້າງລະບົບການສຳຮອງຂໍ້ມູນທາງເອເລັກໂຕຣນິກເພື່ອຮັກສາ ແລະ ເຂົ້າເຖິງສຳເນົາເອກະສານໄດ້ຢ່າງງ່າຍດາຍເພື່ອເປັນການບໍລິການໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ;
- ການຫຼີກເວັ້ນຈາກການຍຶດເອກະສານການລະບຸຕົວຕົນ ແລະ ເອກະສານການເດີນທາງໄວ້ດົນກວ່າເວລາທີ່ຕ້ອງການໃນຕົວຈິງ;
- ໃນລັດທີ່ຜູ້ຈ້າງງານມີຄວາມຮັບຜິດຊອບໃນການໃຫ້ການຍິນຍອມ ຫຼື ໃບອະນຸຍາດອອກຈາກປະເທດໃຫ້ແກ່ລູກຈ້າງເຄື່ອນຍ້າຍຖິ່ນຖານຂອງຕົນແມ່ນ ໃຫ້ສ້າງກົນໄກເພື່ອຮັບປະກັນວ່າ ຈະສາມາດອອກໃບອະນຸຍາດຕ່າງໆໃຫ້ແກ່ລູກຈ້າງທີ່ຕ້ອງການເມື່ອເກີດມີວິກິດ ຫຼື ເວລາລູກຈ້າງມີຈຸດປະສົງຢາກອົບພະຍົບ ຫຼື ເດີນທາງອອກນອກລັດ.

## *ໜ້າທີ່ເບິ່ງແຍງຂອງຜູ້ຈ້າງງານ*

ຜູ້ຈ້າງງານມີຄວາມຮັບຜິດຊອບຕໍ່ລູກຈ້າງທຸກໆຄົນລວມທັງຄວາມຮັບຜິດຊອບຕໍ່ແຮງງານເຄື່ອນຍ້າຍທີ່ຕິດພັນກັບພັນທະດ້ານໜ້າທີ່ເບິ່ງແຍງ. ຍ້ອນສະຖານະທີ່ບໍ່ແມ່ນພົນລະເມືອງຂອງປະເທດ, ສະນັ້ນ ຄວາມຮັບຜິດຊອບໃນການເບິ່ງແຍງແຮງງານເຄື່ອນຍ້າຍ ອາດແຕກຕ່າງຈາກວິທີເບິ່ງແຍງທີ່ຈຳເປັນສຳລັບແຮງງານທີ່ເປັນພົນລະເມືອງຂອງປະເທດ. ເຖິງແມ່ນວ່າຈະບໍ່ມີມາດຕະຖານດ້ານກົດໝາຍ ຫຼື ດ້ານອຸດສາຫະກຳ, ແຕ່ວ່າຜູ້ຈ້າງງານຄວນຄຳນຶງເຖິງ:

- ຂໍ້ປະຕິບັດການທີ່ຈຳເປັນໃນບໍລິບົດຂອງພາວະວິກິດ ເພື່ອໃຫ້ປະຕິບັດສອດຄ່ອງກັບໜ້າທີ່ການເບິ່ງແຍງຂອງຕົນ;
- ວິທີການລວມເອົາຂໍ້ກຳນົດໃນສັນຍາການຈ້າງງານກັບລູກຈ້າງເຄື່ອນຍ້າຍຖິ່ນຖານທີ່ຖືກຈ້າງຈາກຕ່າງປະເທດ ແລະ ໃນທ້ອງຖິ່ນ ເພື່ອໃຫ້ສອດຄ່ອງກັບພັນທະທີ່ເລີ່ມຕົ້ນຈາກໜ້າທີ່ການເບິ່ງແຍງຂອງຕົນ;
- ການພັດທະນາກົດການປະຕິບັດສຳລັບຜູ້ສະໜອງຕ້ອງຜັນຂະຫຍາຍນະໂຍບາຍກ່ຽວກັບໜ້າທີ່ການເບິ່ງແຍງຂອງບໍລິສັດໃຫ້ທົ່ວເຖິງຕ່ອງໂສ້ການສະໜອງແຮງງານ;
- ການກຳນົດວ່າພາຍໃຕ້ສະຖານະການໃດທີ່ຈຳເປັນຕ້ອງ ຂະຫຍາຍໜ້າທີ່ການເບິ່ເງແຍງໄປຍັງສະມາຊິກຄອບຄົວຂອງລູກຈ້າງ.

### *ກິດການປະຕິບັດສຳລັບຜູ້ສະໜອງ*

ຫຼາຍບໍລິສັດມີກິດການປະຕິບັດສຳລັບຜູ້ສະໜອງ. ກິດການປະຕິບັດຂອງຜູ້ສະໜອງສາມາດຮັບປະກັນວ່າ ຜູ້ສະໜອງຈະບັງຄັບໃຫ້ມີສະພາບການເຮັດວຽກທີ່ປອດໄພ ແລະ ຮັບປະກັນສິດທິມະນຸດ ແລະ ສິດທິແຮງງານ ລວມທັງສຳລັບແຮງງານເຄື່ອນຍ້າຍ. ຂໍ້ທີ່ຄວນພິຈາລະນາຂ້າງລຸ່ມນີ້ອາດຈະເປັນປະໂຫຍດ ສຳລັບການດັດແກ້ກິດການປະຕິບັດທີ່ມີຢູ່ ຫຼື ເພື່ອພັດທະນາກິດການປະຕິບັດໃໝ່ສຳລັບຜູ້ສະໜອງ:

- ການລວມຂໍ້ກຳນົດກ່ຽວກັບ ສຸຂະພາບ ແລະ ຄວາມປອດໄພຂອງແຮງງານ, ສິດທິມະນຸດ ແລະ ສິດທິແຮງງານ, ການປະຕິບັດຈັດຫາງານທີ່ມີຈັນຍາບັນ ແລະ ຍຸຕິທຳ, ການບັງຄັບໃຊ້ແຮງງານ, ການຄ້າມະນຸດ ແລະ ການຂູດຮີດແຮງງານ;
- ການລວມຂໍ້ກຳນົດກ່ຽວກັບບັນຫາທີ່ກ່ຽວຂ້ອງໂດຍກົງກັບວິກິດການ ເຊັ່ນ ແຜນການ ແລະ ລະບຽບຂັ້ນຕອນສຳຮອງ, ພາກປະຕິບັດກ່ຽວກັບເອກະສານລະບຸຕົວຕົນ; ແລະ ອິດສະລະພາບໃນການເຄື່ອນຍ້າຍຂອງລູກຈ້າງ;
- ການສ້າງກົນໄກການຕິດຕາມ ແລະ ບັງຄັບໃຊ້ລະບຽບກົດໝາຍລວມທັງ ການກວດສອບ ແລະ ລະບຽບຂັ້ນຕອນທີ່ຊັດເຈນໃນກໍລະນີມີການລະເມີດ;
- ສ້າງຂະບວນການຢັ້ງຢືນຄຸນວຸດທິສຳລັບການຄັດເລືອກຜູ້ສະໜອງ, ການປະເມີນຜົນຢ່າງຕໍ່ເນື່ອງ ແລະ ການປະເມີນຜົນງານຂອງຜູ້ສະໜອງ;
- ຈັດການຝຶກອົບຮົມກ່ຽວກັບ ກິດການປະຕິບັດໃຫ້ແກ່ຜູ້ສະໜອງ.

### *ກົນໄກການກອບກູ້ຄ່າຈ້າງທີ່ຍັງຄົງຄ້າງ*

ແຮງງານເຄື່ອນຍ້າຍທີ່ຕ້ອງໄດ້ອົບພະຍົບໃນໄລຍະເກີດວິກິດ ອາດມີຄ່າຈ້າງທີ່ຜູ້ຈ້າງງານຍັງຄ້າງຈ່າຍໃຫ້ແກ່ຕົນ. ຜູ້ຈ້າງງານສາມາດສ້າງກົນໄກທີ່ເຮັດໃຫ້ຕົນສາມາດຮັບຜິດຊອບຈ່າຍຄ່າຈ້າງທີ່ຍັງຄ້າງຈ່າຍໃຫ້ລູກຈ້າງເຄື່ອນຍ້າຍຖິ່ນຖານໂດຍ:

- ການປົດລ໋ອກຄ່າຈ້າງລ່ວງໜ້າ ແລະ ການອຳນວຍຄວາມສະດວກໃຫ້ແກ່ການກອບກູ້ຄ່າແຮງງານທີ່ຍັງຄົງຄ້າງ;
- ການໃຫ້ຄ່າສ່ຽງໄພເພື່ອສະໜັບສະໜູນຄວາມຕ້ອງການຂອງແຮງງານເຄື່ອນຍ້າຍໃນໄລຍະເກີດວິກິດ ແລະ ພາຍຫຼັງການຍົກຍ້າຍ ຫຼື ການອົບພະຍົບ;
- ຮັບປະກັນວ່າຄ່າຈ້າງໄດ້ນຳເອົາໄປຝາກໄວ້ໃນບັນຊີຝາກປະຢັດທີ່ມີຄ່າບຳລຸງຮັກສາຕ່ຳ ເພື່ອຮັບປະກັນຄວາມໂປ່ງໃສໃນການບັນທຶກລາຍການເງິນຝາກ;
- ການຊື້ປະກັນໄພຊົດເຊີຍ ຄ່າຈ້າງທີ່ຄົງຄ້າງ;
- ການອຳນວຍຄວາມສະດວກໃຫ້ແກ່ການສົ່ງເງິນກັບບ້ານ ດ້ວຍການຍົກເວັ້ນຄ່າທຳນຽມ ຫຼື ບໍ່ດັ່ງນັ້ນກໍຊ່ວຍໃນການຂໍເງິນຈາກພີ່ນ້ອງ ຫຼື ຊຸມຊົນທີ່ຢູ່ໃນລັດຕົ້ນທາງ ເພື່ອເອົາມາໃຫ້ຜູ້ເຄື່ອນຍ້າຍຖິ່ນຖານໃນລັດປາຍທາງ.

## ອົງການຈັດຕັ້ງສາກົນ

### *ການສະໜັບສະໜູນ*

ການສະໜັບສະໜູນ ແລະ ການປູກຈິດສຳນຶກໃຫ້ກັບລັດ, ຜູ້ຈ້າງງານ ແລະ ຜູ້ຈັດຫາງານ ພ້ອມທັງ ຜູ້ມີສ່ວນຮ່ວມອື່ນໆ

ແມ່ນສາມາດຊ່ວຍເຂົາເຈົ້າໃນການປົກປ້ອງສິດຂອງຜູ້ເຄື່ອນຍ້າຍຖິ່ນຖານ ໃຫ້ດີຂຶ້ນກວ່າເກົ່າ. ຂົງເຂດການປະຕິບັດການທີ່ສຳຄັນລວມມີ:

- ການຈັດຕັ້ງປະຕິບັດສິດທິມະນຸດ ແລະ ສິດທິແຮງງານ;
- ການເຂົ້າເຖິງການບໍລິການທາງສັງຄົມ ໂດຍສະເພາະ ການຮັກສາສຸຂະພາບ, ການສຶກສາ ແລະ ການການປຶກສາທາງດ້ານກົດໝາຍ;
- ຄວາມສາມາດໂອນເງິນບໍານານ ແລະ ຜົນປະໂຫຍດການປະກັນສັງຄົມອື່ນໆ;
- ການຈັດຫາງານທີ່ມີຈັນຍາບັນ ແລະ ຍຸຕິທຳ ແລະ ໜ້າທີ່ການເບິ່ງແຍງຂອງຜູ້ຈ້າງງານ;
- ການເຂົ້າເຖິງກົນໄກຄວາມຍຸຕິທຳ ແລະ ການຊົດເຊີຍ;
- ການຕ້ານການຈຳແນກ;
- ການປະກັນໄພ ແລະ ການທ້ອນເງິນສຳລັບຜູ້ເຄື່ອນຍ້າຍຖິ່ນຖານ.

### *ການສົ່ງເສີມມາດຕະຖານສາກົນກ່ຽວກັບການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ*

ອົງການຈັດຕັ້ງສາກົນສາມາດມີບົດບາດສຳຄັນໃນການເຮັດໃຫ້ກົດໝາຍ ແລະ ມາດຕະຖານສາກົນມີຄວາມຊັດເຈນຂຶ້ນ. ນອກຈາກນັ້ນກໍຈະສາມາດຊີ້ແຈງ ແລະ ຊີ້ນຳການຜັນຂະຫຍາຍກົດໝາຍ ແລະ ນະໂຍບາຍແຫ່ງຊາດ ແລະ ພາກພື້ນ ທີ່ກ່ຽວຂ້ອງກັບການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ ກໍຄື ການຈັດຕັ້ງປະຕິບັດກົດໝາຍ ແລະ ນະໂຍບາຍເຫຼົ່ານັ້ນ. ຄວາມພະຍາຍາມເຫຼົ່ານີ້ສາມາດກວມເອົາຫຼາຍປະເດັນ ລວມທັງ:

- ສິດທິມະນຸດຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ສິດທິແຮງງານສຳລັບແຮງງານເຄື່ອນຍ້າຍ;
- ຂະບວນການຈັດຫາງານທີ່ມີຈັນຍາບັນ ແລະ ຍຸຕິທຳ;
- ພັນທະຂອງລັດທີ່ຕິດພັນກັບ ສະຖານະພາບການເຂົ້າເມືອງຂອງຜູ້ເຄື່ອນຍ້າຍຖິ່ນຖານ.

ການສົ່ງເສີມ ແລະ ເຮັດໃຫ້ມາດຕະຖານສາກົນມີຄວາມກະຈ່າງແຈ້ງ ແມ່ນມີຫຼາຍວິທີລວມທັງ:

- ຕົວຢ່າງຂໍ້ຕົກລົງທາງດ້ານກົດໝາຍ ທີ່ລັດສາມາດນຳໄປປັບໃຊ້ ກັບບໍລິບົດສະເພາະ;
- ຂໍ້ຕົກລົງຕົວແບບສຳລັບກຳມະບານ;
- ລະບົບສາກົນເພື່ອການອອກໃບຢັ້ງຢືນ ແລະ ການກວດສອບ ໜ່ວຍງານຈັດຫາແຮງງານ, ຜູ້ຈັດຫາງານ ແລະ ຜູ້ຈ້າງງານ;
- ແຜນງານລິເລີ່ມຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍເພື່ອສົ່ງເສີມການປຶກສາຫາລື ແລະ ຊຸກຍູ້ການຮັບຮອງນຳໃຊ້ມາດຕະຖານທີ່ເປັນເອກະພາບຮ່ວມກັນ.

### *ການຄົ້ນຄວ້າ ແລະ ໂຄງການເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ*

ອົງການຈັດຕັ້ງສາກົນສາມາດສົ່ງເສີມຄວາມເຂັ້ມແຂງຂອງຜູ້ເຄື່ອນຍ້າຍຖິ່ນຖານດ້ວຍການສະໜັບສະໜູນ, ແຜນງານທີ່ເລັ່ງໃສ່ຜູ້ເຄື່ອນຍ້າຍຖິ່ນຖານໂດຍກົງ ແລະ ຜ່ານການສະໜັບສະໜູນຜູ້ທີ່ມີສ່ວນຮ່ວມອື່ນໆ. ຂໍ້ປະຕິບັດການທີ່ອົງການຈັດຕັ້ງສາກົນ ສາມາດພິຈາລະນາເພື່ອນຳໄປຈັດຕັ້ງປະຕິບັດລວມມີ:

- ການຄົ້ນຄວ້າ ແລະ ວິເຄາະ ການປະຕິບັດທີ່ສອດຄ່ອງກັບ ພັນທະສາກົນທີ່ຕິດພັນກັບຜູ້ເຄື່ອນຍ້າຍຖິ່ນຖານຂອງລັດ;
- ການຄົ້ນຄວ້າ ແລະ ວິເຄາະ ກ່ຽວກັບການລວມເອົາປະເດັນຂອງຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນ ກົດໝາຍ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ແຜນງານຂອງລັດ ທີ່ກ່ຽວຂ້ອງກັບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ;

- ການຮັບໂຮມພາກປະຕິບັດທີ່ດີທີ່ສຸດກ່ຽວກັບຂົງເຂດການປະຕິບັດການທີ່ຫຼາກຫຼາຍ ແລະ ທີ່ກ່ຽວຂ້ອງ;
- ແຜນງານທີ່ສະໜອງຊັບພະຍາກອນເພື່ອຊ່ວຍຜູ້ເຄື່ອນຍ້າຍຖິ່ນຖານ ເພື່ອກະກຽມຄວາມພ້ອມໃນການຮັບມືກັບວິກິດການ ລວມທັງເຄື່ອງມືການສື່ສານ (ເຊັ່ນ ໂທລະສັບ, ຄ່າໂທລະສັບ) ແລະ ຊຸດອຸປະກອນສຸກເສີນ.

## ອົງການຈັດຕັ້ງສັງຄົມ

### *ແຜນງານສ້າງຄວາມເຂັ້ມແຂງໃຫ້ກັບຜູ້ເຄື່ອນຍ້າຍຖິ່ນຖານ*

ອົງການຈັດຕັ້ງສັງຄົມ ໂດຍສະເພາະອົງການທີ່ດໍາເນີນງານໃນທ້ອງຖິ່ນ ອາດຢູ່ໃນຖານະທີ່ໄດ້ປຽບໃນການເຂົ້າໃຈ ແລະ ລະບຸສິ່ງກີດຂວາງສະເພາະ ທີ່ຜູ້ເຄື່ອນຍ້າຍຖິ່ນຖານພົບພໍ້ໃນຊຸມຊົນໃດໜຶ່ງ ລວມທັງສິ່ງກີດຂວາງທີ່ຈະປ້ອງກັນບໍ່ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດຊ່ວຍຕົນເອງ, ຄອບຄົວຂອງເຂົາເຈົ້າ ຫຼື ຜູ້ອື່ນໆໃນໄລຍະເກີດວິກິດ. ອົງການຈັດຕັ້ງສັງຄົມສາມາດ:

- ແຈ້ງໃຫ້ຜູ້ເຄື່ອນຍ້າຍຖິ່ນຖານຊາບກ່ຽວກັບສິດທິມະນຸດ ແລະ ສິດທິແຮງງານຂອງຕົນ;
- ຈັດການຝຶກອົບຮົມໃນຫຼາກຫຼາຍຫົວຂໍ້ລວມທັງ ທັກສະທາງດ້ານພາສາ ແລະ ຄວາມຮູ້ທາງດ້ານການເງິນ;
- ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ກົນໄກການໃຫ້ຄວາມເຫັນ ແລະ ການຮ້ອງທຸກ-ການຕໍານິຕິຕຽນ;
- ສົ່ງເສີມການສ້າງເຄືອຂ່າຍທີ່ເປັນທາງການ ແລະ ບໍ່ເປັນທາງການ ເຊິ່ງ ເຄືອຂ່າຍສາມາດເຊື່ອມຕໍ່ຜູ້ເຄື່ອນຍ້າຍ ຖິ່ນຖານກັບ ຊັບພະຍາກອນ, ການບໍລິການ ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງອື່ນໆ;
- ຊ່ວຍລັດ, ຜູ້ຈ້າງງານ ຫຼື ອົງການຈັດຕັ້ງສາກົນໃນການລະບຸສິ່ງທ້າທາຍທີ່ຜູ້ເຄື່ອນຍ້າຍຖິ່ນຖານພວມປະເຊີນພາຍໃນຊຸມຊົນທ້ອງຖິ່ນ ແລະ ສະເໜີມາດຕະການເພື່ອແກ້ໄຂອຸປະສັກທີ່ກະທົບໃສ່ຄວາມທົນທານຂອງເຂົາເຈົ້າໃນພາວະວິກິດ.

### *ຕິດຕາມສະຖານທີ່ກັກຂັງ*

ພາກສ່ວນຕິດຕາມເອກະລາດ ແລະ ອົງການຈັດຕັ້ງສັງຄົມອື່ນໆ ສາມາດໄດ້ຮັບອະນຸຍາດໃນການເຂົ້າເຖິງ ແລະ ຕິດຕາມສະຖານທີ່ກັກຂັງຢ່າງເປັນປົກກະຕິ ເພື່ອໃຫ້ການບໍລິການແກ່ຜູ້ຖືກກັກຂັງ ແລະ ເພື່ອເຂົ້າໃຈຄວາມບອບບາງ-ຄວາມສ່ຽງ ແລະ ຄວາມຈໍາເປັນຂອງຜູ້ຖືກກັກຂັງລວມທັງ ຜູ້ເຄື່ອນຍ້າຍຖິ່ນຖານ. ການຮັບປະກັນໃຫ້ອົງການຈັດຕັ້ງສັງຄົມສາມາດເຂົ້າເຖິງສູນກັກຂັງໃນໄລຍະເກີດວິກິດ ຈະສາມາດສະໜັບສະໜູນເຮັດໃຫ້ຄວາມພະຍາຍາມໃນການປົກປ້ອງປະຊາກອນຜູ້ຖືກກັກຂັງໄດ້ດີກວ່າເກົ່າ.

## ພາກປະຕິບັດໃນການນຳໃຊ້ ແນວທາງປະຕິບັດ 4:

# ການຄຳນຶງເຖິງ-ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນລະບົບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ

### ລັດປາຍທາງ

*@KIXNBYKF*FI KI ^KRWKZYRI K@KMYC@K, @K@ @RBV^RPYR j U @KZLR@LP^V WWK*

ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນກອບການດຳເນີນງານແຫ່ງຊາດ ແລະ ທ້ອງຖິ່ນກ່ຽວກັບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະວິກິດ ລວມທັງ ວຽກງານການຫລຸດຜ່ອນຄວາມສ່ຽງຈາກໄພພິບັດນັ້ນ ຈະຫລຸດຜ່ອນຄວາມບອບບາງ-ຄວາມສ່ຽງຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ປັບປຸງຄວາມອາດສາມາດຂອງຊຸມຊົນເຈົ້າພາບໃນການຮັບມື ແລະ ຟື້ນຟູຈາກພາວະວິກິດ. ກິດຈະກຳຕ່າງໆອາດລວມມີ:

- ການສ້າງແຜນທີ່ ແລະ ການຮ່ວມມືກັບອົງການຜູ້ເຄື່ອນຍ້າຍຖິ່ນຖານທີ່ກ່ຽວຂ້ອງ ໃນວຽກງານການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະວິກິດ;
- ການສ້າງແຜນທີ່ ແລະ ການຮ່ວມມືກັບສະຖານກົງສຸນໃນລັດຕົ້ນທາງທີ່ກ່ຽວຂ້ອງ;
- ການຮັບຮູ້ຜູ້ເຄື່ອນຍ້າຍຖິ່ນຖານໃນແຜນການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ ໂດຍຄຳນຶງວ່າເຂົາເຈົ້າເປັນກຸ່ມສະເພາະທີ່ມີຄວາມບອບບາງ-ຄວາມສ່ຽງ, ຄວາມຕ້ອງການ ແລະ ຄວາມອາດສາມາດສະເພາະ;
- ການຫ້າມການຈຳແນກທີ່ອີງໃສ່ສັນຊາດ, ຄວາມສາມາດດ້ານພາສາ, ສະຖານະການເຂົ້າເມືອງ ແລະ ຄຸນລັກສະນະທີ່ຖືກຫ້າມອື່ນໆຢູ່ໃນກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບ ການຊ່ວຍຊີວິດ ແລະ ການບໍລິການສຸກເສີນ;
- ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນການຄຸ້ມຄອງ ແລະ ການວາງແຜນ ໃນພາວະວິກິດຂັ້ນທ້ອງຖິ່ນ;
- ການຈັດ ແລະ ອຳນວຍຄວາມສະດວກໃຫ້ແກ່ການປະຊຸມຢ່າງເປັນປົກກະຕິລະຫວ່າງຜູ້ຕາງໜ້າຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ຕາງໜ້າເຈົ້າໜ້າທີ່ແຫ່ງຊາດ ແລະ ທ້ອງຖິ່ນ;
- ການຈັດສັນແຫຼ່ງທຶນ-ຊັບພະຍາກອນຢ່າງພຽງພໍສຳລັບກິດຈະກຳເຫຼົ່ານີ້.

*ການປຶກສາຫາລືກ່ຽວກັບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ*

ການປຶກສາຫາລືທີ່ທຸກໆກຸ່ມສາມາດອອກຄວາມເຫັນ ແລະ ຍົກໃຫ້ເຫັນຄວາມຕ້ອງການຕ່າງໆ ຈະສ້າງຄວາມໄວ້ເນື້ອເຊື່ອໃຈລະຫວ່າງເຈົ້າໜ້າທີ່, ຊຸມຊົນທ້ອງຖິ່ນ ແລະ ຜູ້ເຄື່ອນຍ້າຍຖິ່ນຖານ; ຮັບປະກັນຄວາມຕ້ອງການຂອງຊຸມຊົນທ້ອງຖິ່ນ ແລະ ຜູ້ເຄື່ອນຍ້າຍຖິ່ນຖານຈະເປັນທີ່ຮັບຮູ້ ແລະ ເປີດໂອກາດໃຫ້ມີການເຮັດວຽກຮ່ວມກັນກ່ຽວກັບວິທີການ ແລະ ວິທີທາງອອກຕ່າງໆ. ກິດຈະກຳທີ່ກ່ຽວຂ້ອງລວມມີ:

- ການລະບຸຜູ້ນຳພາ ແລະ ຜູ້ຕາງໜ້າຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຈະສາມາດເວົ້າໄດ້ ແລະ ເວົ້າຕາງໜ້າຊຸມຊົນຢ່າງມີ

ປະສິດທິຜົນ;

- ການສ້າງຕັ້ງພື້ນທີ່ການສົນທະນາແບບເຊິ່ງໜ້າ ຫຼື ອອນໄລນ໌ ທີ່ສາມາດເຂົ້າເຖິງຢ່າງເປີດກວ້າງ;
- ການຮັບປະກັນການເຂົ້າຮ່ວມຂອງທຸກກຸ່ມລວມທັງ ການຈັດແຈງໃຫ້ມີການແປພາສາ ແລະ ການເປີດໂອກາດສະເພາະໃຫ້ແກ່ກຸ່ມຄົນສ່ວນໜ້ອຍ;
- ຫລຸດຜ່ອນຄ່າໃຊ້ຈ່າຍຂອງການເຂົ້າຮ່ວມ (ເຊັ່ນ ເວລາທີ່ສູນເສຍໄປ ແລະ ການຂົນສົ່ງ);
- ການຈັດກອງປະຊຸມເປີດກວ້າງ ຫຼື ຢູ່ ສູນ-ສະໂມສອນ-ພື້ນທີ່ສາທາລະນະ ລວມທັງ ພື້ນທີ່ການພົບປະຂອງຜູ້ເຄື່ອນຍ້າຍຖິ່ນຖານ.

### *ການຈັດຫາງານໃຫ້ຜູ້ເຄື່ອນຍ້າຍຖິ່ນຖານໃນຖານະພະນັກງານ ຫຼື ອາສາສະໝັກ*

ເຈົ້າໜ້າທີ່ສາມາດຮ່ວມມືກັບຜູ້ເຄື່ອນຍ້າຍຖິ່ນຖານໂດຍການຈ້າງໃຫ້ເຂົາເຈົ້າເປັນພະນັກງານ ຫຼື ດ້ວຍການຈັດແຈງ ແລະ ຮັກສາເຂົາເຈົ້າໄວ້ເປັນອາສາສະໝັກເພື່ອຊຸກຍູ້ການມີສ່ວນຮ່ວມໂດຍກົງຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ ໃນການຄຸ້ມຄອງ ແລະ ການວາງແຜນການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ. ເຈົ້າໜ້າທີ່ສາມາດໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໂດຍ:

- ການຈັດການໂຄສະນາ-ປູກຈິດສໍານຶກກ່ຽວກັບການຈັດຫາງານທີ່ແນໃສ່ກຸ່ມຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນກຸ່ມບູລິມະສິດ (ເຊັ່ນ: ກຸ່ມທີ່ມີຈໍານວນຫຼາຍໃນພື້ນທີ່ ຫຼື ມີຜູ້ຕາງໜ້າໜ້ອຍໃນໂຄງສ້າງທີ່ມີຢູ່);
- ການໃຫ້ຜູ້ນໍາພາຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນການຈັດຫາພະນັກງານ ແລະ ອາສາສະໝັກເຄື່ອນຍ້າຍຖິ່ນຖານ;
- ການໃຫ້ໜ່ວຍງານຈັດຫາງານ ແລະ ຈ້າງງານມີສ່ວນຮ່ວມໃນການລະບຸຜູ້ເຄື່ອນຍ້າຍຖິ່ນຖານທີ່ມີທັກສະ ແລະ ຄວາມອາດສາມາດທີ່ກ່ຽວຂ້ອງກັບກິດຈະກໍາການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ;
- ການຄັດເລືອກຜູ້ເຄື່ອນຍ້າຍຖິ່ນຖານອີງຕາມຄວາມສາມາດ ແລະ ທັກສະຂອງເຂົາເຈົ້າ ແລະ ການມອບໝາຍໜ້າທີ່ໆເຫັນຄຸນຄ່າໃນທັກສະ ແລະ ບູລິມະສິດຂອງເຂົາເຈົ້າ;
- ການຍົກໃຫ້ຊຸມຊົນເຈົ້າພາບຮັບຮູ້ກ່ຽວກັບ ຜົນປະໂຫຍດທີ່ອາດເປັນໄປໄດ້ ໃນການເປັນພະນັກງານ ຫຼື ອາສາສະມັກ ລວມທັງ ການພັດທະນາທັກສະ, ການຫາວຽກໄດ້ງ່າຍໃນຕໍ່ໜ້າ ແລະ ການມີເຄືອຂ່າຍ ແລະ ຜູ້ຕາງໜ້າທີ່ເພີ່ມຂຶ້ນ ພ້ອມທັງ ການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານທີ່ດີກວ່າເກົ່າໃນບໍລິບົດຂອງວິກິດການ;
- ການສ້າງສະພາບແວດລ້ອມທີ່ປອດໄພສໍາລັບການຮຽນຮູ້.

### *ການປູກຈິດສໍານຶກເພື່ອ ລະບຽບຂັ້ນຕອນການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ*

ກິດຈະກໍາໂຄສະນາ ແລະ ປູກຈິດສໍານຶກເພື່ອລະບຽບຂັ້ນຕອນການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ ແມ່ນສາມາດໃຫ້ຂໍ້ມູນທີ່ຈໍາເປັນແກ່ຜູ້ເຄື່ອນຍ້າຍຖິ່ນຖານ ເພື່ອປົກປ້ອງຕົວເຂົາເຈົ້າເອງໃນໄລຍະເກີດວິກິດ. ການນໍາເອົາຂໍ້ຄວາມທີ່ຊັດເຈນສໍາລັບຜູ້ເຄື່ອນຍ້າຍຖິ່ນຖານ ເຂົ້າໃນເອກະສານ-ເຄື່ອງມື-ສື່ຕ່າງໆທີ່ພັດທະນາຂຶ້ນມາເພື່ອສຶກສາອົບຮົມມວນຊົນທົ່ວໄປກ່ຽວກັບຄວາມສ່ຽງທີ່ກ່ຽວຂ້ອງກັບໄພພິບັດທໍາມະຊາດນັ້ນ ແມ່ນຈະສາມາດຊ່ວຍຊີວິດຂອງຜູ້ເຄື່ອນຍ້າຍຖິ່ນຖານ. ກິດຈະກໍາທີ່ກ່ຽວຂ້ອງລວມມີ:

- ການສ້າງເວັບໄຊດ໌, ສື່ສິ່ງພິມ ແລະ ເອກະສານເພື່ອອອກອາກາດໃນທຸກໆພາສາທີ່ຈໍາເປັນ ເພື່ອປູກຈິດສໍານຶກກ່ຽວກັບໄພພິບັດທໍາມະຊາດ;
- ການຮັບປະກັນວ່າ ເຄື່ອງມືທາງສຽງ ແລະ ພາບ ຈະຖ່າຍທອດຂໍ້ຄວາມໃນແບບທີ່ປະຊາກອນທີ່ບໍ່ຮູ້ໜັງສືຈະເຂົ້າໃຈໄດ້;

- ການລະບຸ ແລະ ດັດປັບຂໍ້ມູນໃຫ້ເຂົ້າກັບຊ່ອງທາງສື່ ທີ່ຜູ້ເຄື່ອນຍ້າຍຖິ່ນຖານນໍາໃຊ້;
- ການເຮັດວຽກກັບອຸດສາຫະກໍາການທ່ອງທ່ຽວ, ໂຮງຮຽນ, ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ອົງການຈັດຕັ້ງສັງຄົມ ເພື່ອພັດທະນາເຄື່ອງມືເອກະສານໃນຫຼາຍພາສາ (ເຊັ່ນ: ແຜ່ນພັບ, ຄູ່ມືການທ່ອງທ່ຽວ, ໂປສເຕີ, ວິດີໂອສັ້ນ ທີ່ ສາມາດເຫັນໄດ້ຢູ່ບ່ອນສາທາລະນະເຊັ່ນ ເດີ່ນບິນ, ສະຖານກົງສຸນ, ຫ້າງຮ້ານ ຫຼື ຕະຫຼາດ ແລະ ຈຸດທ່ອງທ່ຽວ ສໍາຄັນ) ທີ່ຄໍານຶງເຖິງຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງ ຂໍ້ມູນກ່ຽວກັບຄວາມສ່ຽງຈາກໄພພິ ບັດ, ບ່ອນທີ່ຕ້ອງໄປ ແລະ ສິ່ງທີ່ຕ້ອງເຮັດ ກໍຄື ຂໍ້ມູນການຕິດຕໍ່ກໍລະນີສຸກເສີນ;
- ການລວມເອົາຂໍ້ມູນກ່ຽວກັບ ການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ ແລະ ການຮັບມືກັບໄພພິບັດ ໃນເວລາທີ່ ອອກວິຊາໃຫ້ແກ່ ຜູ້ເຄື່ອນຍ້າຍຖິ່ນຖານ;
- ການເຜີຍແຜ່ຂໍ້ມູນຜ່ານສະຖານທີ່ໆຜູ້ເຄື່ອນຍ້າຍມັກໄປ ແລະ ຜ່ານຜູ້ທີ່ມີສ່ວນຮ່ວມທີ່ພົວພັນກັບຜູ້ເຄື່ອນຍ້າຍ ຖິ່ນຖານ ເຊັ່ນ ອົງການສາສະໜາ ຫຼື ອົງການທ້ອງຖິ່ນ, ກຸ່ມຜູ້ເຄື່ອນຍ້າຍຖິ່ນຖານ, ແຫຼ່ງສື່ຕ່າງໆທີ່ເລັ່ງໃສ່ຜູ້ ເຄື່ອນຍ້າຍຖິ່ນຖານ, ແລະ ບໍລິສັດນໍາທ່ຽວ;
- ການຈັດການໂຄສະນາສຶກສາອົບຮົມ ໃນຂັ້ນຄົວເຮືອນໂດຍສຸມໃສ່ ຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະທີ່ ສ່ຽງຕໍ່ການເກີດໄພພິບັດທໍາມະຊາດ (ຕົວຢ່າງ: ໃນໄລຍະເລີ່ມຕົ້ນຂອງລະດູພາຍຸເຮີຣິເຄນ) ຫຼື ຄວາມບໍ່ສະຫງົບ;
- ຊຸກຍູ້ໃຫ້ຜູ້ຈ້າງງານ ແລະ ຜູ້ຈັດຫາງານ ແຈກຢາຍຂໍ້ມູນ ແລະ ລະບຽບຂັ້ນຕອນກ່ຽວກັບວິກິດການ ໃຫ້ແກ່ ລູກຈ້າງຂອງຕົນລວມທັງຜູ້ເຄື່ອນຍ້າຍຖິ່ນຖານ.

## ອົງການຈັດຕັ້ງສາກົນ

### *ການລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນ ລະບົບຊ່ວຍເຫຼືອດ້ານມະນຸດສະທໍາ*

ການເຊື່ອມສານຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນລະບົບການຊ່ວຍເຫຼືອດ້ານມະນຸດສະທໍາສາກົນທີ່ມີຢູ່ ແລະ ເຄື່ອງມືການກະ ກຽມຄວາມພ້ອມ ແລະ ຮັບມືທີ່ກ່ຽວຂ້ອງຈະຊ່ວຍໃຫ້ນໍາເອົາ ຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນການຮັບມືກັບພາວະວິກິດ. ອາດ ຈໍາເປັນດັດປັບເຄື່ອງມືມາດຕະຖານທີ່ນໍາໃຊ້ເພື່ອປະເມີນຄວາມບອບບາງ-ຄວາມສ່ຽງ ແລະ ຄວາມຈໍາເປັນຂອງປະຊາກອນ ທີ່ຖືກຜົນກະທົບຈາກວິກິດມານໍາໃຊ້ເພື່ອກະຕຸ້ນໃຫ້ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງລະບຸປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ, ຄຸນ ລັກສະນະ ແລະ ຄວາມຈໍາເປັນສະເພາະຂອງເຂົາເຈົ້າ ແລະ ອຸປະສັກຕໍ່ການຊ່ວຍເຫຼືອຕົວເອງ ແລະ ການເຂົ້າເຖິງການຊ່ວຍ ເຫຼືອ. ກິດຈະກໍາສໍາຄັນອາດລວມມີ:

- ການລວມເອົາ ການລະບຸປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄວາມຕ້ອງການກໍຄືຄວາມບອບບາງ-ຄວາມສ່ຽງສະເພາະຂອງເຂົາເຈົ້າເຂົ້າ ໃນໂຄງສ້າງການກະກຽມຄວາມພ້ອມ ແລະ ການຮັບມືກັບໄພພິບັດ ຂອງ ລະບົບກຸ່ມຊ່ວຍເຫຼືອດ້ານມະນຸດສະທໍາຂອງ IASC ໃນການຮັບມືກັບ ພາວະສຸກເສີນທີ່ສະຫຼັບຊັບ ຊ້ອນ;
- ການເຮັດໃຫ້ຜູ້ບໍລິຈາກ, ອົງການຈັດຕັ້ງສັງຄົມ ແລະ ລັດ ລຶ້ງເຄີຍກັບຄວາມຕ້ອງການສະເພາະຂອງຜູ້ເຄື່ອນຍ້າຍຖິ່ນ ຖານໃນປະເທດທີ່ພວມປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທໍາມະຊາດ;
- ການຝຶກອົບຮົມເຈົ້າໜ້າທີ່ອົງການຈັດຕັ້ງສາກົນກ່ຽວກັບການລວມເອົາ ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການເຄື່ອນ ຍ້າຍຖິ່ນຖານ ກໍຄືການຄໍານຶງເຖິງການເຄື່ອນຍ້າຍຕ່າງໆເຂົ້າໃນແຜນຊ່ວຍເຫຼືອດ້ານມະນຸດສະທໍາ.

### *ແນວທາງຂອງອົງເຂດວຽກງານ ແລະ ເຄື່ອງມືດ້ານການດໍາເນີນງານ*

ຄວນລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນ ເອກະສານແນວທາງ ທີ່ພັດທະນາຂຶ້ນມາເພື່ອປົກປ້ອງສະເພາະກຸ່ມຕ່າງໆ ເຊັ່ນ ແມ່ຍິງ, ເດັກນ້ອຍ, ຜູ້ສູງອາຍຸ, ບຸກຄົນພິການ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງລວມມີວິທີ ດັ່ງຕໍ່ໄປນີ້:

- ການລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນເຄື່ອງມື ແລະ ແນວທາງທີ່ມີຢູ່ ລວມທັງຄໍາແນະນໍາກ່ຽວກັບການລະບຸປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານທີ່ອາດບອບບາງ-ສ່ຽງໂດຍສະເພາະໃນໄລຍະເກີດວິກິດ ເຊັ່ນ ກຸ່ມຊົນເຜົ່າສ່ວນໜ້ອຍ, ຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ ແລະ ຜູ້ທີ່ຖືກກັກຂັງ;
- ການລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນການຝຶກອົບຮົມ ໃຫ້ພະນັກງານກ່ຽວກັບ ເຄື່ອງມື ແລະ ແນວທາງ IASC ລວມທັງວິທີການລະບຸປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ, ຄວາມແຕກຕ່າງໃນການປະເຊີນກັບວິກິດການລະຫວ່າງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ພົນລະເມືອງ ແລະ ປະເພດຄວາມຊ່ວຍເຫຼືອທີ່ຜູ້ເຄື່ອນຍ້າຍຖິ່ນຖານອາດຕ້ອງການ;
- ການພັດທະນາເຄື່ອງມືການສື່ສານທີ່ກ່ຽວຂ້ອງກັບວິກິດ ເພື່ອເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານໄລຍະກ່ອນ ແລະ ພາຍຫຼັງວິກິດການ ລວມທັງເຄື່ອງມືກ່ຽວກັບຂໍ້ຄວາມຕ່າງໆທີ່ແປເປັນພາສາທ້ອງຖິ່ນຂອງຜູ້ເຄື່ອນຍ້າຍຖິ່ນຖານ.

### *ການເຊື່ອມສານວຽກງານການບັນເທົາທຸກ, ການຟື້ນຟູ ແລະ ການພັດທະນາ*

ອົງການຈັດຕັ້ງສາກົນທີ່ສະໜອງການຊ່ວຍເຫຼືອໃນການຮັບມືກັບພາວະສຸກເສີນ, ການຟື້ນຟູ ແລະ ການພັດທະນາ ສາມາດຫລຸດຜ່ອນຜົນກະທົບຂອງວິກິດ ຕໍ່ ຜູ້ເຄື່ອນຍ້າຍຖິ່ນຖານ, ຄອບຄົວຂອງເຂົາເຈົ້າ ແລະ ຊຸມຊົນ ພ້ອມທັງ ໝູນໃຊ້ຊັບພະຍາກອນໃຫ້ເກີດປະໂຫຍດສູງສຸດໂດຍ:

- ການປະສານງານພາຍໃນ ແລະ ການຮັບປະກັນວ່າໄດ້ເຊື່ອມໂຍງກັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄວາມຕ້ອງການຂອງເຂົາເຈົ້າເຂົ້າໃນແຜນ ແລະ ລະບຽບຂັ້ນຕອນມາດຕະຖານກ່ຽວກັບ ການຮັບມືກັບພາວະສຸກເສີນ, ການຟື້ນຟູ ແລະ ການພັດທະນາ;
- ການເຮັດໃຫ້ຜູ້ໃຫ້ທຶນເຂົ້າໃຈ ແລະ ການປູກຈິດສໍານຶກເຂົາເຈົ້າກ່ຽວກັບ ຄວາມຈໍາເປັນໃນການເຊື່ອມໂຍງຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນ ການຮັບມືກັບພາວະສຸກເສີນ, ການຟື້ນຟູ ແລະ ການພັດທະນາຕ່າງໆ;
- ການເຮັດໃຫ້ເຈົ້າໜ້າທີ່ແຫ່ງຊາດ ແລະ ທ້ອງຖິ່ນເຂົ້າໃຈກ່ຽວກັບ ບົດບາດຂອງຜູ້ເຄື່ອນຍ້າຍຖິ່ນຖານ ໃນການກໍ່ສ້າງຊຸມຊົນ.

### *ການຊ່ວຍເຫຼືອພາກສ່ວນອື່ນໆທີ່ປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ*

ອົງການຈັດຕັ້ງສາກົນສາມາດໃຫ້ຄໍາແນະນໍາແບບຊ່ຽວຊານ ແລະ ການຊ່ວຍເຫຼືອດ້ານວິຊາການໃຫ້ແກ່ລັດ, ຜູ້ຈັດຫາງານ, ຜູ້ຈ້າງງານ ແລະ ຜູ້ມີສ່ວນຮ່ວມອື່ນໆກ່ຽວກັບວິທີການນໍາເອົາການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນລະບົບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ. ບາງກິດຈະກໍາສໍາຄັນລວມມີ:

- ໃຫ້ການສະໜັບສະໜູນເພື່ອດັດປັບ ຫຼື ພັດທະນານະໂຍບາຍ ແລະ ລະບຽບຂັ້ນຕອນກ່ຽວກັບລະບົບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ຮັບມືກັບພາວະສຸກເສີນ ໂດຍຄໍານຶງເຖິງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄວາມຕ້ອງການຂອງເຂົາເຈົ້າ;
- ໃຫ້ການສະໜັບສະໜູນກ່ຽວກັບວິທີການດໍາເນີນການເຊື່ອມໂຍງຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນລະບົບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ ລວມທັງການຝຶກອົບຮົມໃຫ້ແກ່ຜູ້ຮັບມືໃນດ່ານແນວໜ້າ;
- ການອໍານວຍຄວາມສະດວກໃຫ້ແກ່ການປະສານງານໃນລະດັບຊາດ ແລະ ທ້ອງຖິ່ນ;
- ການຊ່ວຍເຫຼືອຊຸມຊົນຜູ້ເຄືອນຍ້າຍຖິ່ນຖານໃນການສ້າງກຸ່ມ ຫຼື ໂຄງສ້າງການຕາງໜ້າທີ່ສາມາດເຮັດໜ້າທີ່ເປັນຈຸດພົວພັນຕິດຕໍ່ສໍາລັບເຈົ້າໜ້າທີ່ ຫຼື ອົງການຈັດຕັ້ງຕ່າງໆໃນກໍລະນີເກີດວິກິດການ.

## ອົງການຈັດຕັ້ງສັງຄົມ

*ການມີສ່ວນຮ່ວມຂອງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານໃນແຜນການປ້ອງກັນ, ກະກຽມຄວາມພ້ອມ ແລະ ການຮັບມືກັບໄພສຸກເສີນ*

ອົງການຈັດຕັ້ງສັງຄົມ ລວມທັງສະມາຄົມຜູ້ເຄື່ອນຍ້າຍຖິ່ນຖານ, ອົງການຊຸມຊົນ ແລະ ກຸ່ມທີ່ມີຄວາມເຊື່ອທາງສາສະໜາສາມາດເອື້ອອຳນວຍໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມ ໂດຍສະເພາະປະຊາກອນທີ່ຢູ່ແບບໂດດດ່ຽວ ແລະ ກຸ່ມຄົນສ່ວນໜ້ອຍ ເຂົ້າໃນແຜນການປ້ອງກັນ, ກະກຽມຄວາມພ້ອມ ແລະ ຮັບມືກັບພາວະສຸກເສີນ. ມາດຕະການເພື່ອຍົກສູງການມີສ່ວນຮ່ວມຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການວາງແຜນການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ ລວມມີ:

- ການເປັນກະບອກສຽງ-ການສະໜັບສະໜູນ ເຈົ້າໜ້າທີ່ແຫ່ງຊາດ ແລະ ທ້ອງຖິ່ນລວມທັງຜູ້ມີສ່ວນຮ່ວມໃນການຮັບມືກັບພາວະສຸກເສີນ ໂດຍລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນການວາງແຜນການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ ແລະ ແນະນຳວິທີທີ່ເຂົາເຈົ້າຈະເຮັດໄດ້ດັ່ງທີ່ກ່າວມານັ້ນ (ເຊັ່ນ: ລະບຸພາສາທີ່ຜູ້ເຄື່ອນຍ້າຍເວົ້າໂດຍທົ່ວໄປ, ການອະທິບາຍອຸປະສັກທາງດ້ານວັດທະນະທຳ ແລະ ທາງສັງຄົມທີ່ຕ້ອງແກ້ໄຂເພື່ອໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດເຂົ້າເຖິງການຊ່ວຍເຫຼືອ, ການລະບຸພື້ນທີ່ຊຸມຊົນທີ່ຜູ້ເຄື່ອນຍ້າຍຖິ່ນຖານເຂົ້າຫາ ຫຼື ສະດວກໃຈໃນການໄປຮ່ວມ ໃນກອງປະຊຸມວາງແຜນຂັ້ນທ້ອງຖິ່ນ);
- ການສ້າງສະມາຄົມທີ່ໃຫ້ການສະໜັບສະໜູນເຊິ່ງກັນ ແລະ ກັນ ຜ່ານອົງການຜູ້ເຄື່ອນຍ້າຍຖິ່ນຖານ-ຜູ້ອົບພະຍົບໃນປະເທດຕ່າງໆ;
- ການພັດທະນາເຄື່ອງມື ແລະ ກົນໄກທີ່ເໝາະສົມກັບວັດທະນະທຳ ແລະ ຄວາມສາມາດທາງພາສາເພື່ອການມີສ່ວນຮ່ວມຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ;
- ການຈັດການປະຊຸມສຳມະນາ ຫຼື ການຝຶກອົບຮົມກ່ຽວກັບ ແຜນການກະກຽມຄວາມພ້ອມຮັບມືກັບວິກິດການແບບມີສ່ວນຮ່ວມຂອງຜູ້ເຄື່ອນຍ້າຍຖິ່ນຖານ.

## ພາກປະຕິບັດໃນການນຳໃຊ້ ແນວທາງປະຕິບັດ 5:
## ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນການວາງແຜນການສຳຮອງ ແລະ ໃຫ້ລວບລວມຄວາມຕ້ອງການ ແລະ ຄວາມອາດສາມາດຂອງເຂົາເຈົ້າເຂົ້ານຳ

**ຜູ້ມີສ່ວນຮ່ວມຫຼາຍຝ່າຍ**

### *ການຮ່ວມມື ແລະ ການປະສານງານຂັ້ນທ້ອງຖິ່ນ*

ການຮ່ວມມື ແລະ ການປະສານງານກັບຜູ້ມີສ່ວນຮ່ວມພາກສະຖາບັນ ແລະ ບໍ່ແມ່ນສະຖາບັນທີ່ຫຼາກຫຼາຍ ເປັນອົງປະກອບຫຼັກຂອງຄວາມພະຍາຍາມໃນການວາງແຜນສຳຮອງ ເຊິ່ງຈະເຮັດໃຫ້ຜູ້ມີສ່ວນຮ່ວມສາມາດແບ່ງປັນຊັບພະຍາກອນ ແລະ ໝູນໃຊ້ຄວາມອາດສາມາດທີ່ມີໃຫ້ເກີດປະໂຫຍດ. ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງລວມມີ:

- ກົງສຸນ ແລະ ຜູ້ຕາງໜ້າອື່ນໆຂອງຜູ້ເຄື່ອນຍ້າຍຖິ່ນຖານໃນລັດຕົ້ນທາງ ທີ່ປະຈຳຢູ່ລັດປາຍທາງ (ເຊັ່ນ ຜູ້ຊ່ວຍທູດທີ່ຮັບຜິດຊອບຂົງເຂດແຮງງານ);
- ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ, ອົງການຊຸມຊົນ ແລະ ອົງການທີ່ມີຄວາມເຊື່ອທາງສາສະໜາ ທີ່ເຮັດວຽກກັບຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ;
- ຜູ້ນຳ ແລະ ຜູ້ຕາງໜ້າຂອງ ກຸ່ມ ແລະ ສະມາຄົມຜູ້ເຄື່ອນຍ້າຍຖິ່ນຖານ;
- ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານ ແລະ ສະມາຄົມແຮງງານທີ່ເປັນປະໂຫຍດ-ກ່ຽວຂ້ອງສະເພາະກັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ;
- ບໍລິສັດນຳທ່ຽວ, ໂຮງແຮມ ແລະ ສະມາຄົມຂອງເຂົາເຈົ້າ;
- ຜູ້ແປພາສາ ແລະ ບຸກຄົນກາງເຊື່ອມຈອດ ທາງດ້ານວັດທະນະທຳ.

### *ການສະໜັບສະໜູນເພື່ອການວາງແຜນສຳຮອງຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍ*

ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມອາດຢູ່ໃນຖານະທີ່ດີທີ່ສຸດໃນການນຳພາຂະບວນການວາງແຜນການສຳຮອງຮ່ວມກັນ. ສະມາຄົມອຸດສາຫະກຳ ຫຼື ສະມາຄົມຜູ້ຈ້າງງານກໍສາມາດເຮັດບົດບາດດັ່ງກ່າວນີ້ໄດ້ເຊັ່ນກັນກັບ ລູກຈ້າງ ໂດຍສະເພາະກັບ ທຸລະກິດນ້ອຍ ຫຼື ຜູ້ຈ້າງງານສ່ວນບຸກຄົນທີ່ມີຊັບພະຍາກອນຈຳກັດສຳລັບການວາງແຜນ. ການສະໜັບສະໜູນການວາງແຜນສຳຮອງຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍ ລວມມີ:

- ການສ້າງຕັ້ງຖານຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍເພື່ອປະສານງານແຜນສຳຮອງ;
- ການນຳພາ ກິດຈະກຳການສ້າງແຜນ ທີ່ມີຊັບສິນຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍ;
- ການເຈລະຈາຂໍ້ຕົກລົງຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍ ກັບຜູ້ສະໜອງການບໍລິການ;
- ການພັດທະນາແຜນມາດຕະຖານທີ່ຜູ້ມີສ່ວນຮ່ວມສ່ວນບຸກຄົນສາມາດເຂົ້າຮ່ວມ ຫຼື ປັບໄປນຳໃຊ້.

### *ການຝຶກຊ້ອມ ແລະ ການທົດສອບໂດຍການມີສ່ວນຮ່ວມຂອງຜູ້ເຄື່ອນຍ້າຍຖິ່ນຖານ*

ການຝຶກຊ້ອມເພື່ອທົດສອບແຜນສຳຮອງຈະຮອງຮັບຫຼາຍຈຸດປະສົງ. ກິດຈະກຳດັ່ງກ່າວຊ່ວຍໃນການລະບຸອຸປະສັກ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດໃນບໍລິບົດຂອງວິກິດການ ແລະ ປູກຈິດສຳນຶກກ່ຽວກັບ ມາດຕະການການກະກຽມ

ຄວາມພ້ອມ ແລະ ການຮັບມືຂອງຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ. ໃນການທົດສອບແຜນກັບຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ, ປັດໄຈທີ່ຕ້ອງຄຳນຶງເຖິງລວມມີ:

- ການຝຶກຊ້ອມດ້ານເວລາ ເພື່ອອຳນວຍຄວາມສະດວກໃຫ້ແກ່ການມີສ່ວນຮ່ວມສູງສຸດ;
- ການໃຫ້ສິ່ງຈູງໃຈເພື່ອການເຂົ້າຮ່ວມ;
- ການປະສານງານກັບອົງການຈັດຕັ້ງ ແລະ ການໂຄສະນາການຝຶກຊ້ອມແຜນການສຳຮອງກັບສະຖາບັນທີ່ຜູ້ເຄື່ອນຍ້າຍຖິ່ນຖານໄວ້ເນື້ອເຊື່ອໃຈ;
- ການຝຶກຊ້ອມແບບຊ້ຳໆເພື່ອປັບປຸງຄວາມຮູ້ ແລະ ການກະກຽມຄວາມພ້ອມຂອງຜູ້ເຄື່ອນຍ້າຍຖິ່ນຖານໄລຍະສັ້ນ, ຜູ້ທີ່ຢູ່ໃນສະຖານະການລໍຖ້າປ່ຽນໄປປະເທດອື່ນ ແລະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ມາໃໝ່;
- ອຸປະສັກທີ່ຜູ້ຄື່ອນຍ້າຍຖິ່ນຖານພົບພໍ້ ຍ້ອນສະຖານະການເຂົ້າເມືອງທີ່ບໍ່ໄດ້ຈົດທະບຽນລວມທັງ ໃນບໍລິບົດການຈ້າງງານແບບປົດລັບ ບໍ່ເປີດເຜີຍ ເຊິ່ງຜູ້ຈ້າງງານຈຳກັດຄວາມສາມາດໃນການເຂົ້າຮ່ວມຂອງຜູ້ ເຄື່ອນຍ້າຍຖິ່ນຖານ.

### *ແຜນການສຳຮອງພາກພື້ນ ແລະ ຂ້າມຊາຍແດນ*

ແຜນການສຳຮອງສອງຝ່າຍ ຫຼື ຫຼາຍຝ່າຍກ່ຽວກັບການປະສານງານດ້ານວິກິດການຂ້າມຊາຍແດນ ຈະສາມາດປັບປຸງການຮັບມື. ແຜນການດັ່ງກ່າວຍິ່ງຈະມີຄຸນຄ່າສຳລັບພື້ນທີ່ໆມີປະຊາກອນຊັດເຊພະເນຈອນເຊັ່ນ ຜູ້ລ້ຽງສັດແບບເຄື່ອນຍ້າຍຖິ່ນ ຫຼື ກຸ່ມຄົນຊົນເຜົ່າຜູ້ທີ່ຂ້າມຊາຍແດນສາກົນຢ່າງເປັນປົກກະຕິ ໃນການດຳລົງຊີວິດແບບດັ້ງເດີມຂອງເຂົາເຈົ້າ. ການໃຫ້ປະຊາກອນຂ້າມຊາຍແດນ ແລະ ຊຸມຊົນເຈົ້າພາບ ຊ່ວຍປັບປຸງຄວາມຮູ້ສຶກເປັນເຈົ້າການຕໍ່ແຜນ ແລະ ສາມາດປັບປຸງການຮັບມືກັບພາວະວິກິດຕ່າງໆ. ການສ້າງແຜນທີ່ຊັບພະຍາກອນທີ່ມີຢູ່ ແລະ ການສ້າງຊັບສິນກອງກາງໄວ້ລ່ວງໜ້າ ຈະສາມາດຊ່ວຍຫລຸດຜ່ອນການແຂ່ງຂັນເພື່ອນຳໃຊ້ຊັບພະຍາກອນດັ່ງກາວໃນໄລຍະເກີດວິກິດ ແລະ ໝູນໃຊ້ຊັບພະຍາກອນທີ່ມີຈຳກັດນັ້ນໃຫ້ເກີດປະໂຫຍດສູງສຸດ. ໃນການພັດທະນາແຜນສຳຮອງດັ່ງກ່າວ, ປັດໄຈທີ່ຄວນພິຈາລະນາ ແລະ ເອົາເຂົ້ານຳລວມມີ:

- ແຜນທີ່ທາງພູມສາດຂອງພື້ນທີ່ຕ່າງໆທີ່ກ່ຽວຂ້ອງ;
- ການກະຈາຍ ແລະ ຄຸນລັກສະນະດ້ານປະຊາກອນທີ່ກ່ຽວຂ້ອງຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ພາບສະແດງເສັ້ນທາງຕ່າງໆເພື່ອການອົບພະຍົບທີ່ກ່ຽວຂ້ອງ.

## ລັດປາຍທາງ

### *j NK@KWbZYCJ bLR^K© E@L NBYKF¤FI bI ^KJ Ba ¤j U BV^RHYC@KJ Y^GRa*

ແຜນການສຳຮອງທີ່ດັດປັບມາໃຊ້ໂດຍຄຳນຶງເຖິງຄຸນລັກສະນະທາງວັດທະນະທຳ, ສັງຄົມ, ເສດຖະກິດ ແລະ ດ້ານປະຊາກອນຂອງຜູ້ເຄື່ອນຍ້າຍຖິ່ນຖານ ແມ່ນສາມາດປັບປຸງລະດັບການກະກຽມຄວາມພ້ອມຂອງເຂົາເຈົ້າ ແລະ ອຳນວຍຄວາມສະດວກໃຫ້ແກ່ການຊ່ວຍເຫຼືອເຂົາເຈົ້າໃນພາວະສຸກເສີນ. ແຜນການດັ່ງກ່າວຄວນກວມເອົາຄວາມເຂົ້າໃຈທີ່ເລິກເຊິ່ງກ່ຽວກັບຄວາມກັງວົນຂອງປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ ເຊິ່ງອາດອີງຕາມຂໍ້ມູນປະຫວັດຂອງຊຸມຊົນທີ່ບົ່ງບອກລັກສະນະກ່ຽວຂ້ອງຂອງຊຸມຊົນທີ່ມີຄວາມສ່ຽງ ໂດຍສະເພາະຢູ່ໃນພື້ນທີ່ໆມີຄົນເຂົ້າເມືອງຈຳນວນຫຼວງຫຼາຍ ພ້ອມທັງ ມີແນວໂນ້ມການເຄື່ອນຍ້າຍ. ປັດໄຈທີ່ຕ້ອງພິຈາລະນາໃນການພັດທະນາແຜນການສຳຮອງລວມມີ:

- ຄວາມເປັນຈິງທີ່ວ່າຜູ້ເຄື່ອນຍ້າຍຖິ່ນຖານສ່ວນໃຫຍ່ອາໄສ ແລະ ເຮັດວຽກໃນພື້ນທີ່ໆມີຄວາມສ່ຽງສູງທີ່ມີໂອກາດເກີດໄພພິບັດທຳມະຊາດ ແລະ ການຊຸດໂຊມດ້ານສິ່ງແວດລ້ອມແມ່ນ ຖືກແຍກຈາກຊຸມຊົນອື່ນໆ ຫຼື

ຂາດໂຄງລ່າງພື້ນຖານ ແລະ ການບໍລິການພື້ນຖານ;

- ປະຕິກິລິຍາຕອບໂຕ້ຕໍ່ໄພພິບັດທຳມະຊາດ, ຄວາມຂັດແຍ່ງ ແລະ ການແຈ້ງເຕືອນ ທີ່ຜູ້ເຄື່ອນຍ້າຍຖິ່ນຖານຄວນຮຽນຮູ້ທາງວັດທະນະທຳ
- ຜູ້ມີສ່ວນຮ່ວມພາກສ່ວນໃດທີ່ຈະຢູ່ໃນຖານະທີ່ຈະສື່ສານ ແລະ ພົວພັນກັບຜູ້ເຄື່ອນຍ້າຍຖິ່ນຖານໄດ້ດີທີ່ສຸດ (ເຊັ່ນ: ຖ້າວ່າເຂົາເຈົ້າບໍ່ໄວ້ເນື້ອເຊື່ອໃຈເຈົ້າໜ້າທີ່ ກໍໃຫ້ພິຈາລະນາວິທີການຫລຸດຜ່ອນການມີໜ້າຂອງເຈົ້າໜ້າທີ່ໃນເຄື່ອງແບບຢູ່ໃນພື້ນທີ່ອົບພະຍົບ);
- ການບໍລິການຂົນສົ່ງສະເພາະ ຍ້ອນວ່າ ຜູ້ເຄື່ອນຍ້າຍຖິ່ນຖານອາດມີການເຂົ້າເຖິງພາຫະນະສ່ວນຕົວຢ່າງຈຳກັດ;
- ຜູ້ນຳສະເໜີ ແລະ ປ້າຍໃນຫຼາຍພາສາເພື່ອແນະນຳໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດເຂົ້າເຖິງການບໍລິການ ແລະ ການຊ່ວຍເຫຼືອ ລວມທັງການອົບພະຍົບ;
- ການລະບຸບ່ອນລີ້ໄພທີ່ປອດໄພ ເພື່ອຮອງຮັບຜູ້ເຄື່ອນຍ້າຍຖິ່ນຖານລວມທັງໃນບໍລິບົດຂອງການອົບພະຍົບ;
- ການສະສົມ-ການກັກຕຸນ ຊັບພະຍາກອນຕ່າງໆທີ່ຄຳນຶງເຖິງ ຄວາມຕ້ອງການດ້ານອາຫານ, ສາສະໜາ, ຄວາມລັບ ຫຼື ດ້ານພາສາຂອງຜູ້ເຄື່ອນຍ້າຍຖິ່ນຖານ.

### *ແຜນສຳຮອງເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກັກຂັງ*

ການສ້າງແຜນສຳຮອງເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກັກຂັງໃນກໍລະນີເກີດວິກິດການແມ່ນຈະຮັບປະກັນບໍ່ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກັກຂັງ ຖືກລືມ ແລະ ໄດ້ຮັບການສະໜັບສະໜູນຕາມທີ່ເຂົາເຈົ້າຕ້ອງການ. ໃນສະຖານະການວິກິດ, ຜູ້ເຄື່ອນຍ້າຍບາງລາຍທີ່ຖືກກັກຂັງອາດຕ້ອງຕິດຕໍ່ລັດຕົ້ນທາງຂອງຕົນເພື່ອຂໍການສະໜັບສະໜູນໃນການອົບພະຍົບ. ຜູ້ອື່ນອາດຈຳເປັນຕ້ອງຍົກຍ້າຍເພື່ອອອກຈາກຄວາມອັນຕະລາຍ. ແຜນສຳຮອງອາດໝູນໃຊ້ປະໂຫຍດຈາກ ຂໍ້ຕົກລົງການຮ່ວມມືກັບອົງການຈັດຕັ້ງສັງຄົມ ຫຼື ອົງການຈັດຕັ້ງສາກົນທີ່ສະໜອງການບໍລິການໃຫ້ແກ່ຜູ້ເຄື່ອນຍ້າຍທີ່ຖືກກັກຂັງ.

## ລັດຕົ້ນທາງ

### *ລະບົບການເຕືອນພາວະວິກິດ*

ລະບົບການເຕືອນໄພທີ່ຕິດຕາມວິກິດການໃນລັດຕົ້ນທາງ ແລະ ແຈ້ງໃຫ້ເຈົ້າໜ້າທີ່ປະຕິບັດການອີງຕາມລະດັບຄວາມຮ້າຍແຮງຂອງວິກິດ ຈະໃຫ້ຄວາມແນ່ນອນແກ່ເຈົ້າໜ້າທີ່ ແລະ ພົນລະເມືອງໃນຕ່າງປະເທດ. ການປະຕິບັດການທີ່ເໝາະສົມກັບລະດັບຂອງວິກິດການອາດຈະເລີ່ມແຕ່ ການຈຳກັດການເດີນທາງແບບສະໝັກໃຈ, ການເດີນທາງກັບຄືນແບບສະໝັກໃຈ ຫຼື ການອົບພະຍົບ ຫຼື ການເດີນທາງກັບຄືນແບບບັງຄັບ. ໄລຍະຂອງລະບົບການເຕືອນໄພວິກິດອາດລວມ:

ໄລຍະເຝົ້າລະວັງ ເຊິ່ງການຮັບມືອາດລວມມີ:

- ການຕິດຕາມສະຖານະການ;
- ການປະເມີນ ແລະ ການປັບປຸງແຜນການສຳຮອງໃຫ້ເໝາະສົມກັບສະພາບຫຼ້າສຸດ;
- ການເລີ່ມຕົ້ນປະຕິບັດການຂອງ ຄະນະຄຸ້ມຄອງວິກິດ ແລະ ໂຄງສ້າງສະໜັບສະໜູນອື່ນໆ;
- ການປະສານງານກັບຜູ້ຈ້າງງານເພື່ອຮັບປະກັນການກຽມຄວາມພ້ອມຂອງເຂົາເຈົ້າໃນການຈັດຕັ້ງປະຕິບັດແຜນການສຳຮອງທີ່ກ່ຽວຂ້ອງຂອງຕົນ;
- ແນະນຳພົນລະເມືອງໃຫ້ໄປປະກອບສ່ວນເພື່ອຂໍ ຫຼື ຫາເອກະສານລະບຸຕົວຕົນ.

ໄລຍະເວລາຈຳກັດ ເຊິ່ງການຮັບມືອາດລວມມີ:

- ແນະນຳໃຫ້ພົນລະເມືອງໄປຢູ່ບ່ອນລີ້ໄພຈຸດໃດໜຶ່ງທີ່ແນ່ນອນກ່ອນໃນໄລຍະທີ່ຄວາມສ່ຽງສູງຂຶ້ນກວ່າເກົ່າ;

- ການຂົນຂວາຍບຸກຄະລາກອນຫຼັກໆໄປຍັງພື້ນທີ່ໆກ່ຽວຂ້ອງ;
- ການຮັບປະກັນຄວາມປອດໄພຂອງເສັ້ນທາງການເດີນທາງ ແລະ ເສັ້ນທາງອອກນອກປະເທດ;
- ການກະກຽມເພື່ອການກັບຄືນມາ ແລະ ການເຊື່ອມໂຍງຄືນສູ່ສັງຄົມຂອງພົນລະເມືອງ.

ໄລຍະການເດີນທາງກັບຄືນລັດປາຍທາງແບບສະໝັກໃຈ ເຊິ່ງການຮັບມືອາດລວມມີ:
- ການຈັດຕັ້ງປະຕິບັດລະບຽບຂັ້ນຕອນເພື່ອໃຫ້ພົນລະເມືອງຍົກຍ້າຍໄປບ່ອນອື່ນພາຍໃນລັດຕົ້ນທາງ;
- ເລັ່ງ ແລະ ຊ່ວຍພົນລະເມືອງໃນການກັບຄືນໄປຍັງລັດຕົ້ນທາງຂອງເຂົາເຈົ້າ.

ໄລຍະການເດີນທາງກັບຄືນ ເຊິ່ງການຮັບມືອາດລວມມີ:
- ການຈັດຕັ້ງປະຕິບັດລະບຽບຂັ້ນຕອນການອົບພະຍົບ ແລະ ການເດີນທາງກັບຄືນ.

### *ແຜນການສຳຮອງຂອງກົງສຸນທ້ອງຖິ່ນ*

ລັດຕົ້ນທາງອາດມີແຜນການສຳຮອງມາດຕະຖານເພື່ອປົກປ້ອງພົນລະເມືອງຂອງຕົນຢູ່ຕ່າງປະເທດ ແຕ່ວ່າ ອາດຈຳເປັນຕ້ອງດັດປັບແຜນການເຫຼົ່ານີ້ເພື່ອໃຫ້ເຂົ້າກັບບໍລິບົດໃນທ້ອງຖິ່ນຢູ່ລັດປາຍທາງ. ແຜນການສຳຮອງສະເພາະພື້ນທີ່ອາດລວມມີ:

- ຂໍ້ມູນຂອງພົນລະເມືອງຢູ່ໃນລັດປາຍທາງ (ເຊັ່ນ: ຈຳນວນ, ສະຖານທີ່, ຄຸນລັກສະນະ);
- ການຈັດຕັ້ງທີມງານຄຸ້ມຄອງວິກິດ, ໜ້າທີ່, ລະບຽບຂັ້ນຕອນ ແລະ ພາລະບົດບາດສະເພາະຂອງສະມາຊິກທີມງານເພື່ອການຮັບມືກັບພາວະສຸກເສີນ. ທີມງານດັ່ງກ່າວອາດສ້າງຕັ້ງຂຶ້ນເປັນຖາວອນໃນຂັ້ນປະຕິບັດການ ແລະ ຕາມຄວາມເໝາະສົມ ອາດນຳພາໂດຍທູດ ຫຼື ກົງສຸນໃຫຍ່ ທີ່ປະກອບດ້ວຍ ເຈົ້າໜ້າທີ່ສະຖານທູດຮັບຜິດຊອບຂົງເຂດແຮງງານ ຫຼື ເຈົ້າໜ້າທີ່ດ້ານການເມືອງ;
- ເສັ້ນທາງເດີນທາງອອກປະເທດທາງອາກາດ, ບົກ ຫຼື ນໍ້າ;
- ສະຖານທີ່ພັກຊົ່ວຄາວລວມທັງພາຍໃນລັດຕົ້ນທາງ;
- ຄວາມຕ້ອງການດ້ານການຂົນສົ່ງ ແລະ ການຄຳນວນຄ່າໃຊ້ຈ່າຍ;
- ຂໍ້ມູນການຕິດຕໍ່ຢູ່ໃນລັດຕົ້ນທາງ, ລັດທາງຜ່ານ ແລະ ອົງການຈັດຕັ້ງສາກົນ;
- ຂໍ້ມູນການຕິດຕໍ່ຂອງເຈົ້າໜ້າທີ່ ແລະ ພະນັກງານກົງສຸນ;
- ຂໍ້ມູນການຕິດຕໍ່ການຂົນສົ່ງ, ສະຖານທີ່ພັກ ແລະ ຜູ້ສະໜອງການບໍລິການຫຼັກອື່ນໆ;
- ລາຍລະອຽດກ່ຽວກັບຄວາມອາດສາມາດ ແລະ ຊັບພະຍາກອນເພື່ອການຍົກຍ້າຍ ຫຼື ການອົບພະຍົບພົນລະເມືອງ;
- ກົນໄກການຮ່ວມມືກັບ ສຳນັກງານກົງສຸນອື່ນໆຢູ່ໃນພາກພື້ນ;
- ກົນໄກການຮ່ວມມືກັບ ສຳນັກງານກົງສຸນຂອງລັດຕົ້ນທາງອື່ນໆ.

### *ແຜນການ ແລະ ຄູ່ມືແນະນຳການອົບພະຍົບ*

ກົດລະບຽບ ແລະ ບັນທັດຖານຊັດເຈນໃນການດຳເນີນການອົບພະຍົບ ອາດລວມມີ:
- ບັນທັດຖານໃນການຕັດສິນໃຈທີ່ຈະອົບພະຍົບ;
- ບັນທັດຖານດ້ານຜູ້ທີ່ມີເງື່ອນໄຂທີ່ຈະອົບພະຍົບໄດ້ (ເຊັ່ນ: ພົນລະເມືອງ, ສະມາຊິກຄອບຄົວທີ່ບໍ່ແມ່ນພົນລະເມືອງ, ພະນັກງານທີ່ຈັດຫາງານຈາກຕ່າງປະເທດ ຫຼື ພາຍໃນປະເທດ ຈະສາມາດອົບພະຍົບໄດ້ ຫຼື ບໍ່);
- ເອກະສານທີ່ຈຳເປັນເພື່ອພິສູດການມີເງື່ອນໄຂອົບພະຍົບ;
- ລະບຽບຂັ້ນຕອນເພື່ອສະໜອງເອກະສານຊົ່ວຄາວຖ້າວ່າ ເອກະສານການລະບຸຕົວຕົນ ຫຼື ເອກະສານການເດີນທາງຫາກສູນຫາຍ, ຖືກທຳລາຍ ຫຼື ຖືກຍຶດ;
- ການສື່ສານກ່ຽວກັບລະບຽບຂັ້ນຕອນການອົບພະຍົບ (ເຊັ່ນ ຊຸດເອກະສານທີ່ມີຂໍ້ມູນກ່ຽວກັບລະບຽບຂັ້ນຕອນ

ການອົບພະຍົບ ທີ່ອອກໃຫ້ພ້ອມກັບການອອກໜັງສືເດີນທາງ, ໃນເວລາຕິດຕາມການລົງທະບຽນການເດີນທາງໄປຕ່າງປະເທດ ຫຼື ຢູ່ເທິງເວັບໄຊດ໌ຂອງກົງສຸນ);

- ກົນໄກໃນການຂໍຄວາມຊ່ວຍເຫຼືອ;
- ຄວາມຮັບຜິດຊອບສໍາລັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ;
- ການລະບຸສະຖານທີ່ອົບພະຍົບຢູ່ໃນລັດປາຍທາງ ພ້ອມທັງໃນລັດເພື່ອນບ້ານ ຫຼື ລັດອື່ນໆ;
- ການຈັດແຈງກະກຽມສໍາລັບກຸ່ມບອບບາງ-ມີຄວາມສ່ຽງສະເພາະເຊັ່ນ ເດັກນ້ອຍທີ່ບໍ່ມີຄົນຕິດຕາມ ແລະ ຖືກແຍກ, ບຸກຄົນທີ່ພິການ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການຂູດຮີດ;
- ລະບຽບຂັ້ນຕອນໃນການເອົາເຄື່ອງຂອງສ່ວນຕົວ ລວມທັງສັດລ້ຽງ ແລະ ຊັບສິນສ່ວນຕົວໄປນໍາ;
- ຂະບວນການດ້ານພາສີອາກອນ ແລະ ການແຈ້ງເອກະສານອື່ນໆ;
- ການລະບຸ ແລະ ພົວພັນກັບອົງການຈັດຫາ ແລະ ຂອກວຽກລວມທັງ ການສົ່ງແຮງງານໄປຕ່າງປະເທດ ຫຼື ຜູ້ຈ້າງງານລາຍໃຫຍ່ຢູ່ໃນລັດປາຍທາງ.

### *ຄະນະຮັບມືແບບໄວ ຫຼື ຮັບມືກັບວິກິດ*

ທີມງານຮັບມືກັບວິກິດ ຫຼື ຮັບມືແບບໄວ ແມ່ນສາມາດສ້າງຕັ້ງຂຶ້ນໃນທັນທີໃນກໍລະນີເກີດເຫດການສຸກເສີນ ເພື່ອສະໜັບສະໜູນໂຄງສ້າງທີ່ມີຢູ່ແລ້ວໃນລັດຕົ້ນທາງ. ທີມງານດັ່ງກ່າວອາດລວມ ຊ່ຽວຊານ ແລະ ພະນັກງານກົງສຸນຈາກອົງການທີ່ເໝາະສົມຂອງລັດຕົ້ນທາງທີ່ໄດ້ຮັບການຝຶກອົບຮົມໃຫ້ປະຕິບັດໜ້າທີ່ກົງສຸນ ຫຼື ໃຫ້ການຊ່ວຍເຫຼືອດ້ານມະນຸດສະທໍາ. ໜ້າທີ່ ແລະ ບົດບາດຂອງທີມງານອາດລວມມີ:

- ການຮັກສາ ແລະ ການປັບປຸງຫຼ້າສຸດ ຂໍ້ມູນກ່ຽວກັບພົນລະເມືອງຢູ່ໃນລັດປາຍທາງ;
- ການຮັບໂຮມຂ່າວລັບກັ່ນຕອງ (intelligence reports) ແລະ ໃຫ້ຜົນການປະເມີນຂັ້ນທ້ອງຖິ່ນ, ຢ່າງທັນເວລາ, ເອກະລາດ ແລະ ເຊື່ອຖືໄດ້ກ່ຽວກັບ ສະຖານະການດ້ານຄວາມສະຫງົບ ແລະ ດ້ານການເມືອງຢູ່ໃນລັດຕົ້ນທາງ;
- ຊ່ວຍໃນການປັບປຸງຫຼ້າສຸດ ແລະ ໃນການຈັດຕັ້ງປະຕິບັດແຜນການອົບພະຍົບ ແລະ ແຜນການສໍາຮອງ;
- ການເຈລະຈາກັບລັດປາຍທາງ, ລັດທາງຜ່ານ, ຜູ້ຈ້າງງານ ຫຼື ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງອື່ນໆຕາມຄວາມຈໍາເປັນເພື່ອລົບລ້າງສິ່ງກີດຂວາງໃນການໃຫ້ຄວາມຊ່ວຍເຫຼືອແກ່ພົນລະເມືອງ;
- ຊ່ວຍໃນການຊອກຫາ ແລະ ຍົກຍ້າຍພົນລະເມືອງໄປຍັງພື້ນທີ່ໆປອດໄພ ແລະ ໝັ້ນຄົງກວ່າເກົ່າ.

## ຜູ້ມີສ່ວນຮ່ວມພາກເອກະຊົນ

### *ການວາງແຜນສໍາຮອງຂອງບໍລິສັດ*

ການລວມເອົາແຮງງານເຄື່ອນຍ້າຍເຂົ້າໃນການວາງແຜນການສໍາຮອງຂອງບໍລິສັດຈະຊ່ວຍຮັບປະກັນວ່າແຮງງານຈໍານວນຫຼາຍທີ່ສຸດຈະໄດ້ຮັບການຊ່ວຍເຫຼືອ ແລະ ປົກປ້ອງໃນໄລຍະວິກິດການ. ແຜນການສໍາຮອງຂອງບໍລິສັດແມ່ນມີຄວາມສໍາຄັນໂດຍສະເພາະ ບໍລິສັດທີ່ຈ້າງຜູ້ເຄື່ອນຍ້າຍຖິ່ນຖານໃນຈໍານວນຫຼວງຫຼາຍ. ແຜນສໍາຮອງຂອງບໍລິສັດຄວນສອດຄ່ອງກັບແຜນສໍາຮອງຂອງຜູ້ມີສ່ວນຮ່ວມພາກລັດຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້. ການວາງແຜນສໍາຮອງຂອງບໍລິສັດອາດລວມມີ:

- ລະບຸວ່າໜ່ວຍງານໃດ ແລະ ບຸກຄົນໃດທີ່ມີຄວາມຮັບຜິດຊອບໃນການປົກປ້ອງລູກຈ້າງເຄື່ອນຍ້າຍຖິ່ນຖານ;
- ບັນທັດຖານສໍາລັບຜູ້ທີ່ມີເງື່ອນໄຂໃນການຍົກຍ້າຍ ແລະ ອົບພະຍົບ (ເຊັ່ນ ສະມາຊິກຄອບຄົວຂອງຜູ້ເຄື່ອນຍ້າຍຖິ່ນຖານຜູ້ທີ່ມີເງື່ອນໄຂ);

- ລະບຸວ່າຜູ້ໃດມີສິດທີ່ຈະສັ່ງໃຫ້ມີການອົບພະຍົບ, ຂະບວນການຕັດສິນໃຈ ແລະ ວິທີການສື່ສານກ່ຽວກັບການຕັດສິນໃຈ;
- ການຈັດແຈງກະກຽມລ່ວງໜ້າກັບຜູ້ສະໜອງການບໍລິການທີ່ກ່ຽວຂ້ອງ;
- ການເຂົ້າໃຈຊັບພະຍາກອນ ແລະ ການບໍລິການທ້ອງຖິ່ນເທົ່າທີ່ມີ;
- ຂໍ້ມູນການຕິດຕໍ່ກົງສຸນ;
- ການຝຶກອົບຮົມ ແລະ ການທົດສອບແຜນການສໍາຮອງກັບລູກຈ້າງລວມທັງ ແຮງງານເຄື່ອນຍ້າຍ;
- ການສ້າງກົນໄກເພື່ອສື່ສານກັບລູກຈ້າງ ລວມທັງແຮງງານເຄື່ອນຍ້າຍ ໃນກໍລະນີເກີດວິກິດການ;
- ການໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບວິທີການເຂົ້າເຖິງ ຄ່າແຮງງານທີ່ຄົງຄ້າງ, ການຊ່ວຍເຫຼືອດ້ານເງິນເດືອນ ແລະ ດ້ານເງິນສົດ ແລະ ປະກັນໄພ;
- ການພັດທະນາບັນທັດຖານເພື່ອກໍານົດວ່າ ເມື່ອໃດ ຈະມີຄວາມປອດໄພເພື່ອໃຫ້ດໍາເນີນງານຄືນຢູ່ໃນລັດປາຍທາງ ແລະ ເພື່ອໃຫ້ຜູ້ເຄື່ອນຍ້າຍຖິ່ນຖານໄດ້ເດີນທາງກັບຄືນມາຍັງລັດປາຍທາງ.

## ອົງການຈັດຕັ້ງສາກົນ

### *ການວາງແຜນການສໍາຮອງລະຫວ່າງອົງການ*

ການລວມເອົາຄວາມຕ້ອງການສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນແຜນສໍາຮອງລະຫວ່າງອົງການ ແມ່ນສາມາດຊ່ວຍໃຫ້ອົງການຈັດຕັ້ງສາກົນສາມາດຕອບສະໜອງຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານໄດ້ດີກວ່າເກົ່າ ໃນໄລຍະການຮັບມືກັບພາວະສຸກເສີນ. ກິດຈະກໍາສໍາຄັນອາດລວມມີ:

- ການລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນເວທີ-ຖານການວາງແຜນສໍາຮອງແຫ່ງຊາດ ແລະ ພາກພື້ນ;
- ການໃຫ້ຄໍາແນະນໍາ ແລະ ແນວທາງກ່ຽວກັບວິທີການນໍາເອົາຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄວາມຕ້ອງການຂອງເຂົາເຈົ້າເຂົ້າໃນການວາງແຜນການສໍາຮອງ ແລະ ເຄື່ອງມືການວາງແຜນສໍາຮອງ;
- ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງມີສ່ວນຮ່ວມໃນການປຶກສາຫາລືກ່ຽວກັບ ການວາງແຜນການສໍາຮອງ;
- ການແປ ເອກະສານກ່ຽວກັບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ ໃນພາສາເຄົ້າ-ພາສາແມ່ຂອງຜູ້ເຄື່ອນຍ້າຍຖິ່ນຖານ.

## ອົງການຈັດຕັ້ງສັງຄົມ

### *ແຜນສໍາຮອງສໍາລັບຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ*

ຜູ້ມີສ່ວນຮ່ວມພາກອົງການຈັດຕັ້ງສັງຄົມໃນທ້ອງຖິ່ນ ສາມາດເຮັດວຽກຮ່ວມກັບຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານເພື່ອຊ່ວຍເຂົາເຈົ້າໃນການພັດທະນາແຜນສໍາຮອງ. ແຜນສໍາຮອງທີ່ຊຸມຊົນເປັນເຈົ້າການ ແມ່ນສາມາດເປັນບ່ອນອີງສໍາລັບແຜນສໍາຮອງຂອງສະຖາບັນໃນຂັ້ນທ້ອງຖິ່ນ ແລະ ແຫ່ງຊາດ, ຢູ່ໃນລັດປາຍທາງ ແລະ ລັດຕົ້ນທາງ. ມາດຕະການເພື່ອພັດທະນາແຜນສໍາຮອງສໍາລັບຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານລວມມີ:

- ການເກັບກຳຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານ, ແຍກຕາມຄຸນລັກສະນະທີ່ກ່ຽວຂ້ອງເຊັ່ນ ອາຍຸ, ເພດ, ສັນຊາດ, ຄວາມພິການ ແລະ ພາສາ;
- ການປະເມີນຄວາມບອບບາງ-ຄວາມສ່ຽງ ໃນການກະກຽມຄວາມພ້ອມ ແລະ ການຄຸ້ມຄອງວິກິດ;
- ການປະເມີນລະດັບຄວາມອາດສາມາດຂອງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານໃນການກະກຽມຄວາມພ້ອມຮັບມືກັບວິກິດ ລວມທັງ ການເຂົ້າເຖິງຂໍ້ມູນ ແລະ ການບໍລິການ, ແລະ ສິ່ງກີດຂວາງດ້ານພາສາ, ດ້ານວັດທະນະທຳ ແລະ ດ້ານອື່ນໆ;
- ການສ້າງແຜນທີ່ ແລະ ຄວາມຊ່ວຍເຫຼືອທີ່ມີໃຫ້ແກ່ປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ.

# ພາກປະຕິບັດໃນການນຳໃຊ້ ແນວທາງປະຕິບັດ 6:
# ສື່ສານຢ່າງມີປະສິດທິຜົນກັບຜູ້ເຄື່ອນຍ້າຍຖິ່ນຖານ

## ຜູ້ມີສ່ວນຮ່ວມຫຼາຍພາກສ່ວນ

### *ຊ່ອງທາງການສື່ສານ ຫຼາຍຊ່ອງທາງ*

ຊ່ອງທາງການສື່ສານຫຼາຍແບບ ແລະ ແບບມີເປົ້າໝາຍທີ່ສາມາດຮັບປະກັນຄຸ້ມຄອງປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຫຼາກຫຼາຍ ແລະ ການຫລຸດຜ່ອນຜົນກະທົບຂອງ ຄວາມລົ້ມເຫຼວ-ການຢຸດສະຫງັກຂອງລະບົບ-ຊ່ອງທາງການສື່ສານທີ່ອາດເກີດຂຶ້ນໄດ້ ເຊັ່ນ ການສູນເສຍລະບົບການເຊື່ອມຕໍ່ອິນເຕີເນັດ ຫຼື ດາວທຽມ. ຊ່ອງທາງການສື່ສານອາດເປັນແບບດັ້ງເດີມ ຫຼື ແບບໃໝ່, ແບບທາງການ ຫຼື ບໍ່ເປັນທາງການ, ແລະ ຄວນມີວິທີທາງທີ່ຊ່ວຍຜູ້ເຄື່ອນຍ້າຍຖິ່ນຖານໃຫ້ເຂົ້າເຖິງຂໍ້ມູນໂດຍບໍ່ຕ້ອງເປີດເຜີຍຕົວຕົນ, ລວມທັງສະຖານະ ຫຼື ສະຖານທີ່ຂອງເຂົາເຈົ້າ. ຊ່ອງທາງການສື່ສານອາດລວມເອົາທາງເລືອກດັ່ງຕໍ່ໄປນີ້ ເຊິ່ງຈະລົງໃນລາຍລະອຽດໃນພາກນີ້:

- ການບໍລິການໂດຍລົງທະບຽນກັບກົງສຸນ ຫຼື ການບໍລິການສະໝັກລົງທະບຽນອື່ນໆ;
- ສື່ສັງຄົມອອນໄລນ໌, ແອັບພິເຄຊັນມືຖື ແລະ ຂໍ້ຄວາມມືຖື;
- ເວັບໄຊດ໌ ແລະ ບົດອອກຂ່າວທາງເວັບໄຊດ໌;
- ວິທະຍຸ, ໂທລະພາບ ແລະ ໜັງສືພິມໃນລັດຕົ້ນທາງ ແລະ ລັດປາຍທາງ ລວມທັງສື່ສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ສາຍໂທດ່ວນ, ສາຍໂທໃຫ້ຊ່ວຍເຫຼືອ ແລະ ສູນບໍລິການທາງໂທລະສັບ;
- ເຄືອຂ່າຍ ແລະ ສະມາຄົມຂອງຜູ້ເຄື່ອນຍ້າຍຖິ່ນຖານ, ຈຸດປະສານງານຫຼັກ ແລະ ຜູ້ນໍາ ພ້ອມທັງການລົງຢ້ຽມຢາມໃຫ້ການຊ່ວຍເຫຼືອແຕ່ລະຄົວເຮືອນ ແລະ ກິດຈະກໍາການລົງຊ່ວຍເຫຼືອຂັ້ນຮາກຖານອື່ນໆ;
- ສູນໃຫ້ຄວາມຊ່ວຍເຫຼືອ ທີ່ຜູ້ເຄື່ອນຍ້າຍຖິ່ນຖານມັກຈະໄປລວມເພື່ອລີ້ໄພ;
- ຫ້ອງການກົງສຸນ;
- ເຄືອຂ່າຍ ແລະ ສະມາຄົມອົງການຈັດຕັ້ງສັງຄົມ ແລະ ສະມາຄົມອື່ນໆ, ຜູ້ປະສານງານຫຼັກ/ຜູ້ນໍາພາ ລວມທັງຜູ້ມີສ່ວນຮ່ວມຈາກກຸ່ມທີ່ມີຄວາມເຊື່ອທາງສາສະໜາ;
- ການສ້າງໂຄງຮ່າງຮູບວາດຂອງ 'ຕົ້ນໄມ້ການສື່ສານ' ໄວ້ລ່ວງໜ້າ;
- ເຄືອຂ່າຍການພົວພັນ ແລະ ການປະສານງານຫຼັກ ເຊິ່ງບາງຄັ້ງກໍເອີ້ນວ່າລະບົບ 'ການແບ່ງປັນຂໍ້ມູນລະຫວ່າງພົນລະເມືອງດ້ວຍກັນ'.

### *ບັນດາສື່ທີ່ໃຊ້ໃນການສື່ສານ*

ຂໍ້ມູນທີ່ສະໜອງຜ່ານກົນໄກທີ່ລະບຸຂ້າງເທິງນັ້ນຕ້ອງຊັດເຈນ ແລະ ເຂົ້າໃຈງ່າຍ, ຫຼີກເວັ້ນການນໍາໃຊ້ສໍານວນ ແລະ ຄໍາສັບຫຍໍ້, ສະໜອງໃນພາສາປາກເວົ້າຂອງຜູ້ເຄື່ອນຍ້າຍຖິ່ນຖານ, ສະທ້ອນລະດັບຄວາມຮູ້ທີ່ຫຼາກຫຼາຍ ແລະ ໃຫ້ເໝາະສົມກັບວິທີການທີ່ຄົນສາມາດຊຶມຊັບຂໍ້ມູນລວມທັງ ຮູບແບບຂໍ້ມູນທີ່ບຸກຄົນພິການສາມາດເຂົ້າເຖິງໄດ້. ອາດຈໍາເປັນຕ້ອງນໍາໃຊ້ປະເພດສື່ຕໍ່ໄປນີ້:

- ສື່ແບບລາຍລັກອັກສອນ;
- ສື່ແບບສຽງ ແລະ ວິດີໂອ;
- ຮູບແຕ້ມ, ສັນຍາລັກກຣາຟິກ ແລະ ສັນຍາລັກຕ່າງໆ;
- ກາຕູນ;

- ລະຫັດສີ;
- ການພົວພັນແບບເຊິ່ງໜ້າ.

### *ເນື້ອໃນຂອງຂໍ້ມູນ*

ຂໍ້ມູນທີ່ສະໜອງອາດລວມມີ:

- ສະຖານທີ່, ລາຍລະອຽດຂອງການຕິດຕໍ່ ແລະ ຈຸດປະສານງານຫຼັກຢູ່ ສະຖານກົງສຸນ ແລະ ກະຊວງ ກໍຄືສະຖາບັນທີ່ກ່ຽວຂ້ອງຂອງລັດ ລວມທັງ ການບໍລິການອອກເອກະສານລະບຸຕົວຕົນ ແລະ ໜັງສືເດີນທາງ;
- ຈຸດປະສານງານຫຼັກ ແລະ ຂໍ້ມູນການຕິດຕໍ່ອື່ນໆໃນກໍລະນີສຸກເສີນ;
- ຂໍ້ມູນການຕິດຕໍ່ ແລະ ສະຖານທີ່ການບໍລິການ ແລະ ໃຫ້ຄວາມຊ່ວຍເຫຼືອໃນກໍລະນີສຸກເສີນ ຢູ່ລັດປາຍທາງ ລວມທັງ ໂຮງໝໍ, ຕຳຫຼວດທ້ອງຖິ່ນ, ສູນໃຫ້ຄຳປຶກສາ, ບ່ອນລີ້ໄພ ແລະ ການບໍລິການ ແລະ ຊ່ວຍເຫຼືອການບັນເທົາທຸກ;
- ຄຳແນະນຳດ້ານການເດີນທາງ ແລະ ລາຍການທີ່ຕ້ອງສິ່ງຄືນກ່ອນການເດີນທາງ;
- ຈົດໝາຍຂ່າວ, ການແຈ້ງ ແລະ ການເຕືອນໄພທີ່ກ່ຽວຂ້ອງກັບຄວາມສະຫງົບ, ຄວາມປອດໄພ ແລະ ໄພຂົ່ມຂູ່ໃນຍາມວິກິດ ເປັນຕົ້ນ;
- ວິທີການປະຕິບັດການໃນກໍລະນີເກີດວິກິດການ (ເຊັ່ນ ບ່ອນທີ່ຕ້ອງໄປ, ຈະຕ້ອງຕິດຕໍ່ຫາໃຜ ແລະ ສິ່ງທີ່ຕ້ອງເຮັດ) ລວມທັງຂໍ້ມູນທີ່ປັບໃຫ້ເຂົ້າກັບລັກສະນະສະເພາະທາງດ້ານວັດທະນະທຳ, ດ້ານສັງຄົມ ແລະ ລັກສະນະອື່ນໆຂອງລັດປາຍທາງ;
- ສິດທິ ແລະ ຂໍ້ບັງຄັບ-ພັນທະໃນລັດປາຍທາງສະເພາະໃດໜຶ່ງ.

### *ເວັບໄຊດ໌*

ເວັບໄຊດ໌ທີ່ສະໜອງຂໍ້ມູນໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານກ່ຽວກັບ ການອາໄສ ຫຼື ການລໍຖ້າເພື່ອປ່ຽນປະເທດຢູ່ລັດປາຍທາງນັ້ນອາດເປັນຊ່ອງທາງເພື່ອສື່ສານຂໍ້ມູນທີ່ກ່ຽວຂ້ອງກັບວິກິດ. ຂໍ້ມູນຢ່າງຫຼາກຫຼາຍແມ່ນສາມາດເຜີຍແຜ່ ແລະ ອັບເດດຢ່າງເປັນປົກກະຕິຢູ່ໃນເວັບໄຊດ໌ສະເພາະໃດໜຶ່ງ. ຂໍ້ມູນກ່ຽວກັບຄວາມສ່ຽງຈາກໄພພິບັດ ແລະ ດ້ານຄວາມປອດໄພ ກໍຄື ເຄັດລັບກ່ຽວກັບຄວາມປອດໄພໃນພາວະສຸກເສີນ ອາດສາມາດເອົາລວມເຂົ້າຢູ່ໃນເວັບໄຊດ໌ທີ່ມີຢູ່ແລ້ວກ່ຽວກັບການເດີນທາງ-ການທ່ອງທ່ຽວ ເຊິ່ງ ໂດຍປົກກະຕິຈະແນະນຳໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ຜູ້ເຄື່ອນຍ້າຍຖິ່ນຖານຄວນເຂົ້າໄປເບິ່ງເປັນປົກກະຕິ. ໃນເວລາສ້າງເວັບໄຊດ໌, ປັດໄຈທີ່ຕ້ອງພິຈາລະນາລວມມີ:

- ກຸ່ມນຳໃຊ້ຫຼາຍສື່ແຕກຕ່າງກັນໄປ ພ້ອມໆກັນ-ຄຽງຄູ່ກັນໄປ (ເຊັ່ນ: ວີດີໂອ, ສຽງ, ຮູບພາບ, ແລະ ແບບຂີດຂຽນ);
- ການມີຂໍ້ມູນໃນຫຼາຍພາສາ;
- ການອອກແບບ ແລະ ເນື້ອໃນທີ່ນຳໃຊ້ ແລະ ເຂົ້າໃຈງ່າຍສຳລັບຜູ້ນຳໃຊ້;
- ການປັບປຸງ-ອັບເດດຢ່າງປົກກະຕິ;
- ລິ້ງເຊື່ອມຕໍ່ ແລະ ຂໍ້ມູນການຕິດຕໍ່ເພີ່ມຕື່ມ;
- ການເຊື່ອມໂຍງກັບກົນໄກອື່ນໆ ເຊັ່ນສື່ສັງຄົມອອນໄລນ໌.

### *ສື່ສັງຄົມອອນໄລນ໌*

ສື່ສັງຄົມອອນໄລນ໌ແມ່ນສາມາດເຂົ້າເບິ່ງໄດ້ຢ່າງກວ້າງຂວາງແຜ່ຫຼາຍ ແລະ ສາມາດເຂົ້າເຖິງປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານໄດ້ຢ່າງຫຼວງຫຼາຍໃນຕົວຈິງ. ຜູ້ເຄື່ອນຍ້າຍຖິ່ນຖານນຳໃຊ້ສື່ສັງຄົມອອນໄລນ໌ເພື່ອຊອກຫາຂໍ້ມູນ ແລະ ສື່ສານນຳກັນ ແລະ ກັບຄອບຄົວ ກໍຄື ຊຸມຊົນທີ່ຢູ່ໃນລັດຕົ້ນທາງ. ສື່ສັງຄົມອອນໄລນ໌ສາມາດຮັກສາເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ ແລະ ເຮັດໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີບົດບາດສຳຄັນໃນການສ້າງ ແລະ ເຜີຍແຜ່ຂໍ້ມູນ. ສາມາດນຳໃຊ້ສື່ສັງຄົມອອນໄລນ໌ເພື່ອ:

- ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານຕິດຕາມແຮັສແທັກ (#) ກ່ຽວກັບວິກິດ ແລະ ຕອບກັບໃນພາສາຂອງເຂົາເຈົ້າເອງ;

- ສະໜອງຂໍ້ມູນການແຈ້ງເຕືອນໄພລ່ວງໜ້າ ແລະ ການຮັບມືກັບພາວະສຸກເສີນ;
- ສ້າງກຸ່ມສົນທະນາ ຫຼື ສົ່ງຂໍ້ຄວາມທີ່ຜູ້ເຄື່ອນຍ້າຍຖິ່ນຖານສາມາດເຂົ້າຮ່ວມ ຫຼື ຕິດຕາມ;
- ສ້າງເວັບໄຊດ໌ເພື່ອແບ່ງປັນຮູບ ແລະ ວິດີໂອທີ່ເຮັດໃຫ້ຜູ້ນຳໃຊ້ສາມາດອັບໂຫຼດ ແລະ ລະບຸສະຖານທີ່ການຖ່າຍຮູບ;
- ສະໜັບສະໜູນໂຄງການລະດົມທຶນ-ການຊ່ວຍເຫຼືອ ທີ່ ເປັນການໃຫ້ຂໍ້ມູນໃໝ່ໆ ແລະ ເພີ່ມເຕີມສຳລັບການສ້າງແຜນທີ່ ແລະ ການວິເຄາະຄວາມຕ້ອງການໃນກໍລະນີໄພພິບັດ ແລະ ການຮັບມືກັບໄພພິບັດທີ່ມີ.

### *ແອັບພິເຄຊັນໃນມືຖື*

ແອັບພິເຄຊັນໃນມືຖື ເປັນກົນໄກການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານທີ່ປະຢັດ, ນຳໃຊ້ງ່າຍ ແລະ ເຂົ້າເຖິງໄດ້ຢ່າງກວ້າງຂວາງ. ຜູ້ມີສ່ວນຮ່ວມສາມາດພັດທະນາແອັບພິເຄຊັນທີ່ເລັ່ງໃສ່ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ ໂດຍຕົນເອງ ຫຼື ໂດຍການຮ່ວມມືກັບພາກສ່ວນອື່ນ. ເນື້ອໃນ ແລະ ລັກສະນະ-ຄຳສັ່ງທີ່ ແອັບພິເຄຊັນໃນມືຖືສາມາດສະໜອງໃຫ້ໄດ້ລວມມີ:

- ການສົ່ງຂໍ້ຄວາມ SOS ໄປໝາຍເລກສຸກເສີນທີ່ເລືອກໂດຍຜູ້ເຄື່ອນຍ້າຍຖິ່ນຖານ;
- ຈຸດພິກັດຕາມລະບົບ GPS ແລະ ຄວາມສາມາດໃນການຕິດຕາມຫາຈຸດພິກັດ;
- ແຜນທີ່ ແລະ ລະບົບນຳທາງ ລວມທັງ ການບໍລິການສຸກເສີນທີ່ມີ ແລະ ສະຖານກົງສຸນ;
- ການດາວໂຫຼດຂໍ້ມູນ ແລະ ການເກັບຮັກສາຂໍ້ມູນແບບອັອຟໄລນ໌;
- ຖານທີ່ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານແບ່ງປັນຂໍ້ມູນ ແລະ ອຳນວຍຄວາມສະດວກໃຫ້ແກ່ການສື່ສານສອງທາງ;
- ການປ້ອນຂ່າວສານ;
- ການແປພາສາ ແລະ ການປ່ຽນສະກຸນເງິນ.

### *ຂໍ້ຄວາມມືຖື*

ເຊັ່ນດຽວກັນກັບແອັບພິເຄຊັນໃນມືຖື, ຂໍ້ຄວາມມືຖືກໍເປັນກົນໄກການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານທີ່ປະຢັດ, ນຳໃຊ້ງ່າຍ ແລະ ເຂົ້າເຖິງຢ່າງກວ້າງຂວາງ ເຊິ່ງອາດເຊື່ອມຕໍ່ກັບໂທລະສັບ, ແອັບພິເຄຊັນໃນມືຖື, ເວັບໄຊດ໌, ຖານສື່ສັງຄົມທາງອອນໄລນ໌ ແລະ ກົນໄກອື່ນໆທີ່ສາມາດສ້າງຂໍ້ຄວາມແບບອັດຕະໂນມັດເມື່ອຈຳເປັນ. ຂໍ້ຄວາມມືຖືມີປະສິດທິຜົນຢ່າງຍິ່ງໂດຍສະເພາະເພື່ອສື່ສານຂໍ້ຄວາມແຈ້ງເຕືອນ, ໄພຂົ່ມຂູ່, ຂໍ້ມູນການຕິດຕາມໃນກໍລະນີສຸກເສີນ ແລະ ຂໍ້ມູນກ່ຽວກັບບ່ອນ ແລະ ວິທີການເຂົ້າເຖິງການຊ່ວຍເຫຼືອ ແລະ ການບໍລິການ.

### *ສາຍໂທໃຫ້ຄວາມຊ່ວຍເຫຼືອ, ສາຍໂທດ່ວນ, ສູນບໍລິການທາງໂທລະສັບ*

ສາຍໂທໃຫ້ຄວາມຊ່ວຍເຫຼືອ, ສາຍໂທດ່ວນ ແລະ ສູນບໍລິການທາງໂທລະສັບ ແມ່ນວິທີການທີ່ເຂົ້າເຖິງໄດ້ ແລະ ນຳໃຊ້ເຕັກໂນໂລຊີບໍ່ສູງ ທີ່ສາມາດອຳນວຍຄວາມສະດວກໃຫ້ແກ່ການສື່ສານແບບທາງດຽວ ຫຼື ສອງທາງກັບຜູ້ເຄື່ອນຍ້າຍຖິ່ນຖານ. ໃນການສ້າງສາຍໂທໃຫ້ຄວາມຊ່ວຍເຫຼືອ, ສາຍໂທດ່ວນ ແລະ ສູນບໍລິການທາງໂທລະສັບ, ປັດໄຈທີ່ຄວນພິຈາລະນາລວມມີ:

- ໂມງເວລາການໃຫ້ບໍລິການ 24 ຊົ່ວໂມງຕໍ່ວັນ ຫຼື ໜ້ອຍກວ່ານັ້ນ;
- ແບບຕ້ອງຈ່າຍ ຫຼື ບໍ່ຕ້ອງຈ່າຍຄ່າໂທ;
- ຄວາມອາດສາມາດດ້ານພາສາຂອງພະນັກງານ;
- ຜູ້ເຄື່ອນຍ້າຍຖິ່ນຖານສາມາດໃຫ້ ແລະ ຮັບຂໍ້ມູນ ຫຼື ບໍ່;
- ຂອບເຂດ ແລະ ເນື້ອໃນຂອງຂໍ້ມູນທີ່ຕ້ອງໃຫ້ (ແລະ ຮັບ) ຫຼື ເປັນການໃຫ້ຂໍ້ມູນ ຫຼື ໃຫ້ການບໍລິການເທົ່ານັ້ນ ເຊັ່ນການໃຫ້ຄຳປຶກສາ, ການໂອນຕໍ່ໂດຍກົງ, ການຕິດຕາມຫາຄອບຄົວ ແລະ ການຮ້ອງທຸກ.

### *ສູນໃຫ້ຄວາມຊ່ວຍເຫຼືອ*

ສູນໃຫ້ຄວາມຊ່ວຍເຫຼືອແກ່ຜູ້ເຄື່ອນຍ້າຍຖິ່ນຖານແມ່ນສາມາດສ້າງຢູ່ລັດປາຍທາງ ແລະ ລັດຕົ້ນທາງ. ສູນດັ່ງກ່າວສາມາດສະໜອງຂໍ້ມູນ ແລະ ການບໍລິການຢ່າງຫຼາກຫຼາຍໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ. ນອກຈາກນັ້ນ ສູນໃຫ້ຄວາມຊ່ວຍເຫຼືອຍັງສາມາດເລັ່ງໃສ່

ກຸ່ມຜູ້ເຄື່ອນຍ້າຍຖິ່ນຖານສະເພາະເຈາະຈົງ ເຊັ່ນ ແຮງງານເຄື່ອນຍ້າຍແບບບໍ່ໄດ້ລົງທະບຽນ, ແຮງງານທີ່ເຮັດວຽກເປັນຄົນຮັບໃຊ້ ຫຼື ຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຂໍ້ມູນທີ່ປັບໃຫ້ເໝາະສົມກັບຄວາມບອບບາງ-ຄວາມສ່ຽງ ແລະ ຄວາມຕ້ອງການຂອງກຸ່ມດັ່ງກ່າວ.

*ມາດຕະການເພື່ອລະບຸ ແລະ ຮັບຮອງຜູ້ມີສ່ວນຮ່ວມໃນທ້ອງຖິ່ນ ໃນການພາ-ການໃຫ້ຄວາມຊ່ວຍເຫຼືອແກ່ຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ*

ອົງການຈັດຕັ້ງທ້ອງຖິ່ນໂດຍທົ່ວໄປ ຈະມີຂໍ້ມູນທີ່ດີທີ່ສຸດ ແລະ ຫຼ້າສຸດ ກ່ຽວກັບວິກິດທີ່ມີຜົນກະທົບຕໍ່ຊຸມຊົນຂອງຕົນ. ເຂົາເຈົ້າເປັນຜູ້ທີ່ສາມາດຕິດຕໍ່ທີ່ດີທີ່ສຸດກັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານໂດຍສະເພາະຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ. ເຂົາເຈົ້າແມ່ນຜູ້ທີ່ຕອບສະໜອງຜູ້ທຳອິດ, ມີໜ້າ ແລະ ຫ້າວຫັນ-ລົງມືປະຕິບັດການກ່ອນທີ່ຜູ້ມີສ່ວນຮ່ວມແຫ່ງຊາດ ແລະ ສາກົນຈະມາເຖິງ. ກິດຈະກຳເພື່ອສານຕໍ່ຈຸດແຂງຂອງເຂົາເຈົ້າລວມມີ:

- ການສ້າງແຜນທີ່ຊຸມຊົນກ່ອນທີ່ຈະເກີດວິກິດ ເພື່ອລະບຸໝູ່ບ້ານຂອງຜູ້ເຄື່ອນຍ້າຍຖິ່ນຖານ, ອົງການຈັດຕັ້ງ ແລະ ຜູ້ນຳທີ່ເປັນທີ່ເຄົາລົບນັບຖື ແລະ ຜູ້ຕາງໜ້າຂອງປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ;
- ການສ້າງສາຍພົວພັນກັບຜູ້ປະສານງານຫຼັກ ກັບອົງການ ແລະ ຜູ້ນຳພາຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ຊ່ວຍຜູ້ປະສານງານຫຼັກການການສ້າງໂຄງຮ່າງຮູບວາດຂອງ 'ຕົ້ນໄມ້ການສື່ສານ' ແລະ ວິທີການອື່ນໆໃນການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊຸມຊົນຂອງເຂົາເຈົ້າ;
- ການຮ່ວມມືກັບ ອົງການ ແລະ ຜູ້ນຳພາຂອງຜູ້ເຄື່ອນຍ້າຍຖິ່ນຖານ ໂດຍລະບຸພາລະບົດບາດ ແລະ ສາຍພົວພັນໃນໄລຍະເກີດວິກິດ;
- ຊ່ວຍອົງການຜູ້ເຄື່ອນຍ້າຍຖິ່ນຖານໃນການຂໍທຶນເພື່ອສະໜັບສະໜູນກິດຈະກຳທີ່ກ່ຽວຂ້ອງກັບວິກິດການ.

*ເຄືອຂ່າຍຜູ້ປະສານງານ*

ເຄືອຂ່າຍຜູ້ປະສານງານ ເຊິ່ງມີ ຜູ້ເຄື່ອນຍ້າຍຖິ່ນຖານ, ກົງສຸນ ແລະ ຜູ້ປະສານງານອື່ນໆທີ່ອາສາສະໝັກຊ່ວຍໃນການເບິ່ງແຍງ ກຸ່ມຜູ້ເຄື່ອນຍ້າຍຖິ່ນຖານ ແລະ ໃຫ້ເຂົາເຈົ້າໄດ້ຮັບຂໍ້ມູນທີ່ເປັນປະໂຫຍດນັ້ນ ຈະສາມາດຮັບປະກັນວ່າ ຜູ້ເຄື່ອນຍ້າຍຖິ່ນຖານ ໂດຍສະເພາະຜູ້ທີ່ມີສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ ໃຫ້ມີການຕິດຕໍ່ພົວພັນ ແລະ ຮັບຮູ້ຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບວິກິດການ. ລະບົບການປະສານງານ ເຊິ່ງບາງຄັ້ງເອີ້ນວ່າ ລະບົບ 'ການແບ່ງປັນຂໍ້ມູນລະຫວ່າງພົນລະເມືອງນຳກັນ' (wardenship) ອາດມີຄວາມສຳຄັນເຊັ່ນກັນສຳລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ບໍ່ສາມາດເຂົ້າເຖິງກົນໄກການສື່ສານອື່ນໆຍ້ອນບາງເຫດຜົນ ລວມທັງ ຊ່ອງທາງຜ່ານກົງສຸນ. ໃນການສ້າງຕັ້ງເຄືອຂ່າຍເຫຼົ່ານີ້, ປັດໄຈທີ່ຈະຕ້ອງພິຈາລະນາລວມມີ:

- ຈະເລືອກຜູ້ໃດເປັນຜູ້ປະສານງານຫຼັກ. ບັນທັດຖານທີ່ຕ້ອງພິຈາລະນາລວມມີ ການເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານ, ຄວາມເຄົາລົບ ແລະ ຄວາມໄວ້ເນື້ອເຊື່ອໃຈທີ່ໄດ້ຮັບ, ເພດ ແລະ ສາຍພົວພັນກັບສະຖານກົງສຸນ;
- ຜູ້ເຄື່ອນຍ້າຍຖິ່ນຖານຜູ້ໃດທີ່ຈະຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຜູ້ປະສານງານຫຼັກຄົນໃດ ເຊິ່ງອາດຂຶ້ນກັບສະຖານທີ່ທາງພູມສາດ ຫຼື ບັນທັດຖານອື່ນໆ;
- ການປະຕິບັດການ ແລະ ການບໍລິການໃດທີ່ຜູ້ປະສານງານຫຼັກຄວນຈະສະໜອງ;
- ການສະໜັບສະໜູນຜູ້ປະສານງານຫຼັກ ເຊັ່ນການຝຶກອົບຮົມ ແລະ ການຊ່ວຍພັດທະນາແຜນສຳຮອງ.

## ລັດຕົ້ນທາງ

*ສະຖານກົງສຸນ*

ສະຖານກົງສຸນເປັນຊ່ອງທາງຫຼັກໃນການເຜີຍແຜ່ຂໍ້ມູນ ແລະ ການສື່ສານກັບພົນລະເມືອງຢູ່ຕ່າງປະເທດ. ຍ້ອນວ່າສະຖານກົງສຸນຈະມີທີ່ຕັ້ງຢູ່ລັດປາຍທາງ, ສະຖານກົງສຸນນີ້ກໍຈະມີຂໍ້ມູນສະເພາະກ່ຽວກັບປະເທດກ່ຽວຂ້ອງ. ຫຼາຍກົນໄກທີ່ກ່າວມາຂ້າງເທິງນັ້ນແມ່ນສາມາດນຳໃຊ້ໄດ້ໂດຍພາກສ່ວນກົງສຸນເພື່ອສື່ສານກັບພົນລະເມືອງຂອງຕົນ. ມາດຕະການອື່ນໆທີ່ພາກ

ສ່ວນກົງສຸນສາມາດນໍາໃຊ້ໂດຍສະເພາະເພື່ອເຂົ້າເຖິງ-ໃຫ້ການຊ່ວຍເຫຼືອຢ່າງຕັ້ງໜ້າຕໍ່ພົນລະເມືອງຂອງຕົນແມ່ນ ການສ້າງຄວາມລຶ້ງເຄີຍ-ການໃຫ້ຂໍ້ມູນເພື່ອໃຫ້ເຂົາເຈົ້າລຶ້ງເຄີຍກ່ຽວກັບ ຂໍ້ມູນການຕິດຕໍ່ໃນກໍລະນີສຸກເສີນ, ລະບຽບຂັ້ນຕອນຕ່າງໆ ແລະ ແຜນການສໍາຮອງ ແລະ ການອົບພະຍົບ ເຊິ່ງຂໍ້ມູນດັ່ງກ່າວແມ່ນສາມາດສະໜອງໃນງານພິເສດຕ່າງໆຂອງຢູ່ສະຖານກົງສຸນ ເຊັ່ນໃນງານສະຫຼອງວັນຊາດເປັນຕົ້ນ. ເວັບໄຊດ໌ຂອງກົງສຸນຍັງສາມາດເຊື່ອມຕໍ່ກັບສື່ສັງຄົມອອນໄລນ໌ ແລະ ວິທີການອື່ນໆເພື່ອໃຫ້ພົນລະເມືອງສາມາດຕິດຕໍ່ກັບສະມາຊິກຄອບຄົວຂອງຕົນເພື່ອລາຍງານກ່ຽວກັບຄວາມປອດໄພ ແລະ ຄວາມຕ້ອງການຂອງເຂົາເຈົ້າ.

## ຜູ້ມີສ່ວນຮ່ວມພາກເອກະຊົນ

### *ຜູ້ຈ້າງງານ ແລະ ໜ່ວຍງານຈັດຫາງານ ແລະ ຈັດຫາແຮງງານ*

ສ່ວນໃຫຍ່ຜູ້ຈ້າງແຮງງານຈະເປັນຜູ້ມີການຕິດຕໍ່ພົວພັນຢ່າງຕໍ່ເນື່ອງກັບແຮງງານເຄື່ອນຍ້າຍ. ການສ້າງກົນໄກຕ່າງໆ ເຊັ່ນ ການສ້າງໂຄງຮ່າງຮູບວາດຂອງ 'ຕົ້ນໄມ້ການສື່ສານ' ເພື່ອສື່ສານກັບລູກຈ້າງທັງໝົດຂອງຕົນລວມທັງແຮງງານເຄື່ອນຍ້າຍໃນໄລຍະເກີດວິກິດຈະເປັນວິທີການທີ່ມີປະສິດທິພາບໃນການເຂົ້າເຖິງຄົນຈໍານວນຫຼາຍ. ໜ່ວຍງານຈັດຫາງານ ແລະ ຈັດຫາແຮງງານ ຍັງອາດສາມາດຕິດຕໍ່ກັບຜູ້ເຄື່ອນຍ້າຍຖິ່ນຖານພາຍຫຼັງທີ່ເຂົາເຈົ້າໄດ້ບ່ອນເຮັດວຽກຈາກຜູ້ຈ້າງງານ. ຜູ້ມີສ່ວນຮ່ວມພາກເອກະຊົນເຫຼົ່ານີ້ສາມາດນໍາຂໍ້ມູນໄປໃຫ້ຜູ້ເຄື່ອນຍ້າຍຖິ່ນຖານກ່ຽວກັບ ວິກິດ, ຄວາມສ່ຽງ ແລະ ຂັ້ນຕອນທີ່ເຂົາເຈົ້າຕ້ອງເຮັດເພື່ອປົກປ້ອງຕົນເອງ ເຊິ່ງອາດລວມມີ:

- ຂໍ້ມູນກ່ຽວກັບ ກິດຈະກໍາການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືໃນພາວະສຸກເສີນ;
- ການແຈ້ງເຕືອນກ່ຽວກັບຄວາມຄືບໜ້າ-ການຜັນຂະຫຍາຍຂອງສະພາບການຢູ່ໃນລັດປາຍທາງ;
- ຂໍ້ມູນກ່ຽວກັບຂັ້ນຕອນທີ່ຕ້ອງເຮັດໃນກໍລະນີທີ່ຈໍາເປັນຕ້ອງອົບພະຍົບ.

## ອົງການຈັດຕັ້ງສັງຄົມ

### *ເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ ແລະ ເຄືອຂ່າຍອົງການຈັດຕັ້ງສັງຄົມອື່ນໆ*

ອົງການຈັດຕັ້ງສັງຄົມທ້ອງຖິ່ນທີ່ຊໍານານສະເພາະດ້ານອາດມີສາຍພົວພັນທີ່ແໜ້ນແຟ້ນກັບ ຊຸມຊົນແລະ ເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ ເຊິ່ງນອກຈາກຜົນປະໂຫຍດດ້ານອື່ນໆແລ້ວອົງການດັ່ງກ່າວ ແມ່ນສາມາດອໍານວຍຄວາມສະດວກໃຫ້ແກ່ການສື່ສານສອງທາງ ແລະ ຊຸກຍູ້ຄວາມເຂົ້າໃຈກ່ຽວກັບຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ. ເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອົງການຈັດຕັ້ງສັງຄົມມີຄວາມອາດສາມາດໃນການເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານໃນສະພາບຄົນເຂົ້າເມືອງທີ່ບໍ່ໄດ້ລົງທະບຽນ ແລະ ຜູ້ອື່ນໆທີ່ຍາກໃນການຕິດຕໍ່. ກິດຈະກໍາສໍາຄັນທີ່ອາດສານຕໍ່ສາຍພົວພັນ ແລະ ຄວາມອາດສາມາດເຫຼົ່ານີ້ໃຫ້ເກີດປະໂຫຍດສູງສຸດ ລວມມີ:

- ການສ້າງແຜນທີ່ລະບົບ ແລະ ເຄື່ອງມືການສື່ສານທີ່ຜູ້ເຄື່ອນຍ້າຍຖິ່ນຖານນໍາໃຊ້ ໃນບໍລິບົດສະເພາະໃດໜຶ່ງ;
- ການພັດທະນາຂໍ້ແນະນໍາ ແລະ ລະບຽບຂັ້ນຕອນໃນການສື່ສານຂໍ້ຄວາມສຸກເສີນເຖິງຜູ້ເຄື່ອນຍ້າຍຖິ່ນຖານ;
- ການພັດທະນານະໂຍບາຍກ່ຽວກັບການຂົນຂວາຍ-ການເກນຜູ້ເຄື່ອນຍ້າຍຖິ່ນຖານ ເພື່ອເອື້ອອໍານວຍໃຫ້ແກ່ການສື່ສານ;
- ການຈັດງານທາງການ ແລະ ບໍ່ເປັນທາງການ (ກອງປະຊຸມ, ການສໍາມະນາ ຫຼື ງານເຕົ້າໂຮມ) ເພື່ອຮັກສາສາຍພົວພັນກັບເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສົນທະນາບັນຫາການສື່ສານທີ່ກ່ຽວຂ້ອງກັບວິກິດການ;
- ການຮ່ວມມືກັບຜູ້ມີສ່ວນອື່ນໆ ແລະ ການປະສານງານນໍາເຂົາເຈົ້າກ່ຽວກັບ ການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານໃນປະເດັນທີ່ກ່ຽວຂ້ອງກັບວິກິດ;
- ການເຮັດວຽກຮ່ວມກັບຜູ້ຕາງໜ້າຜູ້ເຄື່ອນຍ້າຍຖິ່ນຖານ ເພື່ອສ້າງປຶ້ມຄູ່ມືກ່ຽວກັບວິທີການສື່ສານ.

# ພາກປະຕິບັດໃນການນຳໃຊ້ ແນວທາງປະຕິບັດ 7:

# ກຳນົດລ່ວງໜ້າຂໍ້ຕົກລົງໃນການປະສານງານເພື່ອໝູນໃຊ້ຈຸດແຂງ ແລະ ສົ່ງເສີມຄວາມໄວ້ເນື້ອເຊື່ອໃຈ

## ຜູ້ມີສ່ວນຮ່ວມຫຼາຍຝ່າຍ

### *ຂໍ້ຕົກລົງລ່ວງໜ້າກ່ຽວກັບການບໍລິການ*

ຜູ້ມີສ່ວນຮ່ວມຄວນຕົກລົງກັນໄວ້ລ່ວງໜ້າ ຂໍ້ຕົກລົງກ່ຽວກັບການບໍລິການໃຫ້ກັບຜູ້ເຄື່ອນຍ້າຍຖິ່ນຖານ. ຂໍ້ຕົກລົງດັ່ງກ່າວອາດລວມມີ:

- ສະໜັບສະໜູນການອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານລວມທັງການຂົນສົ່ງ ແລະ ສະຖານທີ່ພັກ;
- ການຢັ້ງຢືນຕົວຕົນຂອງບຸກຄົນທີ່ອ້າງວ່າຕົນເປັນພົນລະເມືອງຂອງລັດໃດໜຶ່ງ ແລະ ການໃຫ້ເອກະສານລະບຸຕົວຕົນຊົ່ວຄາວ ແລະ ເອກະສານການເດີນທາງ;
- ການນຳໃຊ້ຊັບສິນຮ່ວມກັນໃນການຕິດຕາມວິກິດການ ແລະ ໃນການສື່ສານ;
- ການຕິດຕາມຊອກຫາຄອບຄົວ;
- ການຂົນສົ່ງເພື່ອເຄື່ອນຍ້າຍບຸກຄະລາກອນໃນການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ພາວະສຸກເສີນ ແລະ ການຂົນສົ່ງເຄື່ອງຂອງບັນເທົາທຸກດ້ານມະນຸດສະທຳ ແລະ ພາວະສຸກເສີນໃຫ້ແກ່ ຜູ້ເຄື່ອນຍ້າຍຖິ່ນຖານລວມທັງອາຫານ, ບ່ອນລີ້ໄພ, ການຊ່ວຍເຫຼືອທາງການແພດ ແລະ ເງິນສົດ;
- ການຮັກສາສຸຂະພາບຢູ່ໂຮງໝໍ ແລະ ສູນປິ່ນປົວສຸຂະພາບ.

### *ຂໍ້ຕົກລົງຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍກ່ຽວກັບ ການຍົກຍ້າຍ ແລະ ການອົບພະຍົບ*

ຂໍ້ຕົກລົງຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍແມ່ນສາມາດສົ່ງເສີມການແບ່ງປັນຄວາມຮັບຜິດຊອບຮ່ວມກັນ ແລະ ການຍົກຍ້າຍ ແລະ ອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານຢ່າງປອດໄພ ແລະ ຢ່າງເປັນລະບຽບ. ຕົວຢ່າງ: ລັດອາດຕ້ອງການເຮັດວຽກກັບໜຶ່ງລັດ ຫຼື ຫຼາຍລັດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ ຫຼື ຜູ້ຈ້າງງານ ແລະ ຜູ້ຈັດຫາງານເພື່ອໃຫ້ສາມາດແບ່ງປັນ ແລະ ໝູນໃຊ້ຊັບພະຍາກອນຮ່ວມກັນໃຫ້ເກີດປະໂຫຍດສູງສຸດ. ຂໍ້ຕົກລົງດັ່ງກ່າວອາດລວມມີຂໍ້ຄວາມທີ່:

- ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຄູ່ສັນຍາ;
- ການວາງບັນທັດຖານ ແລະ ຂະບວນການຕ່າງໆເພື່ອກຳນົດເວລາ ແລະ ວິທີການຍົກຍ້າຍ ແລະ ອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານ;
- ກຳນົດຂະບວນການເພື່ອຢັ້ງຢືນຕົວຕົນ ແລະ ການອອກໜັງສືເດີນທາງຊົ່ວຄາວ ແລະ ເອກະສານການເດີນທາງ;
- ໃຫ້ທິດຊີ້ນຳຢ່າງຊັດເຈນກ່ຽວກັບການຈັດສັນຄ່າໃຊ້ຈ່າຍຕ່າງໆ;
- ລະບຸຊ່ອງທາງເພື່ອສື່ສານຂໍ້ມູນກ່ຽວກັບຂະບວນການຕ່າງໆ ໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ;
- ກຳນົດເງື່ອນໄຂໃນການລາຍງານ;
- ຈັດແຈງກະກຽມວຽກຕ່າງໆສຳລັບກຸ່ມທີ່ບອບບາງ-ສ່ຽງເປັນພິເສດ ລວມທັງເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບຸກຄົນທີ່ພິການ;
- ອະນຸຍາດໃຫ້ມີການຝຶກອົບຮົມ ແລະ ການຝຶກຊ້ອມຮ່ວມກັນເພື່ອທົດສອບການຈັດແຈງກະກຽມວຽກຕ່າງໆລ່ວງໜ້າ;

- ກຳນົດໃຫ້ມີການຕິດຕາມ ແລະ ປະເມີນຜົນການຈັດແຈງກະກຽມຕ່າງໆ.

ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຄູ່ຮ່ວມງານອາດລວມມີ:

- ສະພາບການຕິດຕາມທີ່ອາດຮຽກຮ້ອງໃຫ້ມີຄວາມຈຳເປັນຕ້ອງຍົກຍ້າຍ ຫຼື ອົບພະຍົບ;
- ການເຜີຍແຜ່ ການແຈ້ງເຕືອນວິກິດ ແລະ ຂໍ້ມູນການຍົກຍ້າຍ ແລະ ການອົບພະຍົບ (ເຊັ່ນ: ຈຸດລວມຕົວ ແລະ ເສັ້ນທາງການຍົກຍ້າຍ-ການອົບພະຍົບ);
- ການຈັດແຈງການບໍລິການໆຂົນສົ່ງ ລວມທັງ ການຂົນສົ່ງໄປເຖິງຈຸດໝາຍປາຍທາງ;
- ການປະເມີນ ແລະ ຮັກສາສຸຂະພາບກ່ອນ ແລະ ໃນໄລຍະການເດີນທາງ;
- ການໃຫ້ອາຫານ, ນ້ຳ ແລະ ຄວາມຕ້ອງການຂັ້ນພື້ນຖານອື່ນໆໃນໄລຍະການເດີນທາງ;
- ການສະເໜີການບໍລິການແປພາສາ.

## ລັດ

### *ການຮ່ວມມືຂ້າມຊາຍແດນກ່ຽວກັບການກະກຽມຄວາມພ້ອມຮັບມືກັບວິກິດການ*

ລັດສາມາດສ້າງການຮ່ວມມືພາກພື້ນ ແລະ ຂ້າມຊາຍແດນກ່ຽວກັບການກະກຽມຄວາມພ້ອມ ແລະ ການຄຸ້ມຄອງວິກິດການໂດຍຄຳນຶງເຖິງຄວາມຕ້ອງການສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານລວມທັງ ຊຸມຊົນທີ່ຢູ່ລະຫວ່າງຊາຍແດນ. ການຮ່ວມມືອາດລວມມີ:

- ການສ້າງຕັ້ງຄະນະກຳມະການລະດັບຊາດຂອງສອງປະເທດ ຫຼື ຂັ້ນພາກພື້ນທີ່ປະກອບດ້ວຍຜູ້ມີສ່ວນຮ່ວມຂັ້ນທ້ອງຖິ່ນ ແລະ ຂັ້ນຊາດເພື່ອວາງແຜນ ແລະ ປະສານງານການຮັບມືກັບພາວະສຸກເສີນ;
- ການສ້າງຕັ້ງຄະນະກຳມະການຊາຍແດນທີ່ບໍ່ເປັນທາງການ ທີ່ປະກອບດ້ວຍຜູ້ນຳພາທ້ອງຖິ່ນ ແລະ ຜູ້ຕາງໜ້າຊຸມຊົນທ້ອງຖິ່ນຫຼັກໆ ເພື່ອສົນທະນາບັນຫາຂ້າມຊາຍແດນ;
- ການສ້າງລະບຽບຂັ້ນຕອນມາດຕະຖານການດຳເນີນງານ ເພື່ອການຮ່ວມມືດ້ານວິກິດການຂ້າມຊາຍແດນ;
- ການດຳເນີນການຝຶກຊ້ອມເຫດການຈຳລອງຮ່ວມກັນ ໂດຍມີພາກສ່ວນຮັບມືກັບພາວະວິກິດຂັ້ນທ້ອງຖິ່ນ ແລະ ແຫ່ງຊາດ, ພະນັກງານບໍລິການດ້ານຊາຍແດນ, ພະນັກງານດັບເພີງ ແລະ ບຸກຄະລາກອນອື່ນໆທີ່ກ່ຽວຂ້ອງ;
- ການເຊັນບົດບັນທຶກຄວາມເຂົ້າໃຈລະຫວ່າງຊຸມຊົນເພື່ອຄຸ້ມຄອງ ການເປັນເຈົ້າພາບ, ການເຄື່ອນຍ້າຍ ແລະ ການຄຸ້ມຄອງຊັບພະຍາກອນໃນກໍລະນີເກີດວິກິດ ແລະ ການເຄື່ອນຍ້າຍຖິ່ນຖານຂະໜາດໃຫຍ່;
- ການຈັດແຈງລະບົບການເຂົ້າເຖິງ ແລະ ການແບ່ງປັນຊັບພະຍາກອນຂ້າມຊາຍແດນລະຫວ່າງຊຸມຊົນ;
- ການຮັບປະກັນວ່າ ອຸປະກອນ ແລະ ລະບົບການຮັບມືກັບພາວະສຸກເສີນຢູ່ທັງສອງຟາກຂອງຊາຍແດນ ແມ່ນຈະດຳເນີນງານຮ່ວມກັນໄດ້;
- ການເຜີຍແຜ່ຂໍ້ມູນຫຼັກກ່ຽວກັບການກະກຽມຄວາມພ້ອມໃນພາວະວິກິດເຊັ່ນ ສະຖານທີ່ລີ້ໄພ, ໂຮງໝໍ ແລະ ສະຖານກົງສຸນ ໃຫ້ແກ່ ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ປະຊາກອນອື່ນໆທີ່ອາໄສໃນພື້ນທີ່ຊາຍແດນ.

### *ຂໍ້ຕົກລົງສອງຝ່າຍກ່ຽວກັບແຮງງານເຄື່ອນຍ້າຍ*

ລັດຕົ້ນທາງ ແລະ ລັດປາຍທາງສາມາດສ້າງຂໍ້ຕົກລົງສອງຝ່າຍ ຫຼື ບົດບັນທຶກຄວາມເຂົ້າໃຈເພື່ອຄຸ້ມຄອງແຮງງານເຄື່ອນຍ້າຍໃນກໍລະນີເກີດວິກິດການ ຫຼື ລະບຽບຂັ້ນຕອນໃນພາວະສຸກເສີນ ແລະ ການອົບພະຍົບ. ຂໍ້ຕົກລົງເຫຼົ່ານີ້ສາມາດຄຸ້ມຄອງດ້ານ

ຕ່າງໆທີ່ລວມມີ:

- ສິດ ແລະ ໜ້າທີ່ຂອງແຮງງານເຄື່ອນຍ້າຍ;
- ການປະຕິບັດຢ່າງສະເໝີພາບຕໍ່ແຮງງານເຄື່ອນຍ້າຍ;
- ສິດ ແລະ ໜ້າທີ່ຂອງຜູ້ຈ້າງງານ;
- ການຈັດຫາງານໃຫ້ແຮງງານເຄື່ອນຍ້າຍຢ່າງຍຸດຕິທຳ;
- ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ລັດ ສຳລັບການໃຫ້ການຊ່ວຍເຫຼືອ ແລະ ການອົບພະຍົບແຮງງານເຄື່ອນຍ້າຍໃນສະຖານະການວິກິດ;
- ຂໍ້ກຳນົດກ່ຽວກັບພາວະສຸກເສີນຢູ່ໃນສັນຍາຈ້າງງານທີ່ຮຽກຮ້ອງໃຫ້ຜູ້ຈ້າງງານຮັບຜິດຊອບຄ່າອົບພະຍົບແຮງງານເຄື່ອນຍ້າຍໃນສະຖານະການວິກິດ.

## ລັດປາຍທາງ

*ການຈັດແຈງການປະສານງານລ່ວງໜ້າລະຫວ່າງ ສະຖານກົງສຸນ ແລະ ລັດປາຍທາງ*

ລັດຕົ້ນທາງສາມາດສ້າງໂຄງສ້າງ ແລະ ກົນໄກການຮ່ວມມືກັບ ສະຖານກົງສຸນເພື່ອອຳນວຍຄວາມສະດວກໃຫ້ແກ່ການຮ່ວມມື ແລະ ການປະສານງານເລື່ອງການໃຫ້ຄວາມຊ່ວຍເຫຼືອແກ່ຜູ້ເຄື່ອນຍ້າຍຖິ່ນຖານໃນພາວະວິກິດ. ມາດຕະການເພື່ອອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືລວມມີ:

- ການຈັດຕັ້ງໂຄງສ້າງການປະສານງານລວມສູນ ເພື່ອປະສານງານກັບເຈົ້າໜ້າທີ່ກົງສຸນ, ສື່ສານນຳເຂົາເຈົ້າຢ່າງເປັນປົກກະຕິ ແລະ ສະໜັບສະໜູນເຂົາເຈົ້າໃນການຊອກຫາພົນລະເມືອງໃນທ້ອງຖິ່ນໃນກໍລະນີເກີດໄພພິບັດທຳມະຊາດ ຫຼື ຄວາມຂັດແຍ່ງ;
- ການສ້າງກົນໄກ ແລະ ການປະຊຸມປະສານງານ ແລະ ການສື່ສານຢ່າງເປັນປົກກະຕິລະຫວ່າງເຈົ້າໜ້າທີ່ຂອງລັດຕົ້ນທາງ ແລະ ສະຖານກົງສຸນເພື່ອແລກປ່ຽນຂໍ້ມູນ ແລະ ຮັດແໜ້ນສາຍພົວພັນ;
- ການລາຍງານໂດຍຫຍໍ້ໃຫ້ແກ່ເຈົ້າໜ້າທີ່ກົງສຸນກ່ຽວກັບ ລະບຽບຂັ້ນຕອນໃນພາວະສຸກເສີນແຫ່ງຊາດ ແລະ ທ້ອງຖິ່ນ, ຜູ້ປະສານງານຫຼັກພາກສະຖາບັນ ແລະ ຜູ້ມີສ່ວນຮ່ວມ ແລະ ລະບຽບຂັ້ນຕອນອື່ນໆທີ່ກ່ຽວຂ້ອງກັບພາວະສຸກເສີນ;
- ການສ້າງກົນໄກການສະໜັບສະໜູນແບບວ່ອງໄວທີ່ສາມາດເລີ່ມປະຕິບັດການໄດ້ທັນທີໃນເວລາເກີດວິກິດການເພື່ອສະໜັບສະໜູນຄະນະກົງສຸນຕ່າງປະເທດໃນການຊອກຫາພົນລະເມືອງຂອງຕົນ.

## ລັດຕົ້ນທາງ

*ຂໍ້ຕົກລົງສອງຝ່າຍ ຫຼື ຫຼາຍຝ່າຍກ່ຽວກັບການໃຫ້ຄວາມຊ່ວຍເຫຼືອເຊິ່ງກັນ ແລະ ກັນດ້ານກົງສຸນ ແລະ ການເປັນຜູ້ຕາງໜ້າ*

ຂໍ້ຕົກລົງສອງຝ່າຍ ຫຼື ຫຼາຍຝ່າຍກ່ຽວກັບການໃຫ້ຄວາມຊ່ວຍເຫຼືອເຊິ່ງກັນ ແລະ ກັນດ້ານກົງສຸນ ແລະ ການເປັນຜູ້ຕາງໜ້າອາດຈະເປັນວິທີການທີ່ມີປະສິດທິຜົນເພື່ອແກ້ໄຂຊ່ອງວ່າງເມື່ອລັດບໍ່ມີຜູ້ຕາງໜ້າກົງສຸນຢູ່ໃນປະເທດໃດໜຶ່ງ ຫຼື ອາດມີຄວາມກົດດັນໃນການຊ່ວຍເຫຼືອພົນລະເມືອງຂອງຕົນ. ຂໍ້ຕົກລົງກ່ຽວກັບການໃຫ້ຄວາມຊ່ວຍເຫຼືອເຊິ່ງກັນ ແລະ ກັນດ້ານກົງສຸນແບບສອງຝ່າຍ ຫຼື ຫຼາຍຝ່າຍ ແລະ ການເປັນຜູ້ຕາງໜ້າ ສາມາດແກ້ໄຂ:

- ການຊ່ວຍເຫຼືອໃນການອົບພະຍົບ, ການຂົນສົ່ງ ແລະ ການຊ່ວຍເຫຼືອອື່ນໆ;

- ການນຳໃຊ້ຊັບສິນຮ່ວມກັນເພື່ອການສື່ສານ ລວມທັງ ອຸປະກອນໂທລະຄົມມະນາຄົມ ແລະ ການປະຊຸມທາງໄກ, ການຂົນສົ່ງ, ບ່ອນລີ້ໄພ ແລະ ການສະໜັບສະໜູນອື່ນໆ;
- ການປະສານງານເພື່ອແບ່ງປັນຂໍ້ມູນໃນເວລາປົກກະຕິ ແລະ ໃນເວລາເກີດວິກິດ ກ່ຽວກັບ ພົນລະເມືອງຂອງລັດທີ່ບໍ່ມີຜູ້ຕາງໜ້າ ດ້ານກົງສຸນ;
- ກົນໄກການລາຍງານ ແລະ ການປະສານງານໃນສະຖານະການວິກິດ;
- ການໃຫ້ຄວາມຊ່ວຍເຫຼືອດ້ານກົງສຸນລວມທັງ ຕໍ່ກົງສຸນດ່ານໜ້າ ແລະ ການຊ່ວຍເຫຼືອກ່ຽວກັບການເດີນທາງອອກນອກປະເທດສຳລັບພົນລະເມືອງທີ່ມີບໍ່ຜູ້ຕາງໜ້າລັດ;
- ລະບຽບມາດຕະຖານການດຳເນີນງານ ໃນການຂໍຄວາມຊ່ວຍເຫຼືອ;
- ຂໍ້ຕົກລົງ ແລະ ແຜນການທີ່ຊັດເຈນກ່ຽວກັບຄວາມຮັບຜິດຊອບດ້ານການເງິນ.

## ຜູ້ມີສ່ວນຮ່ວມພາກເອກະຊົນ

### *ການຈັດແຈງກະກຽມລະຫວ່າງ ຜູ້ຈ້າງງານ ແລະ ຜູ້ຈັດຫາງານ ແລະ ການບໍລິການດ້ານການປ້ອງກັນຄວາມປອດໄພ, ການອົບພະຍົບ ແລະ ການຍົກຍ້າຍ*

ຜູ້ຈ້າງງານ ແລະ ຜູ້ຈັດຫາງານສາມາດຮ່ວມມືກັບຜູ້ສະໜອງການບໍລິການຕ່າງໆ ກ່ອນທີ່ຈະເກີດວິກິດການເພື່ອຮັບປະກັນວ່າຈະສາມາດເຂົ້າເຖິງການບໍລິການໄດ້ໃນໄລຍະເວລາເກີດວິກິດການ ແລະ ເພື່ອໃຫ້ເປັນສ່ວນໜຶ່ງຂອງການວາງແຜນທີ່ຮັດກຸມເພື່ອຄຸ້ມຄອງວິກິດການ. ການຈັດການກະກຽມດັ່ງກ່າວອາດລວມມີ:

- ການຂົນສົ່ງເພື່ອການຍົກຍ້າຍ ຫຼື ການອົບພະຍົບລູກຈ້າງທາງອາກາດ, ທາງບົກ ແລະ ທາງນໍ້າ;
- ສະຖານທີ່ພັກ ທີ່ປອດໄພ;
- ເຈົ້າໜ້າທີ່ຮັກສາຄວາມປອດໄພ ແລະ ເຈົ້າໜ້າທີ່ຕິດຕາມ;
- ການຮັກສາສຸຂະພາບໂດຍມີສິ່ງອຳນວຍຄວາມສະດວກ ແລະ ເຈົ້າໜ້າທີ່ຕິດຕາມດ້ານການແພດໃນລັດປາຍທາງ ແລະ ລັດທາງຜ່ານ.
- ການບໍລິການດ້ານການສື່ສານລວມທັງວິທະຍຸ, ໂທລະສັບ ແລະ ອິນເຕີເນັດ;
- ການບໍລິການດ້ານການເງິນເພື່ອໃຫ້ມີເງິນສົດລວມທັງເງິນໃນສະກຸນຕ່າງໆ;
- ການຮ່ວມມືກັບບໍລິສັດຕ່າງໆທີ່ສະໜອງ-ຂາຍຜະລິດຕະພັນ/ແພັກເກັດການຊ່ວຍເຫຼືອດ້ານການວາງແຜນ, ການຍົກຍ້າຍ ແລະ ການອົບພະຍົບ;
- ການຮ່ວມມືກັບ ທະນາຍຄວາມ ແລະ ຜູ້ແປພາສາໃນທ້ອງຖິ່ນ.

### *ຜູ້ຈ້າງງານຂະໜາດນ້ອຍ ຫຼື ສ່ວນບຸກຄົນ*

ວິສະຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ຈ້າງງານສ່ວນບຸກຄົນມີຄວາມອາດສາມາດຢ່າງຈຳກັດໃນການປົກປ້ອງແຮງງານເຄື່ອນຍ້າຍຂອງຕົນໃນໄລຍະເວລາເກີດວິກິດ. ແນວໃດກໍດີ, ການຈັດຕັ້ງປະຕິບັດມາດຕະການພື້ນຖານທີ່ບໍ່ຮຽກຮ້ອງຊັບພະຍາກອນຫຼວງຫຼາຍຈະຊ່ວຍຜູ້ເຄື່ອນຍ້າຍຖິ່ນຖານໃນການຮັບມືກັບພາວະວິກິດ. ມາດຕະການດັ່ງກ່າວອາດລວມທັງ ການສ້າງສາຍພົວພັນກັບສະຖານກົງສຸນ ຫຼື ບັນດາກະຊວງການຕ່າງປະເທດ ເຊິ່ງຈະຊ່ວຍໃຫ້ຜູ້ຈ້າງງານ ແລະ ຜູ້ເຄື່ອນຍ້າຍຖິ່ນຖານໄດ້ຮັບຂໍ້ມູນກ່ຽວກັບພາວະສຸກເສີນ ແລະ ຍັງຈະອຳນວຍຄວາມສະດວກໃຫ້ແຮງງານເຄື່ອຍ້າຍໄດ້ ເຂົ້າເຖິງການຊ່ວຍເຫຼືອຈາກລັດຕົ້ນທາງ.

## ອົງການຈັດຕັ້ງສາກົນ

### *ການຊ່ວຍເຫຼືອໃນການຍົກຍ້າຍ ແລະ ການອົບພະຍົບ*

ລັດອາດຕ້ອງອາໄສອົງການຈັດຕັ້ງສາກົນເພື່ອຍົກຍ້າຍ ແລະ ອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານ. ການຈັດແຈງກະກຽມກັບລັດລ່ວງໜ້າກ່ອນເກີດພາວະວິກິດນັ້ນ ແມ່ນສາມາດຊ່ວຍໃຫ້ມີຄວາມກະຈ່າງແຈ້ງເລື່ອງພາລະບົດບາດ, ຄວາມຮັບຜິດຊອບ ແລະ ຂໍ້ກໍານົດຂອງການຮ່ວມມື ແລະ ທັງເປັນການປັບປຸງການກະກຽມຄວາມພ້ອມໃນການຮັບມືກັບວິກິດ. ການຈັດແຈງກະກຽມດັ່ງກ່າວອາດລວມບັນທັດຖານສໍາລັບການຍົກຍ້າຍ ຫຼື ການອົບພະຍົບ, ຄວາມຮັບຜິດຊອບດ້ານຄ່າໃຊ້ຈ່າຍ ແລະ ທຶນ, ແລະ ຂໍ້ມູນກ່ຽວກັບການບໍລິການອື່ນໆທີ່ຕ້ອງສະໜອງ (ເຊັ່ນ: ການກັ່ນຕອງເພື່ອລະບຸຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມບອບບາງເປັນພິເສດ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ການຊູດຣີດ, ການລ່ວງລະເມີດ ແລະ ຄວາມຮຸນແຮງ ພ້ອມທັງ ການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການບໍລິການແບບຊ່ຽວຊານສໍາລັບຜູ້ທີ່ມີຄວາມຕ້ອງການສະເພາະ).

### *ສູນລວມຖານຂໍ້ມູນ-ເວັບໄຊດ໌ ຫຼື ສູນລົງທະບຽນສໍາລັບການອົບພະຍົບໂດຍຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ລັດ ແລະ ການອໍານວຍຄວາມສະດວກໃຫ້ແກ່ການຮ່ວມມືຂອງຫຼາຍລັດ ຫຼື ຜູ້ມີສ່ວນຮ່ວມຫຼາຍຝ່າຍກ່ຽວກັບການອົບພະຍົບ*

ບໍ່ແມ່ນທຸກໆລັດຕົ້ນທາງຈະມີຄວາມອາດສາມາດໃນການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານທີ່ປະເຊີນກັບວິກິດການ. ການຕອບສະໜອງຄວາມຕ້ອງການທີ່ຕິດພັນກັບວິກິດການໄລຍະສັ້ນເວລາຜູ້ເຄື່ອນຍ້າຍຖິ່ນຖານສາມາດຮັບຄວາມຊ່ວຍເຫຼືອໃນລັດປາຍທາງນັ້ນ ອາດຈະພໍຄຸ້ມຄອງໄດ້, ແຕ່ວ່າ ຖ້າມີຜູເຄື່ອນຍ້າຍຖິ່ນຖານຈໍານວນຫຼວງຫຼາຍທີ່ຕ້ອງການໆອົບພະຍົບ ກໍອາດຈໍາເປັນທີ່ຈະໃຫ້ອົງການຈັດຕັ້ງສາກົນໃຫ້ການສະໜັບສະໜູນ. ເພື່ອໃຫ້ສາມາດຄຸ້ມຄອງການຮຽກຮ້ອງຈາກລັດຕົ້ນທາງນັ້ນ, ອົງການຈັດຕັ້ງສາກົນອາດພິຈາລະນາສ້າງ ຖານຂໍ້ມູນ-ເວັບໄຊດ໌ລວມສູນເພື່ອໃຫ້ລັດ:

- ຮ້ອງຂໍການຊ່ວຍເຫຼືອ;
- ສະໜອງຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານທີ່ຕ້ອງອົບພະຍົບ ລວມທັງສະຖານທີ່ຕັ້ງ ແລະ ຄວາມຕ້ອງການຂອງເຂົາເຈົ້າ;
- ການເຂົ້າເຖິງບົດລາຍງານກ່ຽວກັບ ຂໍ້ມູການຕິດຕໍ່ກັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສະຖານທີ່ຕັ້ງຂອງເຂົາເຈົ້າ;
- ຮັບຂໍ້ມູນກ່ຽວກັບບ່ອນທີ່ຈະອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງສະຖານທີ່ຕ່າງໆໃນລັດຕົ້ນທາງ;
- ຮ້ອງຂໍການຊ່ວຍເຫຼືອເພີ່ມເຕີມສໍາລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຕ້ອງການສະເພາະ ແລະ ຢັ້ງຢືນວ່າຜູ້ເຄື່ອນຍ້າຍຖິ່ນຖານໄດ້ຮັບການຊ່ວຍເຫຼືອດັ່ງກ່າວ ຫຼື ບໍ່ ລວມທັງຜ່ານການສົ່ງຕໍ່ໄປຍັງອົງການຊ່ຽວຊານ ຫຼື ອົງການຕ່າງໆໃນລັດປາຍທາງ;
- ຮຽກຮ້ອງການບໍລິການເພື່ອຢັ້ງຢືນການລະບຸຕົວຕົນ;
- ການປະກັນຄໍາຮ້ອງຂໍ, ຂໍ້ຄວາມ ຫຼື ຄໍາຖາມຈາກສະມາຊິກຄອບຄົວ.

## ອົງການຈັດຕັ້ງສັງຄົມ

### *ການປະສານງານລະຫວ່າງອົງການຈັດຕັ້ງສັງຄົມ*

ການຈັດແຈງກະກຽມຕ່າງໆລະຫວ່າງອົງການຈັດຕັ້ງສັງຄົມໃນຂັ້ນທ້ອງຖິ່ນ, ແຫ່ງຊາດ, ພາກພື້ນ ແລະ ສາກົນ ອາດກວມເອົາຫຼາກຫຼາຍກິດຈະກໍາທີ່ລວມມີ:

- ການແບ່ງປັນຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄວາມຕ້ອງການຂອງເຂົາເຈົ້າ;
- ການຊ່ວຍເຫຼືອຮ່ວມກັນ;
- ການສ້າງຄວາມອາດສາມາດຮ່ວມກັນ
- ການປູກຈິດສໍານຶກ;
- ການສະໜອງການບໍລິການ.

# ພາກປະຕິບັດໃນການນຳໃຊ້ ແນວທາງປະຕິບັດ 8:
# ສ້າງຄວາມອາດສາມາດ ແລະ
# ຮຽນຮູ້ບົດຮຽນຕ່າງໆເພື່ອການຮັບມືກັບພາວະສຸກເສີນ ແລະ
# ຂໍ້ປະຕິບັດພາຍຫຼັງວິກິດ

## ຜູ້ມີສ່ວນຮ່ວມຫຼາຍຝ່າຍ

### *ການຝຶກອົບຮົມ ແລະ ການສ້າງຄວາມອາດສາມາດຂອງຜູ້ມີສ່ວນຮ່ວມພາກລັດ*

ຜູ້ມີສ່ວນຮ່ວມພາກລັດຜູ້ທີ່ອາດໄດ້ຮັບຜົນປະໂຫຍດຈາກການຝຶກອົບຮົມ ແລະ ການສ້າງຄວາມອາດສາມາດໃນດ້ານຕ່າງໆທີ່ດີຂຶ້ນກວ່າເກົ່າກ່ຽວກັບການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບຄວາມຂັດແຍ່ງ ແລະ ໄພພິບັດລວມມີ:

- ເຈົ້າໜ້າທີ່ກວດຄົນເຂົ້າເມືອງ;
- ພະນັກງານກົງສຸນ ແລະ ສະຖານທູດ;
- ເຈົ້າໜ້າທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງກັບແຮງງານ;
- ຜູ້ມີສ່ວນຮ່ວມໃນການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ;
- ຜູ້ມີສ່ວນຮ່ວມໃນການຟື້ນຟູ ແລະ ບູລະນະກໍ່ສ້າງຄືນໃໝ່;
- ຂະແໜງຮັກສາຄວາມສະຫງົບ, ຄຸ້ມຄອງຊາຍແດນ, ກອງທະຫານ ແລະ ຕຳຫຼວດ;
- ເຈົ້າໜ້າທີ່ສະຫວັດດີການ;
- ເຈົ້າໜ້າທີ່ທ້ອງຖິ່ນ;
- ຜູ້ສະໜອງການບໍລິການຮັກສາສຸຂະພາບ.

### *ຫົວຂໍ້/ຂົງເຂດການຝຶກອົບຮົມ ແລະ ການສ້າງຄວາມອາດສາມາດ*

ຜູ້ມີສ່ວນຮ່ວມພາກລັດ ແລະ ຜູ້ມີສ່ວນຮ່ວມອື່ນໆອາດໄດ້ປະໂຫຍດຈາກ ການຝຶກອົບຮົມ ແລະ ການສ້າງຄວາມອາດສາມາດໃນຫົວຂໍ້/ຂົງເຂດຕ່າງໆ ລວມມີ:

- ການສ້າງແຜນທີ່ປະຫວັດຂອງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ;
- ວິທີການເຂົ້າເຖິງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານລວມທັງຜູ້ທີ່ມີສະຖານະການເຂົ້າເມືອງທີ່ບໍ່ໄດ້ຈົດທະບຽນ;
- ການປະເມີນ ແລະ ແກ້ໄຂສະພາບຄວາມບອບບາງ ແລະ ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການປະເມີນຜົນຄວາມອາດສາມາດ ແລະ ຈຸດແຂງຂອງຜູ້ມີສ່ວນຮ່ວມອື່ນໆ;
- ການຮັບມືຢ່າງມີເປົ້າໝາຍເພື່ອຕອບສະໜອງຄວາມຕ້ອງການຂອງປະຊາກອນຊຸມຊົນບາງກຸ່ມສະເພາະ ເຊັ່ນ ຜູ້ເຄາະຮ້າຍຈາກການຄ້າມະນຸດ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ພິການ, ຜູ້ເຄື່ອນຍ້າຍຖິ່ນຖານສູງອາຍຸ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນເດັກນ້ອຍ ລວມທັງ ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ;
- ການໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມໃນການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະວິກິດ;
- ການພັດທະນາແຜນການສຳຮອງ ແລະ ອົບພະຍົບທີ່ລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້ານຳ;
- ການເຊື່ອມສານການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນການປ້ອງກັນ, ການກະກຽມຄວາມພ້ອມ, ການຮັບມືກັບພາວະສຸກເສີນ ແລະ ການຟື້ນຟູພາຍຫຼັງວິກິດ ລວມທັງ ການພັດທະນາ ຫຼື ປັບປຸງ ກົດໝາຍ, ນະໂຍບາຍ ແລະ ລະບຽບຂັ້ນຕອນກ່ຽວກັບການກະກຽມ ແລະ ການຮັບມືກັບພາວະວິກິດທີ່ຄຳນຶງເຖິງຜູ້ເຄື່ອນຍ້າຍຖິ່ນຖານ;
- ການສ້າງບັນຊີລາຍຊື່ຂອງພະນັກງານທີ່ມາລົງທະບຽນ ຜູ້ທີ່ຮູ້ພາສາ ແລະ ວັດທະນະທຳໃນການສື່ສານ ແລະ ຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານໃນພາວະສຸກເສີນ.

### ການແລກປ່ຽນລະຫວ່າງຜູ້ມີສ່ວນຮ່ວມນຳກັນ ເພື່ອການສ້າງຄວາມອາດສາມາດ ແລະ ການຮຽນຮູ້

ການແລກປ່ຽນລະຫວ່າງຜູ້ມີສ່ວນຮ່ວມນຳກັນ ໂດຍທົ່ວໄປແມ່ນອອກແບບເພື່ອຊ່ວຍຜູ້ມີສ່ວນຮ່ວມໃນການຮຽນຮູ້ຈາກຜູ້ມີສ່ວນຮ່ວມທີ່ຄ້າຍຄືກັນ (ເຮັດວຽກໃນຂະແໜງການດຽວກັນ) ຫຼື ຜູ້ມີສ່ວນຮ່ວມທີ່ໄດ້ຜ່ານປະສົບການທີ່ ເປັນປະໂຫຍດ. ການແລກປ່ຽນລະຫວ່າງຜູ້ມີສ່ວນຮ່ວມນຳກັນອາດໄດ້ຮັບຜົນປະໂຫຍດຈາກ:

- ຜູ້ມີສ່ວນຮ່ວມຕ່າງຂະແໜງການທີ່ແກ້ໄຂຄວາມທ້າທາຍທີ່ຄ້າຍຄືກັນຈາກທັດສະນະທີ່ແຕກຕ່າງກັນເຊັ່ນ ລັດ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ;
- ສາຍພົວພັນສ່ວນຕົວ ແລະ ຄວາມໄວ້ເນື້ອເຊື່ອໃຈລະຫວ່າງຜູ້ມີສ່ວນຮ່ວມທີ່ເຮັດໃຫ້ສາມາດແລກປ່ຽນຄວາມເຫັນໄດ້ຢ່າງກົງໄປກົງມາ ແລະ ຢ່າງເປີດເຜີຍ;
- ກົນໄກເພື່ອແບ່ງປັນບົດຮຽນ.

### ແຜນງານເພື່ອສ້າງຄວາມອາດສາມາດຂອງອົງການຜູ້ເຄື່ອນຍ້າຍຖິ່ນຖານໃນການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງຜ່ານແຜນງານການຝຶກຄູຝຶກ

ອົງການຜູ້ເຄື່ອນຍ້າຍຖິ່ນຖານມີຄວາມຮູ້ກ່ຽວກັບຊຸມຊົນທ້ອງຖິ່ນ ພ້ອມທັງມີທັກສະດ້ານພາສາ ແລະ ລຶ້ງເຄີຍກັບຮີດຄອງປະເພນີ ແລະ ວັດທະນະທຳຂອງຜູ້ເຄື່ອນຍ້າຍຖິ່ນຖານ. ເຂົາເຈົ້າມີສາຍພົວພັນໃນທ້ອງຖິ່ນທີ່ເຮັດໃຫ້ເຂົາເຈົ້າສາມາດເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານທີ່ພາກສ່ວນອື່ນໆອາດເບິ່ງຂ້າມ ລວມທັງ ຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ. ກິດຈະກຳເພື່ອສ້າງຄວາມອາດສາມາດຂອງອົງການຜູ້ເຄື່ອນຍ້າຍຖິ່ນຖານລວມມີ:

- ການຈັດການຝຶກອົບຮົມກ່ຽວກັບການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ;
- ການຊຸກຍູ້ການແລກປ່ຽນກ່ຽວກັບ ການຈັດຕັ້ງປະຕິບັດແຜນງານ ແລະ ພາກປະຕິບັດເພື່ອຊ່ວຍຜູ້ເຄື່ອນຍ້າຍຖິ່ນຖານໃນໄລຍະເກີດວິກິດ;
- ການສະໜອງທຶນເພື່ອຊ່ວຍໃຫ້ອົງການຜູ້ເຄື່ອນຍ້າຍຖິ່ນຖານພັດທະນາແຜນການສຳຮອງ;
- ການຮ່ວມມືລະຫວ່າງ ອົງການຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ຮັບມືກັບພາວະສຸກເສີນຂັ້ນທ້ອງຖິ່ນເພື່ອຊ່ວຍໃຫ້ການສື່ສານກ່ຽວກັບວິກິດການມີປະສິດທິຜົນຫຼາຍຂຶ້ນ;
- ການຈັດ 'ການຝຶກຄູຝຶກ' ເພື່ອຮັບປະກັນໃຫ້ມີການຖ່າຍທອດຄວາມຮູ້ ພາຍໃນອົງການຜູ້ເຄື່ອນຍ້າຍຖິ່ນຖານ ແລະ ເຄືອຂ່າຍຜູ້ເຄື່ອນຍ້າຍຖິ່ນຖານ.

### ກອງທຶນສະເພາະເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ

ອາດຈຳເປັນຕ້ອງນຳໃຊ້ທຶນເພື່ອຕອບສະໜອງຄວາມຕ້ອງການໃນໄລຍະເກີດພາວະສຸກເສີນ ແລະ ທັງການອົບພະຍົບ, ການເດີນທາງກັບຄືນປະເທດ, ການຮັກສາທາງການແພດ ແລະ ສະຖານທີ່ພັກຊົ່ວຄາວ ລວມທັງ ຄວາມຕ້ອງການພາຍຫຼັງເກີດວິກິດ, ການຊ່ວຍເຫຼືອ ແລະ ການບໍລິການໃນການເຊື່ອມໂຍງຄືນສູ່ສັງຄົມ. ການລະດົມທຶນ ອາດເຮັດໄດ້ໂດຍ:

- ກອງທຶນສະເພາະໂດຍຂໍການສົມທົບຈາກຜູ້ຈ້າງງານ, ຜູ້ຈັດຫາງານ, ໜ່ວຍງານຈັດຫາແຮງງານ ແລະ ຜູ້ເຄື່ອນຍ້າຍຖິ່ນຖານ;
- ສ້າງຖານການສະໜອງທຶນທາງອອນໄລນ໌ ທີ່ອະນຸຍາດໃຫ້ລະດົມທຶນ;
- ເງິນກູ້ຢືມຈາກສະຖາບັນການເງິນ;
- ການບໍລິຈາກດ້ານການເງິນ, ວັດຖຸປັດໃຈ ແລະ ຊັບສິນ ຫຼື ເງິນກູ້ຢືມ;
- ເງິນກູ້ຢືມຈາກທະນາຄານ ຫຼື ສະຖາບັນຂອງລັດ ຫຼື ສາກົນ ຫຼື ພາກພື້ນ ແລະ ຜູ້ມີສ່ວນຮ່ວມພາກເອກະຊົນ;
- ການປະກອບສ່ວນຈາກຜູ້ພັດຖິ່ນ;
- ເງິນຊ່ວຍເຫຼືອລ້າ.

## *ກົນໄກການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການເຂົ້າເຖິງຂະບວນການລີ້ໄພໃນໄລຍະເວລາເກີດວິກິດ*

ໃນໄລຍະເວລາເກີດວິກິດ, ຜູ້ເຄື່ອນຍ້າຍຖິ່ນຖານອາດຕ້ອງການໆບໍລິການຊ່ຽວຊານສະເພາະດ້ານຢູ່ໃນລັດປາຍທາງ, ລັດທາງຜ່ານ ຫຼື ຖ້າມີການຍົກຍ້າຍ ຫຼື ການອົບພະຍົບ ກໍແມ່ນເມື່ອເດີນທາງມາຮອດລັດກ່ຽວຂ້ອງ. ການສ້າງຄວາມອາດສາມາດເພື່ອກະກຽມຄວາມພ້ອມຮັບມືກັບວິກິດການອາດລວມມີ ການພັດທະນາຄວາມອາດສາມາດໃນການປະເມີນຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຕ້ອງການສະເພາະ ແລະ ລະບຸຜູ້ສະໜອງການບໍລິການພິເສດ ກໍຄື ການພັດທະນາລະບຽບຂັ້ນຕອນທີ່ຊັດເຈນເພື່ອປະຕິບັດໃນເວລາມີການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ. ຄວາມອາດສາມາດໃນການສົ່ງຕໍ່ອາດມີຄວາມຈໍາເປັນເມື່ອຜູ້ເຄື່ອນຍ້າຍຖິ່ນຖານຕ້ອງການຄວາມຊ່ວຍເຫຼືອທາງການແພດ ສໍາລັບເດັກນ້ອຍທີ່ບໍ່ມີຄົນຕິດຕາມ ຫຼື ຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນເດັກນ້ອຍທີ່ຖືກແຍກຈາກຜູ້ປົກຄອງ, ຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ໄດ້ຮັບຄວາມເຈັບຊໍ້າທາງຈິດໃຈ ແລະ ສັງຄົມ, ແລະ ຜູ້ເຄື່ອນຍ້າຍທີ່ພິການເປັນຕົ້ນ. ການສ້າງສາຍພົວພັນລ່ວງໜ້າລະຫວ່າງຜູ້ມີສ່ວນຮ່ວມກ່ຽວຂ້ອງກັບການຕອບສະໜອງຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ລະບົບການປົກປ້ອງແຫ່ງຊາດ ຫຼື ສາກົນສໍາລັບຜູ້ລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດນັ້ນຈະຮັບປະກັນວ່າ ຂະບວນການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານຈະເດີນແມ່ນແລ່ນສະດວກໃນໄລຍະເກີດວິກິດ. ໃນການສ້າງລະບົບການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ, ປັດໃຈທີ່ຕ້ອງຄໍານຶງເຖິງລວມມີ:

- ການສ້າງບົດບັນທຶກຄວາມເຂົ້າໃຈ ຫຼື ລະບຽບຂັ້ນຕອນການດໍາເນີນຢ່າງມີມາດຕະຖານລະຫວ່າງຜູ້ມີສ່ວນຮ່ວມທີ່ໃຫ້ການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ ແລະ ກົນໄກການລີ້ໄພຂອງລັດ ໂດຍລະບຸຢ່າງລະອຽດພາລະບົດບາດ ແລະ ຄວາມຮັບຜິດຊອບ ແລະ ການອໍານວຍຄວາມສະດວກໃຫ້ແກ່ການຄາດຄະເນການປະຕິບັດການຕ່າງໆ;
- ການມີຈຸດປະສານງານຫຼັກໃນການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ ເພື່ອຮັບປະກັນການສື່ສານທີ່ບໍ່ຂ້ອງຄາ;
- ການຮັບປະກັນການກັ່ນຕອງເບື້ອງຕົ້ນເພື່ອຊ່ວຍໃນການລະບຸຄວາມຕ້ອງການໄດ້ຢ່າງວ່ອງໄວ;
- ການຝຶກອົບຮົມຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງກັບ ກັບກົນໄກ ແລະ ລະບຽບຂັ້ນຕອນຕ່າງໆ;
- ການວາງມາດຕະການໆປົກປ້ອງເພື່ອຮັບປະກັນ ການຄໍານຶງເຖິງຜົນປະໂຫຍດຂອງເດັກນ້ອຍເປັນຫຼັກໃນການເລືອກບ່ອນສົ່ງຕໍ່ເຊັ່ນ ສໍາລັບເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ເດັກນ້ອຍທີ່ຖືກແຍກຈາກຜູ້ປົກຄອງ (ເຊັ່ນ ການປະເມີນຜົນປະໂຫຍດທີ່ດີທີ່ສຸດ);
- ການວາງມາດຕະການປົກປ້ອງເພື່ອຮັບປະກັນວ່າຂະບວນການສົ່ງຕໍ່ນັ້ນຈະເຄົາລົບຄວາມລັບຂອງຂໍ້ມູນ ແລະ ຂ່າວສານ.

## *ການຕິດຕາມ ແລະ ການປະເມີນຜົນການຮັບມືກັບພາວະວິກິດ*

ການປະເມີນຜົນຂອງການຮັບມືກັບໄພພິບັດທໍາມະຊາດ ຫຼື ຄວາມຂັດແຍ່ງອາດບໍ່ໄດ້ຄໍານຶງເຖິງ ສະຖານະການສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານ. ດ້ວຍເຫດນັ້ນຈຶ່ງອາດຈໍາເປັນຕ້ອງມີການປະເມີນຜົນສະເພາະເຈາະຈົງທີ່ດັດປັບເພື່ອວັດແທກປະສິດທິຜົນຂອງການຮັບມືກັບຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ. ພາກສ່ວນທີ່ສ້າງແມ່ແບບ ການປະເມີນຜົນການຮັບມືກັບວິດກິດການທີ່ຄໍານຶງເຖິງຜູ້ເຄື່ອນຍ້າຍຖິ່ນຖານ ອາດພິຈາລະນາດັ່ງຕໍ່ໄປນີ້:

- ການພັດທະນາຈຸດປະສົງທີ່ຊັດເຈນກ່ຽວກັບປະສິດທິຜົນຂອງການຮັບມືກັບວິກິດ ໂດຍຖືຜູ້ເຄື່ອນຍ້າຍຖິ່ນຖານເປັນກຸ່ມປະຊາກອນທີ່ແຕກຕ່າງຈາກກຸ່ມອື່ນດ້ານຄວາມຕ້ອງການສະເພາະ;
- ການລວມເອົາປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນການປະເມີນຜົນ ທີ່ປະເມີນຜົນການຮັບມືກັບວິກິດໂດຍລວມເພື່ອຮັບປະກັນວ່າໄດ້ມີປະຊາກອນໃນຈໍານວນຫຼາຍພຽງພໍໃນຕົວຢ່າງການສໍາຫຼວດ ຫຼື ໃນການສໍາຫຼວດ;
- ການໃຫ້ກຸ່ມຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ມີສ່ວນຮ່ວມພາກອົງການຈັດຕັ້ງສັງຄົມ ທີ່ເຮັດວຽກຢ່າງໃກ້ຊິດກັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານໄດ້ເຂົ້າໃນກິດຈະກໍາການປະເມີນຜົນ;
- ຜົນກະທົບໄລຍະສັ້ນ, ກາງ ແລະ ຍາວຂອງການຮັບມືກັບວິກິດການຕໍ່ປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງຄວາມຕ້ອງການທີ່ຕິດພັນກັບການອົບພະຍົບ ແລະ ການເຊື່ອມໂຍງຄືນສູ່ສັງຄົມ ຫຼື ສະພາບປົກກະຕິ;
- ການປະເມີນຜົນກະທົບຂອງພາກສະຖາບັນຕໍ່ຜູ້ເຄື່ອນຍ້າຍຖິ່ນຖານລວມທັງ ການປະສານງານລະຫວ່າງຜູ້ມີສ່ວນຮ່ວມຫຼາຍຝ່າຍທີ່ໄດ້ ມີສ່ວນຮ່ວມໃນການຮັບມືກັບພາວະວິກິດ;
- ການແບ່ງປັນບົດຮຽນທີ່ຖອດຖອນໄດ້ທີ່ກ່ຽວຂ້ອງກັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ;
- ການໃຫ້ຄໍາແນະນໍາເພື່ອປັບປຸງການຮັບມືກັບພາວະວິກິດສໍາລັບຜູ້ເຄື່ອນຍ້າຍຖິ່ນຖານ;
- ການພັດທະນາກົນໄກການໃຫ້ຄວາມເຫັນ-ການຕໍານິຕິຊົມ ແລະ ການຮ້ອງທຸກທີ່ງ່າຍດາຍກະທັດຮັດ ເພື່ອຊຸກຍູ້ການເຂົ້າຮ່ວມຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການປະເມີນຜົນການຮັບມືກັບວິກິດການ.

### *ກອງທຶນສະເພາະເພື່ອແກ້ໄຂຄວາມຕ້ອງການສຸກເສີນ*

ຫຼາຍລັດມີແຫຼ່ງທຶນ-ຊັບພະຍາກອນສະເພາະເພື່ອນໍາໃຊ້ໃນໄລຍະເກີດໄພພິບັດທໍາມະຊາດ ແລະ ວິກິດການອື່ນໆເພື່ອຕອບສະໜອງຄວາມຕ້ອງການສຸກເສີນຂອງປະຊາກອນຕົນ. ການຈັດສັນກອງທຶນເພື່ອເຮັດໃຫ້ການຕອບສະໜອງຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານໃຫ້ດີກວ່າເກົ່າ ອາດຊ່ວຍຮັບປະກັນການລວມເອົາຜູ້ເຄື່ອນຍ້າຍຖິ່ນຖານໃນການຮັບມືກັບວິກິດການ ແລະ ຄວາມຕ້ອງການພິເສດຂອງເຂົາເຈົ້າກໍຈະໄດ້ຮັບການແກ້ໄຂ. ກອງທຶນດັ່ງກ່າວອາດລວມມີ:

- ການແປເອກະສານໃນຫຼາຍພາສາ;
- ການແປພາສາເພື່ອສະໜັບສະໜູນຜູ້ຮັບມືດ່ານໜ້າທີ່ພົບພໍ້ຜູ້ເຄື່ອນຍ້າຍຖິ່ນຖານທີ່ຕ້ອງການຄວາມຊ່ວຍເຫຼືອ;
- ການສະໜັບສະໜູນອົງການຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ພັດຖິ່ນຢູ່ ເພື່ອຂໍຄວາມຊ່ວຍເຫຼືອເຂົາເຈົ້າໃນການເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານ;
- ການຈ່າຍເງິນຄືນ ສໍາລັບຄ່າໃຊ້ຈ່າຍ ໂດຍຜູ້ຮັບມືດ່ານໜ້າ ລວມທັງ ຕໍາຫຼວດ, ຫ້ອງສຸກເສີນໃນໂຮງໝໍ, ບ່ອນລີ້ໄພ ແລະ ສິ່ງອໍານວຍຄວາມສະດວກອື່ນໆໃນການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະເຂົ້າເມືອງແບບບໍ່ໄດ້ລົງທະບຽນ, ບໍ່ໄດ້ຮັບການຄຸ້ມຄອງໂດຍທຶນຂອງພາກລັດ ຫຼື ເອກະຊົນ;
- ທຶນ-ຊັບພະຍາກອນເພື່ອການອົບພະຍົບຂອງຜູ້ເຄື່ອນຍ້າຍຖິ່ນຖານ ທີ່ບໍ່ມີພາກສ່ວນໃດຈ່າຍຄ່າອົບພະຍົບໃຫ້.

### *ກອງທຶນສະເພາະເພື່ອແກ້ໄຂຄວາມຕ້ອງການພາຍຫຼັງວິກິດການ*

ການສ້າງກອງທຶນເພື່ອຊ່ວຍໃນການເຊື່ອມໂຍງຄືນສູ່ສັງຄົມ ຫຼື ງົບປະມານເພື່ອສະໜັບສະໜູນຄວາມຕ້ອງການອັນຮີບດ່ວນ-ສະເພາະໜ້າຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄອບຄົວຂອງເຂົາເຈົ້າທີ່ໄດ້ຮັບຜົນກະທົບຈາກວິກິດ ແມ່ນຈະສາມາດສະໜັບສະໜູນຄວາມພະຍາຍາມຂອງເຂົາເຈົ້າໃນການບູລະນະກໍ່ສ້າງຄືນໃໝ່, ການເດີນທາງກັບຄືນປະເທດ, ແລະ ການເຊື່ອມໂຍງຄືນສູ່ສັງຄົມ. ກອງທຶນດັ່ງກ່າວແມ່ນຈະເປັນປະໂຫຍດໂດຍສະເພາະສໍາລັບລັດຕົ້ນທາງທີ່ມີພົນລະເມືອງຈໍານວນມະຫາສານຢູ່ຕ່າງປະເທດ ແລະ ທີ່ມີເສດຖະກິດເອື່ອຍອີງໃສ່ເງິນທີ່ສົ່ງກັບບ້ານ. ຖ້າການຈັດສັນກອງທຶນສະເພາະຫາກເປັນໄປບໍ່ໄດ້, ລັດສາມາດລະບຸຄ່າໃຊ້ຈ່າຍເຫຼົ່ານີ້ໃນການວາງແຜນດ້ານການເງິນ ແລະ ດໍາເນີນມາດຕະການອື່ນໆເພື່ອເຂົ້າເຖິງແຫຼ່ງທຶນລວມທັງການດໍາເນີນຜ່ານສະຖາບັນການເງິນສາກົນ. ດ້ານຕ່າງໆທີ່ລັດສາມາດພິຈາລະນາໃນການສ້າງກອງທຶນລວມມີ:

- ການນໍາໃຊ້ກອງທຶນເພື່ອສະໜັບສະໜູນຄວາມພະຍາຍາມໃນການກັບຄືນປະເທດ ແລະ ການເຊື່ອມໂຍງຄືນສູ່ສັງຄົມຂອງຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ການຈັດສັນເງິນໂດຍກົງເພື່ອຜູ້ເຄື່ອນຍ້າຍຖິ່ນຖານ;
- ການຈັດສັນທຶນອີງຕາມຄວາມຕ້ອງການ ແລະ ບັນທັດຖານອື່ນໆທີ່ໄດ້ຄັດເລືອກໄວ້ລ່ວງໜ້າ ຫຼື ອີງຕາມຂະບວນການແບບແຂ່ງຂັນ;
- ການປະກອບສ່ວນຂອງຜູ້ເຄື່ອນຍ້າຍຖິ່ນຖານແບບສະໝັກໃຈ ຫຼື ພາກບັງຄັບ;
- ກອງທຶນສົມທົບ ເຊິ່ງທັງລັດ ແລະ ຜູ້ເຄື່ອນຍ້າຍຖິ່ນຖານຈະປະກອບສ່ວນ;
- ຮ່ວມມືກັບທະນາຄານ ແລະ ສະຖາບັນການເງິນອື່ນໆ ຫຼື ບໍ່ ລວມທັງ ສະຖາບັນການເງິນສາກົນ ແລະ ພາກພື້ນ;
- ຂອບເຂດການປົກຄຸມຂອງກອງທຶນ (ເຊັ່ນ ການຟື້ນຟູຊີວິດການເປັນຢູ່ພາຍຫຼັງກັບຄືນມາປະເທດ, ຄວາມຕ້ອງການດ້ານທີ່ພັກ ແລະ ຄວາມຕ້ອງການພື້ນຖານອື່ນໆ, ແລະການບູລະນະກໍ່ສ້າງຄືນໃໝ່);
- ລະບຽບຂັ້ນຕອນການຕິດຕາມ ແລະ ການບັນຊີຢ່າງມີປະສິດທິຜົນ.

## ລັດປາຍທາງ

### *ການຝຶກອົບຮົມຜູ້ມີສ່ວນຮ່ວມໃນການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະວິກິດໂດຍນໍາເອົາອົງປະກອບທີ່ກ່ຽວຂ້ອງກັບຄວາມຕ້ອງການ ແລະ ຄວາມບອບບາງຂອງຜູ້ເຄື່ອນຍ້າຍຖິ່ນຖານເຂົ້ານໍາ.*

ຜູ້ມີສ່ວນຮ່ວມທີ່ຮັບຜິດຊອບວຽກງານການປ້ອງກັນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນລວມທັງການ

ຫລຸດຜ່ອນຄວາມສ່ຽງຈາກໄພພິບັດນັ້ນ ບໍ່ໄດ້ມີທັກສະເພື່ອຮັບມືກັບປະຊາກອນທີ່ມີຄວາມຫຼາກຫຼາຍທາງດ້ານພາສາ ແລະ ວັດທະນະທຳສະເໝີໄປ. ຜູ້ຮັບມືດ່ານທຳອິດໃນທ້ອງຖິ່ນໂດຍສະເພາະ ຈະມີວິທີໃນການສື່ສານກັບທຸກໆຄົນລວມທັງກັບຜູ້ເຄື່ອນຍ້າຍຖິ່ນຖານທີ່ຕົກໃນສະຖານະການສ່ຽງເຖິງແກ່ຊີວິດ. ການຝຶກອົບຮົມອາດລວມມີ:

- ຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານທີ່ອາໄສຢູ່ໃນຊຸມຊົນທ້ອງຖິ່ນ ລວມທັງຕົ້ນກຳເນີດ, ພາສາ, ຄວາມເຊື່ອດ້ານວັດທະນະທຳ ແລະ ສາສະໜາ ກໍຄືຄຸນລັກສະນະອື່ນໆຂອງເຂົາເຈົ້າທີ່ອາດກ່ຽວຂ້ອງກັບການຮັບມືກັບພາວະສຸກເສີນ;
- ຂໍ້ມູນກ່ຽວກັບອົງການຜູ້ເຄື່ອນຍ້າຍຖິ່ນຖານ, ຜູ້ນຳພາຜູ້ເຄື່ອນຍ້າຍຖິ່ນຖານໃນທ້ອງຖິ່ນ, ແລະ ອົງການທາງສັງຄົມ ແລະ ວັດທະນະທຳ ແລະ ສະຖາບັນທາງສາສະໜາທີ່ຜູ້ເຄື່ອນຍ້າຍຖິ່ນຖານມັກຈະໄປຫາ;
- ຂໍ້ມູນກ່ຽວກັບວິທີການໃຫ້ການບໍລິການທີ່ເໝາະສົມກັບວັດທະນະທຳ ແລະ ພາສາໃນເວລາພົວພັນກັບຜູ້ເຄື່ອນຍ້າຍຖິ່ນຖານ;
- ຂໍ້ມູນກ່ຽວກັບວິທີການເຂົ້າເຖິງການບໍລິການງແປພາສາ ແລະ ນາຍແປພາສາ;
- ບົດບາດຂອງເຈົ້າໜ້າທີ່ກົງສຸນໃນການປົກປ້ອງ ແລະ ການໃຫ້ຄວາມຊ່ວຍເຫຼືອພົນລະເມືອງ;
- ເງື່ອນໄຂຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຖານະການເຂົ້າເມືອງທີ່ແຕກຕ່າງກັນ ກັບ ປະເພດການບໍລິການທີ່ສາມາດສະໜອງໃຫ້ໄດ້ກ່ອນ, ໃນໄລຍະເວລາວິກິດ ແລະ ພາຍຫຼັງພາວະວິກິດ.

## ລັດຕົ້ນທາງ

### *ກົດໝາຍ ແລະ ນະໂຍບາຍເພື່ອປົກປ້ອງພົນລະເມືອງຢູ່ຕ່າງປະເທດ*

ກົດໝາຍ ແລະ ນະໂຍບາຍແຫ່ງຊາດທີ່ກຳນົດຄວາມຮັບຜິດຊອບຂອງລັດຕໍ່ພົນລະເມືອງຂອງຕົນໃນເວລາທີ່ເຂົາເຈົ້າຢູ່ຕ່າງປະເທດ ຈະຊ່ວຍໃຫ້ທິດຊີ້ນຳທີ່ຊັດເຈນກ່ຽວກັບພັນທະຂອງເຂົາເຈົ້າ. ພົນລະເມືອງຈະຕ້ອງຮູ້ວ່າເຂົາເຈົ້າສາມາດຄາດຫວັງຫຍັງໄດ້ແດ່ຈາກເຈົ້າໜ້າທີ່ຂອງລັດຕົ້ນທາງໃນຂະນະທີ່ຕົນຢູ່ຕ່າງປະເທດ. ກົດໝາຍ ແລະ ນະໂຍບາຍບໍ່ຈຳເປັນຕ້ອງພັດທະນາຂຶ້ນມາເພື່ອສະຖານະການວິກິດສະເພາະ. ກົດໝາຍ ແລະ ນະໂຍບາຍຄວນລວມມີຂໍ້ກຳນົດ-ບົດບັນຍັດທີ່:

- ໃຫ້ອຳນາດເຈົ້າໜ້າທີ່ກົງສຸນໃນການຮ່ວມມືກັບເຈົ້າໜ້າທີ່ຂອງລັດປາຍທາງໃນການ ໃຫ້ຄວາມຊ່ວຍເຫຼືອພົນລະເມືອງຂອງຕົນ;
- ກຳນົດສະຖານະການຕ່າງໆທີ່ພົນລະເມືອງຢູ່ຕ່າງປະເທດຈະໄດ້ຮັບຄວາມຊ່ວຍເຫຼືອ;
- ກຳນົດສິດທິສຳລັບບຸກຄົນທີ່ຖືຫຼາຍສັນຊາດ;
- ລະບຸວ່າຜູ້ໃດຈະຮັບຜິດຊອບຄ່າບໍລິການຕ່າງໆ ລວມທັງຄ່າໃຊ້ຈ່າຍການອົບພະຍົບ;
- ລະບຸການປະຕິບັດການທີ່ພົນລະເມືອງສາມາດດຳເນີນ ໃນກໍລະນີທີ່ບໍ່ມີສະຖານກົງສຸນ ຫຼື ສະຖານທູດຢູ່ໃນລັດປາຍທາງ.

### *ແຜນງານການສ້າງຄວາມອາດສາມາດສຳລັບເຈົ້າໜ້າທີ່ແຫ່ງຊາດ ແລະ ທ້ອງຖິ່ນ*

ແຜນງານການສ້າງຄວາມອາດສາມາດສຳລັບເຈົ້າໜ້າທີ່ແຫ່ງຊາດ ແລະ ທ້ອງຖິ່ນແມ່ນມີຄວາມຈຳເປັນເພື່ອພົນລະເມືອງຕົນໃນການກະກຽມຄວາມພ້ອມຂອງເຂົາເຈົ້າກ່ອນການອອກເດີນທາງ ແລະ ເພື່ອເຊື່ອມໂຍງເຂົາເຈົ້າກັບຄືນສູ່ສັງຄົມຖ້າເຂົາເຈົ້າຕ້ອງການກັບຄືນມາປະເທດໃນເວລາເກີດວິກິດ. ແຜນງານດັ່ງກ່າວອາດລວມມີ:

- ການລະບຸພາລະບົດບາດ ແລະ ຄວາມຮັບຜິດຊອບດ້ານການຈັດຕັ້ງເພື່ອກະກຽມຄວາມພ້ອມຂອງພົນລະເມືອງກ່ອນການອອກເດີນທາງ ແລະ ເພື່ອເຊື່ອມໂຍງເຂົາເຈົ້າກັບຄືນສູ່ສັງຄົມເມື່ອເຂົາເຈົ້າກັບຄືນມາປະເທດ;
- ການພັດທະນາແຜນສຳຮອງເພື່ອການອົບພະຍົບ ແລະ ການເຊື່ອມໂຍງພົນລະເມືອງຄືນສູ່ສັງຄົມ;
- ການສ້າງກົນໄກໃນການສະໜອງທຶນເພື່ອສະໜັບສະໜູນການເຊື່ອມໂຍງກັບຄືນສູ່ສັງຄົມ;

- ການຈັດການແລກປ່ຽນກ່ຽວກັບພາກປະຕິບັດທີ່ດີທີ່ສຸດ ລະຫວ່າງເຈົ້າໜ້າທີ່ແຫ່ງຊາດ ແລະ ທ້ອງຖິ່ນ ກັບລັດອື່ນໆທີ່ປະເຊີນກັບຄວາມທ້າທາຍທີ່ຄ້າຍຄືກັນ;
- ການປະເມີນຜົນການຮັບມືກັບພາວະວິກິດໃນໄລຍະຜ່ານມາເພື່ອລະບຸຂົງເຂດທີ່ຕ້ອງປັບປຸງ;
- ການພັດທະນາລະບົບການສົ່ງຕໍ່ສໍາລັບການບໍລິການດ້ານສາທາລະນະສຸກ ແລະ ການສ້າງຄວາມອາດສາມາດຂອງການບໍລິການສາທາລະນະສຸກທ້ອງຖິ່ນເພື່ອສະໜັບສະໜູນຄວາມຕ້ອງການຂອງພົນລະເມືອງ;
- ການລະບຸ, ການແກ້ໄຂ ແລະ ການສົ່ງຕໍ່ ພົນລະເມືອງທີ່ມີຄວາມບອບບາງ-ຄວາມສ່ຽງສະເພາະ;
- ການເກັບກໍາຂໍ້ມູນກ່ຽວກັບພົນລະເມືອງທີ່ກັບຄືນມາປະເທດໃນຂັ້ນທ້ອງຖິ່ນ, ລວມທັງຂໍ້ມູນດ້ານປະຊາກອນ, ສະຖານທີ່ຕັ້ງ, ຂໍ້ມູນການຕິດຕໍ່ ແລະ ຂໍ້ມູນທີ່ກ່ຽວຂ້ອງ;
- ຍຸດທະສາດເພື່ອຮັບມືກັບພົນລະເມືອງທີ່ຍັງຕິດຄ້າງຢູ່;
- ການເຊື່ອມໂຍງພົນລະເມືອງໃນການກັບຄືນມາສູ່ສັງຄົມ;
- ການຈັດສົ່ງ ຄໍາຖາມກ່ຽວກັບບຸກຄົນທີ່ສູນຫາຍ ໃຫ້ແກ່ ສະຖານກົງສຸນ ເພື່ອພະຍາຍາມຊອກຫາພົນລະເມືອງຂອງຕົນ.

### *ແຜນງານຝຶກອົບຮົມ ແລະ ສ້າງຄວາມອາດສາມາດສໍາລັບສະຖານກົງສຸນ*

ແຜນງານເພື່ອຍົກສູງຄວາມອາດສາມາດຂອງກົງສຸນໃນການປົກປ້ອງພົນລະເມືອງຂອງຕົນເອງ ອາດລວມມີ:

- ການຝຶກອົບຮົມ ເຈົ້າໜ້າທີ່ກົງສຸນໃນການເກັບກໍາຂໍ້ມູນກ່ຽວກັບພົນລະເມືອງຂອງຕົນທີ່ຢູ່ໃນລັດປາຍທາງ;
- ການຝຶກອົບຮົມກ່ຽວກັບການຄຸ້ມຄອງວິກິດລວມທັງການອົບພະຍົບ ແລະ ການເດີນທາງກັບຄືນປະເທດ ແລະ ການໃຫ້ເອກະສານລະບຸຕົວຕົນ ແລະ ເອກະສານການເດີນທາງສຸກເສີນ;
- ການຈັດຕັ້ງປະຕິບັດຊອບແວການຄຸ້ມຄອງວິກິດຂອງກົງສຸນ ທີ່ກວມເອົາການລົງທະບຽນ, ການສື່ສານ ແລະ ລະບຽບຂັ້ນຕອນສຸກເສີນອື່ນໆ ເຊັ່ນການເຂົ້າຮັກສາໃນໂຮງໝໍ, ການຈໍາຄຸກ ຫຼື ການສູນເສຍເອກະສານ;
- ການພັດທະນາແຜນການສໍາຮອງ ແລະ ການອົບພະຍົບ;
- ການຈັດຫາແຮງງານຈາກທ້ອງຖິ່ນເພື່ອຍົກສູງຄວາມເຂົ້າໃຈກ່ຽວກັບຄວາມຮູ້ ແລະ ວັດທະນະທໍາທ້ອງຖິ່ນ;
- ການສ້າງ ແລະ ການຮັກສາການພົວພັນກັບພົນລະເມືອງ;
- ການພົວພັນຮ່ວມມືກັບສາທາລະນະຊົນເພື່ອສ້າງສາຍພົວພັນກັບຊຸມຊົນທີ່ກ່ຽວຂ້ອງ;
- ການຮັບປະກັນຄວາມອາດສາມາດຂອງກົງສຸນທີ່ນັບມື້ເພີ່ມຂຶ້ນ ຜ່ານການນໍາໃຊ້ພະນັກງານກົງສຸນ ແລະ ຊ່ຽວຊານອື່ນໆ.

### *ລະບົບການຄຸ້ມຄອງຂອງກົງສຸນທາງອິນເຕີເນັດ*

ລັດຈັດຕັ້ງປະຕິບັດລະບົບການລົງທະບຽນ, ແຜນສໍາຮອງ ແລະ ລະບົບການຄຸ້ມຄອງວິກິດທີ່ມີລະດັບຄວາມສະຫຼັບຊັບຊ້ອນແຕກຕ່າງກັນ. ເພື່ອຈໍາກັດລະດັບຄວາມຫຼໍາສະໄໝຂອງລະບົບ, ລັດອາດພັດທະນາລະບົບທີ່ນໍາໃຊ້ ແລະ ດໍາເນີນການທາງອິນເຕີເນັດ ຫຼື 'ໃນຄຼາວດ໌', ທີ່ລັດຕ້ອງຈ່າຍຄ່າທໍານຽມເພື່ອນໍາໃຊ້ຊອບແວແທນທີ່ຈະຊື້ຊອບແວຄັ້ງດຽວແລ້ວຈົບ. ວິທີການເສຍຄ່າທໍານຽມ ຈະເຮັດໃຫ້ສາມາດເກັບຮັກສາຂໍ້ມູນຢ່າງປອດໄພ ແລະ ໃນຮູບການທີ່ເຄົາລົບມາດຕະຖານທີ່ກ່ຽວຂ້ອງກັບການປົກປ້ອງ ແລະ ການຮັກສາຄວາມລັບຂອງຂໍ້ມູນ, ແລະ ລັດສາມາດດັດປັບການບໍລິການເມື່ອຈໍາເປັນຕ້ອງປ່ຽນແປງຜ່ານການເວລາ. ໃນກໍລະນີເກີດວິກິດ ກໍຍັງຈະສາມາດເພີ່ມກໍາລັງ-ຂອບເຂດການໃຊ້ງານຂອງລະບົບ ຫຼື ການບໍລິການຢ່າງວ່ອງໄວຕາມຄວາມຈໍາເປັນ. ນອກຈາກນັ້ນ, ບັນດາລັດຍັງສາມາດພິຈາລະນາຮ່ວມມື ແລະ ນໍາໃຊ້ລະບົບຮ່ວມກັບລັດອື່ນໆໄດ້ລວມທັງ ການຊ່ວຍເຫຼືອບຸກຄົນທີສາມ ເຊັ່ນອົງການຈັດຕັ້ງສາກົນ. ການຮ່ວມມືດັ່ງກ່າວຄວນວາງໂຄງສ້າງໂດຍສອດຄ່ອງກັບ ມາດຕະຖານທີ່ກ່ຽວຂ້ອງກັບການປົກປ້ອງ ແລະ ຮັກສາຄວາມລັບຂອງຂໍ້ມູນ.

### *ພັນທະບັດ ຫຼື ເງິນມັດຈຳ*

ມາດຕະການໜຶ່ງທີ່ລັດຕົ້ນທາງສາມາດປະຕິບັດເພື່ອຮັບປະກັນໃຫ້ມີທຶນທີ່ພຽງພໍສຳລັບການອົບພະຍົບ ຫຼື ຊົດເຊີຍຄ່າເສຍຫາຍໃຫ້ແກ່ພົນລະເມືອງທີ່ເກີດຈາກ ການອົບພະຍົບແມ່ນ ດ້ວຍວິທີການການຂໍໃຫ້ລູກຈ້າງ ຫຼື ຜູ້ຈັດຫາງານ ເອົາພັນທະບັດ ຫຼື ວາງເງິນມັດຈຳກັບ ລັດຕົ້ນທາງ ຫຼື ກົງສຸນໃນທ້ອງຖິ່ນຕາມຄວາມເໝາະສົມ. ພັນທະບັດ ຫຼື ເງິນມັດຈຳຈະຖືກນຳໃຊ້ກໍຕໍ່ເມື່ອເວລາມີການອົບພະຍົບພົນລະເມືອງເທົ່ານັ້ນ ຫຼື ບໍ່ດັ່ງນັ້ນກໍຈະສົ່ງຄືນໃຫ້ແກ່ລູກຈ້າງເມື່ອອາຍຸການຈ້າງງານໄດ້ສິ້ນສຸດລົງ. ມາດຕະການນີ້ແມ່ນຈະເປັນປະໂຫຍດໂດຍສະເພາະໃນກໍລະນີຜູ້ຈ້າງງານຂະໜາດນ້ອຍ ຫຼື ເປັນບຸກຄົນທີ່ມີຊັບພະຍາກອນຈຳກັດທີ່ຈະສາມາດມອບໃຫ້ໃນໄລຍະເກີດວິກິດ. ປັດໄຈທີ່ຄວນພິຈາລະນາລວມມີ:

- ມູນຄ່າຂອງພັນທະບັດ ຫຼື ເງິນມັດຈຳ;
- ສິ່ງທີ່ພັນທະບັດຈະຄຸ້ມຄອງ (ເຊັ່ນ ຄ່າໃຊ້ຈ່າຍ ຫຼື ຄວາມເສຍຫາຍຂອງການອົບພະຍົບ ຫຼື ຊັບສິນ ແລະ ຊັບສິນບັດທີ່ກູ້ເອົາຄືນບໍ່ໄດ້ ລວມທັງຄ່າແຮງງານທີ່ຄົງຄ້າງ);
- ເງື່ອນໄຂໃນການເຂົ້າເຖິງພັນທະບັດ;
- ຜູ້ໃດຈະເຂົ້າເຖິງພັນທະບັດ (ເຊັ່ນ ພົນລະເມືອງ ຫຼື ລັດຕົ້ນທາງ);
- ວິທີການສະໝັກ ແລະ ຮັບເງິນຈາກພັນທະບັດ ລວມທັງ ວິທີການປະເມີນເງື່ອນໄຂເພື່ອຮັບເອົາເງິນ ແລະ ມູນຄ່າເງິນທີ່ຈະໄດ້ຮັບ.

## ລັດທາງຜ່ານ

### *ການຝຶກອົບຮົມ ແລະ ລະບຽບຂັ້ນຕອນສຳລັບເຈົ້າໜ້າທີ່ຊາຍແດນ*

- ແຜນ ແລະ ລະບຽບຂັ້ນຕອນໃນການຈັດການຮັບມືກັບ ການເດີນທາງເຂົ້າປະເທດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນຈຳນວນມະຫາສານເມື່ອເກີດວິກິດ;
- ວິທີການລະບຸ, ການຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ບອບບາງ-ສ່ຽງ ລວມທັງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ພິການ, ຜູ້ເຄື່ອນຍ້າຍຖິ່ນຖານສູງອາຍຸ ແລະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນເດັກນ້ອຍລວມທັງ ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ;
- ກົນໄກການສົ່ງຕໍ່ ລວມທັງ ການສົ່ງຕໍ່ຜູ້ລີ້ໄພ, ຜູ້ຫາບ່ອນລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດ;
- ສິດທິຂອງຜູ້ເຄື່ອນຍ້າຍຖິ່ນຖານ.

## ຜູ້ມີສ່ວນຮ່ວມພາກເອກະຊົນ

### *ແຜນງານການສ້າງຄວາມອາດສາມາດພາຍໃນ*

ການສ້າງຄວາມອາດສາມາດອາດລວມມີ:

- ການສ້າງການຝຶກອົບພະນັກງານພາກບັງຄັບ ກ່ຽວກັບການຄຸ້ມຄອງວິກິດ;
- ການພັດທະນາລະບົບໃນການໃຫ້ການຊົດເຊີຍໃນສະຖານະການວິກິດ;
- ການສ້າງແຜນສຳຮອງທີ່ຄຳນຶງເຖິງການມີໜ້າ ແລະ ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການພັດທະນາແຜນການອົບພະຍົບທີ່ຄຳນຶງເຖິງຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນລູກຈ້າງ.

## ອົງການຈັດຕັ້ງສາກົນ

*ກົນໄກການສະໜອງທຶນຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ*

ກົນໄກການສະໜອງທຶນສະເພາະເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານຈະເຮັດໃຫ້ອົງການຈັດຕັ້ງສາກົນສາມາດເລີ່ມການດຳເນີນງານ ສຸກເສີນ ແລະ ໃຫ້ການຊ່ວຍເຫຼືອໃນທັນທີໃນກໍລະນີເກີດໄພພິບັດທຳມະຊາດ ຫຼື ຄວາມຂັດແຍ່ງ ພ້ອມທັງການຊ່ວຍເຫຼືອສະ ເພາະໃນການເຊື່ອມໂຍງຄືນສູ່ສັງຄົມ.

*ການພັດທະນານະໂຍບາຍ ການຮັບມືກັບພາວະສຸກເສີນ*

ນະໂຍບາຍ ແລະ ລະບຽບຂັ້ນຕອນເພື່ອການຮັບມືກັບພາວະສຸກເສີນຄວນພັດທະນາໂດຍເລັ່ງໃສ່ການຫັນເປັນມາດຕະຖານ ວິທີການຮັບມືຕ່າງໆເພື່ອຊ່ວຍຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ປະເຊີນກັບຂໍ້ຂັດແຍ່ງ ຫຼື ໄພພິບັດທຳມະຊາດ. ການຫັນ ເປັນມາດຕະຖານດັ່ງກ່າວຄວນ ເຊື່ອມສານປະເດັນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ, ລະບຸຄວາມບອບບາງ ແລະ ຄວາມ ຕ້ອງການ ແລະ ໃຫ້ຄວາມກະຈ່າງແຈ້ງກ່ຽວກັບກົນໄກການສົ່ງຕໍ່.

*ການລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນກອບການພັດທະນາແຫ່ງຊາດ*

ອົງການຈັດຕັ້ງສາກົນສາມາດຊ່ວຍລັດໃນການເຊື່ອມໂຍງປະເດັນການເຄື່ອນຍ້າຍຖິ່ນຖານ ແລະ ການເຄື່ອນຍ້າຍເຂົ້າໃສ່ໃນກອບການ ພັດທະນາແຫ່ງຊາດ ແລະ ກອບການຊ່ວຍເຫຼືອດ້ານການພັດທະນາຂອງສະຫະປະຊາຊາດ (UNDAFs), ແລະ ສາມາດເຊື່ອມໂຍງປະ ເດັນ ການເຄື່ອນຍ້າຍຖິ່ນຖານ ແລະ ການເຄື່ອນຍ້າຍເຂົ້າໃສ່ໃນເອກະສານປະກອບ ແລະ ເຄື່ອງມືແນະນຳ. ອົງການຈັດຕັ້ງສາກົນຕ່າງໆ ໂດຍການປຶກສາຫາລືກັບລັດ ສາມາດລະບຸປະເດັນ ການເຄື່ອນຍ້າຍຖິ່ນຖານເປັນບູລິມະສິດໜຶ່ງທາງຍຸດທະສາດຂອງ UNDAFs ແລະ ລວມ ໝາກຜົນ ແລະ ຕົວຊີ້ວັດກ່ຽວກັບ ບັນຫາການເຄື່ອນຍ້າຍຖິ່ນຖານໃນພາວະວິກິດ ຫຼື ບັນຫາທີ່ກ່ຽວຂ້ອງ. ກິດຈະກຳສຳຄັນອາດລວມມີ:

- ການລະບຸ ການເຄື່ອນຍ້າຍຖິ່ນຖານ ເປັນບັນຫາບູລິມະສິດ ທີ່ຕ້ອງເອົາເຂົ້າໃນກອບການພັດທະນາ ແຫ່ງຊາດ ແລະ UNDAFs;
- ການລະບຸໝາກຜົນ, ຕົວຊີ້ວັດ ຫຼື ພື້ນຖານຫຼັກໆດ້ານການເຄື່ອນຍ້າຍຖິ່ນຖານ ເພື່ອເອົາລວມເຂົ້າໃນ ແຜນອາດສະ ແດງໝາກຜົນຂອງ UNDAFs;
- ການລະບຸອົງການ ແລະ ຄູ່ຮ່ວມງານທີ່ສາມາດຈັດຕັ້ງປະຕິບັດມາດຕະການໃນການບັນລຸຄາດໝາຍຂອງ UNDAF;
- ການລະບຸຄວາມຕ້ອງການດ້ານການສ້າງຄວາມອາດສາມາດ ໃນການໃຫ້ການຊ່ວຍເຫຼືອແກ່ຜູ້ເຄື່ອນຍ້າຍຖິ່ນຖານ ໃນກໍລະນີເກີດວິກິດການ;
- ແນະນຳກ່ຽວກັບການເຊື່ອມໂຍງຂົງເຂດແຜນງານຕ່າງໆເຂົ້າໃນ UNDAFs;
- ປະກອບຄວາມຮູ້ ແລະ ຂໍ້ມູນພື້ນຖານກ່ຽວກັບ ການເຄື່ອນຍ້າຍຖິ່ນຖານໃນພາວະວິກິດ ໃຫ້ແກ່ທີມງານປະຈຳປະເທດ ຂອງ ສປຊ ທີ່ເຮັດວຽກດ້ານການພັດທະນາ ແລະ ການຈັດຕັ້ງປະຕິບັດ UNDAFs.

*ການສະໜັບສະໜູນດ້ານວິຊາການໃນການເກັບກຳ, ການຄຸ້ມຄອງ ແລະ ການແບ່ງປັນຂໍ້ມູນ*

ອົງການຈັດຕັ້ງສາກົນສາມາດສ້າງຄວາມອາດສາມາດ ແລະ ຄຳແນະນຳດ້ານວິຊາການໃຫ້ແກ່ຜູ້ມີສ່ວນຮ່ວມ ໂດຍສະເພາະລັດ ເພື່ອເພີ່ມຄວາມສາມາດຂອງເຂົາເຈົ້າໃນການເກັບກຳ, ການຄຸ້ມຄອງ ແລະ ການແບ່ງປັນຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານ. ບາງຄຸນລັກສະນະຂອງແຜນງານເຫຼົ່ານີ້ລວມມີ:

- ການເຂົ້າໃຈປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານຜ່ານການເກັບກຳ, ການຄົ້ນຄວ້າ, ການສ້າງແຜນທີ່ ແລະ ສະຖິຕິຂອງຂໍ້ ມູນ;
- ການສ້າງເຄືອຂ່າຍ ແລະ ການຮ່ວມມືເພື່ອການແບ່ງປັນຂໍ້ມູນ ແລະ ຂ່າວສານ;

- ການສ້າງ ແລະ ການປັບປຸງລະບົບການລົງທະບຽນທາງອອນໄລນ໌;
- ການສ້າງ ແລະ ການປັບປຸງພື້ນຖານໂຄງລ່າງເພື່ອການລົງທະບຽນ;
- ການສ້າງ ຫຼື ການເພີ່ມຄວາມເຂັ້ມແຂງຂອງລະບຽບຂັ້ນຕອນ ແລະ ເຄື່ອງມືໃນການລົງທະບຽນຢູ່ດ່ານກວດກາຊາຍແດນ;
- ການປູກຈິດສຳນຶກຂອງຜູ້ເຄື່ອນຍ້າຍຖິ່ນຖານກ່ຽວກັບລະບົບການລົງທະບຽນ ແລະ ຊຸກຍູ້ໃຫ້ເຂົາເຈົ້າລົງທະບຽນ;
- ການຮັບຊາບຄວາມກົມກຽວ, ການປົກປ້ອງ, ແລະ ຄວາມເປັນສ່ວນຕົວຂອງຂໍ້ມູນຜ່ານ ປື້ມຄູ່ມື ແລະ ແນວທາງປະຕິບັດ;
- ການຮັບປະກັນຄວາມຮູ້ ແລະ ຄວາມສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງກັບ ການປົກປ້ອງ ແລະ ການຮັກສາຄວາມເປັນສ່ວນຕົວຂອງຂໍ້ມູນ.

### *ການຊ່ວຍເຫຼືອດ້ານວິຊາການກ່ຽວກັບການພັດທະນາດ້ານກົດໝາຍ ແລະ ນະໂຍບາຍ*

ອົງການຈັດຕັ້ງສາກົນສາມາດໃຫ້ການຊ່ວຍເຫຼືອດ້ານຄວາມຊ່ຽວຊານ ແລະ ວິຊາການກ່ຽວກັບ ການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນດ້ານ ກົດໝາຍ, ນະໂຍບາຍ ແລະ ແຜນງານລະດັບຊາດ ລວມທັງການຊ່ວຍເຫຼືອທີ່ຕິດພັນກັບ ການກະກຽມຄວາມພ້ອມ ແລະ ການຮັບມືກັບຂໍ້ຂັດແຍ່ງ ຫຼື ໄພພິບັດທຳມະຊາດ. ອົງການຈັດຕັ້ງສາກົນສາມາດມີບົດບາດສຳຄັນໃນການພັດທະນາມາດຕະຖານ ແລະ ນະໂຍບາຍແຫ່ງຊາດໃນຂົງເຂດທີ່ຕົນມີຄວາມຊ່ຽວຊານ. ການຊ່ວຍເຫຼືອໃນການພັດທະນາດ້ານກົດໝາຍ ແລະ ນະໂຍບາຍລວມມີຂົງເຂດວຽກງານດັ່ງນີ້:

- ການສ້າງຕັ້ງຄະນະຮັບມືກັບພາວະວິກິດ ຈາກກົງສຸນ;
- ການສ້າງສິ່ງອຳນວຍຄວາມສະດວກ-ສູນດ້ານການເງິນເພື່ອໃຫ້ການຊ່ວຍເຫຼືອ ແກ່ຜູ້ເຄື່ອນຍ້າຍຖິ່ນຖານໃນການອົບພະຍົບ;
- ການສ້າງສິ່ງອຳນວຍຄວາມສະດວກ-ສູນດ້ານການເງິນເພື່ອໃຫ້ການຊ່ວຍເຫຼືອແກ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດ ຍ້ອນຜົນສະທ້ອນຂອງພາວະວິກິດ;
- ລະບຽບການຂອງອົງການຈັດຫາງານ ກ່ຽວກັບ ການຈັດຫາງານແບບມີຈັນຍາບັນ ແລະ ຍຸດຕິທຳ;
- ການຊື້ປະກັນໄພສຸຂະພາບ ແລະ ຄວາມສ່ຽງທີ່ກ່ຽວຂ້ອງກັບແຮງງານເຄື່ອນຍ້າຍ;
- ລະບຽບການຂອງຜູ້ຈ້າງງານກ່ຽວກັບພັນທະໃນການເບິ່ງແຍງ ແຮງງານເຄື່ອນຍ້າຍທີ່ຈ້າງມາຈາກຕ່າງປະເທດ ຫຼື ພາຍໃນປະເທດ ໃນກໍລະນີເກີດພາວະວິກິດ;
- ຄວາມຮັບຜິດຊອບໃນການສ້າງແຜນທີ່ ແລະ ຕິດຕາມ ການປະຕິບັດມາດຕະຖານການຈັດຫາງານທີ່ມີຈັນຍາບັນ ແລະ ຍຸຕິທຳ ຜ່ານຕ່ອງໂສ້ການສະໜອງ.

### *ການຊ່ວຍເຫຼືອດ້ານວິຊາການໃຫ້ແກ່ຜູ້ຈ້າງງານ ແລະ ຜູ້ຈັດຫາງານ*

ອົງການຈັດຕັ້ງສາກົນສາມາດໃຫ້ການຊ່ວຍເຫຼືອ ແລະ ໃຫ້ຄຳແນະນຳດ້ານວິຊາການໃຫ້ແກ່ຜູ້ຈ້າງງານ ແລະ ຜູ້ຈັດຫາງານກ່ຽວກັບການເຊື່ອມໂຍງ ການປົກປ້ອງລູກຈ້າງເຄື່ອນຍ້າຍ ເຂົ້າໃນການປະຕິບັດການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະວິກິດ ແລະ ພາຍຫຼັງວິກິດ. ຂົງເຂດທີ່ກ່ຽວຂ້ອງທີ່ອາດເອົາລວມເຂົ້າມີ:

- ການຈັດຫາງານທີ່ມີຈັນຍາບັນ ແລະ ຍຸຕິທຳ;
- ການອອກແບບ-ການດັດປັບເນື້ອໃນການຝຶກອົບຮົມກ່ອນໄລຍະອອກເດີນທາງ ແລະ ພາຍຫຼັງເດີນທາງມາຮອດ ພ້ອມທັງ ໃຫ້ມີບົດຮຽນກ່ຽວກັບ ການກະກຽມຄວາມພ້ອມຮັບມືກັບພາວະວິກິດສຳລັບຜູ້ທີ່ຈະມາຮັບການຝຶກອົບຮົມ;
- ການລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນ ແຜນສຳຮອງຂອງອົງກອນ;
- ການປະສານງານ ແລະ ການປະສານສົມທົບໃນການຮັບມືກັບພາວະສຸກເສີນ;
- ການສ້າງຖານເພື່ອການຮ່ວມມືໃນລະດັບທ້ອງຖິ່ນ.

### *ການຊ່ວຍເຫຼືອດ້ານວິຊາການ ເພື່ອການພັດທະນານະໂຍບາຍທີ່ກ່ຽວຂ້ອງກັບຜູ້ພັດຖິ່ນ ໃນພາວະວິກິດ*

ອົງການຈັດຕັ້ງສາກົນສາມາດໃຫ້ການຊ່ວຍເຫຼືອ ແລະ ຄຳແນະນຳດ້ານວິຊາການໃຫ້ແກ່ ລັດກ່ຽວກັບການພັດທະນານະໂຍບາຍເພື່ອໃຫ້ຜູ້ພັດຖິ່ນມີສ່ວນຮ່ວມໃນການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ ໃນປະເທດທີ່ປະເຊີນກັບພາວະວິກິດ. ກິດຈະກຳທີ່ກ່ຽວຂ້ອງລວມມີ:

- ການສ້າງ ແລະ ເພີ່ມຄວາມເຂັ້ມແຂງຂອງຖານແຫ່ງຊາດເພື່ອການຮ່ວມມືກັບຜູ້ພັດຖິ່ນ;
- ການລວມເອົາຂໍ້ກຳນົດກ່ຽວກັບ ຜູ້ເຄື່ອນຍ້າຍຖິ່ນຖານທີ່ໄດ້ຮັບຜົນກະທົບຈາກວິກິດການ ເຂົ້າໃສ່ໃນ ວຽກງານການພັດທະນານະໂຍບາຍຜູ້ພັດຖິ່ນ;
- ການເຊື່ອມໂຍງເອົາຜູ້ທີ່ເດີນທາງກັບມາ ເຂົ້າໃນກິດຈະກຳຂອງຜູ້ພັດຖິ່ນໃນການຂັບເຄື່ອນວາລະການພັດທະນາແຫ່ງຊາດ (ເຊັ່ນ: ເງິນທີ່ສົ່ງກັບບ້ານ, ການລົງທຶນ ຫຼື ການຖ່າຍທອດຄວາມຮູ້);
- ການສະໜັບສະໜູນການມີສ່ວນຮ່ວມຂອງຜູ້ພັດຖິ່ນຜ່ານການເຂົ້າເຖິງເຄືອຂ່າຍສາກົນ;
- ການສະໜັບສະໜູນກິດຈະກຳໃນຂົງເຂດການຖ່າຍທອດຄວາມຮູ້ຂອງຜູ້ພັດຖິ່ນ (ເຊັ່ນ: ການກັບຄືນມາປະເທດຂອງພົນລະເມືອງຜູ້ມີເງື່ອນໄຂ.

### *ແຜນງານສ້າງຄວາມອາດສາມາດພາຍໃນ*

ອົງການຈັດຕັ້ງສາກົນສາມາດລົງທຶນໃສ່ຄວາມອາດສາມາດຂອງຕົນເອງເພື່ອຊ່ວຍຜູ້ເຄື່ອນຍ້າຍຖິ່ນຖານ ພ້ອມທັງ ໃຫ້ການສະໜັບສະໜູນດ້ານວິຊາການ ແລະ ການສ້າງຄວາມອາດສາມາດໃຫ້ແກ່ຜູ້ມີສ່ວນຮ່ວມອື່ນໆ. ການສ້າງຄວາມອາດສາມາດພາຍໃນອາດລວມມີ:

- ການສ້າງກົນໄກການສະໜອງທຶນ ແລະ ເຄື່ອງມື-ຮູບການສະໜອງທຶນອື່ນໆ ເພື່ອໃຫ້ມີຄວາມສາມາດເລີ່ມຕົ້ນການປະຕິບັດງານສຸກເສີນ ແລະ ໃຫ້ການຊ່ວຍເຫຼືອໃນທັນທີເມື່ອເກີດວິກິດ;
- ສ້າງລະບົບຂໍ້ມູນເພື່ອຕອບສະໜອງ ແລະ ປະສານງານກ່ຽວກັບຄຳຮ້ອງໃນການອົບພະຍົບ ແລະ ການຈັບຄູ່/ຫາກັບການຊ່ວຍເຫຼືອທີ່ມີ ໃຫ້ເໝາະສົມກັບຄວາມຕ້ອງການ;
- ການສ້າງອົງການ ຫຼື ກົມກອງສະເພາະເພື່ອໃຫ້ການຮັບມືທີ່ກວມລວມ ແລະ ມີການປະສານງານ-ກົມກຽວກັນ;
- ການສ້າງຕັ້ງເຄືອຂ່າຍ ແລະ ການຮ່ວມມືເພື່ອແບ່ງປັນຂໍ້ມູນ ແລະ ພາກປະຕິບັດ, ສົ່ງເສີມມາດຕະຖານເອກະພາບກັນ, ເອື້ອອຳນວຍດ້ານການສື່ສານ ແລະ ຈັດຕັ້ງປະຕິບັດແຜນງານຮ່ວມກັນ.

### *ການສະໜັບສະໜູນດ້ານວິຊາການ ແລະ ແຜນງານສ້າງຄວາມອາດສາມາດໃຫ້ແກ່ຜູ້ມີສ່ວນຮ່ວມອື່ນໆ*

ການສະໜັບສະໜູນດ້ານວິຊາການ ແລະ ແຜນງານສ້າງຄວາມອາດສາມາດໃຫ້ແກ່ຜູ້ມີສ່ວນຮ່ວມອື່ນໆອາດລວມມີ:

- ແຜນງານສ້າງຄວາມອາດສາມາດສຳລັບບຸກຄະລາກອນຂອງລັດຖະບານ (ເຊັ່ນ: ເຈົ້າໜ້າທີ່ບໍລິການຄົນຕ່າງປະເທດ, ເຈົ້າໜ້າທີ່ກົງສຸນ, ຜູ້ຊ່ວຍທູດດ້ານແຮງງານ ແລະ ເຈົ້າໜ້າທີ່ຮັບຜິດຊອບວຽກງານສະຫວັດດີການ) ເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະການສຸກເສີນ ຜ່ານການຝຶກອົບຮົມພາກບັງຄັບກ່ຽວກັບການຄຸ້ມຄອງວິກິດ, ການພິມເຜີຍແຜ່ລະບຽບຂັ້ນຕອນການດຳເນີນງານມາດຕະຖານ ແລະ ການສ້າງເຄື່ອງມືການຝຶກອົບຮົມ (ທາງອອນໄລນ໌);
- ການຝຶກອົບຮົມ ແລະ ການບໍລິການສຳລັບລັດທາງຜ່ານໃນການຄຸ້ມຄອງການເດີນທາງເຂົ້າປະເທດຂອງຜູ້ເຄືອນຍ້າຍຖິ່ນຖານໃນຈຳນວນມະຫາສານ;
- ການຊ່ວຍເຫຼືອລັດ ໃນການສ້າງ ແລະ ດຳເນີນລະບົບຄຸ້ມຄອງຊາຍແດນເພື່ອ ເຊື່ອມສານຂະບວນການ ແລະ ລະບຽບການດ້ານຊາຍແດນເຂົ້າໃນ ສະຖານະການສຸກເສີນ ແລະ ຮັບປະກັນການສົ່ງຕໍ່ຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອ

ແລະ ການປົກປ້ອງສະເພາະເຈາະຈົງ;

- ການດັດປັບວິທີການຝຶກຊ້ອມ ແລະ ການຝຶກອົບຮົມພາກສະໜາມ ໃຫ້ເຂົ້າກັບກຸ່ມຜູ້ມີສ່ວນຮ່ວມຕ່າງໆ ເພື່ອຫລຸດຜ່ອນຜົນກະທົບຂອງວິກິດຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງ ການປະຖິ້ມພະຍາບານ ແລະ ການຮັບມືສຸກເສີນ;
- ການຝຶກອົບຮົມໃຫ້ແກ່ສື່ມວນຊົນກ່ຽວກັບ ການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານໃນພາວະວິກິດ ລວມທັງການນຳໃຊ້ຄຳສັບພາສາສະເພາະທາງ.

## ອົງການຈັດຕັ້ງສັງຄົມ

### *ການຝຶກອົບຮົມຂອງອົງການຈັດຕັ້ງສັງຄົມ*

ຈຸດໄດ້ປຽບຂອງຜູ້ມີສ່ວນຮ່ວມພາກອົງການຈັດຕັ້ງສັງຄົມແມ່ນການເຂົ້າເຖິງ ແລະ ການເປັນທີ່ຍອມຮັບໂດຍຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານຫຼາຍກວ່າພາກສ່ວນອື່ນໆ, ການເຂົ້າເຖິງພື້ນທີ່ງຜູ້ມີສ່ວນຮ່ວມສາກົນ/ຕ່າງປະເທດບໍ່ສາມາດເຂົ້າເຖິງ ແລະ ຄວາມສາມາດຂອງເຂົາເຈົ້າໃນການແກ້ໄຂ-ຖົມຊ່ອງຫວ່າງໃນການຮັບມືຊ່ວຍເຫຼືອດ້ານມະນຸດສະທຳ. ການປະສານງານລະຫວ່າງອົງການກ່ຽວກັບແຜນງານການສ້າງຄວາມອາດສາມາດ ຈະຊ່ວຍຫຼີກເວັ້ນການເຮັດວຽກຊ້ຳຊ້ອນກັນ ແລະ ຊ່ວຍໃຫ້ການຝຶກອົບຮົມມີຄວາມສອດຄ່ອງກົມກຽວກັນ. ປັດໄຈເພື່ອພິຈາລະນາລວມມີ:

- ການຄັດເລືອກອົງການຄູ່ຮ່ວມງານທີ່ບໍ່ກ່ຽວກັບການເມືອງ ແລະ ບໍ່ມີການຈຳແນກ;
- ການຝຶກອົບຮົມເພື່ອເປັນຄູຝຶກ (ຝຶກຄູຝຶກ) ເພື່ອຮັບປະກັນວ່າຄວາມຮູ້ຖືກຖ່າຍທອດພາຍໃນອົງການ ແລະ ເຄືອຂ່າຍ;
- ການຝຶກອົບຮົມຮ່ວມສຳລັບອົງການຈັດຕັ້ງສັງຄົມທ້ອງຖິ່ນ;
- ການສ້າງຄວາມອາດສາມາດດ້ານວິຊາການລວມທັງ ການຝຶກອົບຮົມກ່ຽວກັບ ຫຼັກການມະນຸດຊະທຳ, ກອບກົດໝາຍແຫ່ງຊາດ ແລະ ສາກົນ, ການລະບຸຄວາມບອບບາງຂອງຜູ້ເຄື່ອນຍ້າຍຖິ່ນຖານ, ການປູກຈິດສຳນຶກກ່ຽວກັບສິດ ແລະ ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ, ກົນໄກການສົ່ງຕໍ່, ແລະ ການສະໜັບສະໜູນດ້ານຈິດໃຈ ແລະ ສັງຄົມ;
- ການສະໜັບສະໜູນ ການສ້າງເຄືອຂ່າຍກັບອົງການຈັດຕັ້ງສັງຄົມທ້ອງຖິ່ນໃນທົ່ວໂລກ ເພື່ອການແບ່ງປັນພາກປະຕິບັດ ແລະ ຊັບພະຍາກອນ;
- ການແຕ່ງຕັ້ງພະນັກງານທີ່ມີປະສົບການໃຫ້ລົງໄປປະຈຳການເປັນການຊົ່ວຄາວ ເພື່ອສະໜັບສະໜູນຄູ່ຮ່ວມງານທ້ອງຖິ່ນ.

### *ການຝຶກອົບຮົມໃຫ້ແກ່ຜູ້ສະໜອງການບໍລິການອື່ນໆທີ່ບໍ່ນອນໃນຂະແໜງບໍລິການຜູ້ເຄື່ອນຍ້າຍຖິ່ນຖານດັ້ງເດີມ*

ອົງການຈັດຕັ້ງສັງຄົມອາດມີບົດບາດສຳຄັນໃນການໃຫ້ການຝຶກອົບຮົມກ່ຽວກັບຄວາມຕ້ອງການສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານໃນພາວະວິກິດ ໃຫ້ແກ່ຜູ້ມີສ່ວນຮ່ວມອື່ນໆ ທີ່ປົກກະຕິແລ້ວບໍ່ລິ້ງເຄີຍ ຫຼື ບໍ່ເຄີຍບໍລິການ ການຊ່ວຍເຫຼືອໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ ແຕ່ອາດຢູ່ໃນຖານະທີ່ດີໃນການລະບຸ ຫຼື ຕອບສະໜອງ-ແກ້ໄຂ ຄວາມບອບບາງຂອງຜູ້ເຄື່ອນຍ້າຍຖິ່ນຖານ, ສົ່ງຕໍ່ ຫຼື ຊ່ວຍເຫຼືອໃນການຮັບມືໃນພາວະວິກິດ. ຜູ້ມີສ່ວນຮ່ວມເຫຼົ່ານີ້ລວມມີ:

- ພະນັກງານຕ້ອນຮັບເທິງຍົນ;
- ສື່ມວນຊົນແຫ່ງຊາດ ແລະ ທ້ອງຖິ່ນໃນລັດຕົ້ນທາງ ແລະ ລັດປາຍທາງ;
- ຜູ້ແປພາສາ;
- ຜູ້ໃຫ້ຄຳປຶກສາ ແລະ ພະນັກງານບໍລິການປິ່ນປົວສຸຂະພາບ;
- ຜູ້ນຳພາ ແລະ ພະນັກງານອົງການທີ່ມີຄວາມເຊື່ອທາງສາສະໜາ;
- ພະນັກງານຂອງໂຮງຮຽນ ຍ້ອນວ່າ ລູກ/ເດັກນ້ອຍຂອງຄອບຄົວຜູ້ເຄື່ອນຍ້າຍຖິ່ນຖານອາດເປັນສື່ກາງທີ່ສຳຄັນໃນການສົ່ງຂໍ້ມູນທີ່ກ່ຽວຂ້ອງກັບວິກິດການ.

# II: ພາກປະຕິບັດເພື່ອສະໜັບສະໜູນການຮັບມືກັບພາວະສຸກເສີນ

ໃນໄລຍະເວລາເກີດເຫດສຸກເສີນ, ຜູ້ມີສ່ວນຮ່ວມຈະເລີ່ມຕົ້ນ ແລະ ຈັດຕັ້ງປະຕິບັດປະເພດພາກປະຕິບັດກ່ຽວກັບການກະກຽມຄວາມພ້ອມຮັບມືກັບວິກິດການທີ່ກ່າວມາໃນພາກຜ່ານມາ. ໃນບໍລິບົດນີ້, ພາກປະຕິບັດຫຼາຍໆຂໍ້ທີ່ໄດ້ຜັນຂະຫຍາຍກ່ຽວກັບໄລຍະການກະກຽມຄວາມພ້ອມ ຈະບໍ່ເອົາມາເວົ້າຄືນອີກຢູ່ໃນພາກນີ້. ເຖິງແມ່ນວ່າຜູ້ມີສ່ວນຮ່ວມໄດ້ເລີ່ມຕົ້ນ ແລະ ຈັດຕັ້ງປະຕິບັດພາກປະຕິບັດທີ່ໄດ້ລະບຸໃນໄລຍະການກຽມຄວາມພ້ອມແລ້ວກໍຕາມ, ແຕ່ວ່າ ເປັນສິ່ງທີ່ຫຼີກບໍ່ໄດ້ທີ່ເຂົາເຈົ້າຈະຈໍາເປັນຕັດສິນໃຈ ແລະ ຈັດຕັ້ງປະຕິບັດ ພາກປະຕິບັດແບບທີ່ມີລັກສະນະສະເພາະກິດ-ສະເພາະໜ້າ ເພື່ອແກ້ໄຂຄວາມສະຫຼັບສັບຊ້ອນທີ່ຄາດການບໍ່ໄດ້ ແລະ ຕອບສະໜອງຕາມຄວາມຕ້ອງການທີ່ເກີດຂຶ້ນໃໝ່ ພ້ອມໆກັບເຫດສຸກເສີນທີ່ເກີດຂຶ້ນ.

## ພາກປະຕິບັດໃນການນໍາໃຊ້ ແນວທາງປະຕິບັດ 9:
## ສື່ສານຢ່າງກວ້າງຂວາງ, ມີປະສິດທິຜົນ, ແລະ ສະໝໍ່າສະເໝີກັບຜູ້ເຄື່ອນຍ້າຍຖິ່ນຖານກ່ຽວກັບວິກິດການທີ່ເກີດຂຶ້ນ ແລະ ວິທີການເຂົ້າເຖິງການຊ່ວຍເຫຼືອ

### ຜູ້ມີສ່ວນຮ່ວມຫຼາຍຝ່າຍ

*ການລາຍງານຢ່າງເປັນປະຈໍາກ່ຽວກັບວິກິດການ ແລະ ຂໍ້ມູນການຊ່ວຍເຫຼືອ*

ຜູ້ເຄື່ອນຍ້າຍຖິ່ນຖານຕ້ອງການຂໍ້ມູນທີ່ສົມບູນເພື່ອຊ່ວຍໃນການຕັດສິນໃຈໃນໄລຍະເກີດວິກິດ ລວມທັງ:

- ຂໍ້ມູນກ່ຽວກັບວິວັດທະນາການຂອງເຫດວິກິດ ເຊັ່ນ ພື້ນທີ່ທາງພູມສາດທີ່ໄດ້ຮັບຜົນກະທົບ, ລະດັບຄວາມຮຸນແຮງ ແລະ ຂະໜາດຂອງວິກິດ, ແລະ ຄວາມເສຍຫາຍ ກໍຄື ຄວາມສ່ຽງ;
- ຈຸດການຕິດຕໍ່ໃນກໍລະນີສຸກເສີນ ແລະ ບຸກຄະລາກອນທີ່ສາມາດຊ່ວຍເຫຼືອໄດ້;
- ການຊ່ວຍເຫຼືອທີ່ມີ ແລະ ບ່ອນທີ່ສາມາດເຂົ້າເຖິງການບໍລິການປະເພດຕ່າງໆ ລວມທັງການຊ່ວຍເຫຼືອທາງການແພດ, ບ່ອນລີ້ໄພ ແລະ ສູນຊ່ວຍເຫຼືອອື່ນໆ;
- ສາຍໂທດ່ວນ, ສາຍໂທໃຫ້ການຊ່ວຍເຫຼືອ ແລະ ສູນໃຫ້ການບໍລິການອື່ນໆ;
- ກົດລະບຽບກ່ຽວກັບເງື່ອນໄຂການຮັບການບໍລິການ ແລະ ຊ່ວຍເຫຼືອປະເພດຕ່າງໆ;
- ຈໍາເປັນຕ້ອງມີເອກະສານການຢັ້ງຢືນຕົວຢ່າງທີ່ຖືກຕ້ອງ ຫຼື ບໍ່ ໃນການຂໍການຊ່ວຍເຫຼືອ ແລະ ການບໍລິການ;
- ຂໍ້ມູນກ່ຽວກັບບຸກຄົນທີ່ສາມາດຕິດຕໍ່ເພື່ອຂໍຄວາມຊ່ວຍເຫຼືອໃນການຍົກຍ້າຍ ຫຼື ອົບພະຍົບ ເຊັ່ນ ກົງສຸນຂອງລັດຕົ້ນທາງ, ກະຊວງການຕ່າງປະເທດຂອງລັດປາຍທາງ ຫຼື ອົງການທີ່ເຮັດໜ້າທີ່ເກັບກໍາຄໍາຮ້ອງຂໍເຫຼົ່ານັ້ນ.

*ຊ່ອງທາງການສື່ສານ*

ຊ່ອງທາງການສື່ສານທີ່ຫຼາກຫຼາຍທີ່ລວມເອົາສື່ແບບເກົ່າ ແລະ ແບບໃໝ່ຈະ ເພີ່ມການປົກຄຸມ ແລະ ການເຂົ້າເຖິງຂໍ້ມູນ. ກົນ

ໄກການສື່ສານອາດລວມມີ:

- ເວັບໄຊດ໌ສະເພາະທີ່ໃຊ້ງ່າຍ ທີ່ມີຂໍ້ມູນໃນຫຼາຍພາສາກ່ຽວກັບ ວິກິດ ແລະ ການປັບປຸງດ້ວຍຂໍ້ມູນໃໝ່ໆເປັນປະຈໍາ, ລິ້ງເຊື່ອມໂຍງໄປແຫຼ່ງຂໍ້ມູນອື່ນໆ, ຂໍ້ມູນການຕິດຕໍ່ ແລະ ຈຸດເຊື່ອມໂຍງກັບສື່ອື່ນໆລວມທັງສື່ສັງຄົມອອນໄລນ໌;
- ບົດອອກຂ່າວຜ່ານເວັບໄຊດ໌ ທີ່ມີແຜນທີ່ພື້ນທີ່ສ່ຽງ, ສະຖານທີ່ອົບພະຍົບ ແລະ ສິ່ງອໍານວຍຄວາມສະດວກໃຫ້ຄວາມຊ່ວຍເຫຼືອ;
- ສູນລວມສື່ດິຈິຕອນ ຫຼື ສື່ສັງຄົມທີ່ກະຈາຍຂໍ້ມູນໃນເວລາຈິງ, ຂໍ້ມູນທີ່ໄດ້ຈາກແຫຼ່ງສາທາລະນະຊົນ, ຂໍ້ມູນທີ່ຕິດຕາມ ແລະ ໄດ້ຮັບການຢັ້ງຢືນກ່ອນພິມເຜີຍແຜ່;
- SMS ແລະ ຂໍ້ຄວາມແຈ້ງເຕືອນ;
- ການສະຫລຸບຂ່າວໃຫ້ແກ່ສື່ມວນຊົນປະຈໍາ;
- ການອອກອາກາດຂໍ້ຄວາມຕ່າງໆ ຜ່ານທາງເຄືອຂ່າຍວິທະຍຸ ແລະ ໂທລະພາບແຫ່ງຊາດ ແລະ ທ້ອງຖິ່ນຢູ່ໃນ ລັດປາຍທາງ ແລະ ລັດຕົ້ນທາງ;
- ແຜ່ນພັບ ແລະ ແຜນທີ່ໃນຫຼາຍພາສາ ທີ່ຊີ້ໃຫ້ເຫັນພື້ນທີ່ສ່ຽງຫຼັກໆ, ສະຖານທີ່ອົບພະຍົບ ແລະ ສິ່ງອໍານວຍຄວາມສະດວກໃຫ້ການຊ່ວຍເຫຼືອໃນເຫດໄພພິບັດ;
- ຂໍ້ຄວາມທີ່ເປັນພາສາ ເພື່ອອໍານວຍຄວາມສະດວກໃຫ້ແກ່ການສື່ສານໃນພາສາທີ່ຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃຈ ແລະ ນໍາໃຊ້ຮູບພາບ ແລະ ຮູບແຕ້ມຖ້າເປັນໄປໄດ້.

### *ຂໍ້ຄວາມທີ່ສອດຄ່ອງ ແລະ ປະສານສົມທົບກັນລະຫວ່າງຜູ້ມີສ່ວນຮ່ວມ*

ຂໍ້ຄວາມທີ່ສອດຄ່ອງກັນລະຫວ່າງຜູ້ມີສ່ວນຮ່ວມທຸກພາກສ່ວນຈະຊ່ວຍຮັບປະກັນວ່າ ຜູ້ເຄື່ອນຍ້າຍຖິ່ນຖານ, ຜູ້ມີສ່ວນຮ່ວມ ແລະ ສາທາລະນະຊົນ ຈະຮັບ ແລະ ປະຕິບັດຕໍ່ຂໍ້ມູນດຽວກັນ. ຂໍ້ຄວາມທີ່ສອດຄ່ອງຍັງຊ່ວຍຫຼີກເວັ້ນຄວາມເຂົ້າໃຈຜິດ ແລະ ການກະຈາຍຂໍ້ມູນທີ່ຜິດໃນໄລຍະເກີດວິກິດການ. ຜູ້ມີສ່ວນຮ່ວມສາມາດປະຕິບັດຂັ້ນຕອນຕໍ່ໄປນີ້ເພື່ອຮັບປະກັນໃຫ້ຂໍ້ຄວາມສອດຄ່ອງ ແລະ ຖືກຕ້ອງ:

- ການລະບຸອົງການທີ່ຈະນໍາພາລິເລີ່ມການໄຫຼວຽນ-ການແລກປ່ຽນຂໍ້ມູນລວມທັງ ຂໍ້ມູນກ່ຽວກັບການອົບພະຍົບ ຫຼື ການຍົກຍ້າຍ, ເງື່ອນໄຂຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຈະໄດ້ຮັບການບໍລິການ, ແລະ ການປ່ຽນແປງໃດໆໃນການບັງຄັບໃຊ້ກົດໝາຍການເຂົ້າເມືອງ ຫຼື ເງື່ອນໄຂວີຊາໃນໄລຍະເກີດວິກິດ;
- ການເຂົ້າຫາສະມາຄົມຜູ້ເຄື່ອນຍ້າຍຖິ່ນຖານ ແລະ ອົງການຈັດຕັ້ງສັງຄົມເພື່ອລະບຸແຫຼ່ງຂໍ້ມູນທີ່ເຂົ້າຫາໄດ້ທີ່ຜູ້ເຄື່ອນຍ້າຍຖິ່ນຖານໄວ້ເນື້ອເຊື່ອໃຈ;
- ການສ້າງຕັ້ງໜ່ວຍງານທີ່ເຮັດໜ້າທີ່ຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນກ່ອນທີ່ຈະນໍາໄປແບ່ງປັນ ແລະ ເຜີຍແຜ່;
- ການນໍາໃຊ້ຜູ້ແປພາສາທີ່ໄດ້ຮັບການຝຶກອົບຮົມເພື່ອຖ່າຍທອດຂໍ້ມູນທີ່ໄດ້ຕົກລົງກັນຢ່າງຖືກຕ້ອງ ແລະ ມີປະສິດທິຜົນຕໍ່ປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ.

### *ການເຂົ້າຫາສະເພາະ ໃນການເຜີຍແຜ່ຂໍ້ມູນກ່ຽວກັບຄວາມສ່ຽງ, ການຂົນສົ່ງ ແລະ ການຊ່ວຍເຫຼືອ*

ສໍາລັບຜູ້ເຄື່ອນຍ້າຍຖິ່ນຖານ ໂດຍສະເພາະຜູ້ທີ່ມີສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ ຫຼື ຜູ້ທີ່ເຮັດວຽກໃນສະພາບໂດດດ່ຽວ ແມ່ນອາດນໍາໃຊ້ວິທີການສື່ສານແບບດັ້ງເດີມ ບວກກັບ ການເຂົ້າຫາສະເພາະຜ່ານບຸກຄົນຜູ້ທີ່ສາມາດເຂົ້າເຖິງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ບ່ອນທີ່ຜູ້ເຄື່ອນຍ້າຍເຕົ້າໂຮມ. ສິ່ງທີ່ຄວນພິຈາລະນະມີຄື:

- ການໃຫ້ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງຫຼາຍພາກສ່ວນ ເຂົ້າມາມີສ່ວນຮ່ວມ ໂດຍສະເພາະຜູ້ທີ່ໃກ້ຊິດກັບຜູ້ເຄື່ອນຍ້າຍຖິ່ນຖານ ໂດຍເຮັດໃນຖານະອາສາສະໝັກ ຫຼື ໃນບາງກໍລະນີເປັນລູກຈ້າງ. ຜູ້ມີສ່ວນຮ່ວມດັ່ງກ່າວອາດລວມມີ: (1) ອົງການຊຸມຊົນ ຫຼື ອົງການທີ່ເຊື່ອຖືທາງສາສະໜາ ທີ່ໃຫ້ການບໍລິການແກ່ຜູ້ເຄື່ອນຍ້າຍຖິ່ນຖານ; (2) ບ່ອນລີ້ໄພຂອງຜູ້ເຄື່ອນຍ້າຍຖິ່ນຖານ; (3) ບ່ອນເຕົ້າໂຮມຂອງຜູ້ເຄື່ອນຍ້າຍຖິ່ນຖານ ເຊັ່ນຮ້ານອາ

*ຫຼັກການ*

ຫານ ຫຼື ສູນເຕົ້າໂຮມຂອງຊຸມຊົນ; (4) ບ່ອນກະຈາຍຂ່າວ, ວິທະຍຸ, ໂທລະທັດ ແລະ ອິນເຕີເນັດຢູ່ໃນລັດຕົ້ນທາງ ຫຼື ໃນລັດປາຍທາງທີ່ເລັ່ງໃສ່ປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ; (5) ຜູ້ມີສ່ວນຮ່ວມພາກເອກະຊົນທີ່ປົກປ້ອງພົນລະເມືອງ ແລະ ພາວະສຸກເສີນ; (6) ຜູ້ຈ້າງງານແຮງງານເຄື່ອນຍ້າຍລາຍໃຫຍ່, ສະມາຄົມທຸລະກິດ ຫຼື ສະຫະພາບ; ແລະ (7) ຈຸດປະສານງານຫຼັກ ແລະ ຜູ້ນໍາຂອງຜູ້ເຄື່ອນຍ້າຍຖິ່ນຖານ;

- ການຈ້າງຜູ້ແປພາສາທີ່ສາມາດຖ່າຍທອດຂໍ້ມູນທີ່ໄດ້ຕົກລົງກັນໄວ້ຢ່າງຖືກຕ້ອງ ແລະ ມີປະສິດທິຜົນ ຕໍ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ໄດ້ຮັບຜົນກະທົບ.

### *ການຮັບຂໍ້ມູນຈາກຜູ້ເຄື່ອນຍ້າຍຖິ່ນຖານ*

ຜູ້ເຄື່ອນຍ້າຍຖິ່ນຖານກໍເປັນແຫຼ່ງຂໍ້ມູນກ່ຽວກັບສະພາບການໃນທ້ອງຖິ່ນ, ບ່ອນໃຫ້ຄວາມຊ່ວຍເຫຼືອ ແລະ ສິ່ງທ້າທາຍທີ່ຜູ້ເຄື່ອນຍ້າຍອື່ນໆພົບພໍ້. ວິທີການຮັບຂໍ້ມູນທີ່ກ່ຽວຂ້ອງກັບວິກິດການຈາກຜູ້ເຄື່ອນຍ້າຍຖິ່ນຖານລວມມີ:

- ການສ້າງຕັ້ງຈຸດປະສານງານຂອງຜູ້ເຄື່ອນຍ້າຍຖິ່ນຖານ ຜູ້ທີ່ສາມາດພົວພັນກັບຜູ້ມີສ່ວນຮ່ວມ ແລະ ໃຫ້ຂໍ້ມູນ;
- ເອົາໂທລະສັບໃຫ້ຜູ້ເຄື່ອນຍ້າຍຖິ່ນຖານເພື່ອການສົ່ງຂໍ້ມູນຂ່າວສານ;
- ການສ້າງສາຍພົວພັນກັບຄອບຄົວຂອງຜູ້ເຄື່ອນຍ້າຍຖິ່ນຖານຢູ່ໃນລັດຕົ້ນທາງ ແລະ ການສ້າງຈຸດໃຫ້ເຂົາເຈົ້າແບ່ງປັນຂໍ້ມູນທີ່ໄດ້ຮັບຈາກຜູ້ເຄື່ອນຍ້າຍຖິ່ນຖານ.

### *ການສື່ສານໃນທາງບວກກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານ*

ຄໍາເວົ້າ-ສໍານວນຕ້ານຜູ້ເຄື່ອນຍ້າຍຖິ່ນຖານອາດເພີ່ມຂຶ້ນໃນເວລາເກີດວິກິດ ແລະ ຜູ້ເຄື່ອນຍ້າຍຖິ່ນຖານອາດພົບພໍ້ການຈໍາແນກ, ການຕໍ່ຕ້ານ, ແລະ ຄວາມຢ້ານກົວຄົນຕ່າງຊາດໃນລະດັບທີ່ເພີ່ມຂຶ້ນ ຢູ່ໃນລັດປາຍທາງ ແລະ ລັດທາງຜ່ານ. ການສື່ສານໃນທາງບວກກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານສົ່ງເສີມຄວາມອົດທົນ-ໂຍະບານ, ການບໍ່ຈໍາແນກ, ການມີສ່ວນຮ່ວມ, ແລະ ຄວາມເຄົາລົບຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ. ຕົວຢ່າງ: ການຮັບປະກັນວ່າພາສາທີ່ກ່າວເຖິງຜູ້ເຄື່ອນຍ້າຍຖິ່ນຖານນັ້ນຈະຫຼີກເວັ້ນການກະຕຸ້ນການຕອບຄືນທີ່ມີລັກສະນະຕໍ່ຕ້ານ ຫຼື ຄວາມຢ້ານກົວຕໍ່ຄົນຕ່າງຊາດ ເຊັ່ນການນໍາໃຊ້ຄໍາວ່າ 'ຜິດກົດໝາຍ' ເມື່ອກ່າວເຖິງຜູ້ເຄື່ອນຍ້າຍຖິ່ນຖານ.

### *ສູນບໍລິການທາງໂທລະສັບທີ່ບໍລິການ 24 ຊົ່ວໂມງດ້ວຍພະນັກງານທີ່ເວົ້າໄດ້ຫຼາຍພາສາ ແລະ ໄດ້ຮັບການຝຶກອົບຮົມ*

ສາຍໂທດ່ວນ, ສາຍໂທໃຫ້ຄວາມຊ່ວຍເຫຼືອ ແລະ ສູນບໍລິການທາງໂທລະສັບສາມາດ ໃຫ້ການສື່ສານແບບທາງດຽວ ຫຼື ສອງທາງ. ໃນກໍລະນີຂອງການສື່ສານສອງທາງ, ສູນບໍລິການດັ່ງກ່າວອາດຕ້ອງຈັດພະນັກງານເພື່ອຕອບໂທລະສັບ ແລະ ໃຫ້ຂໍ້ມູນຢ່າງມີເປົ້າໝາຍ, ຮັບຂໍ້ມູນກ່ຽວກັບສະຖານທີ່ຕັ້ງ ແລະ ຕົວຕົນ, ແລະ ໃຫ້ການບໍລິການອື່ນໆ. ປັດໃຈທີ່ຕ້ອງຄໍານຶງມີດັ່ງນີ້:

- ຊົ່ວໂມງບໍລິການ —24 ຊົ່ວໂມງຕໍ່ມື້ໃນໄລຍະຮຸນແຮງຂອງພາວະວິກິດ;
- ໂຄງສ້າງລາຄາ—ໂທແບບບໍ່ເສຍຄ່າ ຫຼື ຈ່າຍຄ່າໂທ;
- ການສື່ສານທາງດຽວ ຫຼື ສອງທາງ—ຜູ້ເຄື່ອນຍ້າຍຖິ່ນຖານສາມາດຮັບ ແລະ ສະໜອງຂໍ້ມູນໄດ້ ຫຼື ບໍ່;
- ຄວາມອາດສາມາດດ້ານພາສາຂອງພະນັກງານ ຫຼື ອາສາສະໝັກ;
- ຈະຈໍາກັດການນໍາໃຊ້ໃຫ້ສະເພາະຜູ້ເຄື່ອນຍ້າຍຖິ່ນຖານ, ຄອບຄົວຂອງເຂົາເຈົ້າ ຫຼື ຜູ້ອື່ນໆ ຫຼື ບໍ່ ຫຼື ເປີດໃຫ້ນໍາໃຊ້ທົ່ວໄປ;
- ເນື້ອໃນຂອງຂໍ້ມູນທີ່ຈະສະໜອງ ແລະ ຮັບຕາມຄວາມເໝາະສົມ;
- ການບໍລິການອື່ນໆທີ່ຈະໃຫ້ເຊັ່ນ ການໃຫ້ຄໍາປຶກສາ, ການສົ່ງຕໍ່ ແລະ ການຕິດຕາມຫາຄອບຄົວ.

### *ສູນຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ*

ສູນຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານສາມາດສະໜອງການບໍລິການ ແລະ ການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານໄດ້ຢ່າງກວ້າງຂວາງລວມທັງ:

- ການເຜີຍແຜ່ຂໍ້ມູນທີ່ກ່ຽວຂ້ອງກັບວິກິດການ;
- ການປະຖົມພະຍາບານ;

- ການເຂົ້າເຖິງໂທລະສັບ, ການຕື່ມເງິນຄ່າໂທລະສັບ, ແລະ ຈຸດສາກໂທລະສັບ;
- ການເຂົ້າເຖິງອິນເຕີເນັດ.

## ລັດປາຍທາງ

*ການສະຫລຸບ ແລະ ການລາຍງານສະພາບຫຼ້າສຸດໂດຍ ເຈົ້າໜ້າທີ່ຂອງລັດປາຍທາງ*

ຖ້າເປັນໄປໄດ້, ເຈົ້າໜ້າທີ່ຂອງລັດປາຍທາງສາມາດ ນຳສະເໜີຢ່າງປົກກະຕິ ກ່ຽວກັບ ວິວັດທະນາການ ແລະ ຂອບເຂດຂອງວິກິດ, ໄພຂົ່ມຂູ່ທີ່ກ່ຽວຂ້ອງ, ການຊ່ວຍເຫຼືອທີ່ມີ, ສະຖານະຂອງວຽກງານການຄົ້ນຫາ ແລະ ກູ້ໄພ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງກັບວິກິດ ຫຼື ຜູ້ເຄື່ອນຍ້າຍຖິ່ນຖານ ຢ່າງເປັນປະຈຳໃຫ້ແກ່ ເຈົ້າໜ້າທີ່ກົງສຸນ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ. ການນຳສະເໜີດັ່ງກ່າວນີ້ອາດຈັດໃນຫຼາຍຮູບການລວມທັງ:

- ການປະຊຸມ ແລະ ການນຳສະເໜີແບບເປີດກວ້າງ;
- ການພົວພັນໂດຍກົງກັບເຈົ້າໜ້າທີ່ກົງສຸນຂອງລັດຕົ້ນທາງ;
- ການປະຊຸມປະສານງານດ້ານການດຳເນີນງານກັບຜູ້ມີສ່ວນຮ່ວມຫຼັກ ລວມທັງ ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ;
- ການລາຍງານທາງອິນເຕີເນັດ ຫຼື ຮູບແບບການສື່ສານອື່ນໆທາງອອນໄລນ໌.

## ລັດຕົ້ນທາງ

*ສະຖານກົງສຸນເປັນຈຸດປະສານງານຫຼັກ ເພື່ອສ້າງ ແລະ ເຜີຍແຜ່ຂໍ້ມູນໃຫ້ແກ່ພົນລະເມືອງຢູ່ຕ່າງປະເທດ*

ການບໍລິການດ້ານກົງສຸນ ມີບົດບາດສຳຄັນໃນການກະຈາຍຂໍ້ມູນໃຫ້ແກ່ພົນລະເມືອງຢູ່ຕ່າງປະເທດ. ຂໍ້ມູນທີ່ສາມາດສະໜອງໃຫ້ລວມມີ:

- ການແຈ້ງເຕືອນລະດັບຂອງວິກິດ ແລະ ຄຳແນະນຳກ່ຽວກັບວິທີການປະຕິບັດ;
- ຄຳແນະນຳ, ຂໍ້ຈຳກັດ ແລະ ຂໍ້ຫ້າມໃນການເດີນທາງ;
- ການລາຍງານຄວາມຄືບໜ້າຫຼ້າສຸດກ່ຽວກັບສະຖານະການ;
- ແຜນ ແລະ ສະຖານທີ່ອົບພະຍົບ;
- ສະຖານທີ່ລີ້ໄພຊົ່ວຄາວ ແລະ ສະຖານທີ່ລີ້ໄພທີ່ມີ;
- ວິທີການເພື່ອເຂົ້າເຖິງການຊ່ວຍເຫຼືອທີ່ມີ.

*ຂໍ້ຄວາມທີ່ສອດຄ່ອງພາຍໃນລັດຕົ້ນທາງ*

ເທົ່າທີ່ຈະເປັນໄປໄດ້, ລັດຕົ້ນທາງຄວນເປັນຜູ້ປະສານງານເລື່ອງ ລະບົບການແຈ້ງເຕືອນໄພເພື່ອຫຼີກເວັ້ນການສະໜອງຄຳແນະນຳທີ່ຂັດກັນ ໃຫ້ແກ່ພົນລະເມືອງທີ່ຢູ່ລັດປາຍທາງ ເຊິ່ງອາດຮຽກຮ້ອງໃຫ້ມີການຕົກລົງກັບລັດອື່ນໆ (ລະດັບພາກພື້ນ ຫຼື ລັດອື່ນໆທີ່ມີປະຊາກອນພົນລະເມືອງຈຳນວນຫຼາຍຢູ່ໃນລັດປາຍທາງ ຫຼື ພາກພື້ນສະເພາະໃດໜຶ່ງ) ໃຫ້ຮັບຮອງນຳໃຊ້ລະບົບການຈັດລະດັບການແຈ້ງເຕືອນວິກິດການ ໃຫ້ຄືກັນ.

### *ກົນໄກເພື່ອຊ່ວຍໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສື່ສານ*

ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ອົງການຈັດຫາແຮງງານສາມາດເອື້ອອຳນວຍການສື່ສານລະຫວ່າງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ມີສ່ວນຮ່ວມອື່ນໆ ລວມທັງ ເຈົ້າໜ້າທີ່ກົງສຸນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ ແລະ ຄອບຄົວຂອງຜູ້ເຄື່ອນຍ້າຍຖິ່ນຖານ. ອັນນີ້ຈະເຮັດໄດ້ດ້ວຍການໃຫ້ການເຂົ້າເຖິງໂທລະສັບ, ອິນເຕີເນັດ ແລະ ການບໍລິການດ້ານການສື່ສານອື່ນໆ ໂດຍບໍ່ໃຫ້ເສຍຄ່ານຳໃຊ້.

### *ການສົ່ງເງິນກັບບ້ານ ແລະ ການເຂົ້າເຖິງເງິນດັ່ງກ່າວ*

ບໍລິສັດທີ່ບໍລິການສົ່ງເງິນກັບບ້ານ ສາມາດອຳນວຍຄວາມສະດວກໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານໃນການເຂົ້າເຖິງ ເງິນທີ່ສົ່ງກັບບ້ານທີ່ສົ່ງຈາກຄອບຄົວຢູ່ໃນລັດຕົ້ນທາງ ແລະ ລັດອື່ນໆ. ເງິນສົ່ງກັບບ້ານເຫຼົ່ານີ້ສ່ວນໃຫຍ່ຈະຊ່ວຍໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ໃຫ້ສືບຕໍ່ຢູ່ໃນລັດປາຍທາງຢ່າງປອດໄພ ຫຼື ຈ່າຍຄ່າຂົນສົ່ງເພື່ອເດີນທາງອອກຈາກລັດປາຍທາງ. ໃນເຫດການວິກິດຜ່ານໆມາ, ບໍລິສັດສົ່ງເງິນກັບບ້ານໄດ້ຍົກເວັ້ນຄ່າສົ່ງເງິນ ທີ່ສົ່ງເຖິງປະເທດທີ່ປະເຊີນກັບພາວະວິກິດ.

## ອົງການຈັດຕັ້ງສາກົນ

### *ສູນລວມການສື່ສານຂອງຜູ້ເຄື່ອນຍ້າຍຖິ່ນຖານ*

ການສ້າງສູນລວມການສື່ສານສອງທາງ (ເຊັ່ນ ພາຍໃນສູນຂໍ້ມູນໃນພາວະວິກິດ ທີ່ດຳເນີນໂດຍຊຸມຊົນຜູ້ໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ເປັນຜູ້ປະສານງານການສື່ສານກັບປະຊາກອນທີ່ຖືກກະທົບທັງໝົດ) ແມ່ນຈະຊ່ວຍໃຫ້ສາມາດສະໜອງຂໍ້ມູນທີ່ຫຼ້າສຸດ ແລະ ຢ່າງທັນການກ່ຽວກັບການຊ່ວຍເຫຼືອທີ່ມີ. ສູນລວມດັ່ງກ່າວສາມາດຮັບໂຮມ-ປະສານງານການສື່ສານສຳລັບຫຼາກຫຼາຍພາກສ່ວນທີ່ສະໜອງຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງ ການບໍລິການດ້ານກົງສຸນ, ຜູ້ຈ້າງງານ ແລະ ຜູ້ຈັດຫາງານ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ.

### *ກົນໄກການໃຫ້ຄວາມເຫັນ ແລະ ການຮ້ອງທຸກ*

ການເຮັດໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດປະກອບຄວາມເຫັນ-ຄຳຕຳນິຕິຊົມ ແລະ ຮ້ອງທຸກ ຈະຊ່ວຍໃນການລະບຸຊ່ອງຫວ່າງຂອງການຊ່ວຍເຫຼືອ ແລະ ປະກອບສ່ວນຕໍ່ວຽກງານ-ຄວາມພະຍາຍາມໃນການຕິດຕາມ ແລະ ປະເມີນຜົນ. ປັດໄຈທີ່ຕ້ອງຄຳນຶງໃນການສ້າງກົນໄກການໃຫ້ຄວາມເຫັນ ແລະ ການຮ້ອງທຸກ ລວມມີ:

- ການສ້າງກ່ອງຮັບຄວາມເຫັນທີ່ເປັນກ່ອງແທ້ ຫຼື ຮັບທາງອອນໄລນ໌ ທີ່ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດສະແດງຄວາມກັງວົນ ແລະ ໃຫ້ຄຳເຫັນ-ຄຳຕຳນິຕິຊົມ;
- ການບໍ່ສະແດງຊື່-ບໍ່ລະບຸຕົວຕົນ ແລະ ຄວາມສອດຄ່ອງກັບກົດໝາຍ ແລະ ມາດຕະຖານທີ່ກ່ຽວຂ້ອງກັບ ການປົກປ້ອງ ແລະ ການຮັກສາຄວາມເປັນສ່ວນຕົວຂອງຂໍ້ມູນ;
- ຂະບວນການຢັ້ງຢືນ ແລະ ການປະເມີນທີ່ຍຸຕິທຳ ແລະ ໂປ່ງໃສ;
- ການຕິດຕາມ ໃນກໍລະນີທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ການຊົດເຊີຍ.

### *ການສະໜັບສະໜູນຜູ້ມີສ່ວນຮ່ວມອື່ນໆ ໂດຍສະເພາະລັດ*

ອົງການຈັດຕັ້ງສາກົນສາມາດຊ່ວຍອັດຊ່ອງວ່າງ ແລະ ຄວາມທ້າທາຍດ້ານການສື່ສານລະຫວ່າງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ລັດ, ໂດຍສະເພາະເມື່ອອົງການຈັດຕັ້ງສາກົນໄດ້ສ້າງຕັ້ງຢ່າງໝັ້ນຄົງຢູ່ໃນລັດປາຍທາງ. ການສະໜັບສະໜູນອາດລວມມີ:

- ການລະບຸອຸປະສັກດ້ານວັດທະນະທຳ ຫຼື ພາສາ ທີ່ປະຊາກອນຜູ້ເຄື່ອນຍ້າຍພົບພໍ້ໃນການເຂົ້າເຖິງການຊ່ວຍເຫຼືອ;
- ການລະບຸຜູ້ຕາງໜ້າທີ່ເຊື່ອຖືໄດ້ຂອງຜູ້ນຳພາຊຸມຊົນ, ຜູ້ນຳພາອົງການທີ່ເຊື່ອຖືສາສະໜາ ຫຼື ຜູ້ມີສ່ວນຮ່ວມອື່ນໆທີ່ສາ

ມາດໃຫ້ການຊ່ວຍເຫຼືອ;

- ການຮ່ວມມືກັບຜູ້ເຄື່ອນຍ້າຍຖິ່ນຖານໃນຖານະອາສາສະໝັກ ຫຼື ລູກຈ້າງ ເພື່ອຄົ້ນຫາ ແລະ ລາຍງານກ່ຽວກັບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ຕິດຄ້າງຢູ່ບ່ອນຫ່າງໄກສອກຫຼີກ ຫຼື ຜູ້ເຄື່ອນຍ້າຍທີ່ຖືກກັກຂັງ;
- ການສະໜັບສະໜູນໃນການເຜີຍແຜ່ຂໍ້ມູນໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ຢູ່ເຂດຫ່າງໄກ ແລະ ໂດດດ່ຽວ ເຊັ່ນດ້ວຍການຢ້ຽມຢາມສູນກັກຂັງເປັນຕົ້ນ.

## ອົງການຈັດຕັ້ງສັງຄົມ

*ພາກປະຕິບັດສຳລັບອົງການຈັດຕັ້ງສາກົນ ທີ່ກ່າວມາຂ້າງເທິງນັ້ນ ແມ່ນສາມາດນຳໃຊ້ກັບ ອົງການຈັດຕັ້ງສັງຄົມໄດ້ເຊັ່ນກັນ.*

### *ຄວາມພະຍາຍາມໃນຂັ້ນຮາກຖານ ເພື່ອເຂົ້າເຖິງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສື່ສານຂໍ້ມູນທີ່ກ່ຽວຂ້ອງກັບວິກິດການ*

ອົງການຈັດຕັ້ງທາງສັງຄົມອາດຢູ່ໃນຖານະທີ່ສາມາດດຳເນີນວຽກງານ-ຄວາມພະຍາຍາມໃນການສື່ສານຂັ້ນຮາກຖານໄດ້ດີກວ່າໂດຍເລັ່ງໃສ່ຊຸມຊົນທ້ອງຖິ່ນທີ່ໂດດດ່ຽວ ແລະ ຫ່າງໄກກວ່າ. ເຂົາເຈົ້າສາມາດສະໜັບສະໜູນຜູ້ມີສ່ວນຮ່ວມອື່ນໆໃນການເຂົ້າເຖິງປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານດ້ວຍການສະໜອງຂໍ້ມູນກ່ຽວກັບຊ່ອງຫວ່າງຂອງການຊ່ວຍເຫຼືອ, ຂໍ້ຄວາມທີ່ບໍ່ສອດຄ່ອງ ຫຼື ຊ່ອງຫວ່າງໃນຍຸດທະສາດການສື່ສານ. ກິດຈະກຳທີ່ເຂົາເຈົ້າສາມາດຈັດຕັ້ງປະຕິບັດໄດ້ ລວມມີ:

- ການລົງຢ້ຽມຢາມແຕ່ລະຫຼັງຄາເຮືອນເພື່ອພົວພັນໂອ້ລົມກັບຊຸມຊົນທີ່ຢູ່ແບບໂດດດ່ຽວ ທີ່ມີຄວາມຈຳກັດດ້ານພາສາ, ການເຄື່ອນຍ້າຍ ຫຼື ຂໍ້ຈຳກັດອື່ນໆ;
- ການເຂົ້າເຖິງສາຍໂທດ່ວນໂດຍບໍ່ເສຍຄ່າ ແລະ ຢ່າງງ່າຍດາຍ ໂດຍມີພະນັກງານທີ່ມີຄວາມອາດສາມາດດ້ານພາສາ ແລະ ວັດທະນະທຳ ແລະ ໄດ້ຮັບການຝຶກອົບຮົມໃນການສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄອບຄົວຂອງເຂົາເຈົ້າ ທີ່ໄດ້ຮັບຜົນກະທົບຈາກວິກິດການ;
- ການເຜີຍແຜ່ຂໍ້ມູນ ແລະ ກິດຈະກຳປູກຈິດສຳນຶກຢູ່ໂຮງຮຽນ, ຮ້ານອາຫານ, ວັດ/ໂບດ ແລະ ສະຖານທີ່ອື່ນໆທີ່ຜູ້ເຄື່ອນຍ້າຍຖິ່ນຖານມັກໄປ;
- ສື່ສັງຄົມທາງອອນໄລນ໌ ແລະ ແອັບພິເຄຊັ່ນໃນມືຖື ເພື່ອສື່ສານກັບຜູ້ເຄື່ອນຍ້າຍຖິ່ນຖານ;
- ການນຳໃຊ້ "ຕົວແທນ-ບຸກຄົນກາງທີ່ມີອິດທິພົນ" ຂອງຜູ້ເຄື່ອນຍ້າຍຖິ່ນຖານ ສຳລັບການຊ່ວຍເຫຼືອ ແລະ ການສື່ສານ;
- ການຈັດຫາຜູ້ເຄື່ອນຍ້າຍຖິ່ນຖານໃຫ້ມາເປັນອາສາສະໝັກ ຫຼື ພະນັກງານ ສຳລັບກິດຈະກຳຂົນຂວາຍ ແລະ ປູກຈິດສຳນຶກກ່ຽວກັບການສື່ສານ.

# ພາກປະຕິບັດໃນການນຳໃຊ້ ແນວທາງປະຕິບັດ 10:

## ເອື້ອອຳນວຍໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດຍ້າຍໄປບ່ອນປອດໄພ

## ລັດປາຍທາງ

### *ການຍົກເວັ້ນ ຫຼື ຂໍ້ຍົກເວັ້ນເງື່ອນໄຂການອອກນອກ ແລະ ອາໄສຢູ່ປະເທດປາຍທາງ*

ພາວະວິກິດສ່ວນໃຫຍ່ຕ້ອງການຄວາມຍືດຍຸ່ນກ່ຽວກັບເງື່ອນໄຂດ້ານວີຊາ ແລະ ການອອກນອກປະເທດ. ຜູ້ເຄື່ອນຍ້າຍຖິ່ນຖານທີ່ຫາບ່ອນປອດໄພໃນໄລຍະເກີດວິກິດອາດພົບພໍ້ອຸປະສັກໃນການບັນລຸເງື່ອນໄຂດ້ານວີຊາ, ການຂໍວີຊາອອກນອກເມືອງ ຫຼື ການຈ່າຍຄ່າທຳນຽມ ຫຼື ຄ່າປັບໄໝທີ່ຢູ່ໃນປະເທດກາຍກຳນົດເວລາ. ຄວາມສາມາດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການເຄື່ອນຍ້າຍໄປບ່ອນທີ່ປອດໄພອາດຖືກຈຳກັດຍ້ອນວີຊາ ແລະ ໃບອະນຸຍາດເຮັດວຽກ ທີ່ຈຳກັດໃຫ້ເຂົາເຈົ້າຢູ່ພາຍໃນພື້ນທີ່ ຫຼື ຢູ່ກັບນາຍຈ້າງສະເພາະໃດໜຶ່ງ. ການປະຕິບັດການທີ່ລັດສາມາດດຳເນີນໂດຍສະເພາະໃນໄລຍະທີ່ວິກິດການຮ້າຍແຮງທີ່ສຸດລວມມີ:

ຫຼັກການ

- ການອຳນວຍຄວາມສະດວກໃຫ້ແກ່ການເດີນທາງອອກປະເທດຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຄອບຄົວຂອງເຂົາເຈົ້າໂດຍການຍົກເວັ້ນ ຫຼື ເລັ່ງການອອກວິຊາຂາອອກ ແລະ ເອກະສານອື່ນໆທີ່ຈຳເປັນ;
- ການຍົກເວັ້ນຄ່າທຳນຽມ ຫຼື ຄ່າປັບໄໝທີ່ກ່ຽວຂ້ອງກັບການອອກນອກປະເທດ, ການຢູ່ໃນປະເທດກາຍກຳນົດ ຫຼື ການລະເມີດຂໍ້ຈຳກັດໃນການເຄື່ອນຍ້າຍ;
- ການເຮັດໃຫ້ຂັ້ນຕອນການຂໍໃບອະນຸຍາດການເຂົ້າປະເທດຄືນ ໃຫ້ງ່າຍຂຶ້ນສຳລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ໄດ້ຮັບຜົນກະທົບລວມທັງ ນັກຮຽນ ແລະ ແຮງງານຕ່າງປະເທດ;
- ການອຳນວຍຄວາມສະດວກ ແລະ ການເຂົ້າເຖິງບຸກຄະລະກອນກົງສຸນຈາກລັດຕົ້ນທາງໃນການຢ້ຽມຢາມ, ລະບຸ ແລະ ໃຫ້ຄວາມຊ່ວຍເຫຼືອແກ່ພົນລະເມືອງຂອງເຂົາເຈົ້າ;
- ຫຼີກເວັ້ນຈາກການກັກຂັງຜູ້ເຄື່ອນຍ້າຍຖິ່ນຖານໃນໄລຍະເກີດວິກິດ ໂດຍສະເພາະເດັກນ້ອຍ;
- ການຮັບປະກັນວ່າຄອບຄົວຜູ້ເຄື່ອນຍ້າຍຖິ່ນຖານຈະບໍ່ຖືກແຍກອອກຈາກກັນ;
- ການອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງ ແລະ ການປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກັກຂັງ.

### *ເອກະສານການເດີນທາງສຳລັບບຸກຄົນທີ່ບໍ່ມີສັນຊາດເພື່ອເອື້ອອຳນວຍການເດີນທາງ*

ໃນກໍລະນີອົບພະຍົບ ແລະ ກັບຄືນເຂົ້າປະເທດໂດຍມີພາກສ່ວນກ່ຽວກັບຈັດການໃຫ້, ບຸກຄົນທີ່ບໍ່ມີສັນຊາດຈະມີຄວາມບອບບາງ-ສ່ຽງເປັນພິເສດ. ບຸກຄົນທີ່ບໍ່ມີສັນຊາດທີ່ບໍ່ສາມາດກັບຄືນເຂົ້າປະເທດທີ່ຕົນອາໄສຜ່ານມາ ຈະຕ້ອງການເອກະສານການເດີນທາງເພື່ອອຳນວຍຄວາມສະດວກການເດີນທາງອອກນອກປະເທດປາຍທາງ. ມີບາງລັດທີ່ມີຂໍ້ບັງຄັບພາຍໃຕ້ກົດໝາຍສາກົນໃຫ້ອອກເອກະສານການລະບຸຕົວຕົນ ແລະ ເອກະສານການເດີນທາງໃຫ້ແກ່ບຸກຄົນທີ່ບໍ່ມີສັນຊາດ.

## ລັດຕົ້ນທາງ

### *ການອອກໃບເດີນທາງ ແລະ ເອກະສານແທນເອກະສານລະບຸຕົວຕົນ ແລະ ເອກະສານການເດີນທາງ*

ພົນລະເມືອງຢູ່ຕ່າງປະເທດອາດຈຳເປັນຕ້ອງສະແດງເອກະສານລະບຸຕົວຕົນເພື່ອທີ່ຈະເຄື່ອນຍ້າຍໄປບ່ອນທີ່ປອດໄພພາຍໃນລັດປາຍທາງ ຫຼື ເພື່ອຂໍຄວາມຊ່ວຍເຫຼືອໃນທ້ອງຖິ່ນ. ພົນລະເມືອງຢູ່ຕ່າງປະເທດຕ້ອງສາມາດເຂົ້າເຖິງເອກະສານລະບຸຕົວຕົນ ແລະ ເອກະສານການເດີນທາງທີ່ຖືກຕ້ອງເພື່ອຂ້າມຊາຍແດນສາກົນ, ລັດຕົ້ນທາງອີງໃສ່ເອກະສານລະບຸຕົວຕົນ ແລະ ເອກະສານການເດີນທາງເພື່ອຢັ້ງຢືນຄວາມເປັນພົນລະເມືອງ ແລະ ເພື່ອຊ່ວຍພົນລະເມືອງໃນການອົບພະຍົບ, ເຄື່ອນຍ້າຍ ຫຼື ກັບຄືນເຂົ້າມາບ້ານເກີດຂອງເຂົາເຈົ້າ. ມາດຕະການທີ່ລັດຕົ້ນທາງສາມາດດຳເນີນລວມມີ:

- ຢູ່ສະຖານກົງສຸນ, ຈັດເອກະສານການລະບຸຕົວຕົນໃໝ່ ຫຼື ເອກະສານອື່ນໆໃຫ້ແກ່ພົນລະເມືອງຂອງຕົນ ເຊັ່ນ ໜັງສືເດີນທາງ, ເອກະສານລະບຸຕົວຕົນ ຫຼື ເອກະສານການເດີນທາງຊົ່ວຄາວຖ້າສູນຫາຍ, ຖືກຍຶດໂດຍຜູ້ຈ້າງງານ (ໂດຍສະເພາະໃນກໍລະນີຂອງ ແຮງງານທີ່ເຮັດວຽກເປັນຄົນຮັບໃຊ້) ຫຼື ໃນກໍລະນີທີ່ເຂົາເຈົ້າບໍ່ເຄີຍມີມາແຕ່ກ່ອນ.
- ການນຳໃຊ້ນະໂຍບາຍ 'ບໍ່ຕັ້ງຄຳຖາມ' ກ່ຽວກັບສະຖານະການເຂົ້າເມືອງໃນລັດຕົ້ນທາງຂອງເຂົາເຈົ້າ;
- ການຮ້ອງຂໍຄວາມຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນເພື່ອຈັດເອກະສານການລະບຸຕົວຕົນ-ປະຈຳຕົວໃຫ້ແກ່ພົນລະເມືອງ;
- ການອອກໃບເດີນທາງ ຫຼື ເອກະສານອື່ນໆເພື່ອໃຫ້ສາມາດອົບພະຍົບ ແລະ ໄດ້ຮັບການຊ່ວຍເຫຼືອອື່ນໆສຳລັບສະມາຊິກຄອບຄົວ ໃນກໍລະນີທີ່ເຂົາເຈົ້າບໍ່ມີສັນຊາດດຽວກັນກັບພົນລະເມືອງທີ່ກຳລັງຂໍຄວາມຊ່ວຍເຫຼືອຈາກລັດຕົ້ນທາງ.

### *ການສົ່ງຄະນະຊ່ວຍເຫຼືອຈາກກົງສຸນໄປຍັງຊາຍແດນ, ເດີ່ນບິນ, ທ່າເຮືອ ຫຼື ຈຸດທາງຜ່ານອື່ນ*

ການສົ່ງບຸກຄະລາກອນພິເສດໄປຍັງລັດປາຍທາງ ຫຼື ລັດທາງຜ່ານເພື່ອອຳນວຍຄວາມສະດວກໃຫ້ແກ່ການຈັດແຈງເອກະສານຕ່າງໆ ຈະສາມາດເລັ່ງຂະບວນການປະເມີນຄວາມຕ້ອງການຂອງພົນລະເມືອງ ແລະ ໃຫ້ການຊ່ວຍເຫຼືອເຂົາເຈົ້າ. ມາດຕະການທີ່ລັດຕົ້ນທາງສາມາດພິຈາລະນາລວມມີ:

- ການເປີດສະຖານກົງສຸນຊົ່ວຄາວຢູ່ຊາຍແດນ;
- ການສົ່ງຄະນະຊ່ວຍເຫຼືອຂອງກົງສຸນໄປຫຼາຍບ່ອນລວມທັງ ຢູ່ຊາຍແດນ, ເດີ່ນບິນ ແລະ ຈຸດທາງຜ່ານຕ່າງໆ;
- ການສົ່ງຄະນະທີ່ມີໜ້າທີ່ສະເພາະໃນການປະເມີນ ແລະ ແກ້ໄຂຄວາມຕ້ອງການຂອງພົນລະເມືອງທີ່ຕ້ອງການໆປົກປ້ອງພິເສດ ເຊັ່ນ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ແຮງງານທີ່ຖືກຜູ້ຈ້າງງານຍຶດເອກະສານໄວ້, ແລະ ເດັກນ້ອຍລວມທັງຜູ້ທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ ແລະ ຮັບມືຢ່າງທັນການ;
- ການເລີ່ມຕົ້ນຂໍ້ຕົກລົງການບໍລິການດ້ານກົງສຸນ ຖ້າວ່າມີ ເພື່ອຮ້ອງຂໍຄວາມຊ່ວຍເຫຼືອຈາກລັດອື່ນໆໃນການຊ່ວຍເຫຼືອພົນລະເມືອງຂອງຕົນ;
- ການປະສານງານກັບອົງການຈັດຕັ້ງສາກົນເພື່ອໃຫ້ໄດ້ຮັບຄວາມຊ່ວຍເຫຼືອດ້ານວິຊາການ ແລະ ບຸກຄະລາກອນເພີ່ມຕື່ມ.

*ການເຈລະຈາກັບລັດປາຍທາງແລະລັດທາງຜ່ານກ່ຽວກັບການຍົກເວັ້ນແລະ ຂໍ້ຍົກເວັ້ນເງື່ອນໄຂການອອກ, ຢູ່ ແລະ ເຂົ້າປະເທດ*

ເງື່ອນໄຂດ້ານກົດໝາຍ ແລະ ນະໂຍບາຍໃນລັດປາຍທາງອາດເປັນອຸປະສັກໃນການຍົກຍ້າຍ, ການອົບພະຍົບ ຫຼື ການເດີນທາງຜ່ານເພື່ອລໍຖ້າປ່ຽນປະເທດ ໄປຍັງບ່ອນປອດໄພ ຫຼື ຂໍຄວາມຊ່ວຍເຫຼືອເພື່ອຊ່ວຍຊີວິດ. ລັດຕົ້ນທາງສາມາດລະບຸວ່າອຸປະສັກການອອກປະເທດດັ່ງກ່າວນັ້ນມີຢູ່ແທ້ຈິງບໍ່ ແລະ ເຈລະຈາ (ໂດຍການຮ່ວມມືກັບລັດຕົ້ນທາງອື່ນໆ) ກັບ ລັດປາຍທາງ ແລະ ລັດທາງຜ່ານ ເພື່ອຂໍ ການຍົກເວັ້ນ ແລະ ຂໍ້ຍົກເວັ້ນອຸປະສັກເຫຼົ່ານັ້ນ.

## ລັດທາງຜ່ານ

*ການຍົກເວັ້ນ ຫຼື ຂໍ້ຍົກເວັ້ນເງື່ອນໄຂການອອກ, ການຢູ່ ແລະ ການເຂົ້າປະເທດ*

ພາວະວິກິດສ່ວນໃຫຍ່ຈະຕ້ອງມີຄວາມຍືດຍຸ່ນໃນເລື່ອງເງື່ອນໄຂການເຂົ້າ-ອອກປະເທດ ແລະ ດ້ານວິຊາ. ຜູ້ເຄື່ອນຍ້າຍຖິ່ນຖານອາດຈຳເປັນຕ້ອງຂ້າມຊາຍແດນສາກົນເພື່ອໜີຄວາມອັນຕະລາຍ ຫຼື ຮັບການຊ່ວຍເຫຼືອຊີວິດ. ລັດທາງຜ່ານສາມາດດຳເນີນມາດຕະການເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນຍ້າຍຂອງຜູ້ເຄື່ອນຍ້າຍຖິ່ນຖານຢ່າງປອດໄພ ຄື:

- ການຍົກເວັ້ນເງື່ອນໄຂວິຊາການເຂົ້າ ແລະ ອອກປະເທດ, ຄ່າປັບໄໝ ຫຼື ຂໍ້ຈຳກັດອື່ນໆທີ່ກີດກັ້ນການເຄື່ອນຍ້າຍ;
- ການແຈ້ງຂໍ້ແນະນຳ ແລະ ລະບຽບຂັ້ນຕອນໃຫ້ແກ່ເຈົ້າໜ້າທີ່ຊາຍແດນເພື່ອອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງອານາເຂດ;
- ການມອບໝາຍບຸກຄົນ ຫຼື ໜ່ວຍງານທີ່ມີອຳນາດໜ້າທີ່ ແລະ ອຳນາດໃນພາວະສຸກເສີນທີ່ພຽງພໍໃນການຕັດສິນໃຈກ່ຽວກັບຂໍ້ຍົກເວັ້ນ, ຂະບວນການ ແລະ ລະບຽບຂັ້ນຕອນຜ່ານແດນ;
- ອຳນວຍຄວາມສະດວກ ແລະ ໃຫ້ບຸກຄະລາກອນກົງສຸນຈາກລັດຕົ້ນທາງໃນການມາຢ້ຽມຢາມ, ລະບຸ ແລະ ຊ່ວຍເຫຼືອພົນລະເມືອງຂອງເຂົາເຈົ້າ;
- ການເຄື່ອນຍ້າຍຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກລະບຸວ່າຕ້ອງການໄດ້ຮັບການປົກປ້ອງ ອອກຈາກພື້ນທີ່ຊາຍແດນເພື່ອຊ່ວຍຮັກສາຄວາມປອດໄພຂອງເຂົາເຈົ້າໃຫ້ສູງຂຶ້ນ ແລະ ເພື່ອລະບາຍຄວາມແອອັດຢູ່ດ່ານ;
- ການລົງທະບຽນຜູ້ທີ່ເດີນທາງເຂົ້າປະເທດ ແລະ ສຳລັບຜູ້ທີ່ບໍ່ມີເອກະສານການລະບຸຕົວຕົນ ຫຼື ເອະສານການເດີນທາງທີ່ຖືກຕ້ອງ ກໍໃຫ້ອອກເອກະສານການລົງທະບຽນຊົ່ວຄາວເພື່ອຢັ້ງຢືນວັນທີ ແລະ ສະຖານທີ່ການເຂົ້າປະເທດ, ຂໍ້ມູນລະບຸຮູບຮ່າງລັກສະນະຄົນ ແລະ ສັນຊາດ;
- ການຕໍ່ວິຊາ ຫຼື ໃບອະນຸຍາດໃຫ້ຢູ່ຕໍ່ຊົ່ວຄາວ;
- ການຮັບປະກັນການປະຕິບັດສອດຄ່ອງກັບ ຫຼັກການ *ການບໍ່ບັງຄັບໃຫ້ກັບຄືນປະເທດເພື່ອໃຫ້ຕົກຢູ່ໃນຄວາມອັນຕະລາຍ.*

### *ການອະນຸຍາດເຂົ້າປະເທດຊົ່ວຄາວສຳລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງຜ່ານ ຫຼື ເດີນທາງກັບຄືນປະເທດ ທີ່ບໍ່ສາມາດສະໜອງຫຼັກຖານລະບຸຕົວຕົນ*

ຜູ້ເຄື່ອນຍ້າຍຖິ່ນຖານທີ່ໄດ້ສູນເສຍເອກະສານການລະບຸຕົວຕົນຂອງຕົນເອງ ອາດບໍ່ສາມາດພິສູດຕົວຕົນ ແລະ ສັນຊາດຂອງຕົນຕໍ່ເຈົ້າໜ້າທີ່ຂອງລັດທາງຜ່ານ. ຂໍ້ກຳນົດເພື່ອແກ້ໄຂຄວາມບໍ່ແນ່ນອນເລື່ອງຕົວຕົນນີ້ອາດລວມມີ:

- ການອະນຸຍາດໃຫ້ເຂົ້າປະເທດຊົ່ວຄາວເພື່ອໃຫ້ເວລາຜູ້ເຄື່ອນຍ້າຍຖິ່ນຖານໃນການດຳເນີນເອກະສານໃໝ່ ຫຼື ຫຼັກຖານອື່ນໆໃນການລະບຸຕົວຕົນ ແລະ ສັນຊາດ;
- ການຈັດແຈງໃຫ້ເຈົ້າໜ້າທີ່ກົງສຸນຈາກລັດຕົ້ນທາງ ສາມາດເຂົ້າເຖິງພົນລະເມືອງຂອງຕົນທີ່ຂໍເຂົ້າປະເທດທີ່ດ່ານກວດກາ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຢັ້ງຢືນຕົວຕົນເປັນຕົ້ນ;
- ການຍອມຮັບທາງເລືອກໃນການຮັບເອກະສານລະບຸຕົວຕົນທີ່ເປັນທາງການອື່ນໆລວມທັງ ໜັງສືຮັບຮອງຢ່າງເປັນລາຍລັກອັກສອນ ໂດຍຜູ້ທີ່ຍິນດີໃຫ້ຄຳປະຕິຍານ ວ່າເຂົາເຈົ້າຮູ້ ຕົວຕົນ/ອັດຕະລັກ ແລະ ສັນຊາດຂອງຜູ້ເຄື່ອນຍ້າຍຖິ່ນຖານ.

### *ສະຖານະການປົກປ້ອງຊົ່ວຄາວ ແລະ ດ້ານມະນຸດສະທຳ*

ກົນໄກເພື່ອໃຫ້ຮູບການປົກປ້ອງ ແລະ ສະຖານະທີ່ເໝາະສົມ ແລະ ສະເພາະບຸກຄົນທີ່ເດີນທາງມາຈາກລັດປາຍທາງ ໂດຍຢ່າງຕໍ່າສຸດແມ່ນໃຫ້ສອດຄ່ອງກັບກົດໝາຍສາກົນ. ບົດບັນຍັດ-ຂໍ້ກຳນົດທີ່ 'ຍົກເວັ້ນ' ໃນກົດໝາຍແຫ່ງຊາດ ແລະ ການປ່ຽນແປງໃນນະໂຍບາຍກໍສາມາດນຳໃຊ້ເພື່ອອະນຸຍາດການເຂົ້າ ຫຼື ການຢູ່ໃນປະເທດຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ບໍ່ຕົກໃນເງື່ອນໄຂຂອງຜູ້ລີ້ໄພ ຫຼື ບໍ່ສາມາດໄດ້ປະໂຫຍດຈາກກົນໄກການເຂົ້າ ຫຼື ຢູ່ໃນປະເທດທີ່ມີຢູ່. ສະຖານະທີ່ເປັນໄປໄດ້ລວມມີ:

- ສະຖານະການປົກປ້ອງ (ດ້ານມະນຸດສະທຳ) ຊົ່ວຄາວ;
- ສະຖານະການປົກປ້ອງດ້ານມະນຸດສະທຳ;
- ສະຖານະການປົກປ້ອງແບບມີເງື່ອນໄຂ.

## ຜູ້ມີສ່ວນຮ່ວມພາກເອກະຊົນ

### *ການເຂົ້າເຖິງ ເອກະສານ ແລະ ການເຄື່ອນຍ້າຍໄປຍັງບ່ອນປອດໄພ*

ລູກຈ້າງຜູ້ເຄື່ອນຍ້າຍຖິ່ນຖານ ອາດຕ້ອງການເອກະສານລະບຸຕົວຕົນ ແລະ ຊັບພະຍາກອນເພື່ອເຂົ້າເຖິງການຊ່ວຍເຫຼືອ ຫຼື ການຍົກຍ້າຍໄປບ່ອນປອດໄພ. ຜູ້ຈ້າງງານ ແລະ ຜູ້ຈັດຫາງານສາມາດປະຕິບັດດັ່ງນີ້:

- ການສົ່ງຄືນເອກະສານລະບຸຕົວຕົນໃດໆໃຫ້ໄວທີ່ສຸດ ໂດຍບໍ່ໃຫ້ເສຍຄ່າ ແລະ ມີເງື່ອນໄຂໃດໆ;
- ການຈ່າຍຄ່າແຮງງານທີ່ຄົງຄ້າງເມື່ອຜູ້ເຄື່ອນຍ້າຍຖິ່ນຖານຕ້ອງການອອກຈາກລັດປາຍທາງໃນພາວະວິກິດ;
- ການຍົກຍ້າຍ, ການອົບພະຍົບ ຫຼື ການສົ່ງຜູ້ເຄື່ອນຍ້າຍຖິ່ນຖານກັບປະເທດລວມທັງສະມາຊິກຄອບຄົວຂອງເຂົາເຈົ້າ ຫຼື ໂດຍປະກອບສ່ວນຕໍ່ຄ່າໃຊ້ຈ່າຍເຫຼົ່ານີ້;
- ສື່ສານກັບການສະຖານກົງສຸນເພື່ອປະສານກ່ຽວກັບການຍົກຍ້າຍ ແລະ ການອົບພະຍົບ.

## ອົງການຈັດຕັ້ງສາກົນ

### *ເອກະສານລະບຸຕົວຕົນ ແລະ ເອກະສານການເດີນທາງຊົ່ວຄາວ*

ອົງການຈັດຕັ້ງສາກົນສາມາດຊ່ວຍລັດໃນການລະບຸພົນລະເມືອງຂອງເຂົາເຈົ້າ ແລະ ອຳນວຍຄວາມສະພວກ (ຫຼື ກໍລະນີຈຳເປັນ, ການອອກໃຫ້) ເອກະສານລະບຸຕົວຕົນ. ກິດຈະກຳຕ່າງໆລວມມີ:

- ການສະໜັບສະໜູນລັດໃນການຢັ້ງຢືນສັນຊາດ ແລະ ຂັ້ນຕອນການກັ່ນຕອງຜູ້ເຄື່ອນຍ້າຍຖິ່ນຖານຢູ່ດ່ານຊາຍແດນ;
- ການຢັ້ງຢືນ ສິດໃນການອາໄສຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານລວມທັງຢູ່ດ່ານຊາຍແດນ, ໃນການຕິດຕໍ່ເຈົ້າໜ້າທີ່ກົງສຸນຂອງລັດຕົ້ນທາງເພື່ອ ຂໍດຳເນີນເອກະສານການເດີນທາງ ຫຼື ໃບເດີນທາງທີ່ຈຳເປັນ.

*ການແນະນຳລັດກ່ຽວກັບການເປີດຊາຍແດນ*

ການແນະນຳລັດໃຫ້ເປີດຊາຍແດນໄວ້ ບົນພື້ນຖານຂອງການຊ່ວຍເຫຼືອດ້ານມະນຸດສະທຳ ເພື່ອອຳນວຍຄວາມສະດວກໃຫ້ແກ່ການອອກປະເທດຢ່າງປອດໄພ ແລະ ທັນການຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການເຂົ້າເຖິງການຊ່ວຍເຫຼືອ ແລະ ການບໍລິການສຸກເສີນຂອງເຂົາເຈົ້າ.

## ອົງການຈັດຕັ້ງສັງຄົມ

*ການແນະນຳລັດ ແລະ ຜູ້ມີສ່ວນຮ່ວມພາກເອກະຊົນໃນການສ້າງສະພາບການເຄື່ອນຍ້າຍຢ່າງປອດໄພຂອງຜູ້ເຄື່ອນຍ້າຍຖິ່ນຖານ*

ອົງການຈັດຕັ້ງສັງຄົມສາມາດແນະນຳ/ພົວພັນກັບລັດ ແລະ ຜູ້ຈ້າງງານໃນການສ້າງສະພາບທີ່ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນຍ້າຍຂອງຜູ້ເຄື່ອນຍ້າຍຖິ່ນຖານໄປບ່ອນທີ່ປອດໄພ. ເຂົາເຈົ້າຍັງສາມາດແຊກແຊງໂດຍກົງເພື່ອສະໜັບສະໜູນຜູ້ເຄື່ອນຍ້າຍຖິ່ນຖານໃນການເຄື່ອນຍ້າຍ. ຂໍ້ປະຕິບັດທີ່ອົງການຈັດຕັ້ງສັງຄົມສາມາດດຳເນີນລວມມີ:

- ການແນະນຳ/ພົວພັນກັບ ລັດປາຍທາງ ແລະ ລັດທາງຜ່ານໃຫ້ເປີດດ່ານໄວ້ບົນພື້ນຖານການຊ່ວຍເຫຼືອດ້ານມະນຸດສະທຳ;
- ການແນະນຳ/ພົວພັນກັບຜູ້ຈ້າງງານໃນການສ້າງສະພາບທີ່ຊ່ວຍໃຫ້ຜູ້ເຄື່ອນຍ້າຍຫລົບໜີໄປບ່ອນປອດໄພ ລວມທັງ ການເຂົ້າເຖິງເອກະສານ ແລະ ຄ່າແຮງງານທີ່ຄົງຄ້າງ ແລະ ການຕິດຕໍ່ກັບເຈົ້າໜ້າທີ່ກົງສຸນ;
- ການຊຸກຍູ້ໃຫ້ຜູ້ມີສ່ວນຮ່ວມເຂົ້າໃຈ ແລະ ເຄົາລົບ ຄວາມມັກ ແລະ ການຕັດສິນໃຈຂອງຜູ້ເຄື່ອນຍ້າຍຖິ່ນຖານກ່ຽວກັບການເຄື່ອນຍ້າຍ;
- ການໃຫ້ຄວາມຊ່ວຍເຫຼືອໂດຍກົງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານໃນການເຄື່ອນຍ້າຍລວມທັງ ການຂົນສົ່ງ ແລະ ບ່ອນພັກຊົ່ວຄາວໃນລະຫວ່າງການເດີນທາງ;
- ການສ້າງຕັ້ງ ຫຼື ການເລີ່ມຕົ້ນຂໍ້ຕົກລົງຕ່າງໆກັບ ເຈົ້າໜ້າທີ່ແຫ່ງຊາດ ຫຼື ທ້ອງຖິ່ນໃນລັດປາຍທາງ ໃນການເຂົ້າເຖິງສູນກັກຂັງເພື່ອປະເມີນຄວາມຕ້ອງການສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກັກຂັງ ແລະ ໃຫ້ຄວາມຊ່ວຍເຫຼືອ ລວມທັງການອົບພະຍົບ ຖ້າເປັນໄປໄດ້.

## ພາກປະຕິບັດໃນການນຳໃຊ້ ແນວທາງປະຕິບັດ 11:
## ໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳແກ່ຜູ້ເຄື່ອນຍ້າຍຖິ່ນຖານໂດຍບໍ່ຈຳແນກ-ບໍ່ເລືອກປະຕິບັດ

### ຜູ້ມີສ່ວນຮ່ວມຫຼາຍຝ່າຍ

*ກົນໄກການຕິດຕາມການຍົກຍ້າຍ*

ຂໍ້ມູນກ່ຽວກັບການຍົກຍ້າຍຈະຊ່ວຍໃນການລະບຸສະຖານທີ່, ຂໍ້ມູນດ້ານປະຊາກອນ ແລະ ຄວາມຕ້ອງການຂອງປະຊາກອນທີ່ໄດ້ຮັບຜົນກະທົບຈາກໄພວິກິດລວມທັງຜູ້ເຄື່ອນຍ້າຍຖິ່ນຖານ ເຊິ່ງຈະສາມາດນຳໄປເປັນບ່ອນອີງເພື່ອຊີ້ແນະ ການໃຫ້ຄວາມຊ່ວຍເຫຼືອ ແລະ ການປະສານງານລະຫວ່າງຜູ້ມີສ່ວນຮ່ວມຕ່າງໆ. ໂດຍອີງຕາມຄວາມຕ້ອງການ ແລະ ບໍລິບົດ, ການຕິດຕາມການເຄື່ອນຍ້າຍສາມາດປະກອບດ້ວຍໜຶ່ງ ຫຼື ຫຼາຍກວ່າໜຶ່ງວິທີການເກັບກຳຂໍ້ມູນລວມທັງ:

- ການປະເມີນພາກສະໜາມເພື່ອເຂົ້າໃຈປະຫວັດຂອງປະຊາກອນ, ສະຖານທີ່ອາໄສຂອງເຂົາເຈົ້າ ແລະ ການເຂົ້າເຖິງການບໍລິການ;
- ການຕິດຕາມການເຄື່ອນຍ້າຍເພື່ອເຂົ້າໃຈຮູບແບບ ແລະ ແນວໂນ້ມໃນການເຄື່ອນຍ້າຍ;
- ການລົງທະບຽນເພື່ອໃຫ້ມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບປະຊາກອນ;
- ການສຳຫຼວດເພື່ອເກັບກຳຂໍ້ມູນໃນທາງຄຸນນະພາບກ່ຽວກັບປະຊາກອນໃຫ້ໄດ້ຫຼາຍຂຶ້ນ.

ຂໍ້ມູນທີ່ສາມາດສ້າງຂຶ້ນໄດ້ຜ່ານກົນໄກການຕິດຕາມການເຄື່ອນຍ້າຍລວມມີ:

- ຂໍ້ມູນດິບທັງໝົດທີ່ມີໃຫ້ຜູ້ມີສ່ວນຮ່ວມທຸກພາກສ່ວນນຳໄປນຳໃຊ້ເພື່ອວິເຄາະເພີ່ມຕື່ມ;
- ການປັບປຸງຂໍ້ມູນໃຫ້ຫຼ້າສຸດຢ່າງເປັນປົກກະຕິ ກ່ຽວກັບຂໍ້ມູນປະຫວັດຂອງພາກສະໜາມ ເພື່ອໃຫ້ພາບລວມໂດຍ

ຫຍໍ້ກ່ຽວກັບສະຖານທີ່ໆຜູ້ເຄື່ອນຍ້າຍຖິ່ນຖານອາໄສຢູ່ຫຼາຍ;

- ການລາຍງານດ້ານສະຖິຕິ ເຊັ່ນກະດານ/ໜ້າຈໍທີ່ສະແດງຂໍ້ມູນໃໝ່ໆຫຼ້າສຸດ, ໂດຍເອົາໜ້າໃໝ່ຂຶ້ນມາສະແດງເລື້ອຍໆເພື່ອໃຫ້ທັນກັບຕົວເລກທີ່ມີການປ່ຽນແປງຢ່າງວ່ອງໄວ ເພື່ອໃຫ້ເປັນຂໍ້ມູນທີ່ໄກ້ຄຽງເວລາຈິງຫຼາຍທີ່ສຸດ ພ້ອມທັງໃຫ້ພາບລວມກ່ຽວກັບແນວໂນ້ມ ແລະ ຮູບແບບການເຄື່ອນຍ້າຍຖິ່ນຖານໃນໄລຍະສັ້ນກວ່າເກົ່າ (ວັນ, ຊົ່ວໂມງ);
- ແຜນທີ່ຕາມຂົງເຂດໜ້າວຽກ ເພື່ອສະແດງຂໍ້ມູນຕາມພື້ນທີ່ທາງພູມສາດຕ່າງໆ;
- ການລາຍງານເພື່ອວິເຄາະຂໍ້ມູນທີ່ເກັບກຳໄດ້ ແລະ ນຳສະເໜີເປັນຮູບພາບທີ່ກວມລວມສົມບູນ;
- ເວັບໄຊດ໌ທີ່ນຳໃຊ້ເປັນຖານຂໍ້ມູນໃຫ້ແກ່ຜູ້ມີສ່ວນຮ່ວມທຸກພາກສ່ວນເພື່ອເຂົ້າເຖິງບົດລາຍງານ ແລະ ເອກະສານທີ່ສ້າງຂຶ້ນຜ່ານກົນໄກການຕິດຕາມ.

### *ການປະເມີນຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ*

ຜູ້ເຄື່ອນຍ້າຍຖິ່ນຖານອາດມີຄວາມຕ້ອງການສະເພາະທີ່ຄວນລະບຸ ແລະ ແກ້ໄຂ. ຂໍ້ມູນປະຫວັດຂອງປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານລວມທັງອາຍຸ, ເພດ, ຄວາມພິການ ແລະ ຄຸນລັກສະນະອື່ນໆອາດໄດ້ຖືກສ້າງຂຶ້ນກ່ອນໄລຍະເກີດວິກິດ ແລະອາດນຳມາໃຊ້ເພື່ອເຂົ້າໃຈຄວາມຕ້ອງການສະເພາະ ແລະ ປັບການຮັບມືກັບພາວະສຸກເສີນຕາມຄວາມເໝາະສົມ. ຖ້າບໍ່ໄດ້ສ້າງຂຶ້ນໄວ້ກ່ອນໄລຍະເກີດວິກິດ, ຜູ້ມີສ່ວນຮ່ວມກໍສາມາດດຳເນີນການເກັບກຳຂໍ້ມູນປະຫວັດຂອງຊຸມຊົນແບບລວມໆສະເພາະກິດ-ສະເພາະໜ້າເພື່ອປະເມີນຄວາມຕ້ອງການສະເພາະ, ຂໍ້ມູນດ້ານປະຊາກອນຂອງຊຸມຊົນ, ສະຖານທີ່ອາໄສຂອງຜູ້ເຄື່ອນຍ້າຍຖິ່ນຖານ (ລວມທັງຜູ້ທີ່ຖືກກັກຂັງ ຫຼື ເຮັດວຽກ ຫຼື ອາໄສຢູ່ບ່ອນໂດດດຽວ), ຂໍ້ມູນປະຫວັດດ້ານສາສະໜາ ແລະວັດທະນະທຳ ແລະ ເບິ່ງວ່າຄວາມຕ້ອງການໄດ້ຮັບການສະໜອງ ຫຼື ບໍ່.

### *ການປັບຄວາມຊ່ວຍເຫຼືອໃຫ້ເຂົ້າກັບຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ*

ມາດຕະການເພື່ອຮັບປະກັນວ່າການຊ່ວຍເຫຼືອທີ່ສະໜອງເຂົ້າກັບຄວາມຕ້ອງການສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານ ລວມມີ:

- ການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານໃນແບບທີ່ເໝາະສົມ ແລະ ຄຳນຶງເຖິງວັດທະນະທຳ ແລະ ສາສະໜາ ແລະ ແກ້ໄຂຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານພິການ, ຜູ້ເຄື່ອນຍ້າຍຖິ່ນຖານສູງອາຍຸ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນເດັກນ້ອຍ ລວມທັງຜູ້ທີ່ຖືກແຍກຈາກຜູ້ປົກຄອງ ຫຼື ບໍ່ມີຜູ້ຕິດຕາມ ແລະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄ່ານິຍົມທາງເພດ ແລະ ອັດຕະລັກທາງເພດທຸກຮູບແບບ;
- ມາດຕະການເພື່ອໃຫ້ຄວາມຊ່ວຍເຫຼືອແບບມີເປົ້າໝາຍເພື່ອຕອບສະໜອງຕາມຄວາມຕ້ອງການທີ່ແຕກຕ່າງກັນ ແລະ ຄວາມບອບບາງສະເພາະເຈາະຈົງຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນແມ່ຍິງ, ຜູ້ຊາຍ, ເດັກຊາຍ ແລະ ເດັກຍິງ;
- ລະບຽບຂັ້ນຕອນທີ່ຄຳນຶງເຖິງຄວາມແຕກຕ່າງດ້ານເພດ ແລະ ອາຍຸ ຢູ່ສະຖານທີ່ຮັບ, ສະຖານທີ່ລີ້ໄພ-ພັກອາໄສ, ແຄ້ມ ແລະ ສູນສຳລັບຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ສູນ ແລະ ການບໍລິການທີ່ເໝາະສົມກັບກຸ່ມຜູ້ເຄື່ອນຍ້າຍຖິ່ນຖານສະເພາະເພດ ຫຼື ອາຍຸ;
- ມາດຕະການທີ່ຄຳນຶງເຖິງຄວາມຕ້ອງການອີງຕາມສະພາບການເຮັດວຽກທີ່ໂດດດ່ຽວ, ການຂາດເຄືອຂ່າຍທາງສັງຄົມ, ອຸປະສັກທາງພາສາ ຫຼື ການສື່ສານ ແລະ ການຂາດເອກະສານຕ່າງໆ.

### *ການຕິດຕາມການເຂົ້າເຖິງການຊ່ວຍເຫຼືອດ້ານມະນຸດສະທຳຂອງຜູ້ເຄື່ອນຍ້າຍຖິ່ນຖານ*

ການລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນກົນໄກ ແລະ ກິດຈະກຳການເຂົ້າເຖິງການຊ່ວຍເຫຼືອດ້ານມະນຸດສະທຳແບບບໍ່ມີການຈຳແນກ-ການເລືອກປະຕິບັດ ແມ່ນຈະສາມາດຊ່ວຍປະເມີນ ແລະ ແກ້ໄຂອຸປະສັກທີ່ຜູ້ເຄື່ອນຍ້າຍຖິ່ນຖານຈະພົບພໍ້ໃນການຮັບເອົາການບັນເທົາທຸກ. ກົນໄກການໃຫ້ຄຳເຫັນ ແລະ ການຮ້ອງທຸກຍັງຈະສາມາດເປີດໂອກາດໃຫ້ຜູ້ ເຄື່ອນຍ້າຍຖິ່ນຖານແຈ້ງຕໍ່ໃຫ້ຜູ້ມີສ່ວນຮ່ວມກ່ຽວກັບອຸປະສັກໃນການເຂົ້າເຖິງການຊ່ວຍເຫຼືອ.

ການນຳໃຊ້ຫຼາກຫຼາຍວິທີຈະສາມາດເພີ່ມຄວາມຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກໃຫ້ແກ່ການລົງຊ່ວຍເຫຼືອກຸ່ມຜູ້ເຄື່ອນຍ້າຍຖິ່ນຖານທີ່ບອບບາງ-ດ້ອຍໂອກາດທີ່ສຸດ. ວິທີການສະເພາະກໍອາດຈຳເປັນເພື່ອຮັບປະກັນວ່າຜູ້ເຄື່ອນຍ້າຍຖິ່ນຖານທີ່ອາດຈະບໍ່ໄດ້ລະບຸຕົນເອງວ່າຈະສາມາດຮັບຄວາມຊ່ວຍເຫຼືອ ຫຼື ຜູ້ທີ່ຊອກຫາບ່ອນພັກອາໄສ-ລີ້ໄພດ້ວຍຕົນເອງນັ້ນຈະໄດ້ຮັບການປົກປ້ອງເຊັ່ນກັນ ເຊັ່ນ ດ້ວຍການໃຊ້ວິທີລົງຢ້ຽມຢາມແຕ່ລະຫຼັງຄາເຮືອນໃນທ້ອງຖິ່ນທີ່ມີຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ການໄປຢ້ຽມຢາມສູນກັກກັນ.

### *ຄະນະຮັບມືກັບໄພວິກິດແບບເຄື່ອນທີ່ ເພື່ອເຂົ້າຫາ ແລະ ໃຫ້ການຊ່ວຍເຫຼືອແກ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ໄດ້ຮັບຜົນກະທົບ*

ເມື່ອວິກິດເກີດຂຶ້ນ, ຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານອາດຈະຖືກເບິ່ງຂ້າມ ໃນສະພາບການທີ່ມີການເຄື່ອນຍ້າຍຄົນຢ່າງຂະໜາດໃຫຍ່ ແລະ ມີຄວາມຕ້ອງການໆຊ່ວຍເຫຼືອດ້ານມະນຸດສະທຳໃນວົງກວ້າງ. ການສົ່ງຄະນະຮັບມືກັບພາວະວິກິດແບບເຄື່ອນທີ່ແບບສະເພາະກິດອາດຖົມຊ່ອງຫວ່າງທີ່ອາດຈະເກີດຂຶ້ນ. ທີມງານເຫຼົ່ານີ້ຍັງສາມາດເຂົ້າເຖິງສະຖານທີ່ປ່ຽວ-ໂດດດ່ຽວບ່ອນທີ່ມີຜູ້ເຄື່ອນຍ້າຍຖິ່ນຖານອາໄສຢູ່ຫຼາຍ. ຜູ້ມີສ່ວນຮ່ວມສາມາດສົ່ງຄະນະຮັບມືກັບພາວະວິກິດແບບເຄື່ອນຢ່າງວ່ອງໄວຂອງໄຜຂອງລາວ (ແບບເອກະລາດ) ຫຼື ໂດຍການປະສານງານກັນ. ທີມງານເຫຼົ່ານີ້ຄວນປະກອບດ້ວຍບຸກຄະລາກອນທີ່ມີປະສົບການ ແລະ ມີທັກສະທີ່ເໝາະສົມໂດຍໄດ້ຮັບການຝຶກອົບຮົມ ແລະ ຮູ້ຄວາມຕ້ອງການ ແລະ ຄວາມບອບບາງສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານ. ເຂົາເຈົ້າຈະສາມາດສະໜອງການບໍລິການຢ່າງກວ້າງຂວາງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງ:

- ການອອກໜັງສືເດີນທາງ ຫຼື ເອກະສານການເດີນທາງ ຫຼື ບໍ່ດັ່ງນັ້ນກໍລົງທະບຽນຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ຄວາມຕ້ອງການຂອງເຂົາເຈົ້າ;
- ການສະໜັບສະໜູນເຈົ້າໜ້າທີ່ທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນກ່ຽວກັບການປະເມີນຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການປະສານງານໂດຍລວມ;
- ການແຈກຢາຍອຸປະກອນ-ເຄື່ອງຂອງສຸກເສີນ ແລະ ການໃຫ້ຄວາມຊ່ວຍເຫຼືອທາງດ້ານການແພດ;
- ການເຂົ້າຫາຜູ້ເຄື່ອນຍ້າຍຖິ່ນຖານທີ່ຢູ່ແບບໂດດດ່ຽວ.

### *WKI X BV^REVFi X gYNBYKF*FI KI ^K SgUGMFJ ^C*

ຜູ້ເຄື່ອນຍ້າຍຖິ່ນຖານອາດຈະບໍ່ສາມາດເຂົ້າເຖິງການຊ່ວຍເຫຼືອບັນເທົາທຸກທີ່ມອບໃຫ້ສະເພາະພົນລະເມືອງຂອງລັດປາຍທາງ. ນອກຈາກການເຮັດໜ້າທີ່ເປັນບ່ອນສື່ສານຂໍ້ມູນ, ສູນໃຫ້ຄວາມຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານອາດສະໜອງ:

- ການເຂົ້າເຖິງໂທລະສັບ ແລະ ອິນເຕີເນັດ;
- ການບໍລິການໃຫ້ຄຳປຶກສາໃນຫຼາຍພາສາ;
- ຂໍ້ມູນການອົບພະຍົບ ແລະ ການສົ່ງຕໍ່ຫາເຈົ້າໜ້າທີ່ງກ່ຽວຂ້ອງ, ຜູ້ມີສ່ວນຮ່ວມອື່ນໆ ແລະ ການບໍລິການຕ່າງໆ;
- ການຊ່ວຍເຫຼືອທີ່ບໍ່ແມ່ນເງິນລວມທັງ ຜ້າຫົ່ມ, ອາຫານ, ນ້ຳ ແລະ ການບໍລິການຮັກສາສຸຂະພາບ-ປິ່ນປົວສຸຂະພາບ;
- ການຊ່ວຍເຫຼືອເປັນເງິນ;
- ການກັ່ນຕອງ ແລະສົ່ງຕໍ່ກໍລະນີທີ່ຕ້ອງການໆປົກປ້ອງເປັນພິເສດເຊັ່ນ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

### *ການບໍລິການຕາມຫາ ແລະ ການເຕົ້າໂຮມຄອບຄົວໃຫ້ໄດ້ມາຢູ່ຮ່ວມກັນຄືນໃໝ່*

ໃນໄລຍະເກີດວິກິດ, ສະມາຊິກຄອບຄົວຂອງຜູ້ເຄື່ອນຍ້າຍຖິ່ນຖານອາດຖືກແຍກເຊິ່ງຈະ ເຮັດໃຫ້ບຸກຄົນໂດຍສະເພາະເດັກນ້ອຍ ມີຄວາມບອບບາງ-ຄວາມສ່ຽງຫຼາຍຂຶ້ນຈາກຄວາມຮຸນແຮງ, ການລ່ວງລະເມີດ, ການຂູດຮີດ ແລະ ການຄ້າມະນຸດ. ການບໍລິການທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການຕາມຫາ ແລະ ການເຕົ້າໂຮມຄອບຄົວໃຫ້ໄດ້ມາຢູ່ຮ່ວມກັນຄືນໃໝ່ລວມມີ:

- ການສົ່ງທີມງານຊ່ຽວຊານສະເພາະເພື່ອໃຫ້ຄວາມຮູ້ແບບຊຳນິຊຳນານງານກ່ຽວກັບການຊ່ວຍເຫຼືອເດັກນ້ອຍທີ່ບໍ່ມີຜູ້ຕິດ

ຕາມ ຫຼື ຖືກແຍກຈາກຜູ້ປົກຄອງ, ມີການຄຸ້ມຄອງຂະບວນການຕາມຫາສະມາຊິກຄອບຄົວ ແລະ ການຈັດການກັບກໍລະນີທີ່ຕ້ອງການໆປົກປ້ອງເປັນພິເສດ;

- ການຝຶກອົບຮົມເຈົ້າໜ້າທີ່ຂອງລັດ ແລະ ເຈົ້າໜ້າທີ່ຊາຍແດນກ່ຽວກັບວິທີການຕາມຫາ, ວິທີການຊ່ວຍເຫຼືອເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ ແລະ ການອໍານວຍຄວາມສະດວກໃຫ້ແກ່ການເຕົ້າໂຮມຄອບຄົວໃຫ້ໄດ້ມາຢູ່ຮ່ວມກັນຄືນໃໝ່;
- ສາຍໂທດ່ວນ ແລະ ສູນບໍລິການທາງໂທລະສັບເພື່ອເກັບກໍາຂໍ້ມູນ ແລະ ແຈ້ງສະມາຊິກຄອບຄົວ ຫຼື ສົ່ງຕໍ່ໄປຍັງແຫຼ່ງຂໍ້ມູນທີ່ເໝາະສົມ;
- ການບໍລິການຕາມຫາທາງອອນໄລນ໌ (ເຊັ່ນ: ເວັບໄຊດ໌ ແລະ ແອັບພິເຄຊັ້ນໃນມືຖື) ລວມທັງບັນຊີລາຍຊື່, ຂໍ້ມູນກ່ຽວກັບຜູ້ປ່ວຍຢູ່ໂຮງໝໍ, ບຸກຄົນທີ່ຕາມຫາ ແລະ ຂໍ້ມູນການຕິດຕໍ່ທີ່ກ່ຽວຂ້ອງ. ຜູ້ເຄື່ອນຍ້າຍຖິ່ນຖານທີ່ສົນໃຈຄວນຈະສາມາດເຂົ້າເຖິງ ລາຍຊື່ເຫຼົ່ານີ້ໂດຍກົງຢູ່ເທິງໜ້າເວັບໄຊດ໌ ຫຼື ເອົາຂໍ້ມູນ ແລະ ຄໍາຖາມຂອງຕົນຂຶ້ນເອງ;
- ລະບົບການລົງທະບຽນທາງອອນໄລນ໌ ຄວນໃຫ້ສາທາລະນະຊົນສາມາດລາຍງານກ່ຽວກັບເດັກນ້ອຍທີ່ຖືກແຍກຈາກຜູ້ປົກຄອງ ຫຼື ຄອບຄົວຂອງເຂົາເຈົ້າເພື່ອຊ່ວຍໃນ ການບັງຄັບໃຊ້ກົດໝາຍ ແລະ ຊ່ວຍເຈົ້າໜ້າທີ່ກົງສຸນ ພ້ອມທັງຜູ້ມີສ່ວນຮ່ວມໃນການປົກປ້ອງເດັກນ້ອຍ ດ້ານສະຖານທີ່ ແລະ ການເຕົ້າໂຮມເຂົາເຈົ້າກັບຄືນເຂົ້າຫາຄອບຄົວ;
- ການລະບຸຊາກສົບຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ເສຍຊີວິດ ແລະ ການສ້າງຖານຂໍ້ມູນຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຫາຍຕົວ.

### *ການຊ່ວຍເຫຼືອເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ*

ການຊ່ວຍເຫຼືອແບບມີເປົ້າໝາຍໃຫ້ແກ່ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ແຍກຈາກຜູ້ປົກຄອງ ອາດລວມມີ:

- ການສ້າງພື້ນທີ່ໆເປັນມິດຕໍ່ເດັກນ້ອຍລວມທັງ ບ່ອນຕ້ອນຮັບ, ບ່ອນພັກອາໄສ, ແຄ້ມ ແລະ ສູນຜູ້ເຄື່ອນຍ້າຍຖິ່ນຖານເພື່ອຮອງຮັບຄວາມຕ້ອງການດ້ານຈິດໃຈ ແລະ ສັງຄົມ, ດ້ານສຸຂະພາບ ແລະ ຄວາມຕ້ອງການດ້ານອື່ນໆ;
- ການໃຫ້ການເຂົ້າເຖິງການບໍລິການພື້ນຖານເຊັ່ນ ການສຶກສາ, ສາທາລະນະສຸກ, ອາຫານ, ການຊ່ວຍເຫຼືອດ້ານຈິດໃຈ-ສັງຄົມ, ທີ່ພັກ, ການສຶກສາ, ແລະ ກິດຈະກໍາສັງສັນຕ່າງໆ;
- ການສ້າງຕັ້ງກົນໄກການຕາມຫາຄອບຄົວ ແລະ ການເຕົ້າໂຮມຄອບຄົວໃຫ້ໄດ້ມາຢູ່ຮ່ວມກັນຄືນໃໝ່;
- ການລະບຸຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການສົ່ງຕໍ່ເຂົາເຈົ້າໄປຍັງຈຸດບໍລິການໃຫ້ຄວາມຊ່ວຍເຫຼືອດ້ານຕ່າງໆ;
- ການສ້າງກົນໄກການສົ່ງຕໍ່ໄປຍັງຜູ້ມີສ່ວນຮ່ວມພາກສ່ວນອື່ນໆ;
- ການປ້ອງກັນການເຂົ້າໄປຢູ່ໃນກຸ່ມກອງກໍາລັງປະກອບອາວຸດຜ່ານການສຶກສາ ແລະ ການຝຶກອົບຮົມເພື່ອສ້າງຄວາມທົນທານໃຫ້ແກ່ເດັກນ້ອຍ.

## ລັດ

### *ໂຄງສ້າງການຄຸ້ມຄອງວິກິດ*

ບັນດາລັດອາດພິຈາລະນາຈັດຕັ້ງປະຕິບັດໂຄງສ້າງທີ່ກວມເອົາກິດຈະກໍາສຸກເສີນຫຼັກໆ ທີ່ຍັງບໍ່ທັນໄດ້ລວມເຂົ້າໃນແຜນ ແລະ ຂໍ້ຕົກລົງທີ່ມີຢູ່ດັ່ງນີ້:

- ການລະບຸຢ່າງຈະແຈ້ງ ຈຸດການຕິດຕໍ່ບ່ອນດຽວລະດັບຊາດ ແລະ ທ້ອງຖິ່ນ ແລະ ສາຍບັນຊາການອອກຄໍາສັ່ງ ແລະ ການຕັດສິນໃຈວ່າຜູ້ໃດມີອໍານາດ;
- ການເລີ່ມຕົ້ນ ໂຄງສ້າງການປະສານງານລະຫວ່າງອົງການ ຫຼື ລະຫວ່າງກະຊວງ/ກົມກອງ;
- ການສ້າງໂຕະບໍລິການຂໍ້ມູນ ແລະ ສູນປະສານງານ;

- ການພົວພັນ-ຮ່ວມມືກັບຜູ້ສະໜອງການບໍລິການລວມທັງໃນຂັ້ນທ້ອງຖິ່ນເມື່ອຕ້ອງການໆບໍລິການ ຫຼື ຄາດການວ່າຈະມີຄວາມຕ້ອງການ;
- ການລະບຸ ແລະ ການສົ່ງຄະນະຮັບມືກັບໄພພິບັດແບບວ່ອງໄວ ແລະ ມີຄວາມຊໍານິຊໍານານຫຼາກຫຼາຍ.

*ການປະສານງານລະຫວ່າງກະຊວງ, ລະຫວ່າງໜ່ວຍງານ ແລະ ລະຫວ່າງຜູ້ມີສ່ວນຮ່ວມຫຼາຍຝ່າຍ*

ການປະຕິບັດງານທີ່ມີການປະສານງານກັນເປັນຢ່າງດີ ຈະສົ່ງເສີມຄວາມກົມກຽວ ແລະ ຄວາມສົມບູນຂອງການຮັບມືກັບພາວະສຸກເສີນສໍາລັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຮັບປະກັນການໝູນໃຊ້ຊັບພະຍາກອນ, ຄວາມອາດສາມາດ ແລະ ຈຸດແຂງໃຫ້ເກີດປະໂຫຍດສູງສຸດ. ການປະສານງານລະຫວ່າງກະຊວງ, ໜ່ວຍງານ ແລະ ຜູ້ມີສ່ວນຮ່ວມຫຼາຍຝ່າຍ ຈະອໍານວຍຄວາມສະດວກໃຫ້ແກ່ການ ຮັບມືກັບພາວະວິກິດຢ່າງມີແຜນ ແລະ ຢ່າງທັນການ. ປັດໄຈທີ່ຕ້ອງພິຈາລະນາລວມມີ:

- ຈະໃຫ້ຜູ້ມີສ່ວນຮ່ວມໃດມີສ່ວນຮ່ວມ—ກະຊວງ ແລະ ກົມກອງແຫ່ງຊາດ ເຊັ່ນ ກະຊວງການຕ່າງປະເທດ, ໜ່ວຍງານກວດກາຄົນເຂົ້າເມືອງ, ການບໍລິການກົງສຸນ, ການກະກຽມຄວາມພ້ອມ ແລະ ການຮັບມືກັບພາວະສຸກເສີນ, ເຈົ້າໜ້າທີ່ທ້ອງຖິ່ນ, ສະຖາບັນລັດ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມທີ່ມີໜ້າທີ່-ອໍານາດ, ຄວາມຊໍານິຊໍານານ ແລະ ຄວາມອາດສາມາດໃນການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ;
- ເຈົ້າໜ້າທີ່ຜູ້ມີອໍານາດຕັດສິນໃຈ;
- ລະບຽບຂັ້ນຕອນການດໍາເນີນງານ ລວມທັງ ການແລກປ່ຽນຂໍ້ມູນຂ່າວສານ;
- ກົນໄກ, ຄວາມສະໝໍ່າສະເໝີ ແລະ ການບໍລິຫານຈັດການກອງປະຊຸມ;
- ກົນໄກ, ຄວາມສະໝໍ່າສະເໝີ ແລະ ການບໍລິຫານຈັດການ ການຮັບມື-ການຕອບສະໜອງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ.

## ລັດປາຍທາງ

*ການແຍກການບັງຄັບໃຊ້ລະບຽບກົດໝາຍການເຂົ້າເມືອງ ອອກຈາກ ການເຂົ້າເຖິງການບໍລິການຊ່ວຍເຫຼືອດ້ານມະນຸດສະທໍາ*

ຜູ້ເຄື່ອນຍ້າຍຖິ່ນຖານທີ່ເຂົ້າເມືອງແບບບໍ່ໄດ້ລົງທະບຽນ ຫຼື ຜູ້ທີ່ບໍ່ເຊື່ອໃຈເຈົ້າໜ້າທີ່ ອາດບໍ່ຍິນດີທີ່ຈະເຂົ້າເຖິງ ການຊ່ວຍເຫຼືອຊີວິດທີ່ມີຢູ່ ຍ້ອນຢ້ານການບັງຄັບໃຊ້ກົດໝາຍຄົນເຂົ້າເມືອງ, ການກັກຂັງ ແລະ ການສົ່ງໂຕກັບປະເທດຂອງຕົນ. ການຮັບປະກັນການເຂົ້າເຖິງການຊ່ວຍເຫຼືອຊີວິດແບບບໍ່ມີການຈໍາແນກ-ເລືອກປະຕິບັດໃນໄລຍະສຸກເສີນຂອງເຫດການວິກິດນັ້ນມັນຈະຮຽກຮ້ອງໃຫ້ເຈົ້າໜ້າທີ່ແຍກ ການຊ່ວຍເຫຼືອສຸກເສີນອອກຈາກ ການບັງຄັບໃຊ້ກົດໝາຍການເຂົ້າເມືອງ ລວມທັງວິທີການດັ່ງນີ້:

- ການເຜີຍແຜ່ການແຈ້ງການບໍລິການສາທາລະນະຊົນ ແຍກອອກຈາກ ການບັງຄັບໃຊ້ກົດໝາຍການເຂົ້າເມືອງ ແລະຜູ້ຮັບມືກັບພາວະສຸກເສີນ ໂດຍຊີ້ແຈງວ່າ: ຜູ້ເຄື່ອນຍ້າຍຖິ່ນຖານຄວນຍົກຍ້າຍ ຫຼື ອົບພະຍົບໄປບ່ອນທີ່ປອດໄພ ແລະ ເຈົ້າໜ້າທີ່ຈະຖືການຊ່ວຍເຫຼືອຊີວິດເປັນບູລິມະສິດ ແລະ ຈະຫຼີກເວັ້ນຈາກການກວດກາສະຖານະການເຂົ້າເມືອງ ແລະ ດໍາເນີນກິດຈະກໍາບັງຄັບໃຊ້ກົດໝາຍການເຂົ້າເມືອງລວມທັງ ການກັກຂັງ ແລະ ການສົ່ງຕົວກັບປະເທດ ໃນໄລຍະສຸກເສີນຂອງເຫດການວິກິດ;
- ການຮ່ວມມືກັບອົງການຈັດຕັ້ງສັງຄົມລວມທັງ ອົງການທີ່ຊ່ວຍເຫຼືອ-ແນະນໍາຜູ້ເຄື່ອນຍ້າຍຖິ່ນຖານ ເພື່ອຂະຫຍາຍ ແລະ ເພີ່ມຄວາມໜ້າເຊື່ອຖືຂອງຂໍ້ຄວາມເຫຼົ່ານີ້;
- ຈໍາກັດເງື່ອນໄຂໃນການສະແດງຫຼັກການການຢັ້ງຢືນຕົວຕົນ-ອັດຕະລັກຢູ່ໃນ ສະຖານທີ່ພັກ ຫຼື ເມື່ອໃຫ້ການຊ່ວຍເຫຼືອສຸກເສີນເຊັ່ນ ອາຫານ, ນໍ້າ, ການຄົ້ນຫາ ແລະ ກູ້ໄພ ຫຼື ການບໍລິການຮັກສາປິ່ນປົວສຸຂະພາບແບບສຸກເສີນ;

- ການຜ່ອນຜັນເງື່ອນໄຂກ່ຽວກັບການປະຕິບັດລະບຽບການ ແລະ ການປະຕິບັດໃຫ້ສອດຄ່ອງກັບເງື່ອນໄຂ

ອື່ນໆດ້ານການເຂົ້າເມືອງໃນໄລຍະພາວະສຸກເສີນ;

- ການສ້າງຈຸດປະສານງານຫຼັກເພື່ອໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງອື່ນໆ ລາຍງານສິ່ງທ້າທາຍໃນການຈັດຕັ້ງປະຕິບັດວຽກງານ ເພື່ອເພີ່ມຄວາມເປັນເຈົ້າການໃຫ້ເຂັ້ມແຂງຂຶ້ນ ແລະ ເພື່ອສ້າງຄວາມໄວ້ເນື້ອເຊື່ອໃຈ.

## ລັດຕົ້ນທາງ

*ການບໍລິການກົງສຸນແບບສຸກເສີນ*

ມາດຕະການເພື່ອອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງການບໍລິການກົງສຸນແບບສຸກເສີນລວມມີ:

- ການຮັບປະກັນວ່າສະຖານກົງສຸນ ຢູ່ໃນ ລັດຕົ້ນທາງ ແລະ ລັດທາງຜ່ານຈະຍັງຈະສືບຕໍ່ເປີດ ແລະ ໃຫ້ເວລາການບໍລິການໃຫ້ດົນເທົ່າທີ່ຈະດົນໄດ້;
- ການສົ່ງທີມງານກົງສຸນເພີ່ມຕື່ມໄປຍັງພື້ນທີ່ທາງຜ່ານ, ຊາຍແດນ ແລະ ສະຖານທີ່ໆມີພົນລະເມືອງຈຳນວນຫຼາຍ;
- ການເລີ່ມຕົ້ນເຮັດຂໍ້ຕົກລົງດ້ານກົງສຸນກັບລັດອື່ນໆ ທີ່ຈະສາມາດເຮັດໜ້າທີ່ກົງສຸນໃນກໍລະນີທີ່ບໍ່ມີຜູ້ຕາງໜ້າຢູ່ໃນລັດປາຍທາງ ຫຼື ລັດທາງຜ່ານ;
- ສ້າງຕັ້ງຄະນະຮັບມືແບບໄວທີ່ມີຄວາມຊຳນິຊຳນານໃນເຫດການວິກິດ ແລະ ມີຄວາມອາດສາມາດໃນການອຳນວຍຄວາມສະດວກໃຫ້ແກ່ການປົກປ້ອງ ແລະ ການອົບພະຍົບຂອງພົນລະເມືອງ;
- ການໃຫ້ການຊ່ວຍເຫຼືອແບບທັນທີ ດ້ວຍຕົນເອງ ຫຼື ໂດຍປະສານງານກັບອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງສາກົນ ລວມທັງ ການສະໜອງບ່ອນພັກຊົ່ວຄາວ (ລວມທັງພາຍໃນພື້ນທີ່-ສິ່ງອຳນວຍຄວາມສະດວກຂອງກົງສຸນ), ອາຫານ, ນໍ້າ, ຊຸດເຄື່ອງມືສຸກເສີນ, ແລະ ການບໍລິການແປພາສາ.

*ຄະນະຮັບມືຮີບດ່ວນ ຫຼື ຄະນະຮັບມືກັບວິກິດ*

ໃນໄລຍະວິກິດ, ລັດຕົ້ນທາງ ອາດຈຳເປັນຕ້ອງເພີ່ມຄວາມອາດສາມາດຮັບມືຂອງຕົນຢູ່ໃນລັດປາຍທາງ ແລະ ລັດທາງຜ່ານເພື່ອຍົກສູງຄວາມສາມາດຂອງຕົນໃນການຊ່ວຍເຫຼືອພົນລະເມືອງຂອງຕົນ. ວິທີການໜຶ່ງທີ່ຈະເຮັດໄດ້ແມ່ນດ້ວຍການສົ່ງຊ່ຽວຊານໃນຫຼາຍໜ້າທີ່ໆໄດ້ຮັບການຝຶກອົບຮົມເປັນຢ່າງດີ. ປັດໄຈທີ່ຕ້ອງພິຈາລະນາລວມມີ:

- ຄວາມກວ້າງຂວາງຂອງການບໍລິການທີ່ພົນລະເມືອງອາດຈະຕ້ອງການ ເຊິ່ງລວມທັງ ການບໍລິການທີ່ກ່ຽວຂອງກັບກົງສຸນ, ການແພດ, ການຂົນສົ່ງ, ການອົບພະຍົບ, ເອກະສານການເດີນທາງ ແລະ ເອກະສານການລະບຸຕົວຕົນ-ອັດຕະລັກ ແລະ ການລະບຸຊາກສົບຜູ້ເສຍຊີວິດ;
- ທັກສະ, ຄວາມຮູ້ ແລະ ຄວາມອາດສາມາດທີ່ຈຳເປັນເພື່ອຊ່ວຍເຫຼືອພົນລະເມືອງ;
- ສິດອຳນາດຂອງສະຖາບັນ ແລະ ການຕັດສິນໃຈທີ່ຈຳເປັນເພື່ອການຮັບມືຢ່າງທັນການ;
- ສະຖານທີ່ທາງພູມສາດທີ່ຕ້ອງສົ່ງຄະນະໄປຍັງ ລັດຕົ້ນທາງ, ຈຸດທາງຜ່ານ (ລວມທັງເດີ່ນບິນຂາອອກ ແລະ ຂາເຂົ້າ), ພື້ນທີ່ອົບພະຍົບ, ດ່ານຊາຍແດນລະຫວ່າງລັດປາຍທາງ ແລະ ລັດທາງຜ່ານ, ແຄ້ມ, ແລະ ຈຸດເຕົ້າໂຮມຫຼັກໆອື່ນໆ.

*ແຜນຮອງຮັບ, ຕາໜ່າງປົກປ້ອງ ແລະ ການຊ່ວຍເຫຼືອໃຫ້ແກ່ພົນລະເມືອງທີ່ຍັງຢູ່ລັດປາຍທາງ*

ໃນບາງກໍລະນີ, ພົນລະເມືອງອາດຈະຕັດສິນໃຈອາໃສຢູ່ລັດປາຍທາງ. ລັດຕົ້ນທາງສາມາດວາງມາດຕະການເພື່ອປົກປ້ອງ ແລະ ຊ່ວຍເຫຼືອພົນລະເມືອງຂອງຕົນທີ່ຍັງຈະສືບຕໍ່ຢູ່ລັດປາຍທາງດ້ວຍວິທີດັ່ງນີ້:

- ການອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງເຈົ້າໜ້າທີ່ ແລະ ການບໍລິການກົງສຸນ;

- ການສ້າງກົນໄກທີ່ອະນຸຍາດໃຫ້ຕິດຕໍ່ກັບພົນລະເມືອງຂອງຕົນຢ່າງເປັນປະຈຳ (ເຊັ່ນ: ຜ່ານສາຍໂທດ່ວນ ຫຼື ສູນບໍລິການທາງໂທລະສັບ ລວມທັງການສົ່ງຕໍ່ເຂົາເຈົ້າໄປຍັງຜູ້ສະໜອງການບໍລິການເມື່ອເຂົາເຈົ້າຮ້ອງຂໍຄວາມຊ່ວຍເຫຼືອ);
- ການອຳນວຍຄວາມສະດວກໃຫ້ແກ່ການສື່ສານລະຫວ່າງພົນລະເມືອງ ແລະ ຄອບຄົວຂອງເຂົາເຈົ້າຢູ່ໃນລັດຕົ້ນທາງ;
- ການປະສານງານກັບລັດປາຍທາງ ແລະ ຜູ້ຈ້າງງານເພື່ອຮັບປະກັນວ່າ ພົນລະເມືອງຂອງຕົນຈະໄດ້ຮັບຂໍ້ມູນກ່ຽວກັບການຊ່ວຍເຫຼືອ ແລະ ສາມາດຕັ້ງຄຳຖາມກັບຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ;
- ການສະໜອງ ຫຼື ການອຸປະຖຳ ສະຖານທີ່ພັກຊົ່ວຄາວ, ການເຂົ້າເຖິງການຊ່ວຍເຫຼືອສຸກເສີນ ແລະ ການຊ່ວຍເຫຼືອ ແລະ ໃຫ້ຄຳປຶກສາດ້ານຈິດໃຈ-ສັງຄົມ;
- ການພົວພັນກັບຜູ້ມີສ່ວນຮ່ວມພາກອົງການຈັດຕັ້ງສັງຄົມທີ່ກ່ຽວຂ້ອງ.

## ລັດທາງຜ່ານ

*ການຊ່ວຍເຫຼືອຢູ່ຊາຍແດນ*

ໃນບາງເຫດການວິກິດ, ທາງເລືອກທີ່ດີທີ່ສຸດ ຫຼື ທາງເລືອກດຽວຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການຂໍການຊ່ວຍເຫຼືອເພື່ອຮັກສາຊີວິດ ອາດຈະແມ່ນການຂ້າມຊາຍແດນໄປຍັງລັດເພື່ອນບ້ານ. ມາດຕະການທີ່ລັດທາງຜ່ານສາມາດນຳໃຊ້ເພື່ອໃຫ້ການບໍລິການແກ່ຜູ້ເຄື່ອນຍ້າຍຖິ່ນຖານ ທີ່ຈະເດີນທາງມາຈາກລັດປາຍທາງລວມມີ:

- ການຈັດການໆຂົນສົ່ງຈາກຊາຍແດນ ຫຼື ເຂດຫ່າງໄກສອກຫຼີກໄປຍັງ ນະຄອນຫຼວງ, ເດີ່ນບິນ ຫຼື ສະຖານທີ່ພັກ-ລີ້ໄພ;
- ການສ້າງສູນ-ສິ່ງອຳນວຍຄວາມສະດວກໃນການຕ້ອນຮັບ ແລະ ການເດີນທາງຜ່ານເພື່ອລະບຸ ແລະ ລົງທະບຽນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຈັດສະຖານທີ່ພັກ, ອາຫານ ແລະ ການຮັກສາທາງການແພດສຸກເສີນ ສຳລັບຜູ້ເຄື່ອນຍ້າຍຖິ່ນຖານ;
- ການຈັດຫາໃຫ້ ຫຼື ການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານໄປຍັງການບໍລິການຕ່າງໆ ລວມທັງ ການບໍລິການກົງສຸນ, ບ່ອນພັກ, ອາຫານ, ການຮັກສາສຸຂະພາບ, ການໃຫ້ຄຳປຶກສາ ແລະ ການສຶກສາທີ່ເໝາະສົມ;
- ການປະສານງານກັບຄະນະກົງສຸນທີ່ກ່ຽວຂ້ອງຢູ່ໃນລັດທາງຜ່ານ ເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການຝຶກອົບຮົມ ຫຼື ການຊ່ວຍເຫຼືອໃຫ້ແກ່ເຈົ້າໜ້າທີ່ຊາຍແດນ ໃນການລະບຸຜູ້ລີ້ໄພ, ຜູ້ຊອກຫາບ່ອນລີ້ໄພ, ບຸກຄົນທີ່ບໍ່ມີສັນຊາດ, ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜູ້ອື່ນໆທີ່ຕ້ອງການຄວາມຊ່ວຍເຫຼືອສະເພາະ, ແລະ ການສົ່ງຕໍ່ເຂົາເຈົ້າໄປຍັງເຈົ້າໜ້າທີ່ ຫຼື ຜູ້ມີສ່ວນຮ່ວມຕາມຄວາມເໝາະສົມ.

## ຜູ້ມີສ່ວນຮ່ວມພາກເອກະຊົນ

*ການສະໜອງການຊ່ວຍເຫຼືອສຸກເສີນ*

ຜູ້ຈ້າງງານສາມາດສະໜອງການຊ່ວຍເຫຼືອຢ່າງທັນການໃຫ້ກັບຜູ້ເຄື່ອນຍ້າຍຖິ່ນຖານບໍ່ວ່າຈະດ້ວຍຕົນເອງ ຫຼື ໂດຍການປະສານງານກັບຜູ້ຈ້າງງານ, ອົງການຈັດຫາແຮງງານ, ເຈົ້າໜ້າທີ່ກົງສຸນ ຫຼື ຜູ້ມີສ່ວນຮ່ວມອື່ນໆ ເຊິ່ງອາດລວມມີ:

- ການຫາທີ່ຢູ່ຂອງແຮງງານເຄື່ອນຍ້າຍ ແລະ ລະບຸສະຖານະການສະເພາະຂອງເຂົາເຈົ້າ;
- ການສະໜອງການຂົນສົ່ງ, ສະຖານທີ່ພັກ, ການຮັກສາສຸຂະພາບ, ຄວາມປອດໄພ ແລະ ຊ່ວຍເຫຼືອດ້ານການສື່ສານເພື່ອຮັບປະກັນຄວາມປອດໄພ, ສຸຂະພາບ ແລະ ຄວາມເປັນຢູ່ທີ່ດີ ຂອງແຮງງານເຄື່ອນຍ້າຍ ແລະ ຄອບຄົວຂອງເຂົາເຈົ້າ;
- ການພົວພັນກັບຜູ້ນຳພາຄະນະແຮງງານເຄື່ອນຍ້າຍເພື່ອ ຮັບປະກັນວ່າ ແຜນການສຸກເສີນ ແລະ ແຜນການສຳຮອງຈະໄດ້ຖືກຈັດຕັ້ງປະຕິບັດໂດຍຄຳນຶງເຖິງຄວາມຕ້ອງການຂອງແຮງງານເຄື່ອນຍ້າຍ.

## ອົງການຈັດຕັ້ງສາກົນ

### *ການລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນ ເຄື່ອງມືການປະເມີນຄວາມຕ້ອງການ ລະຫວ່າງໜ່ວຍງານ*

ການປະເມີນການຊ່ວຍເຫຼືອດ້ານມະນຸດສະທຳຮ່ວມກັນໃນພາວະວິກິດ ຈະຕ້ອງພິຈາລະນາປັດໄຈທີ່ກະທົບປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານຢ່າງເປັນລະບົບ ແລະ ຜູ້ເຄື່ອນຍ້າຍຖິ່ນຖານກໍຄວນຈະຖືກລວມເຂົ້າໃນຂໍ້ມູນຂອງທຸກໆ ຄູ່ມືການປະເມີນຜົນທີ່ກ່ຽວຂ້ອງ. ຈາກການລວບລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນຂໍ້ມູນການດຳເນີນງານທົ່ວໄປ ແລະ ຕົວຊີ້ວັດຂອງຂະແໜງການ, ການປະເມີນຜົນຕ່າງໆ ຈະຕ້ອງຄຳນຶງເຖິງຄວາມຕ້ອງການ ແລະ ຄວາມບອບບາງສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຈະສ້າງເປັນຫຼັກຖານ ແລະ ຂໍ້ມູນພື້ນຖານສຳລັບການວາງແຜນ ແລະ ການຕິດຕາມ ວຽກງານຮັບມືກັບວິກິດ ແລະ ການຟື້ນຟູ. ຊຸມຊົນທີ່ໄດ້ຮັບຜົນກະທົບ ລວມທັງຜູ້ເຄື່ອນຍ້າຍຖິ່ນຖານຄວນໄດ້ຮັບໂອກາດໃນການເຂົ້າຮ່ວມການປະເມີນຜົນດັ່ງກ່າວ. ເຄື່ອງມື ແລະ ຜະລິດຕະພັນລະຫວ່າງໜ່ວຍງານ-ອົງການທີ່ກ່ຽວຂ້ອງ ກໍຈະໄດ້ຮັບປະໂຫຍດຈາກການລວບລວມເອົາຜູ້ເຄື່ອນຍ້າຍຖິ່ນຖານເຂົ້າເປັນກຸ່ມສະເພາະ ຂອງປະຊາກອນໃນຂອບເຂດກວ້າງຂວາງທີ່ໄດ້ຮັບຜົນກະທົບເຊັ່ນ:

- ການປະເມີນເບື້ອງຕົ້ນ ເພື່ອການລະບຸລວມໆ ພາບເຫດການທີ່ສາມາດເປັນໄປໄດ້ໃນພາຍໜ້າ;
- ການປະເມີນເບື້ອງຕົ້ນແບບໄວຂອງຫຼາຍກຸ່ມ/ຫຼາຍຂະແໜງການ ແລະ ພາບລວມກ່ຽວກັບຄວາມຕ້ອງການໆຊ່ວຍເຫຼືອດ້ານມະນຸດສະທຳ;
- ການປະເມີນຄວາມຕ້ອງການແບບລົງເລິກຂອງ ກຸ່ມດຽວ ຫຼື ຫຼາຍຂະແໜງການຮ່ວມກັນ;
- ການປະເມີນຄວາມເສຍຫາຍ ແລະ ການສູນເສຍ ລວມທັງ ການປະເມີນຄວາມຕ້ອງການພາຍຫຼັງວິກິດ ແລະ ການປະເມີນຄວາມຕ້ອງການພາຍຫຼັງຄວາມຂັດແຍ່ງ.

### *ຈຸດທາງຜ່ານ*

ອົງການຈັດຕັ້ງສາກົນສາມາດສະໜັບສະໜູນລັດໃນການສ້າງ ແລະ ຄຸ້ມຄອງຈຸດທາງຜ່ານ ແລະ ສະໜອງບ່ອນພັກ ຊົ່ວຄາວສຳລັບຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງການຕັ້ງແຄ້ມ ເຊິ່ງອາດຈະມີຄວາມສຳຄັນເປັນພິເສດໃນກໍລະນີການອົບພະຍົບ.

### *ສູນຕ້ອນຮັບຜູ້ເຄື່ອນຍ້າຍຖິ່ນຖານຢູ່ຊາຍແດນ ແລະ ລັດທາງຜ່ານ*

ສູນຕ້ອນຮັບຜູ້ເຄື່ອນຍ້າຍຖິ່ນຖານຢູ່ຊາຍແດນ ແລະ ລັດທາງຜ່ານ ສາມາດສະໜອງການບໍລິການຊ່ວຍເຫຼືອຊີວິດໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ຫຼົບໜີວິກິດການ ແລະ ຂ້າມດ່ານຊາຍແດນສາກົນ. ການບໍລິການຕ່າງໆອາດລວມມີ:

- ບ່ອນພັກ-ບ່ອນລີ້ໄພສຸກເສີນ;
- ຂໍ້ມູນ;
- ອາຫານ ແລະ ເຄື່ອງຂອງທີ່ບໍ່ແມ່ນອາຫານ;
- ການຮັກສາທາງການແພດ ແລະ ການຊ່ວຍເຫຼືອດ້ານຈິດໃຈ-ສັງຄົມ;
- ການຊ່ວຍເຫຼືອດ້ານການຂົນສົ່ງໄປຍັງຈຸດໝາຍຕໍ່ໄປ;
- ການຊ່ວຍເຫຼືອດ້ານເອກະສານ ໂດຍການປະສານງານຢ່າງໄກ້ຊິດກັບການບໍລິການກົງສຸນ;
- ການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ;
- ການຊ່ວຍເຫຼືອໃນການຕາມຫາຄອບຄົວ ແລະ ການເຕົ້າໂຮມໃຫ້ຄອບຄົວໄດ້ມາຢູ່ຮ່ວມກັນຄືນໃໝ່.

*ພາກປະຕິບັດກ່ຽວກັບຈຸດທາງຜ່ານ ແລະ ສູນຕ້ອນຮັບຜູ້ເຄື່ອນຍ້າຍຖິ່ນຖານທີ່ກ່າວມາຂ້າງເທິງສຳລັບອົງການຈັດຕັ້ງສາກົນ ແມ່ນຍັງຈະສາມາດນຳໃຊ້ກັບອົງການຈັດຕັ້ງສັງຄົມ.*

### *ການມີສ່ວນຮ່ວມຂອງອົງການຈັດຕັ້ງສັງຄົມ ໃນການຮັບມືຊ່ວຍເຫຼືອດ້ານມະນຸດສະທຳ*

ການປະຕິບັດການທີ່ອົງການຈັດຕັ້ງສັງຄົມສາມາດດຳເນີນງານເພື່ອຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານໃນໄລຍະເກີດວິກິດ ລວມມີ:

- ການຮັບປະກັນວ່າຂໍ້ມູນກ່ຽວກັບການຊ່ວຍເຫຼືອແມ່ນໄດ້ ນຳສົ່ງໄປເຖິງກຸ່ມຜູ້ເຄື່ອນຍ້າຍຖິ່ນຖານ, ອົງການທີ່ມີຄວາມເຊື່ອທາງສາສະໜາ, ຜູ້ນຳພາທ້ອງຖິ່ນ ແລະ ຜູ້ອື່ນໆທີ່ມີສາຍພົວພັນກັບຜູ້ເຄື່ອນຍ້າຍຖິ່ນຖານ;
- ການເຂົ້າເຖິງຜູ້ມີສ່ວນຮ່ວມໃນທ້ອງຖິ່ນດຽວກັນເຫຼົ່ານີ້ກໍແມ່ນເພື່ອລະບຸຊ່ອງຫວ່າງໃນການຊ່ວຍເຫຼືອ ຫຼື ການຊ່ວຍເຫຼືອແບບທົ່ວເຖິງ;
- ການແບ່ງປັນຂໍ້ມູນກັບ ຜູ້ມີສ່ວນຮ່ວມໃນການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ຜູ້ຮັບມືກັບພາວະສຸກເສີນ ກ່ຽວກັບ ປະຊາກອນຜູ້ເຄື່ອນຍ້າຍຖິ່ນຖານທ້ອງຖິ່ນ ແລະ ຊ່ອງຫວ່າງໃນການຊ່ວຍເຫຼືອ;
- ການໃຫ້ຜູ້ເຄື່ອນຍ້າຍມີສ່ວນຮ່ວມໃນການໃຫ້ຄວາມຊ່ວຍເຫຼືອ ໃນຖານະອາສາສະໝັກ ຫຼື ພະນັກງານ ກໍຍ້ອນວ່າເຂົາເຈົ້າສາມາດເພີ່ມການເຂົ້າຫາ ແລະ ການຊ່ວຍເຫຼືອແບບທົ່ວເຖິງ ກໍຄື ຄວາມສາມາດຈະຮັບປະກັນວ່າການຊ່ວຍເຫຼືອທີ່ມອບໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານນັ້ນ ແມ່ນຖືກຕ້ອງເໝາະສົມທາງດ້ານພາສາ ແລະ ວັດທະນະທຳ;
- ການນຳໃຊ້ຄວາມຊຳນິຊຳນານ, ທັກສະ ແລະ ຄວາມອາດສາມາດໃນການເຂົ້າຫາເພື່ອຊ່ວຍເຫຼືອໂດຍ ອົງການຈັດຕັ້ງສັງຄົມຕ່າງໆ ໃນການຊ່ວຍເຫຼືອທີ່ຈະປັບໃຫ້ເຂົ້າກັບຄວາມຕ້ອງການສະເພາະຂອງກຸ່ມຜູ້ເຄື່ອນຍ້າຍຖິ່ນຖານ ລວມທັງ ຜູ້ເຄື່ອນຍ້າຍຖິ່ນຖານແມ່ຍິງທີ່ເປັນແຮງງານທີ່ເຮັດວຽກເປັນຄົນຮັບໃຊ້, ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜູ້ເຄື່ອນຍ້າຍຖິ່ນຖານພິການ;
- ການສ້າງພື້ນທີ່ປອດໄພ ແລະ ສູນສຳລັບຜູ້ເຄື່ອນຍ້າຍໂດຍລວມ ແລະ ໂດຍສະເພາະຜູ້ເຄື່ອນຍ້າຍຖິ່ນຖານທີ່ບອບບາງ ເພື່ອໃຫ້ສາມາດດັດປັບຢ່າງຖືກຕ້ອງ ແລະ ໃຫ້ການຊ່ວຍເຫຼືອດ້ວຍຄວາມລະອຽດອ່ອນ ແລະ ຢ່າງປອດໄພ;
- ການຊ່ວຍເຫຼືອກ່ຽວກັບການຕາມຫາຄອບຄົວ, ການເຕົ້າໂຮມໃຫ້ຄອບຄົວໄດ້ມາຢູ່ຮ່ວມກັນຄືນ ແລະ ການລະບຸຊາກສົບຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ເສຍຊີວິດ.

### *ການມີສ່ວນຮ່ວມຂອງຜູ້ພັດຖິ່ນ ໃນການຮັບມືຊ່ວຍເຫຼືອດ້ານມະນຸດສະທຳ*

ກຸ່ມຜູ້ພັດຖິ່ນສາມາດເຂົ້າເຖິງຜູ້ເຄື່ອນຍ້າຍຖິ່ນຖານ, ເຄືອຂ່າຍ, ສາຍພົວພັນທີ່ມີມາແຕ່ກ່ອນບົນພື້ນຖານຄວາມໄວ້ເນື້ອເຊື່ອໃຈ ແລະ ຄວາມຈົງຮັກພັກດີ, ແລະ ມີຄວາມສົນໃຈຢ່າງຍິ່ງໃນການປົກປ້ອງ, ການຊ່ວຍເຫຼືອແກ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ບອບບາງ-ສ່ຽງ. ວິທີການທີ່ຜູ້ພັດຖິ່ນ ລວມທັງອົງການຜູ້ພັດຖິ່ນ ຈະສາມາດມີສ່ວນຮ່ວມໃນການຮັບມືລວມມີ:

- ການສ້າງກອງທຶນເພື່ອໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳ ເຊັ່ນງານລະດົມທຶນ ແລະ ການປະກອບສ່ວນແບບສະໝັກໃຈ;
- ການນຳໃຊ້ສາຍພົວພັນທີ່ມີມາກ່ອນບົນພື້ນຖານຄວາມໄວ້ເນື້ອເຊື່ອໃຈ ກັບຜູ້ເຄື່ອນຍ້າຍຖິ່ນຖານ ເພື່ອເຈລະຈາ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ຮັບມືກັບພາວະວິກິດໃນການເຂົ້າເຖິງກຸ່ມຜູ້ເຄື່ອນຍ້າຍຖິ່ນຖານ ແລະ ປະເມີນຄວາມຕ້ອງການຂອງເຂົາເຈົ້າ;
- ການເຮັດໜ້າທີ່ເປັນບຸກຄົນກາງລະຫວ່າງຊຸມຊົນຜູ້ເຄື່ອນຍ້າຍຖິ່ນຖານ ແລະ ເຈົ້າໜ້າທີ່ເມື່ອຈຳເປັນ ໂດຍສະເພາະສຳລັບກຸ່ມທີ່ອາດບໍ່ເຊື່ອໃຈຜູ້ມີສ່ວນຮ່ວມຈາກພາກລັດ;
- ການສະໜອງການບໍລິການໂດຍກົງອີງຕາມຄວາມຊຳນິຊຳນານ ແລະ ຄວາມອາດສາມາດສະເພາະຂອງຕົນ ລວມທັງການບໍລິການແປພາສາ, ການເຊື່ອມໂຍງຊຸມຊົນທີ່ມີຫຼາກຫຼາຍວັດທະນະທຳເຂົ້າໃນສັງຄົມ; ແລະ ການປະກອບສ່ວນດ້ານວັດຖຸປັດໄຈຕ່າງໆ;
- ການເປັນອາສາສະໝັກເຂົ້າຮ່ວມກັບຜູ້ມີສ່ວນຮ່ວມອື່ນໆໃນການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານຢູ່ໃນລັດປາຍທາງ.

# ວາງລະບຽບຂັ້ນຕອນການນຳສົ່ງຜູ້ເຄື່ອນຍ້າຍຖິ່ນຖານໃຫ້ຊັດເຈນລະຫວ່າງຜູ້ມີສ່ວນຮ່ວມ

## ຜູ້ມີສ່ວນຮ່ວມຫຼາຍຝ່າຍ

### *ການລະບຸຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຕ້ອງການເປັນພິເສດ*

ການລະບຸຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຕ້ອງການເປັນພິເສດແມ່ນເງື່ອນໄຂເບື້ອງຕົ້ນກ່ອນທີ່ຈະເລີ່ມຕົ້ນລະບົບການສົ່ງຕໍ່. ຜູ້ເຄື່ອນຍ້າຍຖິ່ນຖານທີ່ອາດຕ້ອງການໆບໍລິການພິເສດລວມມີເດັກນ້ອຍ (ທີ່ອາດບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ), ແມ່ຍິງຖືພາ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ປ່ວຍໜັກ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ພິການ, ຜູ້ເຄື່ອນຍ້າຍຖິ່ນຖານສູງອາຍຸ, ຄົວເຮືອນທີ່ມີຫົວໜ້າຄອບຄົວຄົນດຽວ (ລ້ຽງດ່ຽວ), ຜູ້ຖືກເຄາະຮ້າຍຈາກການລ່ວງລະເມີດທາງເພດ ຫຼື ຄວາມຮຸນແຮງທີ່ມີພື້ນຖານທາງເພດ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຮູບແບບການຂູດຮີດອື່ນໆດ້ານຊົນເຜົ່າ, ເຊື້ອຊາດ, ສາສະໜາ ແລະ ກຸ່ມຄົນສ່ວນໜ້ອຍອື່ນໆ, ຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະການເຂົ້າເມືອງແບບບໍ່ໄດ້ລົງທະບຽນ ແລະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ຖືກກັກຂັງ. ການປະຕິບັດການຕໍ່ໄປນີ້ສາມາດຊ່ວຍລະບຸຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຕ້ອງການເປັນພິເສດ:

- ການສົ່ງຄະນະຊ່ຽວຊານທີ່ມີຄວາມຊໍານານງານ ແລະ ທັກສະດ້ານວິຊາການໄປຍັງລັດປາຍທາງ;
- ການມອບໝາຍໃຫ້ຜູ້ປະສານງານຫຼັກ ຫຼື ໜ່ວຍງານພາຍໃນອົງການເພື່ອແກ້ໄຂຄວາມຕ້ອງການໆຊ່ວຍເຫຼືອພິເສດ;
- ການດໍາເນີນການປະເມີນ ແລະ ການເກັບກໍາຂໍ້ມູນປະຫວັດຢູ່ສະຖານທີ່ສ່ຽງເຊັ່ນ ຈຸດທາງຜ່ານ ຫຼື ຈຸດກັກຕົວຊົ່ວຄາວສໍາລັບຜູ້ເຄື່ອນຍ້າຍຖິ່ນຖານໃນສະຖານະຄົນເຂົ້າເມືອງທີ່ບໍ່ໄດ້ລົງທະບຽນ, ບ່ອນເຮັດວຽກທີ່ບໍ່ເປັນທາງການ (ບໍ່ຢູ່ໃນລະບົບ), ແຄ້ມຜູ້ຖືກໄລ່ອອກຈາກບ່ອນພັກ, ສະຖານທີ່ພັກທີ່ບໍ່ເປັນທາງການ ຫຼື ສິ່ງອໍານວຍຄວາມສະດວກບໍລິການການຮັກສາປິ່ນປົວສຸຂະພາບທີ່ເປັນທາງການ ຫຼື ບໍ່ເປັນທາງການ;
- ການນໍາໃຊ້ເຄື່ອງມືການເກັບກໍາຂໍ້ມູນປະຫວັດແບບມີເປົ້າໝາຍ ແລະ ການປະເມີນຄວາມຕ້ອງການ;
- ການສ້າງຊ່ອງທາງການແບ່ງປັນຂໍ້ມູນກັບສາຍໂທດ່ວນ ແລະ ຂະບວນການ-ກົນໄກການຮ້ອງທຸກ;
- ການຝຶກອົບຮົມພະນັກງານຜູ້ທີ່ໃຫ້ການຊ່ວຍເຫຼືອໂດຍກົງໃຫ້ກັບບຸກຄົນ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບຈາກວິກິດ ລວມທັງ ບຸກຄະລາກອນຮັບມືກັບພາວະວິກິດ, ແພດໝໍ, ອາສາສະໝັກ, ຜູ້ຈັດການຜູ້ເຄື່ອນຍ້ານຖິ່ນຖານ, ຜູ້ຈັດການແຄ້ມ ແລະ ພະນັກງານທີ່ດໍາເນີນການປະເມີນ ຫຼື ເຮັດວຽກກ່ຽວກັບການສື່ສານ ແລະ ປູກຈິດສໍານຶກ.

### *ການສົ່ງຕໍ່ ຜູ້ລີ້ໄພ, ຜູ້ຊອກຫາບ່ອນລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດໄປຍັງ ກົນໄກ-ຂະບວນການໆປົກປ້ອງທີ່ກ່ຽວຂ້ອງ*

ຜູ້ລີ້ໄພ, ຜູ້ຊອກຫາບ່ອນລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດສ່ວນໃຫຍ່ຈະເຄື່ອນຍ້າຍໄປຕາມເສັ້ນທາງດຽວກັນກັບຜູ້ເຄື່ອນຍ້າຍຖິ່ນຖານ. ຜູ້ມີສ່ວນຮ່ວມຄວນສ້າງລະບຽບຂັ້ນຕອນການສົ່ງຕໍ່ຮ່ວມກັນກັບກົນໄກການປົກປ້ອງຜູ້ລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດລະດັບຊາດ ແລະ ສາກົນ. ເພື່ອຮັບປະກັນວ່າການສົ່ງຕໍ່ຈະມີປະສິດທິຜົນ, ປັດໄຈທີ່ຈະຕ້ອງພິຈາລະນາມີດັ່ງນີ້:

- ການກໍານົດສາຍພົວພັນລະຫວ່າງຜູ້ມີສ່ວນຮ່ວມທີ່ໃຫ້ການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ ແລະ ກົນໄກການຊອກຫາບ່ອນລີ້ໄພຂອງລັດທີ່ກ່ຽວຂ້ອງ ຜ່ານ ບົດບັນທຶກຄວາມເຂົ້າໃຈ ຫຼື ຖ້າເປັນໄປໄດ້ ລະບຽບຂັ້ນຕອນມາດຕະຖານດ້ານການດໍາເນີນງານ ຫຼື ການຈັດການກະກຽມແບບສະເພາະກິດໃຫ້ຫຼາຍຂຶ້ນ;
- ການມອບໝາຍຜູ້ປະສານງານຫຼັກໃນວຽກງານການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານເພື່ອຮັບປະກັນການສື່ສານທີ່ບໍ່ຂ້ອງຄາ;
- ການເຜີຍແຜ່ຂໍ້ມູນໃນຫຼາຍພາສາ, ການເຂົ້າເຖິງໄດ້ ແລະ ຜູ້ບໍ່ຮູ້ໜັງສືກໍສາມາດເຂົ້າໃຈກ່ຽວກັບລະບຽບຂັ້ນຕອນການຂໍຄວາມຊ່ວຍເຫຼືອໃນການລີ້ໄພ ຜ່ານແຜ່ນພັບ, ສື່ສັງຄົມອອນໄລນ໌ ຫຼື ການສື່ສານທາງວິທະຍຸ;
- ລະບຽບຂັ້ນຕອນການກັ່ນຕອງເພື່ອຮັບປະກັນການລະບຸຄວາມຕ້ອງການແບບວ່ອງໄວ. ການກັ່ນຕອງເບື້ອງຕົ້ນຮຽກຮ້ອງໃຫ້ມີການປະເມີນໂດຍທົ່ວໄປວ່າບຸກຄົນທີ່ຕ້ອງການຄວາມຊ່ວຍເຫຼືອນັ້ນ ຍັງຈະຕ້ອງການລີ້ໄພອີກ ຫຼື ບໍ່;

- ການຝຶກອົບຮົມແບບສຸກເສີນສໍາລັບຜູ້ຮັບມືກັບພາວະສຸກເສີນດ່ານທໍາອິດ (ກໍລະນີທີ່ບໍ່ໄດ້ໃຫ້ການຝຶກອົບຮົມດັ່ງກ່າວກ່ອນໜ້າເກີດວິກິດ) ລວມທັງການຝຶກອົບຮົມໃຫ້ແກ່ ເຈົ້າໜ້າທີ່ລັດຖະບານ, ອົງການຈັດຕັ້ງສາກົນ ຫຼື ອົງການຈັດຕັ້ງສັງຄົມທີ່ມີສິດອໍານາດກ່ຽວຂ້ອງ;
- ລະບຽບຂັ້ນຕອນເພື່ອສົ່ງຕໍ່ບຸກຄົນທີ່ບໍ່ມີສັນຊາດ ຜູ້ທີ່ບໍ່ສາມາດກັບຄືນໄປບ່ອນເກົ່າທີ່ຕົນຈາກມາ ໄປຍັງເຈົ້າໜ້າທີ່ແຫ່ງຊາດ ຫຼື ອົງການ UNHCR;
- ການຮັບຮອງນໍາໃຊ້ຫຼັກການການປົກປ້ອງເພື່ອຮັບປະກັນວ່າໄດ້ມີການຄໍານຶງເຖິງ ຜົນປະໂຫຍດສູງສຸດຂອງເດັກນ້ອຍເປັນບູລິມະສິດໃນການຕັດສິນໃຈກ່ຽວກັບການສົ່ງຕໍ່ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ເດັກນ້ອຍທີ່ຖືກແຍກຈາກຜູ້ປົກຄອງ;
- ການຮັບຮອງນໍາໃຊ້ຫຼັກໆປົກປ້ອງເພື່ອຮັບປະກັນວ່າລະບຽບຂັ້ນຕອນການສົ່ງຕໍ່ນັ້ນເຄົາລົບການຮັກສາຄວາມລັບຂອງຂໍ້ມູນ ຍ້ອນວ່າ ຂໍ້ມູນທີ່ກ່ຽວຂ້ອງກັບບຸກຄົນທີ່ຖືກສົ່ງຕໍ່ໄປຍັງລະບົບລີ້ໄພແມ່ນບໍ່ຄວນແບ່ງປັນກັບເຈົ້າໜ້າທີ່ຂອງລັດຕົ້ນທາງ;
- ການຮັບຮອງນໍາໃຊ້ຫຼັກການປົກປ້ອງເພື່ອຮັບປະກັນວ່າການສົ່ງຕໍ່ບຸກຄົນລະຫວ່າງຜູ້ມີສ່ວນຮ່ວມ ແລະ ລະບົບການລີ້ໄພທ້ອງຖິ່ນ ຫຼື UNHCR ແມ່ນອີງຕາມການຍິນຍອມຂອງບຸກຄົນບົນພື້ນຖານຂໍ້ມູນຄົບຖ້ວນ. ການຍິນຍອມບົນພື້ນຖານທີ່ມີຂໍ້ມູນຄົບຖ້ວນຍັງອາດຈໍາເປັນສໍາລັບການໂອນຂໍ້ມູນສ່ວນຕົວລະຫວ່າງພາກສ່ວນທີ່ເປັນຜູ້ສົ່ງຕໍ່ ແລະ ບຸກຄົນທີສາມ.

### *ການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ ຫາອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງສາກົນທີ່ມີຊ່ຽວຊານສະເພາະດ້ານ*

ມີບາງອົງການຈັດຕັ້ງທີ່ມີພາລະໜ້າທີ່ສະເພາະ ແລະ ທັກສະ ກໍຄືຄວາມຊໍານິຊໍານານທີ່ເປັນເອກະລັກ ເພື່ອແກ້ໄຂຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານຢ່າງມີປະສິດທິຜົນ (ເຊັ່ນ: ເພື່ອຊ່ວຍເດັກນ້ອຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ). ປັດໄຈທີ່ຕ້ອງພິຈາລະນາໃນເວລາສ້າງລະບົບວຽກງານການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ ລວມມີ:

- ການລະບຸອົງການຈັດຕັ້ງສັງຄົມ ຫຼື ອົງການຈັດຕັ້ງສາກົນທີ່ດໍາເນີນງານຢູ່ລັດປາຍທາງຜູ້ທີ່ມີພາລະບົດບາດສະເພາະ ຫຼື ຄວາມຊໍານິຊໍານານ ແລ້ວສ້າງລະບຽບຂັ້ນຕອນ ຫຼື ການຈັດແຈງສະເພາະກິດເພື່ອສົ່ງຕໍ່ກໍລະນີ ແລະ ຊ່ວຍເອື້ອອໍານວຍຄວາມອາດສາມາດໃນການຄາດການໄດ້;
- ການມອບໝາຍໃຫ້ຜູ້ປະສານງານໃນການສົ່ງຕໍ່ເພື່ອອໍານວຍຄວາມສະດວກໃຫ້ແກ່ການສື່ສານແບບບໍ່ຂ້ອງຄາ;
- ການສ້າງລະບຽບຂັ້ນຕອນການກັ່ນຕອງເພື່ອຮັບປະກັນການລະບຸຄວາມຕ້ອງການແບບວ່ອງໄວ;
- ການຮັບຮອງນໍາໃຊ້ຫຼັກການການປົກປ້ອງເພື່ອຮັບປະກັນວ່າໄດ້ຄໍານຶງເຖິງ ຜົນປະໂຫຍດສູງສຸດຂອງເດັກນ້ອຍເປັນບູລິມະສິດແລ້ວໃນການຕັດສິນໃຈກ່ຽວກັບການສົ່ງຕໍ່ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ເດັກນ້ອຍທີ່ຖືກແຍກຈາກຜູ້ປົກຄອງ;
- ການຮັບຮອງນໍາໃຊ້ຫຼັກການປົກປ້ອງເພື່ອຮັບປະກັນວ່າລະບຽບຂັ້ນຕອນການສົ່ງຕໍ່ນັ້ນເຄົາລົບການຮັກສາຄວາມລັບຂອງຂໍ້ມູນ ຍ້ອນວ່າ ຂໍ້ມູນທີ່ກ່ຽວຂ້ອງກັບບຸກຄົນທີ່ຖືກສົ່ງຕໍ່ໄປຍັງລະບົບລີ້ໄພແມ່ນບໍ່ຄວນແບ່ງປັນກັບເຈົ້າໜ້າທີ່ຂອງລັດຕົ້ນທາງ;
- ການສະໜອງຄວາມຊ່ວຍເຫຼືອດ້ານການເງິນ ແລະ ການຂົນສົ່ງເພື່ອສະໜັບສະໜູນການຮອງຮັບດ້ານປະລິມານໃນກໍລະນີ ທີ່ມີການບໍລິການເພີ່ມຂຶ້ນ.

### *ກົນໄກການສົ່ງຕໍ່ ຜູ້ເຄື່ອນຍ້າຍຖິ່ນຖານເດັກທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ*

ຜູ້ມີສ່ວນຮ່ວມຄວນສ້າງລະບຽບຂັ້ນຕອນສໍາລັບວຽກງານການສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ຍັງເປັນເດັກ ກັບເຈົ້າໜ້າທີ່ແຫ່ງ

ຊາດ ແລະ ສາກົນ, ແລະ ອົງການທີ່ມີພາລະບົດບາດ ເພື່ອຮັບປະກັນວ່າເດັກນ້ອຍຈະໄດ້ຮັບການຊ່ວຍເຫຼືອແບບມີເປົ້າໝາຍທີ່ແກ້ໄຂຄວາມກັງວົນດ້ານການປົກປ້ອງສະເພາະຂອງເຂົາເຈົ້າ. ປັດໄຈເພື່ອພິຈາລະນາການສ້າງຕັ້ງລະບົບການສົ່ງຕໍ່ ລວມມີ:

- ການພັດທະນາລະບຽບຂັ້ນຕອນການຮ່ວມມື ແລະ ສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານລະຫວ່າງເຈົ້າໜ້າທີ່ແຫ່ງຊາດ ແລະ ທ້ອງຖິ່ນ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ;
- ການເພີ່ມຈິດສຳນຶກ ແລະ ຄວາມເຂົ້າໃຈຂອງເຈົ້າໜ້າທີ່ກ່ຽວກັບລະບຽບຂັ້ນຕອນການສົ່ງຕໍ່ ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ;
- ການສ້າງຕັ້ງລະບຽບຂັ້ນຕອນການກັ່ນຕອງເພື່ອລະບຸວ່າເດັກນ້ອຍນັ້ນ ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ ຫຼື ບໍ່ ແລະ ເພື່ອລະບຸ ແລະ ຢັ້ງຢືນສາຍພົວພັນກັບຜູ້ໃຫຍ່ທີ່ຕິດຕາມມານຳ;
- ການຮັບປະກັນໃຫ້ມີການສົ່ງຕໍ່ໃນທັນທີທີ່ເດັກນ້ອຍຖືກລະບຸວ່າບໍ່ມີຜູ້ຕິດຕາມ ຫຼື ແຍກຈາກຜູ້ປົກຄອງ ໄປຍັງ ຜູ້ມີສ່ວນຮ່ວມໃນການປົກປ້ອງເດັກທີ່ກ່ຽວຂ້ອງເພື່ອໃຫ້ສາມາດຕອບສະໜອງຄວາມຕ້ອງການດ້ານການເບິ່ງແຍງ, ຄວາມປອດໄພ, ການສຶກສາ ແລະ ສາທາລະນະສຸກ;
- ການຮັບຮອງນຳໃຊ້ຫຼັກການຄວນຄຳນຶງເຖິງຜົນປະໂຫຍດຂອງເດັກນ້ອຍເປັນຫຼັກ ໃນການຕັດສິນໃຈກ່ຽວກັບການປະຕິບັດການ, ການສົ່ງຕໍ່ ແລະ ການປົກປ້ອງເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ ລວມທັງ ການປຶກສາຫາລືກັບເດັກອີງຕາມອາຍຸ ແລະວຸດທິພາວະ, ການມອບໝາຍໃຫ້ຜູ້ຄຸ້ມຄອງ ແລະ ຜູ້ແປພາສາເມື່ອຈຳເປັນ.

*ການສົ່ງຕໍ່ໄປຍັງຜູ້ສະໜອງການບໍລິການໃນທ້ອງຖິ່ນ ຫຼື ລັດປາຍທາງ*

ເຈົ້າໜ້າທີ່ລັດປາຍທາງ ຫຼື ຜູ້ມີສ່ວນຮ່ວມທ້ອງຖິ່ນອື່ນໆ ອາດຈະສະໜອງການບໍລິການເຊັ່ນ ທີ່ພັກ-ບ່ອນລີ້ໄພຊົ່ວຄາວ, ອາຫານ, ການຍົກຍ້າຍກັບຄືນປະເທດ, ການຊ່ວຍເຫຼືອທາງການແພດ ຫຼື ສິ່ງອຳນວຍຄວາມສະດວກເພື່ອຕິດຕໍ່ຫາຄອບຄົວ ໃຫ້ແກ່ຜູ້ທີ່ຖືກຍ້າຍອອກຈາກບ່ອນຢູ່ຍ້ອນວິກິດການ. ອົງການ, ຜູ້ຈ້າງງານ ຫຼື ລັດຕົ້ນທາງທີ່ມີການຕິດຕໍ່ກັບຜູ້ເຄື່ອນຍ້າຍຖິ່ນຖານ ສາມາດສົ່ງຕໍ່ຜູ້ເຄື່ອນຍ້າຍຖິ່ນຖານໄປຍັງ ບ່ອນທີ່ໃຫ້ການຊ່ວຍເຫຼືອ ແລະ ການບໍລິການທ້ອງຖິ່ນ.

# ຍົກຍ້າຍ ແລະ ອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານເມື່ອຈຳເປັນ

## ຜູ້ມີສ່ວນຮ່ວມຫຼາຍຝ່າຍ

### *ການຍົກຍ້າຍ ຜູ້ເຄື່ອນຍ້າຍຖິ່ນຖານ*

ການຍົກຍ້າຍຜູ້ເຄື່ອນຍ້າຍຖິ່ນຖານພາຍໃນລັດປາຍທາງອາດເໝາະສົມຖ້າວ່າສະພາບການບ່ອນອື່ນປອດໄພ ແລະ ມີທ່າອ່ຽງຈະປອດໄພຕໍ່ໄປ. ທາງເລືອກນີ້ຈະມີແນວໂນ້ມໃນກໍລະນີເກີດໄພພິບັດທຳມະຊາດ ຫຼາຍກວ່າ ຄວາມຂັດແຍ່ງເມື່ອຄວາມຮຸນແຮງກະຈາຍໄປບ່ອນອື່ນໆ. ໃນບາງກໍລະນີ, ຜູ້ເຄື່ອນຍ້າຍຖິ່ນຖານອາດຖືກຍົກຍ້າຍໄປບ່ອນທີ່ຖືກກະທົບຈາກໄພພິບັດທຳມະຊາດເພື່ອໃຫ້ຊ່ວຍໃນການຟື້ນຟູກໍ່ສ້າງຄືນ. ຜູ້ມີສ່ວນຮ່ວມສາມາດພິຈາລະນາ:

- ການກຳນົດບັນທັດຖານ ແລະ ເງື່ອນໄຂສຳລັບການຍົກຍ້າຍພາຍໃນລັດປາຍທາງ, ສຳລັບການອົບພະຍົບ ຫຼື ການສືບຕໍ່ອາໃສຢູ່ບ່ອນເກົ່າ;
- ການປະເມີນຄວາມປອດໄພ ແລະ ຄວາມສະຫງົບຂອງສະຖານທີ່ໆອາດຈະຍົກຍ້າຍໄປໃໝ່ ໂດຍຄຳນຶງເຖິງການຕ້ອນຮັບຜູ້ເຄື່ອນຍ້າຍຖິ່ນຖານຢູ່ສະຖານທີ່ເຫຼົ່ານັ້ນ;
- ການລະບຸສະຖານທີ່ພັກຊົ່ວຄາວໃນພື້ນທີ່ໆຈະຍົກຍ້າຍໄປໃໝ່;
- ການສະໜອງອາຫານ, ນ້ຳດື່ມ ແລະ ເຄື່ອງໃຊ້ສອຍທີ່ຈຳເປັນອື່ນໆ ຈົນກວ່າຜູ້ເຄື່ອນຍ້າຍຖິ່ນຖານຈະມີທີ່ພັກອາໃສຢ່າງລົງໂຕ;
- ການລະບຸໂອກາດໃນການຈ້າງງານຖ້າວ່າການຍົກຍ້າຍມີທ່າອ່ຽງວ່າຈະແກ່ຍາວ;
- ການເຊື່ອມຕໍ່ຜູ້ເຄື່ອນຍ້າຍຖິ່ນຖານກັບການບໍລິການດ້ານສຸຂະພາບ, ການຊ່ວຍເຫຼືອດ້ານຈິດໃຈ-ສັງຄົມ ແລະ ການບໍລິການອື່ນໆທີ່ຈຳເປັນຢູ່ພື້ນທີ່ຍົກຍ້າຍໄປໃໝ່;
- ການຊ່ວຍເຫຼືອຄອບຄົວໃນການເອົາເດັກນ້ອຍລົງທະບຽນເຂົ້າໂຮງຮຽນ ຖ້າວ່າການຍົກຍ້າຍມີທ່າອ່ຽງທີ່ຈະແກ່ຍາວ;
- ການສ້າງສິ່ງອຳນວຍຄວາມສະດວກເພື່ອການສື່ສານກັບສະມາຊິກຄອບຄົວ;
- ການລະບຸຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມບອບບາງ-ສ່ຽງເປັນພິເສດ ຜູ້ທີ່ອາດຕ້ອງການໆເບິ່ງແຍງເປັນພິເສດໃນໄລຍະການຍົກຍ້າຍ ເຊັ່ນ ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ, ຜູ້ເຄື່ອນຍ້າຍຖິ່ນຖານພິການ, ຜູ້ເຄື່ອນຍ້າຍຖິ່ນຖານສູງອາຍຸ, ຜູ້ເຄື່ອນຍ້າຍຖິ່ນຖານເປັນເດັກນ້ອຍ ລວມທັງເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ການຂູດຮີດ.

### *ການຍົກຍ້າຍຜູ້ເຄື່ອນຍ້າຍຖິ່ນຖານໄປຍັງລັດທາງຜ່ານ ຫຼື ລັດຕົ້ນທາງ*

ໂດຍທົ່ວໄປການອົບພະຍົບຈະເປັນວິທີທາງສຸດທ້າຍ ແຕ່ກໍມີຄວາມຈຳເປັນທີ່ແນ່ນອນວ່າ ຖ້າຜູ້ເຄື່ອນຍ້າຍຖິ່ນຖານຫາກບໍ່ສາມາດສືບຕໍ່ອາໄສຢູ່ບ່ອນເກົ່າຢ່າງປອດໄພ ຫຼື ບໍ່ສາມາດຍົກຍ້າຍໄປບ່ອນອື່ນໆພາຍໃນລັດປາຍທາງຢ່າງປອດໄພ. ປະເດັນຕ່າງໆທີ່ຜູ້ມີສ່ວນຮ່ວມຄວນຄຳນຶງເຖິງໃນການຈັດຕັ້ງປະຕິບັດການອົບພະຍົບ (ບາງຈຸດກໍຈະອະທິບາຍລະອຽດຢູ່ຂ້າງລຸ່ມ) ລວມມີ:

- ບັນທັດຖານເພື່ອລະບຸບຸກຄົນທີ່ມີເງື່ອນໄຂອົບພະຍົບ;
- ການຈັດການອົບພະຍົບຜູ້ເຄື່ອນຍ້າຍຖິ່ນຖານໄປຍັງສູນພັກຊົ່ວຄາວ ຫຼື ສູນເພື່ອກະກຽມການອົບພະຍົບຕໍ່ໄປຢູ່ ສະຖານທີ່ໆບໍ່ໄດ້ຮັບຜົນກະທົບຢູ່ໃນລັດປາຍທາງ ຫຼື ລັດທາງຜ່ານ ເຊິ່ງເປັນຈຸດລະຫວ່າງກາງກ່ອນທີ່ຈະອົບພະຍົບຕໍ່ໄປຍັງລັດຕົ້ນທາງ;

- ຊ່ອງທາງການສື່ສານເພື່ອແຈ້ງໃຫ້ຜູ້ເຄື່ອນຍ້າຍຖິ່ນຖານຊາບກ່ຽວກັບສະຖານະການຕ່າງໆທີ່ຈະເກີດຂຶ້ນໃນເວລາອົບພະຍົບ, ຈຸດອົບພະຍົບ ແລະ ລະບຽບຂັ້ນຕອນ;

- ການຂໍການຍິນຍອມບັນພື້ນຖານຂໍ້ມູນຄົບຖ້ວນຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ຈະອົບພະຍົບ;
- ການເຄົາລົບນັບຖືຫຼັກການບໍ່ບັງຄັບໃຫ້ກັບຄືນປະເທດເພື່ອໃຫ້ຕົກຢູ່ໃນຄວາມອັນຕະລາຍ;
- ການເຈລະຈາກັບລັດປາຍທາງ ຫຼື ຜູ້ມີສ່ວນຮ່ວມກັບກອງກຳລັງປະກອບອາວຸດທີ່ບໍ່ແມ່ນຂອງລັດ ທີ່ຄວບຄຸມເຂດຊາຍແດນ (ເຊັ່ນ ເພື່ອຂໍໃບອະນຸຍາດເດີນທາງອອກ ເພື່ອການເດີນທາງອອກນອກລັດປາຍທາງຢ່າງປອດໄພ);
- ການເຈລະຈາກັບລັດທາງຜ່ານເພື່ອຂໍວີຊາເດີນທາງຜ່ານ (ເຊັ່ນ: ເພື່ອການເດີນທາງຜ່ານອານາເຂດຂອງເຂົາເຈົ້າຢ່າງປອດໄພ);
- ການຮ່ວມມືກັບຜູ້ມີສ່ວນຮ່ວມອື່ນ;
- ມາດຕະການທີ່ອຳນວຍຄວາມສະດວກໃຫ້ແກ່ການອົບພະຍົບໝົດຄອບຄົວ ແລະ ຫຼີກເວັ້ນການແຍກຄອບຄົວອອກຈາກກັນ ລວມທັງສະມາຊິກຄອບຄົວທີ່ມີສັນຊາດຕ່າງກັນ;
- ການສະໜັບສະໜູນກ່ອນ ແລະ ຫຼັງການອົບພະຍົບ;
- ມາດຕະການເພື່ອຫາທຶນມາດຳເນີນການອົບພະຍົບ;
- ການລະບຸຜູ້ເຄື່ອນຍ້າຍຖິ່ນຖານທີ່ບອບບາງສະເພາະ ທີ່ອາດມີຄວາມຕ້ອງການເປັນພິເສດໃນໄລຍະການອົບພະຍົບ ເຊັ່ນ ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ, ຜູ້ເຄື່ອນຍ້າຍຖິ່ນຖານທີ່ພິການ, ຜູ້ເຄື່ອນຍ້າຍຖິ່ນຖານສູງອາຍຸ, ຜູ້ເຄື່ອນຍ້າຍຖິ່ນຖານເດັກນ້ອຍລວມທັງຜູ້ທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກອອກຈາກຜູ້ປົກຄອງ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ການຂູດຮີດ;
- ການສ້າງບັນຊີລາຍຊື່ບຸກຄົນທີ່ພວມອົບພະຍົບ ໂດຍປະກອບມີຂໍ້ມູນກ່ຽວກັບສູນອົບພະຍົບ ເພື່ອໃຫ້ສະມາຊິກຄອບຄົວສາມາດຕິດຕໍ່ຫາກັນໄດ້ໃນກໍລະນີທີ່ເຂົາເຈົ້າຖືກແຍກອອກຈາກກັນ.

ຂັ້ນຕອນສຳລັບການດຳເນີນການອົບພະຍົບອາດລວມມີ:

- ການເຂົ້າຫາຜູ້ເຄື່ອນຍ້າຍຖິ່ນຖານເພື່ອໃຫ້ຂໍ້ມູນກ່ຽວກັບການດຳເນີນການອົບພະຍົບ ແລະ ການລະບຸຜູ້ທີ່ຕ້ອງການອົບພະຍົບ;
- ການແຕ່ງຕັ້ງໜ່ວຍງານທີ່ມີສິດອຳນາດໃນການຕັດສິນໃຈ, ການຄຸ້ມຄອງ ແລະ ການດຳເນີນການອົບພະຍົບໄປຕ່າງປະເທດ;
- ການສົ່ງຄະນະວິຊາການທີ່ປະກອບດ້ວຍບຸກຄະລາກອນທີ່ມີທັກສະກ່ຽວຂ້ອງລວມທັງ ຄະນະດຳເນີນການ, ເຈົ້າໜ້າທີ່ພົວພັນ, ເຈົ້າໜ້າທີ່ເຄື່ອນຍ້າຍ, ຊ່ຽວຊານດ້ານສຸຂະພາບ, ແລະ ຜູ້ແປພາສາ;
- ການເຕົ້າໂຮມຜູ້ເຄື່ອນຍ້າຍຖິ່ນຖານຢູ່ຈຸດອົບພະຍົບລວມທັງ ການສະໜອງການຂົນສົ່ງ;
- ການອອກເອກະສານສຸກເສີນສຳລັບຜູ້ເຄື່ອນຍ້າຍຖິ່ນຖານໂດຍບໍ່ຈຳເປັນຕ້ອງມີເອກະສານຮັບຮອງ;
- ການໃຫ້ການຊ່ວຍເຫຼືອ ແລະ ບັນເທົາທຸກດ້ານມະນຸດສະທຳ ກ່ອນທີ່ຈະອົບພະຍົບ ເຊັ່ນ ການແຈກຢາຍຜ້າຫົ່ມ, ອາຫານ, ນ້ຳດື່ມ, ອຸປະກອນການແພດ ແລະ ຢູກຢາ;
- ການລົງທະບຽນຜູ້ອົບພະຍົບ ແລະ ການກະກຽມໃບເດີນທາງ;
- ພາຍຫຼັງເດີນທາງມາຮອດລັດຕົ້ນທາງ, ສະໜອງການບໍລິການພື້ນຖານໃນທັນທີເຊັ່ນບ່ອນພັກ, ການຂົນສົ່ງ, ການຮັກສາສຸຂະພາບ ລວມທັງ ການໃຫ້ຄຳປຶກສາດ້ານຈິດໃຈ-ສັງຄົມ.

### *ການປະສານງານຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍກ່ຽວກັບການອົບພະຍົບ*

ການປະສານງານພາຍໃນລັດ ຫຼື ລະຫວ່າງບັນດາລັດ ແລະ ຜູ້ມີສ່ວນຮ່ວມອື່ນໆໃນການດຳເນີນການອົບພະຍົບແມ່ນສາມາດຮັບປະກັນການນຳໃຊ້ຊັບພະຍາກອນຢ່າງມີປະສິດທິຜົນ ໂດຍສະເພາະ ຍ້ອນວ່າ ການຂົນສົ່ງ ແລະ ການບໍລິການອື່ນໆທີ່ໃຊ້ໃນການອົບພະຍົບນັ້ນອາດມີຄວາມຕ້ອງການນຳໃຊ້ຫຼາຍ. ຖ້າບໍ່ມີການຈັດການລ່ວງໜ້າກ່ອນເກີດວິກິດ, ປັດໄຈທີ່ຈະຕ້ອງພິຈາລະນາໃນການຈັດການງຮ່ວມມືແບບສະເພາະກິດໃນການອົບພະຍົບນີ້ ລວມມີ:

- ບັນທັດຖານເພື່ອກຳນົດບຸກຄົນທີ່ມີເງື່ອນໄຂສຳລັບການອົບພະຍົບ;

- ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຄູ່ຮ່ວມງານແຕ່ລະພາກສ່ວນ ໂດຍມີການມອບໝາຍຢ່າງຈະແຈ້ງວ່າ ຜູ້ໃດຈະເຮັດໜ້າວຽກໃດ, ຢູ່ໃສ, ເມື່ອໃດ ແລະ ດ້ວຍວິທີໃດ ກໍຄື ວິທີການລາຍງານຄວາມຄືບໜ້າໃຫ້ຜູ້ອື່ນຊາບ;
- ເຄື່ອງມືການລາຍງານ ແລະ ການຕິດຕາມ ລວມທັງເຄື່ອງມືທາງເວັບໄຊດ໌-ອອນໄລນ໌ ເພື່ອຮັບປະກັນວ່າຄູ່ຮ່ວມງານມີຂໍ້ມູນໃນເວລາຈິງກ່ຽວກັບ ສະຖານທີ່ຕັ້ງຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສະຖານະການອົບພະຍົບ;
- ທິດຊີ້ນຳກ່ຽວກັບວິທີການຮັບມື-ແກ້ໄຂກໍລະນີທີ່ຫຍຸ້ງຍາກ (ເຊັ່ນ, ຖ້າສະມາຊິກຄອບຄົວມີສັນຊາດແຕກຕ່າງກັນ);
- ວິທີການອົບພະຍົບ;
- ມາດຕະຖານທົ່ວໄປກ່ຽວກັບການຂົນສົ່ງ ແລະ ການບໍລິການລະຫວ່າງທາງໃຫ້ແກ່ຜູ້ອົບພະຍົບ.

*ມາດຕະການເພື່ອອຳນວຍຄວາມສະດວກໃຫ້ແກ່ການອົບພະຍົບ ຜູ້ລີ້ໄພ ແລະ ຜູ້ຫາບ່ອນລີ້ໄພ*

ເມື່ອດຳເນີນການອົບພະຍົບ, ຜູ້ມີສ່ວນຮ່ວມຄວນຄຳນຶງວ່າ ການອົບພະຍົບຂອງຜູ້ລີ້ໄພ ແລະ ຜູ້ຫາບ່ອນລີ້ໄພແມ່ນຈຳເປັນຕ້ອງດຳເນີນການໃຫ້ສອດຄ່ອງກັບ ຫຼັກການຄື *ການບໍ່ບັງຄັບໃຫ້ກັບຄືນປະເທດເພື່ອໃຫ້ຕົກຢູ່ໃນຄວາມອັນຕະລາຍ* ໂດຍການຮັບປະກັນວ່າ ຜູ້ລີ້ໄພ ແລະ ຜູ້ຫາບ່ອນລີ້ໄພ ຈະບໍ່ຖືກອົບພະຍົບໄປຍັງປະເທດຕົ້ນທາງຂອງຕົນ ຫຼື ປະເທດທີສາມ ຖ້າເຂົາເຈົ້າຫາກຈະຖືກດຳເນີນຄະດີຢູ່ບ່ອນດັ່ງກ່າວ.

*ການສະໜັບສະໜູນພາຍຫຼັງການອົບພະຍົບ ຢູ່ລັດທາງຜ່ານລວມທັງ ບ່ອນພັກ, ອາຫານ ແລະ ການຊ່ວຍເຫຼືອທາງການແພດ*

ອາດຈຳເປັນຈະຕ້ອງຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານທີ່ໄດ້ຮັບການອົບພະຍົບ ຖ້າວ່າຜູ້ເຄື່ອນຍ້າຍຖິ່ນຖານຈະສືບຕໍ່ ອາໄສຢູ່ໃນລັດທາງຜ່ານເພື່ອລໍຖ້າການເຄື່ອນຍ້າຍຕໍ່ໄປຍັງ ລັດຕົ້ນທາງ ຫຼື ກັບຄືນເຂົ້າຫາລັດປາຍທາງ. ການສະໜັບສະໜູນພາຍຫຼັງການອົບພະຍົບທີ່ຜູ້ມີສ່ວນຮ່ວມກ່ຽວຂ້ອງຈະສາມາດສະໜອງອາດລວມມີ:

- ສະຖານທີ່ພັກຊົ່ວຄາວ;
- ອາຫານ, ນ້ຳດື່ມ ແລະ ເຄື່ອງໃຊ້ສອຍພື້ນຖານທີ່ຈຳເປັນອື່ນໆ;
- ການຊ່ວຍເຫຼືອທາງການແພດ ແລະ ດ້ານຈິດໃຈ-ສັງຄົມ;
- ສິ່ງອຳນວຍຄວາມສະດວກເພື່ອສື່ສານກັບສະມາຊິກຄອບຄົວ.

## ລັດຕົ້ນທາງ

*ການສົ່ງບຸກຄະລາກອນເພີ່ມເຕີມເພື່ອຊ່ວຍເຫຼືອໃນການຍົກຍ້າຍ ແລະ ການອົບພະຍົບ*

ການດຳເນີນການຍົກຍ້າຍ ແລະ ການອົບພະຍົບຮຽກຮ້ອງໃຫ້ມີການປະສານງານ ແລະ ມີຊັບພະຍາກອນຕື່ມລວມທັງ ຢູ່ສະຖານກົງສຸນໃນລັດປາຍທາງ ແລະ ໃນລະດັບຊາດ ແລະ ທ້ອງຖິ່ນໃນລັດຕົ້ນທາງ. ມາດຕະການທີ່ອາດວາງອອກລວມມີ:

- ການສ້າງຕັ້ງ ຫຼື ເລີ່ມຕົ້ນໂຄງສ້າງລວມສູນລະດັບຊາດຢູ່ໃນລັດຕົ້ນທາງ ຫຼື ລັດປາຍທາງ;
- ການຂໍຄວາມຊ່ວຍເຫຼືອຂອງຜູ້ມີສ່ວນຮ່ວມໃນລັດປາຍທາງລວມທັງ ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ ໃນການຈັດຕັ້ງປະຕິບັດດ້ານສະເພາະຂອງການດຳເນີນງານ ເຊັ່ນການລະບຸພົນລະເມືອງທີ່ຕ້ອງການໆເບິ່ງແຍງເປັນພິເສດ;
- ການສົ່ງບຸກຄະລາກອນໄປເພີ່ມຕື່ມ.

*ການລົບລ້າງອຸປະສັກຕໍ່ການອົບພະຍົບ*

ພົນລະເມືອງອາດຈະບໍ່ຕ້ອງການອອກຈາກລັດປາຍທາງ ເຖິງແມ່ນວ່າຈະມີຄວາມສ່ຽງຕໍ່ຄວາມປອດໄພສ່ວນຕົວຂອງເຂົາເຈົ້າ

ຖ້າຫາກວ່າເຂົາເຈົ້າຈະຕ້ອງໜີປະສະມາຊິກຄອບຄົວຂອງເຂົາເຈົ້າ (ເຊັ່ນ ຍ້ອນສະມາຊິກຄອບຄົວຂອງເຂົາເຈົ້າມີສັນຊາດທີ່ແຕກຕ່າງ) ຫຼື ຕ້ອງປ່ອຍປະຊັບສິນ ຫຼື ຊັບສິນບັດໄວ້ເບື້ອງຫຼັງ. ລັດຕົ້ນທາງສາມາດນຳໃຊ້ມາດຕະການສຸກເສີນເພື່ອລົບລ້າງອຸປະສັກຕໍ່ການອົບພະຍົບ ລວມທັງ:

- ການຍົກເວັ້ນອາກອນ ຫຼື ຂໍ້ຈຳກັດອື່ນໆທີ່ກີດຂວາງພົນລະເມືອງຈາກການໂອນຊັບສິນສ່ວນຕົວ ຫຼື ທຸລະກິດສ່ວນຕົວຢູ່ທາງບ້ານ;
- ການອະນຸຍາດໃຫ້ມີການອົບພະຍົບສຳລັບຫົວໜ່ວຍຄອບຄົວ ໃນກໍລະນີທີ່ສະມາຊິກຄອບຄົວມີສັນຊາດແຕກຕ່າງກັນ;
- ການອະນຸຍາດໃຫ້ມີການອົບພະຍົບໃນບາງກໍລະນີ ສຳລັບພະນັກງານຂອງພົນລະເມືອງເຊັ່ນ ແຮງງານທີ່ເຮັດວຽກເປັນຄົນຮັບໃຊ້, ໃນເວລາທີ່ພະນັກງານເຫຼົ່ານັ້ນເປັນຜູ້ເຄື່ອນຍ້າຍຖິ່ນຖານເອງ ແລະ ມີສັນຊາດແຕກຕ່າງກັນ.

### *ການສົ່ງຄະນະຊ່ວຍເຫຼືອດ້ານກົງສຸນໄປຍັງດ່ານຊາຍແດນ, ເດີ່ນບິນ ຫຼື ຈຸດທາງຜ່ານອື່ນໆ*

ການສົ່ງຄະນະຊ່ວຍເຫຼືອດ້ານກົງສຸນໄປຍັງດ່ານຊາຍແດນ, ເດີ່ນບິນ ຫຼື ຈຸດທາງຜ່ານອື່ນໆ ຢູ່ໃນລັດປາຍທາງໃນໄລຍະເກີດວິກິດ ອາດຊ່ວຍໃຫ້ລັດຕົ້ນທາງສາມາດໃຫ້ການຊ່ວຍເຫຼືອແກ່ພົນລະເມືອງຂອງຕົນ ລວມທັງການຊ່ວຍເຫຼືອຈັດແຈງການອົບພະຍົບ ຫຼື ການຍົກຍ້າຍຈາກພື້ນທີ່ງມີວິກິດການ. ດ່ານ, ເດີ່ນບິນ ແລະ ຈຸດທາງຜ່ານສ່ວນໃຫຍ່ແມ່ນຈະມີຄວາມແອອັດ ແລະ ວຸ້ນວາຍໃນໄລຍະເກີດວິກິດ ແລະ ຄະນະຊ່ວຍເຫຼືອດ້ານກົງສຸນ ກໍ ຈະສາມາດຊ່ວຍພົນລະເມືອງຂອງຕົນໃນການຜ່ານຜ່າສະພາບແວດລ້ອມດັ່ງກ່າວນັ້ນ. ໃນການສົ່ງຄະນະຊ່ວຍເຫຼືອດ້ານກົງສຸນ, ປັດໄຈທີ່ຕ້ອງຄຳນຶງເຖິງລວມມີ:

- ຄວາມອາດສາມາດດ້ານພາສາ;
- ຊັບພະຍາກອນ ແລະ ຊັບສິນທີ່ຄະນະສາມາດຈັດການນຳໃຊ້;
- ຄວາມຮັບຜິດຊອບຕໍ່ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນ;
- ຂອບເຂດຂອງການບໍລິການທີ່ຈະສະໜອງໃຫ້ແກ່ພົນລະເມືອງຢູ່ໃນພື້ນທີ່ວິກິດລວມທັງ ການຢັ້ງຢືນຕົວຕົນ-ອັດຕະລັກ, ການອອກເອກະສານລະບຸຕົວຕົນ ແລະ ເອກະສານການເດີນທາງ, ແລະ ການຂໍອະນຸຍາດ ຫຼື ຮັບຮອງການປົດປ່ອຍຈາກ ການຈ້າງງານເພື່ອຮັກສາສະຖານະການເຂົ້າເມືອງແບບໄດ້ລົງທະບຽນ-ແບບປົກກະຕິໄວ້;
- ພົວພັນກັບເຈົ້າໜ້າທີ່ ແລະ ການບໍລິການສຸກເສີນໃນລັດປາຍທາງ ແລະ ລັດທາງຜ່ານ;
- ພິຈາລະນາວ່າຈະສົ່ງ 'ຄະນະລົງໄປລ່ວງໜ້າ' ຫຼື ບໍ່ ເພື່ອໃຫ້ເປັນຜູ້ແຈ້ງເຕືອນເຈົ້າໜ້າທີ່ລ່ວງໜ້າ ເມື່ອມີຄວາມຕ້ອງການດ້ານກຳລັງແຮງງານ-ຂີດຄວາມອາດສາມາດໃນການຊ່ວຍເຫຼືອຫາກເພີ່ມຂຶ້ນຢ່າງວ່ອງໄວ;
- ການປະສານງານກັບຜູ້ມີສ່ວນຮ່ວມອື່ນໆທີ່ກ່ຽວຂ້ອງ.

### *ບັນທັດຖານເພື່ອລະບຸບຸກຄົນທີ່ມີເງື່ອນໄຂໃນການອົບພະຍົບ*

ໃນການກຳນົດວ່າຈະດຳເນີນການອົບພະຍົບແນວໃດ ແລະ ຈະໃຫ້ບູລິມະສິດຜູ້ໃດໃນການອົບພະຍົບ, ລັດສາມາດພິຈາລະນາປັດໄຈດັ່ງຕໍ່ໄປນີ້:

- ຄວາມຕ້ອງການດ້ານການແພດສຸກເສີນ;
- ອາຍຸ, ຄວາມພິການ ແລະ ຄວາມບອບບາງອື່ນໆ;
- ການຮັກສາຄວາມປອງດອງກັນໃນຄອບຄົວລວມທັງ ຄອບຄົວທີ່ສະມາຊິກມີສັນຊາດຕ່າງກັນ;
- ວິທີການຮັບມືກັບພົນລະເມືອງສອງສັນຊາດ;
- ວິທີການປະຕິບັດຕໍ່ພະນັກງານຂອງຜູ້ທີ່ເປັນພົນລະເມືອງ ລວມທັງຜູ້ທີ່ມີສັນຊາດແຕກຕ່າງ;
- ເວລາໃດຈະສະໜັບສະໜູນລັດຕົ້ນທາງອື່ນໆໃນການອົບພະຍົບພົນລະເມືອງຂອງຕົນ.

### *ການອຳນວຍຄວາມສະດວກໃຫ້ແກ່ການຍົກຍ້າຍ ຫຼື ອົບພະຍົບ: ລູກຈ້າງ*

ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານສາມາດສະໜັບສະໜູນການຍົກຍ້າຍ ຫຼື ອົບພະຍົບແຮງງານເຄື່ອນຍ້າຍດ້ວຍຕົນເອງ ຫຼື ໂດຍການຮ່ວມມືກັບ ລັດ ແລະ ຜູ້ມີສ່ວນຮ່ວມອື່ນໆ. ຖ້າເປັນໄປໄດ້ ແລະ ເມື່ອໃດຫາກເໝາະສົມ, ເຂົາເຈົ້າສາມາດຈັດຕັ້ງປະຕິບັດມາດຕະການທີ່ຈະເລືອກການຍົກຍ້າຍບຸກຄະລາກອນ ແລະ ກິດຈະການຢູ່ພາຍໃນປະເທດເສຍກ່ອນໃນກໍລະນີເກີດວິກິດການ ແລ້ວຈຶ່ງ ພິຈາລະນາການຍົກຍ້າຍແຮງງານເຄື່ອນຍ້າຍ ຈາກລັດປາຍທາງທີ່ເປັນທາງເລືອກສຸດທ້າຍ ເພື່ອເປັນມາດຕະການຊ່ວຍເຫຼືອໃນການຊ່ວຍເຫຼືອຊີວິດ ແລະ ໃນເມື່ອການຍົກຍ້າຍພາຍໃນປະເທດບໍ່ສາມາດເປັນໄປໄດ້. ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານສາມາດໃຫ້ການສະໜັບສະໜູນສະເພາະ, ລວມທັງ:

- ການຮັບປະກັນການເຂົ້າເຖິງເອກະສານການລະບຸຕົວຕົນ ແລະ ເອກະສານການເດີນທາງ ໃນທັນທີ;
- ການເຜີຍແຜ່ຂໍ້ມູນກ່ຽວກັບການອົບພະຍົບຈາກ ລັດຕົ້ນທາງ ເຖິງ ແຮງງານເຄື່ອນຍ້າຍ;
- ການສະໜອງວິທີການຕິດຕໍ່ກັບລັດຕົ້ນທາງ ຫຼື ອົງການຈັດຕັ້ງສາກົນເພື່ອຈັດແຈງການອົບພະຍົບ;
- ການສະໜອງທີ່ພັກຊົ່ວຄາວ ແລະ ອາຫານຈົນກວ່າຈະມີການຍົກຍ້າຍ ຫຼື ອົບພະຍົບ;
- ການອົບພະຍົບແຮງງານເຄື່ອນຍ້າຍດ້ວຍການຈ້າງພາຫະນະຂົນສົ່ງ ຫຼື ຈັດແຈງການອົບພະຍົບຮ່ວມກັນກັບລັດ ຫຼື ອົງການຈັດຕັ້ງສາກົນ.

### *ການອຳນວຍຄວາມສະດວກໃຫ້ແກ່ການຍົກຍ້າຍ ຫຼື ອົບພະຍົບ: ຜູ້ສະໜອງການບໍລິການ*

ບໍລິສັດສະໜອງການບໍລິການທີ່ສຳຄັນໃນໄລຍະເກີດວິກິດມີຄື ການຂົນສົ່ງ, ການບໍລິການດ້ານການເງິນ ແລະ ປະກັນໄພ, ການຊ່ວຍເຫຼືອດ້ານການແພດ ແລະ ການອົບພະຍົບ. ໃນຈຸດສູງສຸດຂອງວິກິດການ, ຜູ້ສະໜອງການບໍລິການສາມາດຍົກເວັ້ນເງື່ອນໄຂ ຫຼື ຄ່າທຳນຽມຕ່າງໆເພື່ອອຳນວຍຄວາມສະດວກໃຫ້ແກ່ການຍົກຍ້າຍ ແລະ ການອົບພະຍົບ. ຕົວຢ່າງ: ບໍລິສັດຂົນສົ່ງອາດຮັບເອົາຜູ້ໂດຍສານໄປຍັງລັດຕົ້ນທາງໂດຍບໍ່ຕ້ອງມີປີ້, ບໍລິສັດປະກັນໄພອາດຖືກໍລະນີຜູ້ຍົກຍ້າຍ ຫຼື ອົບພະຍົບເປັນບູລິມະສິດໃນການດຳເນີນການເອກະສານ ແລະ ຂັ້ນຕອນຕ່າງໆ, ແລະ ບໍລິສັດບໍລິການດ້ານການເງິນກໍສາມາດຍົກເວັ້ນຄ່າທຳນຽມໃນການສົ່ງເງິນໃນການຈ່າຍຄ່າບໍລິການຂົນສົ່ງ ຫຼື ການບໍລິການສຸກເສີນ. ນອກຈາກນັ້ນ, ຜູ້ສະໜອງການບໍລິການຍັງສາມາດຍົກເວັ້ນຄ່າທຳນຽມໃນການສົ່ງເງິນກັບບ້ານ ຫຼື ຄ່າປັບໄໝໃນການປ່ຽນແປງການຈອງປີ້ຍົນ ເພື່ອຊ່ວຍຜູ້ເຄື່ອນຍ້າຍຖິ່ນຖານໃນການເດີນທາງອອກຈາກພື້ນທີ່ໆໄດ້ຮັບຜົນກະທົບຈາກວິກິດການ.

## ອົງການຈັດຕັ້ງສາກົນ

### *ເວັບໄຊດ໌ລວມສູນເພື່ອລົງທະບຽນຄຳຮ້ອງຂໍການອົບພະຍົບໂດຍຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ລັດ ແລະ ການກຳນວຍຄວາມສະດວກໃຫ້ແກ່ການຮ່ວມມືລະຫວ່າງຫຼາຍລັດ ຫຼື ຜູ້ມີສ່ວນຮ່ວມຫຼາຍຝ່າຍກ່ຽວກັບການອົບພະຍົບ*

ບໍ່ແມ່ນລັດຕົ້ນທາງທຸກໆລັດທີ່ຈະມີຄວາມອາດສາມາດໃນການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານໃນປະເທດທີ່ພວມປະເຊີນກັບວິກິດ. ບາງທ້ອງຖິ່ນອາດສາມາດຄຸ້ມຄອງການຍົກຍ້າຍຊົ່ວຄາວໄລຍະສັ້ນພາຍໃນລັດທີ່ເກີດວິກິດ ເຊິ່ງຜູ້ເຄື່ອນຍ້າຍຖິ່ນຖານສາມາດໄດ້ຮັບເອົາການຊ່ວຍເຫຼືອໃນທ້ອງຖິ່ນ; ແຕ່ວ່າ ອາດມີການຮ້ອງຂໍຄວາມຊ່ວຍເຫຼືອນຳອົງການຈັດຕັ້ງສາກົນໃນກໍລະນີທີ່ເປັນການຍົກຍ້າຍທີ່ມີຜູ້ເຄື່ອນຍ້າຍຖິ່ນຖານໃນຈຳນວນມະຫາສານ ຈາກ ລັດຕົ້ນທາງຫຼາຍລັດ. ເພື່ອໃຫ້ສາມາດຄຸ້ມຄອງຄຳຮ້ອງຂໍຈາກລັດຕົ້ນທາງ ແລະ ຜູ້ເຄື່ອນຍ້າຍຖິ່ນຖານ, ອົງການຈັດຕັ້ງສາກົນ ສາມາດເລີ່ມຕົ້ນເວັບໄຊດ໌ລວມສູນ ເຊິ່ງລັດຈະສາມາດດຳເນີນ:

- ການຮ້ອງຂໍຄວາມຊ່ວຍເຫຼືອ;
- ການສະໜອງຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານທີ່ຈະຖືກອົບພະຍົບ ລວມທັງສະຖານທີ່ພັກ ແລະ ຄວາມຕ້ອງການຂອງເຂົາເຈົ້າ;
- ເຂົ້າເຖິງການລາຍງານກ່ຽວກັບ ຂໍ້ມູນການຕິດຕໍ່ ແລະ ສະຖານທີ່ພັກຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການຢັ້ງຢືນວ່າ ຜູ້ເຄື່ອນຍ້າຍຖິ່ນຖານຈະຖືກອົບພະຍົບ ແລະ ຮູ້ຈຸດໝາຍປາຍທາງຂອງຜູ້ກ່ຽວ;
- ຮ້ອງຂໍຄວາມຊ່ວຍເຫຼືອເພີ່ມເຕີມສຳລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມຕ້ອງການສະເພາະ ແລະ ຢັ້ງຢືນວ່າ ຜູ້

ເຄື່ອນຍ້າຍຖິ່ນຖານຈະໄດ້ຮັບການຊ່ວຍເຫຼືອທີ່ຈຳເປັນແລ້ວ ຫຼື ບໍ່ ລວມທັງຜ່ານການສົ່ງຕໍ່ໄປຍັງໜ່ວຍງານຊ່ຽວຊານສະເພາະດ້ານ;

- ຮ້ອງຂໍການກວດກາຕົວຕົນ-ອັດຕະລັກ ແລະ ຢັ້ງຢືນຜົນການກວດກາ.

*ການຊ່ວຍເຫຼືອໃນການຂົນສົ່ງໄປຍັງຈຸດໝາຍປາຍທາງຕໍ່ໄປ*

ອົງການຈັດຕັ້ງສາກົນສາມາດໃຫ້ການຊ່ວຍເຫຼືອດ້ານການຂົນສົ່ງ ໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງມາຮອດລັດທາງຜ່ານ ເພື່ອໃຫ້ເຂົາເຈົ້າໄປເຖິງ ຈຸດໝາຍປາຍທາງທີ່ໄດ້ຕັ້ງໄວ້. ໃນການວາງແຜນ ແລະ ການຈັດຕັ້ງປະຕິບັດການຊ່ວຍເຫຼືອດັ່ງກ່າວ, ອົງການຕ່າງໆສາມາດສົມທົບກັບລັດ ລວມທັງ ໃນເລື່ອງການສະໜອງເອກະສານລະບຸຕົວຕົນ ແລະ ເອກະສານການເດີນທາງ, ຈຸດໝາຍປາຍທາງ, ການຕ້ອນຮັບ ແລະ ການຊ່ວຍເຫຼືອພາຍຫຼັງທີ່ເດີນທາງມາຮອດຈຸດໝາຍປາຍທາງ.

## ອົງການຈັດຕັ້ງສັງຄົມ

*ການສະໜັບສະໜູນຕໍ່ການດຳເນີນການອົບພະຍົບ*

ອົງການຈັດຕັ້ງສັງຄົມລວມທັງສະມາຄົມຜູ້ເຄື່ອນຍ້າຍຖິ່ນຖານ ສາມາດມີບົດບາດທີ່ເປັນປະໂຫຍດໃນການສະໜັບສະໜູນການດຳເນີນການອົບພະຍົບສຳລັບຜູ້ເຄື່ອນຍ້າຍຖິ່ນຖານ. ເຂົາເຈົ້າສາມາດປະກອບສ່ວນໂດຍ:

- ການລະບຸຜູ້ທີ່ຕ້ອງການອົບພະຍົບ ລວມທັງ ບຸກຄົນທີ່ຢູ່ໃນພື້ນທີ່ປ່ຽວ ຫຼື ຫ່າງໄກສອກຫຼີກ ຫຼື ຖືກກັກຂັງ;
- ການເຕົ້າໂຮມຜູ້ເຄື່ອນຍ້າຍຖິ່ນຖານເພື່ອອຳນວຍຄວາມສະດວກໃຫ້ແກ່ການອົບພະຍົບ;
- ການສະໜອງຂໍ້ມູນທີ່ກ່ຽວຂ້ອງກັບການດຳເນີນການອົບພະຍົບໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ;
- ການສະໜັບສະໜູນຄວາມພະຍາຍາມໃນການຕາມຫາຄອບຄົວ.

ໃນໄລຍະພາຍຫຼັງວິກິດ, ຕາມຫຼັກການແລ້ວ ຜູ້ມີສ່ວນຮ່ວມຈະເລີ່ມຕົ້ນ ແລະ ຈັດຕັ້ງປະຕິບັດ ພາກປະຕິບັດໃນການກະກຽມຄວາມພ້ອມພາຍຫຼັງວິກິດດັ່ງທີ່ກ່າວໃນພາກຜ່ານມາກ່ຽວກັບການກະກຽມຄວາມພ້ອມໃນການຮັບມືກັບພາວະວິກິດ. ໃນບໍລິບົດນີ້, ພາກປະຕິບັດທີ່ໄດ້ຜັນຂະຫຍາຍໃນໄລຍະກະກຽມຄວາມພ້ອມຮັບມືກັບພາວະວິກິດ ແມ່ນຈະບໍ່ໄດ້ເອົາມານຳສະເໜີຊ້ຳຄືນອີກໃນພາກນີ້. ເຖິງແມ່ນວ່າຜູ້ມີສ່ວນຮ່ວມຈະໄດ້ເລີ່ມຕົ້ນ ແລະ ຈັດຕັ້ງປະຕິບັດພາກປະຕິບັດທີ່ໄດ້ລະບຸໃນໄລຍະການກຽມຄວາມພ້ອມແລ້ວກໍຕາມ, ແຕ່ວ່າ ເປັນສິ່ງທີ່ຫຼີກບໍ່ໄດ້ທີ່ເຂົາເຈົ້າຈະຈຳເປັນຕັດສິນໃຈ ແລະ ຈັດຕັ້ງປະຕິບັດພາກປະຕິບັດແບບທີ່ມີລັກສະນະສະເພາະກິດ-ສະເພາະໜ້າ ເພື່ອແກ້ໄຂຄວາມສະຫຼັບສັບຊ້ອນທີ່ຄາດການບໍ່ໄດ້ ແລະ ເພື່ອຕອບສະໜອງຕາມຄວາມຕ້ອງການທີ່ເກີດຂຶ້ນໃໝ່.

## ພາກປະຕິບັດໃນການນຳໃຊ້ ແນວທາງປະຕິບັດ 14:
## ແກ້ໄຂຄວາມຕ້ອງການຮີບດ່ວນຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ສະໜັບສະໜູນຜູ້ເຄື່ອນຍ້າຍຖິ່ນຖານໃນການສ້າງຊີວິດໃໝ່

### ຜູ້ມີສ່ວນຮ່ວມຫຼາຍຝ່າຍ

*ການເຂົ້າເຖິງວິທີທາງແກ້ໄຂເພື່ອກອບກູ້ຄືນຊັບສິນທີ່ສູນເສຍໄປ*

ຜູ້ມີສ່ວນຮ່ວມສາມາດຊ່ວຍຜູ້ເຄື່ອນຍ້າຍຖິ່ນຖານໃນການເຂົ້າເຖິງ ວິທີທາງໃນການກອບກູ້ຄືນຊັບສິນທີ່ສູນເສຍໄປລວມທັງຄ່າແຮງງານທີ່ຍັງຄົງຄ້າງຢູ່ລັດປາຍທາງ ດ້ວຍການສະໜອງການສະໜັບສະໜູນທາງກົດໝາຍ ລວມທັງການເປັນຕົວແທນທາງດ້ານກົດໝາຍຢູ່ໃນລັດປາຍທາງ. ຜູ້ມີສ່ວນຮ່ວມຍັງສາມາດຕາງໜ້າໃຫ້ຜູ້ເຄື່ອນຍ້າຍຖິ່ນຖານໃນການແນະນຳເຈົ້າໜ້າທີ່ຂອງລັດປາຍທາງ, ຜູ້ຈ້າງງານ, ຜູ້ຈັດຫາງານ ແລະ ໜ່ວຍງານຈັດຫາແຮງງານໃຫ້ດຳເນີນການຊົດເຊີຍ.

### ລັດປາຍທາງ

*ການຜ່ອນຜັນລະບຽບຂັ້ນຕອນການເຂົ້າເມືອງຊົ່ວຄາວ*

ວິກິດການອາດລົບກວນຂະບວນການກວດຄົນເຂົ້າເມືອງ ແລະ ກະທົບຕໍ່ຄວາມສາມາດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການຮັບ ຫຼື ຕໍ່ວີຊາ ຫຼື ຮັກສາສະຖານະການເຂົ້າເມືອງປົກກະຕິ. ຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ຜູ້ຈ້າງງານຂອງເຂົາເຈົ້າອາດເຮັດເອກະສານການລະບຸຕົວຕົນ, ວີຊາ ຫຼື ເອກະສານອື່ນໆເສຍໃນໄລຍະເກີດວິກິດ ຫຼື ເອກະສານດັ່ງກ່າວອາດຖືກທຳລາຍຍ້ອນວິກິດການ. ການບັນເທົາທຸກຊົ່ວຄາວສຳລັບຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ຈ້າງງານຂອງເຂົາເຈົ້າລວມມີ:

- ການຍົກເລີກການບັງຄັບໃຊ້ກົດໝາຍຕໍ່ຜູ້ລະເມີດລະບຽບ ສຳລັບຜູ້ຈ້າງງານ ຫຼື ຜູ້ເຄື່ອນຍ້າຍຖິ່ນຖານທີ່ບໍ່ສາມາດສະແດງໃບອະນຸຍາດເຮັດວຽກ ຫຼື ເອກະສານອື່ນໆ ຍ້ອນຜົນຈາກວິກິດການ;
- ການອະນຸຍາດໃຫ້ຜູ້ເຄື່ອນຍ້າຍຖິ່ນຖານສາມາດຂໍສະໝັກນຳໃຊ້ມາດຕະການຊົ່ວຄາວຕ່າງໆ ເຊັ່ນການຕໍ່ສະຖານະການເຂົ້າເມືອງປົກກະຕິ ເຖິງແມ່ນວ່າໃບຄຳຮ້ອງຈະຖືກຍື່ນຫຼັງຈາກສະຖານະດັ່ງກ່າວໄດ້ໝົດອາຍຸໄປແລ້ວກໍຕາມ;
- ການຂະຫຍາຍອັນໝົດອາຍຸການຕໍ່ວີຊາ ແລະ ການນັດໝາຍໃໝ່;

- ການຕໍ່ອາຍຸສະຖານະການໃຫ້ໄດ້ຮັບການຊ່ວຍເຫຼືອດ້ານມະນຸດສະທຳສຳລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ເຄີຍໄດ້ຮັບສະຖານະດັ່ງກ່າວ;
- ເລັ່ງການພິຈາລະນາຕັດສິນ ໃບຄຳຮ້ອງຢັ້ງຢືນການຈ້າງງານ;
- ການອອກໃບອະນຸຍາດເຮັດວຽກສຳລັບຜູ້ທີ່ຖືວີຊານັກສຶກສາທີ່ກຳລັງປະເຊີນຄວາມຫຍຸ້ງຍາກທາງດ້ານເສດຖະກິດຢ່າງຮ້າຍແຮງ;
- ການປ່ຽນເອກະສານຢ່າງ ຮີບດ່ວນ ເພື່ອເອື້ອອຳນວຍໃຫ້ແກ່ການເຂົ້າເຖິງການຊ່ວຍເຫຼືອເພື່ອການຟື້ນຟູໃຫ້

ງ່າຍຂຶ້ນເປັນຕົ້ນ;

- ການອະນຸຍາດໃຫ້ມີການຍົກເວັ້ນຄ່າທຳນຽມໃນສະຖານະການທີ່ກ່ຽວຂ້ອງ.

### *ການມີສ່ວນຮ່ວມຂອງຜູ້ເຄື່ອນຍ້າຍຖິ່ນຖານໃນການຟື້ນຟູ ແລະ ບູລະນະກໍ່ສ້າງທ້ອງຖິ່ນ*

ການມີສ່ວນຮ່ວມຂອງຜູ້ເຄື່ອນຍ້າຍຖິ່ນຖານໃນຄວາມພະຍາຍາມຟື້ນຟູພາຍຫຼັງວິກິດການແມ່ນມີຜົນປະໂຫຍດຫຼາຍປະການຄື: ການສະໜັບສະໜູນຜູ້ເຄື່ອນຍ້າຍຖິ່ນຖານໃນການກອບກູ້ຄວາມເສຍຫາຍດ້ານການເງິນ ຫຼື ການຊົດເຊີຍທີ່ກ່ຽວຂ້ອງ, ການອຳນວຍຄວາມສະດວກໃຫ້ແກ່ຂະບວນການບູລະນະກໍ່ສ້າງ, ການສ້າງສະພາບເພື່ອໃຫ້ມີສ່ວນຮ່ວມຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ເຂັ້ມແຂງກວ່າເກົ່າໃນການວາງແຜນ ແລະ ກະກຽມຄວາມພ້ອມຮັບມືກັບວິກິດໃນອະນາຄົດ ແລະ ການຖົມຊ່ອງຫວ່າງໃນຕະຫຼາດແຮງງານທີ່ມາຈາກວິກິດການ. ແນວໃດກໍຕາມ ກໍອາດຈະເປັນບັນຫາຖ້າວ່າສະພາບການບໍ່ປອດໄພ ແລະ ຜູ້ເຄື່ອນຍ້າຍຖິ່ນຖານຖືກຈ້າງງານຍ້ອນວ່າພົນລະເມືອງບໍ່ຍິນດີເຮັດວຽກໃນສະພາບການເຫຼົ່ານີ້. ມາດຕະການເພື່ອຮັບປະກັນໃຫ້ຜູ້ເຄື່ອນຍ້າຍຖິ່ນຖານມີສ່ວນຮ່ວມຢ່າງປອດໄພໃນແຜນງານຟື້ນຟູເຫຼົ່ານີ້ລວມມີ:

- ການປັບປຸງຄວາມເຂົ້າໃຈ ແລະ ຈິດສຳນຶກກ່ຽວກັບການປະກອບສ່ວນຂອງຜູ້ເຄື່ອນຍ້າຍຖິ່ນຖານຕໍ່ ຄວາມເຂັ້ມແຂງທາງດ້ານເສດຖະກິດ-ສັງຄົມ ແລະ ຄວາມທົນທານຂອງຊຸມຊົນເຈົ້າພາບ;
- ກນອຳນວຍຄວາມສະດວກໃຫ້ແກ່ການກັບຄືນເຂົ້າມາປະເທດຂອງຜູ້ເຄື່ອນຍ້າຍຖິ່ນຖານ ທີ່ໄດ້ຖືກອົບພະຍົບໃນໄລຍະວິກິດ ແລະ ຍິນດີທີ່ຈະກັບມາ ລວມທັງການມີວີຊາເຂົ້າປະເທດຫຼາຍເທື່ອ;
- ການນຳເອົາປະເດັນການເຄື່ອນຍ້າຍຖິ່ນຖານຂອງແຮງງານເຂົ້າໃນແຜນງານຟື້ນຟູພາຍຫຼັງວິກິດ;
- ການຕໍ່ອາຍຸ ຫຼື ອອກວີຊາໃໝ່ຢ່າງທັນການສຳລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ມີວີຊາທີ່ໃກ້ຈະໝົດອາຍຸ ທີ່ໄດ້ຢູ່ໃນປະເທດໃນໄລຍະວິກິດ;
- ການຕິດຕາມສະພາບການເຮັດວຽກເພື່ອຊ່ວຍຮັບປະກັນຄວາມປອດໄພຂອງຜູ້ເຄື່ອນຍ້າຍຖິ່ນຖານຜູ້ທີ່ມີການເຂົ້າຮ່ວມໃນວຽກງານ-ຄວາມພະຍາຍາມໃນການຟື້ນຟູ.

### *ການເຂົ້າເຖິງການບູລະນະກໍ່ສ້າງ ແລະ ການຊ່ວຍເຫຼືອໃນການຟື້ນຟູໂດຍບໍ່ມີການຈຳແນກ-ເລືອກປະຕິບັດ*

ລັດທີ່ໄດ້ປະເຊີນກັບພາວະວິກິດອາດສະເໜີໃຫ້ການຊ່ວຍເຫຼືອ ດ້ວຍຊັບພະຍາກອນຂອງຕົນເອງ ຫຼື ຄຽງຄູ່ກັບສະຖາບັນການເງິນສາກົນ ຫຼື ອົງການອື່ນໆ ໃນການຟື້ນຟູໃຫ້ແກ່ບຸກຄົນທີ່ໄດ້ຮັບຄວາມເສຍຫາຍ. ການຊ່ວຍເຫຼືອດ້ານທີ່ພັກອາໄສ, ການຫາທີ່ພັກອາໄສທົດແທນ ແລະ ການບໍລິການບູລະນະກໍ່ສ້າງອື່ນໆ ທີ່ສ້າງຂຶ້ນມາເພື່ອພົນລະເມືອງ ກໍຍັງຈະສາມາດສະໜອງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານໂດຍສະເພາະ ຜູ້ທີ່ອາໄສຢູ່ໄລຍະຍາວ ຫຼື ແບບຖາວອນ ຫຼື ຜູ້ທີ່ຈະປະກອບສ່ວນໃນການກໍ່ສ້າງຄືນ ແລະ ການຟື້ນຟູເສດຖະກິດໃນຊຸມຊົນທີ່ໄດ້ຮັບຜົນກະທົບຈາກວິກິດ.

### *ການເຂົ້າເຖິງວິທີທາງອອກ ເພື່ອກອບກູ້ຄືນຊັບສິນທີ່ສູນເສຍ*

ຈາກຜົນສະທ້ອນຂອງວິກິດການ, ຜູ້ເຄື່ອນຍ້າຍຖິ່ນຖານອາດສູນເສຍຊັບສິນ ລວມທັງຄ່າແຮງງານທີ່ຄົງຄ້າງ. ຜູ້ເຄື່ອນຍ້າຍຖິ່ນຖານອາດມີສິດຢ່າງຖືກຕ້ອງຕາມກົດໝາຍໃນການຮຽກຮ້ອງເອົາຊັບສິນຂອງຕົນຄືນ, ແຕ່ຖ້າວ່າຜູ້ເຄື່ອນຍ້າຍຖິ່ນຖານຫາກໄດ້ອອກຈາກລັດປາຍທາງແລ້ວ, ເຂົາເຈົ້າກໍອາດຈະບໍ່ສາມາດເຂົ້າເຖິງໂດຍກົງກົນໄກການຊົດເຊີຍ. ປັດໄຈທີ່ຕ້ອງຄຳນຶງເຖິງການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານໃນການກອບກູ້ເອົາຊັບສິນຄືນລວມມີ:

- ການສ້າງຂະບວນການງບໍລິຫານເພື່ອຄົ້ນຄວ້າຄຳຮຽກຮ້ອງເພື່ອການກອບກູ້ເອົາຊັບສິນຄືນລວມທັງຄ່າແຮງງານທີ່ຍັງຄົງຄ້າງຈາກຜູ້ເຄື່ອນຍ້າຍຖິ່ນຖານທີ່ບໍ່ໄດ້ອາໄສຢູ່ໃນລັດປາຍທາງແລ້ວ;
- ການໃຫ້ຄວາມຊ່ວຍເຫຼືອລວມທັງດ້ານກົດໝາຍໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ ເພື່ອໃຫ້ເຂົາເຈົ້າຮູ້ສິດຂອງຕົນເອງ ແລະ ຊ່ວຍເຂົາເຈົ້າໃນການເຈລະຈາລະບົບທີ່ມີຢູ່ສຳລັບການກອບກູ້ຊັບສິນຄືນ;
- ການອອກນິຕິກຳໃຫ້ຜູ້ຈ້າງງານໂອນຄ່າແຮງງານທີ່ຍັງຄົງຄ້າງໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ໄດ້ເດີນທາງອອກຈາກລັດປາຍ

ທາງແລ້ວ.

## ລັດຕົ້ນທາງ

### *ການປະເມີນຄວາມຕ້ອງການ ແລະ ທັກສະຂອງຜູ້ທີ່ກັບຄືນປະເທດ*

ພົນລະເມືອງບາງຄົນກໍກັບຄືນມາພ້ອມຊັບສິນຈຳນວນໜ້ອຍ ຫຼື ບໍ່ມີເລີຍ ໃນຂະນະທີ່ຜູ້ອື່ນໆອາດຈະກັບມາພ້ອມທັກສະ ຫຼື ຊັບສິນໃໝ່ໆຈາກຕ່າງປະເທດ. ການປະເມີນຂໍ້ມູນປະຫວັດ ແລະ ຄວາມຕ້ອງການຂອງຜູ້ທີ່ກັບຄືນປະເທດ ອາດຈະຊ່ວຍເປັນບ່ອນອ້າງອີງໃນການອອກແບບການຊ່ວຍເຫຼືອຢ່າງເໝາະສົມ ແລະ ການຊ່ວຍເຫຼືອໃນການເຊື່ອມໂຍງຄືນສູ່ສັງຄົມ. ການປະເມີນເຫຼົ່ານີ້ແມ່ນສາມາດດຳເນີນດ້ວຍຫຼາຍວິທີ ລວມມີ:

- ລະບົບການລົງທະບຽນຢູ່ດ່ານ ແລະ ຈຸດເດີນທາງເຂົ້າປະເທດ;
- ການສ້າງໂຄງສ້າງສະເພາະລະດັບຊາດ, ທ້ອງຖິ່ນ ຫຼື ເທດສະບານ-ເມືອງ;
- ການວິເຄາະຄຸນລັກສະນະດ້ານເສດຖະກິດ-ສັງຄົມ, ທັກສະ ແລະ ຄຸນວຸດທິສະເພາະຂອງພົນລະເມືອງ;
- ລະບຽບການຂັ້ນຕອນການລົງທະບຽນ ແລະ ການເກັບກຳຂໍ້ມູນປະຫວັດລະດັບຊາດ;
- ຖານຂໍ້ມູນການລົງທະບຽນທັກສະສຳລັບແຮງງານທີ່ກັບຄືນປະເທດ.

### *ການສະໜັບສະໜູນ ການເຊື່ອມໂຍງຄືນສູ່ສັງຄົມ*

ການຢຸດສະຫງັກຕ່າງໆທີ່ເກີດຂຶ້ນຍ້ອນຂໍ້ຂັດແຍ່ງ ຫຼື ໄພພິບັດທຳມະຊາດແມ່ນສາມາດກະທົບຢ່າງຮ້າຍແຮງ ແລະ ໃນທາງລົບ ຕໍ່ຄວາມເປັນຢູ່ທີ່ດີດ້ານສັງຄົມຂອງພົນລະເມືອງ ແລະ ຄອບຄົວຂອງເຂົາເຈົ້າທີ່ກັບຄືນມາປະເທດ. ພາຍຫຼັງທີ່ເຂົາເຈົ້າກັບຄືນມາຮອດລັດຕົ້ນທາງ, ພົນລະເມືອງ ແລະ ຄອບຄົວຂອງເຂົາເຈົ້າອາດຕ້ອງການໆສະໜັບສະໜູນ ແລະ ຄວາມຊ່ວຍເຫຼືອໃນຫຼາກຫຼາຍຮູບແບບ ແລະ ຢ່າງຫຼວງຫຼາຍ ເພື່ອຮອງຮັບຄວາມຕ້ອງການໃນທັນທີ ແລະ ໃນໄລຍະສັ້ນຂອງເຂົາເຈົ້າ. ການສະໜັບສະໜູນໃນການເຊື່ອມໂຍງຄືນສູ່ສັງຄົມສຳລັບພົນລະເມືອງທີ່ກັບຄືນປະເທດ (ບາງປະເດັນແມ່ນໄດ້ອະທິບາຍຢູ່ຂ້າງລຸ່ມ) ອາດລວມມີ:

- ການຊ່ວຍເຫຼືອເປັນເງິນສົດ;
- ການບໍລິການດ້ານການແພດ ແລະ ຈິດໃຈ-ສັງຄົມ;
- ການໃຫ້ຄຳປຶກສາ;
- ການບໍລິການຕາມຫາຄອບຄົວ;
- ສະຖານທີ່ພັກຊົ່ວຄາວ ແລະ ໄລຍະຍາວ;
- ການສົ່ງຕໍ່ບຸກຄົນ ເພື່ອໃຫ້ໄດ້ຮັບການບໍລິການສະເພາະດ້ານ;
- ຜົນປະໂຫຍດດ້ານສັງຄົມລວມທັງ ຜົນປະໂຫຍດການຫວ່າງງານ, ພິການ ແລະ ລາຍໄດ້ຕ່ຳ;
- ການເຂົ້າເຖິງການສຶກສາສຳລັບເດັກນ້ອຍ ແລະ ຊາວໜຸ່ມ;
- ການຊ່ວຍເຫຼືອໃນການໄດ້ວຽກເຮັດງານທຳຄືນ ແລະ ການສ້າງລາຍໄດ້ຢູ່ໃນລັດຕົ້ນທາງ;
- ການຊ່ວຍເຫຼືອເພື່ອໃຫ້ເຄື່ອນຍ້າຍຖິ່ນຖານອີກຄັ້ງລວມທັງ ການເຜີຍແຜ່ຂໍ້ມູນກ່ຽວກັບ ໂອກາດໃນການເຄື່ອນຍ້າຍຖິ່ນຖານແບບຖືກກົດໝາຍ;
- ການຊ່ວຍເຫຼືອໃນການຂໍເອກະສານລະບຸຕົວຕົນ-ປະຈຳຕົວ ແລະ ສິດໃນການເປັນພົນລະເມືອງ (ເຊັ່ນ: ສຳລັບເດັກນ້ອຍທີ່ເກີດຢູ່ຕ່າງປະເທດ);
- ການບໍລິການແບບມີເປົ້າໝາຍໂດຍສະເພາະສຳລັບກຸ່ມທີ່ບອບບາງເຊັ່ນ ແມ່ຍິງ, ເດັກນ້ອຍ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ບຸກຄົນອື່ນໆທີ່ປະເຊີນກັບຄວາມເຈັບຊ້ຳດ້ານຈິດໃຈ;
- ຄວາມຊ່ວຍເຫຼືອໃນການເຂົ້າເຖິງການບໍລິການທ້ອງຖິ່ນ.

ປັດໄຈທີ່ຜູ້ມີສ່ວນຮ່ວມອາດຈະພິຈາລະນາໃນການຈັດຕັ້ງປະຕິບັດແຜນງານການເຊື່ອມໂຍງຄືນສູ່ສັງຄົມລວມມີ:

- ການມອບສິດອຳນາດໃຫ້ໜ່ວຍງານໜຶ່ງສະເພາະເພື່ອສະໜັບສະໜູນຄວາມພະຍາຍາມໃນການເດີນທາງກັບຄືນປະເທດ ແລະ ການເຊື່ອມໂຍງຄືນສູ່ສັງຄົມ;
- ການຮິບໂຮມຂໍ້ມູນການບໍລິການຫຼາຍດ້ານ ເຂົ້າເປັນ ແພັກເກັດການຊ່ວຍເຫຼືອແບບກວມລວມສຳລັບການເດີນທາງກັບຄືນປະເທດ ແລະ ການຊ່ວຍເຫຼືອພົນລະເມືອງໃນການເຊື່ອມໂຍງຄືນສູ່ສັງຄົມ;
- ການສ້າງສູນເຊື່ອມໂຍງຄືນສູ່ສັງຄົມລະດັບຊາດ ແລະ ທ້ອງຖິ່ນເພື່ອຊ່ວຍພົນລະເມືອງໃນການເຊື່ອມໂຍງຄືນສູ່ສັງຄົມ.

### *ການເຂົ້າເຖິງການບໍລິການທາງສັງຄົມ ແລະ ການຊ່ວຍເຫຼືອອື່ນໆໃນການເດີນທາງກັບຄືນປະເທດ*

ພົນລະເມືອງອາດອາໄສຢູ່ຕ່າງປະເທດເປັນເວລາດົນ ແລະ ອາດບໍ່ມີເງື່ອນໄຂ ຫຼື ບໍ່ສາມາດເຂົ້າເຖິງການບໍລິການທາງສັງຄົມ. ພົນລະເມືອງທີ່ກັບຄືນປະເທດບາງຄົນອາດຕ້ອງການຄວາມຊ່ວຍເຫຼືອສະເພາະດ້ານ ໂດຍສະເພາະເດັກນ້ອຍ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ບຸກຄົນທີ່ພົບພໍ້ກັບຄວາມເຈັບຊໍ້າດ້ານຈິດໃຈ ແລະ ຜູ້ທີ່ມີສະຖານະການເຂົ້າເມືອງທີ່ບໍ່ໄດ້ລົງທະບຽນໃນລັດປາຍທາງ. ການບໍລິການຕ່າງໆອາດລວມມີ:

- ການບໍລິການຕາມຫາຄອບຄົວ;
- ສະຖານທີ່ພັກຊົ່ວຄາວ ແລະ ການເຂົ້າເຖິງການຮັກສາສຸຂະພາບ ແລະ ການສຶກສາ;
- ການສົ່ງຕໍ່ໄປຍັງການບໍລິການສະເພາະ (ເຊັ່ນ: ທາງການແພດ, ດ້ານຈິດໃຈ-ສັງຄົມ ແລະ ການບໍລິການສຳລັບເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ, ບຸກຄົນພິການ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ);
- ການຍົກເວັ້ນເງື່ອນໄຂຂອງຜູ້ອາໄສສຳລັບບາງຜົນປະໂຫຍດດ້ານສັງຄົມ ລວມທັງຜົນປະໂຫຍດການວ່າງງານ, ຄວາມພິການ ແລະ ລາຍໄດ້ຕໍ່າ;
- ການຊ່ວຍເຫຼືອໃນການຂໍເອກະສານການລະບຸຕົວຕົນ-ປະຈຳຕົວ ແລະ ຫຼັກຖານພິສູດການເປັນພົນລະເມືອງ ລວມທັງເດັກນ້ອຍທີ່ເກີດຢູ່ຕ່າງປະເທດ.

### *ການໃຫ້ຄຳປຶກສາດ້ານຈິດໃຈ-ສັງຄົມ*

ການໃຫ້ຄຳປຶກສາດ້ານສຸຂະພາບ ແລະ ດ້ານຈິດໃຈ-ສັງຄົມ ອາດເປັນການບໍລິການທີ່ສຳຄັນສຳລັບພົນລະເມືອງທີ່ກັບຄືນມາບ້ານ ໂດຍສະເພາະຜູ້ທີ່ໄດ້ປະເຊີນກັບຄວາມເຈັບຊໍ້າດ້ານຈິດໃຈໃນໄລຍະການເດີນທາງຍົກຍ້າຍຖິ່ນຖານ. ພົນລະເມືອງ ແລະ ຄອບຄົວຂອງເຂົາເຈົ້າທີ່ເດີນທາງກັບຄືນມາລັດຕົ້ນທາງພາຍຫຼັງອາໄສຢູ່ລັດປາຍທາງເປັນເວລາຍາວນານອາດປະເຊີນກັບຄວາມຫຍຸ້ງຍາກໃນການເຊື່ອມໂຍງຄືນສູ່ວັດທະນະທຳ, ຮີດຄອງປະເພນີ, ບົດບາດລະຫວ່າງຍິງຊາຍຂອງຊຸມຊົນເຈົ້າພາບ. ອັນນີ້ອາດມີຄວາມຫຍຸ້ງຍາກເປັນພິເສດສຳລັບເດັກນ້ອຍທີ່ເກີດຢູ່ຕ່າງປະເທດ. ແຜນງານການສະໜັບສະໜູນຕ່າງໆອາດລວມທັງການໃຫ້ຄຳປຶກສາກ່ຽວກັບຄວາມເຈັບຊໍ້າດ້ານຈິດໃຈທີ່ໄດ້ພົບພໍ້, ການໃຫ້ຄຳປຶກສາດ້ານສັງຄົມ, ການໃຫ້ຄຳປຶກສາດ້ານຄອບຄົວ ແລະ ບຸກຄົນ. ການໃຫ້ຄຳປຶກສາດັ່ງກ່າວແນໃສ່ຊ່ວຍເຫຼືອພົນລະເມືອງທີ່ເດີນທາງກັບຄືນມາບ້ານ ໃນການປັບຕົວເຂົ້າກັບສະພາບຄວາມເປັນຈິງ, ການກຳນົດພາລະບົດບາດຂອງເຂົາເຈົ້າໃນຊຸມຊົນ ຫຼື ການຮັບປະກັນຄວາມໝັ້ນຄົງ-ຄວາມທຸ່ນທຽງທາງດ້ານຈິດໃຈ-ສັງຄົມ.

### @KULU*CBV^RU[@hGHbleGkJ ^C@LBkR^L*K

ໃນບາງກໍລະນີ ເຊັ່ນ ເມື່ອພົນລະເມືອງທີ່ເດີນທາງກັບມາບ້ານທີ່ອາດເຄີຍເປັນຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ ຫຼື ຮູບແບບການຂູດຮີດອື່ນໆ, ຫາກຖືກບັງຄັບໃຫ້ເຂົ້າຮ່ວມກັບກຳລັງຕໍ່ຕ້ານ ຫຼື ຫົວຮຸນແຮງ ຫຼື ເຄີຍເປັນຜູ້ຖືກເຄາະຮ້າຍຂອງການລ່ວງລະເມີດທາງເພດນັ້ນ ອາດປະເຊີນກັບການຖືກລັງກຽດໃນຊຸມຊົນທີ່ຕົນກັບຄືນມາຫາ. ແຜນງານເພື່ອລົບລ້າງຄວາມລັງກຽດ ແລະ ການປອງດອງຊຸມຊົນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຊື່ອມໂຍງຄືນສູ່ສັງຄົມໃຫ້ສຳເລັດນັ້ນ ອາດຕ້ອງລະບຸຄວາມກົດດັນຕໍ່ພົນລະເມືອງທີ່ເດີນທາງກັບຄືນມາບ້ານ, ການຫລຸດຜ່ອນຂໍ້ຂັດແຍ່ງຂອງຄອບຄົວ ຫຼື ຂະບວນການເຜີຍແຜ່ຂໍ້ມູນ ແລະ ປູກຈິດສຳນຶກໃນຊຸມຊົນກ່ຽວກັບຄວາມຫຍຸ້ງຍາກທີ່ພົນລະເມືອງທີ່ກັບຄືນມາບ້ານອາດພົບພໍ້.

### *ກົນໄກການອອກໃບຢັ້ງຢືນສຳລັບທັກສະ, ການສຶກສາ ແລະ ການຝຶກອົບຮົມທີ່ໄດ້ມາຈາກຕ່າງປະເທດ*

ຜູ້ທີ່ເດີນທາງກັບມາບ້ານ ທີ່ໄດ້ຮຽນຮູ້ທັກສະຈາກຕ່າງປະເທດ ອາດສູນເສຍເອກະສານກ່ຽວຂ້ອງຍ້ອນວິກິດການ ຫຼື ລັດຕົ້ນທາງຂອງເຂົາເຈົ້າອາດບໍ່ຍອມຮັບຄຸນວຸດທິ ຫຼື ໃບຢັ້ງຢືນ-ໃບປະກາດທີ່ໄດ້ມາຈາກຕ່າງປະເທດ. ກົນໄກການຢັ້ງຢືນທັກສະ, ການສຶກສາ ແລະ ການຝຶກອົບຮົມທີ່ໄດ້ມາຈາກຕ່າງປະເທດອາດລວມມີ:

- ການສະໜອງຂໍ້ມູນໃຫ້ແກ່ຜູ້ທີ່ເດີນທາງກັບຄືນມາບ້ານ ກ່ຽວກັບວິທີການລົງທະບຽນເພື່ອ ໃຫ້ທັກສະຂອງຕົນເປັນທີ່ຍອມຮັບ;
- ການສ້າງຕັ້ງການບໍລິການອອກໃບຢັ້ງຢືນທັກສະຜ່ານໜ່ວຍງານຂອງລັດຖະບານ ຫຼື ການວາງມາດຕະຖານ ແລະ ການຢັ້ງຢືນດ້ານຄຸນນະພາບໃຫ້ແກ່ຜູ້ສະໜອງການບໍລິການພາກເອກະຊົນ ໃນການໃຫ້ການບໍລິການປະເມີນຜົນໃນລາຄາທີ່ຈັບຕ້ອງໄດ້ ໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດ;
- ການສ້າງຕັ້ງຂະບວນການຮ່ວມມືເພື່ອລວມເອົາຜູ້ຈ້າງງານ ຫຼື ສະມາຄົມແຮງງານ, ຜູ້ສະໜອງການບໍລິການຈ້າງງານເອກະຊົນ, ສະຖາບັນການສຶກສາ ແລະ ການຝຶກອົບຮົມ, ໜ່ວຍງານວິຊາຊີບ ແລະ ການຄຸ້ມຄອງ, ໜ່ວຍງານອອກໃບຢັ້ງຢືນທັກສະ ແລະ ຄຸນວຸດທິແຫ່ງຊາດ ແລະ ອົງການຈັດຕັ້ງສັງຄົມທີ່ກ່ຽວຂ້ອງ;
- ການຊ່ວຍເຫຼືອແຮງງານທີ່ເດີນທາງກັບຄືນປະເທດ ເມື່ອຜູ້ຈ້າງງານຢູ່ຕ່າງປະເທດຫາກບໍ່ໃຫ້ຫຼັກຖານຢັ້ງຢືນທັກສະທີ່ຕົນໄດ້ມາ;
- ການພັດທະນາລະບຽບຂັ້ນຕອນການປະເມີນທັກສະເພື່ອຮັບຮູ້ ແລະ ຢັ້ງຢືນການຮຽນຮູ້ທີ່ບໍ່ມີໃບປະກາດ (ເຊັ່ນ: ໃນສູນປະເມີນການ ຜ່ານຜູ້ປະເມີນທີ່ໄດ້ຮັບການຢັ້ງຢືນຮັບຮອງ);
- ການສະໜອງການຝຶກອົບຮົມເພື່ອຖົມຊ່ອງວ່າງ ທີ່ນຳໄປສູ່ການຮັບໃບຢັ້ງຢືນ-ໃບປະກາດດ້ານອາຊີບຢ່າງສົມບູນ;
- ການຮັບຮູ້ຄຸນວຸດທິດ້ານວິຊາຊີບຂອງກັນ ແລະ ກັນລະຫວ່າງ ລັດຕົ້ນທາງ ແລະ ລັດປາຍທາງ.

### *ການສ້າງລາຍໄດ້ ແລະ ການໄດ້ວຽກເຮັດງານທຳຄືນ*

ພົນລະເມືອງທີ່ເດີນທາງກັບຄືນປະເທດອາດສູນເສຍວຽກເຮັດງານທຳ ແລະ ເງິນທ້ອນ ແລະ ອາດຈະບໍ່ສາມາດຫາລ້ຽງຕົນເອງ ແລະ ຄອບຄົວ. ການຫາແຫຼ່ງລາຍໄດ້ສຳລັບແຮງງານທີ່ມີທັກສະສູງຂຶ້ນ ຫຼື ຕໍ່າກວ່າ ຈຶ່ງເປັນອົງປະກອບຫຼັກໆທີ່ຈຳເປັນໃນການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດ. ແຫຼ່ງລາຍໄດ້ເຫຼົ່ານັ້ນອາດມາໄດ້ຈາກວຽກເຮັດງານທຳທ້ອງຖິ່ນ, ການພັດທະນາທຸລະກິດໃໝ່, ຫຼື ໂອກາດໃນການເຄື່ອນຍ້າຍຖິ່ນຖານຄືນໃໝ່. ການບໍລິການເພື່ອສະໜັບສະໜູນເປົ້າໝາຍເຫຼົ່ານີ້ລວມມີ:

- ການຝຶກອົບຮົມເພື່ອພັດທະນາ ແລະ ຍົກລະດັບທັກສະລວມທັງຄວາມຮູ້ທາງດ້ານການເງິນ ແລະ ການບໍລິຫານທຸລະກິດ;
- ສິນເຊື່ອຈຸລະພາກ, ເງິນກູ້ຢືມ, ເງິນຊ່ວຍເຫຼືອລ້າ, ຄູ່ມືລິເລີ່ມທຸລະກິດໃໝ່, ແຜນງານສົ່ງເສີມຜູ້ປະກອບການລວມທັງນະໂຍບາຍດ້ານອາກອນ;
- ການໃຫ້ນະໂຍບາຍພາກເອກະຊົນໃນການຈ້າງພົນລະເມືອງທີ່ເດີນທາງກັບຄືນປະເທດ;
- ການປະສານງານກັບອົງການຈັດຫາງານ ເພື່ອ ຫາຕຳແໜ່ງງານທີ່ເໝາະສົມໃນຕ່າງປະເທດ;
- ການໃຫ້ຄຳປຶກສາ ແລະ ຄຳແນະນຳກ່ຽວກັບການຈ້າງງານ ໃນລັດຕົ້ນທາງ ຫຼື ຜ່ານການເຄື່ອນຍ້າຍຖິ່ນຖານຄືນໃໝ່;

- ງານຈັດຫາວຽກ ແລະ ແຜນງານປະຖົມນິເທດເພື່ອໃຫ້ຂໍ້ມູນ;
- ການບໍລິການຈັດຫາແຮງງານ;
- ການສ້າງຕັ້ງສູນຈັດຫາງານຢູ່ໃນພາກພື້ນທີ່ປະເຊີນກັບການເດີນທາງກັບປະເທດໃນຈຳນວນຫຼວງຫຼາຍ ເພື່ອຮອງຮັບຄວາມຕ້ອງການຕ່າງໆ ລວມທັງປະເດັນທີ່ໄດ້ຍົກຂຶ້ນດ້ານເທິງ.

## ຜູ້ມີສ່ວນຮ່ວມພາກເອກະຊົນ

### *ການຊ່ວຍເຫຼືອພາຍຫຼັງການອົບພະຍົບ*

ສາຍພົວພັນລະຫວ່າງຜູ້ຈ້າງງານ ແລະ ຜູ້ຈັດຫາງານ ຢູ່ເບື້ອງໜຶ່ງ ແລະ ອີກເບື້ອງໜຶ່ງກັບ ຜູ້ຈ້າງງານ ກັບ ແຮງງານເຄື່ອນຍ້າຍແມ່ນບໍ່ຈຳເປັນຕ້ອງສິ້ນສຸດລົງດ້ວຍການອົບພະຍົບຈາກລັດປາຍທາງ. ຜູ້ຈ້າງງານ ແລະ ຜູ້ຈັດຫາງານສາມາດພິຈາລະນາ:

- ການຈ້າງຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດ ຢູ່ ກິດຈະການໃນລັດຕົ້ນທາງ ຫຼື ການຊ່ວຍເຫຼືອເຂົາເຈົ້າໃນການເຄື່ອນຍ້າຍຖິ່ນຖານຄືນໃໝ່ ໂດຍການໃຫ້ວຽກເຮັດຢູ່ລັດອື່ນ;
- ການຈ້າງງານຜູ້ເຄື່ອນຍ້າຍຖິ່ນຖານຄືນໃໝ່ ຢູ່ໃນລັດປາຍທາງພາຍຫຼັງທີ່ວິກິດການ ລະຫງັບລົງ;
- ການສົ່ງເງິນຄືນ ຫຼື ການຍົກເວັ້ນ ຄ່າທຳນຽມການຈັດຫາງານ ຫຼື ຄ່າທຳນຽມອື່ນໆທີ່ຕິດພັນກັບວຽກຜ່ານມາ ຫຼື ວຽກໃໝ່;
- ການຈ່າຍຄ່າແຮງງານທີ່ຍັງຄົງຄ້າງ, ຜົນປະໂຫຍດທາງສັງຄົມ ຫຼື ຜົນປະໂຫຍດການຈ້າງງານອື່ນໆເຊັ່ນ ການຮຽກຮ້ອງເງິນຄ່າປະກັນໄພ.

## ອົງການຈັດຕັ້ງສາກົນ

### *ການຕ້ອນຮັບ ແລະ ການຊ່ວຍເຫຼືອຫຼັງເດີນທາງມາຮອດປະເທດ*

ອົງການຈັດຕັ້ງສາກົນສາມາດສະໜັບສະໜູນລັດເພື່ອຕ້ອນຮັບ ແລະ ໃຫ້ການຊ່ວຍເຫຼືອພາຍຫຼັງເດີນທາງມາຮອດປະເທດໃນທັນທີ ຜ່ານການສະໜອງການບໍລິການຕ່າງໆ ລວມທັງ:

- ສະຖານທີ່ພັກຊົ່ວຄາວ;
- ອາຫານ ແລະ ເຄື່ອງຂອງທີ່ບໍ່ແມ່ນອາຫານ;
- ການຊ່ວຍເຫຼືອດ້ານການຂົນສົ່ງໄປຍັງຈຸດໝາຍຕໍ່ໄປ;
- ການຊ່ວຍເຫຼືອໃນການເຂົ້າເຖິງເອກະສານລະບຸຕົວຕົນ-ປະຈຳຕົວ;
- ການຊ່ວຍເຫຼືອດ້ານສຸຂະພາບ ແລະ ການສະໜັບສະໜູນດ້ານຈິດໃຈ-ສັງຄົມ;
- ການບໍລິການຄວາມຕ້ອງການດ້ານນ້ຳ, ສຸຂະອະນາໄມ ແລະ ສຸຂະພິບານ;
- ການລະບຸຜູ້ເຄື່ອນຍ້າຍຖິ່ນຖານທີ່ມີຄວາມບອບບາງສະເພາະ ແລະ ສົ່ງຕໍ່ເຂົາເຈົ້າໄປຍັງການບໍລິການ ຫຼື ອົງການທີ່ກ່ຽວຂ້ອງ.

### *ການກັບຄືນປະເທດ ແລະ ການເຊື່ອມໂຍງຄືນສູ່ສັງຄົມ*

ຫຼາຍກິດຈະກຳກ່ຽວກັບສະໜັບສະໜູນໃນການເຊື່ອມໂຍງຄືນສູ່ສັງຄົມທີ່ອະທິບາຍໃນພາກຂ້າງເທິງກ່ຽວກັບ ລັດຕົ້ນທາງ ແມ່ນສາມາດນຳມານຳໃຊ້ກັບອົງການຈັດຕັ້ງສາກົນ. ນອກຈາກນັ້ນ, ອົງການຈັດຕັ້ງສາກົນສາມາດສະໜັບສະໜູນລັດໃນການປັບປຸງ ການສະໜັບສະໜູນວຽກງານການເຊື່ອມໂຍງຜູ້ເຄື່ອນຍ້າຍຖິ່ນຖານຄືນສູ່ສັງຄົມໃຫ້ດີຂຶ້ນ ລວມທັງ:

- ການຄົ້ນຄວ້າ ແລະ ການປະເມີນຜົນພາກປະຕິບັດທີ່ມີຢູ່ກ່ຽວກັບ ການເດີນທາງກັບຄືນປະເທດ ແລະ ການເຊື່ອມໂຍງຄືນສູ່ສັງຄົມຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການພັດທະນາທິດຊີ້ນໍາສໍາລັບລັດໃນການປະຕິບັດຕໍ່ຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດຢ່າງມີກຽດສັກສີ;
- ການຊ່ວຍເຫຼືອດ້ານວິຊາການໃນການອອກແບບແຜນງານ;
- ການພັດທະນາທິດຊີ້ນໍາກ່ຽວກັບການເດີນທາງກັບຄືນປະເທດ ແລະ ການເຊື່ອມໂຍງຄືນສູ່ສັງຄົມໃນລັດຕົ້ນທາງ ຫຼື ກັບຄືນໃນລັດປາຍທາງຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການສະໜັບສະໜູນແຜນງານ ປູກຈິດສໍານຶກໃຫ້ແກ່ຊຸມຊົນ, ການລົບລ້າງຄວາມລັງກຽດ ແລະ ຮັດແໜ້ນຄວາມປອງດອງຂອງຊຸມຊົນຕາມຄວາມຈໍາເປັນ.

### *ການເກັບກໍາຂໍ້ມູນປະຫວັດຂອງຜູ້ເຄື່ອນຍ້າຍຖິ່ນຖານ*

ອົງການຈັດຕັ້ງສາກົນ ສາມາດສະໜັບສະໜູນລັດ ແລະ ຜູ້ມີສ່ວນຮ່ວມອື່ນໆໃນການເກັບກໍາ, ສົມທຽບ ແລະ ວິເຄາະຂໍ້ມູນກ່ຽວກັບຜູ້ເຄື່ອນຍ້າຍຖິ່ນຖານພາຍຫຼັງເກີດວິກິດ. ກິດຈະກໍາການເກັບກໍາຂໍ້ມູນປະຫວັດ ຈະຕອບສະໜອງຈຸດປະສົງຂອງການສ້າງຂໍ້ມູນລວມໆກ່ຽວກັບ ຈໍານວນຜູ້ເຄື່ອນຍ້າຍຖິ່ນຖານທີ່ໄດ້ຮັບຜົນກະທົບ, ຄວາມຕ້ອງການ ແລະ ຄວາມບອບບາງທີ່ຍັງຫຼົງເຫຼືອຂອງເຂົາເຈົ້າ, ແລະ ທັກສະ ກໍຄື ຄວາມອາດສາມາດຂອງເຂົາເຈົ້າ. ຂໍ້ມູນນີ້ສາມາດເປັນບ່ອນອີງໃນການອອກແບບ ກິດຈະກໍາ-ວຽກງານ-ໂຄງການໆຊ່ວຍເຫຼືອພາຍຫຼັງວິກິດການ.

## ອົງການຈັດຕັ້ງສັງຄົມ

*ພາກປະຕິບັດທີ່ໄດ້ລະບຸສໍາລັບອົງການຈັດຕັ້ງສາກົນຂ້າງເທິງ ກໍຍັງສາມາດເອົາມານໍາໃຊ້ກັບ ອົງການຈັດຕັ້ງສັງຄົມ.*

### *ການຊ່ວຍເຫຼືອໃນທັນທີພາຍຫຼັງການເດີນທາງກັບຄືນປະເທດ*

ອົງການຈັດຕັ້ງສັງຄົມ ໂດຍສະເພາະຜູ້ທີ່ດໍາເນີນງານພາຍໃນຊຸມຊົນໃນລັດຕົ້ນທາງ ອາດເປັນຜູ້ຮັບມືພາກສ່ວນທໍາອິດໃນການຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດ. ຂໍ້ປະຕິບັດການທີ່ເຂົາເຈົ້າດໍາເນີນໄດ້ລວມມີ:

- ການສ້າງຕັ້ງສູນຕ້ອນຮັບຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດ ເຊິ່ງຜູ້ເຄື່ອນຍ້າຍຖິ່ນຖານສາມາດຢູ່ຊົ່ວຄາວພາຍຫຼັງເດີນທາງມາຮອດ ແລະ ພັດທະນາແຜນເພື່ອການເຊື່ອມໂຍງຄືນສູ່ສັງຄົມ;
- ການສະໜອງການບໍລິການດ້ານກົດໝາຍ ແລະ ດ້ານອື່ນໆໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານໃນການກອບກູ້ຄືນຄ່າແຮງງານທີ່ຍັງຄົງຄ້າງ, ເງິນສົມທົບປະກັນສັງຄົມ ແລະ ຊັບສິນອື່ນໆທີ່ປ່ອຍປະໄວ້ຢູ່ລັດປາຍທາງ ຫຼື ເພື່ອຮ້ອງຂໍຄ່າຊົດເຊີຍສໍາລັບການລະເມີດອື່ນໆ.
- ຕາງໜ້າຜູ້ເຄື່ອນຍ້າຍຖິ່ນຖານ ຂໍຄວາມຊ່ວຍເຫຼືອຈາກເຈົ້າໜ້າທີ່ທ້ອງຖິ່ນໃນການດໍາເນີນເອກະສານການລະບຸຕົວຕົນ-ປະຈໍາຕົວ ທ້ອງຖິ່ນ ຫຼື ແຫ່ງຊາດເພື່ອໃຫ້ສາມາດເຂົ້າເຖິງການບໍລິການປະກັນສັງຄົມ, ການບໍລິການສຸຂະພາບ ຫຼື ການສຶກສາ;
- ການສະໜັບສະໜູນຂະບວນການຕາມຫາຄອບຄົວ ແລະ ການເຕົ້າໂຮມໃຫ້ສະມາຊິກຄອບຄົວໄດ້ມາຢູ່ຮ່ວມກັນຄືນ;
- ການເຊື່ອມຕໍ່ຜູ້ເຄື່ອນຍ້າຍຖິ່ນຖານກັບ ແຜນງານສະໜັບສະນູນດ້ານເສດຖະກິດ, ການຊ່ວຍເຫຼືອເປັນເງິນສົດ ແລະ ຊີວິດການເປັນຢູ່ ກໍຄື ໜ່ວຍງານຈັດຫາງານ;
- ການສະໜອງຂໍ້ມູນກ່ຽວກັບຊ່ອງທາງດ້ານກົດໝາຍເພື່ອການຍົກຍ້າຍຖິ່ນຖານຄືນ ສໍາລັບຜູ້ທີ່ເດີນທາງກັບຄືນປະເທດທີ່ສົນໃຈໃນທາງເລືອກນີ້.

*ແຜນງານສະໜັບສະໜູນດ້ານຈິດໃຈ-ສັງຄົມເພື່ອການເຊື່ອມໂຍງຄືນສູ່ສັງຄົມຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ບອບບາງ*

ອົງການຈັດຕັ້ງສັງຄົມສາມາດປະເມີນ ແລະ ແກ້ໄຂຄວາມຕ້ອງການໂດຍສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ບອບບາງທີ່ເດີນທາງກັບຄືນປະເທດ ແລະ ຈັດຕັ້ງປະຕິບັດແຜນງານທີ່ສາມາດສະໜັບສະໜູນເຂົາເຈົ້າໃນການເຊື່ອມໂຍງຄືນສູ່ສັງຄົມ. ປະເພດແຜນງານທີ່ສາມາດຈັດຕັ້ງປະຕິບັດລວມມີ:

- ການປະເມີນຜົນ, ການຄົ້ນຄວ້າ ແລະ ການເກັບກຳຂໍ້ມູນປະຫວັດຂອງຜູ້ເຄື່ອນຍ້າຍຖິ່ນຖານເພື່ອເຂົ້າໃຈ ແລະ ວິເຄາະຄວາມຕ້ອງການໃນການເຊື່ອມໂຍງຄືນສູ່ສັງຄົມຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດໂດຍສະເພາະກຸ່ມທີ່ບອບບາງ ເຊັ່ນ ຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນເດັກນ້ອຍ, ຊາວໜຸ່ມ ແລະ ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ ແລະ ການຄ້າມະນຸດ;
- ການສະໜັບສະໜູນດ້ານຈິດໃຈ-ສັງຄົມ ແລະ ການໃຫ້ຄຳປຶກສາເພື່ອອຳນວຍຄວາມສະດວກໃຫ້ແກ່ການເຊື່ອມໂຍງຄືນສູ່ສັງຄົມຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ບໍ່ມີສາຍຕິດຕໍ່ພົວພັນໃນທ້ອງຖິ່ນ, ບໍ່ລຶ້ງເຄີຍກັບວັດທະນະທຳ ຫຼື ບໍ່ມີເຄືອຂ່າຍ ຫຼື ຊັບພະຍາກອນອື່ນໆໃຫ້ເອື່ອຍອີງໃສ່;
- ກິດຈະກຳຊ່ວຍເຫຼືອໃນການເຊື່ອມໂຍງຄືນສູ່ສັງຄົມໂດຍສະເພາະຊາວໜຸ່ມທີ່ບໍ່ມີສາຍພົວພັນຊຸມຊົນຕົ້ນກຳເນີດຂອງຕົນ;
- ການຊ່ວຍເຫຼືອດ້ານສຸຂະພາບ ແລະ ດ້ານຈິດໃຈ-ສັງຄົມສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຄວາມຮຸນແຮງທີ່ມີພື້ນຖານທາງເພດ, ແລະ ປະເພດການຂູດຮີດ ແລະ ຄວາມເຈັບຊ້ຳດ້ານຈິດໃຈອື່ນໆ;
- ການສະໜັບສະໜູນດ້ານຈິດໃຈ-ສັງຄົມສຳລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນເດັກນ້ອຍ ທີ່ປະເຊີນກັບອຸປະສັກດ້ານພາສາ ແລະ ວັດທະນະທຳພາຍໃນຊຸມຊົນຕົ້ນກຳເນີດຂອງຕົນ.

*ການສະໜັບສະໜູນດ້ານການຟື້ນຟູສຳລັບຜູ້ເຄື່ອນຍ້າຍຖິ່ນຖານທີ່ຍັງຢູ່ລັດປາຍທາງ*

ຜູ້ມີສ່ວນຮ່ວມພາກອົງການຈັດຕັ້ງສັງຄົມທ້ອງຖິ່ນສາມາດຮັບປະກັນວ່າຜູ້ເຄື່ອນຍ້າຍຖິ່ນຖານທີ່ສືບຕໍ່ຢູ່ໃນລັດປາຍທາງຕະຫຼອດໄລຍະທີ່ເກີດວິກິດການນັ້ນ ຈະໄດ້ຮັບຄວາມຊ່ວຍເຫຼືອທີ່ເຂົາເຈົ້າຕ້ອງການເພື່ອການຟື້ນຟູ. ກິດຈະກຳເພື່ອສະໜັບສະໜູນຜູ້ເຄື່ອນຍ້າຍຖິ່ນຖານລວມມີ:

- ການສະໜອງການສະໜັບສະໜູນ ແລະ ການໃຫ້ຄຳປຶກສາດ້ານຈິດໃຈ-ສັງຄົມ;
- ການສະໜັບສະໜູນກົນໄກການຊົດເຊີຍເພື່ອຟື້ນຟູຊັບສິນ ໂດຍສະເພາະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ບໍ່ມີສິດທາງດ້ານກົດໝາຍ;
- ການຕິດຕາມແກ້ໄຂການຈຳແນກ-ການເລືອກປະຕິບັດ ແລະ ການຕ້ານຜູ້ເຄື່ອນຍ້າຍຖິ່ນຖານ-ຜູ້ເຂົ້າເມືອງ ແລະ ຄວາມຢ້ານກົວຊາວຕ່າງຊາດ.

# ພາກປະຕິບັດໃນການນໍາໃຊ້ ແນວທາງປະຕິບັດ 15:
# ສະໜັບສະໜູນຊຸມຊົນເຈົ້າພາບຂອງຜູ້ເຄື່ອນຍ້າຍຖິ່ນຖານ

## ຜູ້ມີສ່ວນຮ່ວມຫຼາຍຝ່າຍ

*ການວິເຄາະຜົນກະທົບດ້ານເສດຖະກິດ-ສັງຄົມຂອງການເດີນທາງກັບຄືນປະເທດ*

ການຄົ້ນຄວ້າເພື່ອປະເມີນ, ວິເຄາະ ແລະ ເຂົ້າໃຈຜົນກະທົບດ້ານເສດຖະກິດ-ສັງຄົມໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ໃນຂັ້ນທ້ອງຖິ່ນ ແລະ ຊາດ ຢູ່ໃນລັດຕົ້ນທາງ ແລະ ລັດປາຍທາງ ກໍຄື ຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ, ຕໍ່ຄອບຄົວຂອງເຂົາເຈົ້າ ແລະ ຊຸມຊົນທ້ອງຖິ່ນຂອງເຂົາເຈົ້າ ເຊິ່ງຈະອໍານວຍຄວາມສະດວກໃຫ້ແກ່ການຮັບມືກັບສະຖານະການວິກິດໃນອະນາຄົດໃຫ້ໄດ້ດີກວ່າເກົ່າ ແລະ ແບບມີເປົ້າໝາຍກວ່າເກົ່າ.

## ລັດປາຍທາງ

*ການເຊື່ອມໂຍງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການເຄື່ອນຍ້າຍຖິ່ນຖານເຂົ້າໃນແຜນບູລະນະ ແລະ ຟື້ນຟູ*

ລັດປາຍທາງຈະພັດທະນາແຜນເພື່ອການບູລະນະ ແລະ ຟື້ນຟູ. ການເຄື່ອນຍ້າຍຖິ່ນຖານ ແລະ ຜູ້ເຄື່ອນຍ້າຍຖິ່ນຖານຄວນຈະຖືກລວມເຂົ້າໃນແຜນການບູລະນະ ແລະ ຟື້ນຟູ. ປັດໄຈທີ່ຕ້ອງພິຈາລະນາລວມມີ:

- ຕ້ອງການຜູ້ເຄື່ອນຍ້າຍຖິ່ນຖານທີ່ມີທັກສະ ສະເພາະ ຫຼື ບໍ່;
- ຕ້ອງດັດປັບກອບການພັດທະນາ ຫຼື ບໍ່ ຍ້ອນຜົນທີ່ມາຈາກວິກິດການ ແລະ ຖ້າຈໍາເປັນ ຈະລວມເອົາການເຄື່ອນຍ້າຍຖິ່ນຖານ ແລະ ຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນການດັດແກ້ຕ່າງໆເຫຼົ່ານັ້ນແນວໃດ;
- ການແກ້ໄຂຄວາມເຄັ່ງຕຶງທີ່ອາດເກີດຂຶ້ນລະຫວ່າງປະຊາກອນທ້ອງຖິ່ນຜູ້ທີ່ອາດຄິດວ່າຜູ້ເຄື່ອນຍ້າຍຖິ່ນຖານເປັນຄູ່ແຂ່ງລວມທັງໃນບໍລິບົດຂອງຄວາມພະຍາຍາມໃນການບູລະນະຟື້ນຟູ;
- ການມີສ່ວນຮ່ວມຂອງຜູ້ຈ້າງງານ ແລະ ກະຊວງທີ່ກ່ຽວຂ້ອງ ເຊັ່ນກະຊວງທີ່ຮັບຜິດຊອບໃນຂົງເຂດແຮງງານ ແລະ ເສດຖະກິດ, ໃນການພັດທະນາແຜນ ແລະ ເຂົ້າໃຈຄວາມຕ້ອງການຂອງຕະຫຼາດແຮງງານ.

## ລັດຕົ້ນທາງ

*ການລວມເອົາຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດເຂົ້າໃນແຜນພັດທະນາ*

ການເດີນທາງກັບຄືນປະເທດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນຈໍານວນມະຫາສານໃນໄລຍະເວລາສັ້ນໆ ສາມາດກົດດັນຊັບພະຍາກອນ ແລະ ພື້ນຖານໂຄງລ່າງທ້ອງຖິ່ນ ແລະ ມີຜົນກະທົບທາງລົບຕໍ່ຕະຫຼາດແຮງງານທ້ອງຖິ່ນ. ຖ້າວ່າລັດຕົ້ນທາງຫາກມີແຜນພັດທະນາແຫ່ງຊາດ ຫຼື ທ້ອງຖິ່ນຢູ່ແລ້ວ, ແຜນດັ່ງກ່າວອາດຕ້ອງໄດ້ຮັບການດັດແກ້ເພື່ອຄໍານຶງເຖິງຜົນສະທ້ອນຂອງການເດີນທາງກັບຄືນປະເທດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນຈໍານວນມະຫາສານ.

ແຜນພັດທະນາຍັງສາມາດຫາວິທີໝູນໃຊ້ຊັບພະຍາກອນ ແລະ ທັກສະທີ່ພົນລະເມືອງນໍາຄືນມາ ເພື່ອຜົນປະໂຫຍດຂອງລັດຕົ້ນທາງ ແລະ ຊຸມຊົນເຈົ້າພາບ.

### *ການມີສ່ວນຮ່ວມ ແລະ ການສະໜັບສະໜູນປະຊາກອນເຈົ້າພາບ*

ການເດີນທາງກັບຄືນປະເທດຂອງພົນລະເມືອງໃນຈຳນວນຫຼາຍ ຈະສາມາດກົດດັນປະຊາກອນເຈົ້າພາບ ແລະ ໂຄງລ່າງພື້ນຖານ ແລະ ຊັບພະຍາກອນຂອງຊຸມຊົນ. ໃນເວລາທີ່ການຊ່ວຍເຫຼືອທີ່ສະໜອງໃຫ້ແກ່ສະເພາະພົນລະເມືອງທີ່ເດີນທາງກັບຄືນປະເທດ ໂດຍທີ່ບໍ່ໄດ້ໃຫ້ແກ່ຊຸມຊົນເຈົ້າພາບ, ອັນນີ້ອາດເພີ່ມຄວາມເຄັ່ງຕຶງ ແລະ ນຳໄປສູ່ການຈຳແນກ-ເລືອກປະຕິບັດ ແລະ ຄວາມລັງກຽດ. ມາດຕະການເພື່ອຫລຸດຜ່ອນຜົນສະທ້ອນດັ່ງກ່າວລວມມີ:

- ກົນໄກການປຶກສາຫາລື ທີ່ກວມເອົາການເຂົ້າຮ່ວມຂອງຊຸມຊົນລວມທັງ ຜູ້ນຳພາຊຸມຊົນ, ຜູ້ເຖົ້າຜູ້ແກ່ແນວໂຮມຂອງຊຸມຊົນ ແລະ ຜູ້ນຳພາທາງສາສະໜາ, ແມ່ຍິງ, ອົງການຈັດຕັ້ງສັງຄົມທ້ອງຖິ່ນ;
- ການສະໜອງການບໍລິການຢ່າງທົ່ວເຖິງສຳລັບພົນລະເມືອງທີ່ເດີນທາງກັບຄືນປະເທດ ແລະ ຊຸມຊົນເຈົ້າພາບ;
- ແຜນງານສ້າງຄວາມປອງດອງໃນສັງຄົມ ແລະ ຄວາມໝັ້ນຄົງໃນຊຸມຊົນ.

### *ແຜນງານສ້າງຄວາມປອງດອງໃນສັງຄົມ*

ແຜນງານສ້າງຄວາມປອງດອງໃນສັງຄົມທີ່ກວມເອົາຊຸມຊົນ, ອົງການຊຸມຊົນ, ເຈົ້າໜ້າທີ່ທ້ອງຖິ່ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ສາມາດຮັດແໜ້ນສາຍພົວພັນລະຫວ່າງຜູ້ທີ່ເດີນທາງກັບຄືນປະເທດ ແລະ ຊຸມຊົນເຈົ້າພາບ, ປ້ອງກັນການສ້າງຄວາມເຄັ່ງຕຶງ ແລະ ຊຸກຍູ້ການເຊື່ອມໂຍງຄືນສູ່ສັງຄົມຂອງຜູ້ທີ່ເດີນທາງກັບຄືນປະເທດ. ມາດຕະການເພື່ອຮັດແໜ້ນຄວາມປອງດອງໃນສັງຄົມລວມມີ:

- ການປູກຈິດສຳນຶກກ່ຽວກັບຜົນກະທົບດ້ານບວກທີ່ສາມາດເພີ່ມພູນຂຶ້ນຈາກການເດີນທາງກັບຄືນປະເທດຂອງພົນລະເມືອງ;
- ການຮ່ວມມືກັບເຄືອຂ່າຍ ແລະ ອົງການສັງຄົມໃນການພັດທະນາກິດຈະກຳທີ່ຊຸມຊົນເປັນເຈົ້າການເຊັ່ນ ກິດຈະຈຳກິລາ, ງານວັດທະນະທຳ ແລະ ບຸນຕ່າງໆ;
- ການເຕົ້າໂຮມຊຸມຊົນທ້ອງຖິ່ນ ແລະ ຜູ້ທີ່ເດີນທາງກັບຄືນປະເທດ ເພື່ອສົນທະນາບັນຫາໃນທ້ອງຖິ່ນ, ແຫຼ່ງຄວາມຂັດແຍ່ງ ແລະ ເພື່ອສ້າງສາຍພົວພັນການຮ່ວມມືລະຫວ່າງຫຼາຍໆກຸ່ມ;
- ການລະບຸຜູ້ປະສານງານຫຼັກພາຍໃນຊຸມຊົນ (ແລະ ລະຫວ່າງພົນລະເມືອງທີ່ເດີນທາງກັບຄືນປະເທດ ກໍລະນີທີ່ເຂົາເຈົ້າຍັງຮັກສາສາຍພົວພັນນຳກັນຢູ່) ແລະ ການສ້າງເຄືອຂ່າຍເຈົ້າໜ້າທີ່ຊຸມຊົນທີ່ສາມາດໃຫ້ຄຳແນະນຳກ່ຽວກັບບັນຫາທີ່ເກີດຂຶ້ນ, ຖ່າຍທອດຂໍ້ມູນກ່ຽວກັບການສະໜັບສະໜູນ ແລະ ແຜນງານ ໄປຍັງຜູ້ມີສ່ວນຮ່ວມໃນທ້ອງຖິ່ນ ແລະ ແນະນຳງານ ຫຼື ຂະບວນການເຜີຍແຜ່ຂໍ້ມູນ ແລະ ປູກຈິດສຳນຶກຕ່າງໆ;
- ການສ້າງແຜນງານສະໜອງທຶນ ເພື່ອສະໜອງທຶນຊ່ວຍເຫຼືອລ້າໃຫ້ແກ່ອົງການຊຸມຊົນ ເພື່ອເປັນວິທີການລົງທຶນໃສ່ໂຄງສ້າງຊຸມຊົນທ້ອງຖິ່ນ, ຮັບປະກັນແຜນງານຕອບສະໜອງຄວາມຕ້ອງການຂອງຊຸມຊົນ, ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນໃນການແກ້ໄຂຄວາມເຄັ່ງຕຶງ ແລະ ຊອກຫາວິທີທາງອອກ. ແຜນງານເຫຼົ່ານີ້ ອາດສະໜອງທຶນຊ່ວຍເຫຼືອລ້າເພື່ອປູກຈິດສຳນຶກ, ສົ່ງເສີມຄວາມເຂົ້າໃຈ, ຄວາມເຄົາລົບ, ຄວາມຍຸຕິທຳ ແລະ ຄວາມຮູ້ສຶກທີ່ເປັນສ່ວນໜຶ່ງໃນຊຸມຊົນ ຫຼື ຈັດງານ, ບຸນປະເພນີ ຫຼື ໂຄງການດ້ານວັດທະນະທຳຕ່າງໆ.

### *ການສົ່ງເສີມ ການປະກອບສ່ວນຂອງຜູ້ພັດຖິ່ນ*

ຜູ້ພັດຖິ່ນສາມາດປະກອບສ່ວນຢ່າງມະຫາສານໃນການແກ້ໄຂຜົນກະທົບຂອງວິກິດການຕໍ່ພົນລະເມືອງ, ຊຸມຊົນ ແລະ ລັດ. ວິທີການສົ່ງເສີມໃຫ້ຜູ້ພັດຖິ່ນປະກອບສ່ວນລວມມີ:

- ການຍົກເວັ້ນພາສີອາກອນເພື່ອອຳນວຍຄວາມສະດວກໃຫ້ແກ່ການສະໜັບສະໜູນດ້ານການເງິນ ແລະ ວັດຖຸປັດໄຈ (ເຊັ່ນ ໂຄງລ່າງພື້ນຖານ ແລະ ອຸປະກອນ);
- ການ (ຈັບຄູ່) ສະໜອງທຶນຊ່ວຍເຫຼືອລ້າ ແລະ ການໃຫ້ນະໂຍບາຍອື່ນໆ ການລົງທຶນໃສ່ຊຸມຊົນເຈົ້າພາບທີ່ເໝາະສົມ;

- ການສະໜອງໃບອະນຸຍາດເຮັດວຽກ ແລະ ການຈັດແຈງທີ່ຍືດຍຸ່ນໃນການກັບຄືນປະເທດ ເພື່ອໃຫ້ຜູ້ພັດຖິ່ນສາມາດແກ້ໄຂຄວາມຕ້ອງການພິເສດເຊັ່ນ ການບໍລິການທາງການແພດ ແລະ ດ້ານຈິດໃຈ-ສັງຄົມ;
- ການສົ່ງເສີມຄວາມສາມາດຂອງຜູ້ພັດຖິ່ນໃນການສ້າງວຽກເຮັດງານທຳສຳລັບພົນລະເມືອງທີ່ເດີນທາງກັບຄືນປະເທດ;
- ການອຳນວຍຄວາມສະດວກ ກ່ຽວກັບບົດບາດຂອງຜູ້ພັດຖິ່ນທີ່ມີຊື່ສຽງ ໃນວຽກງານການປູກຈິດສຳນຶກ.

## ອົງການຈັດຕັ້ງສາກົນ

### *ການປະເມີນຄວາມຕ້ອງການພາຍຫຼັງເກີດວິກິດຂອງຫຼາຍຂະແໜງການ*

ອົງການຈັດຕັ້ງສາກົນ ສາມາດສະໜັບສະໜູນການຈັດຕັ້ງປະຕິບັດ ການປະເມີນຜົນກະທົບພາຍຫຼັງວິກິດຂອງຫຼາຍຂະແໜງການ ແລະ ຜູ້ມີສ່ວນຮ່ວມຫຼາຍຝ່າຍ ທີ່ແນໃສ່ ປະເມີນຜົນກະທົບຂອງວິກິດ ຕໍ່ຜູ້ເຄື່ອນຍ້າຍຖິ່ນຖານ, ຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ. ການປະເມີນເຫຼົ່ານີ້ແມ່ນສາມາດດຳເນີນຢູ່ລັດປາຍທາງ ຫຼື ລັດຕົ້ນທາງໂດຍເລັ່ງໃສ່ການຟື້ນຟູທາງດ້ານເສດຖະກິດ ແລະ ການບູລະນະພາຍຫຼັງວິກິດ. ເພື່ອປະເມີນຄວາມຕ້ອງການດ້ານການຟື້ນຟູຢູ່ລັດປາຍທາງ, ເຄື່ອງມືທີ່ມີຢູ່ເຊັ່ນ ເຄື່ອງມືປະເມີນຄວາມຕ້ອງການພາຍຫຼັງວິກິດ ແລະ ເຄື່ອງມືປະເມີນຄວາມຕ້ອງການພາຍຫຼັງຄວາມຂັດແຍ່ງນັ້ນ ແມ່ນສາມາດດັດປັບມານຳໃຊ້ເພື່ອປະເມີນຜົນກະທົບດ້ານຂໍ້ມູນກ່ຽວກັບ ການສູນເສຍດ້ານເສດຖະກິດ ແລະ ຊັບສິນຂອງຜູ້ເຄື່ອນຍ້າຍຖິ່ນຖານ, ການເຂົ້າເຖິງການບໍລິການສັງຄົມ ແລະ ບົດບາດຂອງການເຄື່ອນຍ້າຍຖິ່ນຖານຕໍ່ເສດຖະກິດທ້ອງຖິ່ນ. ຜູ້ເຄື່ອນຍ້າຍຖິ່ນຖານຄວນໄດ້ຮັບໂອກາດໃນການເຂົ້າຮ່ວມການປະເມີນເຫຼົ່ານັ້ນ. ໃນລັດຕົ້ນທາງ, ການພັດທະນາ ແລະ ການນຳໃຊ້ເຄື່ອງມືສະເພາະເພື່ອປະເມີນສະພາບຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດ ຈະເປັນປະໂຫຍດເພື່ອເປັນບ່ອນອີງໃນການສ້າງວິທີການຮັບມືກັບພາວະວິກິດແບບມີເປົ້າໝາຍໃນຕໍ່ໜ້າ.

### *ກອບການສະໜອງຄວາມຊ່ວຍເຫຼືອດ້ານການພັດທະນາ*

ອົງການຈັດຕັ້ງສາກົນສາມາດສົ່ງເສີມການເຊື່ອມໂຍງຜູ້ເຄື່ອນຍ້າຍຖິ່ນຖານເຂົ້າໃນ ກອບ ແລະ ກົນໄກການຊ່ວຍເຫຼືອດ້ານການພັດທະນາ ຂອງຜູ້ມີສ່ວນຮ່ວມຫຼາຍຝ່າຍລະດັບຊາດ ແລະ ພາກພື້ນ ລວມທັງ ກອບທີ່ຕ້ອງດັດປັບໃນການຮອງຮັບຜົນສະທ້ອນຂອງວິກິດ ແລະ ການເດີນທາງກັບຄືນປະເທດໃນຈຳນວນທີ່ມະຫາສານ.

### *ຖານການພັດທະນາຊຸມຊົນ*

ອົງການຈັດຕັ້ງສາກົນສາມາດສ້າງຖານເພື່ອສະໜັບສະໜູນວິທີການພັດທະນາຊຸມຊົນໂດຍການມີສ່ວນຮ່ວມຂອງຜູ້ມີສ່ວນຮ່ວມລະດັບຊາດ ແລະ ທ້ອງຖິ່ນລວມທັງເຈົ້າໜ້າທີ່ແຫ່ງຊາດ ແລະ ທ້ອງຖິ່ນ, ພາກເອກະຊົນ, ອົງການຈັດຕັ້ງສັງຄົມ, ອົງການຊ່ວຍເຫຼືອດ້ານມະນຸດສະທຳສາກົນ ແລະ ທ້ອງຖິ່ນ ແລະ ຜູ້ມີສ່ວນຮ່ວມໃນການພັດທະນາ ແລະ ຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດ. ຖານເຫຼົ່ານີ້ສາມາດຮັບປະກັນການຮັບມືເພື່ອການຟື້ນຟູຈາກວິກິດໂດຍການຮ່ວມມືກັນຂອງຫຼາຍຂະແໜງການ.

### *ໂຄງການພັດທະນາຊຸມຊົນ*

ໂຄງການຊຸມຊົນໃນຊຸມຊົນທີ່ປະເຊີນກັບສະພາບຂອງການເດີນທາງກັບຄືນປະເທດຂອງຜູ້ເຄື່ອນຍ້າຍຖິ່ນຖານໃນຈຳນວນມະຫາສານ ຈະສາມາດຮອງຮັບຜູ້ເຄື່ອນຍ້າຍຖິ່ນຖານເຫຼົ່ານັ້ນໄດ້ດີກວ່າເກົ່າ, ອຳນວຍຄວາມສະດວກໃຫ້ແກ່ການເຊື່ອມໂຍງຄືນສູ່ສັງຄົມຂອງເຂົາເຈົ້າ, ສົ່ງເສີມຄວາມປອງດອງໃນສັງຄົມ, ແລະ ຫຼຸດຜ່ອນຄວາມເຄັ່ງຕຶງ ກໍຄື ຄວາມລັງກຽດທີ່ອາດມີຕໍ່ຜູ້ທີ່ເດີນທາງກັບຄືນປະເທດ/ຊຸມຊົນ.

## ອົງການຈັດຕັ້ງສັງຄົມ

*ພາກປະຕິບັດທີ່ກ່າວມາຂ້າງເທິງກ່ຽວກັບ ການປະເມີນຄວາມຕ້ອງການພາຍຫຼັງໄພພິບັດຂອງຫຼາຍຂະແໜງການ, ຖານການພັດທະນາຊຸມຊົນ ແລະ ໂຄງການພັດທະນາຊຸມຊົນ ສໍາລັບອົງການຈັດຕັ້ງສາກົນນັ້ນແມ່ນ ຍັງສາມາດນໍາໃຊ້ກັບອົງການຈັດຕັ້ງສັງຄົມ.*

### *ແຜນງານສົ່ງເສີມຄວາມປອງດອງໃນສັງຄົມລະຫວ່າງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊຸມຊົນເຈົ້າພາບ*

ແຜນງານຟື້ນຟູພາຍຫຼັງວິກິດທີ່ມີຊຸມຊົນເປັນເຈົ້າການທີ່ຄໍານຶງເຖິງຄວາມຕ້ອງການຂອງຊຸມຊົນໂດຍລວມຈະມີຜົນປະໂຫຍດຕໍ່ທັງຜູ້ເຄື່ອນຍ້າຍຖິ່ນຖານທີ່ເດີນທາງກັບຄືນປະເທດ ແລະ ຊຸມຊົນເຈົ້າພາບ. ຄວາມປອງດອງໃນສັງຄົມລະຫວ່າງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊຸມຊົນເຈົ້າພາບ ອາດມີຄວາມສໍາຄັນຕໍ່ຂະບວນການເຊື່ອມໂຍງຄືນສູ່ສັງຄົມທີ່ຍືນຍົງ. ອົງການຈັດຕັ້ງສັງຄົມສາມາດຈັດຕັ້ງປະຕິບັດແຜນງານໂດຍສົ່ງເສີມວິທີການດັ່ງກ່າວນີ້:

- ໃຫ້ຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊຸມຊົນທ້ອງຖິ່ນທີ່ກ່ຽວຂ້ອງມີສ່ວນຮ່ວມໃນການວາງແຜນການເຊື່ອມໂຍງຜູ້ເຄື່ອນຍ້າຍຖິ່ນຖານຄືນສູ່ສັງຄົມ ເພື່ອເກັບກໍາຄວາມເຫັນຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊຸມຊົນເຈົ້າພາບ ແລ້ວປະເມີນຄວາມຕ້ອງການ ແລະ ຄວາມທ້າທາຍທີ່ອາດຈະເກີດຂຶ້ນໃນທັນທີ ແລະ ໃນໄລຍະຍາວ. ການມີສ່ວນຮ່ວມດັ່ງກ່າວນີ້ແມ່ນສາມາດເກີດຂຶ້ນຜ່ານກອງປະຊຸມຊຸມຊົນ, ການປະຊຸມກຸ່ມນ້ອຍ ຫຼື ງານສັງຄົມ;
- ການແນະນໍາ-ການພົວພັນກັບລັດ ແລະ ອົງການຈັດຕັ້ງອື່ນໆທີ່ສະໜອງການຊ່ວຍເຫຼືອ ເພື່ອຮັບປະກັນ ຄວາມເຂົ້າໃຈກ່ຽວກັບຄວາມຕ້ອງການຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຊຸມຊົນ ພ້ອມທັງຮ່ວມມືກັນໃນການວາງແຜນ ແລະ ການສ້າງແຜນງານແຫ່ງຊາດ ແລະ ທ້ອງຖິ່ນ;
- ການສົ່ງເສີມການປູກຈິດສໍານຶກ ແລະ ຂໍ້ມູນ ສໍາລັບຊຸມຊົນເຈົ້າພາບ ກ່ຽວກັບຄວາມຕ້ອງການ ແລະ ຄວາມບອບບາງສະເພາະຂອງຜູ້ເຄື່ອນຍ້າຍຖິ່ນຖານ;
- ການແນະນໍາ-ການພົວພັນກັບເຈົ້າໜ້າທີ່ຂອງລັດເພື່ອຍົກສູງຊັບພະຍາກອນສໍາລັບຊຸມຊົນທີ່ມີຜູ້ເຄື່ອນຍ້າຍຖິ່ນຖານກັບຄືນມາ ລວມທັງ ສິ່ງອໍານວຍຄວາມສະດວກດ້ານສາທາລະນະສຸກ, ໂຮງຮຽນ ແລະ ສະຖານທີ່ພັກ;
- ການຕິດຕາມການເຊື່ອມໂຍງຄືນສູ່ສັງຄົມຂອງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ການແຈ້ງເຕືອນເຈົ້າໜ້າທີ່ທ້ອງຖິ່ນ ແລະ ແຫ່ງຊາດໃນກໍລະນີເກີດຂໍ້ຂັດແຍ່ງ ຫຼື ຄວາມເຄັ່ງຕຶງ.

# ປະມວນຄຳສັບ

ນິຍາມຄຳສັບທີ່ນຳສະເໜີໃນພາກປະມວນຄຳສັບນີ້ ແມ່ນເພື່ອຈຸດປະສົງຂອງເອກະສານສະບັບນີ້ເທົ່ານັ້ນ. ດັ່ງທີ່ຊີ້ແຈງໃນພາກຂອບເຂດ ແລະ ຈຸດປະສົງ, ບໍ່ມີສ່ວນໃດໃນເອກະສານສະບັບນີ້ທີ່ຄວນຖືກຕີຄວາມໝາຍວ່າເປັນການສ້າງຂໍ້ບັງຄັບທາງດ້ານກົດໝາຍສາກົນໃໝ່, ຫຼັກເກນໃໝ່, ຫຼື ເປັນການຈຳກັດ ຫຼື ຫລຸດຄຸນຄ່າຂອງພັນທະທາງດ້ານກົດໝາຍທີ່ລັດອາດນຳໃຊ້ຢູ່ ຫຼື ຕ້ອງປະຕິບັດພາຍໃຕ້ກົດໝາຍສາກົນ. ດັ່ງດຽວກັນ, ບໍ່ມີສ່ວນໃດໃນເອກະສານສະບັບນີ້ ທີ່ຄວນຖືກຕີຄວາມໝາຍວ່າເປັນການຈຳກັດ, ກີດຂວາງ ຫຼື ຫລຸດຄຸນຄ່າ ຂອງຂໍ້ບັງຄັບໃນກົດໝາຍພາຍໃນປະເທດ ຫຼື ມາດຕະຖານອື່ນໆທີ່ນຳໃຊ້ກັບລັດ, ອົງການຈັດຕັ້ງສາກົນ, ຜູ້ມີສ່ວນຮ່ວມພາກເອກະຊົນ ຫຼື ອົງການຈັດຕັ້ງສັງຄົມເພື່ອປົກປ້ອງຜູ້ເຄື່ອນຍ້າຍຖິ່ນຖານໃຫ້ດີຂຶ້ນກວ່າເກົ່າ.

**ຜູ້ຊອກຫາບ່ອນລີ້ໄພ (Asylum seeker):** ບຸກຄົນທີ່ພວມຊອກຫາການປົກປ້ອງສາກົນໃນຖານະຜູ້ລີ້ໄພ ແຕ່ວ່າ ການຮ້ອງຂໍຂອງຕົນຍັງບໍ່ໄດ້ຮັບການຕັດສິນໃຊ້ໄດ້ຢ່າງເດັດຂາດ.

**ອົງການຈັດຕັ້ງສັງຄົມ (Civil society):** ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານລະດັບສາກົນ, ພາກພື້ນ, ແຫ່ງຊາດ ແລະ ທ້ອງຖິ່ນ; ແລະ ເຄືອຂ່າຍ, ອົງການ ແລະ ກຸ່ມຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ພັດຖິ່ນ ແລະ ຜູ້ພັດຖິ່ນສ່ວນບຸກຄົນ; ເຄືອຂ່າຍ, ອົງການ, ກຸ່ມ ແລະ ບຸກຄົນທີ່ມີຄວາມເຊື່ອຖືທາງສາສະໜາ; ອົງການແຮງງານ ແລະ ອົງການຜູ້ຈ້າງງານ; ຄັງສະໝອງ; ສະຖາບັນການສຶກສາ; ນັກວິຊາການ; ແລະ ນັກຄົ້ນຄວ້າ.

**ຄວາມຂັດແຍ່ງ (Conflict):** ສະຖານະການຄວາມຮຸນແຮງ, ສົງຄາມ, ຄວາມບໍ່ສະຫງົບໃນສັງຄົມທີ່ເປັນອັນຕະລາຍຕໍ່ຊີວິດ, ຕໍ່ຄວາມປອດໄພ ຫຼື ຕໍ່ການຮັກສາຄວາມສະຫງົບຂອງມະນຸດ.

**ປະເທດທີ່ພວມປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ (Country experiencing a conflict or natural disaster):** ມີຄວາມໝາຍດຽວກັນກັບ ລັດປາຍທາງ.

**ປະເທດທີ່ປະເຊີນວິກິດ (Country experiencing a crisis):** ມີຄວາມໝາຍດຽວກັນກັບ ລັດປາຍທາງ.

**ພາວະວິກິດ/ວິກິດ (Crisis):** ຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດ.

**ຜູ້ພັດຖິ່ນ (Diaspora):** ບຸກຄົນຈາກລັດຕົ້ນທາງດຽວກັນກັບຜູ້ເຄື່ອນຍ້າຍຖິ່ນຖານ ທີ່ອາໄສຢູ່ລັດອື່ນທີ່ບໍ່ແມ່ນໃນລັດປາຍທາງ ຫຼື ລັດຕົ້ນທາງ.

**ການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ (Disaster risk reduction):** ປະກອບດ້ວຍທຸກໆຄວາມພະຍາຍາມເພື່ອວິເຄາະ ແລະ ຄຸ້ມຄອງປັດໄຈທີ່ເປັນຕົ້ນເຫດຂອງໄພພິບັດລວມທັງການຫລຸດຜ່ອນຄວາມສ່ຽງຕໍ່ການເກີດອັນຕະລາຍ, ການຫລຸດຜ່ອນຄວາມບອບບາງຂອງຄົນ ແລະ ຊັບສິນ ແລະ ການປັບປຸງການກະກຽມຄວາມພ້ອມ ເພື່ອເຫດການທີ່ມີຜົນກະທົບຮ້າຍແຮງ.

**ແຮງງານທີ່ເຮັດວຽກເປັນຄົນຮັບໃຊ້ (Domestic worker):** ບຸກຄົນທີ່ເຮັດວຽກໃນເຮືອນ ຫຼື ເພື່ອຄົວເຮືອນ ຫຼື ຫຼາຍຄົວເຮືອນ ທີ່ເປັນການຈ້າງງານລະຫວ່າງນາຍຈ້າງ ແລະ ລູກຈ້າງ.

**ການອົບພະຍົບ (Evacuation):** ການເຄື່ອນຍ້າຍຜູ້ເຄື່ອນຍ້າຍຖິ່ນຖານອອກຈາກລັດປາຍທາງ ໄປຍັງລັດຕົ້ນທາງ ຫຼື ລັດອື່ນໆ.

**ລັດປາຍທາງ (Host State):** ລັດທີ່ປະເຊີນກັບຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດທົ່ວປະເທດ ຫຼື ບາງພາກຂອງປະເທດທີ່ມີຜູ້ເຄື່ອນຍ້າຍຖິ່ນຖານອາໄສຢູ່.

**ການຄ້າມະນຸດ (Human trafficking or trafficking in persons):** ການບັນຈຸງານ, ການເຊື່ອງງຳ, ການຂົນສົ່ງ ຫຼື ການຍົກຍ້າຍບຸກຄົນເພື່ອຈຸດປະສົງຂອງການຂູດຮີດລວມທັງ ແຮງງານທີ່ຖືກບັງຄັບ ຫຼື ການຄ້າປະເວນີດ້ວຍການນຳໃຊ້ກຳລັງ, ການຫຼອກລວງ, ການລັກພາໂຕ, ການບັງຄັບ, ການນຳໃຊ້ສິດອຳນາດໃນທາງທີ່ບໍ່ຖືກຕ້ອງ ຫຼື ເພື່ອລະເມີດບຸກຄົນທີ່ບອບບາງ-ຢູ່ໃນຈຸດດ້ອຍກວ່າເຕີມ. ການຄ້າມະນຸດແມ່ນສາມາດເກີດຂຶ້ນພາຍໃນປະເທດ ຫຼື ລະຫວ່າງປະເທດ. ສົນທິສັນຍາຂອງ ສປຊ ວ່າດ້ວຍການຕ້ານອາດຊະຍາກຳຂ້າມຊາດ ແລະ ອະນຸສັນຍາວ່າດ້ວຍການປ້ອງກັນ, ການປາບປາມ ແລະ ການລົງໂທດການຄ້າມະນຸດໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ທີ່ຮູ້ຈັກກັນໃນຊື່ ອະນຸສັນຍາປາເລີໂມ), ທີ່ໄດ້ສ້າງຕັ້ງກອບກົດໝາຍທີ່ຮຽກຮ້ອງໃຫ້ລັດພາຄີກຳນົດທຸກໆຮູບແບບການຄ້າມະນຸດເປັນຄວາມຜິດທາງອາຍາ ແລະ ດຳເນີນການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ປ້ອງກັນການຄ້າມະນຸດ.

**ອົງການຈັດຕັ້ງສາກົນ (International organizations):** ອົງການລະຫວ່າງລັດຖະບານ.

**ຜູ້ເຄື່ອນຍ້າຍຖິ່ນຖານ (Migrant):** ບຸກຄົນທີ່ບໍ່ແມ່ນພົນລະເມືອງທີ່ອາໄສຢູ່ໃນອີກປະເທດໜຶ່ງໃນໄລຍະການເກີດຄວາມຂັດແຍ່ງ ຫຼື ໄພພິບັດທຳມະຊາດບໍ່ວ່າຈະດ້ວຍ: (ກ) ວິທີການ ຫຼື ສາຍເຫດຂອງການເດີນທາງເຂົ້າປະເທດ; (ຂ) ສະຖານະການເຂົ້າເມືອງ; ຫຼື (ຄ) ໄລຍະເວລາ ຫຼື ເຫດຜົນຂອງການອາໄສຢູ່ໃນປະເທດ. ຄຳວ່າ 'ຜູ້ເຄື່ອນຍ້າຍຖິ່ນຖານ' ບໍ່ໄດ້ໝາຍເຖິງຜູ້ລີ້ໄພ, ຜູ້ຂອກຫາບ່ອນລີ້ໄພ ແລະ ບຸກຄົນທີ່ບໍ່ມີສັນຊາດ ເຊິ່ງເປັນກຸ່ມທີ່ມີລະບອບການປົກປ້ອງສະເພາະພາຍໃຕ້ກົດໝາຍສາກົນ ເຖິງແມ່ນວ່າຈະໄດ້ອ້າງອີງເຖິງກຸ່ມຄົນເຫຼົ່ານີ້ໃນບາງຈຸດຂອງ ຫຼັກການ, ແນວທາງປະຕິບັດ ແລະ ພາກປະຕິບັດ ແລະ ມີຄວາມໝາຍຕາມທີ່ກ່າວມານັ້ນ.

**ໄພພິບັທຳມະຊາດ (natural disater):** ການຢຸດສະຫງັກຂອງການດຳເນີນງານຂອງຊຸມຊົນ ຫຼື ສັງຄົມທີ່ເກີດຈາກ ຄວາມອັນຕະລາຍທາງທຳມະຊາດເຊັ່ນນ້ຳຖ້ວມ, ແຜ່ນດິນໄຫວ ຫຼື ລົມພາຍຸທີ່ສ້າງຄວາມເສຍຫາຍຕໍ່ມະນຸດ, ເຄື່ອງຂອງ, ເສດຖະກິດ ຫຼື ສິ່ງແວດລ້ອມ.

*ການບໍ່ບັງຄັບໃຫ້ກັບຄືນປະເທດເພື່ອໃຫ້ຕົກຢູ່ໃນຄວາມອັນຕະລາຍ (Non-refoulement):* ໂດຍທົ່ວໄປໝາຍເຖິງຂໍ້ບັງຄັບ ຫຼື ຫຼັກການທີ່ລັດຈະບໍ່ຍົກຍ້າຍບຸກຄົນເຂົ້າໄປໃນອານາເຂດທີ່ເຂົາເຈົ້າອາດຈະປະເຊີນກັບຄວາມສ່ຽງເປັນອັນຕະລາຍ ຈົນເຖິງຂັ້ນການລະເມີດສິດທິ. ກົດໝາຍສາກົນວ່າດ້ວຍຜູ້ລີ້ໄພ ໄດ້ບັງຄັບລັດບໍ່ໃຫ້ໄລ່ ຫຼື ສົ່ງຄືນ ຜູ້ລີ້ໄພ ບໍ່ວ່າຈະດ້ວຍວິທີໃດກໍຕາມ ໄປຍັງອານາເຂດທີ່ຊີວິດ ຫຼື ອິດສະລະພາບຂອງເຂົາເຈົ້າຈະຕົກຢູ່ໃນຄວາມອັນຕະລາຍ ຍ້ອນເຊື້ອຊາດ, ສາສະໜາ, ສັນຊາດ, ການເປັນສະມາຊິກກຸ່ມສັງຄົມໃດໜຶ່ງ ຫຼື ຍ້ອນຄວາມເຫັນທາງດ້ານການເມືອງ. ຫຼັກການນີ້ແມ່ນກຳນົດຊັດເຈນທີ່ສຸດໃນມາດຕາ 33 ຂອງ ສົນທິສັນຍາປີ 1951 ທີ່ກ່ຽວຂ້ອງກັບ ສະຖານະຂອງຜູ້ລີ້ໄພ. ນອກຈາກນັ້ນແມ່ນໄດ້ກຳນົດໃນກົດໝາຍຜູ້ລີ້ໄພພາກພື້ນ. ຫຼັກການ *ບໍ່ບັງຄັບໃຫ້ກັບຄືນປະເທດເພື່ອໃຫ້ຕົກຢູ່ໃນຄວາມອັນຕະລາຍ* ພາຍໃຕ້ກົດໝາຍຜູ້ລີ້ໄພ ແມ່ນຍັງມີຂໍ້ກຳເນີດເສີມໂດຍຫ້າມບໍ່ໃຫ້ມີການຍົກຍ້າຍ ເຊັ່ນບໍ່ໃຫ້ກັບຄືນປະເທດເພື່ອໃຫ້ຖືກທໍລະມານ ຫຼື ຄວາມເປັນອັນຕະລາຍໃນຮູບແບບອື່ນໆ ທີ່ປະກອບ ແລະ ພັດທະນາຂຶ້ນພາຍໃຕ້ກົດໝາຍສາກົນກ່ຽວກັບການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ກົດໝາຍສາກົນ ແລະ ພາກພື້ນກ່ຽວກັບສິດທິມະນຸດ ເຊິ່ງນຳໃຊ້ກັບທຸກໆຄົນ ລວມທັງຜູ້ເຄື່ອນຍ້າຍຖິ່ນຖານ, ຜູ້ລີ້ໄພ ແລະ ຜູ້ຫາບ່ອນລີ້ໄພ.

**ຜູ້ມີສ່ວນຮ່ວມພາກເອກະຊົນ (Private sector actors):** ຜູ້ຈ້າງງານ, ຜູ້ຈັດຫາງານ, ໜ່ວຍງານຈັດຫາແຮງງານ ບໍ່ວ່າຈະຂະໜາດໃດກໍຕາມ. ຜູ້ມີສ່ວນຮ່ວມພາກເອກະຊົນລວມມີ ບໍລິສັດນາໆຊາດ, ບໍລິສັດຂະໜາດນ້ອຍ ແລະ ກາງ ຫຼື ຜູ້ຈ້າງງານສ່ວນບຸກຄົນ. ຜູ້ສະໜອງການບໍລິການພາກເອກະຊົນລວມມີ ບໍລິສັດທີ່ສະໜອງການບໍລິການເຊັ່ນ ໂທລະຄົມມະນາຄົມ, ການຂົນສົ່ງ ຫຼື ການບໍລິການດ້ານການເງິນໃຫ້ແກ່ຜູ້ເຄື່ອນຍ້າຍຖິ່ນຖານ ຫຼື ຜູ້ມີສ່ວນຮ່ວມ.

**ການປົກປ້ອງ (Protection):** ເພື່ອຮັກສາໃຫ້ປອດໄພຈາກຄວາມເປັນອັນຕະລາຍ. ນິຍາມທີ່ສົມບູນຄົບຖ້ວນຂຶ້ນ ຂອງແນວຄວາມຄິດ ການປົກປ້ອງ ຕາມທີ່ຜູ້ມີສ່ວນຮ່ວມຊ່ວຍເຫຼືອດ້ານມະນຸດສະທຳເຂົ້າໃຈແມ່ນ: ກວມເອົາທຸກໆກິດຈະກຳທີ່ແນໃສ່ ເຄົາລົບນັບຖືສິດທິສ່ວນບຸກຄົນຢ່າງເຕັມທີ່ ໂດຍສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ເຊັ່ນ ກົດໝາຍສິດທິມະນຸດສາກົນ.

**ຜູ້ລີ້ໄພ (Refugee):** ບຸກຄົນທີ່ມີເງື່ອນໄຂຄົບຖ້ວນຕາມນິຍາມຂອງຜູ້ລີ້ໄພ ທີ່ກຳນົດໃນກົດໝາຍ-ນິຕິກຳຜູ້ລີ້ໄພສາກົນ ຫຼື ພາກພື້ນ, ຄຳສັ່ງຂອງ UNHCR, ແລະ/ຫຼື ນິຕິກຳແຫ່ງຊາດຕາມຄວາມເໝາະສົມ. ອີງຕາມສົນທິສັນຍາປີ 1951 ທີ່ກ່ຽວຂ້ອງກັບສະຖານະພາບຂອງຜູ້ລີ້ໄພ ແລະ ອະນຸສັນຍາປີ 1967, ຜູ້ລີ້ໄພ ແມ່ນບຸກຄົນທີ່ຢ້ານຖືກດຳເນີນຄະດີຍ້ອນເຫດຜົນຂອງເຊື້ອຊາດ, ສັນຊາດ ຫຼື ການເປັນສະມາຊິກຂອງກຸ່ມທາງສັງຄົມ ຫຼື ຄວາມເຫັນທາງການເມືອງ ທີ່ຢູ່ນອກປະເທດທີ່ຕົນຖືສັນຊາດ ຫຼື ປະເທດທີ່ຕົນອາໄສ ແລະ ບໍ່ຍອມກັບຄືນ ປະເທດດັ່ງກ່າວ ຍ້ອນຄວາມຢ້ານກົວທີ່ກ່າວມານັ້ນ. ກົດໝາຍສາກົນ ຫຼື ພາຍໃນອື່ນໆ ກໍໄດ້ລວມນິຍາມຕ່າງໆ ທີ່ກ່າວເຖິງ ຕົວຢ່າງ: ຄວາມອັນຕະລາຍຕໍ່ຊີວິດ, ຄວາມປອດໄພ ຫຼື ອິດສະລະພາບ ຈາກການນຳໃຊ້ຄວາມຮຸນແຮງຕາມລຳພັງໃຈ ຫຼື ເຫດການຮ້າຍແຮງອື່ນໆທີ່ລົບກວນຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ/ຂອງສາທາລະນະ.

**ການຍົກຍ້າຍຖິ່ນຖານ (Relocation):** ການຍ້າຍ ຜູ້ເຄື່ອນຍ້າຍຖິ່ນຖານໄປສະຖານທີ່ໆປອດໄພພາຍໃນລັດປາຍທາງ.

**ຄວາມທົນທານ (Resilience):** ຄວາມສາມາດໃນການຢູ່ລອດ-ສູ້ຊົນ, ປັບຕົວ ຫຼື ຟື້ນຟູຢ່າງມີປະສິດທິຜົນຈາກ ສະຖານະການອັນຕະລາຍ.

**ຜູ້ມີສ່ວນຮ່ວມ (Stakeholder):** ລັດຕົ້ນທາງ, ລັດປາຍທາງ, ລັດທາງຜ່ານ, ຜູ້ມີສ່ວນຮ່ວມພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມ.

**ບຸກຄົນບໍ່ມີສັນຊາດ (Stateless person):** ບຸກຄົນທີ່ບໍ່ໄດ້ຮັບສັນຊາດຈາກລັດໃດໆ ພາຍໃຕ້ກົດໝາຍການດຳເນີນງານຂອງລັດນັ້ນ.

**ລັດຕົ້ນທາງ (State of origin):** ລັດທີ່ຜູ້ເຄື່ອນຍ້າຍຖິ່ນຖານມີສັນຊາດ.

**ລັດທາງຜ່ານ (State of transit):** ລັດທີ່ຜູ້ເຄື່ອນຍ້າຍຖິ່ນຖານອາດໜີໄປອາໄສຊົ່ວຄາວ ທີ່ບໍ່ແມ່ນລັດປາຍທາງ ຫຼື ລັດຕົ້ນທາງ.

**ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ຫຼື ຖືກແຍກຈາກຜູ້ປົກຄອງ (Unaccompanied or separated child):** ເດັກນ້ອຍໝາຍເຖິງມະນຸດທຸກໆຄົນທີ່ມີອາຍຸຕໍ່າກວ່າສິບແປດປີ ນອກຈາກວ່າກົດໝາຍກ່ຽວກັບເດັກນ້ອຍທີ່ກ່ຽວຂ້ອງໄດ້ກຳນົດການພົ້ນວຸທິພາວະກ່ອນອາຍຸດັ່ງກ່າວນັ້ນ. ເດັກນ້ອຍທີ່ບໍ່ມີຜູ້ຕິດຕາມ ແມ່ນເດັກນ້ອຍທີ່ຖືກແຍກຈາກທັງພໍ່ ແລະ ແມ່ ແລະ ພີ່ນ້ອງອື່ນໆ ໂດຍບໍ່ມີຜູ້ໃຫຍ່ເບິ່ງແຍງ ເຊັ່ນບໍ່ມີຜູ້ມີຄວາມຮັບຜິດຊອບໃນການເບິ່ງແຍງເດັກຕາມກົດໝາຍ ຫຼື ຕາມຮີດຄອງປະເພນີ. ເດັກນ້ອຍທີ່ຖືກແຍກຈາກຜູ້ປົກຄອງ ແມ່ນເດັກນ້ອຍທີ່ຖືກແຍກຈາກທັງພໍ່ ແລະ ແມ່ ຫຼື ຈາກຜູ້ເບິ່ງແຍງຫຼັກທີ່ຖືກຕ້ອງຕາມກົດໝາຍ ຫຼື ຮີດຄອງປະເພນີ ແຕ່ບໍ່ຈຳເປັນຕ້ອງແມ່ນພີ່ນ້ອງ. ສະນັ້ນ, ເດັກນ້ອຍທີ່ຖືກແຍກຈາກຜູ້ປົກຄອງ ອາດ

ລວມໄປເຖິງ ເດັກນ້ອຍທີ່ຖືກຕິດຕາມໂດຍສະມາຊິກທີ່ເປັນຜູ້ໃຫຍ່ອື່ນໆໃນຄອບຄົວ.

**ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (Victim of trafficking):** ບຸກຄົນທີ່ຖືກ ການອາດຊະຍາກຳຂອງການຄ້າມະນຸດ.

**ຄວາມບອບບາງ (Vulnerability):** ທ່າອ່ຽງທີ່ຈະຖືກກະທົບຢ່າງຮ້າຍແຮງຈາກ ສະຖານະການອັນຕະລາຍທີ່ອາດເກີດຂຶ້ນ.

# ຄຳຫຍໍ້

**DRR:** ການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ (Disaster Risk Reduction)

**GFMD:** ກອງປະຊຸມໂລກກ່ຽວກັບ ການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາ (Global Forum on Migration and Development)

**IASC:** ຄະນະກຳມະການປະຈຳລະຫວ່າງໜ່ວຍງານ (Inter-Agency Standing Committee)

**ICMPD:** ສູນການພັດທະນານະໂຍບາຍການເຄື່ອນຍ້າຍຖິ່ນຖານສາກົນ (International Centre for Migration Policy Development)

**IGC:** ການປຶກສາຫາລືລະຫວ່າງລັດຖະບານ ກ່ຽວກັບ ການເຄື່ອນຍ້າຍຖິ່ນຖານ, ການລີ້ໄພ ແລະ ຜູ້ລີ້ໄພ (Inter-governmental Consultation on Migration, Asylum, and Refugees)

**IOM:** ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (International Organization for Migration)

**ISIM:** ສະຖາບັນເພື່ອການສຶກສາການເຄື່ອນຍ້າຍຖິ່ນຖານສາກົນຂອງມະຫາວິທະຍາໄລຈອຈ໌ທາວ (Institute for the Study of International Migration, Georgetown University)

**MICIC:** ຜູ້ເຄື່ອນຍ້າຍຖິ່ນຖານຢູ່ໃນປະເທດທີ່ປະເຊີນກັບພາວະສຸກເສີນ (Migrants in Countries in Crisis)

**UN:** ອົງການສະຫະປະຊາຊາດ (United Nations)

**UNDAF:** ກອບການຊ່ວຍເຫຼືອດ້ານການພັດທະນາຂອງອົງການສະຫະປະຊາຊາດ (United Nations Development Assistance Frameworks)

**UNHCR:** ອົງການຂ້າຫຼວງໃຫຍ່ຜູ້ລີ້ໄພຂອງ ອົງການສະຫະປະຊາຊາດ (United Nations High Commissioner for Refugees)

# ບັນທຶກ













MICIC

Save Lives
Increase Protection
Decrease Vulnerability
Improve Response

MIGRANTS IN COUNTRIES IN CRISIS INITIATIVE